ປຶ້ມພຣະໄຕຣປິດົກພາສາລາວ

ແປແລະລຽບລຽງຈາກປຶ້ມຂອງ ມຫາຈຸຣາລົງກອນຣາຊວິທຍາລັຍ

ໂດຍ ສົມສັກ ວົງວານິດ

ເຫລັ້ມທີ ໔

ວິ
ນັຍ
ປິ
ດົກ

ມຫາ
ວິ
ພັງຄ໌

Tripitaka in Lao language Book 2

Translated and created by Somsak Chuck Vongvanith
from the Tripitaka books of MahaJuralonkorn Rajvithayalay

San Marcos, California, USA - August 1, 2017

ປື້ມພຣະໄຕຣປິດົກ ກາສາລາວ ເຫລັ້ມທີ ໔

ແປແລະລຽບລຽງຈາກປື້ມຂອງ ມຫາຈຸຣາລົງກອນຣາຊວິທຍາລັຍ ໂດຍ ສົມສັກ ວົງວານິດ
(ສະກົດຕາມເຄົ້າ)

Tri-Pitaka in Lao language Book 2

Translated from the Tripitaka of the MahaJuralonkorn Rajvithayalay
by Chuck Somsak Vongvanith

❀ ❀❀ ❀❀ ❀❀ ❀

ພຣະໄຕຣປິດົກເຫລັ້ມທີ ໐໔ ວິນັຍປິດົກທີ ໐໔ ມຫາວິກັງຄ໌ ກາຄ ໔
ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕພ໌] ໑. ຈີຣວັຄ ໑. ປຖມກຖິນສິກຂາບົທ
ນິທານວັຕຖຸ

ພຣະວິນັຍປິດົກ

ມຫາວິກັງຄ໌ ກາຄ ໔

Vinaya Pitaka part 2

□ □ ❀❀ □ □

ຂໍນອບນ້ອມພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທລເຈົ້າພຣະອົງຄ໌ນັ້ນ
໔. ນິສສັຄຄິຍກັຕພ໌

ທ່ານທັງຫລາຍ ລັມຄືນິສສັຄຄິຍປາຈິຕຕິຍ໌ ໓໐ ສິກຂາບົທເຫລົ່ານີ້ ມາເຖິງວາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ໆຕາມລຳດັບ

໑. ຈີວອນວັຄ
ຫມວດວ່າດ້ວຍຈີວອນ

໑. ປຖມກຖິນສິກຂາບົທ

ວ່າດ້ວຍກຐິນເດາະຂໍ້ທີ ໑

ເຣື່ອງພຣະຉັພພັຄຄີຍ໌

[໔໕໙] ສມັຍນັ້ນ ພຣະຜູ້ມີພຣະຠາຄພຸທຘເຈົ້າປະທັບຢູ່ ຓະ ໂຄຕມກເຈດີຍ໌ ເຂຕກຸງເວສາລີ ຄັ້ງນັ້ນ ພຣະຜູ້ມີພຣະຠາຄໄດ້ຊົງອນຸຍາຕ ໄຕຣຈີວອນ (ຄື ອັນຕຣວາສກ (ຜ້ານຸ່ງ) ອຸຕຕຣາສົງຄ໌ (ຜ້າຫົ່ມ) ສັງຆາຏິ (ຜ້າຫົ່ມ ຊ້ອນນອກ)) ເພື່ອຠິກຩຸທັ້ງຫລາຍ ແລ້ວພວກຠິກຩຸຉັພພັຄຄີຍ໌ຊາບວ່າ ພຣະຜູ້ມີພຣະຠາຄຊົງອນຸຍາຕໄຕຣຈີວອນແລ້ວ ຈຶ່ງເຂົ້າຫມູ່ບ້ານ ໂດຍຄອງໄຕຣຈີວອນ ໑ໄຕຣ ຢູ່ໃນອາຣາມອີກ ໑ ໄຕຣ ສົງນ້ຳອີກ ໑ ໄຕຣ ບັນດາຠິກຩຸຜູ້ມັກນ້ອຍ ສັນໂດຩ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໄຝ່ກາຣຨຶກຩາ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກຠິກຩຸຉັພພັຄຄີຍ໌ຈຶ່ງຊົງອຕິເຣກຈີວອນ໑ ລະ” ຄັນຠິກຩຸເຫລົ່ານັ້ນຕຳຫນິພວກຠິກຩຸຉັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະຠາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະຠາຄຣັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກຠິກຩຸຉັພພັຄຄີຍ໌ວ່າ “ຠິກຩຸທັ້ງຫລາຍ ຊາບວ່າ ພວກທ່ານຊົງອຕິເຣກຈີວອນ ແມ່ນແທ້ບໍ” ພວກຠິກຩຸຉັພພັຄຄີຍ໌ທູລຣັບວ່າ “ແມ່ນແທ້ພຣະພຸທຘເຈົ້າຂ້າ” ພຣະຜູ້ມີພຣະຠາຄພຸທຘເຈົ້າຊົງຕຳຫນິວ່າ “ໂມຆບຸຣຸຩທັ້ງຫລາຍ ກາຣກະທຳຢ່າງນີ້ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມຓ ໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດພວກທ່ານຈຶ່ງຊົງອຕິເຣກຈີວອນລະ ໂມຆບຸຣຸຩທັ້ງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວ ໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ ຯລຯ” ແລ້ວຈຶ່ງຣັບສັ່ງໃຫ້ຠິກຩຸທັ້ງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໔໖໐] ກໍ ຠິກຩຸໃດຊົງອຕິເຣກຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌໔ ສິກຂາບົທນີ້ພຣະຜູ້ມີພຣະຠາຄຊົງບັນຍັດໄວ້ແກ່ຠິກຩຸທັ້ງຫລາຍຢ່າງນີ້

ເຣື່ອງພຣະຉັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ອຕິເຣກຈີວອນ ຄືຜ້າສ່ວນເກີນທີ່ເຂົາຖວາຍກິກສຸເພີ້ມເຂົ້າມາຈາກຜ້າທີ່ອລິຍຖານເປັນໄຕຣຈີວອນ

໔ ທີ່ແປວ່າ "ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌" ນີ້ເປັນໄປຕາມນັຍອລິບາຍແຫ່ງອັນຖະກຖາວ່າ "ນິສິສຄິຄິຍໍ ປາຈິຕິຕິຍໍ, ຕຍິຈ ຈີວຣໍ ນິສິສຄິຄິຍໍ ໂຫຕິ, ປາຈິຕິຕິຍາປຕິຕິ ຈສິສ ໂຫຕິ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ຄືຈີວອນເປັນນິສສັຄຄິຍ໌ຕ້ອງສລະ ກິກສຸຮູບນັ້ນຕ້ອງອາບັຕິປາຈິຕຕິຍ໌"

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ຈີວຣວັຄ ໑. ປຖມກຖິນສິກຂາບົທ ພຣະອນຸບັນຍັດ

ເຣື້ອງພຣະອານົນທ໌

[໔໖໑] ສມັຍນັ້ນ ອຕິເຣກຈີວອນເກີດຂື້ນແກ່ທ່ານພຣະອານົນທ໌ ທ່ານຕ້ອງການຈະຖວາຍອຕິເຣກຈີວອນນັ້ນແກ່ທ່ານພຣະສາຣີບຸຕຣ ແຕ່ທ່ານພຣະສາຣີບຸຕຣຢູ່ທີ່ເມືອງສາເກຕ ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ມີຄວາມຄິດວ່າ "ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ວ່າ 'ກິກສຸບໍ່ເພິງຊົງອຕິເຣກຈີວອນ' ກໍອຕິເຣກຈີວອນນີ້ເກີດຂື້ນແກ່ເຮົາ ເຮົາຕ້ອງການຈະຖວາຍແກ່ທ່ານພຣະສາຣີບຸຕຣ ແຕ່ທ່ານຢູ່ທີ່ເມືອງສາເກຕ ເຮົາເພິງປະຕິບັດຢ່າງໃດຫນໍ" ຈື່ງໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະຜູ້ມີພຣະກາຄຕຣັສຖາມວ່າ "ດົນປານໃດ ສາຣີບຸຕຣຈະກັບມາ" ພຣະອານົນທ໌ຂາບທູລວ່າ "ອີກ ໙ ຫລື ໑໐ ວັນຈື່ງຈະກັບມາ ພຣະພຸທລເຈົ້າຂ້າ"

ຊົງອນຸຍາຕອຕິເຣກຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກສຸທັງຫລາຍວ່າ "ກິກສຸທັງຫລາຍເຮົາອນຸຍາຕໃຫ້ຊົງອຕິເຣກຈີວອນໄດ້ ໑໐ ວັນເປັນຢ່າງຫລາຍ" ແລ້ວຈື່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໙໔] ເມື່ອຈີວອນຂອງກິກຂຸສຳເຣັຈແລ້ວ ເມື່ອກະຖິນເດາະແລ້ວ໑ ກິກຂຸເພິງຊົງອະຕິເຣກຈີວອນໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັດນິສສັຄຄິຍປາຈິດຕີຍ໌໔

ເຣື້ອງພຣະອານົນທ໌ ຈົບ

ເຊີງອັນຖະ :

໑ ຄຳວ່າ "ກະຖິນເດາະ" ໃນທີ່ນີ້ຕາມສັພທ໌ແປວ່າ ຮື້ໄມ້ສະດຶງ ຄືໄມ້ແບບສຳລັບຂຶງຜ້າ ຫມາຍເຖິງການຍົກເລີກອານິສົງສ໌

໔ ນິສສັຄຄິຍປາຈິຕຕີຍ໌ ຄືອາບັຕິປາຈິຕຕີຍ໌ທີ່ກິກຂຸຜູ້ຕ້ອງແລ້ວເມື່ອຈະສະແດງເທສນາບັຕິ ຈະຕ້ອງທຳການສລະວັຕຖຸກ່ອນ ຈຶ່ງຈະຖືວ່າເປັນຜູ້ບໍຣິສຸດຄ໌ຈາກອາບັຕິນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ຈີຣວັຄ ໑. ປຖມກະຖິນສິກຂາບົທ ສິກຂາບົທວິກັງຄ໌

ສິກຂາບົທວິກັງຄ໌

[໔໙໖] ຄຳວ່າ ເມື່ອຈີວອນ. . . ສຳເຣັຈແລ້ວ ຫມາຍຄວາມວ່າ ຈີວອນຂອງກິກຂຸຫມົດຄຸນແລ້ວ ສູນຫາຍແລ້ວ ຈົບຫາຍແລ້ວ ຖືກໄຟໄຫມ້ເສັ່ງແລ້ວ ຫລືກິກຂຸຫມົດຫວັງວ່າຈະໄດ້ຜ້າມາຍົບເປັນຈີວອນ

ຄຳວ່າ ເມື່ອກະຖິນເດາະແລ້ວ ຫມາຍຄວາມວ່າ ກະຖິນເດາະດ້ວຍມາຕິກາຢ່າງໃດຢ່າງນຶ່ງໃນມາຕິກາ ໘໑ ຫລືສົງໝ໌ເດາະກະຖິນໃນຣະຫວ່າງ໔

ຄຳວ່າ ໑໐ ວັນເປັນຢ່າງຫລາຍ ຄື ຄອບຄອງໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ

ຊື່ວ່າ ອະຕິເຣກຈີວອນ ໄດ້ແກ່ ຈີວອນທີ່ບໍ່ໄດ້ອະລິຫຖານ໓ ບໍ່ໄດ້ວິກັປ໔

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ໖ ຊນິດ໕ ຢ່າງໃດຢ່າງນຶ່ງຊຶ່ງມີຂນາດພໍທີ່ຈະທຳວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄວາມວ່າ ເມື່ອຮຸ່ງອຣຸຕວັນທີ ໑໑ ຈີວອນຜືນນັ້ນເປັນນິສສັຄຄີຍ໌ ຄື ເປັນຂອງຈຳຕ້ອງສລະແກ່ສົງໝ໌ ແກ່ຄຕະຫລືແກ່ບຸຄຄົລ ກິກຂຸທັງຫລາຍ ກິກຂຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ມາຕິກາ ຄືຫົວຂໍ້ແຫ່ງການເດາະກະຖິນ ໘ ປະການ ຄື (໑) ປັກກມນັນຕິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸຫລີກໄປ ບໍ່ຄິດຈະກັບ (໒) ນິຍຖານັນຕິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸນຳຜ້າໄປນອກສີມາແລ້ວຕັດຍິບຈີວອນ ບໍ່ຄິດຈະກັບ (໓) ສັນນິຍຖານັນຕິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸນຳຜ້າໄປນອກສີມາ ແລ້ວຕົກລົງໃຈຈະບໍ່ຕັດຍິບຈີວອນ ແລະບໍ່ຄິດຈະກັບ (໔) ນາສນັນຕິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸນຳຜ້າໄປນອກສີມາຕັດຍິບເປັນຈີວອນ ບໍ່ຄິດຈະກັບ ຜ້າທີ່ຕັດຍິບເປັນຈີວອນເສັຽຫາຍໄປ (໕) ສວນັນຕິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸນຳຜ້າໄປນອກສີມາ ຄິດວ່າຈະກັບ ຕັດຍິບຈີວອນເສັດແລ້ວໄດ້ຟັງຂ່າວວ່າ ກະຖິນໃນວັດຂອງຕົນເດາະເສັຽແລ້ວ(໖) ອາສາວັຈເຉທິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸຫລີກໄປນອກສີມາດ້ວຍຫວັງວ່າຈະໄດ້ຜ້າ ຣອຄອຍຜ້າຈນຫມົດຫວັງ (໗) ສີມາຕິກກັນຕິກາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸນຳຜ້າໄປຕັດຍິບຈີວອນຢູ່ນອກສີມາ ຄິດຈະກັບ ແຕ່ຢູ່ນອກສີມາຈົນເມື່ອກະຖິນເດາະ (໘) ສຫຸພກາຣາ ກະຖິນເດາະກຳຫນົດດ້ວຍການທີ່ກິກຸນຳຜ້າໄປຕັດຍິບຈີວອນຢູ່ນອກສີມາຄິດວ່າ ຈະກັບ ຈະກັບ ແຕ່ສົງຄ໌ໃນວັດຂອງຕົນພ້ອມໃຈກັນເດາະກະຖິນເສັຽກ່ອນ (ວິ. ມ. ໕/໓໑໐/໙໕)

໒ ສົງຄ໌ເດາະກະຖິນໃນຣະຫວ່າງ ຄືສົງຄ໌ກຣານກະຖິນແລ້ວ ຍັງບໍ່ພົ້ນເຂຕຈີວອນກາລ ມີທາຍົກຕ້ອງການຈະຖວາຍອກາລຈີວອນ ມາຂໍໃຫ້ສົງຄ໌ເດາະກະຖິນ ຄືຍກເລີກອານິສົງສ໌ກະຖິນໃນຣະຫວ່າງຈີວອນກາລ (ກ່ອນຫມົດເຂຕອານິສົງສ໌ກະຖິນ) ພຣະພຸທລອົງຄ໌ຊົງອນຸຍາຕໃຫ້ເດາະກະຖິນໄດ້ (ວິ. ກິກຂຸນີ. ໓/໙໒໕/໙໒໖/໑໒໑/໑໒໒)

໓ ອະທິຖານ ຄືການຕັ້ງເອົາໄວ້ຫລືຕັ້ງໃຈກຳຫນົດເອົາໄວ້ ໄດ້ແກ່ ຕັ້ງໃຈກຳຫນົດເອົາໄວ້ວ່າຈະເປັນຂອງປະຈຳຕົວຊນິດນັ້ນໆເຊັ່ນ ໄຕຣຈີວອນ ບາຕຣ ວິທີອະທິຖານ ໃຊ້ກາຍຄືມືສັມຜັສ ຫລືເປັ່ງວາຈາກໍໄດ້ (ວິ. ປ. ໘/໓໒໒/໒໖໑, ວິ. ອ. ໒/໔໖໙/໑໔໗)

໔ ເຣື່ອງດຽວກັນ ຄຳວ່າ ວິກັປ ຄືເຮັດໃຫ້ເປັນຂອງສອງເຈົ້າຂອງ ຄືຂໍໃຫ້ກິກຸສາມເຕຣຣູບອື່ນຮ່ວມເປັນເຈົ້າຂອງສິ່ງທີ່ວິກັປນັ້ນ ເຮັດໃຫ້ບໍ່ຕ້ອງອາບັຕິ ແມ່ນຈະເກັບໄວ້ເກີນກຳຫນົດ

໕ ຈີວອນ ໖ ຊນິດ ຄື ໂຂມະ(ຈີວອນຜ້າເປືອກໄມ້) ກັປປາສິກະ (ຈີວອນຜ້າຝ້າຍ) ໂກເສຍຍະ (ຈີວອນຜ້າໄຫມ) ກັມພິລະ (ຈີວອນຜ້າຂົນສັຕວ໌) ສາຓະ (ຈີວອນຜ້າປ່ານ) ກັງຄະ (ຈີວອນຜ້າຜສົມ) (ວິ. ອ. ໒/໔໖໒-໔໖໓/໑໔໒)

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ภิกษุຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນภิกษุຜູ້ແກ່ພັນສາ ນັ່ງຄຸເຂົ່າ ປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ภิกษุຜູ້ສລາດສາມາດເພິ່ງຮັບອາບັຕິ໑ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ

[໔໒໔] "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງภิกษุຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວເພິ່ງຄືນຈີວອນຜືນນີ້ແກ່ภิกษุຊື່ນີ້"

ສລະແກ່ຄຕະ

[໔໒໕] ภิกษุຮູບນັ້ນເພິ່ງເຂົ້າໄປຫາภิกษุຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນภิกษุຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ภิกษุຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ

[໔໒໖] "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງภิกษุຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິ່ງໃຫ້ຈີວອນຜືນນີ້ແກ່ภิกษุຊື່ນີ້"

ສລະແກ່ບຸຄຄົລ

[໔໒໗] ภิกษุຮູບນັ້ນເພິ່ງເຂົ້າໄປຫາภิกษุຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ภิกษุຜູ້ຮັບສລະນັ້ນເພິ່ງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ເຊີງອັນຖະ :

໑ ຄືຮັບການສະແດງອາບັຕິ ເພື່ອໃຫ້ภิกษุຜູ້ຕ້ອງອາບັຕິພົ້ນຈາກອາບັຕິ

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໔ຝັກູ] ຈີວອນເກີນກຳຫນົດ ໑໐ ວັນ ກິກຊຸສຳຄັນວ່າເກີນກຳຫນົດແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນເກີນກຳຫນົດ ໑໐ ວັນ ກິກຊຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນເກີນກຳຫນົດ ໑໐ ວັນ ກິກຊຸສຳຄັນວ່າຍັງບໍ່ເກີນກຳຫນົດ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນຍັງບໍ່ໄດ້ອລິຫຖານ ກິກຊຸສຳຄັນວ່າອລິຫຖານແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນຍັງບໍ່ໄດ້ວິກັປ ກິກຊຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນຍັງບໍ່ໄດ້ສລະ ກິກຊຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນຍັງບໍ່ສູນຫາຍ ກິກຊຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນຍັງບໍ່ຈິບຫາຍ ກິກຊຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນຍັງບໍ່ຖືກໄຟໄຫມ້ ກິກຊຸສຳຄັນວ່າຖືກໄຟໄຫມ້ແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຖືກໂຈຣຊິງເອົາໄປ ກິກຊຸສຳຄັນວ່າຖືກໂຈຣຊິງເອົາໄປແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕໜ໌] ໑. ຈີວວັຄ ໑. ປຖມກຖິນສິກຂາບົທ ອນາປັຕຕິວາຣ

ຕິກທຸກກຆ

ຈີວອນທີ່ເປັນນິສສັຄຄີຍ໌ ກິກຊຸຍັງບໍ່ໄດ້ສລະ ໃຊ້ສອຍ ຕ້ອງອາບັຕິທຸກກຆ
ຈີວອນຍັງບໍ່ເກີນກຳຫນົດ ໑໐ ວັນ ກິກຊຸສຳຄັນວ່າເກີນກຳຫນົດແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກຆ
ຈີວອນຍັງບໍ່ເກີນກຳຫນົດ ໑໐ ວັນ ກິກຊຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິທຸກກຆ
ຈີວອນຍັງບໍ່ເກີນກຳຫນົດ ໑໐ ວັນ ກິກຊຸສຳຄັນວ່າຍັງບໍ່ເກີນກຳຫນົດ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຊຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔ຝັລ] ໑. ກິກຊຸຜູ້ອລິຫຖານພາຍໃນ ໑໐ ວັນ
໒. ກິກຊຸຜູ້ວິກັປໄວ້ພາຍໃນ ໑໐ ວັນ

໓. ພິກຂຸຜູ້ສລະໃຫ້ໄປພາຍໃນ ໑໐ ວັນ
໔. ພິກຂຸຜູ້ມີຈີວອນສູນຫາຍພາຍໃນ ໑໐ ວັນ
໕. ພິກຂຸຜູ້ມີຈີວອນຈິບຫາຍພາຍໃນ ໑໐ ວັນ
໖. ພິກຂຸຜູ້ມີຈີວອນຖືກໄຟໄໝ້ພາຍໃນ ໑໐ ວັນ
໗. ພິກຂຸຜູ້ມີຈີວອນຖືກໂຈຣຊິງເອົາໄປພາຍໃນ ໑໐ ວັນ
໘. ພິກຂຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະພາຍໃນ ໑໐ ວັນ
໙. ພິກຂຸວິກົລຈິຕ
໑໐. ພິກຂຸຕົ້ນບັນຍັດ

[໔໗໐] ສມັຍນັ້ນ ພວກພິກຂຸຈັພພັຄຄີຍ໌ບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ລະ” ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕສ໌] ໑. ຈີຣວັຄ ໑. ປຖມກຖິນສິກຂາບົທ ອນາປັຕຕິວາຣ

ຊົງສອບຖາມແລ້ວອນຸຍາຕໃຫ້ຄືນຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ “ຊາບວ່າພວກທ່ານບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ ແມ່ນແທ້ບໍ” ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ “ຈິງພຣະພຸທລເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທລເຈົ້າຊົງຕຳໜິວ່າ “ຯລຯ ຈັ່ງໃດພວກທ່ານຈຶ່ງບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ ຯລຯ” ດັ່ງນີ້ ແລ້ວຊົງສະແດງທັມມີກຖາແກ່ພິກຂຸທັງຫລາຍໃຫ້ເໝາະສົມກັບເຣື້ອງນັ້ນ ແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ “ພິກຂຸທັງຫລາຍ ຈີວອນທີ່ພິກຂຸສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລຈະບໍ່ຄືນບໍ່ໄດ້ ພິກຂຸໃດບໍ່ຄືນໃຫ້ ພິກຂຸນັ້ນຕ້ອງອາບັຕິທຸກກຕ”

ປຖມກກິນສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ຈີຣວັຄ ໔. ອຸທໂຫສິຕສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໔. ອຸທໂຫສິຕສິກຂາບົທ

ວ່າດ້ວຍພິກສຸເກັບຈີວອນໄວ້ໃນໂຮງເກັບຂອງ (ວ່າດ້ວຍກກິນເດາະຂໍ້ທີ ໔)

ເຣື້ອງພິກສຸຫລາຍຮູບ

[໔໗໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຕະ ພຣະເຊຕວັນ ອາຮາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸທັງຫລາຍຝາກສັງຘາຕີໄວ້ກັບພວກພິກສຸມີພຽງອຸຕຕ ຣາສົງຄ໌ກັບອັນຕຣວາສກອອກຈາຣິກໄປສູ່ຊົນບົທ ສັງຘາຕີເຫລົ່ານັ້ນເກັບໄວ້ນານຈຶ່ງຂຶ້ນຣາ ພິກສຸ ທັງຫລາຍຈຶ່ງນຳອອກມາຜຶ່ງແດດ ທ່ານພຣະອານົນທ໌ທຽວໄປຕາມເສນາສນະ ເຫັນພິກສຸກຳລັງຜຶ່ງ ສັງຘາຕີຢູ່ຈຶ່ງເຂົ້າໄປຖາມພິກສຸເຫລົ່ານັ້ນວ່າ "ທ່ານທັງຫລາຍ ສັງຘາຕີທີ່ຂຶ້ນຣາເຫລົ່ານີ້ເປັນຂອງ ໃຜ" ລຳດັບນັ້ນ ພິກສຸເຫລົ່ານັ້ນບອກເຣື້ອງນັ້ນໃຫ້ພຣະອານົນທ໌ຊາບ ທ່ານພຣະອານົນທ໌ຕຳໜິ ປະ ນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງຝາກ ສັງຘາຕີໄວ້ກັບພວກພິກສຸ ມີພຽງອຸຕຕ ຣາສົງຄ໌ກັບອັນຕຣວາສກອອກຈາຣິກໄປສູ່ຊົນບົທລະ" ຄັນທ່ານຕຳໜິພິກສຸເຫລົ່ານັ້ນໂດຍປະກາຣ ຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບຊົງປະຊຸມສົງຘ໌ບັນຍັດສິກຂາບົທ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສອບຖາມພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍຊາບວ່າ ພວກພິກສຸ ຝາກສັງຘາຕີໄວ້ກັບພວກພິກສຸ ມີພຽງອຸຕຕຣາສົງຄ໌ກັບອັນຕຣວາສກ ອອກຈາຣິກໄປສູ່ຊົນບົທ ແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລ ເຈົ້າຊົງຕຳໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດພວກໂມຄບຸຣຸຫເຫລົ່ານັ້ນຈຶ່ງຝາກຈີວອນໄວ້ກັບ ພວກພິກສຸ ມີພຽງອຸຕຕຣາສົງຄ໌ແລະອັນຕຣວາສກອອກຈາຣິກໄປສູ່ຊົນບົທລະພິກສຸທັງຫລາຍ ການ ກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມ ໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ດັ່ງນີ້ແລ້ວຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກ ຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໔] ເມື່ອຈີວອນຂອງພິກຂຸສຳເຣັຈແລ້ວ ເມື່ອກຖິນເດາະແລ້ວ ຖ້າພິກຂຸຢູ່ປາສຈາກໄຕຣຈີວອນແມ່ນສິ້ນຣາຕຣີນຶ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງພິກຂຸຫລາຍຮູບ ຈົບ

ເຣື້ອງພິກຂຸເປັນໄຂ້

[໔໗໕] ສມັຍນັ້ນ ພິກຂຸຮູບນຶ່ງເປັນໄຂ້ຢູ່ກຸງໂກສັມພີ ພວກຍາຕສົ່ງທູຕໄປສຳນັກຂອງພິກຂຸນັ້ນໃຫ້ແຈ້ງຂ່າວວ່າ "ນິມົນຕ໌ພຣະຄຸຓທ່ານມາເຖີດ ພວກເຮົາຈະອຸປັຏຖາກ" ພິກຂຸທັງຫລາຍກໍກ່າວຢ່າງນີ້ວ່າ "ທ່ານໄປເຖີດ ພວກຍາຕຈະອຸປັຏຖາກທ່ານເອງ" ພິກຂຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ 'ພິກຂຸບໍ່ເພິງຢູ່ປາສຈາກໄຕຣຈີວອນ' ຜູ້ຂ້າເປັນໄຂ້ບໍ່ສາມາດນຳໄຕຣຈີວອນໄປໄດ້ ຜູ້ຂ້າຈະບໍ່ໄປ" ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສົມມຸດຕິຈີວຣາວິປວາສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງຫລາຍວ່າ "ເຮົາອນຸຍາຕໃຫ້ສົມມຸດເພື່ອບໍ່ເປັນການຢູ່ປາສຈາກໄຕຣຈີວອນ ເພື່ອພິກຂຸຜູ້ເປັນໄຂ້" ພິກຂຸທັງຫລາຍ ສົງຄ໌ເພິງໃຫ້ສົມມຸດຢ່າງນີ້

ວິທີສົມມຸດຕິຈີວຣາວິປວາສ

ພິກຂຸຜູ້ເປັນໄຂ້ນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າເປັນໄຂ້ບໍ່ສາມາດນຳໄຕຣຈີວອນໄປໄດ້ ຜູ້ຂ້າຂໍໃຫ້ສົງຄ໌ສົມມຸດເພື່ອບໍ່ເປັນການຢູ່ປາສຈາກໄຕຣຈີວອນ ເພິງກ່າວຂໍຢ່າງນີ້ເປັນຄັ້ງທີ ໔ ເພິງກ່າວຂໍຢ່າງນີ້ເປັນຄັ້ງທີ ໕ ພິກຂຸຜູ້ສລາດສາມາດເພິງປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໔໗໔] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ທີກສຸຊື່ນີ້ເປັນໄຂ້ ບໍ່ສາມາດນຳໄຕຣຈີວອນໄປໄດ້ ທ່ານຂໍໃຫ້ສົງຄ໌ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ຖ້າສົງຄ໌ພ້ອມກັນແລ້ວເພິງໃຫ້ສົມມຸດ ເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນແກ່ທີກສຸຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ທີກສຸຊື່ນີ້ເປັນໄຂ້ບໍ່ສາມາດນຳໄຕຣຈີວອນໄປໄດ້ ທ່ານຂໍໃຫ້ສົງຄ໌ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ສົງຄ໌ໃຫ້ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນແກ່ທີກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບກາຣໃຫ້ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນແກ່ທີກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍທ່ານຮູບນັ້ນເພິງທັກທ້ວງກາຣສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ສົງຄ໌ໃຫ້ແກ່ທີກສຸຊື່ນີ້ແລ້ວ ສົງຄ໌ເຫັນຊອບເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້" ແລ້ວຈຶ່ງຮັບສັ່ງໃຫ້ທີກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໗໕] ເມື່ອຈີວອນຂອງທີກສຸສຳເຣັຈແລ້ວ ເມື່ອກຖິນເດາະແລ້ວ ຖ້າທີກສຸຢູ່ປາສຈາກໄຕຣຈີວອນແມ່ນສິ້ນຣາຕຣີນຶ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ທີກສຸໄດ້ຮັບສົມມຸດ

ສິກຂາບົທວິກັງຄ໌

[໔໗໖] ຄຳວ່າ ເມື່ອຈີວອນ. . . ສຳເຣັຈແລ້ວ ໝາຍຄວາມວ່າ ຈີວອນຂອງທີກສຸທຳເສັດແລ້ວ ສູນຫາຍແລ້ວ ຈິບຫາຍແລ້ວ ຖືກໄຟໄໝ້ແລ້ວ ຫລືທີກສຸໝົດຫວັງວ່າຈະໄດ້ຜ້າມາຍົບເປັນຈີວອນ

ຄຳວ່າ ເມື່ອກຖິນເດາະແລ້ວ ໝາຍຄວາມວ່າ ກຖິນເດາະດ້ວຍມາຕິກາຢ່າງໃດຢ່າງນຶ່ງໃນມາຕິກາ ໘ ຫລືສົງຄ໌ເດາະພາຍໃນຣະຫວ່າງ

ຄຳວ່າ ຖ້າທີກສຸຢູ່ປາສຈາກໄຕຣຈີວອນແມ່ນສິ້ນຣາຕຣີນຶ່ງ ຄວາມວ່າ ທີກສຸຢູ່ປາສຈາກສັງຄາຕິ ອຸຕຕຣາສົງຄ໌ຫລືອັນຕຣວາສກ ຜືນໃດຜືນນຶ່ງ ແມ່ນຄືນດຽວ

ຄຳວ່າ ເວັ້ນແຕ່ທີກສຸໄດ້ຮັບສົມມຸດ ຄື ຍົກເວັ້ນທີກສຸຜູ້ໄດ້ຮັບສົມມຸດ

ຄຳວ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ຄື ຈີວອນເປັນນິສສັຄຄີຍ໌ພ້ອມກັບອຣຸຕຂຶ້ນ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລທີກສຸທັງຫລາຍ ທີກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າ ຢູ່ປຣາສແລ້ວລ່ວງຣາຕຣີ ເວັ້ນຈາກໄດ້ຮັບກາຣສົມມຸດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມ ອາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຕະ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສແລ້ວລ່ວງຣາຕຣີ ເວັ້ນຈາກໄດ້ຮັບກາຣສົມມຸດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ບຸຄຄົລ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສແລ້ວລ່ວງຣາຕຣີ ເວັ້ນຈາກໄດ້ຮັບກາຣ ສົມມຸດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ ຮັບສລະນັ້ນເພິງຮັບອາບັຕິ ແລ້ວເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ມາຕິກາ

[໕໗໗] ຫມູ່ບ້ານ ມີອຸປຈາຣດຽວກັນ໑ ຫມູ່ບ້ານ ມີອຸປຈາຣແຍກກັນ

ເຮືອນ ມີອຸປຈາຣດຽວກັນ ເຮືອນ ມີອຸປຈາຣແຍກກັນ

ໂຮງເກັບຂອງ ມີອຸປຈາຣດຽວກັນ ໂຮງເກັບຂອງ ມີອຸປຈາຣແຍກກັນ
ປ້ອມ ມີອຸປຈາຣດຽວກັນ ປ້ອມ ມີອຸປຈາຣແຍກກັນ
ເຮືອນຍອດດຽວ ມີອຸປຈາຣດຽວກັນ ເຮືອນຍອດດຽວ ມີອຸປຈາຣແຍກກັນ
ປຣາສາທ ມີອຸປຈາຣດຽວກັນ ປຣາສາທ ມີອຸປຈາຣແຍກກັນ
ເຮືອນໂລ້ນ໒ ມີອຸປຈາຣດຽວກັນ ເຮືອນໂລ້ນ ມີອຸປຈາຣແຍກກັນ
ເຮືອ ມີອຸປຈາຣດຽວກັນ ເຮືອ ມີອຸປຈາຣແຍກກັນ
ຫມູ່ກວຽນ ມີອຸປຈາຣດຽວກັນ ຫມູ່ກວຽນ ມີອຸປຈາຣແຍກກັນ
ນາ ມີອຸປຈາຣດຽວກັນ ນາ ມີອຸປຈາຣແຍກກັນ
ລານນວດເຂົ້າ ມີອຸປຈາຣດຽວກັນ ລານນວດເຂົ້າ ມີອຸປຈາຣແຍກກັນ
ສວນ ມີອຸປຈາຣດຽວກັນ ສວນ ມີອຸປຈາຣແຍກກັນ
ວິຫາຣ ມີອຸປຈາຣດຽວກັນ ວິຫາຣ ມີອຸປຈາຣແຍກກັນ
ເຫງົ້າໄມ້ ມີອຸປຈາຣດຽວກັນ ເຫງົ້າໄມ້ ມີອຸປຈາຣແຍກກັນ
ທີ່ກາງແຈ້ງ ມີອຸປຈາຣດຽວກັນ ທີ່ກາງແຈ້ງ ມີອຸປຈາຣແຍກກັນ

ເຊີງອັນຖະ :

໑ ຄຳວ່າ "ອຸປຈາຣ" ຄືທີ່ໃກ້ຄຽງກັນບໍຣິເວຕຮອບໆຊານ ເຊັ່ນອຸປຈາຣເຮືອນຄືບໍຣິເວຕຮອບໆເຮືອນ ຊຶ່ງກຳຫນົດຈຸດທີ່ຢູ່ນອກບໍຣິເວຕຊາຍຄາຂອງຕົວເຮືອນອອກໄປເຖິງຈຸດທີ່ແມ່ບ້ານຢືນຢູ່ທີ່ປະຕູເຮືອນສາດນ້ຳລ້າງກາຊນະອອກໄປຕົກ (ວິ. ອ. ໑/ລ໒/ໝ໒໒)

໒ ທັມມິຍະ ເຮືອນໂລ້ນ ໄດ້ແກ່ ປຣາສາທຫລັງຄາໂລ້ນ ມີເຮືອນຍອດຕັ້ງຢູ່ທີ່ດາດຟ້າ ມີຊານຊົມແສງຈັນທຣ໌ (ວິ. ອ. ໒/໔ຖ໒-ຖ/໑໕ລ, ວິ. ອ. ໝ/໒ລ໔/ໝ໑ລ, ສາຣຕຸຖ. ຝີກາ ໝ/ຖ໑-ຖໝ/໒ຖ໕, ວິມຕິ. ຝີກາ ໒/ຖ໑-ຖໝ/໑ໝ໕)

[໔ຖຖ] ທີ່ຊື່ວ່າ ຫມູ່ບ້ານມີອຸປຈາຣດຽວກັນ ຄື ຫມູ່ບ້ານຂອງຕະກູນນຶ່ງລ້ອມຮົ້ວໄວ້ດ້ວຍກັນ ກິກຂຸເກັບຈີວອນໄວ້ພາຍໃນຫມູ່ບ້ານ ແລ້ວເພິງຢູ່ພາຍໃນຫມູ່ບ້ານ ທີ່ຊື່ວ່າ ຫມູ່ບ້ານມີອຸປຈາຣແຍກກັນ ໑ ຄື ຫມູ່ບ້ານຂອງຕະກູນນຶ່ງບໍ່ມີຮົ້ວລ້ອມ ກິກຂຸຕ້ອງຢູ່ໃນເຮືອນທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັຕຖບາສ

[໔໗໙] ໝູ່ບ້ານຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸຕ້ອງຢູ່ໃນເຮືອນ ທີ່ຕົນເກັບຈີວອນໄວ້ ໃນຫໍປະຊຸມຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ເມື່ອໄປຫໍປະຊຸມຕ້ອງເກັບຈີວອນໄວ້ໃນຫັດຖຸບາສແລ້ວຢູ່ໃນຫໍປະຊຸມຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ
ກິກຂຸເກັບຈີວອນໃນຫໍປະຊຸມ ຕ້ອງຢູ່ໃນຫໍປະຊຸມຫລືທີ່ຮິມປະຕູຫລືບໍ່ລະຫັດຖຸບາສ
ໝູ່ບ້ານບໍ່ມີຮົ້ວລ້ອມ ກິກຂຸຕ້ອງຢູ່ໃນເຮືອນ ທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ

[໔໘໐] ເຮືອນ ຂອງຕະກູນນຶ່ງລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ກິກຂຸເກັບຈີວອນໄວ້ພາຍໃນເຮືອນ ຕ້ອງຢູ່ພາຍໃນເຮືອນ
ເຮືອນບໍ່ມີຮົ້ວລ້ອມ ກິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ

[໔໘໑] ເຮືອນ ຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ກິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ
ເຮືອນບໍ່ມີຮົ້ວລ້ອມ ກິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ

ເຊີງອັນຖະ :
໑ ໝູ່ບ້ານທີ່ຈັດວ່າມີອຸປຈາຣດຽວກັນ ທ່ານກຳໜົດດ້ວຍລ້ອມຮົ້ວໄວ້ດ້ວຍກັນ, ທີ່ຈັດວ່າມີປຈາຣແຍກກັນ ທ່ານກຳໜົດດ້ວຍບໍ່ມີຮົ້ວລ້ອມ (ປຣິກຸຂິຕໍໂຕຕິ. . . ເອຕໍຕາວຕາ ເອກກຸລຄາມສຸສ ເອກູປຈາຣຕາ ທສຸສິຕາ. ຮເປຮ ອປຣິກຸຂິຕໍໂຕຕິ ອິມິນາ ຕສຸເສວ ຄາມສຸສ ນານູປຈາຣຕາ ທສຸສິຕາ - ວິ. ອ. ໒/໔໗໘/໑໕໗)

[໔໘໒] ໂຮງເກັບຂອງ ຂອງຕະກູນນຶ່ງລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ກິກຂຸຕ້ອງຢູ່ໃນໂຮງເກັບຂອງທີ່ຕົນເກັບຈີວອນໄວ້
ໂຮງເກັບຂອງບໍ່ມີຮົ້ວລ້ອມ ກິກຂຸຕ້ອງຢູ່ໃນຫ້ອງເກັບຂອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ

[໔໘໓] ໂຮງເກັບຂອງ ຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງເລັກຫລາຍຫ້ອງ ກິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ
ໂຮງເກັບຂອງບໍ່ມີຮົ້ວລ້ອມ ກິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ

[໔໗໔] ປ້ອມ ຂອງຕະກູນນຶ່ງ ພິກຂຸຕ້ອງຢູ່ພາຍໃນປ້ອມທີ່ຕົນເກັບຈີວອນໄວ້
ປ້ອມຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ

[໔໗໕] ເຮືອນຍອດດຽວ ຂອງຕະກູນນຶ່ງ ພິກຂຸຕ້ອງຢູ່ພາຍໃນເຮືອນຍອດດຽວທີ່ຕົນເກັບຈີວອນໄວ້
ເຮືອນຍອດດຽວຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ

[໔໗໖] ປຣາສາທ ຂອງຕະກູນນຶ່ງ ພິກຂຸຕ້ອງຢູ່ໃນປຣາສາທທີ່ຕົນເກັບຈີວອນໄວ້
ປຣາສາທຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ

[໔໗໗] ເຮືອນໂລ້ນ ຂອງຕະກູນນຶ່ງ ພິກຂຸຕ້ອງຢູ່ພາຍໃນເຮືອນໂລ້ນທີ່ຕົນເກັບຈີວອນໄວ້
ເຮືອນໂລ້ນຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ

[໔໗໘] ເຮືອ ຂອງຕະກູນນຶ່ງ ພິກຂຸຕ້ອງຢູ່ພາຍໃນເຮືອທີ່ຕົນເກັບຈີວອນໄວ້
ເຮືອຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກຂຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ

[໔໗໙] ຫມູ່ກອງງຸນ ຂອງຕະກູນນຶ່ງ ພິກຂຸຕ້ອງບໍ່ລະອັພກັນດຣ໑ ດ້ານຫນ້າຫລືດ້ານຫລັງ ຂ້າງລະໆ ອັພກັນດຣ ດ້ານຂ້າງດ້ານລະ ໑ ອັພກັນດຣ
ຫມູ່ກອງງຸນຂອງຕ່າງຕະກູນ ພິກຂຸເກັບຈີວອນໄວ້ໃນຫມູ່ກອງງຸນ ຕ້ອງບໍ່ລະຫັດຖຸບາສ

[໔໘໐] ນາ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ພິກຂຸຕ້ອງຢູ່ພາຍໃນນາທີ່ຕົນເກັບຈີວອນໄວ້
ນາບໍ່ມີຮົ້ວລ້ອມ ພິກຂຸຕ້ອງບໍ່ລະຫັດຖຸບາສ
ນາຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ພິກຂຸເກັບຈີວອນໄວ້ພາຍໃນນາ ຕ້ອງຢູ່ທີ່ຮິມປະຕູຫລືບໍ່ລະຫັດຖຸບາສ ນາທີ່ບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ

[໔໒໑] ລານນວດເຂົ້າ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸຕ້ອງຢູ່ພາຍໃນລານນວດເຂົ້າທີ່ຕົນເກັບຈີວອນໄວ້ ລານນວດເຂົ້າຂອງຕະກູນນຶ່ງບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ
ລານນວດເຂົ້າຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸເກັບຈີວອນໄວ້ພາຍໃນລານນວດເຂົ້າຕ້ອງຢູ່ທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ລານນວດເຂົ້າຂອງຕ່າງຕະກູນບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ

[໔໒໒] ສວນ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸເກັບຈີວອນໄວ້ພາຍໃນສວນ ຕ້ອງຢູ່ພາຍໃນສວນ ສວນທີ່ບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ
ສວນຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸເກັບຈີວອນໄວ້ພາຍໃນສວນ ຕ້ອງຢູ່ທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ສວນທີ່ບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ

[໔໒໓] ວິຫານ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸເກັບຈີວອນໄວ້ໃນວິຫານ ຕ້ອງຢູ່ພາຍໃນວິຫານ ວິຫານຂອງຕະກູນນຶ່ງບໍ່ມີຮົ້ວລ້ອມ ຕ້ອງຢູ່ໃນວິຫານທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ
ວິຫານຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ກິກຂຸຕ້ອງຢູ່ໃນວິຫານທີ່ຕົນເກັບຈີວອນໄວ້ ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ວິຫານຂອງຕ່າງຕະກູນບໍ່ມີຮົ້ວລ້ອມ ຕ້ອງຢູ່ໃນວິຫານທີ່ຕົນເກັບຈີວອນໄວ້ ຫລືບໍ່ລະຫັດຖຸບາສ

[໔໒໔] ເຫງົ້າໄມ້ຂອງຕະກູນນຶ່ງ ກຳຫນົດເຂດທີ່ເງົາແຜ່ໄປຮອບໆເວລາທ່ຽງວັນ ກິກຂຸເກັບຈີວອນພາຍໃນເຂດເງົາ ຕ້ອງຢູ່ໃນເຂດເງົາ
ເຫງົ້າໄມ້ຂອງຕ່າງຕະກູນ ຕ້ອງບໍ່ລະຫັດຖຸບາສ
ທີ່ຊື່ວ່າທີ່ກາງແຈ້ງມີອຸປຈາຣດຽວກັນ ຄື ປ່າບໍ່ມີບ້ານ ກຳຫນົດ ໗ ອັພກັນດຣ ໂດຍຮອບ ເປັນອຸປຈາຣດຽວ ພົ້ນກຳຫນົດນັ້ນເປັນອຸປຈາຣແຍກກັນ

ເຊີງອັນຖະ :

໑ ຄຳວ່າ "ອັພກັນດຣ" ເປັນມາດຕຣາວັດໃນກາສາມຄຣ ທຽບເທົ່າ ໒໘ ສອກ ຫລື ໗ ວາ (ເອຕໍ ອພຸການຕຣໍ ອຏຸກວີສຕິຫຕຸຖໍ ໂຫຕິ - ວິ. ອ. ໒/໔໗໒/໑໕໒)

ນິສສັຄຄິຍປາຈິຕຕີย໌

[໔໙໕] ຈີວອນຢູ່ປຣາສແລ້ວ ກິກษຸສຳຄັນວ່າຢູ່ປຣາສແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຢູ່ປຣາສແລ້ວ ກິກษຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຢູ່ປຣາສແລ້ວ ກິກษຸສຳຄັນວ່າບໍ່ຢູ່ປຣາສແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຍັງບໍ່ໄດ້ຖອນ ກິກษຸສຳຄັນວ່າຖອນແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ ກິກษຸໄດ້ຮັບສົມມຸດ

ຈີວອນຍັງບໍ່ໄດ້ສລະໃຫ້ ກິກษຸສຳຄັນວ່າສລະໃຫ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຍັງບໍ່ສູນຫາຍ ກິກษຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຍັງບໍ່ຈິບຫາຍ ກິກษຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຍັງບໍ່ຖືກໄຟໄຫມ້ ກິກษຸສຳຄັນວ່າຖືກໄຟໄຫມ້ແລ້ວ ຕ້ອງອາບັຕິນິສສັຄຄິຍ ປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ຈີວອນຍັງບໍ່ຖືກໂຈຣຊິງ ກິກษຸສຳຄັນວ່າຖືກໂຈຣຊິງໄປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີย໌ ເວັ້ນແຕ່ກິກษຸໄດ້ຮັບສົມມຸດ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັດຫ໌] ໑. ຈີຣວັຄ ໔. ອຸທໂທສິຕສິກຂາບົທ ອນາປັຕຕິວາຣ

ທຸກກຸກກົດ

ຈີວອນເປັນນິສສັຄຄີย໌ ກິກษຸຍັງບໍ່ສລະ ໃຊ້ສອຍ ຕ້ອງອາບັຕິທຸກກົດ

ຈີວອນບໍ່ຢູ່ປຣາສ ກິກษຸສຳຄັນວ່າຢູ່ປຣາສແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກົດ

ຈີວອນບໍ່ຢູ່ປຣາສ ພິກຂຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິທຸກກຜ
ຈີວອນບໍ່ຢູ່ປຣາສ ພິກຂຸສຳຄັນວ່າບໍ່ຢູ່ປຣາສ ໃຊ້ສອຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໘໖] ໑. ພິກຂຸຜູ້ຖອນພາຍໃນອຣຸຓ

໒. ພິກຂຸຜູ້ສລະໃຫ້ໄປ

໓. ພິກຂຸຜູ້ມີຈີວອນສູນຫາຍ

໔. ພິກຂຸຜູ້ມີຈີວອນຈິບຫາຍ

໕. ພິກຂຸຜູ້ມີຈີວອນຖືກໄຟໄໝ້

໖. ພິກຂຸຜູ້ມີຈີວອນຖືກໂຈຣຊິງເອົາໄປ

໗. ພິກຂຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະ

໘. ພິກຂຸໄດ້ຮັບສົມມຸດ

໙. ພິກຂຸວິກົລຈິຕ

໑໐. ພິກຂຸຕົ້ນບັນຍັດ

ອຸທໂທສິຕສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຑ໌] ໑. ຈີຣວັຄ ໓. ຕຕິຍກຖິນສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໓. ຕຕິຍກຖິນສິກຂາບົທ ວ່າດ້ວຍກຖິນເດາະຂໍ້ທີ່ ໓

ເຣື່ອງພິກຂຸຮັບອກາລຈີວອນ

[໔໘໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຊເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຓ ຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອກາລຈີວອນ໑ ໄດ້ເກີດຂຶ້ນແກ່ພິກຂຸຮູບນຶ່ງ ທ່ານຈະທຳຈີວອນແຕ່ຜ້າບໍ່ພໍ ຈຶ່ງພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຮີດເປັນຫລາຍຄັ້ງ ພຣະຜູ້ມີພຣະກາຄສເດັຈໄປ

ຕາມເສນາສນະ ທອດພຣະເນຕຣເຫັນທ່ານພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຮີດເປັນຫລາຍຄັ້ງ ຈຶ່ງສເດັຈເຂົ້າໄປຫາກິກສຸຮູບນັ້ນ ຄັນເຖິງແລ້ວຕຣັສຖາມວ່າ "ທ່ານພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຮີດເປັນຫລາຍຄັ້ງ ເພື່ອຫຍັງ" ກິກສຸນັ້ນຂາບທູລວ່າ "ຂ້າພຣະອົງຄ໌ໄດ້ຜ້າທີ່ເປັນອກາລຈີວອນ ຄັນຈະທຳຈີວອນຜ້າບໍ່ພໍ ດັ່ງນັ້ນຈຶ່ງພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຮີດເປັນຫລາຍຄັ້ງ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສຖາມວ່າ "ກິກສຸ ທ່ານມີຄວາມຫວັງຈະໄດ້ຜ້າສຳລັບທຳຈີວອນອີກຫລື" ກິກສຸນັ້ນຂາບທູລວ່າ "ມີຄວາມຫວັງ ພຣະພຸທສເຈົ້າຂ້າ"

ຊົງອນຸຍາຕອກາລຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເອື້ອງນີ້ເປັນຕົ້ນເຫຕຸ ຣັບສັ່ງກັບກິກສຸທັງຫລາຍວ່າ "ເຮົາອນຸຍາຕໃຫ້ຮັບຜ້າທີ່ເປັນອກາລຈີວອນແລ້ວເກັບໄວ້ໂດຍມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ"

ເຊີງອັນຖະ :

໑ ອກາລຈີວອນ ຫມາຍເຖິງຜ້າສຳລັບທຳຈີວອນທີ່ເກີດຂຶ້ນນອກຣະດູກາລ ຄືນອກກາລທີ່ກິກສຸຈະເພິງຮັບຜ້າຜືນທີ ໔ ນອກຈາກໄຕຣຈີວອນເກັບໄວ້ໄດ້ (ດູເຊີງອັນຖະ ຂໍ້ ໕໐໐ ຫນ້າ ໔໑ ໃນເຫລັ້ມນີ້)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕ໌] ໑. ຈີຣວັຄ ນ໌. ຕຕິຍກຖິນສິກຂາບົທ ພຣະບັນຍັດ

[໔໙໗] ຕໍ່ມາ ກິກສຸທັງຫລາຍຊາບວ່າ ພຣະຜູ້ມີພຣະກາຄຊົງອນຸຍາຕໃຫ້ຮັບຜ້າທີ່ເປັນອກາລຈີວອນເກັບໄວ້ໄດ້ໂດຍມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ຈຶ່ງຮັບຜ້າທີ່ເປັນອກາລຈີວອນເກັບໄວ້ເກີນ ໑ ເດືອນ ຜ້າເຫລົ່ານັ້ນຖືກມັດຮວມເປັນຫໍ່ໆແຂວນໄວ້ທີ່ຣາວ ທ່ານພຣະອານົນທ໌ທຽວໄປຕາມເສນາສນະ ເຫັນຜ້າເຫລົ່ານັ້ນຖືກມັດຮວມເປັນຫໍ່ໆແຂວນໄວ້ທີ່ຣາວ ຈຶ່ງຖາມກິກສຸທັງຫລາຍວ່າ "ຜ້າເຫລົ່ານັ້ນຖືກມັດຮວມເປັນຫໍ່ໆແຂວນໄວ້ທີ່ຣາວ ເປັນຂອງໃຜ" ກິກສຸທັງຫລາຍຕອບວ່າ "ຜ້າເຫລົ່ານີ້ເປັນອກາລຈີວອນ ພວກຜູ້ຂ້າເກັບໄວ້ໂດຍຄວາມຫວັງວ່າຈະໄດ້ຜ້າມາເພີ້ມ" ພຣະອານົນທ໌ຖາມວ່າ "ເກັບໄວ້ດົນເທົ່າໃດ" ກິກສຸທັງຫລາຍຕອບວ່າ "ເກັບໄວ້ເກີນ ໑ ເດືອນ ຂນ້ອຍ" ພຣະອານົນທ໌ຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດກິກສຸທັງຫລາຍຈຶ່ງຮັບຜ້າທີ່ເປັນອກາລຈີວອນເກັບ

ໄວ້ເກີນ ໑ ເດືອນລະ" ຄັນທ່ານຕຳໜິຕິກິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປ ຂາບທູລພຣະຜູ້ມີພຣະການໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະການຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື້ອງນີ້ເປັນຕົ້ນເຫດ ຊົງສອບຖາມກິກສຸ ທັງຫລາຍວ່າ "ກິກສຸທັງຫລາຍ ຊາບວ່າ ກິກສຸທັງຫລາຍຮັບຜ້າທີ່ເປັນອການຈີວອນເກັບໄວ້ເກີນ ໑ ເດືອນ ແມ່ນແທ້ບໍ່" ກິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະການ ພຸທສເຈົ້າຊົງຕຳໜິວ່າ "ຯລຯ ກິກສຸທັງຫລາຍ ຈັ່ງໃດໂມຆບຸຣຸສເຫລົ່ານັ້ນຈຶ່ງຮັບຜ້າທີ່ເປັນອການ ຈີວອນແລ້ວເກັບໄວ້ເກີນ ໑ ເດືອນລະ ກິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງ ບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໙໙] ເມື່ອຈີວອນຂອງກິກສຸສຳເຣັຈແລ້ວ ເມື່ອກຖິນເດາະແລ້ວ ອການຈີວອນເກີດຂຶ້ນແກ່ກິກສຸ ກິກສຸຕ້ອງການກໍເພິ່ງຮັບໄວ້ໄດ້ ຄັນຮັບແລ້ວເພິ່ງຮີບໃຫ້ທຳເປັນຈີວອນ ຖ້າຜ້ານັ້ນມີບໍ່ພໍ ເມື່ອມີ ຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ກິກສຸນັ້ນເພິ່ງເກັບຜ້າສຳລັບທຳຈີວອນນັ້ນໄວ້ບໍ່ເກີນ ໑ ເດືອນ ເພື່ອເພີ້ມຜ້າສຳລັບທຳຈີວອນທີ່ຍັງຂາດໃຫ້ຄົບ ຖ້າເກັບເກີນກຳໜົດນັ້ນ ແມ່ນມີຄວາມຫວັງວ່າຈະ ໄດ້ຜ້າມາເພີ້ມ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງກິກສຸຮັບອການຈີວອນ ຈົບ

ສິກຂາບົທວິກັງຄ໌

[໕໐໐] ຄຳວ່າ ເມື່ອຈີວອນ. . . ສຳເຣັຈແລ້ວ ໝາຍຄວາມວ່າ ຈີວອນຂອງກິກສຸທຳເສັດແລ້ວ ສູນຫາຍແລ້ວ ຈິບຫາຍແລ້ວ ຖືກໄຟໄໝ້ເສັງແລ້ວ ຫລືກິກສຸໝົດຫວັງວ່າຈະໄດ້ຜ້າມາຍົບເປັນ ຈີວອນ

ຄຳວ່າ ເມື່ອກຖິນເດາະແລ້ວ ໝາຍຄວາມວ່າ ກຖິນເດາະດ້ວຍມາຕິກາຢ່າງໃດຢ່າງນຶ່ງໃນມາຕິກາ ໘ ຫລືສົງຆ໌ເດາະກຖິນໃນຣະຫວ່າງ

ທີ່ຊື່ວ່າ ອການຈີວອນ ໄດ້ແກ່ ຜ້າທີ່ເກີດຂຶ້ນຕລອດ ໑໑ ເດືອນ ໃນເມື່ອບໍ່ໄດ້ກຣານກຖິນ ຜ້າທີ່ ເກີດຂຶ້ນຕລອດ ໗ ເດືອນ ໃນເມື່ອໄດ້ກຣານກຖິນແລ້ວ ແມ່ນຜ້າທີ່ເຂົາຖວາຍເຈາະຈົງໃນການ

ນີ້ຊື່ວ່າ ອກາລຈີວອນ໑
ຄຳວ່າ ເກີດຂຶ້ນ ຄື ເກີດຈາກສົງຄ໌ ຈາກຄຕະ ຈາກຍາຕ ຈາກມິຕຣ ຫລືທີ່ເປັນຜ້າບັງສຸກຸລ ຫລືທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ
ຄຳວ່າ ຕ້ອງການ ຄື ເມື່ອຕ້ອງການກໍຮັບໄວ້
ຄຳວ່າ ຄັນຮັບແລ້ວເພິ່ງຮີບໃຫ້ທຳ ຄື ເພິ່ງໃຫ້ທຳເສັດພາຍໃນ ໑໐ ວັນ
ຄຳວ່າ ຖ້າຜ້ານັ້ນມີບໍ່ພໍ ຄື ຜ້າບໍ່ພຽງພໍທີ່ຈະທຳເປັນໄຕຣຈີວອນຜືນໃດຜືນໜຶ່ງ
ຄຳວ່າ ພິກຂຸນັ້ນເພິ່ງເກັບຜ້າສຳລັບທຳຈີວອນນັ້ນໄວ້ບໍ່ເກີນ ໑ ເດືອນ ຄື ເກັບໄວ້ໄດ້ ໑ ເດືອນເປັນຢ່າງຫລາຍ
ຄຳວ່າ ເພື່ອເພີ້ມຜ້າສຳລັບທຳຈີວອນທີ່ຍັງຂາດໃຫ້ຄົບ ຄື ເພື່ອຈະໃຫ້ຜ້າທີ່ຍັງຂາດ ຄົບບໍຣິບູຣຕ໌
ຄຳວ່າ ເມື່ອມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ຄື ມີຄວາມຫວັງວ່າຈະໄດ້ຈາກສົງຄ໌ ຈາກຄຕະ ຈາກຍາຕ ຈາກມິຕຣ ຫລືທີ່ເປັນຜ້າບັງສຸກຸລ ຫລືທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ

ເຊີງອັນຖະ :

໑ ຄື (໑) ຕັ້ງແຕ່ ແຮມ ໑ ຄ່ຳ ເດືອນ ໑໔ ເຖິງຂຶ້ນ ໑໕ ຄ່ຳ ເດືອນ ໑໑ ຂອງປີຖັດໄປສຳລັບຜູ້ບໍ່ໄດ້ກຖານກຖິນ ຮອມເປັນ ໑໑ ເດືອນ (໔) ຕັ້ງແຕ່ແຮມ ໑ ຄ່ຳ ເດືອນ ໔ ເຖິງ ຂຶ້ນ ໑໕ ຄ່ຳ ເດືອນ ໑໑ ໃນປີດຽວກັນ ສຳລັບຜູ້ໄດ້ກຖານກຖິນ ຮອມເປັນ ໗ ເດືອນ

ຈີວອນທີ່ມີຄວາມຫວັງວ່າຈະໄດ້ມາ

ຄຳວ່າ ຖ້າເກັບເກີນກຳໜົດນັ້ນ ແມ່ນມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ອະທິບາຍວ່າ
ຈີວອນທີ່ຫວັງເກີດຂຶ້ນ ໃນວັນທີ່ຈີວອນຜືນເດີມເກີດຂຶ້ນແລ້ວ ເພິ່ງເຮັດໃຫ້ເສັດໃນ ໑໐ ວັນ
ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໔ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໓ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໔ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໕ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໖ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໗ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໘ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໙ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໐ ວັນ ເພິ່ງເຮັດໃຫ້ເສັດໃນ ໑໐ ວັນ
ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໑ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໔ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໓ ວັນ . . .

ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໔ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໕ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໖ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໗ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໘ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໙ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໐ ວັນ ເພິ່ງເຮັດໃຫ້ເສັດໃນ ໑໐ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໑ ວັນ ເພິ່ງເຮັດໃຫ້ເສັດໃນ ໙ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໒ ວັນ ເພິ່ງເຮັດໃຫ້ເສັດໃນ ໘ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໓ ວັນ ເພິ່ງເຮັດໃຫ້ເສັດໃນ ໗ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໔ ວັນ ເພິ່ງເຮັດໃຫ້ເສັດໃນ ໖ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໕ ວັນ ເພິ່ງເຮັດໃຫ້ເສັດໃນ ໕ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໖ ວັນ ເພິ່ງເຮັດໃຫ້ເສັດໃນ ໔ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໗ ວັນ ເພິ່ງເຮັດໃຫ້ເສັດໃນ ໓ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໘ ວັນ ເພິ່ງເຮັດໃຫ້ເສັດໃນ ໒ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໙ ວັນ ເພິ່ງເຮັດໃຫ້ເສັດໃນ ໑ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໓໐ ວັນ ເພິ່ງອະທິຖານ ວິກັປ ສລະໃຫ້ຜູ້ອື່ນໃນມື້ນັ້ນ ຖ້າບໍ່ອະທິຖານ ບໍ່ວິກັປຫລືບໍ່ສລະໃຫ້ຜູ້ອື່ນ ເມື່ອຮຸ່ງອະຣຸຕວັນທີ ໓໑

ຈີວອນເປັນນິສສັຄຄີຍ໌ ຄື ເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄະນະຫລືແກ່ບຸຄຄົລ
ພິກຂຸທັງຫລາຍ ພິກຂຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ອກາລຈີວອນຜືນນີ້ຂອງຜູ້ຂ້າເກີນ ໑ ເດືອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະອກາລຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວ ເພິງສະແດງອາບັຕິ
ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄະນະ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ອກາລຈີວອນຜືນນີ້ຂອງຜູ້ຂ້າເກີນ ໑ ເດືອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະອກາລຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ
ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ບຸຄຄົລ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ອກາລຈີວອນຜືນນີ້ຂອງຜູ້ຂ້າເກີນ ໑ ເດືອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະອກາລຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ
ພິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ຈີວອນທີ່ຫວັງເກີດຂຶ້ນ ເນື້ອຜ້າບໍ່ເໝືອນກັບຈີວອນເດີມທີ່ເກີດຂຶ້ນແລ້ວ ແລະວັນຄືນກໍຍັງເຫລືອຢູ່ ເມື່ອບໍ່ຕ້ອງການຈະທຳ ກໍບໍ່ຕ້ອງທຳ

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໐໑] ຈີວອນເກັບໄວ້ເກີນ ໑ ເດືອນ ພິກຂຸສຳຄັນວ່າເກີນແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນເກັບໄວ້ເກີນ ໑ ເດືອນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນເກັບໄວ້ເກີນ ໑ ເດືອນ ພິກຂຸສຳຄັນວ່າຍັງບໍ່ເກີນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ອະທິຖານ ພິກຂຸສຳຄັນວ່າອະທິຖານແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ວິກັປ ພິກຂຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ສລະໃຫ້ ພິກຂຸສຳຄັນວ່າສລະໃຫ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ສູນຫາຍ ພິກຂຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ຈິບຫາຍ ພິກຂຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກໄຟໄໝ້ ພິກຂຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກໂຈຣຊິງ ພິກຂຸສຳຄັນວ່າຖືກໂຈຣຊິງແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຖ໌] ໑. ຈີວອັຄ ໓. ຕຕິຍກຖິນສິກຂາບົທ ອນາປັຕຕິວາຣ

ທຸກກຸກາຍ

ຈີວອນເປັນນິສສັຄຄີຍ໌ ພິກຂຸບໍ່ສລະ ໃຊ້ສອຍ ຕ້ອງອາບັຕິທຸກກາຍ

ຈີວອນຍັງບໍ່ເກີນ ໑ ເດືອນ ພິກຂຸສຳຄັນວ່າເກີນແລ້ວ ຕ້ອງອາບັຕິທຸກກາຍ

ຈີວອນທີ່ຍັງບໍ່ເກີນ ໑ ເດືອນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກາຍ

ຈີວອນຍັງບໍ່ເກີນ ໑ ເດືອນ ພິກຂຸສຳຄັນວ່າຍັງບໍ່ເກີນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໔] ໑. ພິກຂຸອະທິຖານພາຍໃນ ໑ ເດືອນ

໔. ພິກຂຸຜູ້ວິກັປໄວ້
໖. ພິກຂຸຜູ້ສລະໃຫ້ໄປ
໔. ພິກຂຸຜູ້ມີຈີວອນສູນຫາຍ
໕. ພິກຂຸຜູ້ມີຈີວອນຈິບຫາຍ
໖. ພິກຂຸຜູ້ມີຈີວອນຖືກໄຟໄໝ້
໗. ພິກຂຸຜູ້ມີຈີວອນຖືກໂຈຣຊິງເອົາໄປ
໘. ພິກຂຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະ
໙. ພິກຂຸວິກົລຈິດ
໑໐. ພິກຂຸຕົ້ນບັນຍັດ

ຕຕິຍກະຖິນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຓ໌] ໑. ຈີຣວັຄ ໔. ປຸຣາຕຈີວອນສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໔. ປຸຣາຕຈີວອນສິກຂາບົທ
ວ່າດ້ວຍການໃຫ້ຊັກຈີວອນເກົ່າ

ເຣື້ອງພຣະອຸທາຍີກັບອດີຕພັຣຍາ
[໕໐໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອດີຕພັຣຍາຂອງທ່ານພຣະອຸທາຍີບວຊຢູ່ໃນສຳນັກພິກຂຸຕີ ນາງມາຫາທ່ານພຣະອຸທາຍີຢູ່ສເມີ ແມ່ນທ່ານພຣະອຸທາຍີກໍໄປຫານາງຢູ່ສເມີ ກໍໃນສມັຍນັ້ນ ທ່ານພຣະອຸທາຍີກະທຳພັຕກິຈໃນທີ່ຢູ່ຂອງນາງ ເຊົ້າມື້ນຶ່ງ ທ່ານພຣະອຸທາຍີຄອງອັນຕຣວາສກຖືບາຕຣ ແລະຈີວອນໄປຫານາງເຖິງທີ່ຢູ່ ເມື່ອເຂົ້າໄປເຖິງແລ້ວກໍນັ່ງເທິງອາສນະເປີດອົງຄຊາຕຕໍ່ໜ້າ ພິກຂຸຕີນັ້ນ ແມ່ນພິກຂຸຕີນັ້ນກໍນັ່ງເທິງອາສນະເປີດອົງຄ໌ກຳເນີດຕໍ່ໜ້າທ່ານພຣະອຸທາຍີເຊັ່ນກັນ ທ່ານພຣະອຸທາຍີເກີດຄວາມກຳຫນັດເພ່ງເບິ່ງອົງຄ໌ກຳເນີດຂອງນາງ ນ້ຳອສຸຈິຂອງທ່ານພຣະອຸທາຍີນັ້ນເຄື່ອນ ຄັນແລ້ວທ່ານພຣະອຸທາຍີຈຶ່ງກ່າວກັບພິກຂຸຕີນັ້ນ ດັ່ງນີ້ວ່າ "ນ້ອງຍິງ ທ່ານຈົ່ງໄປຫານ້ຳ

ມາ ຂ້ອຍຈະຊັກອັນຕຣວາສກ" ນາງຕອບວ່າ "ໂປຣດສົ່ງມາເຖີດ ຂະນ້ອຍຈະຊັກໃຫ້" ຄັນແລ້ວນາງ ໃຊ້ປາກດູດອສຸຈິສ່ວນນຶ່ງ ແລະສອດອສຸຈິອີກສ່ວນນຶ່ງເຂົ້າໃນອົງຄ໌ກຳເນີດ ເພາະເຫຕຸນັ້ນນາງຈຶ່ງ ໄດ້ຕັ້ງຄັນກ໌ ພວກກິກສຸຕີເວົ້າວ່າ "ກິກສຸຕີນັ້ນບໍ່ໄດ້ປະພຶດພຣົມຈັນຍ໌ຈຶ່ງຕັ້ງຄັນກ໌" ນາງຕອບວ່າ "ແມ່ເຈົ້າ ບໍ່ແມ່ນວ່າຂະນ້ອຍບໍ່ໄດ້ປະພຶດພຣົມຈັນຍ໌" ແລ້ວບອກເຣື້ອງນັ້ນໃຫ້ກິກສຸຕີທັງຫລາຍຊາບ ພວກກິກສຸຕີພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງໃຫ້ກິກສຸຕີຊັກຈີວອນເກົ່າໃຫ້ລະ" ແລ້ວນຳເຣື້ອງນີ້ໄປບອກໃຫ້ກິກສຸທັງຫລາຍຊາບ ບັນດາກິກສຸຜູ້ມັກນ້ອຍ ฯລฯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງໃຫ້ກິກສຸຕີຊັກຈີວອນເກົ່າໃຫ້ລະ" ຄັນກິກສຸເຫລົ່ານັ້ນຕຳຫນິພຣະອຸທາຍີໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານໃຊ້ກິກສຸຕີຊັກຈີວອນເກົ່າ ແມ່ນແທ້ບໍ" ພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະພຸທສອົງຄ໌ຊົງຖາມວ່າ "ອຸທາຍີ ນາງເປັນຍາຕຂອງທ່ານ ຫລືບໍ່ແມ່ນຍາຕ" ພຣະອຸທາຍີທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕຳຫນິວ່າ "ໂມຄບຸຣຸສ ຊາຍຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມ ຫລືບໍ່ເຫມາະສົມ ຄວາມຫນ້າເຫລື້ອມໃສຫລືບໍ່ຫນ້າເຫລື້ອມໃສຂອງຍິງຜູ້ບໍ່ແມ່ນຍາຕ ໂມຄບຸຣຸສທ່ານນັ້ນ໑ ໃຊ້ກິກສຸຕີຜູ້ທີ່ບໍ່ແມ່ນຍາຕໃຫ້ຊັກຈີວອນເກົ່າ ໂມຄບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ฯລฯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໐໔] ກໍ ກິກສຸໃດໃຊ້ກິກສຸຕີຜູ້ບໍ່ແມ່ນຍາຕໃຫ້ຊັກ ໃຫ້ຍ້ອມ ຫລືໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸທາຍີກັບອດີຕກັຣຍາ ຈົບ

ສິກຂາບົທວິກັງຄ໌

[໕໐໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ໔

ທີ່ຊື່ວ່າ ພິກຂຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຆ໌ ໒ ຝ່າຍ

ທີ່ຊື່ວ່າ ຈີວອນເກົ່າ ໄດ້ແກ່ ຜ້າທີ່ນຸ່ງແລ້ວແມ່ນພຽງ ໑ ຄັ້ງ ຜ້າທີ່ຫົ່ມແລ້ວແມ່ນພຽງ ໑ ຄັ້ງ

ພິກຂຸສັ່ງວ່າ "ຈົ່ງຊັກ" ຕ້ອງອາບັຕິທຸກກະ ຈີວອນທີ່ພິກຂຸນີຊັກແລ້ວເປັນນິສສັຄຄີຍ໌

ພິກຂຸສັ່ງວ່າ "ຈົ່ງຍ້ອມ" ຕ້ອງອາບັຕິທຸກກະ ຈີວອນທີ່ພິກຂຸນີຍ້ອມແລ້ວເປັນນິສສັຄຄີຍ໌

ພິກຂຸສັ່ງວ່າ "ຈົ່ງທຸບ" ຕ້ອງອາບັຕິທຸກກະ ເມື່ອພິກຂຸນີໃຊ້ມືຫລືຕະລຸມພຸກທຸບພຽງ ໑ ຄັ້ງ ຈີວອນເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຆ໌ ແກ່ຄະນະຫລືແກ່ບຸຄຄົລ

ພິກຂຸທັງຫລາຍ ພິກຂຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ຕຕິຖ ທ່ານນັ້ນ ນີ້ເປັນ ປຈຈຕຸຕກຕຸວຕຸຖ ຫລື ກອຕາກຕຸວຕຸຖ ຄືມີອັນຖະເປັນປກຸມາວິກັຕຕິ ຫລືຕຕິຍາວິກັຕຕິ (ຕຕຸຖນາມ ຕຸວນຸຕິ ໂສ ນາມ ຕຸວໍ, ຕາຍ ນາມ ຕຸວນຸຕິ ວາ ອຕຸໂຖ - ວິມຕິ. ຜິກາ ໑/໕໐໖-໕/໔໑໗ ແປວ່າ ທ່ານນັ້ນຫລືພິກຂຸນີນັ້ນ ກໍໄດ້)

໔ ເຈັດຊົ່ວຄົນ ຄືວົງຄ໌ສກຸລທີ່ສືບສາຍໂລຫິຕກັນມາ ນັບຕັ້ງແຕ່ຕົວພິກຂຸຂຶ້ນໄປ ໓ ຊັ້ນ ຄືຊັ້ນພໍ່ ຊັ້ນປູ່ ແລະຊັ້ນທວດ ກັບນັບຈາກຕົວພິກຂຸລົງມາອີກ ໓ ຊັ້ນ ຄືຊັ້ນລູກ ຊັ້ນຫລານ ແລະຊັ້ນເຫລນ ຮວມເປັນເຈັດຊົ່ວຄົນ (ວິ. ອ. ໔/໕໐໖-໕/໑໖໕-໑໖໖)

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຆ໌

ພິກຂຸຮູບນັ້ນເພິ່ງເຂົ້າໄປຫາສົງຆ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນເກົ່າຜືນນີ້ ຜູ້ຂ້າໃຊ້ພິກຂຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຆ໌" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກຂຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຆ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຆ໌ ຖ້າສົງຆ໌ພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຕະ

ກິກບຸຮູບນັ້ນເພິງເຂົ້າໄປຫາກິກບຸຫລາຍຮູບ ຫົ່ມອຸຕຕຣາສິງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກບຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນເກົ່າຜືນນີ້ຜູ້ຂ້າໃຊ້ກິກບຸຕີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນເກົ່າຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ກິກບຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນເກົ່າຜືນນີ້ຂອງກິກບຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກບຸຊື່ນີ້"

ສລະແກ່ບຸຄຄົລ

ກິກບຸຮູບນັ້ນເພິງເຂົ້າໄປຫາກິກບຸຮູບນຶ່ງ ຫົ່ມອຸຕຕຣາສິງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນເກົ່າຜືນນີ້ຜູ້ຂ້າໃຊ້ກິກບຸຕີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກບຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນເກົ່າຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໑

[໕໐໓] ກິກບຸຕີທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ກິກບຸຕີທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິທຸກກຸຸຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ກິກບຸຕີທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິທຸກກຸຸຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ກິກບຸຕີທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິທຸກກຸຸຕ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໔

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິທຸກກຸດກັບອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິທຸກກຸດກັບອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ທຸບ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິທຸກກຸດ ໒ ຕົວ ກັບອາບັຕິນິສສັຄຄິຍປາຈິຕຕິຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໕

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິທຸກກຸດກັບອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິ ທຸກກຸດກັບອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິທຸກກຸດ ໒ ຕົວ ກັບອາບັຕິນິສສັຄຄິຍປາຈິຕຕິຍ໌

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸບໍ່ແນ່ໃຈ ຯລຯ

ພິກຂຸຕີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າເປັນຍາຕ ຯລຯ

ທຸກກຸດ

ພິກຂຸໃຊ້ພິກຂຸຕີໃຫ້ຊັກຈີວອນເກົ່າຂອງພິກຂຸຮູບອື່ນ ຕ້ອງອາບັຕິທຸກກຸດ

ພິກຂຸໃຊ້ພິກຂຸຕີໃຫ້ຊັກຜ້າປູນັ່ງແລະຜ້າປູນອນ ຕ້ອງອາບັຕິທຸກກຸດ

ພິກຂຸໃຊ້ພິກຂຸຕີຜູ້ອຸປສົມບົທໃນສົງຄ໌ຝ່າຍດຽວໃຫ້ຊັກ ຕ້ອງອາບັຕິທຸກກຸດ

ພິກຂຸຕີທີ່ເປັນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ຕ້ອງອາບັຕິທຸກກຸດ

ພິກຂຸຕີທີ່ເປັນຍາຕ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ພິກຂຸຕີທີ່ເປັນຍາຕ ພິກຂຸສຳຄັນວ່າເປັນຍາຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໗] ໑. ພິກຂຸຜູ້ເປັນເຈົ້າຂອງຈີວອນທີ່ພິກຂຸຕີຜູ້ເປັນຍາຕຊັກໃຫ້ເອງ ໂດຍມີພິກຂຸຕີ ສະຫາຍຜູ້ບໍ່ແມ່ນຍາຕຄອຍຊ່ວຍເຫລືອ

໒. ພິກຂຸບໍ່ໄດ້ໃຊ້ ພິກຂຸຕີບໍ່ແມ່ນຍາຕຊັກໃຫ້ເອງ

໓. ພິກຂຸໃຊ້ຊັກຈີວອນທີ່ຍັງບໍ່ໄດ້ໃຊ້ສອຍ

໔. ພິກຂຸໃຊ້ພິກຂຸຕີຜູ້ບໍ່ແມ່ນຍາຕໃຫ້ຊັກບໍລິຂາຣອຢ່າງອື່ນ ນອກຈາກຈີວອນ

໕. ພິກຂຸໃຊ້ສິກຂມານາໃຫ້ຊັກ

໖. ພິກຂຸໃຊ້ສາມເນຣີໃຫ້ຊັກ

໗. ພິກຂຸວິກົລຈິຕ

໘. ພິກຂຸຕົ້ນບັນຍັດ

ປຸຣານຈີວອນສິກຂາບົທທີ ໔ ຈົບ

ພຣະວິນັຍປິຕົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຑ໌] ໑. ຈີຣວັຄ ໕. ຈີວອນປຕິຄຄຫນສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໕. ຈີວອນປຕິຄຄຫນສິກຂາບົທ

ວ່າດ້ວຍການຮັບຈີວອນ

ເຣື້ອງພິກຂຸຕີອຸບົລວັນນາ

[໕໐໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຫນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພິກຂຸຕີອຸບົລວັນນາພັກຢູ່ ຫນະ ກຸງສາວັຕຖີ ເວລາເຊົ້າ ພິກຂຸຕີ

ອຸປິລວັນຕາຄອງອັນຕຣວາສກຖືບາຕຣແລະຈີວອນ໑ ເຂົ້າໄປບິຕຫບາຕໃນກຸງສາວັຕຖີ ກັບຈາກບິຕຫບາຕຫລັງຈາກລັນເສັດແລ້ວ ເຂົ້າໄປຍັງປ່າອັນລວັນ ເພື່ອພັກຜ່ອນກາງເວັນ ນັ່ງທີ່ເຫງົ້າໄມ້ຕົ້ນນຶ່ງ ສມັຍນັ້ນ ພວກໂຈຣລັກແມ່ໂຄມາຂ້າແລ້ວຖືເອົາຊີ້ນເຂົ້າປ່າອັນລວັນ ຫົວຫນ້າໂຈຣເບິ່ງເຫັນກິກສຸຕີອຸປິລວັນຕານັ່ງພັກກາງເວັນ ຄັນເຫັນແລ້ວຈຶ່ງຄິດວ່າ "ຫາກພວກລູກນ້ອງເຮົາພົບເຂົ້າຈະປະທຸສຮ້າຍນາງ" ຈຶ່ງລຽງຍ່າງໄປທາງອື່ນ ເມື່ອປີ້ງຊີ້ນສຸກ ຫົວຫນ້າໂຈຣເລືອກຊີ້ນດີໆເອົາໃບໄມ້ຫໍ່ ແຂວນໄວ້ທີ່ຕົ້ນໄມ້ໃກ້ກິກສຸຕີແລ້ວກ່າວວ່າ "ຊີ້ນຫໍ່ ນີ້ເຮົາໃຫ້ແລ້ວ ສມຕະຫລືພຣາມຕ໌ເຫັນແລ້ວຈົ່ງຖືເອົາໄປເຖີດ" ກິກສຸຕີອອກຈາກສມາທິ ໄດ້ຍິນຄໍາທີ່ຫົວຫນ້າໂຈຣເວົ້າ ຈຶ່ງຖືເອົາຊີ້ນໄປທີ່ພັກ ຄັນຣາຕຣີຜ່ານໄປ ນາງຈັດຊີ້ນຕ່ອນນັ້ນໃຫ້ຮຽບຮ້ອຍແລ້ວໃຊ້ອຸຕຕຣາສົງຄ໌ຫໍ່ ເຫາະໄປຍັງພຣະເວຣຸວັນວິຫາຣ

ເຊີງອັນຖະ :

໑ ຄໍາວ່າ "ຄອງອັນຕຣວາສກຖືບາຕຣແລະຈີວອນ" ນີ້ ບໍ່ແມ່ນວ່າ ກ່ອນຫນ້ານີ້ກິກສຸຕີບໍ່ໄດ້ນຸ່ງອັນຕຣວາສກ ບໍ່ແມ່ນວ່າ ທ່ານຖືບາຕຣແລະຈີວອນໄປໂດຍເປືອຍກາຍສ່ວນເທິງ ຄໍາວ່າ "ຄອງອັນຕຣວາສກ" ຫມາຍເຖິງທ່ານຜັດປ່ຽນສະບົງ ຫລືຍ້າຍສະບົງທີ່ນຸ່ງຢູ່ໃຫ້ແຫນ້ນ ຄໍາວ່າ "ຖືບາຕຣແລະຈີວອນ" ຄື ຖືບາຕຣດ້ວຍມື ຖືຈີວອນດ້ວຍກາຍ ຫມາຍຄວາມວ່າ "ຫົ່ມຈີວອນອຸ້ມບາຕຣ" ນັ້ນເອງ
(ນິວາເສຕ຺ວາຕິ ປຣິທຫິຕ຺ວາ, ວິຫາຣນິວາສນປຣິວຕ຺ຕນວເສເນຕໍ ເວທິຕພ຺ພໍ.
ນ ຫິ ເຕ ຕໂຕ ປຸພ຺ເພ ອນິວຕ຺ຖາ ອເຫສຸໍ. ປຕ຺ຕຈີວອນມາທາຢາຕິ ປຕ຺ຕໍ ຫຕ຺ເຖຫິ, ຈີວຣໍ ກາເຍນ ອາທິຍິຕ຺ວາ, ສມ຺ປຜິຈ຺ຊາເຫຕ຺ວາ ລາເຣຕ຺ວາຕິ ອຕ຺ໂຖ- ວິ. ອ. ໑/໑໖/໑໗໐, ວິຫາຣນິວາສນປຣິວຕ຺ຕນວເສນ ນິວາສນໍ ທຣຸຫໍ ນິວາເສຕ຺ວາ. . . . ຈີວຣໍ ປາຣຸປິຕ຺ວາ ປຕ຺ຕໍ ຫຕ຺ເຖນ ຄເຫຕ຺ວາ - ອຸທານ. ອ. ໖໕)

ເຊົ້າມື້ນັ້ນ ພຣະຜູ້ມີພຣະກາຄສເດັຈໄປບິຕຫບາຕໃນຫມູ່ບ້ານ ເຫລືອທ່ານພຣະອຸທາຍີ ຢູ່ເຝົ້າພຣະວິຫາຣ ກິກສຸຕີອຸປິລວັນຕາເຂົ້າໄປຫາແລ້ວຖາມວ່າ "ທ່ານຜູ້ຈະເຣີນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ທີ່ໃດ" ທ່ານພຣະອຸທາຍີຕອບວ່າ "ພຣະຜູ້ມີພຣະກາຄສເດັຈໄປບິຕຫບາຕໃນຫມູ່ບ້ານ" ກິກສຸຕີກ່າວວ່າ "ໂປຣດຖວາຍຊີ້ນຕ່ອນນີ້ແດ່ພຣະຜູ້ມີພຣະກາຄ" ທ່ານພຣະອຸທາຍີກ່າວວ່າ "ນ້ອງຍິງພຣະຜູ້ມີພຣະກາຄຈະຊົງອີ່ມຫນໍາດ້ວຍຊີ້ນທີ່ຖວາຍ ຖ້າທ່ານຖວາຍອັນຕຣວາສກແກ່ອາຕມາ ອາຕມາກໍຈະອີ່ມຫນໍາດ້ວຍອັນຕຣວາສກເຊັ່ນກັນ" ກິກສຸຕີກ່າວວ່າ "ພຣະຄຸຕເຈົ້າ ຄວາມແມ່ນແທ້ະນ້ອຍເປັນມາຕຸຄາມຫາລາກໄດ້ຍາກ ທັງຜ້າຜືນນີ້ກໍເປັນຈີວອນຜືນສຸດທ້າຍທີ່ຈະຄົບ ໕ ຜືນ໑ ຂະນ້ອຍ

ຖວາຍບໍ່ໄດ້" ທ່ານພຣະອຸທາຍີກ່າວວ່າ "ນ້ອງຍິງ ປຽບເຫມືອນບຸຣຸษໃຫ້ຊ້າງແລ້ວກໍຄວຣສລະສັປຄັບສຳລັບຊ້າງດ້ວຍ ທ່ານກໍເຫມືອນກັນ ຖວາຍຕ່ອນຊີ້ນແດ່ພຣະຜູ້ມີພຣະກາຄແລ້ວກໍຈົ່ງສລະອັນຕຣວາສກແກ່ອາຕມາເຖີດ" ຄັນຖືກທ່ານພຣະອຸທາຍີເວົ້າລ້ຳໄລ ນາງຈື່ງຖວາຍອັນຕຣວາສກແລ້ວກັບທີ່ພັກ ພວກກິກษຸຕີຜູ້ຄອຍຮັບບາຕຣແລະຈີວອນຖາມນາງວ່າ "ອັນຕຣວາສກຂອງເຈົ້າ ຢູ່ທີ່ໃດ" ນາງຈື່ງບອກເຣື້ອງນັ້ນໃຫ້ຊາບ ກິກษຸຕີທັງຫລາຍຈື່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈື່ງຮັບຈີວອນຈາກມືກິກษຸຕີລະ ມາຕຸຄາມມີລາກນ້ອຍ" ແລ້ວບອກເຣື້ອງນີ້ໃຫ້ກິກษຸທັງຫລາຍຊາບ

ບັນດາກິກษຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈື່ງຮັບຈີວອນຈາກມືກິກษຸຕີລະ" ຄັນກິກษຸເຫລົ່ານັ້ນຕຳຫນິທ່ານພຣະອຸທາຍີ ໂດຍປະການຕ່າງໆແລ້ວຈື່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ກິກษຸຕີໃຊ້ຜ້າກາສາຍະ ໕ ຜືນ ຄື (໑) ສັງฆາຕິ ຜ້າຫົ່ມຊ້ອນນອກ (໒) ອຸຕຕຣາສົງຄ໌ ຜ້າຫົ່ມ (໓) ອັນຕຣວາສກ ຜ້ານຸ່ງ

(໔) ອຸທກສາฎິກາ ຜ້າອາບນ້ຳ (໕) ສັງກັຈຈິກາ ຜ້າຮັດຖັນ (ກງິຂາ. ອ. ໓໗໕)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕฑ໌] ໑. ຈີຣວັຄ ໕. ຈີວອນປฏິຄຄຫຕສິກຂາບົທ ພຣະບັນຍັດ

ຊົງປະຊຸມສົງฆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງฆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານຮັບຈີວອນຈາກມືກິກษຸຕີ ແມ່ນແທ້ບໍ" ທ່ານພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າ" ພຣະພຸທສອົງຄ໌ຕຣັສຖາມວ່າ "ອຸທາຍີ ນາງເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ພຣະອຸທາຍີທູລຮັບວ່າ "ບໍ່ແມ່ນຍາຕ ພຣະພຸທສເຈົ້າຂ້າ" ພຣະພຸທສອົງຄ໌ຕຣັສວ່າ "ໂມฆບຸຣຸษ ບຸຣຸษຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມຫລືບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງສຕຣີຜູ້ບໍ່ແມ່ນຍາຕ ທ່ານນັ້ນຮັບຈີວອນຈາກມືກິກษຸຕີຜູ້ບໍ່ແມ່ນຍາຕ ໂມฆບຸຣຸษ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສ ຢູ່ແລ້ວໃຫ້

ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໕໐໙] ກໍ ພິກຂຸໃດຮັບຈີວອນຈາກມືພິກຂຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌ ສິກຂາບົດນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື່ອງພິກຂຸນີອຸບົລວັນນາ ຈົບ

ເຣື່ອງແລກປ່ຽນຈີວອນ

[໕໑໐] ສມັຍນັ້ນ ພວກພິກຂຸກຽດຊັງບໍ່ຍອມຮັບຈີວອນແລກປ່ຽນຂອງພວກພິກຂຸນີ ພວກພິກຂຸນີຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະຄຸນເຈົ້າຈຶ່ງບໍ່ຍອມຮັບຈີວອນ ແລກປ່ຽນຂອງພວກເຮົາລະ" ພວກພິກຂຸໄດ້ຍິນຄໍາຕໍາໜິປະນາມໂພນທະນາຂອງພວກ ພິກຂຸນີຈຶ່ງນໍາຄວາມນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັຕຫ໌] ໑. ຈີຣວັຄ ໕. ຈີວອນປຜິຄຄຫຕສິກຂາບົທ ສິກຂາບົທວິພັງຄ໌

ຊົງອນຸຍາຕໃຫ້ຮັບຈີວອນແລກປ່ຽນໄດ້

ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງລັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງ ຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ສຫລຣຣມິກ ໕ ຄື ພິກຂຸ ພິກຂຸນີ ສິກຂມານາ ສາມເນຣ ແລະສາມເນຣີ ແລກປ່ຽນຈີວອນກັນໄດ້ ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຮັບສິ່ງຂອງ ແລກປ່ຽນຂອງສຫລຣຣມິກ ໕ ເຫລົ່ານີ້ໄດ້" ແລ້ວຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົດນີ້ຂຶ້ນ ສະແດງດັ່ງນີ້

ພຣະອນຸບັນຍັດ

[໕໑໑] ອີກຢ່າງນຶ່ງ ພິກຂຸໃດຮັບຈີວອນຈາກມືພິກຂຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັດນິສສັຄຄີຍ ປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນ

ເຣື້ອງແລກປ່ຽນຈີວອນ ຈົບ

ສິກຂາບົທວິພັງຄ໌

[໕໑໔] ຄໍາວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄໍາວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ກິກຂຸຕີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຄ໌ ໔ ຝ່າຍ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະທໍາວິກັປໄດ້ເປັນຢ່າງຕໍ່າ

ຄໍາວ່າ ເວັ້ນໄວ້ແຕ່ແລກປ່ຽນ ຄື ຍົກເວັ້ນແລກປ່ຽນກັນ

ກິກຂຸຮັບ ຕ້ອງອາບັຕິທຸກກະ ເພາະພຍາຍາມ໑ ຈີວອນເປັນນິສສັຄຄີຍ໌ ເພາະໄດ້ມາ ຄື ເປັນຂອງຈໍາຕ້ອງສລະແກ່ສົງຄ໌ ແກ່ຄະນະຫລືແກ່ບຸຄຄົລ

ກິກຂຸທັງຫລາຍ ກິກຂຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າຮັບມາຈາກມືກິກຂຸຕີຜູ້ບໍ່ແມ່ນຍາຕ ໂດຍບໍ່ໄດ້ແລກປ່ຽນກັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ

ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ຄະນະ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່

ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າຮັບມາຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ໂດຍບໍ່ໄດ້ແລກປ່ຽນກັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ
ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າຮັບມາຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ໂດຍບໍ່ໄດ້ແລກປ່ຽນກັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ເຊີງອັນຖະ :

໑ ເພາະຢຽດມືຮັບເປັນຕົ້ນ (ຄຫາດຕູຖາຍ ຫຕຸຖຸປຸປສາຣດາທີສຸ ທຸກຸກຄໍ - ວິ. ອ. ໒/໕໑໔/໑໗໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັຕທ໌] ໑. ຈີຣວັຄ ໕. ຈີວອນປຜິຄຄຫາຕສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໑໖] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຮັບຈີວອນຈາກມື ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ
ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຮັບຈີວອນຈາກມື ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ກິກບຸຕີທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າເປັນຍາຕ ຮັບຈີວອນຈາກມື ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ຕີກທຸກກົຍ

ກິກບຸຕີຜູ້ອຸປສົມບົທໃນສົງຄ໌ຝ່າຍດຽວ ກິກບຸຮັບຈີວອນຈາກມື ຕ້ອງອາບັຕິທຸກກົຍ ເວັ້ນໄວ້ແຕ່ແລກປ່ຽນກັນ

ກິກບຸຕີທີ່ເປັນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ຮັບຈີວອນຈາກມື ຕ້ອງອາບັຕິທຸກກົຍ

ກິກບຸຕີທີ່ເປັນຍາຕ ກິກບຸບໍ່ແນ່ໃຈ ຮັບຈີວອນຈາກມື ຕ້ອງອາບັຕິທຸກກົຍ

ກິກບຸຕີທີ່ເປັນຍາຕ ກິກບຸສຳຄັນວ່າເປັນຍາຕ ຮັບຈີວອນຈາກມື ບໍ່ຕ້ອງອາບັຕິ

ພຣະວິນັຍປີດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໑. ຈີຣວັຄ ໕. ຈີວອນປຕິຄຄຫາຕສິກຂາບົທ ນິທານວັຕຖຸ

ອນາປັຕຕີວາຣ

ກິກບຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໑໔] ໑. ກິກບຸຮັບຈີວອນຂອງກິກບຸຕີຜູ້ເປັນຍາຕ

໔. ກິກບຸແລກປ່ຽນ ຄື ເອົາຂອງທີ່ມີຄ່ານ້ອຍແລກກັບຂອງມີຄ່າມາກ ຫລືເອົາຂອງທີ່ມີຄ່າມາກແລກກັບຂອງມີຄ່ານ້ອຍ

໓. ກິກບຸຖືວິສາສະເອົາມາ

໔. ກິກບຸຂໍຢືມຈີວອນ

໕. ກິກບຸຮັບບໍຣິຂາຣອື່ນນອກຈາກຈີວອນ

໖. ກິກບຸຮັບຈີວອນຂອງສິກຂມານາ

໗. ກິກບຸຮັບຈີວອນຂອງສາມເນຣີ

໘. ກິກບຸວິກົລຈິຕ

໙. ກິກບຸຕົ້ນບັນຍັດ

ຈີວອນປຕິຄຄຫາຕສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຓທ໌] ໑. ຈີວອັຄ ໓. ອັຍຍາຕກວິຍຍັຕຕິສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໓. ອັຍຍາຕກວິຍຍັຕຕິສິກຂາບົທ

ວ່າດ້ວຍການອອກປາກຂໍຄຣືທັສຖ໌ຜູ້ບໍ່ແມ່ນຍາຕ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໑໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣ ຊ່ຽວຊານການສະແດງລັມມີ ກຖາ ບຸຕຣເສດຖີຄົນນຶ່ງເຂົ້າໄປຫາທ່ານເຖິງທີ່ຢູ່ ຄັນເຖິງແລ້ວຈຶ່ງໄຫວ້ທ່ານ ນັ່ງ ຓະ ທີ່ສົມຄວຣ ລຳດັບນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ຊີ້ແຈງໃຫ້ບຸຕຣເສດຖີເຫັນແຈ້ງ ຊວນໃຫ້ຢາກຮັບ ເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາ ໑ ບຸຕຣເສດຖີນັ້ນອັນທ່ານພຣະອຸປນັນທສາກຍບຸຕຣຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາ ໄປປຜິບຕິ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາ ແລ້ວຈຶ່ງປວາຣຕາທ່ານພຣະອຸປນັນທສາກຍບຸຕຣວ່າ "ທ່ານຜູ້ຈະເຣີນ ພຣະຄຸຓເຈົ້າເພິງບອກ ປັຈຈັຍ ໔ ຄື ຈີວອນ ບິຓທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣທີ່ທ່ານຕ້ອງການ ຊຶ່ງຜູ້ຂ້າພໍຈະຈັດຫາມາຖວາຍໄດ້"

ເຊີງອັນຖະ :

໑ ຮຽກວ່າ ລີລາການສອນ ຫລື ເທສນາວິທີ ໔ ຄື (໑) ສັນທັສສນາ ຊີ້ແຈງໃຫ້ເຫັນແຈ້ງ (໒) ສມາທປນາ ຊວນໃຫ້ຢາກຮັບເອົາໄປປະຕິບັດ (໓) ສມຸຕເຕຊນາ ປຸກໃຈໃຫ້ອາຈຫານເກັ່ງກ້າ (໔) ສັມປຫັງສນາ ປອບປະໂລມໃຈໃຫ້ສົດຊື່ນເບີກບານ (ມາໃນບາລີມາກແຫ່ງ ວິ. ມຫາ. ໑/໒໔-໒໔,໒໙໐/໑໓-໔,໒໒໒, ວິ. ກິກຸຂຸນີ. ໓/໗ຖ໓/໗໒-໓, ວິ. ມ. ໔/໒໙,ຖ໙-໙໐,໑໐໕,໑໓໒,໑໓໗/໒໕,໑໐໓-໗,໑໒໐,໑໔໓,໑໕໐, ວິ. ມ. ໕/໒໗໐,໒໗໓,໒ຖ໐-໑, ໒ຖຖ, ໒໙໔,໒໙ຖ,໓໓໗/໓ຖ,໔໕,໕໐,໕໒,໓໕,໗໔,ຖ໑,໑໓໙, ວິ. ຈູ. ໓/໓໓,໑໙໒/໔໓-໔,໒໒໕, ວິ. ຈູ. ໗/໒໓໐, ໒໓ຖ-໙,໔໐໔,໔໔໕/໒໑,໓໓-໔,໒໓໗,໒ຖ໒, ທີ. ສີ. ໙/໓໔໔,໓໕ຖ/໑໔໐,໑໕໐,

ທີ. ມ. ໑໐/໑໘໑-໒, ໑໙໔/໗໖-໙,໑໑໖-໗, ທີ. ປາ. ໑໑/໓໔,໒໙໙/໒໒,໑໗໙, ມ. ມູ. ໑໒/໒໕໒,໒໕໕-໘,໒໗໙/໒໑໕-໒໑໖, ໒໕໓-໔, ມ. ມ. ໑໓/໒໒,໒໗໕,໓໖໑/໑໗,໒໘໑,໓໕໕, ສໍ. ສ. ໑໕/໑໕໒-໓,໑໕໕,໑໗໕,໒໔໑/໑໓໕-໗,໑໗໖, ໒໕໓, ສໍ. ນິ. ໑໘/໒໔໑/໒໘໕, ສໍ. ຂ. ໑໖/໗໑/໖໖, ສໍ. ສຊາ. ໑໗/໑໓໓/໑໑໔, ອງ. ອຖຸກກ-ນວກ. ໒໓/໑໒,໒໔, ໖໗,໔/໑໕໘,໑໗໐,໒໖໓,໒໙໘, ອງ. ຫສກ. ໒໔/໙໓/໑໕໒, ຂຸ. ອຸ. ໒໕/໘໑,໖໑-໕/໒໐໓,໒໑໒-໕, ຂຸ. ອິຕິ. ໒໕/໑໐໔/໓໒໓)

ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ "ຖ້າໂຍມຕ້ອງກາຣຖວາຍແກ່ອາຕມາ ກໍຈົ່ງຖວາຍຜ້າຜືນນຶ່ງຈາກຜ້າທີ່ໂຍມນຸ່ງຫົ່ມຢູ່ນີ້" ເຂົາກ່າວວ່າ "ຜູ້ຂ້າເປັນກຸລບຸຕຣ ຈະນຸ່ງຜ້າຜືນດຽວຢ່າງກັບບ້ານ ເບິ່ງຄືຈະບໍ່ເຫມາະ ນິມົນຕ໌ຖ້າໃຫ້ຜູ້ຂ້າກັບໄປເຖິງບ້ານກ່ອນ ແລ້ວຜູ້ຂ້າຈະສົ່ງຜ້າ ໑ ຜືນຈາກ ໔ ຜືນນີ້ ຫລືຜ້າທີ່ດີກວ່ານີ້ມາຖວາຍ"

ທ່ານພຣະອຸປນັນທສາກຍບຸຕຣເວົ້າເປັນຄັ້ງທີ ໒ ວ່າ "ຖ້າໂຍມຕ້ອງກາຣຖວາຍແກ່ອາຕມາ ກໍຈົ່ງຖວາຍຜ້າຜືນນຶ່ງຈາກຜ້າທີ່ໂຍມນຸ່ງຫົ່ມຢູ່ນີ້" ບຸຕຣເສຣຖີກໍຍັງກ່າວປະຕິເສດຢູ່ເຫມືອນເດີມວ່າ "ຜູ້ຂ້າເປັນກຸລບຸຕຣ ຈະນຸ່ງຜ້າຜືນດຽວຢ່າງກັບບ້ານ ເບິ່ງຄືຈະບໍ່ເຫມາະ ນິມົນຕ໌ທ່ານຖ້າໃຫ້ຜູ້ຂ້າກັບໄປເຖິງບ້ານກ່ອນ ແລ້ວຜູ້ຂ້າຈະສົ່ງຜ້າ ໑ ຜືນຈາກ ໔ ຜືນນີ້ ຫລືຜ້າທີ່ດີກວ່ານີ້ມາຖວາຍ" ທ່ານພຣະອຸປນັນທສາກຍບຸຕຣກໍເວົ້າລ້ຳໄລເປັນຄັ້ງທີ ໓ ວ່າ "ຖ້າໂຍມຕ້ອງກາຣຖວາຍແກ່ອາຕມາ ກໍຈົ່ງຖວາຍຜ້າຜືນນຶ່ງຈາກຜ້າທີ່ໂຍມນຸ່ງຫົ່ມຢູ່ນີ້" ແຕ່ເຂົາກໍຄົງເວົ້າບ່າຍບ່ຽງຢູ່ເຫມືອນເດີມວ່າ "ຜູ້ຂ້າເປັນກຸລບຸຕຣ ຈະນຸ່ງຜ້າຜືນດຽວຢ່າງກັບບ້ານ ເບິ່ງຄືຈະບໍ່ເຫມາະ ນິມົນຕ໌ທ່ານຖ້າໃຫ້ຜູ້ຂ້າກັບໄປເຖິງບ້ານກ່ອນ ແລ້ວຜູ້ຂ້າຈະສົ່ງຜ້າ ໑ ຜືນຈາກ ໔ ຜືນນີ້ຫລືຜ້າທີ່ດີກວ່ານີ້ມາຖວາຍ" ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ "ທ່ານບໍ່ຕ້ອງກາຣຖວາຍ ກໍຈະປວາຣຕາໄປເປັນຫຍັງ ປວາຣຕາແລ້ວບໍ່ຖວາຍ ຈະມີປໂຍດຫຍັງ" ເມື່ອຖືກທ່ານພຣະອຸປນັນທສາກຍບຸຕຣເວົ້າລ້ຳໄລ ເຂົາຈຶ່ງຖວາຍຜ້າ ໑ ຜືນ ແລ້ວກັບໄປ ຖືກຊາວບ້ານຖາມວ່າ "ນາຍ ເປັນຫຍັງນຸ່ງຜ້າຜືນດຽວກັບມາລະ" ບຸຕຣເສຣຖີນັ້ນຈຶ່ງບອກເຣື້ອງນັ້ນໃຫ້ຊາວບ້ານເຫລົ່ານັ້ນຊາບ ຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະສມຕະເຊື້ອສາຍສາກຍບຸຕຣ ມັກມາກບໍ່ສັນໂດຫ ສມຕະເຫລົ່ານີ້ແມ່ນຈະນິມົນຕ໌ຕາມລັມນຽມ ກໍບໍ່ແມ່ນກະທຳໄດ້ງ່າຍ ຈັ່ງໃດເມື່ອບຸຕຣເສຣຖີທຳກາຣນິມົນຕ໌ຕາມລັມນຽມ ພຣະສມຕະທັງຫລາຍກໍຍັງຈະຮັບເອົາຜ້າໄປລະ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ສັນໂດຫ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະອຸປນັນທສາກຍບຸຕຣ

ຈຶ່ງອອກປາກຂໍຈີວອນຈາກບຸຕຣເສດຖີລະ" ຄັນກິກສຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສາກຍບຸຕຣ ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ພຣະບັນຍັດ

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານອອກປາກຂໍຈີວອນຈາກບຸຕຣເສດຖີ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສຖາມວ່າ "ອຸປນັນທະ ບຸຕຣເສດຖີເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ທ່ານພຣະອຸປນັນທສາກຍບຸຕຣ ທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທສເຈົ້າຂ້າ" ພຣະພຸທສອົງຄ໌ຊົງຕຳຫນິວ່າ "ໂມຆບຸຣຸສ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມຫລືບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງຄົນຜູ້ບໍ່ແມ່ນຍາຕ ໂມຆບຸຣຸສ ທ່ານນັ້ນອອກປາກຂໍຈີວອນຈາກບຸຕຣເສດຖີ ຜູ້ບໍ່ແມ່ນຍາຕພຸ້ນຫລື ໂມຆບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໑໕] ກໍ ກິກສຸໃດອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງ ຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ສິກຂາບົທນີ້ ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກສຸທັງຫລາຍຢ່າງນີ້

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ເຣື້ອງກິກສຸຖືກຊິງຈີວອນ

[໕໑໗] ສມັຍນັ້ນ ກິກສຸຫລາຍຣູບຍ່າງທາງໄກຈາກເມືອງສາເກຕໄປກຸງສາວັຕຖີ ໃນຣະຫວ່າງທາງພວກໂຈຣອອກມາປຸ້ນກິກສຸເຫລົ່ານັ້ນ ພວກທ່ານຄິດວ່າ "ການອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງ ພຣະຜູ້ມີພຣະກາຄຊົງຫ້າມໄວ້ແລ້ວ" ຈຶ່ງກຽດຊັງ ບໍ່ຍອມອອກປາກຂໍຈີວອນເລີຍ ເປືອຍກາຍໄປເຖິງກຸງສາວັຕຖີ ໄຫວ້ກິກສຸທັງຫລາຍ ພວກກິກສຸຈຶ່ງກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກອາຊີວກທີ່ພາກັນໄຫວ້ກິກສຸເຫລົ່ານີ້ ເປັນພວກອາຊີວກທີ່ດີ"

ພຣະອນຸບັນຍັດ

ภิกษุชาวเมืองสาเกตกล่าวอย่างนี้ว่า "พวกผู้ข้าบ่แม่นอาชีวก พวกผู้ข้าเป็นภิกษุ" ภิกษุชาวกรุงสาวัตถีได้กล่าวกับพระอุบาลีว่า "ท่านอุบาลี นิมนต์ท่านไต่สวนภิกษุเหล่านี้เถิด" เมื่อภิกษุเหล่านั้นถืกพระอุบาลีไต่สวน จึ่งเล่าเรื่องนั้นให้ชาบ ครั้นไต่สวนแล้ว พระอุบาลีแจ้งว่า "พวกเปือยกายเหล่านี้เป็นภิกษุ จ่งให้จีวอนแก่พวกท่าน" บันดาภิกษุผู้มักน้อย ฯลฯ พากันตำหนิ ปะนาม โพนทะนาว่า "จั่งใดภิกษุทั้งหลายจึ่งเปือยกายย่างมาละตามลัมดาภิกษุต้องใช้หย้าหลือใบไม้ปกปิดย่างมา บ่แม่นบ่" ครั้นภิกษุทั้งหลายตำหนิภิกษุเหล่านั้นโดยประการต่างๆแล้วจึ่งนำเรื่องนี้ไปขาบทูลพระผู้มีพระภาคให้ชงชาบ

ຊົງອນຸຍາຕໃຫ້ຂໍຈີວອນໄດ້

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັ້ງຫລາຍວ່າ "ພິກສຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຖືກໂຈຣຊິງຈີວອນ ຫລືຈີວອນຫາຍ ອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕໄດ້ ຖ້າວັດທີ່ພິກສຸໄປເຖີງກ່ອນ ມີຈີວອນປະຈຳວິຫາຣ ຜ້າປູຕຽງ ຜ້າປູພື້ນຫລືຜ້າປອກເສື່ອຂອງສົງຄ໌ ກໍເພິງຖືເອົາຜ້າຂອງສົງຄ໌ໄປຫົ່ມໂດຍຕັ້ງໃຈວ່າ 'ເມື່ອເຮົາໄດ້ຈີວອນແລ້ວຈະນຳມາຄືນ' ດັ່ງນີ້ກໍຄວຣ ຖ້າບໍ່ມີຈີວອນປະຈຳວິຫາຣ ຜ້າປູຕຽງ ຜ້າປູພື້ນຫລືຜ້າປອກເສື່ອຂອງສົງຄ໌ ຄວຣໃຊ້ຫຍ້າຫລືໃບໄມ້ປົກປິດມາ ອີກຢ່າງນຶ່ງ ພິກສຸບໍ່ເພິງເປືອຍກາຍຢ່າງມາ ພິກສຸໃດເປືອຍກາຍຢ່າງມາ ຕ້ອງອາບັຕິທຸກກຎ" ແລ້ວຮັບສັ່ງໃຫ້ພິກສຸທັ້ງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໑໗] ອີກຢ່າງນຶ່ງ ພິກສຸໃດອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ນອກສມັຍ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ສມັຍໃນຂໍ້ນັ້ນ ຄື ພິກສຸຖືກຊິງຈີວອນໄປ ຫລືຈີວອນສູນຫາຍ ນີ້ເປັນສມັຍໃນຂໍ້ນັ້ນ

ເຣື້ອງພິກສຸຖືກຊິງຈີວອນ ຈົບ

ສິກຂາບົທວິກັງຄ໌

[໕໑໘] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ກິກຸ ມີອະທິບາຍວ່າ ຊື່ວ່າກິກຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸຫຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ກິກຸຖືກຊີງຈີວອນໄປ ໄດ້ແກ່ ຈີວອນຂອງກິກຸທີ່ພຣະຣາຊາ ໂຈຣ ນັກເລງຫລືຄົນບາງພວກຊີງເອົາໄປ

ທີ່ຊື່ວ່າ ຈີວອນສູນຫາຍ ໄດ້ແກ່ ຈີວອນຂອງກິກຸຖືກໄຟໄຫມ້ ນ້ຳພັດ ຫນູຫລືປວກກັດ ຫລືທີ່ໃຊ້ສອຍຈົນເກົ່າ

ກິກຸອອກປາກຂໍນອກສມັຍ ຕ້ອງອາບັຕິທຸກກຝເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຆ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກຸທັງຫລາຍ ກິກຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຆ໌

ກິກຸຮູບນັ້ນເພິງເຂົ້າໄປຫາສົງຆ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຸຜູ້ແກ່ພັນຫາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າອອກປາກຂໍຈາກຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ນອກສມັຍ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຆ໌" ຄັນສລະແລ້ວເພິງສະແດງອາບັຕິ ກິກຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຆ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຆ໌ ຖ້າສົງຆ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກຸຊື່ນີ້"

ສລະແກ່ຄຕະ

ກິກຸຮູບນັ້ນເພິງເຂົ້າໄປຫາກິກຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຸຜູ້ແກ່ພັນຫາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າອອກປາກຂໍຈາກຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ນອກສມັຍ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນ

ສລະແລ້ວເພິງສະແດງອາບັຕິ ກິກບຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກບຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກບຸຊື່ນີ້"

ສລະແກ່ບຸຄຄົລ

ກິກບຸຮູບນັ້ນເພິງເຂົ້າໄປຫາກິກບຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຍ່ອງຢື້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າອອກປາກຂໍຈາກຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ນອກສມັຍເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກບຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໑. ຈີຣວັຄ ໖. ອັຍຍາຕກວິຍັຕຕິສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕີກນິສສັຄຄີຍປາຈິຕຕີຍ໌

[໕໒໐] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ຂໍຈີວອນນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກບຸບໍ່ແນ່ໃຈ ຂໍຈີວອນນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າເປັນຍາຕ ຂໍຈີວອນນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຸ

ຄຣືຫັສຖ໌ທີ່ເປັນຍາຕ ກິກບຸສຳຄັນວ່າບໍ່ແມ່ນຍາຕ ຂໍຈີວອນນອກສມັຍ ຕ້ອງອາບັຕິທຸກກຸ

ຄຣືຫັສຖ໌ທີ່ເປັນຍາຕ ກິກບຸບໍ່ແນ່ໃຈ ຂໍຈີວອນນອກສມັຍ ຕ້ອງອາບັຕິທຸກກຸ

ຄຣືຫັສຖ໌ທີ່ເປັນຍາຕ ກິກບຸສຳຄັນວ່າເປັນຍາຕ ຂໍຈີວອນນອກສມັຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກບຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໔໑] ໑. ພິກຂຸອອກປາກຂໍໃນສະໄໝ
໒. ພິກຂຸອອກປາກຂໍຈາກຍາດ
໓. ພິກຂຸອອກປາກຂໍຈາກຄົນປວາຣະນາ
໔. ພິກຂຸອອກປາກຂໍເພື່ອພິກຂຸຮູບອື່ນ
໕. ພິກຂຸຊື້ມາດ້ວຍຊັບຂອງຕົນ
໖. ພິກຂຸວິກົລຈິດ
໗. ພິກຂຸຕົ້ນບັນຍັດ

ອັຍຍາຕະກະວິຍັຍຕິສິກຂາບົດທີ ໖ ຈົບ

ພຣະວິນັຍປິດົກ ມະຫາວິພັງຄ໌ [໔. ນິສສັຄຄິຍກັນທ໌] ໑. ຈີວະວັຄ ໗. ຕະຕຸດຕະຣະສິກຂາບົດ ນິທານ ວັຕຖຸ

໑. ຈີວອນວັຄ

໗. ຕຕຸຕຕຣິສິກຂາບົດ

ວ່າດ້ວຍການອອກປາກຂໍຈີວອນເກີນ

ເຣື້ອງພຣະສັພພັຄຄີຍ໌

[໕໔໒] ສະໄໝນັ້ນ ພຣະຜູ້ມີພຣະພາຄພຸທະເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ເຂົ້າໄປຫາພິກຂຸທີ່ຖືກໂຈຣຊີງຈີວອນ ໄປແລ້ວກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງອນຸຍາດໃຫ້ ພິກຂຸທີ່ຖືກໂຈຣຊີງຈີ ວອນໄປຫລືຈີວອນສູນຫາຍ ອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາດ ໄດ້ ພວກທ່ານຈົ່ງຂໍຈີວອນເຖີດ" ພິກຂຸເຫລົ່ານັ້ນກ່າວວ່າ "ບໍ່ລະ ຂນ້ອຍ ພວກຜູ້ຂ້າໄດ້ຈີວອນຄົບ ແລ້ວ" ພວກພິກຂຸສັພພັຄຄີຍ໌ກ່າວວ່າ "ພວກເຮົາຈະອອກປາກຂໍເພື່ອພວກທ່ານ" ພິກຂຸເຫລົ່າ ນັ້ນກ່າວວ່າ "ນິມົນຕ໌ອອກປາກຂໍເຖີດ ຂນ້ອຍ" ຕໍ່ຈາກນັ້ນ ພວກພິກຂຸສັພພັຄຄີຍ໌ເຂົ້າໄປຫາ ພວກຄຣືຫັສຖ໌ກ່າວວ່າ "ທ່ານທັງຫລາຍ ພວກພິກຂຸທີ່ຖືກໂຈຣຊີງຈີວອນໄປມາເຖິງແລ້ວ ພວກ ທ່ານຈົ່ງຖວາຍຈີວອນແກ່ພວກທ່ານ" ແລ້ວອອກປາກຂໍຈີວອນເປັນອັນມາກ

ກໍສະໄໝນັ້ນ ຊາຍຄົນນຶ່ງນັ່ງຢູ່ໃນທີ່ປະຊຸມບອກຊາຍອີກຄົນນຶ່ງວ່າ "ພວກພຣະຄຸນເຈົ້າທີ່ຖືກໂຈຣຊີງຈີ ວອນໄປມາເຖິງແລ້ວ ຂ້າພະເຈົ້າໄດ້ຖວາຍຈີວອນທ່ານເຫລົ່ານັ້ນໄປແລ້ວ" ຊາຍແມ່ນນັ້ນຕອບວ່າ

"ຂ້າພະເຈົ້າກໍໄດ້ຖວາຍໄປແລ້ວ" ຊາຍອີກຄົນນຶ່ງກໍກ່າວເຊັ່ນດຽວກັນວ່າ "ແມ່ນຂ້າພະເຈົ້າກໍໄດ້ຖວາຍໄປແລ້ວ" ພວກເຂົາຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງບໍ່ຮູ້ຈັກປະມານ ອອກປາກຂໍຈີວອນມາກມາຍລະ ພວກທ່ານຈະຄ້າຜ້າຫລືຈັດຕັ້ງຮ້ານຂາຍຜ້າຊັ້ນບໍ່" ພວກພິກຂຸໄດ້ຍິນຄຳຕຳໜິ ປະນາມ ໂພນທະນາຂອງຊາວບ້ານ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງບໍ່ຮູ້ຈັກປະມານ ອອກປາກຂໍຈີວອນເປັນອັນມາກລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານບໍ່ຮູ້ຈັກປະມານ ຂໍຈີວອນເປັນອັນມາກແມ່ນແທ້ບໍ່" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຍທັງຫລາຍ ຈັ່ງໃດພວກທ່ານຈຶ່ງບໍ່ຮູ້ຈັກປະມານຂໍຈີວອນຈຳນວນຫລາຍລະ ໂມຄບຸຣຸຍທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໖] ຖ້າຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ນຳຈີວອນຈຳນວນຫລາຍມາປວາຣຕາພິກຂຸນັ້ນ໑ ພິກຂຸນັ້ນເພິງຍິນດີຈີວອນມີອຸຕຕຣາສົງຄ໌ແລະອັນຕຣວາສກເປັນຢ່າງຫລາຍຈາກຈີວອນທີ່ເຂົານຳມານັ້ນ ຖ້າຍິນດີເກີນກວ່ານັ້ນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື່ອງພຣະຈັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ພຫູຫິ ຈີວເຣຫິ ອພີຫຕຸຖໍ ປວາເຣຍຍ ທີ່ແປວ່າ "ນຳຈີວອນຈຳນວນຫລາຍມາປວາຣຕາ" ເປັນໄປຕາມກົດນີ້ : ອພີຫຕຸຖໍ

ອພິ+ຫຣ+ຕຸວາ (ຕຸວາປັຈຈັຍ) ໂດຍສູຕຣວ່າ ກິຈຈຕກາຣຕຸໍຕຸວາທີນຢຈ ຣຜຸກຣຜຸຖໍຣຜຸກາເທສາ - ຮູບ. ໕໐໙ (ແປງ ຕ ໃນກິຈຈປັຈຈັຍເປັນ ຜຸກ ແປງ ຕຸໍ-ຕຸວາ ປັຈຈັຍເປັນຕົ້ນເປັນ ຜຸຖໍ ຜຸກ)

ອັນຖະກຖາວິນັຍກໍອະທິບາຍທ່ານອງນີ້ວ່າ "ອກິຫຣຸກໍ ປວາເຣຍຸຍາ"ຕິ ອກິຫຣິດຸວາ ປວາເຣຍຸຍາຕິ ອຕຸໂຖ. (ຄຳວ່າ ອກິຫຣຸກໍ ປວາເຣຍຸຍາ ມີອະທິບາຍວ່ານຳມາປວາຣຕາ ວິ. ອ. ໒/໕໒໔-໔/໑໗໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ຈີຣວັຄ ໗. ຕຕຸຕຕຣິສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໒໔] ຄຳວ່າ ຖ້າ. . . ພິກຂຸນັ້ນ ໄດ້ແກ່ ພິກຂຸຜູ້ຖືກໂຈຣຊິງຈີວອນໄປ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸຫຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ຄຳວ່າ ຈີວອນຈຳນວນຫລາຍ ຄື ຈີວອນຫລາຍຜືນ

ຄຳວ່າ ນຳ. . . ມາປວາຣຕາ ຄື ນຳມາປວາຣຕາວ່າ ທ່ານຈົ່ງຮັບຈີວອນຕາມທີ່ປຣາຖນາເຖີດ

ຄຳວ່າ ພິກຂຸນັ້ນເພິງຍິນດີຈີວອນມີອຸຕຕຣາສົງຄ໌ແລະອັນຕຣວາສກເປັນຢ່າງຫລາຍຈາກຈີວອນທີ່ເຂົາ ນຳມານັ້ນ ຄວາມວ່າ ຖ້າຈີວອນຫາຍ ໓ ຜືນ ທ່ານເພິງຍິນດີ ໒ ຜືນ ຈີວອນຫາຍ ໒ ຜືນ ເພິງຍິນດີ ໑ ຜືນ ຫາຍຜືນດຽວບໍ່ເພິງຍິນດີ

ຄຳວ່າ ຖ້າຍິນດີເກີນກວ່ານັ້ນ ຄວາມວ່າ ພິກຂຸອອກປາກຂໍເກີນກວ່ານັ້ນ ຕ້ອງອາບັຕິທຸກກຕເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຆ໌ ແກ່ຄຕະ ຫລືແກ່ບຸຄຄົລ

ພິກຂຸທັງຫລາຍ ພິກຂຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຆ໌

ພິກຂຸຮູບນັ້ນເພິງເຂົ້າໄປຫາສົງຆ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວອອກປາກຂໍເກີນກຳຫນົດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຆ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມ

ອາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຟ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກສຸຊື່ນີ້ເປັນນິສສັດຄີຍ໌ ທ່ານສລະແກ່ສົງຟ໌ ຖ້າສົງຟ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກສຸຊື່ນີ້"

ສລະແກ່ຄຕະ

ກິກສຸຮູບນັ້ນເພິງເຂົ້າໄປຫາກິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ງງບ່າຂ້າງນຶ່ງ ຂາບຕີນກິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ແລ້ວອອກປາກຂໍເກີນກໍາຫນົດ ເປັນນິສສັດຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກສຸຊື່ນີ້ເປັນນິສສັດຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກສຸຊື່ນີ້"

ສລະແກ່ບຸຄຄົລ

ກິກສຸຮູບນັ້ນເພິງເຂົ້າໄປຫາກິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ງງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ແລ້ວອອກປາກຂໍເກີນກໍາຫນົດ ເປັນນິສສັດຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ຕິກນິສສັດຄີຍປາຈິຕຕີຍ໌

[໕໔໕] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກສຸສໍາຄັນວ່າບໍ່ແມ່ນຍາຕ ຂໍຈີວອນເກີນກໍາຫນົດຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກສຸບໍ່ແນ່ໃຈ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກສຸສໍາຄັນວ່າເປັນຍາຕ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌

ທຸກກຸກກະ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸສໍາຄັນວ່າບໍ່ແມ່ນຍາຕ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິທຸກກະ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸບໍ່ແນ່ໃຈ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິທຸກກະ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸສໍາຄັນວ່າເປັນຍາຕ ຂໍຈີວອນເກີນກໍາຫນົດ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໔໖] ໑. ກິກຂຸທີ່ຮັບເອົາໄປເພາະຄິດວ່າ ຈະນໍາຈີວອນທີ່ເຫລືອມາຄືນ

໒. ກິກຂຸທີ່ຄຣືຫັສຖ໌ຖວາຍດ້ວຍຖ້ອຍຄໍາວ່າ "ຈີວອນທີ່ເຫລືອເປັນຂອງທ່ານຮູບດຽວ"

໓. ກິກຂຸທີ່ຄຣືຫັສຖ໌ບໍ່ໄດ້ຖວາຍເພາະຈີວອນຖືກຊີງໄປ

໔. ກິກຂຸທີ່ຄຣືຫັສຖ໌ບໍ່ໄດ້ຖວາຍເພາະຈີວອນສູນຫາຍ

໕. ກິກຂຸຜູ້ຍິນດີຈີວອນທີ່ຍາຕຖວາຍ

໖. ກິກຂຸຜູ້ຍິນດີຈີວອນທີ່ທາຍົກປວາຣຕາຖວາຍ

໗. ກິກຂຸຜູ້ຍິນດີຈີວອນທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ

໘. ກິກຂຸວິກົລຈິຕ

໙. ກິກຂຸຕົ້ນບັນຍັດ

ຕຕຸຕຕຣິສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ຈີຣວັຄ ໘. ອຸປັກຂຍສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໘. ອຸປັກຂຍສິກຂາບົທ

ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໔໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫົກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ຊາຍຄົນນຶ່ງກ່າວກັບກັຣຍາວ່າ "ຂ້ອຍຈະນິມົນຕ໌ພຣະຄຸຓເຈົ້າ

ອຸປນັນທະໃຫ້ຄອງຈີວອນ" ກິກຂຸຜູ້ຖືທຽວບິດຕາບາດເປັນວັດຕຣຣູບນຶ່ງໄດ້ຍິນຊາຍຄົນນັ້ນກ່າວ ຈຶ່ງ ເຂົ້າໄປຫາທ່ານພຣະອຸປນັນທສາກຍບຸດຕຣເຖິງທີ່ຢູ່ແລ້ວກ່າວວ່າ "ທ່ານອຸປນັນທະ ທ່ານມີບຸນມາກ ຊາຍຄົນນຶ່ງໃນທີ່ພຸ້ນກ່າວກັບກັຣຍາວ່າ 'ຈະນິມົນຕ໌ພຣະຄຸດຕເຈົ້າອຸປນັນທະໃຫ້ຄອງຈີວອນ" ທ່ານ ພຣະອຸປນັນທະກ່າວວ່າ "ແມ່ນແລ້ວ ຂນ້ອຍ ເຂົາເປັນອຸປັຍຖາກຂອງຜູ້ຂ້າເອງ" ຕໍ່ມາ ທ່ານພຣະ ອຸປນັນທສາກຍບຸດຕຣໄດ້ເຂົ້າໄປຫາຜູ້ນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວວ່າ "ໄດ້ຊາບວ່າ ໂຍມຕ້ອງ ກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນແມ່ນແທ້ບໍ" ເຂົາຕອບວ່າ "ຈິງຄຣັບທ່ານ ຜູ້ຂ້າມີຄວາມຄິດວ່າ ຈະນິມົນຕ໌ພຣະຄຸດຕເຈົ້າອຸປນັນທະໃຫ້ຄອງຈີວອນ" ທ່ານພຣະອຸປນັນທະກ່າວວ່າ "ຫາກທ່ານຕ້ອງ ກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນ ກໍຈົ່ງໃຫ້ຄອງຈີວອນຊນິດນີ້ ຈີວອນທີ່ອາຕມາບໍ່ໃຊ້ ແມ່ນ ນິມົນຕ໌ອາຕມາໃຫ້ຄອງກໍຈະມີປໂຍດຫຍັງ" ເທື່ອນັ້ນ ບຸຣຸສນັ້ນຈຶ່ງຕໍາໜິ ປະນາມ ໂພນທະນາວ່າ "ພຣະສມຕະເຊື້ອສາຍສາກຍບຸດຕຣມັກມາກ ບໍ່ສັນໂດສ ຈະນິມົນຕ໌ໃຫ້ຄອງຈີວອນ ບໍ່ແມ່ນຈະເຮັດ ໄດ້ງ່າຍ ຈັ່ງໃດພຣະຄຸດຕເຈົ້າອຸປນັນທສາກຍບຸດຕຣ ຊຶ່ງເຮົາບໍ່ໄດ້ປວາຣດາໄວ້ກ່ອນຈຶ່ງເຂົ້າມາກໍາ ໜົດຊນິດຈີວອນລະ" ພວກກິກຂຸໄດ້ຍິນຄໍາຕໍາໜິ ປະນາມ ໂພນທະນາຂອງຊາວບ້ານ ບັນດາ ກິກຂຸຜູ້ມັກນ້ອຍ ສັນໂດສ ຯລຯ ພາກັນຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະ ອຸປນັນທ ສາກຍບຸດຕຣ ຊຶ່ງເຂົາບໍ່ໄດ້ປວາຣດາໄວ້ກ່ອນຈຶ່ງເຂົ້າໄປຫາຄຣືຫັສຖ໌ກໍາໜົດຊນິດຈີວອນ ລະ" ຄັນກິກ ຂຸເຫລົ່ານັ້ນຕໍາໜິທ່ານພຣະອຸປນັນທສາກຍບຸດຕຣໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື່ອງ ນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສາກຍບຸດຕຣວ່າ "ອຸປນັນທະ ຊາບວ່າ ເຂົາບໍ່ໄດ້ປວາຣດາໄວ້ກ່ອນ ແຕ່ທ່ານເຂົ້າໄປ ຫາຄຣືຫັສຖ໌ແລ້ວກໍາໜົດຊນິດຈີວອນ ແມ່ນແທ້ບໍ" ພຣະອຸປນັນທສາກຍບຸດຕຣທູລຮັບວ່າ "ແມ່ນ ແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສຖາມວ່າ "ອຸປນັນທະ ເຂົາເປັນຍາຕຂອງທ່ານຫລືບໍ່ ແມ່ນຍາຕ" ທ່ານພຣະອຸປນັນທະທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະ ກາຄຊົງຕໍາໜິວ່າ "ໂມຄບຸຣຸສ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມຫລືບໍ່ເໝາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງຄົນຜູ້ບໍ່ແມ່ນຍາຕ ໂມຄບຸຣຸສທ່ານນັ້ນ ຊຶ່ງພວກເຂົາບໍ່ໄດ້ປວາຣດາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວກໍາໜົດຊນິດຈີວອນ ໂມຄບຸຣຸສ ກາຣກະທໍາຢ່າງນີ້ ບໍ່ໄດ້ ເຮັດໃຫ້ ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້

ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໕໒໗] ກໍ ຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ກະກຽມຊັພຍ໌ເປັນຄ່າຈີວອນ ເຈາະຈົງ ພິກຂຸວ່າ “ເຮົາຈະຊື້ຈີວອນດ້ວຍຊັພຍ໌ເປັນຄ່າຈີວອນນີ້ແລ້ວ ນິມົນຕ໌ພິກຂຸຊື່ນີ້ໃຫ້ຄອງຈີວອນ” ຖ້າ ພິກຂຸນັ້ນຊຶ່ງເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປກຳຫນົດຂນິດຈີວອນໃນທີ່ທີ່ເຂົາຕຽມຈີວອນໄວ້ ເພາະຕ້ອງກາຣຈີວອນດີວ່າ “ດີລະ ທ່ານຈົ່ງຊື້ຈີວອນເຊັ່ນນັ້ນເຊັ່ນນີ້ດ້ວຍຊັພຍ໌ເປັນຄ່າຈີວອນນີ້ແລ້ວ ໃຫ້ອາຕມາຄອງເຖີດ” ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ຈີຣວັຄ ໗. ອຸປັກຂຍສິກຂາບົທ ສິກຂາ ບົ ທວິພັງຄ໌

ສິກຂາບົທວິພັງຄ໌

[໕໒໘] ຄຳວ່າ ກໍ. . . ເຈາະຈົງພິກຂຸ ໄດ້ແກ່ ເພື່ອປໂຍດຂອງພິກຂຸ ຄື ມຸ່ງສະເພາະພິກຂຸ ປຣາຖນາຈະໃຫ້ພິກຂຸຄອງຈີວອນ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸຫຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຊັພຍ໌ເປັນຄ່າຈີວອນ ໄດ້ແກ່ ເງິນ ທອງ ແກ້ວມຸກດາ ແກ້ວມະນີ ແກ້ວຕາແມວ ແກ້ວ ຜລຶກ ຜ້າ ດ້າຍຫລືຝ້າຍ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ໃຫ້. . . ຄອງ ຄື ຖວາຍ

ຄຳວ່າ ຖ້າພິກຂຸນັ້ນ. . . ໃນທີ່ທີ່ເຂົາຕຽມຈີວອນໄວ້ ໄດ້ແກ່ ພິກຂຸຮູບທີ່ເຂົາກະກຽມຊັພຍ໌ເປັນຄ່າຈີ ວອນໄວ້ຖວາຍໂດຍສະເພາະ

ຄຳວ່າ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຄື ທາຍົກບໍ່ໄດ້ກ່າວໄວ້ກ່ອນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈີວອນຊນິດໃດ ຜູ້ຂ້າຈະຊື້ຈີວອນຊນິດໃດຖວາຍທ່ານ"

ຄຳວ່າ ເຂົ້າໄປ ຄື ໄປເຖິງເຮືອນແລ້ວເຂົ້າໄປຫາທີ່ໃດທີ່ນຶ່ງ

ຄຳວ່າ ກຳຫນົດຊນິດຈີວອນ ຄື ກຳຫນົດວ່າ ຂໍໃຫ້ເປັນຜ້າຍາວ ກວ້າງ ເນື້ອແໜ້ນຫລືເນື້ອລະອຽດ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ເຊັ່ນນັ້ນເຊັ່ນນີ້ ຄື ຍາວຫລືກວ້າງ ເນື້ອແໜ້ນຫລືເນື້ອລະອຽດ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ຈົ່ງໃຫ້ຄອງ ຄື ຈົ່ງຖວາຍ

ຄຳວ່າ ເພາະຕ້ອງການຈີວອນດີ ຄື ຕ້ອງການຜ້າເນື້ອດີຫລືຜ້າທີ່ມີຣາຄາແພງ ເຂົາຊື້ຈີວອນຜືນຍາວ ກວ້າງ ເນື້ອແໜ້ນຫລືເນື້ອລະອຽດຕາມຄຳຂອງກິກຂຸນັ້ນ ຕ້ອງອາບັຕິທຸກກຏເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງฆ໌ ແກ່ຄຕະຫລືແກ່ບຸຄຄົລ ກິກຂຸທັງຫລາຍ ກິກຂຸພຶງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງฆ໌

ກິກຂຸຮູບນັ້ນພຶງເຂົ້າໄປຫາສົງฆ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຖູເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງฆ໌" ຄັນສລະແລ້ວພຶງສະແດງອາບັຕິ ກິກຂຸຜູ້ສລາດສາມາດພຶງຮັບອາບັຕິ ພຶງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານ ຜູ້ຈະເຣີນ ຂໍສົງฆ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງฆ໌ ຖ້າສົງฆ໌ພ້ອມກັນແລ້ວກໍພຶງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ຄຕະ

ກິກຂຸຮູບນັ້ນພຶງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຖູເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນ

ນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກໍາຫນົດຊນິດຈີວອນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍ ກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ຕິກນິສສັຄຄິຍປາຈິຕຕີຍ໌

[៥៦០] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຂຸສໍາຄັນວ່າບໍ່ແມ່ນຍາຕ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ແລ້ວກໍາຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຂຸບໍ່ແນ່ໃຈ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ແລ້ວກໍາຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຂຸສໍາຄັນວ່າເປັນຍາຕ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ແລ້ວກໍາຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ທຸກກຸກຄ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸສໍາຄັນວ່າບໍ່ແມ່ນຍາຕ ເຂົ້າໄປກໍາຫນົດຊນິດຈີວອນ ຕ້ອງອາບັຕິທຸກກຄ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸບໍ່ແນ່ໃຈ ເຂົ້າໄປກໍາຫນົດຊນິດຈີວອນ ຕ້ອງອາບັຕິທຸກກຄ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸສໍາຄັນວ່າເປັນຍາຕ ເຂົ້າໄປກໍາຫນົດຊນິດຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[៥៦១] ១. ກິກຂຸຂໍຈາກຄຣືຫັສຖ໌ທີ່ເປັນຍາຕ

៤. ກິກຂຸຂໍຈາກຄຣືຫັສຖ໌ທີ່ປວາຣຕາ

໓. ກິກບຸຂໍເພື່ອກິກບຸຮູບອື່ນ
໔. ກິກບຸຊື້ມາດ້ວຍຊັພຍ໌ຂອງຕົນ
໕. ກິກບຸຜູ້ເມື່ອຄຣືຫັສຖ໌ຜູ້ຕ້ອງກາຣຊື້ຈີວອນຣາຄາແພງ ຕົນເອງກັບໃຫ້ຊື້ຈີວອນຣາຄາຖືກ
໖. ກິກບຸວິກົລຈິຕ
໗. ກິກບຸຕົ້ນບັນຍັດ

ອຸປັກຂພສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຑ໌] ໑. ຈີຣວັຄ ໘. ທຸຕິຍອຸປັກຂພສິກຂາບົທ ນິທານວັຕຖຸ

໑. ຈີຣວັຄ

໘. ທຸຕິຍອຸປັກຂພສິກຂາບົທ

ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນ ຂໍ້ທີ ໔

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໓໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຓ ຯິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ບຸຣຸຫຄົນນຶ່ງກ່າວກັບບຸຣຸຫອີກຄົນນຶ່ງວ່າ “ຜູ້ຂ້າຈະນິມົນຕ໌ພຣະ ຄຸຓເຈົ້າອຸປນັນທະໃຫ້ຄອງຈີວອນ” ແມ່ນບຸຣຸຫຄົນນັ້ນກໍກ່າວວ່າ “ຜູ້ຂ້າກໍຈະນິມົນຕ໌ພຣະຄຸຓເຈົ້າ ອຸປນັນທະໃຫ້ຄອງຈີວອນ” ກິກບຸຜູ້ຖືທຽວບິຓຫບາຕເປັນວັຕຣຮູບນຶ່ງໄດ້ຍິນກາຣສົນທນາຂອງ ບຸຣຸຫເຫລົ່ານັ້ນຈຶ່ງເຂົ້າໄປຫາທ່ານພຣະອຸປນັນທະເຖິງທີ່ຢູ່ແລ້ວກ່າວວ່າ “ທ່ານອຸປນັນທະ ທ່ານມີບຸນ ມາກ ບຸຣຸຫຄົນນຶ່ງໃນທີ່ພຸ້ນກ່າວກັບບຸຣຸຫອີກຄົນນຶ່ງວ່າ ‘ຈະນິມົນຕ໌ພຣະຄຸຓເຈົ້າອຸປນັນທະໃຫ້ຄອງ ຈີວອນ’ ແມ່ນບຸຣຸຫຄົນນັ້ນກໍກ່າວວ່າ ‘ຜູ້ຂ້າກໍຈະນິມົນຕ໌ພຣະຄຸຓເຈົ້າອຸປນັນທະໃຫ້ຄອງຈີວອນ” ທ່ານພຣະອຸປນັນທະກ່າວວ່າ “ແມ່ນແລ້ວ ຂນ້ອຍ ບຸຣຸຫທັງສອງເປັນອຸປັຍກາກຂອງຜູ້ຂ້າເອງ” ຕໍ່ມາ ທ່ານພຣະອຸປນັນທສາກຍບຸຕຣໄປຫາບຸຣຸຫທັງສອງເຖິງທີ່ຢູ່ຄັນເຖິງແລ້ວຈຶ່ງກ່າວວ່າ “ໄດ້ຊາບວ່າ ໂຍມທັງສອງຕ້ອງກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນຫລາຍຜືນ ແມ່ນແທ້ບໍ” ບຸຣຸຫທັງສອງ ຕອບວ່າ “ຈິງຄຮັບທ່ານ ພວກຜູ້ຂ້າມີຄວາມຄິດຈະນິມົນຕ໌ພຣະຄຸຓເຈົ້າອຸປນັນທະ ໃຫ້ຄອງຈີວອນ” ທ່ານພຣະອຸປນັນທະກ່າວວ່າ “ຖ້າທ່ານທັງສອງຕ້ອງກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນ ກໍຈົ່ງໃຫ້

ຄອງຈີວອນຊະນິດນີ້ ຈີວອນທີ່ອາຕມາບໍ່ໃຊ້ແມ່ນນິມົນຕ໌ອາຕມາໃຫ້ຄອງກໍຈະມີປໂຍດຫຍັງ" ບຸຣຸษ ທັງສອງຕຳໜິ ປະນາມ ໂພນທະນາວ່າ "ພຣະສມຕະເຊື້ອສາຍສາກຍບຸຕຣ ມັກມາກ ບໍ່ສັນໂດษ ຈະນິມົນຕ໌ໃຫ້ຄອງຈີວອນ ກໍເຮັດໄດ້ຍາກ ຈັ່ງໃດພຣະຄຸຕເຈົ້າອຸປນັນທະ ຊຶ່ງພວກເຮົາບໍ່ໄດ້ ປວາຣຕາໄວ້ກ່ອນຈຶ່ງມາກຳໜົດຊະນິດຈີວອນລະ" ພວກກິກษຸໄດ້ຍິນບຸຣຸษທັງສອງຕຳໜິ ປະນາມ ໂພນທະນາ ບັນດາກິກษຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະ ອຸປນັນທສາກຍບຸຕຣຊຶ່ງເຂົາບໍ່ໄດ້ປວາຣຕາໄວ້ກ່ອນຈຶ່ງເຂົ້າໄປຫາພວກຄຣືຫັສຖ໌ກຳໜົດຈີວອນລະ" ຄັນກິກษຸເຫລົ່ານັ້ນ ຕຳໜິທ່ານອຸປນັນທສາກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບ ທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງฆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງฆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ແຕ່ທ່ານໄປກຳ ໜົດຊະນິດຈີວອນ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຣັບວ່າ "ຈິງພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສຖາມວ່າ "ອຸປນັນທະ ຄົນເຫລົ່ານັ້ນເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ພຣະ ອຸປນັນທະທູລຕອບວ່າ "ຄົນເຫລົ່ານັ້ນບໍ່ແມ່ນຍາຕ ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕຳໜິ ວ່າ "ໂມฆບຸຣຸษ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມຫລືບໍ່ເໝາະສົມ ຂອງທີ່ ມີຢູ່ຫລືບໍ່ມີຂອງຄົນຜູ້ບໍ່ແມ່ນຍາຕ ໂມฆບຸຣຸษ ທ່ານນັ້ນຊຶ່ງເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວກຳໜົດຊະນິດຈີວອນໂມฆບຸຣຸษ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ເລີຍ ຯລຯ" ແລ້ວຈຶ່ງຣັບສັ່ງໃຫ້ກິກษຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໖໖] ກໍ ຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ໔ ຄົນ ກະກຽມຊັພຍ໌ເປັນຄ່າຈີວອນຄົນລະ ຜືນ ເຈາະຈົງກິກษຸວ່າ "ພວກເຮົາຈະຊື້ຈີວອນຄົນລະຜືນດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ແລ້ວ ນິມົນຕ໌ກິກษຸຊື່ນີ້ໃຫ້ຄອງຈີວອນຫລາຍຜືນ" ຖ້າກິກษຸນັ້ນຊຶ່ງພວກເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າ ໄປກຳໜົດຊະນິດຈີວອນໃນທີ່ທີ່ເຂົາຕຽມຈີວອນໄວ້ ເພາະຕ້ອງການຈີວອນດີ ວ່າ "ດີລະ ທ່ານທັງ ສອງຈົ່ງຮວມກັນຊື້ຈີວອນເຊັ່ນນັ້ນເຊັ່ນນີ້ ດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ ແລ້ວນິມົນຕ໌ອາຕ ມາ ໃຫ້ຄອງເຖີດ" ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ພຣະວິນັຍປີດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັດຫ໌] ໑. ຈີວວັຄ ໙. ທຸຕິຍອຸປັກຂດສິກຂາບົທ ສິກຂາບົທວິກັງຄ໌

ສິກຂາບົທວິກັງຄ໌

[໕໖໔] ຄຳວ່າ ກໍ. . . ເຈາະຈົງກິກຊຸ ໄດ້ແກ່ ເພື່ອປະໂຍດຂອງກິກຊຸ ຄື ມຸ່ງສະເພາະກິກຊຸ ປຣາຖນາຈະໃຫ້ກິກຊຸຄອງຈີວອນ

ຄຳວ່າ ໔ ຄົນ ຄື ມີ ໔ ຄົນ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາ ຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸຫຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຊັພຍ໌ເປັນຄ່າຈີວອນ ໄດ້ແກ່ ເງິນ ທອງ ແກ້ວມຸກດາ ແກ້ວມະນີ ແກ້ວຕາແມວ ແກ້ວຜລຶກ ຜ້າ ດ້າຍຫລືຝ້າຍ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ໃຫ້. . . ຄອງ ຄື ຖວາຍ

ຄຳວ່າ ຖ້າກິກຊຸນັ້ນ. . . ໃນທີ່ທີ່ເຂົາຕຽມຈີວອນໄວ້ ໄດ້ແກ່ ກິກຊຸຮູບທີ່ເຂົາທັງສອງກະກຽມຊັພຍ໌ເປັນຄ່າຈີວອນໄວ້ຖວາຍໂດຍສະເພາະ

ຄຳວ່າ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຄື ທາຍົກທັງສອງບໍ່ໄດ້ກ່າວໄວ້ກ່ອນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈີວອນຊນິດໃດ ພວກເຮົາຈະຊື້ຈີວອນຊນິດໃດຖວາຍທ່ານ"

ຄຳວ່າ ເຂົ້າໄປ ຄື ໄປເຖິງເຮືອນແລ້ວເຂົ້າໄປຫາທີ່ໃດທີ່ນຶ່ງ

ຄຳວ່າ ກຳຫນົດຊນິດຈີວອນ ຄື ກຳຫນົດວ່າ ຂໍໃຫ້ເປັນຜ້າຍາວ ກວ້າງ ເນື້ອແໜ້ນ ຫລືເນື້ອລະອຽດ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ເຊັ່ນນັ້ນເຊັ່ນນີ້ ຄື ຍາວຫລືກວ້າງ ເນື້ອແໜ້ນຫລືເນື້ອລະອຽດ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ຈົ່ງໃຫ້ຄອງ ຄື ຈົ່ງຖວາຍ

ຄຳວ່າ ທ່ານທັງສອງຈງຮອມກັນ ຄື ຄົນ ໔ ຄົນຮ່ວມກັນ

ຄຳວ່າ ເພາະຕ້ອງການຈີວອນດີ ຄື ຕ້ອງການຜ້າເນື້ອດີ ຫລືຜ້າຣາຄາແພງ ເຂົາຊື້ຈີວອນຜືນຍາວ ກວ້າງ ເນື້ອແໜ້ນຫລືເນື້ອລະອຽດຕາມຄຳພິກສຸນັ້ນ ຕ້ອງອາບັຕິທຸກກະຜເພາະພຍາຍາມ ຈີວອນເປັນ ນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄຕະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸພຶງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນພຶງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງ ຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຜູ້ຂ້າເຂົ້າ ໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ ສົງຂ໌" ຄັນສລະແລ້ວພຶງສະແດງອາບັຕິ

ພິກສຸຜູ້ສລາດສາມາດພຶງຮັບອາບັຕິ ພຶງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານ ຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍພຶງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄຕະ

ພິກສຸຮູບນັ້ນພຶງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນ ນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວພຶງສະແດງອາບັຕິ

ພິກສຸຜູ້ສລາດສາມາດພຶງຮັບອາບັຕິ ພຶງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານ ທັງຫລາຍພ້ອມກັນແລ້ວກໍພຶງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນພຶງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວ

ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣະນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກໍາຫນົດຂນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຊຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໖໕] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຊຸສໍາຄັນວ່າບໍ່ແມ່ນຍາຕ ເຂົາບໍ່ໄດ້ປວາຣະນາໄວ້ກ່ອນ ເຂົ້າໄປຫາພວກຄຣືຫັສຖ໌ແລ້ວກໍາຫນົດຂນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຊຸບໍ່ແນ່ໃຈ ເຂົາບໍ່ໄດ້ປວາຣະນາໄວ້ກ່ອນ ເຂົ້າໄປຫາພວກຄຣືຫັສຖ໌ແລ້ວກໍາຫນົດຂນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຊຸສໍາຄັນວ່າເປັນຍາຕ ເຂົາບໍ່ໄດ້ປວາຣະນາໄວ້ກ່ອນ ເຂົ້າໄປຫາພວກຄຣືຫັສຖ໌ແລ້ວກໍາຫນົດຂນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຍ

ຄຣືຫັສຖ໌ທີ່ເປັນຍາຕ ກິກຊຸສໍາຄັນວ່າບໍ່ແມ່ນຍາຕ ເຂົ້າໄປກໍາຫນົດຂນິດຈີວອນ ຕ້ອງອາບັຕິທຸກກຍ

ຄຣືຫັສຖ໌ທີ່ເປັນຍາຕ ກິກຊຸບໍ່ແນ່ໃຈ ເຂົ້າໄປກໍາຫນົດຂນິດຈີວອນ ຕ້ອງອາບັຕິທຸກກຍ

ຄຣືຫັສຖ໌ທີ່ເປັນຍາຕ ກິກຊຸສໍາຄັນວ່າເປັນຍາຕ ເຂົ້າໄປກໍາຫນົດຂນິດຈີວອນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໑. ຈີຣວັຄ ໘. ທຸຕິຍອຸປັກຂຍສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ກິກຊຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໖໖] ໑. ກິກຊຸຂໍຈາກຄຣືຫັສຖ໌ທີ່ເປັນຍາຕ

໒. ກິກຊຸຂໍຈາກຄຣືຫັສຖ໌ທີ່ປວາຣະນາ

໓. ກິກຊຸຂໍເພື່ອກິກຊຸຮູບອື່ນ

໔. ກິກຊຸຊື້ມາດ້ວຍຊັພຍ໌ຂອງຕົນ

໕. ກິກຊຸຜູ້ເມື່ອພວກຄຣືຫັສຖ໌ຕ້ອງການຊື້ຈີວອນຣາຄາແພງ ຕົນເອງກັບໃຫ້ຊື້ຈີວອນຣາຄາຖືກ

ຝ. ພິກຂຸວິກົລຈິຕ
ຖ. ພິກຂຸຕົ້ນບັນຍັດ

ທຸຕິຍອຸປັກຂຕສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຕ໌] ໑. ຈີວຣວັຄ ໑໐. ຣາຊສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໑໐. ຣາຊສິກຂາບົທ

ວ່າດ້ວຍຊັພຍ໌ເປັນຄ່າຈີວອນທີ່ພຣະຣາຊາເປັນຕົ້ນໃຫ້ທູຕນຳມາຖວາຍ

ເຣື່ອງພຣະອຸປນັນທສາກຍບຸຕຣ

[໕໓໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຕະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ມຫາອມາຕຍ໌ອຸປັຍກາກຂອງທ່ານພຣະອຸປນັນທສາກຍບຸຕຣສົ່ງ ທູຕໄປຖວາຍຊັພຍ໌ເປັນຄ່າຈີວອນ ແລະສັ່ງວ່າ "ທ່ານຈົ່ງເອົາຊັພຍ໌ ເປັນຄ່າຈີວອນນີ້ຊື້ຈີວອນແລ້ວ ນິມົນຕ໌ພຣະຄຸຕເຈົ້າອຸປນັນທະໃຫ້ຄອງ" ຕໍ່ມາ ທູຕນັ້ນໄດ້ເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣ ເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານວ່າ "ທ່ານຜູ້ຈະເຣີນ ຜູ້ຂ້ານຳຊັພຍ໌ເປັນຄ່າຈີວອນມາເຈາະຈົງ ທ່ານ ນິມົນຕ໌ທ່ານຮັບຊັພຍ໌ເປັນຄ່າຈີວອນເຖີດ ຂນ້ອຍ" ເມື່ອທູຕກ່າວຢ່າງນັ້ນ ທ່ານພຣະອຸປນັນ ທສາກຍບຸຕຣໄດ້ກ່າວວ່າ "ອາຕມາຮັບຊັພຍ໌ເປັນຄ່າຈີວອນບໍ່ໄດ້ ຮັບສະເພາະຈີວອນທີ່ສົມຄວຣຕາມ ກາລ" ເມື່ອທ່ານກ່າວຢ່າງນັ້ນ ທູຕຖາມວ່າ "ມີໃຜຜູ້ເປັນໄວຍາວັຈກອນຂອງທ່ານແດ່" ຂຕະນັ້ນ ອຸ ບາສົກ ຄົນນຶ່ງມີທຸຣະໄປທີ່ວັດ ທ່ານພຣະອຸປນັນທສາກຍບຸຕຣຈຶ່ງກ່າວກັບທູຕວ່າ "ອຸບາສົກນີ້ເປັນ ໄວຍາວັຈກອນຂອງພິກຂຸທັງຫລາຍ" ທູຕນັ້ນຈຶ່ງຕົກລົງ ກັບອຸບາສົກແລ້ວເຂົ້າໄປຫາທ່ານພຣະ ອຸປນັນທສາກຍບຸຕຣເຖິງທີ່ຢູ່ ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າຕົກລົງ ກັບອຸບາສົກທີ່ທ່ານແນະນຳວ່າ ເປັນໄວຍາວັຈກອນແລ້ວ ທ່ານຈົ່ງໄປຫາໃນເວລາອັນສົມຄວຣ ເຂົາຈັກນິມົນຕ໌ທ່ານໃຫ້ຄອງຈີ ວອນ" ຕໍ່ມາ ມຫາອມາຕຍ໌ສົ່ງທູຕໃຫ້ໄປຫາທ່ານພຣະອຸປນັນທສາກຍບຸຕຣໃຫ້ຂາບຮຽນວ່າ "ຂໍໃຫ້ ພຣະ ຄຸຕເຈົ້າຈົ່ງໃຊ້ສອຍຈີວອນເຖີດ ຜູ້ຂ້າຕ້ອງການຈະໃຫ້ພຣະຄຸຕເຈົ້າໃຊ້ຈີວອນນັ້ນ" ທ່ານພຣະ ອຸປນັນທສາກຍບຸຕຣບໍ່ກ່າວຫຍັງກັບອຸບາສົກນັ້ນ ແມ່ນຄັ້ງທີ ໒ ມຫາອມາຕຍ໌ກໍສົ່ງທູຕໃຫ້ໄປຫາ

ທ່ານພຣະອຸປນັນທສາກຍບຸຕຣ ໃຫ້ຂາບຮຽນວ່າ "ຂໍໃຫ້ພຣະຄຸຕເຈົ້າຈົ່ງໃຊ້ສອຍຈີວອນເຖີດ ຜູ້ຂ້າຕ້ອງ ການຈະໃຫ້ພຣະຄຸຕເຈົ້າໃຊ້ຈີວອນນັ້ນ"

ແມ່ນຄັ້ງທີ ໔ ທ່ານພຣະອຸປນັນທສາກຍບຸຕຣກໍຍັງບໍ່ກ່າວຫຍັງກັບອຸບາສິກນັ້ນ

ແມ່ນຄັ້ງທີ ໕ ມຫາອມາຕຍ໌ກໍສົ່ງທູຕໄປຫາທ່ານພຣະອຸປນັນທສາກຍບຸຕຣ ໃຫ້ຂາບຮຽນວ່າ "ຂໍໃຫ້ພຣະຄຸຕເຈົ້າຈົ່ງໃຊ້ສອຍຈີວອນເຖີດ ຜູ້ຂ້າຕ້ອງການຈະໃຫ້ພຣະຄຸຕເຈົ້າໃຊ້ສອຍຈີວອນນັ້ນ"

ສມັຍນັ້ນເປັນຄາວປະຊຸມຂອງຊາວນິຄົມ ກໍຊາວນິຄົມໄດ້ຕັ້ງກຕິກາໄວ້ວ່າ ຜູ້ມາປະຊຸມລ່າຊ້າຕ້ອງຖືກປັບ ໕໐ ກຫາປຕະ ຕໍ່ມາ ທ່ານພຣະອຸປນັນທສາກຍບຸຕຣໄປຫາອຸບາສິກເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວວ່າ "ອາຕມາຕ້ອງການຈີວອນ" ອຸບາສິກກ່າວວ່າ "ໂປຣດຖ້າຈັກມື້ນຶ່ງເຖີດ ຂນ້ອຍ ມື້ນີ້ເປັນຄາວປະຊຸມຂອງຊາວນິຄົມ ແລະຊາວນິຄົມໄດ້ຕັ້ງກຕິກາວ່າ ຜູ້ມາປະຊຸມລ່າຊ້າຕ້ອງຖືກປັບ ໕໐ ກຫາປຕະ" ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ "ຈົ່ງຖວາຍຈີວອນອາຕມາມື້ນີ້ແຫລະ" ແລ້ວຍຶດຊາຍພກໄວ້ ອຸບາສິກຖືກທ່ານພຣະອຸປນັນທສາກຍບຸຕຣລົ້ນໄລຂໍ່ຢູ່ ຈຶ່ງໄດ້ຊື້ຈີວອນຖວາຍທ່ານພຣະອຸປນັນທສາກຍບຸຕຣແລ້ວໄປປະຊຸມລ່າຊ້າ ຊາວບ້ານຖາມວ່າ "ເຫຕຸໃດທ່ານມາລ່າຊ້າ ທ່ານຕ້ອງເສັຽຄ່າປັບ ໕໐ ກຫາປຕະ"

ເທື່ອນັ້ນ ອຸບາສິກຈຶ່ງເລົ່າເຣື້ອງນັ້ນໃຫ້ຊາວບ້ານເຫລົ່ານັ້ນຊາບ ພວກຊາວບ້ານພາກັນຕໍາໜິ ປະນາມ ໂພນທະນາວ່າ "ພຣະສມຕະເຊື້ອສາຍສາກຍບຸຕຣເຫລົ່ານີ້ມັກມາກ ບໍ່ສັນໂດຎ ຍາກທີ່ໃຜໆຈະໃຫ້ຄວາມຊ່ວຍເຫລືອສມຕະເຫລົ່ານັ້ນໄດ້ ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣ ເມື່ອອຸບາ ສິກກ່າວວ່າ 'ໂປຣດຖ້າຈັກມື້ນຶ່ງເຖີດ ຂນ້ອຍ' ກໍບໍ່ຍອມຖ້າ" ກິກຂຸທັງຫລາຍໄດ້ຍິນພວກຊາວບ້ານຕໍາໜິ ປະນາມ ໂພນທະນາ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານອຸປນັນທສາກຍບຸຕຣຜູ້ຊຶ່ງອຸບາສິກຂໍຮ້ອງຢູ່ວ່າ 'ທ່ານຜູ້ຈະເຣີນ ໂປຣດຖ້າຈັກມື້ນຶ່ງ' ກໍບໍ່ຍອມຖ້າ" ຄັນກິກຂຸເຫລົ່ານັ້ນຕໍາໜິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຌ໌] ໑. ຈີວອັຄ ໑໐. ຣາຊສິກຂາບົທ ພຣະບັນຍັດ

ຊົງປະຊຸມສົງຌ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຌ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ອຸບາສິກກ່າວກັບທ່ານວ່າ 'ໂປຣດຖ້າຈັກມື້ນຶ່ງ

ເຖີດຂນ້ອຍ' ທ່ານກໍບໍ່ຍອມຖ້າ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຜູ້ຊື່ງອຸບາສົກກ່າວວ່າ 'ທ່ານຜູ້ຈະເຣີນ ທ່ານຈົ່ງຖ້າຈັກມື້ນຶ່ງເຖີດ ຂນ້ອຍ' ກໍບໍ່ຍອມຖ້າລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[៥៧៣] ກໍ ພຣະຣາຊາ ຣາຊອມາຕຍ໌ ພຣາມຫ໌ຫລືຄຫບໍດີຜູ້ໃດຜູ້ນຶ່ງສົ່ງທູຕມາຖວາຍຊັພຍ໌ເປັນຄ່າຈີວອນເຈາະຈົງກິກຂຸພ້ອມກັບສັ່ງວ່າ "ທ່ານຈົ່ງເອົາຊັພຍ໌ເປັນຄ່າຈີວອນນີ້ຊື້ຈີວອນ ແລ້ວນິມົນຕ໌ກິກຂຸຊື່ນີ້ໃຫ້ຄອງຈີວອນ" ຖ້າທູຕນັ້ນເຂົ້າໄປຫາກິກຂຸນັ້ນກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້ານຳຊັພຍ໌ເປັນຄ່າຈີວອນນີ້ມາເຈາະຈົງພຣະຄຸຕເຈົ້າ ພຣະຄຸຕເຈົ້າຈົ່ງຮັບຊັພຍ໌ເປັນຄ່າຈີວອນເຖີດ" ກິກຂຸນັ້ນເພິງກ່າວກັບທູຕນັ້ນຢ່າງນີ້ວ່າ "ພວກອາຕມາຮັບຊັພຍ໌ເປັນຄ່າຈີວອນບໍ່ໄດ້ ຮັບສະເພາະຈີວອນທີ່ສົມຄວຣຕາມກາລ" ຖ້າທູຕນັ້ນເພິງກ່າວກັບກິກຂຸນັ້ນຢ່າງນີ້ວ່າ "ກໍມີໃຜຜູ້ເປັນໄວຍາວັຈກອນຂອງທ່ານແດ່ໄຫມ" ກິກຂຸຜູ້ຕ້ອງການຈີວອນເພິງສະແດງຄົນວັດຫລືອຸບາສົກໃຫ້ເປັນໄວຍາວັຈກອນວ່າ "ຜູ້ນີ້ເປັນໄວຍາວັຈກອນຂອງກິກຂຸທັງຫລາຍ" ຖ້າທູຕຕົກລົງ ກັບໄວຍາວັຈກອນແລ້ວເຂົ້າໄປຫາກິກຂຸນັ້ນ ກ່າວຢ່າງນີ້ວ່າ "ຂ້າພະເຈົ້າຕົກລົງ ກັບຄົນທີ່ທ່ານແນະນຳວ່າເປັນໄວຍາວັຈກອນແລ້ວ ທ່ານຈົ່ງໄປຫາໃນເວລາອັນສົມຄວຣ ເຂົາຈະນິມົນຕ໌ທ່ານໃຫ້ຄອງຈີວອນ" ກິກຂຸທັງຫລາຍ ກິກຂຸຕ້ອງການຈີວອນເພິງເຂົ້າໄປຫາໄວຍາວັຈກອນແລ້ວທວງຫລືເຕືອນ ໒-៣ ຄັ້ງວ່າ "ອາຕມາຕ້ອງການຈີວອນ" ເມື່ອທວງຫລືເຕືອນ ໒-៣ ຄັ້ງ ໃຫ້ເຂົາຈັດຈີວອນສຳເຣັຈໄດ້ ນັ້ນເປັນການດີ ຖ້າບໍ່ສຳເຣັຈ ເພິງໄປ ຢືນສະແດງຕົນຢູ່ຊື່ໆເຖິງ ៤ ຄັ້ງ ៥ ຄັ້ງ ຫລື ៦ ຄັ້ງ ເປັນຢ່າງຫລາຍ ເມື່ອຢືນສະແດງຕົນຢູ່ຊື່ໆເຖິງ ៤ ຄັ້ງ ៥ ຄັ້ງ ຫລື ៦ ຄັ້ງເປັນຢ່າງຫລາຍແລ້ວໃຫ້ເຂົາຈັດຈີວອນສຳເຣັຈໄດ້ ນັ້ນເປັນການດີ ຖ້າພຍາຍາມເກີນກວ່ານັ້ນ ໃຫ້ເຂົາຈັດຈີວອນສຳເຣັຈໄດ້ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ຖ້າບໍ່ສຳເຣັຈ ເພິງໄປເອງຫລືສົ່ງທູຕໄປໃນສຳນັກທີ່ເຂົາສົ່ງຊັພຍ໌ເປັນຄ່າຈີວອນມາ ກ່າວວ່າ "ຊັພຍ໌ເປັນຄ່າຈີວອນທີ່ທ່ານສົ່ງໄປ ເຈາະຈົງກິກຂຸຮູບໃດບໍ່ໄດ້ອຳນວຍປໂຍດຫຍັງແກ່ກິກຂຸຮູບນັ້ນເລີຍ ທ່ານຈົ່ງທວງຊັພຍ໌ຂອງທ່ານຄືນມາ ຊັພຍ໌ຂອງທ່ານຢ່າເສັຽຫາຍເລີຍ" ນີ້ເປັນການທຳທີ່ສົມຄວຣໃນເຣື່ອງນັ້ນ

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໕໓໙] ຄຳວ່າ ກໍ. . . ເຈາະຈົງກິກສຸ ໄດ້ແກ່ ເພື່ອປໂຍດຂອງກິກສຸ ຄື ມຸ່ງສະເພາະກິກສຸ ປຣາຖນາຈະໃຫ້ກິກສຸຄອງຈີວອນ

ທີ່ຊື່ວ່າ ພຣະຣາຊາ ໄດ້ແກ່ ຜູ້ຄອງຣາຊສົມບັຕ

ທີ່ຊື່ວ່າ ຣາຊອມາຕຍ໌ ໄດ້ແກ່ ຂ້າຣາຊການທີ່ພຣະຣາຊາຊົງຊຸບລ້ຽງ

ທີ່ຊື່ວ່າ ພຣາມຕ໌ ໄດ້ແກ່ ພຣາມຕ໌ໂດຍກຳເນີດ

ທີ່ຊື່ວ່າ ຄຫບໍດີ ໄດ້ແກ່ ຄົນທີ່ເຫລືອ ຍົກເວັ້ນພຣະຣາຊາ ຣາຊອມາຕຍ໌ ພຣາມຕ໌ຊື່ວ່າຄຫບໍດີ

ທີ່ຊື່ວ່າ ຊັພຍ໌ເປັນຄ່າຈີວອນ ໄດ້ແກ່ ເງິນ ທອງ ແກ້ວມຕີ ແກ້ວມຸກດາ (ແກ້ວຕາແມວ ຫລືແກ້ວຜລຶກ)

ຄຳວ່າ ຊັພຍ໌ເປັນຄ່າຈີວອນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ຊື້ ຄື ແລກປ່ຽນ

ຄຳວ່າ ນິມົນຕ໌ໃຫ້ຄອງ ຄື ຈົ່ງຖວາຍ

ຖ້າທູຕນັ້ນເຂົ້າໄປຫາກິກສຸຮູບນັ້ນເພິງກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້ານຳຊັພຍ໌ເປັນຄ່າຈີວອນນີ້ມາເຈາະຈົງທ່ານ ທ່ານຈົ່ງຮັບຊັພຍ໌ເປັນຄ່າຈີວອນນີ້ເຖີດ" ກິກສຸນັ້ນເພິງກ່າວກັບທູຕນັ້ນຢ່າງນີ້ວ່າ "ພວກອາຕມາຮັບຊັພຍ໌ເປັນຄ່າຈີວອນບໍ່ໄດ້ ຮັບສະເພາະຈີວອນທີ່ສົມຄວຣຕາມກາລ" ຖ້າທູຕກ່າວກັບກິກສຸນັ້ນຢ່າງນີ້ວ່າ "ມີໃຜຜູ້ເປັນໄວຍາວັຈກອນຂອງທ່ານແດ່ບໍ" ກິກສຸຜູ້ຕ້ອງການຈີວອນເພິງສະແດງຄົນວັດຫລືອຸບາສົກໃຫ້ເປັນໄວຍາວັຈກອນວ່າ "ຜູ້ນັ້ນເປັນໄວຍາວັຈກອນຂອງກິກສຸທັງຫລາຍ" ບໍ່ເພິງກ່າວວ່າ "ຈົ່ງໃຫ້ແກ່ຜູ້ນັ້ນ" ຫລືວ່າ "ຜູ້ນັ້ນຈະເກັບໄວ້" ຫລື "ຜູ້ນັ້ນຈະແລກ" ຫລື "ຜູ້ນັ້ນຈັກຊື້" ຖ້າທູຕຕົກລົງ ກັບໄວຍາວັຈກອນແລ້ວເພິງເຂົ້າໄປຫາກິກສຸກ່າວຢ່າງນີ້ວ່າ "ຜູ້ຂ້າຕົກລົງ ກັບຄົນທີ່ທ່ານແນະວ່າເປັນໄວຍາວັຈກອນແລ້ວ ທ່ານຈົ່ງໄປຫາໃນເວລາອັນສົມຄວຣ ເຂົາຈະນິມົນຕ໌ ທ່ານໃຫ້ຄອງຈີວອນ" ກິກສຸທັງຫລາຍ ກິກສຸຕ້ອງການຈີວອນເພິງເຂົ້າໄປຫາໄວຍາວັຈກອນແລ້ວທວງຫລືເຕືອນ ໒-໓ ຄັ້ງວ່າ "ອາຕມາຕ້ອງການຈີວອນ" ບໍ່ເພິງກ່າວກັບເຂົາວ່າ "ທ່ານຈົ່ງໃຫ້ຈີວອນແກ່ອາຕມາ ນຳຈີວອນມາໃຫ້ອາຕມາ ແລກຈີວອນໃຫ້ອາຕມາ ຫລືຈງຊື້ຈີວອນໃຫ້ອາຕມາ"

ແມ່ນຄັ້ງທີ ໒ ກໍເພິງກ່າວກັບເຂົາ ແມ່ນຄັ້ງທີ ໓ ກໍເພິງກ່າວກັບເຂົາ ຖ້າໃຫ້ເຂົາຈັດການສຳເຣັຈ

ໄດ້ ນັ້ນເປັນການດີ ຖ້າບໍ່ສຳເຣັຈ ເພິງໄປຢືນສະແດງຕົນຢູ່ຊື່ໆໃນທີ່ນັ້ນ ບໍ່ເພິງນັ່ງເທິງອາສນະ ບໍ່ເພິງຮັບອາມິສ ບໍ່ເພິງກ່າວລັມ ເມື່ອເຂົາຖາມວ່າ "ມາສຸຣະຫຍັງ" ເພິງກ່າວກັບເຂົາວ່າ "ທ່ານຈົ່ງຮູ້ເອງເຖີດ" ຖ້ານັ່ງເທິງອາສນະ ຫລືຮັບອາມິສ ຫລືກ່າວລັມ ຊື່ວ່າຕັດໂອກາສ໑ ແມ່ນຄັ້ງທີ ໔ ກໍເພິງຢືນ ແມ່ນຄັ້ງທີ ໕ ກໍເພິງຢືນ ທວງ ໔ ຄັ້ງເພິງຢືນໄດ້ ໔ ຄັ້ງ ທວງ ໕ ຄັ້ງເພິງຢືນໄດ້ ໔ ຄັ້ງ ທວງ ໖ ຄັ້ງແລ້ວບໍ່ເພິງໄປຢືນ໔ ຖ້າທ່ານພຍາຍາມຍິ່ງກວ່ານັ້ນ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິທຸກກຜເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງฆ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກຍຸທັງຫລາຍ ກິກຍຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງฆ໌

ກິກຍຸຮູບນັ້ນເພິງເຂົ້າໄປຫາສົງฆ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຍຸຜູ້ແກ່ພັນษາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ເຂົາຈັດສຳເຣັຈດ້ວຍອາກາຣທວງເກີນ ໕ ຄັ້ງ ຢືນເກີນ ໖ ຄັ້ງ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງฆ໌" ຄັນສລະແລ້ວເພິງສະແດງອາບັຕິ ກິກຍຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງฆ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຍຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງฆ໌ ຖ້າສົງฆ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກຍຸຊື່ນີ້"

ສລະແກ່ຄຕະ

ກິກຍຸຮູບນັ້ນເພິງເຂົ້າໄປຫາກິກຍຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຍຸຜູ້ແກ່ພັນษາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ເຂົາຈັດສຳເຣັຈດ້ວຍອາກາຣທວງເກີນ ໕ ຄັ້ງ ຢືນເກີນ ໖ ຄັ້ງ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກຍຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຍຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກຍຸຊື່ນີ້"

ສລະແກ່ບຸຄຄົລ
ກິກສຸຮູບນັ້ນເພິງເຂົ້າໄປຫາກິກສຸຮູບນິ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນິ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າໃຫ້ເຂົາຈັດສຳເຣັຈດ້ອຍອາກາຣທອງເກີນ ໑ ຄັ້ງ ຢືນເກີນ ໒ ຄັ້ງ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ອຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ" ຖ້າທຳບໍ່ສຳເຣັຈ ເພິງໄປເອງຫລືສົ່ງທູຕໄປໃນສຳນັກທີ່ເຂົາສົ່ງຊັພຍ໌ເປັນຄ່າຈີວອນມາ ກ່າວວ່າ "ຊັພຍ໌ທີ່ທ່ານສົ່ງໄປເຈາະຈົງກິກສຸຮູບໃດ ບໍ່ໄດ້ອຳນວຍປໂຍດຫຍັງແກ່ກິກສຸຮູບນັ້ນເລີຍ ທ່ານຈົ່ງທວງຊັພຍ໌ຂອງທ່ານຄືນມາ ຊັພຍ໌ຂອງທ່ານຢ່າຈິບຫາຍເລີຍ" ຄຳວ່າ ນີ້ເປັນກາຣທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໑. ຈີຣວັຄ ໑໐. ຣາຊສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌
ຕິກນິສສັຄຄີຍປາຈິຕຕີຍ໌
[໕໔໐] ທວງເກີນ ໓ ຄັ້ງ ຢືນເກີນ ໒ ຄັ້ງ ກິກສຸສຳຄັນວ່າເກີນ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ທວງເກີນ ໓ ຄັ້ງ ຢືນເກີນ ໒ ຄັ້ງ ກິກສຸບໍ່ແນ່ໃຈ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ທວງເກີນ ໓ ຄັ້ງ ຢືນເກີນ ໒ ຄັ້ງ ກິກສຸສຳຄັນວ່າຫນ້ອຍກວ່າ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຸດ
ທວງຫນ້ອຍກວ່າ ໓ ຄັ້ງ ຢືນຫນ້ອຍກວ່າ ໒ ຄັ້ງ ກິກສຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຸດ
ທວງຫນ້ອຍກວ່າ ໓ ຄັ້ງ ຢືນຫນ້ອຍກວ່າ ໒ ຄັ້ງ ກິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸດ
ທວງຫນ້ອຍກວ່າ ໓ ຄັ້ງ ຢືນຫນ້ອຍກວ່າ ໒ ຄັ້ງ ກິກສຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ກິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໔໑] ໑. ກິກຂຸທອງ ໓ ຄັ້ງ ຢືນ ໖ ຄັ້ງ
໒. ກິກຂຸທອງຫນ້ອຍກວ່າ ໓ ຄັ້ງ ຢືນຫນ້ອຍກວ່າ ໖ ຄັ້ງ
໓. ກິກຂຸບໍ່ໄດ້ທອງ ໄອຍາວັຈກອນຈັດຖວາຍເອງ
໔. ກິກຂຸຮັບຈີວອນທີ່ເຈົ້າຂອງທອງມາຖວາຍ
໕. ກິກຂຸວິກົລຈິຕ
໖. ກິກຂຸຕົ້ນບັນຍັດ

ຣາຊສິກຂາບົທທີ ໑໐ ຈົບ
ຈີວອນວັຄທີ ໑ ຈົບ

ຣວມສິກຂາບົທທີ່ມີໃນຈີວອນວັຄ

ຈີວອນວັຄມີ ໑໐ ສິກຂາບົທ ຄື
໑. ປຖມກຖິນສິກຂາບົທ ວ່າດ້ວຍກຖິນເດາະຂໍ້ທີ ໑
໒. ອຸທໂທສິຕສິກຂາບົທ ວ່າດ້ວຍກິກຂຸເກັບຈີວອນໄວ້ໃນໂຮງເກັບຂອງ (ວ່າດ້ວຍກຖິນເດາະຂໍ້ທີ ໒)
໓. ຕຕິຍກຖິນສິກຂາບົທ ວ່າດ້ວຍກຖິນເດາະຂໍ້ທີ ໓
໔. ປຸຣາຕຈີວອນສິກຂາບົທ ວ່າດ້ວຍກາຣໃຫ້ຊັກຈີວອນເກົ່າ
໕. ຈີວອນປຜິຄຄຫຕສິກຂາບົທ ວ່າດ້ວຍກາຣຮັບຈີວອນ
໖. ອັຍຢາຕກວິຍັຕຕິສິກຂາບົທ ວ່າດ້ວຍກາຣອອກປາກຂໍຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ
໗. ຕຕຸຕຕຣິສິກຂາບົທ ວ່າດ້ວຍກາຣອອກປາກຂໍຈີວອນເກີນ
໘. ອຸປັກຂຜສິກຂາບົທ ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນ
໙. ທຸຕິຍອຸປັກຂຜສິກຂາບົທ ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນຂໍ້ທີ ໒
໑໐. ຣາຊສິກຂາບົທ ວ່າດ້ວຍຊັພຍ໌ເປັນຄ່າຈີວອນທີ່ພຣະຣາຊາເປັນຕົ້ນ ໃຫ້ທູຕນຳມາຖວາຍ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໒. ໂກສິຍວັຄ ໑. ໂກສິຍສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

ໝວດວ່າດ້ວຍສັນຖັດໃຍໄໝ

໑. ໂກສິຍສິກຂາບົທ

ວ່າດ້ວຍການທຳສັນຖັດໃຍໄໝ

ເຣື້ອງພຣະຈັພພັຄຄີຍ໌

[໕໔໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໓ະ ອັຄຄາຣວເຈດີຍ໌ ເຂດເມືອງອາຣວີ ຄັ້ງນັ້ນ ພວກກິກສຸຈັພພັຄຄີຍ໌ເຂົ້າໄປຫາພວກຊ່າງຕ່ຳຜ້າໄໝແລ້ວກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄໝຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດຜສົມໃຍໄໝ" ພວກຊ່າງຕ່ຳຜ້າໄໝຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣເຂົ້າມາຫາພວກເຮົາແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄໝຈຳນວນຫລາຍໃຫ້ແກ່ອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດຜສົມໃຍໄໝ' ດັ່ງນີ້ລະ ອີກຢ່າງນຶ່ງ ບໍ່ແມ່ນລາກຂອງພວກເຮົາ ພວກເຮົາໄດ້ບໍ່ດີທີ່ຕ້ອງຂ້າສັຕວ໌ເລັກສັຕວ໌ນ້ອຍເປັນຈຳນວນຫລາຍ ເພາະການຄອງຊີພ ເພາະຕ້ອງລ້ຽງດູບຸຕຣກັຣຍາ" ກິກສຸໄດ້ຍິນພວກຊ່າງຕ່ຳຜ້າໄໝຕຳໜິ ປະນາມ ໂພນທະນາ ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກສຸຈັພພັຄຄີຍ໌ຈຶ່ງເຂົ້າໄປຫາຊ່າງຕ່ຳຜ້າໄໝແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄໝຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດຜສົມໃຍໄໝ' ດັ່ງນີ້ລະ" ຄັນກິກສຸເຫລົ່ານັ້ນຕຳໜິພວກກິກສຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປຣະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກສຸຈັພພັຄຄີຍ໌ວ່າ "ກິກສຸທັງຫລາຍ ຊາບວ່າພວກທ່ານເຂົ້າໄປຫາຊ່າງຕ່ຳຜ້າໄໝແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄໝຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາ ຕ້ອງການຈະທຳສັນຖັດຜສົມໃຍໄໝ' ດັ່ງນີ້ ແມ່ນແທ້ບໍ" ພວກກິກສຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໄປຫາຊ່າງຕ່ຳຜ້າໄໝແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກ

ທ່ານຈຶ່ງຕັ້ງຕົວໄໝຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດ ຜສົມໃຍໄໝ' ດັ່ງນີ້ ໂມຄບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໓] ກໍ ກິກຂຸໃດໃຊ້ໃຫ້ທຳສັນຖັດຜສົມໃຍໄໝ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໕໔໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ສັນຖັດ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕ່ຳໍ

ຄຳວ່າ ໃຊ້ໃຫ້ທຳ ຄວາມວ່າ ກິກຂຸທຳເອງຫລືໃຊ້ໃຫ້ທຳ ແຊມດ້ວຍເສັ້ນໄໝແມ່ນເສັ້ນດຽວ ຕ້ອງອາບັຕິທຸກກຸດເພາະພຍາຍາມ ສັນຖັດເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກຂຸທັງຫລາຍ ກິກຂຸເພິ່ງສລະສັນຖັດທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ວິທີຫລໍ່ສັນຖັດ ໃຊ້ຢາງຫນຽວເຊັ່ນນ້ຳເຂົ້າເຫລົງເທິງພື້ນທີ່ຮາບແລ້ວເອົາຂົນໂປຍລາດລົງເທິງຢາງຫນຽວ (ວິ. ອ. ໒/໕໔໔/໑໙໔)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຕ໌] ໔. ໂກສິຍວັຄ ໑. ໂກສິຍສິກຂາບົທ ສິກຂາບົທວິກັງຄ໌

ວິທີສລະສັນຖັດທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຣູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜສົມໃຍໄໝຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັດ
ພິກຂຸຜູ້ສລາດສາມາດເພິງຮັບອາບັດ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍຢັດຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ສັນຖັດຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຄະ

ພິກຂຸຣູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜສົມໃຍໄໝຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັດ
ພິກຂຸຜູ້ສລາດສາມາດເພິງຮັບອາບັດ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັດຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ບຸຄຄົລ

ພິກຂຸຣູບນັ້ນເພິງເຂົ້າໄປຫາພິກຂຸຣູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັດຜືນນີ້ຜູ້ຂ້າໃຊ້ໃຫ້ທຳເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັດ ພິກຂຸຜູ້ຮັບສລະນັ້ນເພິງຮັບອາບັດແລ້ວຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັດຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັຕຫ໌] ໔. ໂກສີຍວັຄ ໑. ໂກສີຍສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໔໕] ພິກຂຸທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ພິກຂຸທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົບສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົບສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຸກກະ
ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກະ
ພິກຂຸໄດ້ສັນຖັດທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກະ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໖] ໑. ພິກຂຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກຫມອນ
໔. ພິກຂຸວິກົລຈິຕ
໕. ພິກຂຸຕົ້ນບັນຍັດ

ໂກສິຍສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໒. ໂກສິຍວັຄ ໒. ສຸທຣກາຣຸກສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໒. ສຸທຣກາຣຸກສິກຂາບົທ
ວ່າດ້ວຍການທຳສັນຖັດໂດຍໃຊ້ຂົນຈຽມດຳລ້ວນ

ເຣື້ອງພຣະຈັພພັຄຄີຍ໌
[໕໔໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ກູຕາຄາຣສາລາ ປ່າມຫາວັນ ເຂດກຸງເວສາລີ ຄັ້ງນັ້ນ ພວກພິກຂຸຈັພພັຄຄີຍ໌ໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນ໑ ພວກຊາວບ້ານທ່ຽວໄປຕາມວິຫາຣເຫັນເຂົ້າຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣ ຈຶ່ງໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນເຫມືອນຄຣືຫັສຖ໌ທີ່ຍັງບໍຣິໂກຄກາມລະ" ພິກຂຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນ

ລະ” ຄັນກິກຂຸເຫລົ່ານັ້ນຕຳຫນິພວກກິກຂຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຂຸສັພພັຄຄີຍ໌ວ່າ “ກິກຂຸທັງຫລາຍ ຊາບວ່າ ພວກທ່ານໃຊ້ໃຫ້ທຳສັນຖັຕຂົນຈຽມດຳລ້ວນ ແມ່ນແທ້ບໍ່” ພວກກິກຂຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ “ຯລຯ ໂມຄບຸຣຸຣທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ໃຫ້ທຳສັນຖັຕຂົນຈຽມດຳລ້ວນລະ ໂມຄບຸຣຸຣທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂື້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ເຊີງອັນຖະ :

໑ ຄຳວ່າ “ຂົນຈຽມ” ໃນທີ່ນີ້ຄືຂົນແພະຫລືຂົນແກະ (ເອຣຸກໂລມ)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຑ໌] ໒. ໂກສິຍວັຄ ໒. ສຸທສກາຣກສິກຂາບົທ
ສິກຂາບົທວິກັງຄ໌

ພຣະບັນຍັດ

[໕໔໗] ກໍ ກິກຂຸໃດໃຊ້ໃຫ້ທຳສັນຖັຕຂົນຈຽມດຳລ້ວນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໕໔໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ສີດຳ ມີ ໒ ຊນິດ ຄື ດຳຕາມລົມຊາຕິ ຫລືດຳເພາະຍ້ອມ

ທີ່ຊື່ວ່າ ສັນຖັດ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕ່ຳ
ຄຳວ່າ ໃຊ້ໃຫ້ທຳ ຄວາມວ່າ ກິກຂຸທຳເອງຫລືໃຊ້ໃຫ້ທຳ ຕ້ອງອາບັຕິທຸກກະຜເພາະພຍາຍາມ
ສັນຖັດເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ
ກິກຂຸທັງຫລາຍ ກິກຂຸເພິງສລະສັນຖັດທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັດທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຂົນຈຽມດຳລ້ວນຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍຍັດຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສັນຖັດຂົນຈຽມດຳລ້ວນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ຄຕະ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຂົນຈຽມດຳລ້ວນຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສັນຖັດຂົນຈຽມດຳລ້ວນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັດຂົນຈຽມດຳລ້ວນຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັດຜືນນີ້ໃຫ້ແກ່ທ່ານ"

ປົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໕໐] ກິກຊຸທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ກິກຊຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ກິກຊຸທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ກິກຊຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໒. ໂກສີຍວັຄ ໔. ສຸທລກາຣກສິກຂາບົທ ອນາປັຕຕິວາຣ

ທຸກກຸກກຜ

ກິກຊຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຜ

ກິກຊຸໄດ້ສັນຖັດທີ່ຜູ້ອື່ນທຳໄວ້ແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກຜ

ອນາປັຕຕິວາຣ

ກິກຊຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໑] ໑. ກິກຊຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກຫມອນ

໒. ກິກຊຸວິກົລຈິຕ

໓. ກິກຊຸຕົ້ນບັນຍັດ

ສຸທລກາຣກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໒. ໂກສີຍວັຄ ໓. ເທວກາຄສິກຂາບົທ ນິທານວັຕຖຸ

໒. ໂກສີຍວັຄ

໓. ເທຸວກາຄສິກຂາບົທ

ວ່າດ້ວຍການທຳສັນຖັດໂດຍໃຊ້ຂົນຈຽມດຳ ໔ ສ່ວນ

ເຣື້ອງພຣະຈັພພັຄຄີຍ໌

[໕໕໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ທີ່ ພຣະເຊຕວັນ ອາຣາມຂອງອນາຖບິດ ທິກເສຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸຈັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະກາຄຊົງຫ້າມການ ທຳສັນຖັດຂົນຈຽມດຳລ້ວນ" ຈຶ່ງໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ຊາຍສັນຖັດ ແລ້ວທຳສັນ ຖັດຂົນຈຽມດຳລ້ວນຢ່າງເດີມນັ້ນແຫລະ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ຊາຍສັນຖັດ ແລ້ວທຳສັນຖັດຂົນຈຽມດຳລ້ວນຢ່າງເດີມລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຈັພພັຄຄີຍ໌ໂດຍ ປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ ຊາຍສັນຖັດ ແລ້ວທຳສັນຖັດຂົນຈຽມດຳລ້ວນຢ່າງເດີມ ແມ່ນແທ້ບໍ່" ພວກພິກຂຸຈັພພັຄຄີຍ໌ທູລຮັບ ວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຄທັງ ຫລາຍ ຈັ່ງໃດພວກທ່ານຈຶ່ງໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ຊາຍສັນຖັດ ແລ້ວທຳສັນຖັດ ຂົນຈຽມດຳລ້ວນຢ່າງເດີມລະ ໂມຄບຸຣຸຄທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຕ໌] ໒. ໂກສິຍວັຄ ໓. ເທົວກາຄສິກຂາບົທ
ສິກຂາບົທວິກັງຄ໌

ພຣະບັນຍັດ

[໕໕໓] ກໍ ພິກຂຸຜູ້ໃຊ້ໃຫ້ທຳສັນຖັດໃຫມ່ ພຶງເອົາຂົນຈຽມດຳລ້ວນ ໒ ສ່ວນ ຂົນຈຽມຂາວເປັນ ສ່ວນທີ ໓ ຂົນຈຽມແດງເປັນສ່ວນທີ ໔ ຖ້າທ່ານບໍ່ເອົາຂົນຈຽມດຳລ້ວນ ໒ ສ່ວນ ຂົນຈຽມຂາວ

ເປັນສ່ວນທີ ໓ ຂົນຈຽມແດງເປັນສ່ວນທີ ໔ ແລ້ວໃຫ້ທຳສັນຖັດໃໝ່ ຕ້ອງອາບັຕິນິສສັຄຄິຍປາຈິດຕີຍ໌

ເລື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໕໔] ທີ່ຊື່ວ່າ ໃໝ່ ພຣະອົງຄ໌ຕຣັສມຸ່ງເອົາການກະທຳ

ທີ່ຊື່ວ່າ ສັນຖັດ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນທໍ

ຄຳວ່າ ຜູ້ໃຊ້ໃຫ້ທຳ ຄື ຜູ້ທຳເອງຫລືໃຊ້ໃຫ້ທຳ

ຄຳວ່າ ເອົາຂົນຈຽມດຳລ້ວນ ໒ ສ່ວນ ຄວາມວ່າ ຊັ່ງແລ້ວເອົາຂົນຈຽມດຳລ້ວນ ໒ ຊັ່ງ

ຄຳວ່າ ຂົນຈຽມຂາວເປັນສ່ວນທີ ໓ ຄື ຂົນຈຽມຂາວ ໑ ຊັ່ງ

ຄຳວ່າ ຂົນຈຽມແດງເປັນສ່ວນທີ ໔ ຄື ຂົນຈຽມແດງ ໑ ຊັ່ງ

ຄຳວ່າ ຖ້າທ່ານບໍ່ເອົາຂົນຈຽມດຳລ້ວນ ໒ ສ່ວນ ຂົນຈຽມຂາວເປັນສ່ວນທີ ໓ ຂົນຈຽມແດງເປັນສ່ວນທີ ໔ ຄວາມວ່າ ບໍ່ເອົາຂົນຈຽມດຳລ້ວນ ໒ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ທຳເອງຫລືໃຊ້ໃຫ້ທຳສັນຖັດໃໝ່ ຕ້ອງອາບັຕິທຸກກົດເພາະພຍາຍາມ ສັນຖັດເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄະນະຫລືແກ່ບຸຄຄົລ

ພິກຂຸທັງຫລາຍ ພິກຂຸເພິ່ງສລະສັນຖັດທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັດທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜືນນີ້ຜູ້ຂ້າບໍ່ໄດ້ເອົາຂົນຈຽມດຳລ້ວນ ໒ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ສັນຖັດຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄະນະ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ກາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜືນນີ້ຜູ້ຂ້າບໍ່ໄດ້ເອົາຂົນຈຽມດຳລ້ວນ ໔ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັດຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ບຸຄຄົລ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢື້ປະນົມມື ກ່າວວ່າ "ທ່ານຂນ້ອຍ ສັນຖັດຜືນນີ້ຜູ້ຂ້າບໍ່ໄດ້ເອົາຂົນຈຽມດຳລ້ວນ ໔ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ໃຊ້ໃຫ້ທຳເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັດຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໔. ໂກສິຍວັຄ ໓. ເທວກາຄສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໕໕] ພິກຂຸທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຸຍ

ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຸຍ
ພິກຂຸໄດ້ສັນຖັດທີ່ຜູ້ອື່ນທຳໄວ້ ໃຊ້ສອຍ ຕ້ອງອາບັຕິທຸກກຸຍ

ອນາປັຕຕິວາຣ

ກິກບຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໖] ໑. ກິກບຸເອົາຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ປົນແລ້ວທຳ

໒. ກິກບຸເອົາຂົນຈຽມຂາວຫລາຍກວ່າ ຂົນຈຽມແດງຫລາຍກວ່າ ປນແລ້ວທຳ

໓. ກິກບຸເອົາຂົນຈຽມຂາວລ້ວນ ຂົນຈຽມແດງລ້ວນ ປນແລ້ວທຳ

໔. ກິກບຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລື

ປອກຫມອນ

໕. ກິກບຸວິກົລຈິຕ

໖. ກິກບຸຕົ້ນບັນຍັດ

ເທຸວກາຄສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕທ໌] ໒. ໂກສິຍວັຄ ໔. ຉັພພັສສສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໔. ຉັພພັສສສິກຂາບົທ

ວ່າດ້ວຍການເກັບສັນຖັຕໄວ້ ໖ ປີ

ເຣື້ອງກິກບຸຫລາຍຮູບ

[໕໕໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິດ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ກິກບຸທັງຫລາຍໃຊ້ໃຫ້ທຳສັນຖັຕທຸກໆປີ ກິກບຸເຫລົ່ານັ້ນ ເປັນຜູ້ມາກໄປດ້ວຍການຂໍວ່າ “ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ” ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງ ໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍ ກ່າວວ່າ ‘ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ’ ດັ່ງນີ້ລະ ສັນຖັຕຂອງ ພວກເຮົາທີ່ທຳຄັ້ງດຽວ ຖືກເດັກນ້ອຍຖ່າຍອຸຈຈາຣະຣົດແດ່ ປັສສາວະຣົດແດ່ ຫນູກັດເສັງແດ່ ກໍຍັງ ໃຊ້ສອຍໄດ້ເຖິງ ໕ ປີແດ່ ໖ ປີແດ່ ແຕ່ກິກບຸເຫລົ່ານີ້ໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປ

ດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂິນຈຽມ ພວກອາຕມາຕ້ອງການຂິນຈຽມ" ກິກຊຸທັງຫລາຍໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາກິກຊຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດກິກຊຸທັງຫລາຍຈຶ່ງໃຊ້ ໃຫ້ທຳສັນຖັຕຫຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍ ດ້ວຍກ່າວ ວ່າ 'ທ່ານທັງຫລາຍຈົ່ງໃຫ້ຂິນຈຽມ ພວກອາຕມາຕ້ອງການຂິນຈຽມ' ດັ່ງນີ້ລະ" ຄັນກິກຊຸທັງຫລາຍ ຕຳໜິກິກຊຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຊຸເຫລົ່ານັ້ນວ່າ "ກິກຊຸທັງຫລາຍ ຊາບວ່າ ພວກທ່ານໃຊ້ໃຫ້ທຳສັນຖັຕຫຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂິນຈຽມ ພວກອາຕມາຕ້ອງການຂິນຈຽມ' ດັ່ງນີ້ ແມ່ນແທ້ບໍ" ກິກຊຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຣະພຸທສເຈົ້າຊົງຕຳໜິວ່າ "ຯລຯ ກິກຊຸທັງຫລາຍ ຈັ່ງໃດໂມຄບຸຣຸຸສເຫລົ່ານັ້ນຈຶ່ງໃຊ້ໃຫ້ທຳສັນຖັຕຫຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂິນຈຽມ ພວກອາຕມາຕ້ອງການຂິນຈຽມ' ດັ່ງນີ້ລະ ກິກຊຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"

ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໕໕໗] ກໍ ກິກຊຸໃຊ້ໃຫ້ທຳສັນຖັຕໃໝ່ແລ້ວເພິງໃຊ້ສອຍໃຫ້ໄດ້ ໖ ປີ ຖ້າຕ່ຳກວ່າ ໖ ປີ ທ່ານຈະສລະຫລືບໍ່ສລະສັນຖັຕນັ້ນກໍຕາມ ໃຊ້ໃຫ້ທຳສັນຖັຕອື່ນໃໝ່ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຊຸທັງຫລາຍຢ່າງນີ້

ເອື້ອງກິກຊຸຫລາຍຮູບ ຈົບ

ເອື້ອງກິກຊຸເປັນໄຂ້

[໕໕໘] ສມັຍນັ້ນ ກິກຊຸຮູບນຶ່ງເປັນໄຂ້ຢູ່ກຸງໂກສັມພີ ພວກຍາຕສົ່ງທູຕໄປສຳນັກຂອງກິກຊຸນັ້ນ

ໃຫ້ແຈ້ງຂ່າວວ່າ "ນິມົນຕ໌ພຣະຄຸຕທ່ານມາເຖີດ ພວກເຮົາຈັກອຸປັຖາກ" ພິກຂຸທັງຫລາຍກ່າວຢ່າງນີ້ວ່າ "ໄປເຖີດ ທ່ານ ພວກຍາຕຈະອຸປັຖາກທ່ານເອງ" ພິກຂຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ 'ພິກຂຸໃຊ້ໃຫ້ທຳສັນຖັຕໃຫມ່ແລ້ວເພິງໃຊ້ສອຍໃຫ້ໄດ້ ໖ ປີ' ຜູ້ຂ້າກໍເປັນໄຂ້ຢູ່ ບໍ່ສາມາດນຳສັນຖັຕໄປໄດ້ ຖ້າຂາດສັນຖັຕເສັຽແລ້ວຜູ້ຂ້າຈະບໍ່ຜາສຸກ ຜູ້ຂ້າຈະບໍ່ໄປ"

ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສົມມຸດສັນຖັຕ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ສົມມຸດສັນຖັຕເພື່ອພິກຂຸຜູ້ເປັນໄຂ້ ພິກຂຸທັງຫລາຍ ສົງຄ໌ພຶງໃຫ້ສົມມຸດສັນຖັຕຢ່າງນີ້"

ວິທີສົມມຸດສັນຖັຕ

ພິກຂຸຜູ້ເປັນໄຂ້ຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ 'ທ່ານຜູ້ຈະເຣີນ ຜູ້ຂ້າເປັນໄຂ້ບໍ່ສາມາດນຳສັນຖັຕຕິດຕົວໄປໄດ້ ຜູ້ຂ້າຂໍສົມມຸດສັນຖັຕກະສົງຄ໌' ເພິງຂໍສົມມຸດສັນຖັຕແມ່ນຄັ້ງທີ ໒ ເພິງຂໍສົມມຸດສັນຖັຕແມ່ນຄັ້ງທີ ໓ ພິກຂຸຜູ້ສລາດສາມາດເພິງປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໕໖໐] 'ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກຂຸຊື່ນີ້ເປັນໄຂ້ບໍ່ສາມາດນຳສັນຖັຕຕິດຕົວໄປໄດ້ ພິກຂຸນັ້ນຂໍສົມມຸດສັນຖັຕຈາກສົງຄ໌ ຖ້າສົງຄ໌ພ້ອມແລ້ວກໍເພິງໃຫ້ສົມມຸດສັນຖັຕແກ່ພິກຂຸຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກຂຸຊື່ນີ້ເປັນໄຂ້ບໍ່ສາມາດນຳສັນຖັຕຕິດຕົວໄປໄດ້ ພິກຂຸນັ້ນຂໍສົມມຸດສັນຖັຕຈາກສົງຄ໌ ຖ້າສົງຄ໌ພ້ອມແລ້ວກໍເພິງໃຫ້ສົມມຸດສັນຖັຕແກ່ພິກຂຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການໃຫ້ສົມມຸດສັນຖັຕແກ່ພິກຂຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ການສົມມຸດສັນຖັຕສົງຄ໌ໃຫ້ແລ້ວແກ່ພິກຂຸຊື່ນີ້ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຈະຂໍ ຖືຄວາມນິ່ງນັ້ນເປັນມຕິຢ່າງນີ້"

ແລ້ວຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໓໑] ອີກຢ່າງນຶ່ງ ພິກຂຸໃຊ້ໃຫ້ທຳສັນຖັດໃຫມ່ແລ້ວເພິງໃຊ້ສອຍໃຫ້ໄດ້ ໖ ປີ ຖ້າຕ່ຳກວ່າ ໖ ປີ ທ່ານຈະສລະຫລືບໍ່ສລະສັນຖັດນັ້ນກໍຕາມ ໃຊ້ໃຫ້ທຳສັນຖັດອື່ນໃຫມ່ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກຂຸຜູ້ໄດ້ສົມມຸດ

ເຣື້ອງພິກຂຸເປັນໄຂ້ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັຕຫ໌] ໔. ໂກສິຍວັຄ ໔. ຈັພພັສສສິກຂາບົທ
ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໓໔] ທີ່ຊື່ວ່າ ໃຫມ່ ພຣະອົງຄ໌ຕຣັສມຸ່ງເອົາກາຣກະທຳ

ທີ່ຊື່ວ່າ ສັນຖັດ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕ່ຳ

ຄຳວ່າ ໃຊ້ໃຫ້ທຳແລ້ວ ຄື ທຳເອງຫລືໃຊ້ໃຫ້ທຳແລ້ວ

ຄຳວ່າ ເພິງໃຊ້ສອຍໃຫ້ໄດ້ ໖ ປີ ຄື ເພິງໃຊ້ສອຍໃຫ້ໄດ້ ໖ ປີເປັນຢ່າງຫນ້ອຍ

ຄຳວ່າ ຖ້າຕ່ຳກວ່າ ໖ ປີ ຄື ຫນ້ອຍກວ່າ ໖ ປີ

ຄຳວ່າ ສລະສັນຖັດນັ້ນ ຄື ໃຫ້ແກ່ຜູ້ອື່ນ

ຄຳວ່າ ບໍ່ສລະ ຄື ຍັງບໍ່ໃຫ້ແກ່ຜູ້ອື່ນ

ຄຳວ່າ ເວັ້ນໄວ້ແຕ່ພິກຂຸຜູ້ໄດ້ສົມມຸດ ຄື ຍົກເວັ້ນພິກຂຸຜູ້ໄດ້ຮັບສົມມຸດ

ພິກຂຸທຳເອງຫລືໃຊ້ໃຫ້ທຳສັນຖັດໃຫມ່ ຕ້ອງອາບັຕິທຸກກົຏເພາະພຍາຍາມ ສັນຖັດເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຆ໌ ແກ່ຄຓະຫລືແກ່ບຸຄຄົລ

ພິກຂຸທັງຫລາຍ ພິກຂຸເພິງສລະສັນຖັດທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັດທີ່ເປັນນິສສັຄຄີຍ໌

ສລະແກ່ສົງຆ໌

ພິກຂຸຮູບນັ້ນເພິງເຂົ້າໄປຫາສົງຆ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜືນນີ້ຂອງຜູ້ຂ້າໃຊ້ໃຫ້ທຳ ຫນ້ອຍກວ່າ ໖ ປີ ເປັນນິສສັຄຄີຍ໌ ເວັ້ນໄວ້ແຕ່ພິກຂຸໄດ້ສົມມຸດ ຜູ້ຂ້າສລະສັນຖັດຜືນນີ້ແກ່ສົງຆ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍຍັຕຕິກັມ

ອາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງກິກຊຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງ ຖ້າສົງພ້ອມກັນແລ້ວກໍເພິງໃຫ້ສັນຖັດຜືນນີ້ແກ່ກິກຊຸຊື່ນີ້"

ສລະແກ່ຄຄະ

ກິກຊຸຮູບນັ້ນເພິງເຂົ້າໄປຫາກິກຊຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຊຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ຫນ້ອຍກວ່າ ໖ ປີ ເປັນນິສສັຄຄີຍ໌ ເວັ້ນໄວ້ແຕ່ກິກຊຸໄດ້ສົມມຸດ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກຊຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງກິກຊຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັດຜືນນີ້ແກ່ກິກຊຸຊື່ນີ້"

ສລະແກ່ບຸຄຄົລ

ກິກຊຸຮູບນັ້ນເພິງເຂົ້າໄປຫາກິກຊຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັດຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ຫນ້ອຍກວ່າ ໖ ປີ ເປັນນິສສັຄຄີຍ໌ ເວັ້ນໄວ້ແຕ່ກິກຊຸໄດ້ສົມມຸດ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຊຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັດຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໖໑] ກິກຊຸທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຊຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຊຸທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຊຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັດຫ໌] ໒. ໂກສິຍວັຄ ໔. ຈັພພັສສສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໖໔] ໑. ພິກສຸທຳໃຫມ່ ເມື່ອໃຊ້ຄົບ ໖ ປີ

໒. ພິກສຸທຳໃຫມ່ ເມື່ອໃຊ້ເກີນ ໖ ປີ

໓. ພິກສຸທຳເອງຫລືໃຊ້ໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ

໔. ພິກສຸໄດ້ສັນຖັດທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ

໕. ພິກສຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກຫມອນ

໖. ພິກສຸຜູ້ໄດ້ສົມມຸດ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ຈັພພັສສສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຕ໌] ໒. ໂກສິຍວັຄ ໕. ນິສີທນສັນຖຕສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໕. ນິສີທນສັນຖຕສິກຂາບົທ

ວ່າດ້ວຍການທຳສັນຖັດສຳລັບຮອງນັ່ງ

ເຣື້ອງພຣະອຸປເສນວັງຄັນຕບຸຕຣ

[໕໖໕] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາປຣາຖນາ ຈະຫລີກຫລີບຢູ່ຜູ້ດຽວຕລອດໄຕຣມາສ ໃຜໆຢ່າເຂົ້າໄປຫາເຮົາ ຍົກເວັ້ນກິກສຸຜູ້ນຳພັຕຕາຫາຣເຂົ້າ ໄປໃຫ້ຮູບດຽວ" ພິກສຸທັງຫລາຍຮັບສນອງພຣະພຸທສດຳຣັສວ່າ "ໄດ້ ພຣະພຸທສເຈົ້າຂ້າ" ບໍ່ມີໃຜ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄເລີຍ ນອກຈາກກິກສຸຜູ້ນຳພັຕຕາຫາຣເຂົ້າໄປຖວາຍພຽງຮູບດຽວ ສມັຍນັ້ນ ສົງຄ໌ໃນກຸງສາວັຕຖີຕັ້ງກຕິກາກັນວ່າ "ພຣະຜູ້ມີພຣະກາຄມີພຣະປະສົງຄ໌ສເດັຈຫລີກຫລີບ ຢູ່ຕລອດໄຕຣມາສ ໃຜໆຢ່າເຂົ້າໄປເຝົ້າພຣະອົງຄ໌ ຍົກເວັ້ນກິກສຸຜູ້ນຳພັຕຕາຫາຣເຂົ້າໄປຖວາຍຮູບ

໑໒໐ ກິກຸຮູບໃດເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ເພິ່ງໃຫ້ກິກຸຮູບນັ້ນສະແດງອາບັຕິປາຈິຕຕີຍ໌" ຕໍ່ມາ ທ່ານພຣະອຸປເສນວັງຄັນຕບຸຕຣພ້ອມດ້ວຍບໍຣິສັດເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຖວາຍອກິວາທແລ້ວນັ່ງ ຓະ ທີ່ສົມຄວຣ

ພຸທຣປະເພຕີ

ອັນການທີ່ພຣະຜູ້ມີພຣະກາຄພຸທຣເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍນັ້ນ ເປັນພຸທຣປະເພຕີ ລໍາດັບນັ້ນ ພຣະຜູ້ມີພຣະກາຄຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ອຸປເສນະ ທ່ານທັງຫລາຍຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ຍ່າງທາງມາໂດຍບໍ່ລໍາບາກຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ສະບາຍດີ ພຣະພຸທຣເຈົ້າຂ້າ ພໍເປັນຢູ່ໄດ້ ພຣະພຸທຣເຈົ້າຂ້າ ຂ້າພຣະພຸທຣເຈົ້າຍ່າງທາງມາໂດຍບໍ່ລໍາບາກ ພຣະພຸທຣເຈົ້າຂ້າ"

ຂຓະນັ້ນ ກິກຸສັທຣິວິຫາຣິກຂອງທ່ານພຣະອຸປເສນວັງຄັນຕບຸຕຣນັ່ງຢູ່ບໍ່ຫ່າງ ພຣະຜູ້ມີພຣະກາຄຕຣັສຖາມກິກຸນັ້ນວ່າ "ກິກຸ ຜ້າບັງສຸກຸລຂອງທ່ານຫນ້າພໍໃຈຫລື" ກິກຸນັ້ນຂາບທູລວ່າ "ຜ້າບັງສຸກຸລຂອງຂ້າພຣະພຸທຣເຈົ້າບໍ່ຫນ້າພໍໃຈ ພຣະພຸທຣຂນ້ອຍ" ພຣະຜູ້ມີພຣະກາຄຕຣັສຖາມວ່າ "ກິກຸແລ້ວເປັນຫຍັງທ່ານຊົງຜ້າບັງສຸກຸລລະ" ກິກຸນັ້ນຂາບທູລວ່າ "ພຣະອຸປັຊຌາຍ໌ຂອງຂ້າພຣະພຸທຣເຈົ້າເປັນຜູ້ຊົງຜ້າບັງສຸກຸລ ແມ່ນຂ້າພຣະພຸທຣເຈົ້າກໍຕ້ອງເປັນຜູ້ຊົງຜ້າບັງສຸກຸລຕາມ ພຣະພຸທຣເຈົ້າຂ້າ" ລໍາດັບນັ້ນ ພຣະຜູ້ມີພຣະກາຄຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ອຸປເສນະ ບໍຣິສັດນີ້ຂອງທ່ານຫນ້າເຫລື້ອມໃສ ທ່ານແນະນໍາບໍຣິສັດຢ່າງໃດ" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ຂ້າພຣະພຸທຣເຈົ້າບອກຜູ້ມາຂໍອຸປສົມບົທກັບຂ້າພຣະພຸທຣເຈົ້າວ່າ 'ຂ້ອຍຖືຢູ່ປ່າເປັນວັຕຣ ຖືທ່ຽວບິຓທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ຖ້າທ່ານຈັກຖືຢູ່ປ່າເປັນວັຕຣ ຖືທ່ຽວບິຓທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ຂ້າກໍຈະໃຫ້ທ່ານອຸປສົມບົທ' ຖ້າເຂົາຮັບຄໍາຂອງຂ້າພຣະພຸທຣເຈົ້າ ຂ້າພຣະພຸທຣເຈົ້າກໍໃຫ້ອຸປສົມບົທ ຖ້າບໍ່ຮັບຄໍາ ກໍຈະບໍ່ໃຫ້ອຸປສົມບົທ ຂ້າພຣະພຸທຣເຈົ້າບອກກິກຸທີ່ມາຂໍນິສັຍວ່າ 'ຂ້າຖືຢູ່ປ່າເປັນວັຕຣ ຖືທ່ຽວບິຓທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ຖ້າທ່ານຈັກຖືຢູ່ປ່າເປັນວັຕຣ ຖືທ່ຽວບິຓທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣແດ່ ຂ້າກໍຈະໃຫ້ນິສັຍແກ່ທ່ານ' ຖ້າກິກຸນັ້ນຮັບຄໍາຂອງຂ້າພຣະພຸທຣເຈົ້າ ຂ້າພຣະພຸທຣເຈົ້າກໍຈະໃຫ້ນິສັຍ ຖ້າບໍ່ຮັບຄໍາ ກໍຈະບໍ່ໃຫ້ນິສັຍ ຂ້າພຣະພຸທຣເຈົ້າແນະນໍາບໍຣິສັດຢ່າງນີ້ ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສວ່າ "ອຸປເສນະ ດີແລ້ວໆອຸປເສນະ ທ່ານແນະນໍາບໍຣິສັດດີແລ້ວ ທ່ານຮູ້ກຕິກາສົງຄ໌ໃນກຸງສາວັຕຖີຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ຂ້າພຣະພຸທຣເຈົ້າບໍ່ຮູ້

ກຕິກາຂອງສົງຄ໌ໃນກຸງສາວັດຖີ ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສວ່າ "ສົງຄ໌ໃນກຸງສາວັດຖີຕັ້ງກຕິກາກັນວ່າ ພຣະຜູ້ມີພຣະກາຄມີພຣະປະສົງຄ໌ຈະສເດັຈຫລີກຫລີບຢູ່ຕລອດໄຕຣມາສ ໃຜໆຢ່າເຂົ້າໄປເຝົ້າພຣະອົງຄ໌ ຍົກເວັ້ນກິກຂຸຜູ້ນຳກັຕຕາຫາຣເຂົ້າໄປຖວາຍຮູບດຽວ ກິກຂຸຮູບໃດເຂົ້າໄປເຝົ້າພຣະຜູ້ມີພຣະກາຄເພິ່ງໃຫ້ກິກຂຸຮູບນັ້ນສະແດງອາບັຕິປາຈິຕຕີຍ໌" ທ່ານພຣະອຸປເສນວັງຄັນຕບຸຕຣ ຊາບທູລວ່າ "ສົງຄ໌ໃນກຸງສາວັດຖີຈະເປີດເຜີຍຕົນເອງອອກມາດ້ວຍກຕິກາຂອງຕົນ ຂ້າພຣະພຸທລເຈົ້າຈະບໍ່ບັນຍັດສິ່ງທີ່ພຣະອົງຄ໌ບໍ່ໄດ້ຊົງບັນຍັດໄວ້ ແລະບໍ່ເພີກຖອນສິ່ງທີ່ຊົງບັນຍັດໄວ້ແລ້ວຈະສມາທານປະພຶດໃນສິກຂາບົທຕາມທີ່ຊົງບັນຍັດໄວ້"

ພຣະຜູ້ມີພຣະກາຄຕຣັສວ່າ "ອຸປເສນະ ດີແລ້ວໆສົງຄ໌ບໍ່ບັນຍັດສິ່ງທີ່ເຮົາບໍ່ໄດ້ບັນຍັດ ແລະບໍ່ເພິ່ງເພີກຖອນສິ່ງທີ່ເຮົາບັນຍັດໄວ້ ເພິ່ງສມາທານປະພຶດໃນສິກຂາບົທຕາມທີ່ເຮົາບັນຍັດໄວ້ ອຸປເສນະເຮົາອນຸຍາຕໃຫ້ກິກຂຸຜູ້ຖືຢູ່ປ່າເປັນວັຕຣ ຖືບິຕຫບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ເຂົ້າມາຢ້ຽມເຮົາໄດ້ຕາມສະດວກ"

[໕໘໘] ສມັຍນັ້ນ ກິກຂຸຫລາຍຮູບຍືນຖ້າຢູ່ນອກຊຸ້ມປະຕູ ເພາະຕັ້ງໃຈວ່າ "ພວກເຮົາຈະໃຫ້ທ່ານພຣະອຸປເສນວັງຄັນຕບຸຕຣສະແດງອາບັຕິປາຈິຕຕີຍ໌" ຄັນທ່ານພຣະອຸປເສນວັງຄັນຕບຸຕຣພ້ອມກັບບໍຣິສັດລຸກຂຶ້ນຈາກອາສນະ ຖວາຍອກິວາທພຣະຜູ້ມີພຣະກາຄ ທຳປຣະທັກສິຕຈາກໄປ ກິກຂຸເຫລົ່ານັ້ນໄດ້ກ່າວກັບທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ທ່ານຊາບກຕິກາຂອງສົງຄ໌ໃນກຸງສາວັດຖີຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຕອບວ່າ "ແມ່ນພຣະຜູ້ມີພຣະກາຄກໍຕຣັສເຊັ່ນນີ້ກັບຂະນ້ອຍຢ່າງນີ້ເຫມືອນກັນວ່າ 'ອຸປເສນະ ທ່ານຮູ້ກຕິກາຂອງສົງຄ໌ໃນກຸງສາວັດຖີຫລື' ຂະນ້ອຍກໍທູລຕອບວ່າ 'ຂ້າພຣະພຸທລເຈົ້າບໍ່ຮູ້ກຕິກາສົງຄ໌ໃນກຸງສາວັດຖີ ພຣະພຸທລເຈົ້າຂ້າ' ພຣະຜູ້ມີພຣະກາຄຕຣັສວ່າ 'ອຸປເສນະ ກໍກຕິກາທີ່ສົງຄ໌ໃນກຸງສາວັດຖີທຳໄວ້ວ່າ 'ພຣະຜູ້ມີພຣະກາຄຊົງປະສົງຄ໌ຈະສເດັຈຫລີກຫລີບຢູ່ພຣະອົງຄ໌ດຽວຕລອດໄຕຣມາສ ໃຜໆຢ່າເຂົ້າໄປເຝົ້າພຣະອົງຄ໌ ຍົກເວັ້ນກິກຂຸຜູ້ນຳກັຕຕາຫາຣໄປຖວາຍ ກິກຂຸໃດເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ເພິ່ງໃຫ້ກິກຂຸຮູບນັ້ນສະແດງອາບັຕິປາຈິຕຕີຍ໌' ຂະນ້ອຍກໍຊາບທູລວ່າ 'ພຣະສົງຄ໌ໃນກຸງສາວັດຖີຈະເປີດເຜີຍຕົນເອງອອກມາດ້ວຍກຕິກາຂອງຕົນ ຂ້າພຣະພຸທລເຈົ້າຈະບໍ່ບັນຍັດສິ່ງທີ່ພຣະພຸທລອົງຄ໌ບໍ່ໄດ້ຊົງບັນຍັດ ແລະຈະບໍ່ຖອນສິ່ງທີ່ພຣະພຸທລອົງຄ໌ຊົງບັນຍັດໄວ້ແລ້ວ ຈະສມາທານປະພຶດໃນສິກຂາບົທທີ່ພຣະພຸທລອົງຄ໌ຊົງບັນຍັດໄວ້ແລ້ວ ດັ່ງນີ້' ທ່ານທັງຫລາຍ ພຣະຜູ້ມີພຣະກາຄຊົງອນຸຍາຕໄວ້ແລ້ວວ່າ 'ກິກຂຸຜູ້ຖືຢູ່ປ່າເປັນວັຕຣ ຖືບິຕຫບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ເຂົ້າຢ້ຽມເຮົາໄດ້ຕາມສະດວກ" ຄັ້ງນັ້ນ ກິກຂຸເຫລົ່ານັ້ນກ່າວວ່າ "ທ່ານພຣະອຸປເສນວັງຄັນຕບຸຕຣກ່າວແມ່ນແທ້ ພຣະສົງຄ໌ບໍ່ຄວຣບັນຍັດສິ່ງທີ່ພຣະພຸທລເຈົ້າ

ຍັງບໍ່ໄດ້ຊົງບັນຍັດໄວ້ ບໍ່ຄວຣເພີກຖອນສິ່ງທີ່ພຣະອົງຄ໌ຊົງບັນຍັດໄວ້ ເພິ່ງສມາທານປະພຶດໃນສິກຂາບົທທີ່ພຣະພຸທທອົງຄ໌ຊົງບັນຍັດໄວ້" ກິກຂຸທັງຫລາຍພໍ່ຊາບຂ່າວວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕໃຫ້ກິກຂຸຜູ້ຖືຢູ່ປ່າເປັນວັຕຣ ຖືບິຕາທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ເຂົ້າເຝົ້າໄດ້ຕາມສະດວກ" ຈຶ່ງປຣາຖນາເຂົ້າເຝົ້າ ໄດ້ລະຖິ້ມສັນຖັຕພາກັນສມາທານອາຣັຍ ຍິກລຸດົງຄ໌ ປິຕາທປາຕິກລຸດົງຄ໌ແລະບັງສຸກູລິກລຸດົງຄ໌໑

ຕໍ່ມາ ພຣະຜູ້ມີພຣະກາຄພ້ອມກິກຂຸຈໍານວນຫລາຍສເດັຈປຣະພາສຕາມເສນາສນະ ທອດພຣະເນຕຣເຫັນສັນຖັຕຖືກທອດຖິ້ມໄວ້ໃນທີ່ນັ້ນໆຣັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ສັນຖັຕທີ່ຖືກທອດຖິ້ມໄວ້ໃນທີ່ນັ້ນໆເປັນຂອງໃຜ" ກິກຂຸເຫລົ່ານັ້ນໄດ້ຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະກາຄຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງຣັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຣັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ກິກຂຸທັງຫລາຍໂດຍອາສັຍອໍານາຈປໂຍດ ໑໐ ປະການ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຄ໌
໔. ເພື່ອຄວາມຜາສຸກແຫ່ງສົງຄ໌
໓. ເພື່ອຂົ່ມບຸຄຄົລຜູ້ເກື້ອກູນຍາກ
໔. ເພື່ອຄວາມຢູ່ຜາສຸກແຫ່ງເຫລົ່າກິກຂຸຜູ້ມີສິລດີງາມ
໕. ເພື່ອປິດກັ້ນອາສວະທັງຫລາຍອັນຈະບັງເກີດໃນປັຈຈຸບັນ
໖. ເພື່ອກໍາຈັດອາສວະທັງຫລາຍອັນຈະບັງເກີດໃນອນາຄຕ
໗. ເພື່ອຄວາມເຫລື້ອມໃສຂອງຄົນທີ່ຍັງບໍ່ເຫລື້ອມໃສ
໘. ເພື່ອຄວາມເຫລື້ອມໃສຍິ່ງຂຶ້ນໄປຂອງຄົນທີ່ເຫລື້ອມໃສແລ້ວ
໙. ເພື່ອຄວາມຕັ້ງຫມັ້ນແຫ່ງສັທຣັມ
໑໐. ເພື່ອເອື້ອເຟື້ອວິນັຍ"

ແລ້ວຈຶ່ງຣັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ "ອາຣັຍຍິກລຸດົງຄ໌" ຄືຂໍ້ປະຕິບັດຂັດເກົາກິເລສຂອງຜູ້ຖືຢູ່ໃນປ່າ ຫ່າງຈາກຫມູ່ບ້ານຢ່າງຫນ້ອຍ

໕໐໐ ຊື່ວສນູ ຄືປະມານ ໔໕ ເສັ້ນ (ເບິ່ງຂໍ້ ຝ໕໔ ໜ້າ ໑໗໔) "ປິດາຫປາຕິກລຸດົງຄ໌" ຄືປິດາ ຫບາຕເປັນວັຕຣ ບໍ່ຮັບນິມົນຕ໌
"ປັງສຸກຸລິກລຸດົງຄ໌" ຄືຜ້າບັງສຸກຸລເປັນວັຕຣ ບໍ່ຮັບຖວາຍຈີວອນ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັດາຫ໌] ໔. ໂກສິຍວັຄ ໕. ນິສີທນສັນຖຸຕສິກຂາບົທ
ສິກຂາບົທວິກັງຄ໌

ພຣະບັນຍັດ

[໕ຝ໗] ກໍ ກິກບຸຜູ້ໃຊ້ໃຫ້ທຳສັນຖັຕຮອງນັ່ງ ເພິງເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ເພື່ອເຮັດໃຫ້ເສັ່ງສີ ຖ້າບໍ່ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນໃຊ້ໃຫ້ທຳສັນຖັຕຮອງນັ່ງ ໃໝ່ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປເສນວັງຄັນຕບຸຕຣ ຈົບ

ສິກຂາບົທວິກັງຄ໌

[໕ຝ໘] ທີ່ຊື່ວ່າ ຮອງນັ່ງ ພຣະອົງຄ໌ຕຣັສມຸ່ງເອົາຜ້າມີຊາຍ
ທີ່ຊື່ວ່າ ສັນຖັຕ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕໍ່າ
ຄຳວ່າ ຜູ້ໃຊ້ໃຫ້ທຳ ຄື ທຳເອງຫລືໃຊ້ໃຫ້ທຳ
ທີ່ຊື່ວ່າ ສັນຖັຕເກົ່າ ຄື ທີ່ໃຊ້ປູນັ່ງແດ່ ໃຊ້ປູນອນແດ່ ແມ່ນຄາວດຽວ
ຄຳວ່າ ເພິງເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປນເພື່ອເຮັດໃຫ້ເສັ່ງສີ ຄື ຕັດເປັນຮູບຊົງ ກລມ ຫລືຮູບສີ່ເຫລີ່ຍມ ແລ້ວຈຶ່ງລາດໃນສ່ວນນຶ່ງ ຫລືສາງອອກແລ້ວຈຶ່ງລາດເພື່ອຄວາມຄົງທົນ
ຄຳວ່າ ຖ້າບໍ່ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ຄວາມວ່າ ບໍ່ຖືເອົາສັນຖັຕເກົ່າ ໑ ຄືບ ສຸຄຕໂດຍຮອບ ທຳເອງຫລືໃຊ້ໃຫ້ຜູ້ອື່ນທຳສັນຖັຕຮອງນັ່ງໃໝ່ ຕ້ອງອາບັຕິທຸກກະເພາະພຍາ ຍາມ ສັນຖັຕເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ ກິກບຸທັງຫລາຍ ກິກບຸເພິງສລະສັນຖັຕທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັຕທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຂອງນັ່ງຜືນນີ້ ຜູ້ຂ້າບໍ່ໄດ້ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ

ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ຄຕະ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຂອງນັ່ງຜືນນີ້ຜູ້ຂ້າບໍ່ໄດ້ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຍ່ອງຍື້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັຕຂອງນັ່ງຜືນນີ້ ຜູ້ຂ້າບໍ່ໄດ້ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າ ຄືນສັນຖັຕຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໔. ໂກສິຍວັຄ ໕. ນິສີທນສັນຖຕສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໖໘] ພິກຂຸທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກົຏ

ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍຄແກ່ຜູ້ອື່ນ ຕ້ອງອາບັຕິທຸກກົຏ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໗໐] ໑. ພິກຂຸເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາທຳ

໒. ພິກຂຸຫາສັນຖັຕເກົ່າບໍ່ໄດ້ຈຶ່ງເອົາແຕ່ນ້ອຍມາທຳ

໓. ພິກຂຸຫາສັນຖັຕເກົ່າບໍ່ໄດ້ເລີຍບໍ່ເອົາມາທຳ

໔. ພິກຂຸໄດ້ສັນຖັຕທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ

໕. ພິກຂຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກໝອນ

໖. ພິກຂຸວິກົລຈິຕ

໗. ພິກຂຸຕົ້ນບັນຍັດ

ນິສີທນສັນຖຕສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຑ໌] ໒. ໂກສິຍວັຄ ໖. ເອຣຸກໂລມສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໖. ເອຣຸກໂລມສິກຂາບົທ

ວ່າດ້ວຍການຮັບຂົນຈຽມ໑

ເຣື້ອງພິກຂຸຮູບໃດຮູບນຶ່ງຮັບຂົນຈຽມຣະຫວ່າງທາງ

[໕໗໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທລເຈົ້າປະທັບຢູ່ ຕະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກຂຸຮູບນຶ່ງຍ່າງທາງໄປກຸງສາວັຕຖີໃນຊົນບົທແຄວ້ນໂກສົລ ຣະຫວ່າງທາງ ຂົນຈຽມເກີດຂຶ້ນ ທ່ານຈຶ່ງໃຊ້ອຸຕຕຣາສົງຄ໌ຫໍ່ ຂົນຈຽມໄປ ພວກຊາວບ້ານເຫັນ ທ່ານຈຶ່ງເວົ້າສັພຍອກວ່າ "ທ່ານຊື້ຂົນຈຽມມາຣາຄາເທົ່າໃດ ຈະຂາຍມີກຳໄຣເທົ່າໃດ" ທ່ານຖືກຊາວ ບ້ານເວົ້າສັພຍອກຈຶ່ງເກີ້ເຂີນ ຄັນເຖິງກຸງສາວັຕຖີ ໄດ້ໂຍນຂົນຈຽມເຫລົ່ານັ້ນຖິ້ມໄປ ທັງທີ່ຢືນຢູ່ ນັ້ນແຫລະ ພິກຂຸທັງຫລາຍກ່າວກັບທ່ານຢ່າງນີ້ວ່າ "ເປັນຫຍັງທ່ານຈຶ່ງໂຍນຂົນຈຽມເຫລົ່ານັ້ນຖິ້ມ ທັງທີ່ຢືນຢູ່ລະ" ທ່ານຕອບວ່າ "ຈິງຢ່າງນັ້ນ ທ່ານທັງຫລາຍ ຜູ້ຂ້າຖືກພວກຊາວບ້ານເວົ້າສັພຍອກ ເພາະຂົນຈຽມເຫລົ່ານີ້" ພິກຂຸທັງຫລາຍຖາມວ່າ "ທ່ານນຳຂົນຈຽມເຫລົ່ານີ້ມາໄກເທົ່າໃດ" ພິກຂຸຮູບ ນັ້ນຕອບວ່າ "ເກີນ ໓ ໂຍຊນ໌ ຂນ້ອຍ" ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກຂຸຈຶ່ງນຳຂົນຈຽມມາໄກເກີນ ໓ ໂຍຊນ໌ລະ" ຄັນພິກຂຸທັງຫລາຍຕຳໜິ ພິກຂຸຮູບນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ຂົນຈຽມ ຄື ເອຣຸກໂລມ ຂົນແກະ ຂົນແພະ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໑. ໂກສິຍວັຄ ໖. ເອຣຸກໂລມສິກຂາບົທ ສິກຂາບົທວິພັງຄ໌

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸ ນັ້ນວ່າ "ພິກຂຸ ຊາບວ່າທ່ານນຳຂົນຈຽມມາໄກເກີນ ໓ ໂຍຊນ໌ ແມ່ນແທ້ບໍ" ພິກຂຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທລເຈົ້າຊົງຕຳໜິວ່າ "ຯລຯ ໂມພບຸຣຸຫ ຈັ່ງໃດ ທ່ານຈຶ່ງນຳຂົນຈຽມມາໄກເກີນ ໓ ໂຍຊນ໌ລະ ໂມພບຸຣຸຫ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໗໔] ກໍ ຂົນຈຽມເກີດຂຶ້ນແກ່ພິກຂຸຜູ້ຍ່າງທາງໄກ ພິກຂຸຕ້ອງການກໍເພິ່ງຮັບໄດ້ ຄັນຮັບແລ້ວ ເມື່ອບໍ່ມີຄົນນຳໄປໃຫ້ ເພິ່ງນຳໄປເອງຕລອດຣະຍະ ໓ ໂຍຊນ໌ເປັນຢ່າງຫລາຍ ຖ້າເມື່ອບໍ່ມີຄົນ ນຳໄປໃຫ້ ນຳໄປໄກກວ່ານັ້ນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເອື້ອງພິກຂຸຮູບໃດຮູບນຶ່ງຮັບຂົນຈຽມຣະຫວ່າງທາງ ຈົບ

ສິກຂາບົທວິກັງຄ໌

[໕໗໕] ຄຳວ່າ ກໍ. . . ແກ່ພິກຂຸຜູ້ຍ່າງທາງໄກ ໄດ້ແກ່ ພິກຂຸຜູ້ຍ່າງທາງ

ຄຳວ່າ ຂົນຈຽມເກີດຂຶ້ນ ຄື ເກີດຈາກສົງຄ໌ ຈາກຄນະ ຈາກຍາຕ ຈາກມິຕຣຫລືທີ່ເປັນຂອງ ບັງສຸກຸລ ຫລືທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ

ຄຳວ່າ ຕ້ອງການ ຄື ເມື່ອຕ້ອງການກໍຮັບໄວ້ໄດ້

ຄຳວ່າ ຄັນຮັບແລ້ວ. . . ເພິ່ງນຳໄປເອງຕລອດຣະຍະ ໓ ໂຍຊນ໌ເປັນຢ່າງຫລາຍ ຄື ນຳໄປເອງໄດ້ ໓ ໂຍຊນ໌

ຄຳວ່າ ເມື່ອບໍ່ມີຄົນນຳໄປໃຫ້ ຄວາມວ່າ ບໍ່ມີຄົນອື່ນ ຄື ສຕຣີ ບຸຣຸສ ຄຣືຫັສຖ໌ຫລືບັພຊິຕ ຄອຍ ຊ່ວຍນຳໄປ

ຄຳວ່າ ຖ້າເມື່ອບໍ່ມີຄົນນຳໄປໃຫ້ ນຳໄປໄກກວ່ານັ້ນ ອະທິບາຍວ່າ ພິກຂຸຍ່າງຕີນທີ ໑ ຜ່ານ ໓ ໂຍຊນ໌ໄປ ຕ້ອງອາບັຕິທຸກກົດ ຍ່າງຕີນທີ ໒ ຜ່ານໄປ ຂົນຈຽມທັງຫລາຍເປັນນິສສັຄຄີຍ໌ ພິກຂຸ ຢືນຢູ່ພາຍໃນຣະຍະ ໓ ໂຍຊນ໌ ໂຍນຂົນຈຽມອອກນອກຣະຍະ ໓ ໂຍຊນ໌ ຂົນຈຽມທັງຫລາຍເປັນ ນິສສັຄຄີຍ໌ ພິກຂຸລີ້ຂົນຈຽມໃນຍານພາຫນະຫລືໃນຫໍ່ຂອງຂອງຜູ້ອື່ນທີ່ເຂົາບໍ່ຮູ້ ຍ່າງຕີນໄປເກີນ ໓ ໂຍຊນ໌ ຂົນຈຽມທັງຫລາຍເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄນະຫລືແກ່ບຸຄ ຄົລ

ພິກຂຸທັງຫລາຍ ພິກຂຸເພິ່ງສລະຂົນຈຽມທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຂົນຈຽມທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງ ຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ ຜູ້ຂ້ານຳໄປເກີນ ໓ ໂຍຊນ໌ ເປັນ

ນິສສັຄຄີຍ໌ ຜູ້ຂ້າສລະຂິນຈຽມເຫລົ່ານີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ
ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຂິນຈຽມທີ່ທ່ານສລະໃຫ້ດ້ວຍຍັດຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຂິນຈຽມເຫລົ່ານີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຂິນຈຽມເຫລົ່ານີ້ແກ່ກິກຂຸຊື່ນີ້"

ສລະແກ່ຄຕະ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂິນຈຽມເຫລົ່ານີ້ ຜູ້ຂ້ານຳໄປເກີນ ໑໒ ໂຍຊນ໌ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂິນຈຽມເຫລົ່ານີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ
ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຂິນຈຽມທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຂິນຈຽມເຫລົ່ານີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຂິນຈຽມເຫລົ່ານີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຂິນຈຽມເຫລົ່ານີ້ ຜູ້ຂ້ານຳໄປເກີນ ໑໒ ໂຍຊນ໌ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂິນຈຽມເຫລົ່ານີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຂິນຈຽມທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຂິນຈຽມເຫລົ່ານີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໗໔] ເກີນຣະຍະ ໑໒ ໂຍຊນ໌ ກິກຂຸສຳຄັນວ່າເກີນ ນຳໄປເກີນ ໑໒ ໂຍຊນ໌ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ເກີນຣະຍະ ໑໒ ໂຍຊນ໌ ກິກຂຸບໍ່ແນ່ໃຈ ນຳໄປເກີນ ໑໒ ໂຍຊນ໌ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ເກີນຣະຍະ ໑໒ ໂຍຊນ໌ ກິກຂຸສຳຄັນວ່າຫນ້ອຍກວ່າ ນຳໄປເກີນ ໑໒ ໂຍຊນ໌ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກະ

ໜ້ອຍກວ່າ ໓ ໂຍຊນ໌ ພິກຂຸສຳຄັນວ່າເກີນ ຕ້ອງອາບັຕິທຸກກະ

ໜ້ອຍກວ່າ ໓ ໂຍຊນ໌ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ

ໜ້ອຍກວ່າ ໓ ໂຍຊນ໌ ພິກຂຸສຳຄັນວ່າໜ້ອຍກວ່າ ບໍ່ຕ້ອງອາບັຕິ

ອນາປັດຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໗໕] ໑. ພິກຂຸນຳໄປພຽງ ໓ ໂຍຊນ໌

໒. ພິກຂຸນຳໄປໜ້ອຍກວ່າ ໓ ໂຍຊນ໌

໓. ພິກຂຸນຳໄປກໍດີ ນຳກັບກໍດີ ພຽງຣະຍະ ໓ ໂຍຊນ໌

໔. ພິກຂຸນຳໄປພຽງຣະຍະ ໓ ໂຍຊນ໌ ປະສົງຄ໌ຈະພັກອາສັຍ ແລ້ວນຳໄປຈາກທີ່ນັ້ນ໑

໕. ພິກຂຸໄດ້ຂົນຈຽມທີ່ຖືກຊິງໄປຄືນມາ ແລ້ວນຳໄປອີກ

໖. ພິກຂຸໄດ້ຂົນຈຽມທີ່ສລະໄປຄືນມາ ແລ້ວນຳໄປອີກ

໗. ພິກຂຸໃຊ້ໃຫ້ຜູ້ອື່ນຊ່ອຍນຳໄປ

໘. ພິກຂຸນຳຂົນຈຽມທີ່ທຳເປັນສິ່ງຂອງໄປ

໙. ພິກຂຸວິກົລຈິຕ

໑໐. ພິກຂຸຕົ້ນບັນຍັດ

ເອຣຸກໂລມສິກຂາບົທທີ ໖ ຈົບ

ເຊີງອັນຖະ :

໑ ປະສົງຄ໌ຈະພັກອາສັຍຢູ່ ເພື່ອສຶກສາຮ່ຳຮຽນ ສອບຖາມ ຫລືເພື່ອໄດ້ປັຈຈັຍເຄື່ອງອາສັຍ ແຕ່ເພາະບໍ່ໄດ້ສິ່ງເຫລົ່ານັ້ນ ຈຶ່ງຈາກທີ່ນັ້ນໄປ (ວິ. ອ. ໒/໕໗໕/໑໙໘)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຓທ໌] ໒. ໂກສິຍວັຄ ໗. ເອຣຸກໂລມໂລວາປນສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

ໆ. ເອຣຸກໂລມໂລອາປນສິກຂາບົທ
ວ່າດ້ວຍການໃຫ້ຊັກຂົນຈຽມ

ເຣື້ອງພຣະຈັພພັຄຄີຍ໌
[໕ໆ໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໓ະ ນີໂຄຣສາຣາມ ເຂຕກຸງກບິລພັສດຸ໌ ແຄວ້ນສັກກະ ຄັ້ງນັ້ນ ພວກກິກຂຸຈັພພັຄຄີຍ໌ໃຊ້ພວກກິກຂຸຕີໃຫ້ຊັກແດ່ ໃຫ້ຍ້ອມແດ່ ສາງແດ່ ຊຶ່ງຂົນຈຽມ ພວກກິກຂຸຕີຊັກ ຍ້ອມ ສາງ ຊຶ່ງຂົນຈຽມ ຈຶ່ງລະເລີຍອຸທເທສ ປຣິປຸຈຈາ ອທິສີລ ອທິຈິຕ ອທິປັນຍາປັນຍາ

ສມັຍນັ້ນ ພຣະນາງມຫາປຊາບດີໂຄຕມີ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອກິວາທ ແລ້ວປະທັບຢືນ ໓ະ ທີ່ສົມຄວຣ ພຣະຜູ້ມີພຣະກາຄໄດ້ຕຣັສກັບພຣະນາງມຫາປ ຊາບດີໂຄຕມີ ຜູ້ຢືນຢູ່ວ່າ "ໂຄຕມີ ພວກກິກຂຸຕີບໍ່ປມາດ ຍັງມີຄວາມພຽນ ມີຄວາມມຸ່ງຫມັ້ນຢູ່ຫລື" ພຣະນາງຂາບທູລວ່າ "ພຣະພຸທສເຈົ້າຂ້າ ກິກຂຸຕີທັງຫລາຍຈະມີຄວາມບໍ່ປມາດແຕ່ທີ່ໃດ ພວກ ກິກຂຸຈັພພັຄຄີຍ໌ໃຊ້ພວກກິກຂຸຕີໃຫ້ຊັກແດ່ ໃຫ້ຍ້ອມແດ່ ໃຫ້ສາງແດ່ ຊຶ່ງຂົນຈຽມ ພວກກິກຂຸຕີ ນັ້ນຊັກ ຍ້ອມ ສາງ ຊຶ່ງຂົນຈຽມຢູ່ ຈຶ່ງລະເລີຍອຸທເທສ ປຣິປຸຈຈາ ອທິສີລ ອທິຈິຕ ອທິປັນຍາ" ພຣະຜູ້ມີພຣະກາຄຊົງຊີ້ແຈງໃຫ້ພຣະນາງມຫາປຊາບດີເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍສັມມີກຖາ ລຳດັບນັ້ນ ພຣະ ນາງມຫາປຊາບດີໂຄຕມີ ຄັນພຣະຜູ້ມີພຣະກາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປ ປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນ ເບີກບານດ້ວຍສັມມີກຖາແລ້ວ ຈຶ່ງຖວາຍອກິວາທພຣະຜູ້ມີພຣະກາຄ ທຳປຣະທັກສິຕ(ວຽນໄປທາງຂວາ)ແລ້ວຈາກໄປ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໒. ໂກສີຍວັຄ ໆ. ເອຣຸກໂລມໂລອາປນ ສິກຂາບົທ ສິກຂາບົທວິກັງຄ໌

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກຂຸຈັພພັຄຄີຍ໌ວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານໃຊ້ກິກຂຸຕີໃຫ້ຊັກແດ່ ໃຫ້ຍ້ອມແດ່ ໃຫ້ສາງແດ່ ຊຶ່ງຂົນຈຽມ ແມ່ນແທ້ບໍ" ພຣະຈັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີ ພຣະກາຄຕຣັສຖາມວ່າ "ກິກຂຸທັງຫລາຍ ກິກຂຸຕີເຫລົ່ານັ້ນ ເປັນຍາຕຂອງພວກທ່ານຫລືວ່າບໍ່ແມ່ນ

ຍາຕ" ພວກພິກຊຸຈັພພັຄຄີຍ໌ຂາບທູລວ່າ "ບໍ່ແມ່ນຍາຕ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງ ຕຳຫນິວ່າ "ໂມຄບຸຣຸສທັງຫລາຍ ບຸຄຄົລຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມຫລືບໍ່ເຫມາະສົມ ຄວາມຫນ້າເຫລື້ອມໃສຫລືບໍ່ຫນ້າເຫລື້ອມໃສຂອງບຸຄຄົລຜູ້ບໍ່ແມ່ນຍາຕ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ພິກຊຸນີໃຫ້ຊັກແດ່ ໃຫ້ຍ້ອມແດ່ ໃຫ້ສາງແດ່ຊຶ່ງຂົນຈຽມລະ ໂມຄບຸຣຸສ ທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"
ແລ້ວຈຶ່ງຮັບສັ່ງໃຫ້ພິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໗໗] ກໍ ພິກຊຸໃດໃຊ້ພິກຊຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ໃຫ້ຍ້ອມ ຫລືໃຫ້ສາງຂົນຈຽມ ຕ້ອງອາບັຕິ ນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໕໗໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກຊຸ ມີອະທິບາຍວ່າ ຊື່ວ່າພິກຊຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ວ່າ ພິກຊຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ
ທີ່ຊື່ວ່າ ພິກຊຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຄ໌ ໔ ຝ່າຍ
ພິກຊຸສັ່ງວ່າ "ຈົງຊັກ" ຕ້ອງອາບັຕິທຸກກະຕ ຂົນຈຽມທີ່ຊັກແລ້ວ ເປັນນິສສັຄຄີຍ໌
ພິກຊຸສັ່ງວ່າ "ຈົງຍ້ອມ" ຕ້ອງອາບັຕິທຸກກະຕ ຂົນຈຽມທີ່ຍ້ອມແລ້ວ ເປັນນິສສັຄຄີຍ໌
ພິກຊຸສັ່ງວ່າ "ຈົງສາງ" ຕ້ອງອາບັຕິທຸກກະຕ ຂົນຈຽມທີ່ສາງແລ້ວ ເປັນນິສສັຄຄີຍ໌ ຄື ເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ
ພິກຊຸທັງຫລາຍ ພິກຊຸເພິງຮັບສລະຂົນຈຽມທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຂົນຈຽມທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຊຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຊຸຜູ້ແກ່ພັນສາ ນັ່ງ

ຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ ຜູ້ຂ້າໃຊ້ໃຫ້ກິກຸຕີຜູ້ບໍ່ແມ່ນຍາດ ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັດ ກິກຸຜູ້ສລາດສາມາດເພິງຮັບອາບັດ ເພິງຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍຍັດຕິກັມວາຈາວ່າ "ທ່ານ ຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຂົນຈຽມເຫລົ່ານີ້ຂອງກິກຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຂົນຈຽມເຫລົ່ານີ້ແກ່ກິກຸຊື່ນີ້"

ສລະແກ່ຄຕະ

ກິກຸຮູບນັ້ນເພິງເຂົ້າໄປຫາກິກຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຸຜູ້ແກ່ ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ຜູ້ຂ້າໃຊ້ກິກຸຕີຜູ້ບໍ່ແມ່ນ ຍາດໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະ ແດງອາບັດ

ກິກຸຜູ້ສລາດສາມາດເພິງຮັບອາບັດ ເພິງຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງ ຫລາຍຈົ່ງຟັງຂ້າພະເຈົ້າ ຂົນຈຽມເຫລົ່ານີ້ຂອງກິກຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງ ຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຂົນຈຽມເຫລົ່ານີ້ແກ່ກິກຸຊື່ນີ້"

ສລະແກ່ບຸຄຄົລ

ກິກຸຮູບນັ້ນເພິງເຂົ້າໄປຫາກິກຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວ ຢ່າງນີ້ວ່າ "ທ່ານຂນ້ອຍ ຂົນຈຽມເຫລົ່ານີ້ຜູ້ຂ້າໃຊ້ກິກຸຕີຜູ້ບໍ່ແມ່ນຍາດໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ ຂ້າສລະຂົນຈຽມເຫລົ່ານີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັດ ກິກຸຜູ້ຮັບສລະນັ້ນເພິງຮັບ ອາບັດ ແລ້ວຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຂົນຈຽມເຫລົ່ານີ້ໃຫ້ແກ່ທ່ານ"

ບົທກາຊນິຍ໌

ສໍາຄັນວ່າບໍ່ແມ່ນຍາດ ຈຕຸກກະທີ ໑

[໕໗໙] ກິກຸຕີທີ່ບໍ່ແມ່ນຍາດ ກິກຸສໍາຄັນວ່າບໍ່ແມ່ນຍາດ ໃຊ້ໃຫ້ຊັກຂົນຈຽມ ຕ້ອງອາບັດນິສ ສັຄຄີຍປາຈິຕຕີຍ໌

ກິກຸຕີທີ່ບໍ່ແມ່ນຍາດ ກິກຸສໍາຄັນວ່າບໍ່ແມ່ນຍາດ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຂົນຈຽມ ຕ້ອງອາບັດ ທຸກກຸຟກັບອາບັດນິສສັຄຄີຍປາຈິຕຕີຍ໌

ກິກຸຕີທີ່ບໍ່ແມ່ນຍາດ ກິກຸສໍາຄັນວ່າບໍ່ແມ່ນຍາດ ໃຊ້ໃຫ້ຊັກ ໃຊ້ໃຫ້ສາງຂົນຈຽມ ຕ້ອງອາບັດ

ທຸກກາຍກັບອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ສາງຂົນຈຽມ ຕ້ອງອາບັຕິທຸກກາຍ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໔

ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມຂົນຈຽມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ສາງຂົນຈຽມ ຕ້ອງອາບັຕິທຸກກາຍກັບອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ຊັກຂົນຈຽມ ຕ້ອງອາບັຕິທຸກກາຍກັບອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ສາງ ໃຊ້ໃຫ້ຊັກຂົນຈຽມ ຕ້ອງອາບັຕິທຸກກາຍ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໕

ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງຂົນຈຽມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງ ໃຊ້ໃຫ້ຊັກຂົນຈຽມ ຕ້ອງອາບັຕິທຸກກາຍກັບອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງ ໃຊ້ໃຫ້ຍ້ອມຂົນຈຽມ ຕ້ອງອາບັຕິທຸກກາຍກັບອາບັຕິນິສສັຄຄີຍປາຈິຕຕີຍ໌
ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຂົນຈຽມ ຕ້ອງອາບັຕິທຸກກາຍ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ບໍ່ແນ່ໃຈ ຕ້ອງອາບັຕິທຸກກາຍ

[໕໗໐] ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸບໍ່ແນ່ໃຈ ຯລຯ ກິກຂຸດີທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າເປັນຍາຕ ຯລຯ
ກິກຂຸໃຊ້ກິກຂຸດີໃຫ້ຊັກຂົນຈຽມຂອງກິກຂຸອື່ນ ຕ້ອງອາບັຕິທຸກກາຍ

ກິກບຸໃຊ້ກິກບຸຕີຜູ້ອຸປສົມບົທຈາກສົງຄ໌ຝ່າຍດຽວໃຫ້ຊັກ ຕ້ອງອາບັຕິທຸກກົດ
ກິກບຸຕີທີ່ບໍ່ແມ່ນຍາຕ ກິກບຸສຳຄັນວ່າເປັນຍາຕ ຕ້ອງອາບັຕິທຸກກົດ
ກິກບຸຕີທີ່ເປັນຍາຕ ກິກບຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ກິກບຸຕີທີ່ເປັນຍາຕ ກິກບຸສຳຄັນວ່າເປັນຍາຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກບຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໗໑] ໑. ກິກບຸຕີຜູ້ເປັນຍາຕຊັກໃຫ້ ໂດຍມີເພື່ອນກິກບຸຕີຜູ້ບໍ່ແມ່ນຍາຕຄອຍຊ່ວຍເຫລືອ
໒. ກິກບຸເຈົ້າຂອງຂົນຈຽມທີ່ກິກບຸຕີອາສາຊັກໃຫ້
໓. ກິກບຸໃຊ້ໃຫ້ຊັກຂົນຈຽມທີ່ທຳເປັນສິ່ງຂອງຊຶ່ງບໍ່ໄດ້ໃຊ້ສອຍ
໔. ກິກບຸໃຊ້ໃຫ້ສິກຂມານາຊັກ
໕. ກິກບຸໃຊ້ໃຫ້ສາມເນຣີຊັກ
໖. ກິກບຸວິກົລຈິຕ
໗. ກິກບຸຕົ້ນບັນຍັດ

ເອຣກໂລມໂລວາປນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໒. ໂກສິຍວັຄ ໘. ຣູປິຍສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໘. ຣູປິຍສິກຂາບົທ

ວ່າດ້ວຍການຮັບຣູປິຍະ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໗໒] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໙ະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂດກຸງຣາຊຄືຫ໌ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣເປັນພຣະປະຈຳຕະກູນຂອງຕະກູນນຶ່ງ ຮັບກັຕຕາຫານຢູ່ເປັນປະຈຳ ຫາກຂອງຄ້ຽວຂອງຈັນອັນໃດເກີດຂຶ້ນໃນຕະກູນນັ້ນ ເຂົາກໍ

ຈະເກັບຂອງຄ້າງວຂອງຈັນອັນນັ້ນໄວ້ເພື່ອທ່ານສ່ວນນຶ່ງ ສມັຍນັ້ນ ໃນເວລາເຢັນ ເນື້ອເກີດຂຶ້ນໃນຕະກູນນັ້ນ ເຂົາໄດ້ເກັບເນື້ອນັ້ນໄວ້ເພື່ອທ່ານພຣະອຸປນັນທສາກຍບຸຕຣສ່ວນນຶ່ງ ເດັກໃນຕະກູນນັ້ນຕື່ນເຊົ້າມືດ ຮ້ອງໄຫ້ອ້ອນວອນວ່າ "ພວກທ່ານໂປຣດໃຫ້ເນື້ອແກ່ຜູ້ຂ້າ" ເທື່ອນັ້ນ ສາມີສັ່ງກັຣຍາວ່າ "ທ່ານຈົ່ງໃຫ້ເນື້ອສ່ວນຂອງພຣະຄຸຕເຈົ້າແກ່ເດັກ ເຮົາຈະຊື້ຂອງອື່ນຖວາຍທ່ານ" ລຳດັບນັ້ນທ່ານພຣະອຸປນັນທສາກຍບຸຕຣຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປເຖິງຕະກູນນັ້ນນັ່ງເທິງອາສນະທີ່ເຂົາປູລາດໄວ້ ຊາຍຜູ້ນັ້ນເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງອາສນະຄັນເຖິງແລ້ວໄຫວ້ທ່ານແລ້ວນັ່ງລົງ ຓະ ທີ່ສົມຄວຣ ກ່າວວ່າ "ທ່ານຜູ້ຈະເຣີນ ເມື່ອວັນວານໃນເວລາເຢັນ ໄດ້ມີເນື້ອເກີດຂຶ້ນ ພວກຂ້າພະເຈົ້າໄດ້ເກັບເນື້ອນັ້ນໄວ້ເພື່ອພຣະຄຸຕເຈົ້າສ່ວນນຶ່ງເດັກຄືນນີ້ຕື່ນເຊົ້າມືດ ຮ້ອງໄຫ້ອ້ອນວອນວ່າ 'ພວກທ່ານໂປຣດໃຫ້ເນື້ອແກ່ຜູ້ຂ້າ' ພວກເຮົາຈຶ່ງໃຫ້ສ່ວນຂອງພຣະຄຸຕເຈົ້າແກ່ເດັກ ພຣະຄຸຕເຈົ້າຈະໃຫ້ຜູ້ຂ້ານຳ ກຫາປຓະ ໄປແລກຫຍັງມາ ຂນ້ອຍ" ທ່ານພຣະອຸປນັນທສາກຍບຸຕຣຖາມວ່າ "ທ່ານບໍຣິຈາຄຊັພຍ໌ ໑ ກຫາປຓະ ແກ່ອາຕມາຫລື" ເຂົາຕອບວ່າ "ແມ່ນແລ້ວ ຂນ້ອຍ" ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ "ທ່ານຈົ່ງຖວາຍກຫາປຓະນັ້ນແກ່ອາຕມາເຖີດ" ເທື່ອນັ້ນ ເຂົາຖວາຍກຫາປຓະແກ່ທ່ານພຣະອຸປນັນທສາກຍບຸຕຣແລ້ວຕຳຫນິປະນາມ ໂພນທະນາວ່າ "ພຣະສມຕະເຊື້ອສາຍສາກຍບຸຕຣເຫລົ່ານີ້ຮັບຣູປິຍະ໑ ເຫມືອນພວກເຮົາ" ພວກກິກຊຸໄດ້ຍິນບຸຣຸຊນັ້ນຕຳຫນິ ປະນາມ ໂພນທະນາ ບັນດາກິກຊຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣ ຈຶ່ງຮັບຣູປິຍະ ລະ" ຄັນກິກຊຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫດຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານຮັບຣູປິຍະແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຊ ຈັ່ງໃດທ່ານຈຶ່ງຮັບຣູປິຍະລະ ໂມຄບຸຣຸຊ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໗໖] ກໍ ພິກຂຸໃດຮັບຫລືໃຊ້ໃຫ້ຜູ້ອື່ນຮັບທອງແລະເງິນ ຫລືຍິນດີທອງແລະເງິນທີ່ເຂົາເກັບໄວ້ໃຫ້ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໕໗໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ເຊີງອັນຖະ :

໑ ຄຳວ່າ "ຣູປິຍະ" ຫມາຍເຖິງທອງແລະເງິນ (ວິ. ອ. ໒/໕໗໖/໒໐໗)

ທີ່ຊື່ວ່າ ທອງ ພຣະອົງຄ໌ຕຣັສຫມາຍເຖິງວັຕຖຸທີ່ມີສີດຸຈພຣະຈວີຂອງພຣະສາສດາ

ທີ່ຊື່ວ່າ ເງິນ ໄດ້ແກ່ ກຫາປຓະ ມາສກທີ່ເຮັດດ້ວຍໂລຫະ ມາສກທີ່ເຮັດດ້ວຍໄມ້ ມາສກທີ່ເຮັດດ້ວຍຄັ່ງ ທີ່ໃຊ້ເປັນອັຕຣາສຳລັບແລກປ່ຽນຊື້ຂາຍກັນ

ຄຳວ່າ ຮັບ ຄື ພິກຂຸຮັບເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ຜູ້ອື່ນຮັບ ຄື ພິກຂຸໃຫ້ຄົນອື່ນຮັບແທນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຳວ່າ ຫລືຍິນດີທອງແລະເງິນທີ່ເຂົາເກັບໄວ້ໃຫ້ ຄວາມວ່າ ພິກຂຸຍິນດີຣູປິຍະທີ່ເຂົາເກັບໄວ້ໃຫ້ໂດຍບອກວ່າ "ສິ່ງນີ້ເປັນຂອງທ່ານ" ດັ່ງນີ້ ຣູປິຍະນັ້ນເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະໃນທ່າມກາງສົງຄ໌

ພິກຂຸທັງຫລາຍ ພິກຂຸເພິງສລະຣູປິຍະທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຣູປິຍະທີ່ເປັນນິສສັຄຄີຍ໌

ພິກຂຸຣູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າຮັບຣູປິຍະໄວ້ ຣູປິຍະນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະຣູປິຍະນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ

ຖ້າຄົນງານວັດຫລືອຸບາສົກຜ່ານມາ ເພິງບອກເຂົາວ່າ "ທ່ານຈົ່ງຮູ້ສິ່ງນີ້" ຖ້າເຂົາກ່າວວ່າ "ຈະໃຫ້ຜູ້ຂ້ານຳສິ່ງນີ້ໄປແລກຫຍັງມາ" ບໍ່ຄວຣບອກເຂົາວ່າ "ຈົ່ງນຳຂອງນີ້ໆມາ" ຄວຣບອກແຕ່ຂອງທີ່ເປັນກັປປິຍະ ເຊັ່ນ ເນີຍໃສ ນ້ຳມັນ ນ້ຳເຜິ້ງ ຫລືນ້ຳອ້ອຍ ຖ້າເຂົານຳຣູປິຍະນັ້ນໄປແລກຂອງທີ່ເປັນກັປປິຍະມາຖວາຍ ຍົກເວັ້ນກິກຂຸຜູ້ຮັບຣູປິຍະ ນອກນັ້ນທຸກຣູປຈັນໄດ້ ຖ້າເຮັດໄດ້ຢ່າງນີ້ ນັ້ນເປັນການດີ ຖ້າທຳບໍ່ໄດ້ ເພິງບອກເຂົາວ່າ "ທ່ານໄປຣດຖິ້ມຂອງນີ້" ຖ້າເຂົາຖິ້ມໃຫ້ ນັ້ນເປັນການດີ ຖ້າບໍ່ຖິ້ມໃຫ້ ເພິງແຕ່ງຕັ້ງກິກຂຸຜູ້ປະກອບດ້ວຍຄຸຓສົມບັຕ ໕ ຢ່າງໃຫ້ເປັນຜູ້ຖິ້ມຣູປິຍະ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຓฑ໌] ໒. ໂກສິຍວັຄ ໗. ຣູປິຍສິກຂາບົທ ບົທກາຊນີຍ໌

ຄຸຓສົມບັຕຂອງກິກຂຸຜູ້ຖິ້ມຣູປິຍະ ໕ ຢ່າງ

໑. ບໍ່ລຳອຽງເພາະຊອບ
໒. ບໍ່ລຳອຽງເພາະຊັງ
໓. ບໍ່ລຳອຽງເພາະຫລົງ
໔. ບໍ່ລຳອຽງເພາະຢ້ານ
໕. ຮູ້ວິທີວ່າເປັນອັນຖິ້ມຫລືບໍ່ເປັນອັນຖິ້ມຣູປິຍະ

ວິທີແຕ່ງຕັ້ງກິກຂຸຜູ້ຖິ້ມຣູປິຍະ ແລະຄຳແຕ່ງຕັ້ງກິກຂຸທັງຫລາຍ ສົງฆ໌ເພິງແຕ່ງຕັ້ງຢ່າງນີ້ ຄື ເບື້ອງຕົ້ນເພິງຂໍໃຫ້ກິກຂຸຮັບ ຄັນແລ້ວກິກຂຸຜູ້ສລາດສາມາດເພິງປະກາດໃຫ້ສົງฆ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໕໗໕] ທ່ານຜູ້ຈະເຣີນ ຂໍສົງฆ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງฆ໌ພ້ອມກັນແລ້ວເພິງແຕ່ງຕັ້ງກິກຂຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ນີ້ເປັນຍັຕຕິ
ທ່ານຜູ້ຈະເຣີນ ຂໍສົງฆ໌ຈົ່ງຟັງຂ້າພະເຈົ້າ ສົງฆ໌ແຕ່ງຕັ້ງກິກຂຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຣູບໃດເຫັນດ້ວຍກັບການແຕ່ງຕັ້ງກິກຂຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຣູບນັ້ນເພິງນິ່ງ ທ່ານຣູບໃດບໍ່ເຫັນດ້ວຍ ທ່ານຣູບນັ້ນເພິງທັກທ້ວງ
ກິກຂຸຊື່ນີ້ສົງฆ໌ແຕ່ງຕັ້ງໃຫ້ເປັນຜູ້ຖິ້ມຣູປິຍະ ສົງฆ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ກິກຂຸຜູ້ໄດ້ຮັບແຕ່ງຕັ້ງນັ້ນເພິ່ງຖິ້ມຣູປິຍະໄປ ຢ່າກຳໜົດທີ່ຕົກ ຖ້າຖິ້ມໂດຍກຳໜົດທີ່ຕົກ ຕ້ອງອາບັຕິທຸກກະ

ບົທການຸນິຍ໌

ຕິກນິສສັຄຄີຍປາຈິຕຕິຍ໌

[໕໗໘] ຣູປິຍະ ກິກຂຸສຳຄັນວ່າເປັນຣູປິຍະ ຮັບຣູປິຍະ ຕ້ອງອາບັຕິນິສສັຄຄີຍປາຈິຕຕິຍ໌
ຣູປິຍະ ກິກຂຸບໍ່ແນ່ໃຈ ຮັບຣູປິຍະ ຕ້ອງອາບັຕິນິສສັຄຄີຍປາຈິຕຕິຍ໌
ຣູປິຍະ ກິກຂຸສຳຄັນວ່າບໍ່ແມ່ນຣູປິຍະ ຮັບຣູປິຍະ ຕ້ອງອາບັຕິນິສສັຄຄີຍປາຈິຕຕິຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໒. ໂກສິຍວັຄ ໗. ຣູປິຍສິກຂາບົທ ອນາປັຕຕິວາຣ

ທຸກທຸກກະ

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸສຳຄັນວ່າເປັນຣູປິຍະ ຕ້ອງອາບັຕິທຸກກະ
ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸສຳຄັນວ່າບໍ່ແມ່ນຣູປິຍະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ກິກຂຸຫຍິບເອງຫລືໃຊ້ໃຫ້ຄົນອື່ນຫຍິບຣູປິຍະຕກໃນວັດຫລືໃນທີ່ຢູ່ ເກັບໄວ້ດ້ວຍຕັ້ງໃຈວ່າເຈົ້າຂອງຈະມາເອົາໄປ

໒. ກິກຂຸວິກົລຈິຕ

໓. ກິກຂຸຕົ້ນບັນຍັດ

ຣູປິຍສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໒. ໂກສິຍວັຄ ໘. ຣູປິຍສັງໂວຫາຣສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

໙. ຣູປິຍສັງໂວຫາຣສິກຂາບົທ

ວ່າດ້ວຍການແລກປ່ຽນຣູປິຍະ

ເຣື້ອງພຣະຈັພພັຄຄີຍ໌

[໕໘໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ໗ະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຂຸຈັພພັຄຄີຍ໌ທຳການແລກປ່ຽນກັນດ້ວຍຣູປິຍະຊນິດ ຕ່າງໆພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍ ບຸຕຣຈຶ່ງທຳການແລກປ່ຽນກັນດ້ວຍຣູປິຍະຊນິດຕ່າງໆເໝືອນພວກຄຣືຫັສຖ໌ທີ່ຍັງບໍ່ຣິໂກຄການລະ" ພວກກິກຂຸໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນ ຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຂຸຈັພພັຄຄີຍ໌ຈຶ່ງທຳການແລກປ່ຽນກັນດ້ວຍຣູປິຍະ ຊນິດຕ່າງໆລະ" ຄັນກິກຂຸເຫລົ່ານັ້ນຕຳໜິພວກກິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງ ນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກຂຸຈັພພັຄຄີຍ໌ວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານທຳການແລກປ່ຽນກັນດ້ວຍຣູປິຍະຊນິດ ຕ່າງໆແມ່ນແທ້ບໍ່" ພວກກິກຂຸຈັພພັຄຄີຍ໌ທູລຣັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສ ເຈົ້າຊົງຕຳໜິວ່າ "ຯລຯ ໂມຄພບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຈຶ່ງທຳການແລກປ່ຽນຣູປິຍະຊນິດ ຕ່າງໆລະ ໂມຄພບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງ ຣັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໔. ໂກສິຍວັຄ ໙. ຣູປິຍສັງໂວຫາຣສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[໕໘໘] ກໍ ກິກຂຸໃດທຳການແລກປ່ຽນກັນດ້ວຍຣູປິຍະຊນິດຕ່າງໆຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເອື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໕໗໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຄື ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມໜາຍນີ້

ທີ່ຊື່ວ່າ ຊນິດຕ່າງໆຄື ເປັນຮູປພັຕແດ່ ບໍ່ເປັນຮູປພັຕແດ່ ເປັນທັງຮູປພັຕແລະບໍ່ເປັນຮູປພັຕແດ່

ທີ່ຊື່ວ່າ ເປັນຮູປພັຕະ ໄດ້ແກ່ ເຄື່ອງປະດັບສີສະ ເຄື່ອງປະດັບຄອ ເຄື່ອງປະດັບມືອ ເຄື່ອງປະດັບຕີນ ເຄື່ອງປະດັບແອວ

ທີ່ຊື່ວ່າ ບໍ່ເປັນຮູປພັຕະ ພຣະອົງຄ໌ຕຣັສເຖິງຣູປິຍະທີ່ທຳເປັນແທ່ງ

ທີ່ຊື່ວ່າ ເປັນທັງຮູປພັຕແລະບໍ່ເປັນຮູປພັຕະ ໄດ້ແກ່ ເຄື່ອງປະດັບທັງ ໔ ປະເພດນັ້ນ

ທີ່ຊື່ວ່າ ຣູປິຍະ ໄດ້ແກ່ ວັຕຖຸທີ່ມີສີດຸຈພຣະຈວີຂອງພຣະສາສດາ ກຫາປຕະ ມາສກ ທີ່ເຮັດດ້ວຍໂລຫະ ມາສກທີ່ເຮັດດ້ວຍໄມ້ ມາສກທີ່ເຮັດດ້ວຍຄັ່ງ ທີ່ໃຊ້ເປັນອັຕຣາສຳລັບແລກປ່ຽນຊື້ຂາຍກັນ

ຄຳວ່າ ທຳກາຣ ຄື ເອົາຣູປິຍະທີ່ເປັນຮູປພັຕແລກປ່ຽນກັບຣູປິຍະທີ່ເປັນຮູປພັຕ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ເປັນຮູປພັຕແລກປ່ຽນກັບຣູປິຍະທີ່ບໍ່ເປັນຮູປພັຕະ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ເປັນຮູປພັຕແລກປ່ຽນກັບຣູປິຍະທີ່ເປັນທັງຮູປພັຕແລະບໍ່ເປັນຮູປພັຕະ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ບໍ່ເປັນຮູປພັຕ ແລກປ່ຽນກັບຣູປິຍະທີ່ເປັນຮູປພັຕະ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ບໍ່ເປັນຮູປພັຕ ແລກປ່ຽນກັບຣູປິຍະທີ່ບໍ່ເປັນຮູປພັຕະ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ບໍ່ເປັນຮູປພັຕແລກປ່ຽນກັບຣູປິຍະທີ່ເປັນທັງຮູປພັຕແລະບໍ່ເປັນຮູປພັຕ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ເປັນທັງຮູປພັຕແລະບໍ່ເປັນຮູປພັຕແລກປ່ຽນກັບຣູປິຍະທີ່ເປັນຮູປພັຕ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ເປັນທັງຮູປພັຕແລະບໍ່ເປັນຮູປພັຕ ແລກປ່ຽນກັບຣູປິຍະທີ່ບໍ່ເປັນຮູປພັຕ ເປັນນິສສັຄຄີຍ໌

ເອົາຣູປິຍະທີ່ເປັນທັງຮູປພັຕແລະບໍ່ເປັນຮູປພັຕ ແລກປ່ຽນກັບຣູປິຍະທີ່ເປັນທັງຮູປພັຕແລະບໍ່ເປັນຮູປພັຕ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະໃນທ່າມກາງສົງຄ໌

ກິກຂຸທັງຫລາຍ ກິກຂຸພຶງສລະຣູປິຍະທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຣູປິຍະທີ່ເປັນນິສສັຄຄີຍ໌

ກິກຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າທຳການແລກປ່ຽນຣູປິຍະຊນິດຕ່າງໆຣູປິຍະນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະຣູປິຍະນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ

ກິກຸຜູ້ສລາດສາມາດເພິງຮັບອາບັຕິ ຖ້າຄົນວັດຫລືອຸບາສົກຜ່ານມາ ເພິງບອກເຂົາວ່າ "ທ່ານຈົ່ງຮູ້ຂອງນີ້" ຖ້າເຂົາຖາມວ່າ "ຈະໃຫ້ຜູ້ຂ້ານຳສິ່ງນີ້ໄປແລກຫຍັງມາ" ບໍ່ຄວຣບອກເຂົາວ່າ "ຈົ່ງນຳຂອງນີ້ຫລືຂອງນັ້ນມາ" ຄວຣບອກສະເພາະຂອງທີ່ເປັນກັປປິຍະ ເຊັ່ນ ເນີຍໃສ ນ້ຳມັນ ນ້ຳເຜີ້ງ ຫລືນ້ຳອ້ອຍ ຖ້າເຂົານຳຣູປິຍະນັ້ນໄປແລກຂອງທີ່ເປັນກັປປິຍະມາຖວາຍ ຍົກເວັ້ນກິກຸຜູ້ແລກປ່ຽນຣູປິຍະ ກິກຸນອກນັ້ນທຸກຮູປຈັນໄດ້ ຖ້າເຮັດໄດ້ຢ່າງນີ້ ນັ້ນເປັນການດີ ຖ້າທຳບໍ່ໄດ້ ເພິງບອກເຂົາວ່າ "ໄປຣດຖິ້ມຂອງນີ້" ຖ້າເຂົາຖິ້ມໃຫ້ ນັ້ນເປັນການດີ ຖ້າບໍ່ຖິ້ມໃຫ້ ເພິງແຕ່ງຕັ້ງກິກຸຜູ້ປະກອບດ້ວຍຄຸນສົມບັຕ ໕ ຢ່າງໃຫ້ເປັນຜູ້ຖິ້ມຣູປິຍະ ຄື

ຄຸນສົມບັຕຂອງກິກຸຜູ້ຖິ້ມຣູປິຍະ ໕ ຢ່າງ

໑. ບໍ່ລຳອຽງເພາະຊອບ
໒. ບໍ່ລຳອຽງເພາະຊັງ
໓. ບໍ່ລຳອຽງເພາະຫລົງ
໔. ບໍ່ລຳອຽງເພາະຢ້ານ
໕. ຮູ້ວິທີວ່າເປັນອັນຖິ້ມຫລືບໍ່ເປັນອັນຖິ້ມ

ວິທີແຕ່ງຕັ້ງກິກຸຜູ້ຖິ້ມຣູປິຍະ ແລະຄຳແຕ່ງຕັ້ງ

ສົງຂ໌ເພິງແຕ່ງຕັ້ງຢ່າງນີ້ ຄື ເບື້ອງຕົ້ນເພິງຂໍໃຫ້ກິກຸຮັບ ຄັນແລ້ວກິກຸຜູ້ສລາດ ສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໕໘໐] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວເພິງແຕ່ງຕັ້ງກິກຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສົງຂ໌ແຕ່ງຕັ້ງກິກຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງກິກຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ກິກຂຸຊື່ນີ້ສົງຄ໌ແຕ່ງຕັ້ງໃຫ້ເປັນຜູ້ຖິ້ມຣູປິຍະ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖື ຄວາມນິ່ງນັ້ນເປັນມຕິຢ່າງນີ້ ກິກຂຸຜູ້ໄດ້ຮັບແຕ່ງຕັ້ງນັ້ນເພິງຖິ້ມຣູປິຍະໄປ ຢ່າກຳຫນົດທີ່ຕົກ ຖ້າຖິ້ມ ໂດຍກຳຫນົດທີ່ຕົກ ຕ້ອງອາບັຕິທຸກກຸຍ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕທ໌] ໔. ໂກສິຍວັຄ ໙. ຣູປິຍສັງໂວຫາຣສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໙໑] ຣູປິຍະ ກິກຂຸສຳຄັນວ່າເປັນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣູປິຍະ ກິກຂຸບໍ່ແນ່ໃຈ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣູປິຍະ ກິກຂຸສຳຄັນວ່າບໍ່ແມ່ນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸສຳຄັນວ່າເປັນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸບໍ່ແນ່ໃຈ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸສຳຄັນວ່າບໍ່ແມ່ນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຸຍ

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸສຳຄັນວ່າເປັນຣູປິຍະ ຕ້ອງອາບັຕິທຸກກຸຍ

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຍ

ສິ່ງທີ່ບໍ່ແມ່ນຣູປິຍະ ກິກຂຸສຳຄັນວ່າບໍ່ແມ່ນຣູປິຍະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໙໔] ໑. ກິກຂຸວິກົລຈິຕ

໔. ກິກຂຸຕົ້ນບັນຍັດ

ຣູປິຍສັງໂວຫາຣສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັດ໌] ໔. ໂກສິຍວັຄ ໑໐. ກຍວິກກຍສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

໑໐. ກຍວິກກຍສິກຂາບົທ

ວ່າດ້ວຍການຊື້ຂາຍ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໙໖] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິດ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣ ຊຳນານການຕັດຍິບຈີວອນ ທ່ານໄດ້ເອົາຜ້າເກົ່າໆທຳສັງຄາຜີແລ້ວຍ້ອມ ຈັດແຕ່ງຢ່າງດີແລ້ວໃຊ້ຫົ່ມ ສມັຍນັ້ນ ປຣິພາຊກຜູ້ນຶ່ງ ຫົ່ມຜ້າຣາຄາແພງເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານ ວ່າ "ສັງຄາຜີຂອງທ່ານງາມແມ່ນແທ້ໆແລກກັບຜ້າຂອງເຮົາເຖີດ" ທ່ານພຣະອຸປນັນທສາກຍ ບຸຕຣກ່າວວ່າ "ທ່ານຈົ່ງຮູ້ເອງເຖີດ" ປຣິພາຊກ ຕອບວ່າ "ຂ້າພະເຈົ້າຮູ້ ຂນ້ອຍ" ທ່ານພຣະອຸປນັນ ທສາກຍບຸຕຣຕົກລົງໃຫ້ໄປ ປຣິພາຊກຫົ່ມສັງຄາຜີຜືນນັ້ນໄປປຣິພາຊກາຣາມ ປຣິພາຊກທັງ ຫລາຍ ຖາມປຣິພາຊກນັ້ນວ່າ "ສັງຄາຜີຂອງທ່ານງາມແມ່ນແທ້ໆທ່ານໄດ້ມາແຕ່ໃດ" ເຂົາຕອບວ່າ "ຂ້າພະເຈົ້າເອົາຜ້ານັ້ນແລກມາ" ພວກປຣິພາຊກກ່າວວ່າ "ສັງຄາຜີຜືນນີ້ຈະທົນຢູ່ໄດ້ຈັກມື້ ຜ້າຜືນນັ້ນ ດີກວ່າ" ສມັຍນັ້ນ ປຣິພາຊກນັ້ນຄິດວ່າ "ປຣິພາຊກທັງຫລາຍກ່າວແມ່ນແທ້ສັງຄາຜີຜືນນີ້ຈະທົນຢູ່ ໄດ້ຈັກມື້ ຜ້າຜືນນັ້ນດີກວ່າ" ຈຶ່ງກັບໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວ ໄດ້ກ່າວກັບທ່ານວ່າ "ເອົາສັງຄາຜີຂອງທ່ານໄປ ຈົ່ງໃຫ້ຜ້າຂອງເຮົາຄືນມາ" ທ່ານພຣະອຸປນັນ ທສາກຍບຸຕຣກ່າວວ່າ "ເຮົາກ່າວກັບທ່ານແລ້ວບໍ່ແມ່ນບໍວ່າ 'ທ່ານຈົ່ງຮູ້ເອງເຖີດ' ເຮົາຈະບໍ່ໃຫ້" ປຣິພາຊກນັ້ນຕຳຫນິ ປະນາມ ໂພນທະນາວ່າ "ແມ່ນພວກຄຣືຫັສຖ໌ຍັງຄືນຂອງໃຫ້ຄຣືຫັສຖ໌ຜູ້ ເດືອດຮ້ອນ ບັພຊິຕບໍ່ຍອມຄືນຂອງໃຫ້ບັພຊິຕດ້ວຍກັນຫລື" ພວກກິກສຸໄດ້ຍິນປຣິພາຊກນັ້ນ ຕຳຫນິ ປະນາມ ໂພນທະນາ ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣຈຶ່ງທຳການຊື້ຂາຍກັບປຣິພາຊກລະ" ຄັນກິກສຸເຫລົ່ານັ້ນຕຳຫນິ ທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄ ໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າທ່ານທຳການຊື້ຂາຍກັບປຣິພາຊົກ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທຸເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງທຳການຊື້ຂາຍກັບປຣິພາຊົກລະ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໘໔] ກໍ ກິກຂຸໃດທຳການຊື້ຂາຍມີປະການຕ່າງໆຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໕໘໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມີປະການຕ່າງໆໄດ້ແກ່ ຈີວອນ ບິນທບາຕ ເສນາສນະແລະຄິລານປັຈຈັຍເກສັຊບໍຣິຂານ ໂດຍທີ່ສຸດຈົນເມື່ອກ້ອນຈຸຣນະ ໄມ້ຊຳຣະແຂ້ວຫລືດ້າຍຊາຍຜ້າ

ຄຳວ່າ ທຳການຊື້ຂາຍ ຄື ກິກຂຸເວົ້າເປັນເຊີງບັງຄັບວ່າ "ທ່ານຈົ່ງໃຫ້ຂອງສິ່ງນີ້ ດ້ວຍຂອງນີ້ ນຳຂອງສິ່ງນີ້ມາດ້ວຍຂອງນີ້ ແລກປ່ຽນຂອງສິ່ງນີ້ດ້ວຍຂອງນີ້ ຈ່າຍຂອງສິ່ງນີ້ດ້ວຍຂອງນີ້" ດັ່ງນີ້ ເປັນຕົ້ນ ຕ້ອງອາບັຕິທຸກກຸຍ ກໍຕໍ່ເມື່ອສິ່ງຂອງຂອງຕົ**ນຕກ**ໄປຢູ່ໃນມືຂອງຄົນອື່ນ ແລະສິ່ງຂອງຂອງຄົນອື່ນຕົກມາຢູ່ໃນມືຂອງຕົນຈັດເປັນການຊື້ຂາຍກັນ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກຂຸທັງຫລາຍ ກິກຂຸເພິງສລະຂອງທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຂອງທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງໜຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າໄດ້ທຳການຊື້ຂາຍມີປະການຕ່າງໆສິ່ງຂອງນີ້ຂອງຜູ້ຂ້າເປັນນິສສັຄຄິຍ໌ ຜູ້ຂ້າສລະສິ່ງຂອງນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິ່ງຮັບອາບັຕິ ຄັນຮັບອາບັຕິແລ້ວ ເພິ່ງຄືນສິ່ງຂອງທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສິ່ງຂອງນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ສິ່ງຂອງນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຓະ

ພິກຂຸຮູບນັ້ນເພິ່ງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງໜຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າທຳການຊື້ຂາຍມີປະການຕ່າງໆສິ່ງຂອງນີ້ຂອງຜູ້ຂ້າເປັນນິສສັຄຄິຍ໌ ຜູ້ຂ້າສລະສິ່ງຂອງນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນສິ່ງຂອງທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ສິ່ງຂອງນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິ່ງໃຫ້ສິ່ງຂອງນີ້ແກ່ພິກຂຸຊື່ນີ້"

ສລະແກ່ບຸຄຄົລ

ພິກຂຸຮູບນັ້ນເພິ່ງເຂົ້າໄປຫາພິກຂຸຮູບໜຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງໜຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຜູ້ຂ້າທຳການຊື້ຂາຍມີປະການຕ່າງໆສິ່ງຂອງນີ້ຂອງຜູ້ຂ້າເປັນນິສສັຄຄິຍ໌ ຜູ້ຂ້າສລະສິ່ງຂອງນີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກຂຸຜູ້ຮັບເພິ່ງຮັບອາບັຕິແລ້ວຄືນສິ່ງຂອງທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສິ່ງຂອງນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄິຍປາຈິຕຕີຍ໌

[໕໙໓] ເປັນການຊື້ຂາຍ ພິກຂຸສຳຄັນວ່າເປັນການຊື້ຂາຍ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເປັນການຊື້ຂາຍ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເປັນການຊື້ຂາຍ ພິກຂຸສຳຄັນວ່າບໍ່ໄດ້ເປັນການຊື້ຂາຍ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກົຏ

ບໍ່ໄດ້ເປັນການຊື້ຂາຍ ພິກຂຸສຳຄັນວ່າເປັນການຊື້ຂາຍ ຕ້ອງອາບັຕິທຸກກົຏ

ບໍ່ໄດ້ເປັນການຊື້ຂາຍ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ບໍ່ໄດ້ເປັນການຊື້ຂາຍ ພິກຂຸສຳຄັນວ່າບໍ່ໄດ້ເປັນການຊື້ຂາຍ ບໍ່ຕ້ອງອາບັຕິ

ອະນາປັດຕິວານ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕ລ໗] ໑. ພິກຂຸຖາມລາຄາ

໒. ພິກຂຸບອກກັປປິຍະການົກ

໓. ພິກຂຸກ່າວວ່າ "ເຮົາມີຂອງນີ້ ແຕ່ເຮົາຕ້ອງການຂອງນີ້ ແລະນີ້"

໔. ພິກຂຸວິກົລຈິດ

໕. ພິກຂຸຕົ້ນບັນຍັດ

ກະຍະວິກກະຍະສິກຂາບົດທີ ໑໐ ຈົບ

ໂກສິຍະວັກທີ ໑ ຈົບ

ພຣະວິນັຍປິດົກ ມະຫາວິພັງຄ໌ [໔. ນິສສັຄຄີຍະກັນຫ໌] ໒. ໂກສິຍະວັກ ຮວ

ນສິກຂາບົດທີ່ມີໃນໂກສິຍະວັກ

ຮວມສິກຂາບົດທີ່ມີໃນໂກສິຍະວັກ

ໂກສິຍະວັກມີ ໑໐ ສິກຂາບົດ ຄື

໑. ໂກສິຍະສິກຂາບົດ ວ່າດ້ວຍການທຳສັນຖັດໃຍໄໝ

໒. ສຸທຸທະກາຣຸກະສິກຂາບົດ ວ່າດ້ວຍການທຳສັນຖັດໂດຍໃຊ້ຂົນຈຽມດຳລ້ວນ

໓. ເທ່ວະພາຄະສິກຂາບົດ ວ່າດ້ວຍການທຳສັນຖັດໂດຍໃຊ້ຂົນຈຽມດຳ ໒ ສ່ວນ

໔. ຈັພພັສສະສິກຂາບົດ ວ່າດ້ວຍການເກັບສັນຖັດໄວ້ ໖ ປີ

໕. ນິສີທະນະສັນຖະຕະສິກຂາບົດ ວ່າດ້ວຍການທຳສັນຖັດສຳລັບຮອງນັ່ງ

໖. ເອຣຸກະໂລມະສິກຂາບົດ ວ່າດ້ວຍການຮັບຂົນຈຽມ

໗. ເອຣຸກະໂລມະໂລວາປະນະສິກຂາບົດ ວ່າດ້ວຍການໃຫ້ຊັກຂົນຈຽມ

໘. ຣູປິຍະສິກຂາບົດ ວ່າດ້ວຍການຮັບຣູປິຍະ

໙. ຣູປິຍະສັງໂວຫາຣະສິກຂາບົດ ວ່າດ້ວຍການແລກປ່ຽນຣູປິຍະ

໑໐. ກຍວິກກຍສິກຂາບົທ ວ່າດ້ວຍການຊື້ຂາຍ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັຒທ໌] ໓. ປັຕຕວັຄ ໑. ປັຕຕິສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

ໝວດວ່າດ້ວຍບາຕຣ

໑. ປັຕຕສິກຂາບົທ

ວ່າດ້ວຍບາຕຣ

ເຣື້ອງພຣະຉັພພັຄຄີຍ໌

[໕໙໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຊຸຉັພພັຄຄີຍ໌ທຳການສະສົມບາຕຣໄວ້ເປັນອັນມາກ ພວກຊາວບ້ານຍ່າງທ່ຽວຕາມວິຫາຣເຫັນເຂົ້າຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຓະ ເຊື້ອສາຍສາກຍບຸຕຣຈຶ່ງທຳການສະສົມບາຕຣໄວ້ເປັນອັນມາກ ຈະຂາຍບາຕຣຫລືຕັ້ງຮ້ານຂາຍການຊນະດິນເຜົາຫລື" ພິກຊຸທັງຫລາຍໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກຊຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຊຸຉັພພັຄຄີຍ໌ຈຶ່ງຊົງອຕິເຣກບາຕຣ໑ ລະ" ຄັນພິກຊຸເຫລົ່ານັ້ນຕຳໜິພວກພິກຊຸຉັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງฆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງฆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຊຸຉັພພັຄຄີຍ໌ວ່າ "ພິກຊຸທັງຫລາຍ ຊາບວ່າພວກທ່ານຊົງອຕິເຣກບາຕຣແມ່ນແທ້ບໍ" ພວກພິກຊຸຉັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຣເຈົ້າຊົງຕຳໜິວ່າ "ຯລຯ ໂມฆບຸຣຸษທັງຫລາຍ ຈັ່ງໃດພວກທ່ານຈຶ່ງຊົງອຕິເຣກບາຕຣໄວ້ລະ ໂມฆບຸຣຸษທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມ

ໃສ່ຢູ່ແລ້ວໃຫ້ເຫລື້ອມໃສ່ຍິ່ງຂື້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຸຫັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ເຊີງອັນຖະ :

໑ ອຕິເຣກບາຕຣ ຄືບາຕຣນອກຈາກບາຕຣອະທິຖານທີ່ກິກຸຕັ້ງໄວ້ເປັນບໍຣິຂາຣໃຊ້ບິດຈາບາຕພຽງໃບດຽວ (ເບິ່ງຂໍ້ ໓໐໔ ໜ້າ ໑໘໔)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໓. ປັຕຕວັຄ ໑. ປັຕຕສິກຂາບົທ ພຣະອນຸບັນຍັດ

ພຣະບັນຍັດ

[໕໙໙] ກໍ ກິກຸໃດຊົງອຕິເຣກບາຕຣ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຸທັງຫລາຍຢ່າງນີ້

ເຣື່ອງພຣະລັພພັຄຄີຍ໌ ຈົບ

ເຣື້ອງພຣະອານົນທ໌

[໖໐໐] ສມັຍນັ້ນ ອຕິເຣກບາຕຣເກີດຂື້ນແກ່ທ່ານພຣະອານົນທ໌ ທ່ານພຣະອານົນທ໌ຕ້ອງການຈະຖວາຍອຕິເຣກບາຕຣນັ້ນແກ່ທ່ານພຣະສາຣີບຸຕຣ ແຕ່ທ່ານພຣະສາຣີບຸຕຣຢູ່ທີ່ເມືອງສາເກຕ ເທື່ອນັ້ນທ່ານພຣະອານົນທ໌ໄດ້ມີຄວາມຄິດວ່າ "ພຣະຜູ້ມີພຣະກາຄຊົງບັນຍັດສິກຂາບົທໄວ້ວ່າ 'ກິກຸບໍ່ເພິງຊົງອຕິເຣກບາຕຣ' ກໍອຕິເຣກບາຕຣນີ້ເກີດຂື້ນແກ່ເຮົາ ເຮົາຕ້ອງການຈະຖວາຍທ່ານພຣະສາຣີບຸຕຣແຕ່ທ່ານຢູ່ທີ່ເມືອງສາເກຕ ເຮົາຈະເພິງປະຕິບັດຢ່າງໃດນໍ" ຈຶ່ງໄດ້ນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະຜູ້ມີພຣະກາຄຕຣັສຖາມວ່າ "ອີກດົນປານໃດ ສາຣີບຸຕຣຈະກັບມາ" ພຣະອານົນທ໌ຂາບທູລວ່າ "ອີກ ໙ ຫລື ໑໐ ວັນຈຶ່ງຈະກັບມາ ພຣະພຸທຣເຈົ້າຂ້າ"

ຊົງອນຸຍາຕອຕິເຣກບາຕຣ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກຸທັງ

ຫລາຍອ່າ "ພິກຂຸທັງຫລາຍ ເຮົາອນຸຍາດໃຫ້ຊົງອຕິເຣກບາຕຣໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະອນຸບັນຍັດ

[໖໐໑] ພິກຂຸເພິ່ງຊົງອຕິເຣກບາຕຣໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ ໃຫ້ເກີນກຳໜົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິດຕີຍ໌

ເລື່ອງພຣະອານົນທ໌ ຈົບ

ພຣະວິນັຍປີດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໓. ປັດຕວັຄ ໑. ປັດຕິສິກຂາບົທ
ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໖໐໔] ຄຳວ່າ ໑໐ ວັນເປັນຢ່າງຫລາຍ ຄື ຄອບຄອງໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ
ທີ່ຊື່ວ່າ ອຕິເຣກບາຕຣ ໄດ້ແກ່ ບາຕຣທີ່ບໍ່ໄດ້ອະທິຖານ ບໍ່ໄດ້ວິກັປ
ທີ່ຊື່ວ່າ ບາຕຣ ໄດ້ແກ່ບາຕຣ ໒ ຊນິດ ຄື ບາຕຣເຫລັກ ແລະບາຕຣດິນເຜົາ

ຂນາດບາຕຣ

ບາຕຣມີ ໓ ຂນາດ ຄື (໑) ບາຕຣຂນາດໃຫຍ່ (໒) ບາຕຣຂນາດກາງ (໓) ບາຕຣຂນາດນ້ອຍ
ທີ່ຊື່ວ່າ ບາຕຣຂນາດໃຫຍ່ ຈຸເຂົ້າສຸກຈາກເຂົ້າສາຣ ໒ ທະນານ ຈຸຂອງຄ້ຽວເສຍນຶ່ງສ່ວນສີ່໑ ຈຸກັບເຂົ້າພໍອສົມຄວຣແກ່ເຂົ້າສຸກນັ້ນ
ທີ່ຊື່ວ່າ ບາຕຣຂນາດກາງ ຈຸເຂົ້າສຸກຈາກເຂົ້າສາຣ ໑ ທະນານ ຈຸຂອງຄ້ຽວເສຍນຶ່ງສ່ວນສີ່ ຈຸກັບເຂົ້າພໍສົມຄວຣແກ່ເຂົ້າສຸກນັ້ນ
ທີ່ຊື່ວ່າ ບາຕຣຂນາດນ້ອຍ ຈຸເຂົ້າສຸກຈາກເຂົ້າສາຣເຄິ່ງທະນານ ຈຸຂອງຄ້ຽວເສຍນຶ່ງສ່ວນສີ່ ຈຸກັບເຂົ້າພໍສົມຄວຣແກ່ເຂົ້າສຸກນັ້ນ
ບາຕຣມີຂນາດໃຫຍ່ກວ່ານັ້ນເປັນບາຕຣທີ່ໃຊ້ບໍ່ໄດ້ ບາຕຣມີຂນາດນ້ອຍກວ່ານັ້ນກໍເປັນບາຕຣທີ່ໃຊ້ບໍ່ໄດ້

ຄຳວ່າ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ຄວາມວ່າ ເມື່ອຮຸ່ງອຣຸຕອັນທີ ໑໑ ບາຕຣນ່ອຍນັ້ນ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກຂຸທັງຫລາຍ ກິກຂຸເພິງສລະບາຕຣທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ຄືເສຍນຶ່ງສ່ວນສີ່ຂອງເຂົ້າສຸກ (ວິ. ອ. ໒/໕໐໒/໑໑໕)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຕ໌] ໖. ປັຕຕວັຄ ໑. ປັຕຕິສິກຂາບົທ
ສິກຂາບົທວິກັງຄ໌

ວິທີສລະບາຕຣທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ບາຕຣນ່ອຍນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ສົງຄ໌” ຄັນສລະແລ້ວເພິງສະແດງອາບັຕິ
ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນບາຕຣທີ່ທ່ານສລະໃຫ້ດ້ວຍປັຕຕິກັມວາຈາວ່າ

[໕໐໖] “ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ບາຕຣນ່ອຍນີ້ຂອງກິກຂຸຊື່ນີ້ ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວເພິງໃຫ້ບາຕຣນ່ອຍນີ້ແກ່ກິກຂຸຊື່ນີ້”

ສລະແກ່ຄຕະ

[໕໐໔] ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນບາຕຣນ່ອຍນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ທ່ານທັງຫລາຍ” ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນບາຕຣທີ່ທ່ານສລະໃຫ້ດ້ວຍກ່າວວ່າ

[໕໐໕] “ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ບາຕຣນ່ອຍນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແລ້ວແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ບາຕຣນ່ອຍນີ້ແກ່ກິກຂຸຊື່ນີ້”

ສລະແກ່ບຸຄຄົລ

[໕໐໕] ພິກຂຸຮູບນັ້ນເພິ່ງເຂົ້າໄປຫາພິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ບາຕຣນ່ອຍນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄິຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກຂຸຜູ້ຮັບສລະນັ້ນເພິ່ງຮັບອາບັຕິ ແລ້ວຄືນບາຕຣທີ່ສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າໃຫ້ບາຕຣນ່ອຍນີ້ແກ່ທ່ານ"

ພຣະວິນັຍປິຎົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຓຑ໌] ໓. ປັຕຕວັຄ ໑. ປັຕຕສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໐໗] ບາຕຣທີ່ເກີນກຳຫນົດ ໑໐ ວັນ ພິກຂຸສຳຄັນວ່າເກີນກຳຫນົດແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ເກີນກຳຫນົດ ໑໐ ວັນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ເກີນກຳຫນົດ ໑໐ ວັນ ພິກຂຸສຳຄັນວ່າຍັງບໍ່ເກີນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ຍັງບໍ່ໄດ້ອະທິຖານ ພິກຂຸສຳຄັນວ່າອະທິຖານແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ຍັງບໍ່ໄດ້ວິກັປ ພິກຂຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣຍັງບໍ່ໄດ້ສລະ ພິກຂຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣຍັງບໍ່ສູນຫາຍ ພິກຂຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣຍັງບໍ່ຈິບຫາຍ ພິກຂຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣຍັງບໍ່ແຕກ ພິກຂຸສຳຄັນວ່າບາຕຣແຕກແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣຍັງບໍ່ຖືກໂຈຣຊິງເອົາໄປ ພິກຂຸສຳຄັນວ່າຖືກຊິງເອົາໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກົຏ

ບາຕຣທີ່ເປັນນິສສັຄຄີຍ໌ ພິກຂຸຍັງບໍ່ສລະ ໃຊ້ສອຍ ຕ້ອງອາບັຕິທຸກກົຏ

ບາຕຣທີ່ຍັງບໍ່ເກີນກຳຫນົດ ໑໐ ວັນ ພິກຂຸສຳຄັນວ່າເກີນກຳຫນົດແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກົຏ

ບາຕຣທີ່ຍັງບໍ່ເກີນກຳຫນົດ ໑໐ ວັນ ພິກຂຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິທຸກກົຏ

ບາຕຣທີ່ຍັງບໍ່ເກີນກຳຫນົດ ໑໐ ວັນ ກິກຂຸສຳຄັນວ່າຍັງບໍ່ເກີນກຳຫນົດ ໃຊ້ສອຍ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໓. ປັຕຕວັຄ ໑. ປັຕຕິສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໐໗] ໑. ກິກຂຸຜູ້ອະທິຖານພາຍໃນ ໑໐ ວັນ

໒. ກິກຂຸຜູ້ວິກັປໄວ້ພາຍໃນ ໑໐ ວັນ

໓. ກິກຂຸຜູ້ສລະໃຫ້ໄປພາຍໃນ ໑໐ ວັນ

໔. ກິກຂຸຜູ້ມີບາຕຣສູນຫາຍພາຍໃນ ໑໐ ວັນ

໕. ກິກຂຸຜູ້ມີບາຕຣຈິບຫາຍພາຍໃນ ໑໐ ວັນ

໖. ກິກຂຸຜູ້ມີບາຕຣແຕກພາຍໃນ ໑໐ ວັນ

໗. ກິກຂຸຜູ້ມີບາຕຣຖືກໂຈຣຊີງເອົາໄປພາຍໃນ ໑໐ ວັນ

໘. ກິກຂຸຜູ້ມີບາຕຣຖືກຖືເອົາໄປໂດຍວິສາສະພາຍໃນ ໑໐ ວັນ

໙. ກິກຂຸວິກົລຈິຕ

໑໐. ກິກຂຸຕົ້ນບັນຍັດ

ສມັຍນັ້ນ ພວກກິກຂຸຈັພພັຄຄີຍ໌ບໍ່ຍອມຄືນບາຕຣທີ່ມີຜູ້ສລະໃຫ້ ກິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະອົງຄ໌ຮັບສັ່ງວ່າ “ກິກຂຸທັງຫລາຍ ບາຕຣທີ່ກິກຂຸສລະໃຫ້ແລ້ວ ຈະບໍ່ຄືນໃຫ້ບໍ່ໄດ້ ກິກຂຸໃດບໍ່ຄືນ ຕ້ອງອາບັຕິທຸກກຏ”

ປັຕຕສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໓. ປັຕຕວັຄ ໒. ອູນປັຍຈພັນຄນສິກຂາບົທ ນິທານວັຕຖຸ

໖. ປັຕຕວັຄ

໔. ອູນປັຢຈພັນສນສິກຂາບົທ

ວ່າດ້ວຍບາຕຣມີຮອຍສ້ອມແປງໜ້ອຍກວ່າ ໕ ບ່ອນ

ເຣື້ອງພິກຂຸຫລາຍຮູບ

[໘໐໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຘເຈົ້າປະທັບຢູ່ ຓະ ນິໂຄຣຘາຣາມ ເຂຕກຸງກບິລພັສດຸ໌ ແຄວ້ນສັກກະ ຄັ້ງນັ້ນ ນາຍຊ່າງໝໍ້ຄົນໜຶ່ງປວາຣຕາພິກຂຸທັງຫລາຍໄວ້ວ່າ "ຜູ້ຂ້າຈະຖວາຍບາຕຣ ແກ່ພຣະຄຸຓເຈົ້າຜູ້ຕ້ອງການບາຕຣ"

ສມັຍນັ້ນ ພິກຂຸທັງຫລາຍບໍ່ຮູ້ປະມານ ອອກປາກຂໍບາຕຣເປັນອັນມາກ ພວກພິກຂຸຜູ້ມີບາຕຣຂນາດ ນ້ອຍກໍອອກປາກຂໍບາຕຣຂນາດໃຫຍ່ ພວກພິກຂຸຜູ້ມີບາຕຣຂນາດໃຫຍ່ກໍອອກປາກຂໍບາຕຣຂນາດ ນ້ອຍ ນາຍຊ່າງມົວເຮັດບາຕຣເປັນອັນມາກໃຫ້ພິກຂຸທັງຫລາຍ ຈົນບໍ່ສາມາດທຳການຄ້າຂາຍຢ່າງ ອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປນຳດ້ວຍ ພວກຊາວບ້ານຕຳໜິ ປະ ນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມຓະເຊື້ອສາຍສາກຍບຸຕຣຈຶ່ງບໍ່ຮູ້ປະມານ ອອກປາກຂໍ ບາຕຣເປັນອັນມາກລະ ນາຍຊ່າງມົວເຮັດບາຕຣເປັນອັນມາກໃຫ້ພິກຂຸທັງຫລາຍຈົນບໍ່ສາມາດທຳ ການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປດ້ວຍ" ພວກພິກຂຸ ໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທນາວ່າ "ຈັ່ງໃດພິກຂຸທັງຫລາຍຈຶ່ງບໍ່ຮູ້ປະມານອອກປາກຂໍບາຕຣເປັນອັນມາກລະ" ຄັນພິກຂຸ ທັງຫລາຍຕຳໜິພິກຂຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ ພາຄໃຫ້ຊົງຊາບ

ຊົງຫ້າມຂໍບາຕຣ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸ ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກພິກຂຸບໍ່ຮູ້ປະມານ ອອກປາກຂໍບາຕຣເປັນອັນມາກ ແມ່ນແທ້ບໍ" ພິກຂຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທຘເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຘເຈົ້າຊົງຕຳໜິວ່າ "ຯລຯ ພິກຂຸທັງຫລາຍ ຈັ່ງໃດໂມຄບຸຣຸສເຫລົ່ານັ້ນຈຶ່ງບໍ່ຮູ້ປະມານ ອອກປາກຂໍບາຕຣລະ ພິກຂຸທັງ ຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຕຳໜິແລ້ວຈຶ່ງຊົງສະແດງທັມມີກຖາ

ແລ້ວຕຣັສກັບກິກສຸທັງຫລາຍວ່າ "ກິກສຸທັງຫລາຍ ກິກສຸບໍ່ເພິງອອກປາກຂໍບາຕຣ ຮູບໃດຂໍ ຕ້ອງອາບັຕິທຸກກຕ"

ເຣື້ອງກິກສຸຫລາຍຮູບ ຈົບ

ຊົງອນຸຍາຕໃຫ້ຂໍບາຕຣໄດ້

[ຝ໑໐] ສມັຍນັ້ນ ບາຕຣຂອງກິກສຸຮູບນຶ່ງແຕກ ທ່ານມີຄວາມຢຳເກງວ່າ "ພຣະຜູ້ມີພຣະກາຄຊົງຫ້າມການອອກປາກຂໍບາຕຣ" ຈຶ່ງບໍ່ອອກປາກຂໍບາຕຣ ຫງວຣັບບິຕຫບາຕດ້ວຍມືທັງສອງ ພວກຊາວບ້ານຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງຫງວຣັບບິຕຫບາຕດ້ວຍມືທັງສອງເຫມືອນພວກເດັຽຣະຖີຍ໌ລະ" ພວກກິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຣັບສັ່ງກັບກິກສຸທັງຫລາຍວ່າ "ກິກສຸທັງຫລາຍ ເຣົາອນຸຍາຕໃຫ້ກິກສຸຜູ້ມີບາຕຣເສັຽຫລືບາຕຣແຕກ ອອກປາກຂໍບາຕຣໄດ້"

ເຣື້ອງພຣະຈັພພັຄຄີຍ໌

[ຝ໑໑] ສມັຍນັ້ນ ພວກກິກສຸຈັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕໃຫ້ກິກສຸຜູ້ມີບາຕຣເສັຽຫລືບາຕຣແຕກອອກປາກຂໍບາຕຣໄດ້" ພວກທ່ານມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣໂຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ໂຂະລ່ອນ ອອກປາກຂໍບາຕຣມາເປັນອັນມາກ

ສມັຍນັ້ນ ນາຍຊ່າງຫມໍ້ມົວເຮັດບາຕຣເປັນອັນມາກໃຫ້ກິກສຸທັງຫລາຍຢູ່ຢ່າງນັ້ນ ຈົນບໍ່ສາມາດຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣກັຣຍາກໍເລີຍລຳບາກໄປດ້ວຍ ພວກຊາວບ້ານຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງບໍ່ຮູ້ປະມານອອກປາກຂໍບາຕຣເປັນອັນມາກລະ ນາຍຊ່າງຫມໍ້ມົວແຕ່ເຮັດບາຕຣເປັນອັນມາກໃຫ້ກິກສຸທັງຫລາຍຈົນບໍ່ສາມາດທຳການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣກັຣຍາກໍເລີຍລຳບາກໄປດ້ວຍ" ພວກກິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກສຸຈັພພັຄຄີຍ໌ມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣໂຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ອອກປາກຂໍບາຕຣມາ

ເປັນອັນມາກລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸຈັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣໂຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ກໍອອກປາກຂໍບາຕຣມາເປັນອັນມາກ ແມ່ນແທ້ບໍ" ພວກພິກສຸຈັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານທັງທີ່ມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣໂຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ອອກປາກຂໍບາຕຣມາເປັນອັນມາກລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[ຝ໑໔] ກໍ ພິກສຸໃດມີບາຕຣທີ່ມີຮອຍສ້ອມຫນ້ອຍກວ່າ ໕ ບ່ອນ໑ ຂໍບາຕຣໃຫມ່ນ່ວຍອື່ນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ພິກສຸນັ້ນເພິ່ງສລະບາຕຣນ່ວຍນັ້ນໃນພິກສຸບໍຣິສັດ ບາຕຣນ່ວຍສຸດທ້າຍອັນພິກສຸບໍຣິສັດນັ້ນເພິ່ງມອບໃຫ້ພິກສຸນັ້ນດ້ວຍສັ່ງວ່າ "ພິກສຸ ບາຕຣນີ້ເປັນຂອງທ່ານ ເພິ່ງໃຊ້ຈົນກວ່າຈະແຕກ" ນີ້ເປັນການທຳທີ່ສົມຄວຣໃນເຣື້ອງນັ້ນ

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ອູນປຢຸຈພນຸສເນນ ມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ ຄືບາຕຣແຫງແລ້ວໃຊ້ເຫລັກເຈາະບາຕຣ ແລ້ວເອົາເຊືອກດ້າຍຫລືລວດຍິບຜູກແລ້ວອັດດ້ວຍດີບຸກຫລືຢາງ (ວິ. ອ. ໒/ຝ໑໔-ຝ/໔໔໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕຫ໌] ໓. ປັຕຕວັຄ ໔. ອູນປັຢຈພັນລນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໓໑໓] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄໍາວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ບາຕຣທີ່ຊື່ວ່າ ມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ ຄື ບາຕຣບໍ່ມີຮອຍສ້ອມ ຫລືມີຮອຍສ້ອມແປງພຽງ ໑ ບ່ອນ ມີຮອຍສ້ອມພຽງ ໒ ບ່ອນ ມີຮອຍສ້ອມພຽງ ໓ ບ່ອນ ມີຮອຍສ້ອມແປງພຽງ ໔ ບ່ອນ

ບາຕຣທີ່ຊື່ວ່າ ບໍ່ມີຮອຍສ້ອມແປງ ໄດ້ແກ່ ບາຕຣບໍ່ມີຮອຍແຫງເຖິງ ໒ ນີ້ວ

ບາຕຣທີ່ຊື່ວ່າ ມີຮອຍສ້ອມແປງ ໄດ້ແກ່ ບາຕຣມີຮອຍແຫງຍາວ ໒ ນີ້ວ

ບາຕຣທີ່ຊື່ວ່າ ໃຫມ່ ພຣະຜູ້ມີພຣະກາຄຕຣັສມຸ່ງເອົາການອອກປາກຂໍມາ

ຄໍາວ່າ ຂໍ ຄື ອອກປາກຂໍ ຕ້ອງອາບັຕິທຸກກຸຍເພາະພຍາຍາມ ບາຕຣເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈໍາຕ້ອງສລະໃນທ່າມກາງສົງຄ໌

ກິກຂຸທຸກຮູປເພິງຖືບາຕຣທີ່ອະທິຖານໄປປະຊຸມ ບໍ່ຄວຣອະທິຖານບາຕຣຄຸຕກາພບໍ່ດີ ດ້ວຍຄິດວ່າ “ເຮົາຈະເອົາບາຕຣມີຄ່າມາກ” ຖ້າອະທິຖານບາຕຣຄຸຕກາພບໍ່ດີດ້ວຍຄິດວ່າ “ເຮົາຈະເອົາບາຕຣມີຄ່າມາກ” ຕ້ອງອາບັຕິທຸກກຸຍ

ກິກຂຸທັງຫລາຍ ກິກຂຸເພິງສລະບາຕຣທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະບາຕຣທີ່ເປັນນິສສັຄຄີຍ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບັງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຜູ້ຂ້າມີບາຕຣມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ ຂໍບາຕຣນ່ອຍນີ້ມາ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ສົງຄ໌” ຄັນສລະແລ້ວເພິງສະແດງອາບັຕິ

ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ສົງຄ໌ເພິງແຕ່ງຕັ້ງກິກຂຸຜູ້ປະກອບດ້ວຍຄຸຕສົມບັຕ ໕ ຢ່າງໃຫ້ເປັນຜູ້ປ່ຽນບາຕຣ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕທ໌] ໓. ປັຕຕວັຄ ໒. ອູນປັຢຈພັນຄສິກຂາບົທ
ສິກຂາບົທວິພັງຄ໌

ຄຸຕສົມບັຕຂອງພິກຂຸຜູ້ປ່ຽນບາຕຣ ໕ ຢ່າງ

໑. ບໍ່ລຳອຽງເພາະຊອບ

໒. ບໍ່ລຳອຽງເພາະຊັງ

໓. ບໍ່ລຳອຽງເພາະຫລົງ

໔. ບໍ່ລຳອຽງເພາະຢ້ານ

໕. ຮູ້ຈັກວິທີວ່າເປັນອັນປ່ຽນຫລືບໍ່ເປັນອັນປ່ຽນ

ວິທີແຕ່ງຕັ້ງພິກຂຸຜູ້ປ່ຽນບາຕຣ ແລະກັມວາຈາແຕ່ງຕັ້ງ

ສົງຄ໌ເພິງແຕ່ງຕັ້ງຢ່າງນີ້ ຄືເບື້ອງຕົ້ນ ເພິງຂໍໃຫ້ພິກຂຸຮັບ ຄັນແລ້ວພິກຂຸຜູ້ສລາດສາມາດເພິງປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[ຝ໑໔] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຄ໌ພ້ອມແລ້ວເພິງສົມມຸດພິກຂຸນີ້ໃຫ້ເປັນຜູ້ປ່ຽນບາຕຣ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ປ່ຽນບາຕຣ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ປ່ຽນບາຕຣ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ພິກຂຸຊື່ນີ້ສົງຄ໌ແຕ່ງຕັ້ງໃຫ້ເປັນຜູ້ປ່ຽນບາຕຣ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

[ຝ໑໕] ພິກຂຸຜູ້ໄດ້ຮັບແຕ່ງຕັ້ງເພິງໃຫ້ປ່ຽນບາຕຣ ເພິງຮຽນພຣະເຖຣະວ່າ "ທ່ານຜູ້ຈະເຣີນ ທ່ານຈົ່ງປ່ຽນບາຕຣ" ຖ້າພຣະເຖຣະປ່ຽນ ກໍເພິງຖວາຍບາຕຣຂອງພຣະເຖຣະໃຫ້ພຣະເຖຣະຮູບທີ ໒ ປ່ຽນ ພິກຂຸຈະບໍ່ປ່ຽນເພາະຄວາມສົງສາຣທ່ານບໍ່ໄດ້ ພິກຂຸໃດບໍ່ຍອມປ່ຽນ ຕ້ອງອາບັຕິທຸກກຏ ບໍ່ຄວຣໃຫ້ພິກຂຸຜູ້ບໍ່ມີບາຕຣປ່ຽນ ຄວຣໃຫ້ປ່ຽນເລື່ອນລົງມາໂດຍວິທີນີ້ຈົນເຖິງພິກຂຸໃຫມ່ໃນສົງຄ໌ ບາຕຣນ້ອຍສຸດທ້າຍທ່າມກາງສົງຄ໌ຄວຣມອບແກ່ພິກຂຸນັ້ນດ້ວຍສັ່ງວ່າ "ບາຕຣນີ້ເປັນຂອງທ່ານ

ເພິ່ງໃຊ້ຈົນກວ່າຈະແຕກ”
ກິກຂຸນັ້ນບໍ່ຄວຣເກັບບາຕຣໄວ້ໃນທີ່ບໍ່ຄວຣ ບໍ່ຄວຣໃຊ້ສອຍໂດຍວິທີບໍ່ເຫມາະ ແລະບໍ່ຄວຣທອດຖິ້ມໂດຍຄິດວ່າ ‘ເຮັດຢ່າງໃດບາຕຣນ່ອຍນີ້ຈະເສັຽໄປ ຈົບຫາຍຫລືແຕກ’ ຖ້າທ່ານເກັບໄວ້ໃນທີ່ທີ່ບໍ່ເຫມາະສົມ ໃຊ້ສອຍບໍ່ຖືກວິທີຫລືປ່ອຍຖິ້ມ ຕ້ອງອາບັຕິທຸກກົຟ
ຄຳວ່າ ນີ້ເປັນການທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຟ໌] ໓. ປັຕຕວັຄ ໔. ອູນປັຢຈພັນລນສິກຂາບົທ ບົທກາຊນີຍ໌

ບົທກາຊນີຍ໌

ບາຕຣທີ່ບໍ່ມີຮອຍສ້ອມ

[໓໑໓] ກິກຂຸມີບາຕຣທີ່ບໍ່ມີຮອຍສ້ອມແປງ ຂໍບາຕຣທີ່ບໍ່ມີຮອຍສ້ອມແປງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໑ ບ່ອນ

ກິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ກິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມ ໔ ບ່ອນ

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໓ ບ່ອນ

ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໔ ບ່ອນ

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ບໍ່ມີຮອຍສ້ອມແປງ

ພິກຂຸນີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ພິກຂຸນີບາຕຣທີ່ບໍ່ມີຮອຍສ້ອມແປງ ຂໍບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກຂຸນີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໑ ບ່ອນ

ພິກຂຸນີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກຂຸນີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໒ ບ່ອນ

ພິກຂຸນີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກຂຸນີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມ ໓ ບ່ອນ

ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກຂຸນີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໔ ບ່ອນ

ພິກຂຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກຂຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ຍັງບໍ່ມີທີ່ສ້ອມແປງ

ພິກຂຸມີບາຕຣທີ່ຍັງບໍ່ມີທີ່ສ້ອມ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ພິກຂຸມີບາຕຣທີ່ຍັງບໍ່ມີທີ່ສ້ອມ ຂໍບາຕຣມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກຂຸມີບາຕຣທີ່ຍັງບໍ່ມີທີ່ສ້ອມ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ມີທີ່ສ້ອມ ໑ ບ່ອນ

ພິກຂຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ . . . ບາຕຣທີ່ມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກຂຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ມີທີ່ສ້ອມແປງ ໒ ບ່ອນ

ພິກຂຸມີບາຕຣທີ່ມີທີ່ສ້ອມ ໒ ບ່ອນ ຂໍບາຕຣບໍ່ມີຮອຍສ້ອມ . . . ບາຕຣທີ່ມີຮອຍສ້ອມ ໑ ບ່ອນແຫ່ງ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກຂຸມີບາຕຣທີ່ມີທີ່
ສ້ອມ ໒ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ມີທີ່ສ້ອມແປງ ໓ ບ່ອນ

ພິກຂຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣບໍ່ມີຮອຍສ້ອມ . . . ບາຕຣມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກຂຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ມີທີ່ສ້ອມແປງ ໔ ບ່ອນ

ພິກຂຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ . . . ບາຕຣທີ່ມີຮອຍສ້ອມ ໑ ບ່ອນ

. . . ບາຕຣທີ່ມີຮອຍສ້ອມ ໔ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ກິກຂຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ບໍ່ມີທີ່ສ້ອມແປງ

ກິກຂຸມີບາຕຣທີ່ບໍ່ມີທີ່ສ້ອມ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໔ ບ່ອນ . . . ບາຕຣມີຮອຍສ້ອມ ໓ ບ່ອນ . . . ກິກຂຸມີບາຕຣທີ່ບໍ່ມີທີ່ສ້ອມ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໑ ບ່ອນ

ກິກຂຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໔ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ກິກຂຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໔ ບ່ອນ

ກິກຂຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໔ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ກິກຂຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໓ ບ່ອນ

ກິກຂຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໔ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ກິກຂຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໔ ບ່ອນ

ກິກຂຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໔ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ກິກຂຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ອນາປັຕຕິວາຣ

ພິກษຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[ຝ໑໗] ໑. ພິກษຸມີບາຕຣສູນຫາຍ

໒. ພິກษຸມີບາຕຣແຕກ

໓. ພິກษຸຂໍຈາກຍາຕ

໔. ພິກษຸຂໍຈາກຜູ້ປວາຣຕາ

໕. ພິກษຸຂໍເພື່ອພິກษຸອື່ນ

໖. ພິກษຸຊື້ມາດ້ວຍຊັພຍ໌ຂອງຕົນ

໗. ພິກษຸວິກົລຈິຕ

໘. ພິກษຸຕົ້ນບັນຍັດ

ອູນປັຢຈພັນລນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຕທ໌] ໓. ປັຕຕວັຄ ໓. ກສັຊຊສິກຂາບົທ ນິທານ ວັຕຖຸ

໓. ປັຕຕວັຄ

໓. ເກສັຊຊສິກຂາບົທ

ວ່າດ້ວຍເກສັຊ

ເຣື້ອງພຣະປິລິນທວັຈຈະ

[ຝ໑໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະປິລິນທວັຈຈະປະສົງຄ໌ຈະທຳທີ່ຫລົບ ຈຶ່ງໃຫ້ພິກษຸ ທັງຫລາຍທຳຄວາມສະອາດເງື້ອມເຂົາໃນກຸງຣາຊຄຶຫ໌ ສມັຍນັ້ນ ພຣະເຈົ້າພິມພິສາຣຈອມທັພມຄລ ຣັຖໄດ້ສເດັຈເຂົ້າໄປຫາທ່ານພຣະປິລິນທວັຈຈະເຖິງທີ່ພັກ ຄັນເຖິງແລ້ວໄດ້ຊົງອພິວາທແລ້ວປະທັບ ນັ່ງ ຓະ ທີ່ສົມຄວຣ ພຣະເຈົ້າພິມພິສາຣຈອມທັພມຄລຣັຖຜູ້ປະທັບນັ່ງ ຓະ ທີ່ສົມຄວຣແລ້ວ ໄດ້ ຕຣັສຖາມທ່ານພຣະປິລິນທວັຈຈະວ່າ "ພຣະຄຸຓເຈົ້າໃຫ້ພິກษຸທັງຫລາຍເຮັດຫຍັງ" "ຂໍຖວາຍພຣະ ພອນ ອາຕມກາພປະສົງຄ໌ຈະທຳທີ່ຫລົບ ຈຶ່ງໃຫ້ພິກษຸທັງຫລາຍທຳຄວາມສະອາດເງື້ອມເຂົາ"

“ພຣະຄຸດເຈົ້າຕ້ອງການຄົນວັດແດ່ບໍ”

“ຂໍຖວາຍພຣະພອນ ພຣະຜູ້ມີພຣະພາຄບໍ່ຊົງອນຸຍາດໃຫ້ມີຄົນວັດ”

“ຖ້າເຊັ່ນນັ້ນ ພຣະຄຸດເຈົ້າເພິ່ງທູລຖາມພຣະຜູ້ມີພຣະພາຄແລ້ວບອກໂຍມດ້ວຍ”

ທ່ານພຣະປິລິນທວັຈຈະທູລສນອງພຣະດຳຣັສວ່າ “ຂໍຖວາຍພຣະພອນ ອາຕມາພາພຈະທຳຢ່າງນັ້ນ”

ສມັຍນັ້ນ ທ່ານພຣະປິລິນທວັຈຈະໄດ້ຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄລຣັຖເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາ ຈາກນັ້ນ ພຣະເຈົ້າພິມພິສາຣຈອມທັພມຄລຣັຖຊຶ່ງທ່ານພຣະປິລິນທວັຈຈະໄດ້ຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາແລ້ວ ໄດ້ສເດັຈລຸກຈາກຣາຊອາສນ໌ ຊົງອະພິວາທພຣະເຖຣະທຳປຣະທັກສິຕ(ວຽນໄປທາງຂວາ)ແລ້ວສເດັຈກັບໄປ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຊ໌] ໖. ປັຕຕວັຄ ໖. ໂກສິຊຊຸສິກຂາບົທ ນິທານວັຕຖຸ

ຊົງອນຸຍາດໃຫ້ມີຄົນເຮັດວຽກວັດ

[໘໑໙] ສມັຍນັ້ນ ທ່ານພຣະປິລິນທວັຈຈະສົ່ງທູຕໄປຍັງສຳນັກພຣະຜູ້ມີພຣະພາຄ ໃຫ້ຂາບທູລວ່າ “ພຣະພຸທລເຈົ້າຂ້າ ພຣະເຈົ້າພິມພິສາຣຈອມທັພມຄລຣັຖມີພຣະຣາຊປະສົງຄ໌ຈະຊົງຖວາຍຄົນວັດ ຂ້າພຣະພຸທລເຈົ້າຈະເພິ່ງປະຕິບັດຢ່າງໃດ” ລຳດັບນັ້ນ ພຣະຜູ້ມີພຣະພາຄ ຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສະແດງລັມມີກຖາ ຮັບສັ່ງກັບກິກຂຸທັງຫລາຍວ່າ “ເຮົາອນຸຍາດໃຫ້ມີຄົນວັດ” ແມ່ນຄັ້ງທີ ໒ ພຣະເຈົ້າພິມພິສາຣຈອມທັພມຄລຣັຖ ສເດັຈເຂົ້າໄປຫາທ່ານພຣະປິລິນທວັຈຈະເຖິງທີ່ພັກ ຄັນເຖິງແລ້ວໄດ້ຊົງອະພິວາທທ່ານພຣະປິລິນທວັຈຈະແລ້ວປະທັບນັ່ງ ຓະ ທີ່ສົມຄວຣ ພຣະເຈົ້າພິມພິສາຣຈອມທັພມຄລຣັຖຜູ້ປະທັບນັ່ງ ຓະ ທີ່ສົມຄວຣແລ້ວ ໄດ້ຕຣັສຖາມທ່ານພຣະປິລິນທວັຈຈະວ່າ “ພຣະຄຸດເຈົ້າ ພຣະຜູ້ມີພຣະພາຄຊົງອນຸຍາດໃຫ້ມີຄົນວັດແລ້ວຫລື” “ຂໍຖວາຍພຣະພອນ ຊົງອນຸຍາດແລ້ວ” “ຖ້າເຊັ່ນນັ້ນ ໂຍມຈະຖວາຍຄົນວັດແກ່ພຣະຄຸດເຈົ້າ” ທ້າວທ່ານຊົງໃຫ້ສັນຍາທີ່ຈະຖວາຍຄົນວັດແກ່ພຣະເຖຣະແຕ່ຊົງລືມ ເມື່ອເວລາຜ່ານໄປນານຊົງຣະນຶກໄດ້ ຕຣັສຖາມມຫາອມາຕຍ໌ຜູ້ສນອງຣາຊກິຈຄົນນຶ່ງວ່າ “ເຮົາຖວາຍຄົນວັດທີ່ໃຫ້ສັນຍາໄວ້ແກ່ພຣະຄຸດເຈົ້າແລ້ວຫລື” ມຫາອມາຕຍ໌ຂາບທູລວ່າ “ຂໍເດຊະ ຍັງບໍ່ໄດ້ຖວາຍຄົນວັດແກ່ພຣະຄຸດເຈົ້າເລີຍ” “ຜ່ານມາຈັກມື້ແລ້ວ” ມຫາອມາຕຍ໌ນັບຣາຕຣີແລ້ວຂາບທູລວ່າ “ຂໍເດຊະ ຜ່ານມາ ໕໐໐ ຣາຕຣີ” ພຣະເຈົ້າພິມ

ພິສາຣຈອມທັພມຄລຣັກຮັບສັ່ງວ່າ "ຖ້າຢ່າງນັ້ນ ຈົ່ງຖວາຍຄົນວັດ ໕໐໐ ຄົນ ແກ່ພຣະຄຸຫເຈົ້າ" ມຫາອມາຕຍ໌ຮັບພຣະຣາຊໂອງກາຣແລ້ວຈັດຄົນວັດໄປຖວາຍທ່ານພຣະປິລິນທວັຈຈະ ຈຳນວນ ໕໐໐ ຄົນ ຕັ້ງຫມູ່ບ້ານຂຶ້ນ ມາຕ່າງຫາກມີຊື່ຮຽກວ່າອາຣາມິກຄາມແດ່ ປິລິນທວັຈຈຄາມແດ່

[ຝ໔໐] ສມັຍນັ້ນ ທ່ານພຣະປິລິນທວັຈຈະເປັນພຣະປະຈຳຕະກູນໃນຫມູ່ບ້ານນັ້ນ ເຊົ້າມື້ນຶ່ງ ທ່ານຊົງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປບິຫຫບາຕໃນຫມູ່ບ້ານປິລິນທວັຈຈະ ສມັຍນັ້ນ ໃນຫມູ່ບ້ານນັ້ນກຳລັງມີມຫໍຣສົພ ພວກເດັກຍິງແຕ່ງກາຍປະດັບດອກໄມ້ຫລິ້ນຢູ່ ພໍດີທ່ານພຣະປິລິນທວັຈຈະທຽວບິຫຫບາຕມາຕາມລຳດັບໃນຫມູ່ບ້ານປິລິນທວັຈຈະ ມາເຖິງເຮືອນຄົນວັດຄົນນຶ່ງ ຄັນເຖິງແລ້ວໄດ້ນັ່ງເທິງອາສນະທີ່ເຂົາຈັດຖວາຍ ຂຫະນັ້ນ ລິດາຂອງສຕຣີຄົນວັດເຫັນພວກເດັກອື່ນແຕ່ງກາຍປະດັບດອກໄມ້ຈຶ່ງຮ້ອງໄຫ້ ຂໍວ່າ "ພໍ່ແມ່ໂປຣດໃຫ້ດອກໄມ້ ໂປຣດໃຫ້ເຄື່ອງປະດັບແກ່ຂນ້ອຍດ້ວຍ" ພຣະເຖຣະຖາມສຕຣີນັ້ນວ່າ "ເດັກຄົນນີ້ຢາກໄດ້ຫຍັງ" ນາງຕອບວ່າ "ທ່ານຜູ້ຈະເຣີນ ເດັກ ນ້ອຍຄົນນີ້ເຫັນພວກເດັກນ້ອຍອື່ນແຕ່ງກາຍປະດັບດອກໄມ້ ຈຶ່ງຮ້ອງໄຫ້ ຂໍພວງດອກໄມ້ ແລະ ເຄື່ອງປະດັບວ່າ 'ພໍ່ແມ່ໂປຣດໃຫ້ດອກໄມ້ ໂປຣດໃຫ້ເຄື່ອງປະດັບແກ່ຂນ້ອຍດ້ວຍ' ເຮົາຄົນທຸກຈະເອົາດອກໄມ້ແລະເຄື່ອງປະດັບມາຈາກໃສກັນ" ທ່ານພຣະປິລິນທວັຈຈະຈຶ່ງຫຍິບສວຽນຫຍ້າ ໑ ອັນນຶ່ງສົ່ງໃຫ້ ພ້ອມທັງກ່າວວ່າ "ທ່ານຈົ່ງສວມສວຽນຫຍ້າອັນນີ້ທີ່ສີສະເດັກຍິງນັ້ນ" ຍິງຄົນວັດຫຍິບ ສວຽນຫຍ້າສວມທີ່ສີສະເດັກຍິງ ສວຽນຫຍ້າກາຍເປັນພວງດອກໄມ້ທອງຄຳງົດງາມຫນ້າເບິ່ງຫນ້າ ຊົມ ພວງດອກໄມ້ທອງຄຳຢ່າງນີ້ແມ່ນໃນພຣະຣາຊຖານກໍຍັງບໍ່ມີ ພວກຊາວບ້ານຂາບທູລພຣະເຈົ້າ ພິມພິສາຣວ່າ "ຂໍເດຊະ ທີ່ເຮືອນຄົນວັດພຸ້ນມີພວງດອກໄມ້ທອງຄຳງົດງາມຫນ້າເບິ່ງຫນ້າຊົມ ພວງ ດອກໄມ້ທອງຄຳຢ່າງນີ້ແມ່ນໃນພຣະຣາຊຖານກໍຍັງບໍ່ມີ ເຂົາເປັນຄົນເຂັນໃຈຈະໄດ້ມາຈາກໃສ ຫລືອາດຈະໄດ້ມາເພາະທຳໂຈຣກັມເປັນແນ່ແທ້" ພຣະເຈົ້າພິມພິສາຣຮັບສັ່ງໃຫ້ຈອງຈຳຕະກູນຄົນວັດນັ້ນ ຕໍ່ມາ ເຊົ້າວັນທີ ໔ ທ່ານພຣະປິລິນທວັຈຈະຊົງອັນຕຣວາສກຖືບາຕຣແລະຈີວອນໄປບິຫຫ ບາຕທີ່ ປິລິນທວັຈຈຄາມອີກ ເມື່ອທຽວບິຫຫບາຕໄປຕາມລຳດັບໃນຫມູ່ບ້ານປິລິນທວັຈຈະ ຍ່າງຜ່ານໄປທາງທີ່ຢູ່ຄົນວັດຄົນນັ້ນ ຖາມຄົນຄຸ້ນເຄີຍວ່າ "ຄອບຄົວຄົນວັດນີ້ໄປໃດ" ຊາວບ້ານຕອບວ່າ "ຄອບຄົວນີ້ ຖືກຈອງຈຳເພາະເຣື້ອງພວງດອກໄມ້ທອງຄຳ ຂນ້ອຍ"

[ຝ໔໑] ສມັຍນັ້ນ ທ່ານພຣະປິລິນທວັຈຈະເຂົ້າໄປເຖິງພຣະຣາຊນິເວສນ໌ຂອງພຣະເຈົ້າພິມພິສາຣຈອມທັພມຄລຣັກ ຄັນເຖິງແລ້ວໄດ້ນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄລຣັກສເດັຈເຂົ້າໄປຫາພຣະເຖຣະຈົນເຖິງທີ່ນັ່ງ ຊົງອພິວາທແລ້ວປະທັບນັ່ງ ຫະ ທີ່ສົມ

ຄວຣ ທ່ານພຣະປີລິນທວັຈຈະທູລຖາມພຣະເຈົ້າພິມພິສາຣຈອມທັພມຄລຣັຖວ່າ "ຂໍຖວາຍພຣະພອນ ຄອບຄົວຄົນວັດຖືກຈອງຈຳເພາະເຣື້ອງຫຍັງ" ພຣະເຈົ້າພິມພິສາຣຈອມທັພມຄລຣັຖຕຣັສວ່າ "ທີ່ບ້ານ ເຂົາມີພວງດອກໄມ້ທອງຄຳງົດງາມຫນ້າເບິ່ງຫນ້າຊົມ ພວງດອກໄມ້ທອງຄຳຢ່າງນີ້ແມ່ນໃນວັງກໍຍັງບໍ່ມີ ເຂົາເປັນຄົນຈົນຈະໄດ້ມາຈາກໃດ ຫລືອາດຈະໄດ້ມາເພາະທຳໂຈຣກັມເປັນແນ່ແທ້"

ເຊີງອັນຖະ :

໑ "ສວຽນ" ຄືຂອງເປັນວົງກົມສຳລັບຮອງກົ້ນໝໍ້ ເຮັດດ້ວຍຫຍ້າຫລືຫວາຍເປັນຕົ້ນ, ຂອງທີ່ເຮັດເປັນວົງກົມສຳລັບຮອງຫລືຮັບສິ່ງຕ່າງໆເບິ່ງ ພົຈນານຸກົມ ແປແລະຮຽບຮຽງຈາກ ສະບັບຣາຊບັຕທິຕຍສຖານ ໒໕໔໕, ຫນ້າ ໗໒໑

ເທື່ອນັ້ນທ່ານພຣະປີລິນທວັຈຈະໄດ້ອະທິຖານໃຫ້ປຣາສາທຂອງພຣະເຈົ້າພິມພິສາຣຈອມທັພມຄລຣັຖເປັນທອງຄຳ ປຣາສາທກາຍເປັນທອງຄຳໄປທັງຫລັງ ແລ້ວທ່ານກໍຖວາຍພຣະພອນວ່າ "ທອງຄຳມາກມາຍ ມຫາບໍພິຕຣໄດ້ມາຈາກໃດ" ພຣະເຈົ້າພິມພິສາຣຈອມທັພມຄລຣັຖຕຣັສວ່າ "ໂຍມຊາບແລ້ວ ນີ້ເປັນຣິທລານຸກາພຂອງພຣະຄຸຕເຈົ້າ" ແລ້ວຮັບສັ່ງໃຫ້ປ່ອຍຄອບຄົວນັ້ນ ພວກຊາວບ້ານຊາບຂ່າວວ່າ "ພຣະຄຸຕເຈົ້າປີລິນທວັຈຈະສະແດງອິທລິປາຜິຫາຣິຍ໌ອັນເປັນອຸຕຕຣິມນຸສສລັມໃນທ່າມກາງຣາຊບໍຣິສັດ" ພາກັນພໍໃຈເຫລື້ອມໃສນຳເພສັຊ ໕ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ມາຖວາຍຕາມປົກຕິ ທ່ານພຣະປີລິນທວັຈຈະກໍໄດ້ເພສັຊ ໕ ຢູ່ສເມີ ທ່ານຈຶ່ງແບ່ງເພສັຊໃຫ້ບໍຣິສັດຂອງທ່ານ ແຕ່ບໍຣິສັດຂອງທ່ານມັກມາກ ບັນຈຸເພສັຊທີ່ໄດ້ມາແລ້ວໆໄວ້ໃນຕຸ່ມແດ່ ໃນຫມໍ້ນ້ຳແດ່ຈົນເຕັມແລ້ວເກັບໄວ້ບັນຈຸລົງໃນຫມໍ້ກອງນ້ຳແດ່ ໃນຖົງຍ່າມແດ່ ແລ້ວແຂວນໄວ້ທີ່ປ່ອງຢ້ຽມ ເພສັຊເຫລົ່ານັ້ນໄຫລຍ້ອຍຊຶມ ຈຶ່ງມີສັຕວ໌ຈຳພວກຫນູ ຊຸກຊຸມທົ່ວວິຫາຣ ພວກຊາວບ້ານທຽວໄປວິຫາຣພົບເຂົ້າ ຈຶ່ງພາກັນຕຳຫນິປະນາມ ໂພນທະນາວ່າ "ພວກພຣະສມຕະເຊື້ອສາຍສາກຍບຸຕຣເຫລົ່ານີ້ ມີເຮືອນຄັງເກັບຂອງເຫມືອນພຣະເຈົ້າພິມພິສາຣຈອມທັພມຄລຣັຖ" ພວກກິກຊຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາກິກຊຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດກິກຊຸທັງຫລາຍຈຶ່ງຄິດເພື່ອຄວາມມັກມາກເຊັ່ນນີ້ລະ" ຄັນກິກຊຸທັງຫລາຍຕຳຫນິກິກຊຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກສຸທັງຫລາຍວ່າ "ກິກສຸທັງຫລາຍ ຊາບວ່າພວກກິກສຸຄິດເພື່ອຄວາມມັກມາກແມ່ນແທ້ບໍ" ກິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລເຈົ້າ ຊົງຕຳຫນິວ່າ "ຯລຯ ກິກສຸທັງຫລາຍ ຈັ່ງໃດໂມຄບຸຣຸສເຫລົ່ານັ້ນຈຶ່ງຄິດເພື່ອຄວາມມັກມາກລະ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໓. ປັຕຕວັຄ ໓. ເກສັຊຊສິກຂາບົທ
ສິກຂາບົທວິກັງຄ

ພຣະບັນຍັດ

[໓໘໔] ກໍ ເກສັຊໃດຄວຣລິ້ມສຳລັບກິກສຸຜູ້ເປັນໄຂ້ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ ກິກສຸຮັບປະເຄນເກສັຊນັ້ນແລ້ວເກັບໄວ້ລັນໄດ້ ໆ ອັນເປັນຢ່າງຫລາຍ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ເຣື້ອງພຣະປິລິນທວັຈຈະ ຈົບ

ສິກຂາບົທວິກັງຄ໌

[໓໘໕] ຄຳວ່າ ເກສັຊໃດຄວຣລິ້ມສຳລັບກິກສຸຜູ້ເປັນໄຂ້ ມີອະທິບາຍດັ່ງນີ້

ທີ່ຊື່ວ່າ ເນີຍໃສ ໄດ້ແກ່ ເນີຍໃສທຳຈາກນ້ຳນົມໂຄແດ່ ເນີຍໃສທຳຈາກນ້ຳນົມແພະແດ່ ເນີຍໃສທຳຈາກນ້ຳນົມກະບືແດ່ ຫລືເນີຍໃສທຳຈາກນ້ຳນົມສັຕວ໌ທີ່ມີມັງສະເປັນກັປປິຍະ

ທີ່ຊື່ວ່າ ເນີຍຂຸ້ນ ໄດ້ແກ່ ເນີຍຂຸ້ນທຳຈາກນ້ຳນົມສັຕວ໌ເຫລົ່ານັ້ນ ແຫລະ

ທີ່ຊື່ວ່າ ນ້ຳມັນ ໄດ້ແກ່ ນ້ຳມັນທີ່ສກັດຈາກເມັດງາ ນ້ຳມັນທີ່ສກັດຈາກເມັດຜັກກາດ ນ້ຳມັນທີ່ສກັດຈາກເມັດມະຊາງ ນ້ຳມັນທີ່ສກັດຈາກເມັດລະຫຸ່ງ ຫລືນ້ຳມັນໄຂສັຕວ໌

ທີ່ຊື່ວ່າ ນ້ຳເຜິ້ງ ໄດ້ແກ່ ນ້ຳຣົສຫວານທີ່ແມງເຜິ້ງທຳ

ທີ່ຊື່ວ່າ ນ້ຳອ້ອຍ ໄດ້ແກ່ ນ້ຳຣົສຫວານທີ່ເກີດຈາກອ້ອຍ

ຄຳວ່າ ກິກສຸຮັບປະເຄນເກສັຊນັ້ນແລ້ວເກັບໄວ້ລັນໄດ້ ໆ ອັນເປັນຢ່າງຫລາຍ ຄື ກິກສຸເພິງລັນໄດ້

ໆ ອັນເປັນຢ່າງຫລາຍ
ຄຳວ່າ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄວາມວ່າ ເມື່ອຮຸ່ງອອຣຸຕາວັນທີ ໆ ໆ ເພັສຊນັ້ນເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ
ກິກຊຸທັງຫລາຍ ກິກຊຸເພິ່ງສລະເກສັຊທີ່ເປັນນິສສັຄຄີຍ໌ຢ່າງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໓. ປັຕຕວັຄ ໓. ເພັສຊຊສິກຂາບົທ ສິກຂາບົທວິກັງຄ໌

ວິທີສລະເພັສຊທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຊຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຊຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ເພັສຊຂອງຜູ້ຂ້ານີ້ເກີນກຳຫນົດ ໆ ອັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະເພັສຊນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ
ກິກຊຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນເພັສຊທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ເພັສຊຂອງກິກຊຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ເພັສຊນີ້ແກ່ກິກຊຸຊື່ນີ້"

ສລະແກ່ຄຕະ

ກິກຊຸຮູບນັ້ນເພິ່ງເຂົ້າໄປຫາກິກຊຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຊຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ເພັສຊຂອງຜູ້ຂ້ານີ້ເກີນກຳຫນົດ ໆ ອັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະເພັສຊນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ
ກິກຊຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນເພັສຊທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ເພັສຊຂອງກິກຊຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິ່ງໃຫ້ເພັສຊນີ້ແກ່ກິກຊຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ເກສັຊຂອງຜູ້ຂ້ານີ້ເກີນກໍາຫນົດ ໆ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະເກສັຊນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນເກສັຊທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນເກສັຊນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໓. ປັຕຕວັຄ ໓. ເກສັຊຊສິກຂາບົທ
ບົທກາຊນີຍ໌

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໖໔] ເກສັຊທີ່ເກີນກໍາຫນົດ ໆ ວັນ ກິກຂຸສໍາຄັນວ່າເກີນກໍາຫນົດແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊເກີນກໍາຫນົດ ໆ ວັນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊເກີນກໍາຫນົດ ໆ ວັນ ກິກຂຸສໍາຄັນວ່າຍັງບໍ່ເກີນກໍາຫນົດ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊຍັງບໍ່ໄດ້ອະທິຖານ ກິກຂຸສໍາຄັນວ່າອະທິຖານແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊຍັງບໍ່ໄດ້ສລະ ກິກຂຸສໍາຄັນວ່າໄດ້ສລະແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊຍັງບໍ່ສູນຫາຍ ກິກຂຸສໍາຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊຍັງບໍ່ຈິບຫາຍ ກິກຂຸສໍາຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊຍັງບໍ່ຖືກໄຟໄຫມ້ ກິກຂຸສໍາຄັນວ່າຖືກໄຟໄຫມ້ແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊຍັງບໍ່ຖືກຍາດຊິງໄປ ກິກຂຸສໍາຄັນວ່າຖືກຍາດຊິງໄປແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກສັຊທີ່ສລະແລ້ວ ກິກຂຸໄດ້ຄືນມາ ບໍ່ເພິງໃຊ້ດ້ວຍກິຈທີ່ກ່ຽວກັບຮ່າງກາຍແລະບໍ່ຄວຣຈັນ ເພິງນ້ອມເຂົ້າໄປໃນການຕາມປະທີປຫລືການຜສົມສີ ກິກຂຸອື່ນຈະໃຊ້ດ້ວຍກິຈທີ່ກ່ຽວກັບຮ່າງກາຍກໍໄດ້ ແຕ່ບໍ່ຄວຣຈັນ

ທຸກກຸກະ

ເກສັຊຍັງບໍ່ເກີນກໍາຫນົດ ໆ ວັນ ກິກຂຸສໍາຄັນວ່າເກີນກໍາຫນົດແລ້ວ ຕ້ອງອາບັຕິທຸກກະ

ເວລັຊຍັງບໍ່ເກີນກຳໜົດ ໗ ວັນ ກີກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ເວລັຊຍັງບໍ່ເກີນກຳໜົດ ໗ ວັນ ກີກຂຸສຳຄັນວ່າຍັງບໍ່ເກີນກຳໜົດ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກີກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໔໕] ໑. ກີກຂຸອະທິຖານພາຍໃນ ໗ ວັນ

໒. ກີກຂຸສລະໃຫ້ໄປ

໓. ກີກຂຸຜູ້ມີເວລັຊສູນຫາຍພາຍໃນ ໗ ວັນ

໔. ກີກຂຸຜູ້ມີເວລັຊຈິບຫາຍພາຍໃນ ໗ ວັນ

໕. ກີກຂຸຜູ້ມີເວລັຊຖືກໄຟໄໝ້ພາຍໃນ ໗ ວັນ

໒. ກີກຂຸຜູ້ມີເວລັຊຖືກໂຈຣຍາດຊີງໄປພາຍໃນ ໗ ວັນ

໗. ກີກຂຸຜູ້ມີເວລັຊຖືກຖືເອົາໄປໂດຍວິສາສະພາຍໃນ ໗ ວັນ

໘. ກີກຂຸຜູ້ບໍ່ເຍື່ອໃຍ ໃຫ້ແກ່ອນຸປສັມບັນດ້ວຍຈິຕສລະລະວາງແລ້ວກັບໄດ້ຂອງນັ້ນມາຈັນອີກ

໙. ກີກຂຸວິກົລຈິຕ

໑໐. ກີກຂຸຕົ້ນບັນຍັດ

ເວລັຊຊສິກຂາບົທທີ ໓ ຈົບ

ພຣະວິນັຍປີດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໓. ປັຕຕວັຄ ໔. ວັສສີກສາຜົກສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໔. ວັສສີກສາຜົກສິກຂາບົທ

ວ່າດ້ວຍຜ້າອາບນ້ຳຝົນ

ເລື້ອງພຣະຈັພພັຄຄີຍ໌

[໒໔໒] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າອາບນ້ຳຝົນແກ່ກີກຂຸທັງ

ຫລາຍ ພວກກິກຸຈັພພັຄຄີຍ໌ຊາບວ່າ ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າອາບນ້ຳຝົນ ຈຶ່ງແສວງຫາຜ້າອາບນ້ຳຝົນກ່ອນແດ່ ທຳນຸ່ງກ່ອນແດ່ ເມື່ອຜ້າອາບນ້ຳຝົນເກົ່າໂດກຂາດໄປແລ້ວຈຶ່ງເປືອຍກາຍອາບນ້ຳຝົນ ບັນດາກິກຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຸຈັພພັຄຄີຍ໌ຈຶ່ງແສວງຫາຜ້າອາບນ້ຳຝົນກ່ອນແດ່ ທຳນຸ່ງລ່ວງຫນ້າກ່ອນແດ່ ເມື່ອຜ້າອາບນ້ຳຝົນເກົ່າໂດກຂາດ ໄປແລ້ວຈຶ່ງເປືອຍກາຍອາບນ້ຳຝົນລະ" ຄັນກິກຸເຫລົ່ານັ້ນຕຳຫນິພວກກິກຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຮື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຮື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຸຈັພພັຄຄີຍ໌ວ່າ "ກິກຸທັງຫລາຍ ຊາບວ່າ ພວກທ່ານແສວງຫາຜ້າອາບນ້ຳຝົນກ່ອນແດ່ ທຳນຸ່ງກ່ອນແດ່ ເມື່ອຜ້າອາບນ້ຳຝົນເກົ່າໂດກຂາດໄປແລ້ວ ໄດ້ເປືອຍກາຍອາບນ້ຳຝົນ ແມ່ນແທ້ບໍ" ພວກກິກຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງແສວງຫາຜ້າອາບນ້ຳຝົນກ່ອນແດ່ ທຳນຸ່ງລ່ວງຫນ້າກ່ອນແດ່ ເມື່ອຜ້າອາບນ້ຳຝົນເກົ່າໂດກຂາດ ໄປແລ້ວໄດ້ເປືອຍກາຍອາບນ້ຳຝົນລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຓຑ໌] ໓. ປັຕຕວັຄ ໔. ວັສສິກສາຝິກສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[ຝ໔໗] ກິກຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກ ໑ ເດືອນ" ພຶງແສວງຫາຈີວອນຄືຜ້າອາບນ້ຳຝົນໄດ້ ຮູ້ວ່າ "ຣະດູຮ້ອນຍັງເຫລືອອີກເຄິ່ງເດືອນ" ພຶງທຳນຸ່ງໄດ້ ຖ້າຮູ້ວ່າ "ຍັງບໍ່ເຖິງເດືອນສຸດທ້າຍແຫ່ງຣະດູຮ້ອນ" ພຶງແສວງຫາຈີວອນຄືຜ້າອາບນ້ຳຝົນ ຮູ້ວ່າ "ຍັງບໍ່ເຖິງເຄິ່ງເດືອນສຸດທ້າຍແຫ່ງຣະດູຮ້ອນ" ພຶງທຳນຸ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໒໔໗] ຄຳວ່າ ກິກຊຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກ ໑ ເດືອນ" ເພິງແສວງຫາຈີວອນຄືຜ້າອາບນ້ຳຝົນໄດ້ ອະທິບາຍວ່າ ກິກຊຸເຂົ້າໄປຫາພວກຊາວບ້ານທີ່ເຄີຍຖວາຍຜ້າອາບນ້ຳຝົນເພິງກ່າວຢ່າງນີ້ວ່າ "ເຖິງເວລາຜ້າອາບນ້ຳຝົນແລ້ວ ເຖິງຄາວຜ້າອາບນ້ຳຝົນແລ້ວ ພວກຊາວບ້ານແມ່ນອື່ນກໍພາກັນຖວາຍຜ້າອາບນ້ຳຝົນ" ແຕ່ບໍ່ຄວຣກ່າວວ່າ "ທ່ານທັງຫລາຍຈົ່ງຖວາຍຜ້າອາບນ້ຳຝົນແກ່ອາຕມາ ຈົ່ງນຳຜ້າອາບນ້ຳຝົນມາໃຫ້ອາຕມາ ຈົ່ງແລກປ່ຽນຜ້າອາບນ້ຳຝົນມາໃຫ້ອາຕມາ ຈົ່ງຊື້ຜ້າອາບນ້ຳຝົນມາໃຫ້ອາຕມາ"

ຄຳວ່າ ຮູ້ວ່າ "ຣະດູຮ້ອນຍັງເຫລືອອີກເຄິ່ງເດືອນ" ເພິງທຳນຸ່ງໄດ້ ຄື ເມື່ອຣະດູຮ້ອນຍັງເຫລືອຢູ່ເຄິ່ງເດືອນ ກິກຊຸເພິງທຳຜ້າອາບນ້ຳຝົນນຸ່ງໄດ້

ຄຳວ່າ ຖ້າຮູ້ວ່າ "ຍັງບໍ່ເຖິງເດືອນສຸດທ້າຍແຫ່ງຣະດູຮ້ອນ" ຄື ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ໑ ເດືອນ ກິກຊຸແສວງຫາຜ້າອາບນ້ຳຝົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຳວ່າ ຮູ້ວ່າ "ຍັງບໍ່ເຖິງເຄິ່ງເດືອນສຸດທ້າຍແຫ່ງຣະດູຮ້ອນ" ຄື ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ກິກຊຸທຳຜ້າອາບນ້ຳຝົນນຸ່ງ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຓະຫລືແກ່ບຸຄຄົລ

ກິກຊຸທັງຫລາຍ ກິກຊຸເພິງສລະຜ້າອາບນ້ຳຝົນທີ່ເປັນນິສສັຄຄີຍ໌ຢ່າງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຓຫ໌] ໑. ປັຕຕວັຄ ໔. ວັສສິກສາຜິກສິກຂາບົທ ສິກຂາບົທວິກັງຄ໌

ວິທີສລະຜ້າອາບນ້ຳຝົນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຊຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຊຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອາບນ້ຳຝົນຜືນນີ້ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ໑ ເດືອນ ຜູ້ຂ້າແສວງຫາແລ້ວ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ທຳນຸ່ງແລ້ວເປັນນິສສັຄຄີຍ໌ ຜູ້ຂ້າສລະຜ້າອາບນ້ຳຝົນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ

ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຜ້າອາບນ້ຳຝົນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຜ້າອາບນ້ຳຝົນຂອງພິກຂຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຜ້າອາບນ້ຳຝົນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຓະ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອາບນ້ຳຝົນຜືນນີ້ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ໑ ເດືອນ ຜູ້ຂ້າແສວງຫາແລ້ວ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ທຳນຸ່ງແລ້ວ ເປັນນິສສັຄຄິຍ໌ ຜູ້ຂ້າສລະຜ້າອາບນ້ຳຝົນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຜ້າອາບນ້ຳຝົນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຜ້າອາບນ້ຳຝົນຂອງພິກຂຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຜ້າອາບນ້ຳຝົນຜືນນີ້ແກ່ພິກຂຸຊື່ນີ້"

ເຫລືອເກີນກວ່າ ໑ ເດືອນ ຜູ້ຂ້າແສວງຫາແລ້ວ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ທຳນຸ່ງແລ້ວ ເປັນນິສສັຄຄິຍ໌ ຜູ້ຂ້າສລະຜ້າອາບນ້ຳຝົນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຜ້າອາບນ້ຳຝົນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຜ້າອາບນ້ຳຝົນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄິຍປາຈິຕຕີຍ໌

[໕໔໙] ຣະດູຮ້ອນຍັງເຫລືອເກີນ ໑ ເດືອນ ພິກຂຸສຳຄັນວ່າເກີນ ແສວງຫາຜ້າອາບນ້ຳຝົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນ ໑ ເດືອນ ພິກຂຸບໍ່ແນ່ໃຈ ແສວງຫາຜ້າອາບນ້ຳຝົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນ ໑ ເດືອນ ພິກຂຸສຳຄັນວ່າໜ້ອຍກວ່າ ແສວງຫາຜ້າອາບນ້ຳຝົນຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຕິກນິສສັຄຄິຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນເຄິ່ງເດືອນ ພິກຂຸສຳຄັນວ່າເກີນ ທຳນຸ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນເຄິ່ງເດືອນ ກິກຂຸບໍ່ແນ່ໃຈ ທຳນຸ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌
ຣະດູຮ້ອນຍັງເຫລືອເກີນເຄິ່ງເດືອນ ກິກຂຸສຳຄັນວ່າຫນ້ອຍກວ່າ ທຳນຸ່ງ ຕ້ອງອາບັຕິນິສສັຄຄິຍ ປາຈິຕຕິຍ໌

ທຸກກຝ

ເມື່ອມີຜ້າອາບນ້ຳຝົນ ກິກຂຸເປືອຍກາຍອາບນ້ຳຝົນ ຕ້ອງອາບັຕິທຸກກຝ
ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ ກິກຂຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຝ
ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຝ
ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ ກິກຂຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ
ຣະດູຮ້ອນຍັງເຫລືອຫນ້ອຍກວ່າເຄິ່ງເດືອນ ກິກຂຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຝ
ຣະດູຮ້ອນທີ່ຍັງເຫລືອຫນ້ອຍກວ່າເຄິ່ງເດືອນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຝ
ຣະດູຮ້ອນຍັງເຫລືອຫນ້ອຍກວ່າເຄິ່ງເດືອນ ກິກຂຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໘໓໐] ໑. ກິກຂຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກ ໑ ເດືອນ" ແສວງຫາຜ້າອາບນ້ຳຝົນ
໒. ກິກຂຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກເຄິ່ງເດືອນ" ທຳຜ້າອາບນ້ຳຝົນນຸ່ງ
໓. ກິກຂຸຮູ້ວ່າ "ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ" ແສວງຫາຜ້າອາບນ້ຳຝົນ
໔. ກິກຂຸຮູ້ວ່າ "ຣະດູຮ້ອນຍັງເຫລືອຫນ້ອຍກວ່າເຄິ່ງເດືອນ" ທຳຜ້າອາບນ້ຳຝົນນຸ່ງ ເມື່ອກິກຂຸແສວງຫາໄດ້ຜ້າອາບນ້ຳຝົນແລ້ວ ຣະດູຝົນເລື່ອນອອກໄປ ເມື່ອກິກຂຸທຳຜ້າອາບນ້ຳຝົນນຸ່ງແລ້ວ ຣະດູຝົນເລື່ອນອອກໄປ ຄວຣຊັກເກັບໄວ້ ເພິ່ງນຸ່ງໃນສມັຍ
໕. ກິກຂຸຖືກໂຈຣຍາດຊີງຈີວອນໄປ
໖. ກິກຂຸຈີວອນສູນຫາຍ
໗. ກິກຂຸຜູ້ຕກຢູ່ໃນອັນຕຣາຍ
໘. ກິກຂຸວິກິລຈິຕ
໙. ກິກຂຸຕົ້ນບັນຍັດ

ວັສສິກສາຜົກສິກຂາບົທທີ່ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕກ໌] ໓. ປັຕຕວັຄ ໕. ຈີວອນອັຈຈິນທນສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໕. ຈີວອນອັຈຈິນທນສິກຂາບົທ

ວ່າດ້ວຍການໃຫ້ຈີວອນແລ້ວຍາດຊີງເອົາຄືນ

ເຣື່ອງພຣະອຸປນັນທສາກຍບຸຕຣ

[໘໓໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣ ກ່າວຊັກຊວນສັທລິວິຫາຣິກ ຂອງກິກຸຜູ້ເປັນອ້າຍວ່າ “ມານີ້ເຖີດ ທ່ານ ພວກເຮົາຈັກໄປທຽວຊົນບົທດ້ວຍກັນ” ກິກຸນັ້ນກ່າວ ຕອບວ່າ “ຜູ້ຂ້າບໍ່ໄປ ຜູ້ຂ້າມີຈີວອນຂາດເພ” ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ “ໄປເຖີດ ທ່ານ ຂະນ້ອຍຈະຖວາຍຈີວອນແກ່ທ່ານ” ແລ້ວຖວາຍຈີວອນແກ່ກິກຸນັ້ນ ກິກຸນັ້ນຊາບຂ່າວວ່າ “ພຣະຜູ້ມີພຣະກາຄຈັກສເດັຈຈາຣິກໄປໃນຊົນບົທ” ເທື່ອນັ້ນ ທ່ານໄດ້ມີຄວາມຄິດວ່າ ‘ບັດນີ້ເຮົາ ຈັກບໍ່ໄປທຽວຊົນບົທກັບທ່ານພຣະອຸປນັນທສາກຍບຸຕຣ ແຕ່ຈະໄປທຽວຊົນບົທກັບພຣະຜູ້ມີພຣະ ກາຄ’ ຄັນທ່ານພຣະອຸປນັນທສາກຍບຸຕຣກ່າວຊັກຊວນກິກຸນັ້ນວ່າ “ມາເຖີດ ທ່ານ ບັດນີ້ພວກເຮົາ ຈະໄປທຽວຊົນບົທດ້ວຍກັນ” ກິກຸນັ້ນປຕິເສລວ່າ “ຜູ້ຂ້າບໍ່ໄປທຽວຊົນບົທກັບທ່ານລະ ຜູ້ຂ້າຈະ ໄປທຽວຊົນບົທກັບພຣະຜູ້ມີພຣະກາຄ” ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ “ເຮົາຖວາຍຈີວອນ ທ່ານເພາະຕັ້ງໃຈວ່າ ‘ຈະໄປທຽວຊົນບົທດ້ວຍກັນ” ຈຶ່ງໂກດ ບໍ່ພໍໃຈ ຍາດຊີງເອົາຈີວອນຄືນ ຕໍ່ມາ ກິກຸນັ້ນໄດ້ເລົ່າເຣື່ອງນັ້ນໃຫ້ກິກຸທັງຫລາຍຊາບ ບັນດາກິກຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະ ນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣໃຫ້ຈີວອນກິກຸເອງແລ້ວໂກດ ບໍ່ພໍໃຈ ຍາດຊີງເອົາຄືນມາລະ” ຄັນກິກຸເຫລົ່ານັ້ນຕຳໜິທ່ານພຣະອຸປນັນທສາກຍບຸຕຣ ໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ

ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານໃຫ້ຈີວອນກິກຂຸເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕໍາຫນິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານໃຫ້ຈີວອນກິກຂຸເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາລະ ໂມຄບຸຣຸສ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໖໔] ກໍ ກິກຂຸໃດໃຫ້ຈີວອນແກ່ກິກຂຸເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາຫລືໃຊ້ໃຫ້ຍາດຊິງຊິງເອົາ**ຄືນ**ມາ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື່ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໕໖໖] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ຄໍາວ່າ ແກ່ກິກຂຸ ຄື ແກ່ກິກຂຸຮູບອື່ນ

ຄໍາວ່າ ເອງ ຄື ໃຫ້ດ້ວຍຕົນເອງ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕໍ່າ

ຄໍາວ່າ ໂກດ ບໍ່ພໍໃຈ ຄື ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ

ຄໍາວ່າ ຍາດຊິງເອົາມາ ຄື ຍື້ແຍ່ງເອົາມາດ້ວຍຕົນເອງ ຈີວອນນັ້ນເປັນນິສສັຄຄີຍ໌

ຄໍາວ່າ ໃຊ້ໃຫ້ຍາດຊິງເອົາມາ ຄື ສັ່ງຜູ້ອື່ນ ຕ້ອງອາບັຕິທຸກກຍ

ກິກຂຸຜູ້ຮັບຄໍາສັ່ງຄັ້ງດຽວແຕ່ຍາດຊິງເອົາມາຫລາຍຄັ້ງ ຈີວອນນັ້ນເປັນນິສສັຄຄີຍ໌ ຄືເປັນຂອງຈໍາຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກຂຸທັງຫລາຍ ກິກຂຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງໝ໌

ພິກຂຸຮູບນັ້ນເພິງເຂົ້າໄປຫາສົງໝ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ພິກຂຸເອງແລ້ວຍາດຊິງຄືນມາ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງໝ໌" ຄັນສລະແລ້ວເພິງສະແດງອາບັຕິ

ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງໝ໌ຈົ່ງຟັງຂ້າພະເຈົ້າ ຈີວອນຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງໝ໌ ຖ້າສົງໝ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຕະ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ພິກຂຸເອງແລ້ວຍາດຊິງຄືນມາ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກຂຸຊື່ນີ້"

ສລະແກ່ບຸຄຄົລ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າໃຫ້ພິກຂຸເອງແລ້ວຍາດຊິງຄືນມາ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ

ພິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັຕຫ໌] ໓. ປັຕຕວັຄ ໕. ຈີວອນອັຈຈິນທານສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕິກນິສສັຄຄິຍປາຈິຕຕິຍ໌

[ຝ໓໔] ອຸປສັມບັນ໑ ພິກຂຸສຳຄັນວ່າເປັນອຸປສັມບັນ ໃຫ້ຈີວອນເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາຫລືໃຊ້ໃຫ້ຍາດຊິງເອົາມາ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ອຸປສັມບັນ ພິກຂຸບໍ່ແນ່ໃຈ ໃຫ້ຈີວອນເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາມາຫລືໃຊ້ໃຫ້ຍາດຊິງເອົາຄືນມາ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ອຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ໃຫ້ຈີວອນເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາຫລືໃຊ້ໃຫ້ຍາດຊິງເອົາມາ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ທຸກກຸຍ

ພິກຂຸໃຫ້ບໍຣິຂາຣຢ່າງອື່ນແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາມາຫລືໃຊ້ໃຫ້ຍາດຊິງເອົາມາ ຕ້ອງອາບັຕິທຸກກຸຍ

ພິກຂຸໃຫ້ຈີວອນຫລືບໍຣິຂາຣຢ່າງອື່ນແກ່ອນຸປສັມບັນແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາຫລືໃຊ້ໃຫ້ຍາດຊິງເອົາມາ ຕ້ອງອາບັຕິທຸກກຸຍ

ອນຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຸຍ

ອນຸປສັມບັນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຍ

ອນຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຸຍ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[ຝ໓໕] ໑. ພິກຂຸຜູ້ເປັນເຈົ້າຂອງເດີມຮັບຈີວອນທີ່ເຂົາໃຫ້ຄືນເອງ ຫລືຖືເອົາໂດຍວິສາສະກັບພິກຂຸຜູ້ຮັບໄປ

໔. ພິກຂຸວິກົລຈິຕ

໓. ພິກຂຸຕົ້ນບັນຍັດ

ຈີວອນອັຈຈິນທານສິກຂາບົທທີ ໕ ຈົບ

ເຊີງອັນຖະ :

໑ ອຸປສັມບັນ ຜູ້ໄດ້ຮັບອຸປສົມບົທດ້ວຍຍັຕຕິຈຕຸຕຖກັມແລ້ວ ຫມາຍເຖິງພິກຂຸ (ວິ. ອ. ໑/໔໕/

(໔໕໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຓຫ໌] ໖. ປັຕຕວັຄ ໘. ສຸຕຕວິຢຢັຕຕິສິກຂາບົທ ນິທານວັຕຖຸ

໖. ປັຕຕວັຄ

໘. ສຸຕຕວິຢຢັຕຕິສິກຂາບົທ

ວ່າດ້ວຍການອອກປາກຂໍດ້າຍ

ເຣື້ອງພຣະຈັພພັຄຄີຍ໌

[໘໖໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເວຣຸວັນ ສຖານທີ່ບ່ອນໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ເມື່ອເຖິງຄາວທຳຈີວອນ ພວກກິກບຸຈັພພັຄຄີຍ໌ອອກປາກຂໍດ້າຍມາເປັນອັນມາກ ຄັນທຳຈີວອນເສັດແລ້ວ ດ້າຍເຫລືອຢູ່ເປັນອັນມາກ ເທື່ອນັ້ນ ພວກກິກບຸຈັພພັຄຄີຍ໌ໄດ້ມີຄວາມຄິດວ່າ "ເອົາເຖີດ ພວກເຮົາຈະອອກປາກຂໍດ້າຍອື່ນມາໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ" ຕໍ່ມາ ພວກກິກບຸຈັພພັຄຄີຍ໌ໄດ້ໄປຂໍດ້າຍເປັນອັນມາກມາໃຊ້ຊ່າງຕ່ຳຫູກຕ່ຳຈີວອນ ເມື່ອຕ່ຳຈີວອນແລ້ວ ດ້າຍກໍຍັງເຫລືອອີກຫລາຍ ແມ່ນຄັ້ງທີ ໒ ພວກກິກບຸຈັພພັຄຄີຍ໌ໄດ້ໄປອອກປາກຂໍດ້າຍອື່ນອີກເປັນອັນມາກມາໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ ເມື່ອຕ່ຳຈີວອນແລ້ວ ດ້າຍກໍຍັງເຫລືອຢູ່ຫລາຍ ແມ່ນຄັ້ງທີ ໓ ພວກກິກບຸຈັພພັຄຄີຍ໌ໄດ້ໄປຂໍດ້າຍອື່ນອີກເປັນອັນມາກມາໃຫ້ຊ່າງຕ່ຳຫູກຕ່ຳຈີວອນ ພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງອອກປາກຂໍດ້າຍມາເອງ ແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນລະ" ພວກກິກບຸໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາກິກບຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກບຸຈັພພັຄຄີຍ໌ຈຶ່ງອອກປາກຂໍດ້າຍມາເອງ ແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນລະ" ຄັນກິກບຸເຫລົ່ານັ້ນຕຳໜິພວກກິກບຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ

ກິກສຸຈັພພັຄຄີຍ໌ວ່າ "ກິກສຸທັງຫລາຍ ຊາບວ່າ ພວກທ່ານອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ ແມ່ນແທ້ບໍ" ພວກກິກສຸຈັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນລະ ໂມຄບຸຣຸສທັງຫລາຍການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໖໓໗] ກໍ ກິກສຸໃດອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໖໓໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ ຄຳວ່າ ກິກສຸ ມີອະທິບາຍວ່າ ຊື່ວ່າກິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກສຸ ໃນຄວາມຫມາຍນີ້

ຄຳວ່າ ເອງ ຄື ອອກປາກຂໍເຂົາມາດ້ວຍຕົນເອງ

ທີ່ຊື່ວ່າ ດ້າຍ ໄດ້ແກ່ ດ້າຍ ໖ ຊນິດ ຄື (໑) ດ້າຍທີ່ເຮັດດ້ວຍເປືອກໄມ້ (໒) ດ້າຍທີ່ເຮັດດ້ວຍຝ້າຍ (໓) ດ້າຍທີ່ເຮັດດ້ວຍໄຫມ (໔) ດ້າຍທີ່ເຮັດດ້ວຍຂົນສັຕວ໌ (໕) ດ້າຍທີ່ເຮັດດ້ວຍປ່ານ (໖) ດ້າຍທີ່ເຮັດດ້ວຍວັຕຖຸທັງ ໕ ຊນິດຜສົມກັນ

ຄຳວ່າ ຊ່າງຕ່ຳຫູກ ຄື ໃຊ້ຊ່າງຕ່ຳຫູກໃຫ້ຕ່ຳ

ຕ້ອງອາບັຕິທຸກກຖທຸກຂຕະທີ່ພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກສຸທັງຫລາຍ ກິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກສຸຜູ້ແກ່ພັນສາ ນັ່ງ

ຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າອອກປາກຂໍດ້າຍມາເອງແລ້ວ ໃຊ້ຊ່າງຕ່ຳຫູກຕ່ຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງ ອາບັຕິ ກິກບຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຂອງກິກບຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກບຸຊື່ນີ້"

ສລະແກ່ຄຕະ

ກິກບຸຮູບນັ້ນເພິງເຂົ້າໄປຫາກິກບຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກບຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກບຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຂອງກິກບຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກບຸຊື່ນີ້"

ສລະແກ່ບຸຄຄົລ

ກິກບຸຮູບນັ້ນເພິງເຂົ້າໄປຫາກິກບຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກບຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໓. ປັຕຕວັຄ ໖. ສຸຕຕວິຍ່ຍັຕຕິສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໓໙] ຈີວອນທີ່ໃຊ້ເຂົາໃຫ້ຕ່ຳ ກິກບຸສຳຄັນວ່າໃຊ້ເຂົາໃຫ້ຕ່ຳ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນທີ່ໃຊ້ເຂົາໃຫ້ຕໍ່າ ພິກຂຸບໍ່ແນ່ໃຈ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌ ຈີວອນທີ່ໃຊ້ເຂົາໃຫ້ຕໍ່າ ພິກຂຸສໍາຄັນວ່າບໍ່ໄດ້ໃຊ້ເຂົາໃຫ້ຕໍ່າ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌

ທຸກກຸກກົດ

ຈີວອນທີ່ບໍ່ໄດ້ໃຊ້ເຂົາໃຫ້ຕໍ່າ ພິກຂຸສໍາຄັນວ່າໃຊ້ເຂົາໃຫ້ຕໍ່າ ຕ້ອງອາບັດທຸກກົດ

ຈີວອນທີ່ບໍ່ໄດ້ໃຊ້ເຂົາໃຫ້ຕໍ່າ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກົດ

ຈີວອນທີ່ບໍ່ໄດ້ໃຊ້ເຂົາໃຫ້ຕໍ່າ ພິກຂຸສໍາຄັນວ່າບໍ່ໄດ້ໃຊ້ເຂົາໃຫ້ຕໍ່າ ບໍ່ຕ້ອງອາບັດ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໖໔໐] ໑. ພິກຂຸຂໍດ້າຍມາຍິບຈີວອນ

໒. ພິກຂຸຂໍດ້າຍມາທໍາຜ້າຮັດເອົ່າ

໓. ພິກຂຸຂໍດ້າຍມາທໍາປຣະຄົດແອວ

໔. ພິກຂຸຂໍດ້າຍມາທໍາຜ້າອັງສະ

໕. ພິກຂຸຂໍດ້າຍມາທໍາຖົງບາຕຣ

໖. ພິກຂຸຂໍດ້າຍມາທໍາຜ້າກອງນໍ້າ

໗. ພິກຂຸຂໍຈາກຍາຕ

໘. ພິກຂຸຂໍຈາກຄົນປວາຣຕາ

໙. ພິກຂຸຂໍເພື່ອພິກຂຸອື່ນ

໑໐. ພິກຂຸຊື້ມາດ້ວຍຊັພຍ໌ຂອງຕົນ

໑໑. ພິກຂຸວິກົລຈິຕ

໑໒. ພິກຂຸຕົ້ນບັນຍັດ

ສຸຕຕວິປຍັຕຕິສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕທ໌] ໓. ປັຕຕວັຄ ໗. ມຫາເປສກາຣສິກຂາບົທ

ນິທານວັຕຖຸ

໓. ປັຕຕວັຄ

໗. ມຫາເປສກາຣສິກຂາບົທ

ວ່າດ້ວຍການສັ່ງຊ່າງຕ່ຳຫູກຕ່ຳຈີວອນ

ເຣື້ອງພຣະອຸປນັນທສາກຍບຸຕຣ

[ຝ໔໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ໝົກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ຊາຍຄົນນຶ່ງຈະໄປຄ້າງຄືນຕ່າງຖິ່ນ ກ່າວກັບກັຣຍາວ່າ “ທ່ານ ຈົ່ງກະດ້າຍແລ້ວມອບໃຫ້ຊ່າງຕ່ຳຫູກຊື່ພຸ້ນ ຂໍໃຫ້ເຂົາຕ່ຳຈີວອນເກັບໄວ້ຈົນກັບມາແລ້ວຈະນິມົນຕ໌ພ ຣະຄຸຕເຈົ້າອຸປນັນທະໃຫ້ຄອງຈີວອນ” ກິກຸຜູ້ຖືທງວບິຕທບາຕເປັນວັຕຣຮູບນຶ່ງໄດ້ຍິນຊາຍຄົນນັ້ນ ກ່າວ ຈຶ່ງເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວວ່າ “ທ່ານອຸປນັນ ທະ ທ່ານມີບຸນມາກ ຊາຍຄົນນຶ່ງໃນທີ່ພຸ້ນເມື່ອຈະໄປຄ້າງຄືນຕ່າງຖິ່ນ ກ່າວກັບກັຣຍາວ່າ ‘ທ່ານຈົ່ງ ກະດ້າຍແລ້ວມອບໃຫ້ຊ່າງຕ່ຳຫູກຊື່ພຸ້ນ ຂໍໃຫ້ເຂົາຕ່ຳຈີວອນເກັບໄວ້ ຂ້ອຍກັບມາແລ້ວຈະນິມົນຕ໌ ພຣະຄຸຕເຈົ້າອຸປນັນທະໃຫ້ຄອງຈີວອນ” ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ “ແມ່ນແລ້ວ ຂນ້ອຍ ເຂົາເປັນອຸປັຜຖາກຂອງຜູ້ຂ້າ” ແມ່ນຊ່າງຕ່ຳຫູກນັ້ນກໍເປັນອຸປັຜຖາກຂອງທ່ານພຣະອຸປນັນ ທສາກຍບຸຕຣ ຕໍ່ມາ ທ່ານພຣະອຸປນັນທສາກຍບຸຕຣໄດ້ເຂົ້າໄປຫາຊ່າງຕ່ຳຫູກນັ້ນເຖິງທີ່ຢູ່ ຄັນເຖິງ ແລ້ວໄດ້ກ່າວກັບຊ່າງຕ່ຳຫູກວ່າ “ຈີວອນຜືນນີ້ເຂົາໃຫ້ທ່ານຕ່ຳເຈາະຈົງອາຕມາ ທ່ານຈົ່ງເຮັດໃຫ້ ຍາວ ໃຫ້ກວ້າງ ໃຫ້ເນື້ອແໜ້ນ ຂຶງໃຫ້ດີ ຕ່ຳໃຫ້ດີ ສາງໃຫ້ດີ ແລະກຣີດໃຫ້ດີ” ຊ່າງຕ່ຳຫູກກ່າວ ວ່າ “ພຣະຄຸຕເຈົ້າ ເຂົາກະດ້າຍສົ່ງມາໃຫ້ເທົ່ານີ້ ທັງສັ່ງກຳຊັບວ່າ ຈົ່ງເອົາດ້າຍນີ້ຕ່ຳຈີວອນ’ ຜູ້ຂ້າບໍ່ ສາມາດຈະເຮັດໃຫ້ຍາວ ໃຫ້ກວ້າງ ຫລືໃຫ້ເນື້ອແໜ້ນໄດ້ ແຕ່ຈະຂຶງໃຫ້ດີ ຕ່ຳໃຫ້ດີ ສາງໃຫ້ດີ ແລະຣີດໃຫ້ດີໄດ້ ຂນ້ອຍ” ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ “ເອົາເຖາະ ທ່ານຈົ່ງເຮັດໃຫ້ ຍາວ ໃຫ້ກວ້າງ ແລະໃຫ້ເນື້ອແໜ້ນເຖີດ ບໍ່ຕ້ອງກັງວົລເຣື້ອງດ້າຍ” ຄັນຊ່າງຕ່ຳຫູກນຳດ້າຍຕາມທີ່ ເຂົາສົ່ງມາເຂົ້າເຄື່ອງຕ່ຳ ຈຶ່ງເຂົ້າໄປຫາຍິງນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບຍິງນັ້ນວ່າ “ຜູ້ຂ້າ ຕ້ອງການດ້າຍ ຂນ້ອຍ” ຍິງນັ້ນກ່າວວ່າ “ຂະນ້ອຍສັ່ງທ່ານແລ້ວບໍ່ແມ່ນບໍ ວ່າ ‘ຈົ່ງເອົາດ້າຍນີ້ຕ່ຳຈີ ວອນ” ຊ່າງຕ່ຳຫູກຕອບວ່າ “ແມ່ນແທ້ຂນ້ອຍແມ່ເຈົ້າ ທ່ານສັ່ງຜູ້ຂ້າວ່າ ‘ຈົ່ງເອົາດ້າຍນີ້ຕ່ຳຈີວອນ’ ແຕ່ພຣະຄຸຕເຈົ້າອຸປນັນທສາກຍບຸຕຣກ່າວຢ່າງນີ້ວ່າ ‘ເອົາເຖາະ ທ່ານຈົ່ງເຮັດໃຫ້ຍາວ ໃຫ້ກວ້າງ ແລະໃຫ້ເນື້ອແໜ້ນ ບໍ່ຕ້ອງກັງວົລເຣື້ອງດ້າຍ” ຍິງນັ້ນຈຶ່ງໃຫ້ດ້າຍເພີ້ມເທົ່າກັບທີ່ໃຫ້ຄາວທຳອິດ ທ່ານພຣະອຸປນັນທສາກຍບຸຕຣຊາບວ່າ “ຊາຍຄົນນັ້ນກັບມາຈາກການຄ້າງຄືນຕ່າງຖິ່ນ” ຈຶ່ງເຂົ້າໄປຫາ ເຖິງທີ່ຢູ່ ຄັນເຖິງແລ້ວຈຶ່ງນັ່ງເທິງອາສນະທີ່ເຂົາຈັດໄວ້ ຊາຍນັ້ນເຂົ້າໄປຫາທ່ານພຣະອຸປນັນ ທສາກຍບຸຕຣເຖິງທີ່ນັ່ງ ຄັນເຖິງແລ້ວຈຶ່ງໄຫວ້ແລ້ວນັ່ງ ຓະ ທີ່ສົມຄວຣ ຖາມກັຣຍາວ່າ “ຈີ

ອອນຕໍ່າແລ້ວ ແລ້ວຫລື" ກັຣຍາຕອບວ່າ "ເສັດແລ້ວ" ເຂົາສັ່ງວ່າ "ທ່ານຈົ່ງນໍາມາ ຂ້ອຍຈະນິມົນຕ໌ພຣະຄຸຕເຈົ້າອຸປນັນທສາກຍບຸຕຣໃຫ້ຄອງຈີວອນ" ກັຣຍານໍາຈີວອນຜືນນັ້ນອອກມາໃຫ້ສາມີແລ້ວເລົ່າເຣື້ອງໃຫ້ຊາບ ຊາຍນັ້ນຖວາຍຈີວອນນັ້ນແກ່ທ່ານພຣະອຸປນັນທສາກຍບຸຕຣແລ້ວຕໍາຫນິ ປະນາມ ໂພນທະນາວ່າ "ພຣະສມຕະເຊື້ອສາຍສາກຍບຸຕຣເຫລົ່ານີ້ມັກມາກ ບໍ່ສັນໂດษ ຈະນິມົນຕ໌ໃຫ້ຄອງຈີວອນ ບໍ່ແມ່ນຈະເຮັດໄດ້ງ່າຍ ຈັ່ງໃດພຣະຄຸຕເຈົ້າອຸປນັນທສາກຍບຸຕຣ ທີ່ເຮົາບໍ່ໄດ້ປວາຣຕາໄວ້ກ່ອນ ຈຶ່ງເຂົ້າໄປຫາຊ່າງຕໍ່າຫູກແລ້ວກໍາຫນົດຈີວອນລະ" ກິກษຸທັງຫລາຍໄດ້ຍິນບຸຣຸษນັ້ນຕໍາຫນິ ປະນາມ ໂພນທະນາ ບັນດາກິກษຸຜູ້ມັກນ້ອຍ ຯລຯ ພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣທີ່ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຈຶ່ງເຂົ້າໄປຫາຊ່າງຕໍ່າຫູກແລ້ວກໍາຫນົດຈີວອນລະ" ຄັນກິກษຸເຫລົ່ານັ້ນຕໍາຫນິທ່ານອຸປນັນທສາກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງฆ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງฆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ແຕ່ທ່ານເຂົ້າໄປຫາຊ່າງຕໍ່າຫູກຂອງຄຣືຫັສຖ໌ແລ້ວກໍາຫນົດຈີວອນ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສຖາມວ່າ"ອຸປນັນທະ ເຂົາເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ທ່ານພຣະອຸປນັນທສາກຍບຸຕຣທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕໍາຫນິວ່າ "ໂມฆບຸຣຸษ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມ ຫລືບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງຜູ້ບໍ່ແມ່ນຍາຕ ທ່ານນັ້ນ໑ ຊຶ່ງເຂົາບໍ່ໄດ້ປວາຣຕາໄວ້ກ່ອນເຂົ້າໄປຫາຊ່າງຕໍ່າຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວ ກໍາຫນົດຈີວອນລະ ໂມฆບຸຣຸษ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກษຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໔] ກໍຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ສັ່ງຊ່າງຕໍ່າຫູກໃຫ້ຕໍ່າຈີວອນເຈາະຈົງກິກษຸຖ້າກິກษຸນັ້ນເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຊ່າງຕໍ່າຫູກແລ້ວກໍາຫນົດຊນິດຈີວອນໃນສໍານັກຂອງເຂົາວ່າ "ທ່ານ ຈີວອນຜືນນີ້ເຂົາໃຫ້ຕໍ່າເຈາະຈົງອາຕມາ ທ່ານຈົ່ງເຮັດໃຫ້ຍາວ ທ່ານຈົ່ງເຮັດ

ໃຫ້ກວ້າງ ໃຫ້ເນື້ອແໜ້ນ ຂຶງໃຫ້ດີ ຕໍ່າໃຫ້ດີ ສາງໃຫ້ດີ ແລະຮີດໃຫ້ດີ ເອົາເຖາະ ອາຕມາຈະໃຫ້ຂອງເລັກນ້ອຍເປັນຣາງວັນແກ່ທ່ານ" ຄັນກ່າວຢ່າງນີ້ແລ້ວ ຖ້າກິກຊຸນັ້ນໃຫ້ຂອງເລັກນ້ອຍເປັນຣາງວັນ ໂດຍທີ່ສຸດແມ່ນແຕ່ອາຫາຣບິດຫບາຕ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[ຝ໔໖] ຄໍາວ່າ ກໍ. . . ເຈາະຈົງກິກຊຸ ຄວາມວ່າ ເພື່ອປໂຍດຂອງກິກຊຸ ຄື ມຸ່ງສະເພາະກິກຊຸ ປຣາຖນາຈະໃຫ້ກິກຊຸຄອງຈີວອນ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸษຜູ້ຄອງເຮືອນ

ເຊີງອັນຖະ :

໑ ຕຕຸຖ ທ່ານນັ້ນນີ້ເປັນ ປຈຈຕຸຕກຕຸອຕຸຖ ຄືມີອັນຖະເປັນກັຕຕາ ຜູ້ກະທໍາ ປກຸມາວິກຸຕຕິ (ຕຕຸຖ ນາມ ຕຸອນຸຕີ

ໂສ ນາມ ຕຸອໍ - ວິນຕີ. ຝີກາ ໑/໕໐໖-໕/໔໑໗)

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຊ່າງຕໍ່າຫູກ ໄດ້ແກ່ ຄົນຕໍ່າຜ້າ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງຊຶ່ງມີຂນາດພໍທີ່ຈະທໍາວິກັປໄດ້ເປັນຢ່າງຕໍ່າ

ຄໍາວ່າ ສັ່ງ. . . ໃຫ້ຕໍ່າ ຄື ໃຊ້ໃຫ້ຕໍ່າ

ຄໍາວ່າ ຖ້າກິກຊຸນັ້ນ. . . ໃນສໍານັກຂອງເຂົາ ໄດ້ແກ່ ກິກຊຸທີ່ເຂົາສັ່ງໃຫ້ຊ່າງຕໍ່າຫູກຕໍ່າຈີວອນເຈາະຈົງ

ຄໍາວ່າ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຄື ທາຍົກບໍ່ໄດ້ກ່າວໄວ້ກ່ອນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈີວອນຊນິດໃດ ຜູ້ຂ້າຈະໃຫ້ຕໍ່າຈີວອນຊນິດໃດຖວາຍທ່ານ"

ຄໍາວ່າ ເຂົ້າໄປຫາຊ່າງຕໍ່າຫູກ ຄື ໄປເຖິງເຮືອນແລ້ວເຂົ້າໄປຫາທີ່ໃດທີ່ນຶ່ງ

ຄໍາວ່າ ກໍາຫນົດຊນິດຈີວອນ ຄື ກໍາຫນົດວ່າ "ຈີວອນຜືນນີ້ຕໍ່າເຈາະຈົງອາຕມາ ທ່ານຈົ່ງເຮັດໃຫ້

ຍາວ ໃຫ້ກວ້າງ ໃຫ້ເນື້ອແໜ້ນ ຂຶງໃຫ້ດີ ຕ່ຳໃຫ້ດີ ສາງໃຫ້ດີ ແລະຮີດໃຫ້ດີ ເອົາເຖາະອາຕມາຈະໃຫ້ຂອງເລັກນ້ອຍເປັນຮາງວັນແກ່ທ່ານ”

ຄຳວ່າ ຄັນກ່າວຢ່າງນີ້ແລ້ວ ຖ້າກິກຂຸນັ້ນໃຫ້ຂອງເລັກນ້ອຍເປັນຮາງວັນໂດຍທີ່ສຸດ ແມ່ນແຕ່ອາຫານບິນທະບາຕ ມີຄວາມວ່າ ທີ່ຊື່ວ່າບິນທະບາຕ ໄດ້ແກ່ ເຂົ້າຕົ້ມ ເຂົ້າສວຍ ຂອງຄ້ຽວ ກ້ອນຈຸຣຕະ ໄມ້ຊຳຣະແຂ້ວ ຫລືດ້າຍຊາຍຜ້າ ໂດຍທີ່ສຸດຈົນເມື່ອກ່າວລັມ ຊ່າງຕ່ຳຫູກເຮັດໃຫ້ຍາວໃຫ້ກວ້າງ ໃຫ້ເນື້ອແໜ້ນຕາມຄຳກິກຂຸ ຕ້ອງອາບັດທຸກກະຂະເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະຈີວອນແກ່ສົງຄ໌ ແກ່ຄະນະຫລືແກ່ບຸຄຄົລ

ກິກຂຸທັງຫລາຍ ກິກຂຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌” ຄັນສລະແລ້ວເພິງສະແດງອາບັດ ກິກຂຸຜູ້ສລາດສາມາດເພິງຮັບອາບັດ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ “ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້”

ສລະແກ່ຄະນະ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຈີວອນຜືນນີ້ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ” ຄັນສລະແລ້ວເພິງສະແດງອາບັດ ກິກຂຸຜູ້ສລາດສາມາດເພິງຮັບອາບັດ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ “ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້”

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ທີ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຂນິດຈີວອນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ຕິກນິສສັຄຄິຍປາຈິຕຕິຍ໌

[ຝ໔໔] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ກຳຫນົດຂນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຂຸບໍ່ແນ່ໃຈ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ກຳຫນົດຂນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ກິກຂຸສຳຄັນວ່າເປັນຍາຕ ເຂົາບໍ່ໄດ້ປວາຣຕາໄວ້ກ່ອນ ເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ກຳຫນົດຂນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ທຸກກຸກຄ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸສຳຄັນວ່າບໍ່ແມ່ນຍາຕ ເຂົ້າໄປກຳຫນົດຂນິດຈີວອນ ຕ້ອງອາບັຕິທຸກກຄ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸບໍ່ແນ່ໃຈ ເຂົ້າໄປກຳຫນົດຂນິດຈີວອນ ຕ້ອງອາບັຕິທຸກກຄ

ຄຣືຫັສຖ໌ທີ່ເປັນຍາຕ ກິກຂຸສຳຄັນວ່າເປັນຍາຕ ເຂົ້າໄປກຳຫນົດຂນິດຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[ຝ໔໕] ໑. ກິກຂຸກຳຫນົດຂນິດຈີວອນກັບຊ່າງຕ່ຳຫູກຂອງຍາຕ

໒. ກິກຂຸກຳຫນົດຂນິດຈີວອນກັບຊ່າງຕ່ຳຫູກຂອງຄົນປວາຣຕາ

໓. ກິກຂຸກຳຫນົດຂນິດຈີວອນເພື່ອກິກຂຸອື່ນ

໔. ກິກຂຸກຳຫນົດຂນິດຈີວອນດ້ວຍຊັພຍ໌ຂອງຕົນ

໕. ຄຣືຫັສຖ໌ຈະໃຫ້ຫອຈີວອນຣາຄາແພງແຕ່ກິກຊຸໃຫ້ຫອຈີວອນຣາຄາຖືກ
໖. ກິກຊຸວິກົລຈິຕ
໗. ກິກຊຸຕົ້ນບັນຍັດ

ມຫາເປສກາຣສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໓. ປັຕຕວັຄ ໘. ອັຈເຈກຈີວອນສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໘. ອັຈເຈກຈີວອນສິກຂາບົທ

ວ່າດ້ວຍອັຈເຈກຈີວອນ

ເຣື້ອງມຫາອມາຕຍ໌ຖວາຍຜ້າຈຳນຳພັນສາ

[໖໔໖] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຕາະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ມຫາອມາຕຍ໌ຄົນນຶ່ງຈະໄປຄ້າງຄືນຕ່າງຖິ່ນ ສົ່ງທູຕໄປຫາ ກິກຊຸວ່າ "ຂໍພຣະຄຸຕເຈົ້າທັງຫລາຍມາເຖີດ ຜູ້ຂ້າຈະຖວາຍຜ້າຈຳນຳພັນສາ໑" ກິກຊຸທັງຫລາຍກຽດ ຊັງວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າຈຳນຳພັນສາ ແກ່ກິກຊຸຜູ້ຢູ່ຈຳພັນສາ" ຈຶ່ງບໍ່ໄປ ມຫາ ອມາຕຍ໌ ຕຳຫນິ ປະນາມ ໂພນທະນາວ່າ "ເປັນຫຍັງພຣະຄຸຕເຈົ້າທັງຫລາຍ ເມື່ອເຮົາສົ່ງທູຕໄປ ຈຶ່ງບໍ່ມາລະ ເຮົາຈະຍ່າງທາງໄປຣົບ ຈະເປັນຈະຕາຍກໍຍາກຈະຮູ້ໄດ້" ພອກກິກຊຸໄດ້ຊາບຂ່າວທີ່ມຫາ ອມາຕຍ໌ຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງອນຸຍາຕອັຈເຈກຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກຊຸທັງ ຫລາຍວ່າ "ກິກຊຸທັງຫລາຍ ເຮົາອນຸຍາຕໃຫ້ຮັບອັຈເຈກຈີວອນ໔ ເກັບໄວ້ໄດ້"

[໖໔໗] ສມັຍນັ້ນ ກິກຊຸທັງຫລາຍຊາບວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕໃຫ້ຮັບອັຈເຈກຈີວອນ ເກັບໄວ້ໄດ້" ຈຶ່ງຮັບອັຈເຈກຈີວອນເກັບໄວ້ຈົນເກີນສມັຍຈີວອນກາລ ຈີວອນເຫລົ່ານັ້ນກິກຊຸທໍ່

ແຂວນໄວ້ທີ່ສາຍຣະດຽງ ທ່ານພຣະອານົນທ໌ທຽວຈາຣິກໄປຕາມເສນາສນະເຫັນຈີວອນເຫລົ່ານັ້ນແຂວນຢູ່ທີ່ສາຍຣະດຽງ ຈຶ່ງກ່າວກັບກິກສຸທັງຫລາຍວ່າ "ຈີວອນເຫລົ່ານີ້ຂອງໃຜແຂວນໄວ້ທີ່ສາຍຣະດຽງ"

ເຊີງອັນຖະ :

໑ ຜ້າຈຳນຳພັນສາ ຄືຜ້າທີ່ທາຍົກຖວາຍແກ່ພຣະສົງຄ໌ຜູ້ຢູ່ຈຳພັນສາແລ້ວ (ເບິ່ງຂໍ້ ໕໔໙ ໜ້າ ໑໕໙ ປະກອບ)

໔ ອັຈເຈກຈີວອນ ໝາຍເຖິງຈີວອນຮີບຮ້ອນຫລືຜ້າຈຳນຳພັນສາທີ່ທາຍົກຜູ້ມີເຫດຸຮີບຮ້ອນຂໍຖວາຍກ່ອນກຳໜົດເວລາປົກຕິ ມີພຸທລານຸຍາຕໃຫ້ກິກສຸຮັບເກັບໄວ້ໄດ້ ແຕ່ຕ້ອງຮັບກ່ອນວັນປວາຣະນາບໍ່ເກີນ ໑໐ ວັນ (ເບິ່ງຂໍ້ ໕໔໙ ໜ້າ ໑໕໙)

ກິກສຸທັງຫລາຍຕອບວ່າ "ອັຈເຈກຈີວອນຂອງພວກຜູ້ຂ້າ" ທ່ານພຣະອານົນທ໌ຖາມວ່າ "ທ່ານທັງຫລາຍ ພວກທ່ານເກັບຈີວອນເຫລົ່ານີ້ໄວ້ນານຈັກມື້ແລ້ວ" ກິກສຸເຫລົ່ານັ້ນບອກພຣະອານົນທ໌ຕາມທີ່ໄດ້ເກັບໄວ້ ທ່ານພຣະອານົນທ໌ຕຳໜິ ປະນາມ ໂພນທະນາວ່າ "ເປັນຫຍັງກິກສຸທັງຫລາຍຮັບອັຈເຈກຈີວອນແລ້ວເກັບໄວ້ຈົນເກີນສມັຍຈີວອນກາລະ" ຄັນພຣະອານົນທ໌ຕຳໜິພວກກິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫດຸ ຊົງສອບຖາມກິກສຸທັງຫລາຍວ່າ "ກິກສຸທັງຫລາຍ ພວກກິກສຸຮັບອັຈເຈກຈີວອນເກັບໄວ້ຈົນເກີນສມັຍຈີວອນກາລແມ່ນແທ້ບໍ" ກິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລເຈົ້າຊົງຕຳໜິວ່າ "ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຮັບອັຈເຈກຈີວອນເກັບໄວ້ຈົນເກີນສມັຍຈີວອນກາລະ ໂມຄບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໗] ກໍ ເມື່ອຍັງເຫລືອອີກ ໑໐ ວັນຈຶ່ງຈະເຖິງວັນເພັງເດືອນ ໑໑ ຊຶ່ງເປັນວັນຄົບໄຕຣມາສ໑ ອັຈເຈກຈີວອນເກີດຂຶ້ນແກ່ກິກສຸ ກິກສຸຮູ້ຢູ່ວ່າເປັນອັຈເຈກຈີວອນເພິງຮັບໄວ້ ຄັນຮັບໄວ້ແລ້ວຄວຣ

ເກັບໄວ້ໄດ້ຊົ່ວສະໄໝທີ່ເປັນຈີວອນກາລ ຖ້າເກັບໄວ້ເກີນກຳຫນົດນັ້ນ ຕ້ອງອາບັດນິສສັຄຄີຍປາຈິດ ຕີຍ໌

ເຣື່ອງມຫາອມາຕຍ໌ຖວາຍຜ້າຈຳນຳພັນສາ ຈົບ

ເຊີງອັນຖະ :

໑ ຫມາຍເຖິງ ວັນຂຶ້ນ ໑໕ ຄ່ຳ ເດືອນ ໑໑ ຊຶ່ງເປັນວັນທີ່ຄົບ ໓ ເດືອນ ນັບແຕ່ວັນເຂົ້າພັນສາ (ເບິ່ງຂໍ້ ໓໔໘ ຫນ້າ ໑໖໘)

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄີຍກັຕຫ໌] ໓. ປັຕຕວັຄ ໗. ອັຈເຈກຈີວອນສິກຂາບົທ ສິກຂາບົທວິກັງຄ໌

ສິກຂາບົທວິກັງຄ໌

[໓໔໘] ຄຳວ່າ ເມື່ອຍັງເຫລືອອີກ ໑໐ ວັນ ຄື ອີກ ໑໐ ວັນຈະເຖິງວັນປວາຣຕາ

ຄຳວ່າ ວັນເພັງເດືອນ ໑໑ ຊຶ່ງເປັນວັນຄົບໄຕຣມາສ ທ່ານກ່າວຫມາຍເອົາວັນປວາຣຕາເດືອນ ໑໑

ທີ່ຊື່ວ່າ ອັຈເຈກຈີວອນ ອະທິບາຍວ່າ ຜູ້ປະສົງຄ໌ຈະໄປໃນກອງທັພ ປະສົງຄ໌ຈະໄປພັກແຮມຕ່າງຖິ່ນ ເຈັບໄຂ້ ສຕຣີມີຄັນກ໌ ຜູ້ບໍ່ມີສັດທາໄດ້ເກີດສັດທາຂຶ້ນຫລືຜູ້ບໍ່ເຫລື້ອມໃສໄດ້ເກີດຄວາມເຫລື້ອມໃສຂຶ້ນ ຖ້າເຂົາສົ່ງທູຕໄປເຖິງກິກສຸວ່າ "ນິມົນຕ໌ພຣະຄຸຕເຈົ້າທັງຫລາຍມາເຖີດ ຂ້າພະເຈົ້າຈະຖວາຍຜ້າຈຳນຳພັນສາ" ຜ້າເຊັ່ນນີ້ຊື່ວ່າອັຈເຈກຈີວອນ

ຄຳວ່າ ຮູ້ຢູ່ວ່າເປັນອັຈເຈກຈີວອນເພິ່ງຮັບໄວ້ ຄັນຮັບໄວ້ແລ້ວຄວຣເກັບໄວ້ໄດ້ຊົ່ວສະໄໝທີ່ເປັນຈີວອນກາລ ຄື ກິກສຸເພິ່ງທຳເຄື່ອງຫມາຍວ່າ "ນີ້ຄືອັຈເຈກຈີວອນ" ແລ້ວເກັບໄວ້

ທີ່ຊື່ວ່າ ສະໄໝທີ່ເປັນຈີວອນກາລ ຄື ເມື່ອຍັງບໍ່ໄດ້ກຣານກຖິນມີເວລາທ້າຍຣະດູຝົນ ໑ ເດືອນ ເມື່ອກຣານກຖິນແລ້ວ ຂຍາຍເວລາອອກໄປອີກເປັນ ໕ ເດືອນ

ຄຳວ່າ ຖ້າເກັບໄວ້ເກີນກຳຫນົດນັ້ນ ຄື ເມື່ອບໍ່ກຣານກຖິນ ໃຫ້ເກີນວັນສຸດທ້າຍຣະດູຝົນ ຕ້ອງອາບັດນິສສັຄຄີຍປາຈິຕຕີຍ໌ ເມື່ອໄດ້ກຣານກຖິນແລ້ວເກັບໄວ້ເລີຍວັນກຖິນເດາະ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກສຸທັງຫລາຍ ກິກສຸເພິ່ງສລະອັຈເຈກຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະອັຈເຈກຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອັຈເຈກຈີວອນຜືນນີ້ ຜູ້ຂ້າເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ເປັນນິສສັຄຄີຍ໌ ຜູ້ຂ້າສລະອັຈເຈກຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນອັຈເຈກຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ອັຈເຈກຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ອັຈເຈກຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ຄຄະ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອັຈເຈກຈີວອນຜືນນີ້ຜູ້ຂ້າເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ເປັນນິສສັຄຄີຍ໌ ຜູ້ຂ້າສລະອັຈເຈກຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິງຮັບອາບັຕິ ຄັນຮັບອາບັຕິແລ້ວ ເພິງຄືນອັຈເຈກຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ອັຈເຈກຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ອັຈເຈກຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອັຈເຈກຈີວອນຜືນນີ້ຜູ້ຂ້າເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ເປັນນິສສັຄຄີຍ໌ ຜູ້ຂ້າສລະອັຈເຈກຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິ ແລ້ວຄືນອັຈເຈກຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນອັຈເຈກຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໓໕໐] ອັຈເຈກຈີວອນ ພິກຂຸສຳຄັນວ່າອັຈເຈກຈີວອນ ເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ອັຈເຈກຈີວອນ ພິກຂຸບໍ່ແນ່ໃຈ ເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ອັຈເຈກຈີວອນ ພິກຂຸສຳຄັນວ່າບໍ່ແມ່ນອັຈເຈກຈີວອນ ເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັຓฑ໌] ໓. ປັຕຕວັຄ ๘. ອັຈເຈກຈີວອນສິກຂາບົທ ອນາປັຕຕິວາຣ

ຈີວອນທີ່ຍັງບໍ່ໄດ້ອະທິຊຖານ ພິກຂຸສຳຄັນວ່າອະທິຊຖານແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ໄດ້ວິກັປ ພິກຂຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ໄດ້ສລະ ພິກຂຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ສູນຫາຍ ພິກຂຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຈິບຫາຍ ພິກຂຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຖືກໄຟໄໝ້ ພິກຂຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຖືກໂຈຣຍາດຊີງໄປ ພິກຂຸສຳຄັນວ່າຖືກໂຈຣຍາດຊີງໄປແລ້ວ ໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຕິກທຸກກະ

ພິກຂຸຍັງບໍ່ໄດ້ສລະຈີວອນທີ່ເປັນນິສສັຄຄີຍ໌ ໃຊ້ສອຍ ຕ້ອງອາບັຕິທຸກກະ
ຈີວອນທີ່ບໍ່ແມ່ນອັຈເຈກຈີວອນ ພິກຂຸສຳຄັນວ່າອັຈເຈກຈີວອນ ຕ້ອງອາບັຕິທຸກກະ
ຈີວອນທີ່ບໍ່ແມ່ນອັຈເຈກຈີວອນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ຈີວອນທີ່ບໍ່ແມ່ນອັຈເຈກຈີວອນ ພິກຂຸສຳຄັນວ່າບໍ່ແມ່ນອັຈເຈກຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໕໑] ໑. ພິກຂຸອະທິຊຖານພາຍໃນເວລາທີ່ກຳໜົດ

໔. ພິກษຸວິກັປໄວ້ພາຍໃນເວລາທີ່ກຳໜົດ
໖. ພິກษຸສລະໃຫ້ໄປພາຍໃນເວລາທີ່ກຳໜົດ
໔. ພິກษຸທີ່ມີຈີວອນສູນຫາຍພາຍໃນເວລາທີ່ກຳໜົດ
໕. ພິກษຸທີ່ມີຈີວອນຈິບຫາຍພາຍໃນເວລາທີ່ກຳໜົດ
໖. ພິກษຸທີ່ມີຈີວອນຖືກໄຟໄໝ້
໗. ພິກษຸທີ່ມີຈີວອນຖືກໂຈຣຍາດຊິງເອົາໄປ
໘. ພິກษຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະ
໙. ພິກษຸວິກົລຈິຕ
໑໐. ພິກษຸຕົ້ນບັນຍັດ

ອັຈເຈກຈີວອນສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕຫ໌] ໖. ປັຕຕວັຄ ໙. ສາສັງກສິກຂາບົທ ນິທານວັຕຖຸ

໖. ປັຕຕວັຄ

໙. ສາສັງກສິກຂາບົທ
ວ່າດ້ວຍເສນາສນະປ່າທີ່ໜ້າຫວາດຣະແວງ

ເຣື້ອງພິກษຸຫລາຍຣູບ
[໖໕໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກษຸທັງຫລາຍເມື່ອອອກພັນษາປວາຣຓາແລ້ວຍັງຢູ່ໃນ ເສນາສນະປ່າ ກຸ່ມກັຕຕິກໂຈຣ໑ ເຂົ້າໃຈວ່າ "ພວກພິກษຸມີລາກ" ຈຶ່ງເຂົ້າປຸ້ນ ພວກພິກษຸໄດ້ນຳ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງອນຸຍາຕພິກษຸໃຫ້ເກັບຈີວອນໄວ້ໃນບໍຣິເວນບ້ານ
ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກษຸທັງ ຫລາຍວ່າ "ພິກษຸທັງຫລາຍ ເຮົາອນຸຍາຕໃຫ້ພິກษຸຜູ້ຢູ່ໃນເສນາສນະປ່າເກັບໄຕຣຈີວອນຜືນໃດຜືນ

ນຶ່ງໄວ້ໃນບໍຣິເວນບ້ານໄດ້"
ສມັຍນັ້ນ ພວກພິກສຸຊາບວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ພິກສຸຜູ້ຢູ່ໃນເສນາສນະປ່າເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານໄດ້" ຈຶ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານຢູ່ປຣາສເກີນ ໖ ຄືນ ຈີວອນເຫລົ່ານັ້ນສູນຫາຍແດ່ ຈິບຫາຍແດ່ ຖືກໄຟໄຫມ້ແດ່ ຖືກຫນູກັດແດ່ ພິກສຸເຫລົ່ານັ້ນມີຜ້າບໍ່ດີ ມີແຕ່ຈີວອນເກົ່າໆພິກສຸທັງຫລາຍກ່າວຢ່າງນີ້ວ່າ "ເຫຕຸໃດພວກທ່ານມີຜ້າບໍ່ດີ ມີແຕ່ຈີວອນເກົ່າໆ" ເທື່ອນັ້ນ ພິກສຸເຫລົ່ານັ້ນຈຶ່ງບອກເຣື້ອງນັ້ນໃຫ້ຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານ ແລ້ວຢູ່ປຣາສເກີນ ໖ ຄືນລະ" ຄັນພິກສຸທັງຫລາຍຕຳຫນິພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ກຕ຺ຕິກໂຈຣກາຕິ ກຕ຺ຕິກມາເສ ໂຈຣາ ຫມາຍເຖິງພວກໂຈຣເດືອນ ໑໔ (ວິ. ອ. ໒/໗໕໒/໔໔໗)

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານແລ້ວຢູ່ປຣາສເກີນ ໖ ຄືນ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ພິກສຸທັງຫລາຍ ຈັ່ງໃດໂມຄບຸຣຸສເຫລົ່ານັ້ນຈຶ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານແລ້ວຢູ່ປຣາສເກີນ ໖ ຄືນ ພິກສຸທັງຫລາຍການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໖໕໑] ກໍ ພິກສຸຈຳພັນສາແລ້ວຫວັງຈະຢູ່ໃນເສນາສນະປ່າທີ່ຮູ້ກັນວ່າຫນ້າຫວາດຣະແວງ ມີກັຍຫນ້າຢ້ານເຊັ່ນນັ້ນ ຈົນເຖິງວັນເພັງເດືອນ ໑໔ ເພິ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານໄດ້ ແລະພິກສຸນັ້ນຄວຣມີປັຈຈັຍບາງຢ່າງເພື່ອການຢູ່ປຣາສຈາກຈີວອນນັ້ນ ພິກສຸນັ້ນເພິ່ງຢູ່

ປາສຈາກຈີວອນນັ້ນໄດ້ ໖ ຄືນເປັນຢ່າງຫລາຍ ຖ້າຢູ່ປຣາສເກີນກວ່າກຳຫນົດນັ້ນ ຕ້ອງອາບັຕິນິສ ສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກສຸຜູ້ໄດ້ຮັບສົມມຸດ

ເຣື້ອງກິກສຸຫລາຍຮູບ ຈົບ

ສິກຂາບົທວິກັງຄ໌

[໖໕໔] ຄຳວ່າ ກໍ. . . ຈຳພັນສາແລ້ວ ຄື ອອກພັນສາແລ້ວ

ຄຳວ່າ ວັນເພັງເດືອນ ໑໒ ພຣະຜູ້ມີພຣະກາຄຕຣັສວ່າຕຣົງກັບວັນປຸຣຕມີດິຖີທີ ໔ ໃນກັຕຕິກາ ມາສ

ຄຳວ່າ ເສນາສນະປ່າ ຄວາມວ່າ ເສນາສນະທີ່ຊື່ວ່າປ່າ ມີຣະຍະ ໕໐໐ ຊົ່ວຄນູ ເປັນຢ່າງຕ່ຳ

ທີ່ຊື່ວ່າ ຫນ້າຫວາດຣະແວງ ຄື ໃນອາຮາມ ອຸປຈາຣແຫ່ງອາຮາມ ປາກົດທີ່ຢູ່ ປາກົດທີ່ກິນ ປາກົດ ທີ່ຢືນ ປາກົດທີ່ນັ່ງ ປາກົດທີ່ນອນຂອງພວກໂຈຣ

ທີ່ຊື່ວ່າ ມີກັຍຫນ້າຢ້ານ ຄື ໃນອາຮາມ ອຸປຈາຣແຫ່ງອາຮາມ ປາກົດມີມນຸສຍ໌ຖືກພວກໂຈຣຂ້າ ປາກົດມີມນຸສຍ໌ຖືກປຸ້ນ ປາກົດມີມນຸສຍ໌ຖືກທຸບຕີ

ຄຳວ່າ ກິກສຸ. . . ຈະຢູ່ໃນເສນາສນະປ່າເຊັ່ນນັ້ນ ຄວາມວ່າ ກິກສຸຍັບຍັ້ງຢູ່ໃນເສນາສນະເຊັ່ນນັ້ນ

ຄຳວ່າ ຫວັງ ຄື ປຣາຖນາ

ຄຳວ່າ ໄຕຣຈີວອນຜືນໃດຜືນນຶ່ງ ໄດ້ແກ່ ສັງຄາຕິ ອຸຕຕຣາສົງຄ໌ຫລືອັນຕຣວາສກ

ຄຳວ່າ ເພິ່ງເກັບໄວ້ໃນບໍຣິເວນບ້ານໄດ້ ຄື ເກັບໄວ້ໃນໂຄຈຣຄາມໂດຍຮອບ

ຄຳວ່າ ກິກສຸນັ້ນຄວຣມີປັຈຈັຍບາງຢ່າງເພື່ອການຢູ່ປາສຈາກຈີວອນນັ້ນ ຄື ມີເຫຕຸຜົລຫລືກໍຣະກິຍ ກິຈ

ຄຳວ່າ ກິກສຸເພິ່ງຢູ່ປາສຈາກຈີວອນນັ້ນໄດ້ ໖ ຄືນເປັນຢ່າງຫລາຍ ຄວາມວ່າ ຢູ່ປຣາສໄດ້ພຽງ ໖ ຄືນເປັນຢ່າງຫລາຍ

ຄຳວ່າ ເວັ້ນໄວ້ແຕ່ກິກສຸຜູ້ໄດ້ຮັບສົມມຸດ ຄື ຍົກເວັ້ນກິກສຸທີ່ໄດ້ຮັບສົມມຸດ

ຄຳວ່າ ຖ້າຢູ່ປຣາສເກີນກວ່າກຳຫນົດນັ້ນ ຄວາມວ່າ ເມື່ອຮຸ່ງອຣຸຕວັນທີ ໗ ມາເຖິງ ຈີວອນນັ້ນເປັນ ນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ກິກສຸທັງຫລາຍ ກິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ກິກຂຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສເກີນ ໖ ຄືນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ອຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ຄຕະ

ກິກຂຸຮູບນັ້ນເພິ່ງເຂົ້າໄປຫາກິກຂຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນກິກຂຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສເກີນ ໖ ຄືນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ກິກຂຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ອຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິ່ງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ້ອງຢື້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສເກີນ ໖ ຄືນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິ່ງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ອຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໖໕໕] ຈີວອນເກີນ ໖ ຄືນ ກິກຂຸສໍາຄັນວ່າເກີນ ຢູ່ປຣາສ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກຂຸໄດ້ສົມມຸດ

ຈີວອນເກີນ ໖ ຄືນ ກິກຂຸບໍ່ແນ່ໃຈ ຢູ່ປຣາສ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກຂຸ

ໄດ້ສົມມຸດ

ຈີວອນເກີນ ໒ ຄືນ ກິກສຸສຳຄັນວ່າຫນ້ອຍກວ່າ ຢູ່ປຣາສ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກສຸໄດ້ສົມມຸດ

ຈີວອນຍັງບໍ່ໄດ້ຖອນ ກິກສຸສຳຄັນວ່າຖອນແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ສລະ ກິກສຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ສູນຫາຍ ກິກສຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ຈິບຫາຍ ກິກສຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກໄຟໄຫມ້ ກິກສຸສຳຄັນວ່າຖືກໄຟໄຫມ້ແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກຍາດຊິງເອົາໄປ ກິກສຸສຳຄັນວ່າຖືກໂຈຣຍາດຊິງເອົາໄປແລ້ວ ຢູ່ປຣາສ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກສຸໄດ້ສົມມຸດ

ທຸກກຸກກດ

ກິກສຸບໍ່ໄດ້ສລະຈີວອນເປັນນິສສັຄຄີຍ໌ ໃຊ້ສອຍ ຕ້ອງອາບັຕິທຸກກດ

ຈີວອນຫນ້ອຍກວ່າ ໒ ຣາຕຣີ ກິກສຸສຳຄັນວ່າເກີນແລ້ວ ຕ້ອງອາບັຕິທຸກກດ

ຈີວອນຫນ້ອຍກວ່າ ໒ ຣາຕຣີ ກິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກດ

ຈີວອນຫນ້ອຍກວ່າ ໒ ຣາຕຣີ ກິກສຸສຳຄັນວ່າຫນ້ອຍກວ່າ ໃຊ້ສອຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໕໒] ໑. ກິກສຸຢູ່ປຣາສ ໒ ຣາຕຣີ

໒. ກິກສຸຢູ່ປຣາສຫນ້ອຍກວ່າ ໒ ຣາຕຣີ

໓. ກິກສຸຢູ່ປຣາສ ໒ ຣາຕຣີ ແລ້ວກັບມາຄາມສີມາແລ້ວຈາກໄປ

໔. ກິກສຸຖອນຜ້າພາຍໃນ ໒ ຣາຕຣີ

໕. ກິກສຸສລະໃຫ້ພາຍໃນ ໒ ຣາຕຣີ

໖. ກິກສຸທີ່ມີຈີວອນສູນຫາຍພາຍໃນ ໒ ຣາຕຣີ

໗. ກິກສຸທີ່ມີຈີວອນຈິບຫາຍພາຍໃນ ໒ ຣາຕຣີ

໘. ກິກສຸທີ່ມີຈີວອນຖືກໄຟໄຫມ້ພາຍໃນ ໒ ຣາຕຣີ

໙. ກິກສຸທີ່ມີຈີວອນຖືກໂຈຣຍາດຊິງເອົາໄປພາຍໃນ ໒ ຣາຕຣີ

໑໐. ກິກສຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະພາຍໃນ ຝ ຣາຕຣີ
໑໑. ກິກສຸໄດ້ສົມມຸດ
໑໔. ກິກສຸວິກົລຈິຕ
໑໕. ກິກສຸຕົ້ນບັນຍັດ

ສາສັງກສິກຂາບົທທີ ລ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັຕທ໌] ໕. ປັຕຕວັຄ ໑໐. ປຣິຕາຕສິກຂາບົທ ນິທານວັຕຖຸ

໕. ປັຕຕວັຄ

໑໐. ປຣິຕາຕສິກຂາບົທ

ວ່າດ້ວຍການນ້ອມລາກ

ເຣື້ອງພຣະຈັພພັຄຄີຍ໌

[ຝ໕໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ທະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ສມາຄົມ໑ ນຶ່ງໃນກຸງສາວັຕຖີຕຽມກັຕຕາຫາຣພ້ອມຈີວອນໄວ້ຖວາຍສົງໝ໌ດ້ວຍຕັ້ງໃຈວ່າ "ພວກເຮົາຈັກນິມົນຕ໌ກິກສຸໃຫ້ຈັນແລ້ວໃຫ້ຄອງຈີວອນ" ຕໍ່ມາ ພວກກິກສຸຈັພພັຄຄີຍ໌ໄດ້ເຂົ້າໄປຫາສມາຄົມນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບສມາຄົມນັ້ນດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດຖວາຍຈີວອນແກ່ພວກອາຕມາ" ສມາຄົມນັ້ນກ່າວວ່າ "ທ່ານຜູ້ຈະເຣີນ ພວກເຮົາຈະບໍ່ຖວາຍ ພວກເຮົາຈັດກິກສາຫາຣພ້ອມກັບຈີວອນໄວ້ຖວາຍສົງໝ໌ເປັນປະຈຳທຸກປີ" ພວກກິກສຸຈັພພັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ທາຍົກຂອງສົງໝ໌ມີຫລາຍຄົນ ກັຕຕາຫາຣຂອງສົງໝ໌ກໍມີຈຳນວນຫລາຍ ພວກອາຕມາອາສັຍພວກທ່ານ ເຫັນແກ່ພວກທ່ານຈຶ່ງຢູ່ທີ່ນີ້ ຖ້າພວກທ່ານບໍ່ຖວາຍແກ່ພວກອາຕມາ ຄາວນີ້ ໃຜລະຈະຖວາຍແກ່ພວກອາຕມາ ພວກທ່ານໂປຣດຖວາຍຈີວອນແກ່ພວກອາຕມາເຖີດ"

ລຳດັບນັ້ນ ເມື່ອຖືກພວກກິກສຸຈັພພັຄຄີຍ໌ລົ້າໄລ ສມາຄົມນັ້ນຈຶ່ງຖວາຍຈີວອນຕາມທີ່ຈັດໄວ້ແລ້ວແກ່ພວກກິກສຸຈັພພັຄຄີຍ໌ແລ້ວປະເຄນສົງໝ໌ສະເພາະກັຕຕາຫາຣ ພວກກິກສຸທີ່ຊາບວ່າ "ສມາຄົມຈັດ

ອາຫານແລະຈີວອນໄວ້ຖວາຍສົງຄ໌" ແຕ່ບໍ່ຮູ້ວ່າ "ພວກເຂົາຖວາຍພວກພິກຂຸສັພພັຄຄີຍ໌ໄປແລ້ວ" ຈຶ່ງກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຈົ່ງຖວາຍຈີວອນແກ່ສົງຄ໌"

ເຊີງອັນຖະ :

໑ ປູຄສີສາຕິ ສມູຫສຸສ, ສມຸມຄຄາສຸສ ຫມູ່ຊົນ ຄືຄຕະຜູ້ປະຕິບັດສົມ ຫມາຍເຖິງສມາຄົມ (ວິ. ອ. ໒/໓໕໗/໒໔໗)

ສມາຄົມນັ້ນກ່າວວ່າ "ທ່ານຜູ້ຈະເຣີນ ບໍ່ມີຈີວອນຕາມທີ່ເຄີຍຈັດໄວ້ ພຣະຄຸຕເຈົ້າສັພພັຄຄີຍ໌ນ້ອມໄປເພື່ອຕົນແລ້ວ" ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸສັພພັຄຄີຍ໌ຮູ້ຢູ່ຈຶ່ງນ້ອມລາກທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸສັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ ນ້ອມລາກທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນ ແມ່ນແທ້ບໍ" ພວກພິກຂຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ໂມຄບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ຈຶ່ງນ້ອມລາກທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນລະ ໂມຄບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໕໘] ກໍ ພິກຂຸໃດຮູ້ຢູ່ ນ້ອມລາກທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໓໕໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ພິກຂຸຮູ້ເອງ ຄົນເຫລົ່າອື່ນບອກພິກຂຸນັ້ນ ຫລືຄົນນັ້ນບອກທ່ານ

ທີ່ຊື່ວ່າ ເປັນຂອງຈະຖວາຍສົງຄ໌ ໄດ້ແກ່ ເປັນຂອງທີ່ເຂົາຖວາຍຫລືບໍຣິຈາຄແລ້ວແກ່ສົງຄ໌

ທີ່ຊື່ວ່າ ລາພ ໄດ້ແກ່ ຈີວອນ ບິຕທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ໂດຍທີ່ສຸດຈົນເມື່ອກ້ອນຈຸຣຕະ ໄມ້ຊຳຣະແຂ້ວ ຫລືດ້າຍຊາຍຜ້າ

ທີ່ຊື່ວ່າ ນ້ອມໄວ້ ຄື ເຂົາເປັ່ງວາຈາວ່າ "ເຮົາຈະຖວາຍ ຈະກະທຳ" ພິກຂຸນ້ອມມາເພື່ອຕົນ ຕ້ອງອາບັຕິທຸກກຏເພາະພຍາຍາມ ເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄຕະຫລືແກ່ບຸຄຄົລ

ພິກຂຸທັງຫລາຍ ພິກຂຸເພິງສລະລາພທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະລາພທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກຂຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນຫາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ລາພນີ້ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ ຜູ້ຂ້າຮູ້ຢູ່ ນ້ອມມາເພື່ອຕົນ ເປັນນິສສັຄຄີຍ໌ ຜູ້ຂ້າສລະລາພນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນລາພທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ລາພນີ້ຂອງພິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ລາພນີ້ແກ່ພິກຂຸຊື່ນີ້"

ສລະແກ່ຄຕະ

ພິກຂຸຮູບນັ້ນເພິງເຂົ້າໄປຫາພິກຂຸຫລາຍຮູບ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກຂຸຜູ້ແກ່ພັນຫາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ລາພນີ້ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ ຜູ້ຂ້າຮູ້ຢູ່ ນ້ອມມາເພື່ອຕົນ ເປັນນິສສັຄຄີຍ໌ ຜູ້ຂ້າສລະລາພນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກຂຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນລາພທີ່ທ່ານສລະໃຫ້

ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ລາກຂອງກິກຂຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ລາກນີ້ແກ່ກິກຂຸຊື່ນີ້"

ສລະແກ່ບຸຄຄົລ

ກິກຂຸຮູບນັ້ນເພິງເຂົ້າໄປຫາກິກຂຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢັ້ປະນົມມື ກ່າວວ່າ "ທ່ານຂນ້ອຍ ລາກນີ້ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ ຜູ້ຂ້າຮູ້ຢູ່ ນ້ອມມາເພື່ອຕົນ ເປັນນິສສັຄຄີຍ໌ ຜູ້ຂ້າສລະລາກນີ້ແກ່ທ່ານ" ຄັນສລະແລ້ວ ເພິງສະແດງອາບັຕິ ກິກຂຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນລາກທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນລາກນີ້ໃຫ້ແກ່ທ່ານ"

ບົທກາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໕໐] ລາກທີ່ເຂົານ້ອມໄວ້ແລ້ວ ກິກຂຸສຳຄັນວ່າເຂົານ້ອມໄວ້ແລ້ວ ນ້ອມມາເພື່ອຕົນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຄ

ລາກທີ່ເຂົານ້ອມໄວ້ແລ້ວ ກິກຂຸບໍ່ແນ່ໃຈ ນ້ອມມາເພື່ອຕົນ ຕ້ອງອາບັຕິທຸກກຄ

ລາກທີ່ເຂົານ້ອມໄວ້ແລ້ວ ກິກຂຸສຳຄັນວ່າເຂົາບໍ່ໄດ້ນ້ອມໄວ້ ນ້ອມມາເພື່ອຕົນ ບໍ່ຕ້ອງອາບັຕິ

ລາກທີ່ເຂົານ້ອມໄວ້ເພື່ອສົງຄ໌ ກິກຂຸນ້ອມມາເພື່ອສົງຄ໌ອື່ນ ຫລືເພື່ອເຈດີຍ໌ ຕ້ອງອາບັຕິທຸກກຄ

ລາກທີ່ເຂົານ້ອມໄວ້ເພື່ອເຈດີຍ໌ ກິກຂຸນ້ອມມາເພື່ອເຈດີຍ໌ອື່ນ ເພື່ອສົງຄ໌ ເພື່ອຄຓະຫລືເພື່ອບຸຄຄົລ ຕ້ອງອາບັຕິທຸກກຄ

ລາກທີ່ເຂົານ້ອມໄວ້ເພື່ອບຸຄຄົລ ກິກຂຸນ້ອມມາເພື່ອບຸຄຄົລອື່ນ ເພື່ອສົງຄ໌ ເພື່ອຄຓະຫລືເພື່ອເຈດີຍ໌ ຕ້ອງອາບັຕິທຸກກຄ

ລາກທີ່ເຂົາບໍ່ໄດ້ນ້ອມໄວ້ ກິກຂຸສຳຄັນວ່າເຂົານ້ອມໄວ້ ຕ້ອງອາບັຕິທຸກກຄ

ລາກທີ່ເຂົາບໍ່ໄດ້ນ້ອມໄວ້ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຄ

ລາກທີ່ເຂົາບໍ່ໄດ້ນ້ອມໄວ້ ກິກຂຸສຳຄັນວ່າເຂົາບໍ່ໄດ້ນ້ອມໄວ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໑] ໑. ກິກຂຸຖືກທາຍົກຖາມວ່າ "ຈະຖວາຍທີ່ໃດ" ຈຶ່ງແນະນຳວ່າ "ໄທຍລັມຂອງພວກທ່ານ

ເພິງໄດ້ຮັບການໃຊ້ສອຍ ໄດ້ຮັບການປະຕິສັງຂອນ໌ ຫລືຢູ່ໄດ້ດີນໃນທີ່ໃດ ຫລືທ່ານມີຈິດເຫລື້ອມໃສໃນທີ່ໃດ ຈົ່ງຖວາຍໃນທີ່ນັ້ນເຖີດ”

໔. ກິກບຸວິກົລຈິຕ

໖. ກິກບຸຕົ້ນບັນຍັດ

ປຣິຕາຕສິກຂາບົທທີ ໑໐ ຈົບ

ປັຕຕວັຄທີ ໓ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໔. ນິສສັຄຄິຍກັດທ໌] ບົທສຣຸປ

ຮວມສິກຂາບົທທີ່ມີໃນປັຕຕວັຄ ຄື

ປັຕຕວັຄມີ ໑໐ ສິກຂາບົທ ຄື

໑. ປັຕຕສິກຂາບົທ ວ່າດ້ວຍບາຕຣ

໔. ອູນປັນຈພັນລນສິກຂາບົທ ວ່າດ້ວຍບາຕຣມີຮອຍສ້ອມຫນ້ອຍກວ່າ ໕ ບ່ອນ

໖. ເກສັຊຊສິກຂາບົທ ວ່າດ້ວຍເກສັຊ

໔. ວັສສິກສາຜິກສິກຂາບົທ ວ່າດ້ວຍຜ້າອາບນ້ຳຝົນ

໕. ຈີວອນອັຈລີນທານສິກຂາບົທ ວ່າດ້ວຍການໃຫ້ຈີວອນແລ້ວຍາດຊິງເອົາຄືນ

໖. ສຸຕຕວິຍັປຕິສິກຂາບົທ ວ່າດ້ວຍການອອກປາກຂໍດ້າຍ

໗. ມຫາເປສການສິກຂາບົທ ວ່າດ້ວຍການສັ່ງຊ່າງຕ່ຳຫູກທອຈີວອນ

໘. ອັຈເຈກຈີວອນສິກຂາບົທ ວ່າດ້ວຍອັຈເຈກຈີວອນ

໙. ສາສັງກສິກຂາບົທ ວ່າດ້ວຍເສນາສນະປ່າທີ່ຫນ້າຫວາດຣະແວງ

໑໐. ປຣິຕາຕສິກຂາບົທ ວ່າດ້ວຍການນ້ອມລາກ

ບົທສຣຸບ

[໖໖໔] ທ່ານທັງຫລາຍ ລັມຄືນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທ ຂ້າພະເຈົ້າ ຍົກຂຶ້ນສະແດງ
ແລ້ວ

ຂ້າພະເຈົ້າຂໍຖາມທ່ານທັງຫລາຍໃນນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທເຫລົ່ານັ້ນວ່າທ່ານທັງຫລາຍບໍຣິສຸດຄ໌ແລ້ວຫລື

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໔ ວ່າ "ທ່ານທັງຫລາຍບໍຣິສຸດຄ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດຄ໌ແລ້ວຫລື"
ທ່ານທັງຫລາຍບໍຣິສຸດຄ໌ແລ້ວໃນນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ
ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ນິສສັຄຄິຍກັຕຫ໌ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໑. ມຸສາວາທວັຄ ໑. ມຸສາວາທສິກຂາບົທ ນິທານວັຕຖຸ

໕. ປາຈິຕຕີຍກັຕຫ໌

ທ່ານທັງຫລາຍ ລົມຄືປາຈິຕຕີຍ໌ ໙໔ ສິກຂາບົທເຫລົ່ານີ້ ມາເຖິງວາຣະທີ່ຈະຍົກຂຶ້ນ ສະແດງເປັນຂໍ້ໆຕາມລຳດັບ

໑. ມຸສາວາທວັຄ

ຫມວດວ່າດ້ວຍການກ່າວເທັຈ

໑. ມຸສາວາທສິກຂາບົທ

ວ່າດ້ວຍການກ່າວເທັຈ

ເຣື້ອງພຣະຫັຕຖກສາກຍບຸຕຣ

[໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຕະ ພຣະເຊຕວັນ ອາຮາມຂອງອນາຖບິຕຫິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ພຣະຫັຕຖກສາກຍບຸຕຣເປັນນັກໂຕ້ວາທະ໑ ເມື່ອທ່ານເຈຣຈາກັບພວກເດັຽຣະຖີຍ໌ ປຜິເສລແລ້ວຮັບ ຮັບແລ້ວປຜິເສລ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນ ພວກເດັຽຣະຖີຍ໌ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຫັຕຖກສາກຍບຸຕຣ ເມື່ອເຈຣຈາກັບພວກເຮົາ ຈຶ່ງປຜິເສລແລ້ວຮັບ ຮັບແລ້ວປຜິເສລ ເອົາເຣື້ອງນຶ່ງມາກ່າວກົບເກື່ອນອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນລະ" ພວກກິກຂຸໄດ້ຍິນພວກເດັຽຣະຖີຍ໌ຕຳຫນິ ປະນາມ ໂພນທະນາ ຈຶ່ງເຂົ້າໄປ

ຫາພຣະຫັຕຖກອາລາວກະບຸດຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບພຣະຫັຕຖກອາລາວກະບຸດຣດັ່ງນີ້ວ່າ "ທ່ານຫັຕຖກະ ໄດ້ຊາບວ່າ ເມື່ອທ່ານເຈຣຈາກັບພວກເດັຽຣະຖີຍ໌ ປະຕິເສດແລ້ວຮັບ ຮັບແລ້ວ

ເຊີງອັນຖະ :

໑ ອາຫກຸຂິຕຸຕ ທີ່ແປວ່າ "ເປັນນັກໂຕ້ອາທະ" ນັ້ນ ຕາມອະທິບາຍແຫ່ງອັນຖະກະຖາວ່າ "ອາທံ ກຣິສຸສາມີ"ຕິ ເອວံ ປຣິວິຕກຸກິເຕນ ອາເທນ ປຣອາທີສມຸຕິກံ ຂິຕຸໂຕ ປກຸຂິຕຸໂຕ, ປຫິໂຕ ເປສີໂຕຕິ ອຕຸໂຖ ອາຫມຸທີ ວາ ສເກນ ຈິຕຸເຕນ ຂິຕຸໂຕ, ຍຕຸຣ ຍຕຸຣ ວາໂທ ຕຕຸຣ ຕຕຸເຣວ ສນຸທິສຸສຕີຕິປິ ອາຫກຸຂິຕຸໂຕ ຖືກອາທະທີ່ກຳຫນົດໄວ້ວ່າ ເຮົາຈັກໂຕ້ອາທະແກວ່ງໄປ ໄສໄປ ສົ່ງໄປຍັງສຳນັກປຣອາທີ ອີກປະການນຶ່ງ ຄືຖືກຈິດຂອງຕົນສົ່ງໄປໃນສຖານທີ່ໂຕ້ອາທະ ຄືໃນທີ່ໃດໆມີການໂຕ້ອາທະກັນ ຍ່ອມໄປປາກົດຕົວໃນທີ່ນັ້ນໆ(ວິ. ອ. ໔/໑/໔໕໓)

ປະຕິເສດ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນ ແມ່ນແທ້ບໍ"ພຣະຫັຕຖກອາລາວກະບຸດຣຕອບວ່າ "ເຮົາຕ້ອງເອົາຊນະພວກເດັຽຣະຖີຍ໌ເຫລົ່ານັ້ນດ້ວຍວິທີໃດວິທີນຶ່ງ ພວກເຮົາບໍ່ຄວຣໃຫ້ຊັຍຊນະແກ່ພວກເດັຽຣະຖີຍ໌ເຫລົ່ານັ້ນ" ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຫັຕຖກອາລາວກະບຸດຣເມື່ອເຈຣຈາກັບພວກເດັຽຣະຖີຍ໌ ຈຶ່ງປະຕິເສດແລ້ວຮັບ ຮັບແລ້ວປະຕິເສດ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນລະ" ຄັນພິກຂຸເຫລົ່ານັ້ນຕຳຫນິພຣະຫັຕຖກອາລາວກະບຸດຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະຫັຕຖກອາລາວກະບຸດຣວ່າ "ຫັຕຖກະ ຊາບວ່າ ເມື່ອທ່ານເຈຣຈາກັບພວກເດັຽຣະຖີຍ໌ ປະຕິເສດແລ້ວຮັບ ຮັບແລ້ວປະຕິເສດ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນ ແມ່ນແທ້ບໍ" ພຣະຫັຕຖກອາລາວກະບຸດຣທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຣເຈົ້າຊົງຕຳຫນິວ່າ "ໂມຄບຸຣຸຊ ຈັ່ງໃດທ່ານ ເມື່ອເຈຣຈາກັບພວກເດັຽຣະຖີຍ໌ ຈຶ່ງປະຕິເສດແລ້ວຮັບ ຮັບແລ້ວປະຕິເສດ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນລະ ໂມຄບຸຣຸຊ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່

ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒] ພິກຂຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້

ເຣື້ອງພຣະຫັຕຖກສາກຍບຸຕຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຌ໌] ໑. ມຸສາວາທວັຄ ໑. ມຸສາວາທສິກຂາບົທ ບົທ ພາຊນີຍ໌

ສິກຂາບົທວິພັງຄ໌

[໓] ທີ່ຊື່ວ່າ ກ່າວເທັຈທັງທີ່ຮູ້ ໄດ້ແກ່ ວາຈາ ສຽງທີ່ເປັ່ງອອກ ຄຳເປັນທາງວຈີເພທ ເຈຕນາທີ່ໃຫ້ຮູ້ທາງວາຈາຂອງຜູ້ມຸ່ງຈະກ່າວໃຫ້ຄາດຄວາມແມ່ນແທ້ໄດ້ແກ່ ຖ້ອຍຄຳຂອງອນາຣຍຊົນ ໘ ຢ່າງ ຄື

໑. ບໍ່ໄດ້ເຫັນ ແຕ່ກ່າວວ່າ ຂ້າພະເຈົ້າໄດ້ເຫັນ

໒. ບໍ່ໄດ້ຍິນ ແຕ່ກ່າວວ່າ ຂ້າພະເຈົ້າໄດ້ຍິນ

໓. ບໍ່ຊາບ ແຕ່ກ່າວວ່າ ຂ້າພະເຈົ້າຊາບ

໔. ບໍ່ຮູ້ ແຕ່ກ່າວວ່າ ຂ້າພະເຈົ້າຮູ້

໕. ໄດ້ເຫັນ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ໄດ້ເຫັນ

໖. ໄດ້ຍິນ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ໄດ້ຍິນ

໗. ຊາບ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ຊາບ

໘. ຮູ້ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ຮູ້

ບົທພາຊນີຍ໌

໑. ທີ່ຊື່ວ່າ ບໍ່ໄດ້ເຫັນ ຄື ບໍ່ໄດ້ເຫັນດ້ວຍຕາ

໒. ທີ່ຊື່ວ່າ ບໍ່ໄດ້ຍິນ ຄື ບໍ່ໄດ້ຍິນດ້ວຍຫູ

໓. ທີ່ຊື່ວ່າ ບໍ່ຮູ້ ຄື ບໍ່ໄດ້ສູດດົມດ້ວຍດັງ ບໍ່ໄດ້ລີ້ມດ້ວຍລີ້ນ ບໍ່ໄດ້ສັມຜັສດ້ວຍກາຍ

໔. ທີ່ຊື່ວ່າ ບໍ່ຮູ້ ຄື ບໍ່ຮູ້ດ້ວຍໃຈ
໕. ທີ່ຊື່ວ່າ ໄດ້ເຫັນ ຄື ໄດ້ເຫັນດ້ວຍຕາ
໖. ທີ່ຊື່ວ່າ ໄດ້ຍິນ ຄື ໄດ້ຍິນດ້ວຍຫູ
໗. ທີ່ຊື່ວ່າ ຊາບ ຄື ໄດ້ສູດດົມດ້ວຍດັງ ໄດ້ລີ້ມດ້ວຍລີ້ນ ໄດ້ສັມຜັສດ້ວຍກາຍ
໘. ທີ່ຊື່ວ່າ ຮູ້ ຄື ຮູ້ດ້ວຍໃຈ

ອາການກ່າວເທັຈທັງທີ່ຮູ້

໑. ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ

[໔] ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕິຍ໌

໔. ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ

[໕] ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

໓. ບໍ່ຊາບ ແຕ່ກ່າວວ່າຊາບ

ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

໔. ບໍ່ຮູ້ ແຕ່ກ່າວວ່າຮູ້

ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນແລະໄດ້ຍິນ

[໖] ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນແລະຊາບ

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນແລະຮູ້

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນ ແລະຊາບ
ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນ ແລະຮູ້
ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຮູ້ແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນ ຊາບ ແລະຮູ້
ບໍ່ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ຊາບແລ້ວແລະຮູ້ແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນແລະຊາບ
ບໍ່ໄດ້ຍິນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຊາບແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນແລະຮູ້
ບໍ່ໄດ້ຍິນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຮູ້ແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ
ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນແລະໄດ້ເຫັນ
ບໍ່ໄດ້ຍິນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ ຊາບ ແລະຮູ້
ບໍ່ໄດ້ຍິນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ ຊາບແລ້ວ ແລະຮູ້ແລ້ວ" ດ້ວຍອາການ ៥ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ ຊາບ ແລະໄດ້ເຫັນ
ບໍ່ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ ຊາບແລ້ວ ແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ ຊາບ ຮູ້ ແລະໄດ້ເຫັນ
ບໍ່ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນ ຊາບແລ້ວ ຮູ້ແລ້ວ ແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບແລະຮູ້
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະຮູ້ແລ້ວ" ດ້ວຍອາການ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບແລະໄດ້ເຫັນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບແລະໄດ້ຍິນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບ ຮູ້ ແລະໄດ້ເຫັນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວ ແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບ ຮູ້ ແລະໄດ້ຍິນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວ ແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບ ຮູ້ ເຫັນ ແລະໄດ້ຍິນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວ ໄດ້ເຫັນແລ້ວ ແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ແລະໄດ້ເຫັນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ແລະໄດ້ຍິນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ແລະຊາບ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ ໄດ້ເຫັນ ແລະໄດ້ຍິນ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ ໄດ້ເຫັນ ແລະຊາບ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ ໄດ້ເຫັນ ໄດ້ຍິນແລະຊາບ
ບໍ່ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຢ໌ ຯລຯ

໕. ໄດ້ເຫັນ ແຕ່ກ່າວວ່າບໍ່ໄດ້ເຫັນ

[໗] ໄດ້ເຫັນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ ຄື

(໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌

ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ໄດ້ເຫັນແລ້ວ" ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

໖. ໄດ້ຍິນ ແຕ່ກ່າວວ່າບໍ່ໄດ້ຍິນ

ໄດ້ຍິນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

໗. ຊາບ ແຕ່ກ່າວວ່າບໍ່ຮູ້

ຊາບ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

໘. ຮູ້ ແຕ່ກ່າວວ່າບໍ່ຮູ້

ຮູ້ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ຮູ້ແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌

ຮູ້ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ຮູ້ແລ້ວ" ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື

(໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນ

[໘] ໄດ້ເຫັນ ກິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາການ ໓ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າຊາບ
ໄດ້ເຫັນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າຮູ້

ໄດ້ເຫັນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນແລະຊາບ

ໄດ້ເຫັນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຊາບແລ້ວ" ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນແລະຮູ້

ໄດ້ເຫັນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຮູ້ແລ້ວ" ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນ ຊາບແລະຮູ້

ໄດ້ເຫັນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ຊາບແລ້ວແລະຮູ້ແລ້ວ ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບ

ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຮູ້

ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໖ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າໄດ້ເຫັນ

ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບແລະຮູ້

ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະຮູ້ແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບແລະໄດ້ເຫັນ

ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະໄດ້ເຫັນແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບ ຮູ້ ແລະໄດ້ເຫັນ

ໄດ້ຍິນ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້

ຊາບ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຊາບ ແຕ່ກ່າວວ່າໄດ້ເຫັນ

ຊາບ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຊາບ ແຕ່ກ່າວວ່າໄດ້ຍິນ

ຊາບ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້ແລະໄດ້ເຫັນ
ຊາບ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້ແລະໄດ້ຍິນ
ຊາບ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້ ໄດ້ເຫັນ ແລະໄດ້ຍິນ
ຊາບ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນ
ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ຍິນ
ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຮູ້ ແຕ່ກ່າວວ່າຊາບ
ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນແລະໄດ້ຍິນ
ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນແລະຊາບ

ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນແລະຊາບ

ຮູ້ ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ - ແຕ່ບໍ່ແນ່ໃຈ

[໙] ພິກຂຸບໍ່ແນ່ໃຈສິ່ງທີ່ໄດ້ເຫັນ ກໍາຫນົດສິ່ງທີ່ໄດ້ເຫັນບໍ່ໄດ້ ຈໍາສິ່ງທີ່ໄດ້ເຫັນບໍ່ໄດ້ ຫລົງລືມສິ່ງທີ່ໄດ້ເຫັນ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ພິກຂຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ຊາບແລ້ວ ແລະຮູ້ແລ້ວ" ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ - ແຕ່ບໍ່ແນ່ໃຈ

ພິກຂຸບໍ່ແນ່ໃຈສິ່ງທີ່ໄດ້ຍິນ ກໍາຫນົດສິ່ງທີ່ໄດ້ຍິນບໍ່ໄດ້ ຈໍາສິ່ງທີ່ໄດ້ຍິນບໍ່ໄດ້ ຫລົງລືມສິ່ງທີ່ໄດ້ຍິນ ຯລຯ

ຊາບ - ແຕ່ບໍ່ແນ່ໃຈ

ພິກຂຸບໍ່ແນ່ໃຈສິ່ງທີ່ໄດ້ຊາບ ກໍາຫນົດສິ່ງທີ່ໄດ້ຊາບບໍ່ໄດ້ ຈໍາສິ່ງທີ່ໄດ້ຊາບບໍ່ໄດ້ຫລົງລືມສິ່ງທີ່ໄດ້ຊາບ ຯລຯ

ຮູ້ - ແຕ່ບໍ່ແນ່ໃຈ ເປັນຕົ້ນ

ພິກຂຸບໍ່ແນ່ໃຈສິ່ງທີ່ໄດ້ຮູ້ ກໍາຫນົດສິ່ງທີ່ໄດ້ຮູ້ບໍ່ໄດ້ ຈໍາສິ່ງທີ່ໄດ້ຮູ້ບໍ່ໄດ້ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ຍິນແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະຊາບແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະໄດ້ຍິນແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້

ວ່າ “ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະຊາບແລ້ວ” ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ” ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌

[໑໐] ກິກຂຸບໍ່ແນ່ໃຈສິ່ງທີ່ໄດ້ຮູ້ ກຳຫນົດສິ່ງທີ່ໄດ້ຮູ້ບໍ່ໄດ້ ຈຳສິ່ງທີ່ໄດ້ຮູ້ບໍ່ໄດ້ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ” ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໑] ໑. ກິກຂຸກ່າວພັ້ງໄປ

໒. ກິກຂຸກ່າວພາດໄປ

໓. ກິກຂຸວິກົລຈິຕ

໔. ກິກຂຸຕົ້ນບັນຍັດ

ມຸສາວາທສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕທ໌] ໑. ມຸສາວາທວັຄ ໒. ໂອມສວາທສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໒. ໂອມສວາທສິກຂາບົທ

ວ່າດ້ວຍການກ່າວສຽດສີ

ເລື່ອງພຣະສັພພັຄຄີຍ໌

[໑໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຕະ ພຣະເຊຕວັນ ອາຣາມຂອງອນາຖບິຕຫິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ພວກກິກສຸສັພພັຄຄີຍ໌ຜິດຖຽງກັບພວກກິກສຸຜູ້ມີສີລດີງາມ ກ່າວສຽດສີກິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ອຍຊາຕິກຳເນີດແດ່ ດ້ອຍຊື່ແດ່ ດ້ອຍຕະກູນແດ່ ດ້ອຍໜ້າທີ່ກາຣງານແດ່ ດ້ອຍສີລປວິທຍາແດ່ ດ້ອຍຄວາມເຈັບໄຂ້ແດ່ ດ້ອຍຣູປລັກສຕ໌ແດ່ ດ້ອຍກິເລສແດ່ ດ້ອຍອາບັຕິແດ່ ດ້ອຍຄຳດ່າທີ່ຫຍາບແດ່ ບັນດາກິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິປະນາມ ໂພນທະນາວ່າ "ຈັ່ງໃດພວກກິກສຸສັພພັຄຄີຍ໌ຈຶ່ງຜິດຖຽງກັບພວກກິກສຸຜູ້ມີສີລດີງາມ ກ່າວສຽດສີກິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ອຍຊາຕິກຳເນີດແດ່ ດ້ອຍຊື່ແດ່ ດ້ອຍຕະກູນແດ່ ດ້ອຍໜ້າທີ່ກາຣງານແດ່ ດ້ອຍສີລປວິທຍາແດ່ ດ້ອຍຄວາມເຈັບໄຂ້ແດ່ ດ້ອຍຣູປລັກສຕ໌ແດ່ ດ້ອຍກິເລສແດ່ ດ້ອຍອາບັຕິແດ່ ດ້ອຍຄຳດ່າທີ່ຫຍາບແດ່ລະ" ຄັນກິກສຸເຫລົ່ານັ້ນຕຳໜິພວກກິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເລື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກສຸສັພພັຄຄີຍ໌ວ່າ "ກິກສຸທັງຫລາຍ ຊາບວ່າ ພວກທ່ານຜິດຖຽງກັບພວກກິກສຸຜູ້ມີສີລດີງາມ ກ່າວສຽດສີກິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ອຍຊາຕິກຳເນີດແດ່ ດ້ອຍຊື່ແດ່ ດ້ອຍຕະກູນແດ່ ດ້ອຍໜ້າທີ່ກາຣງານແດ່ ດ້ອຍສີລປວິທຍາແດ່ ດ້ອຍຄວາມເຈັບໄຂ້ແດ່ ດ້ອຍຣູປລັກສຕ໌ແດ່ ດ້ອຍກິເລສແດ່ ດ້ອຍອາບັຕິແດ່ ດ້ອຍຄຳດ່າທີ່ຫຍາບແດ່ ແມ່ນແທ້ບໍ" ພວກກິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕຳໜິວ່າ "ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຜິດຖຽງກັບພວກກິກສຸຜູ້ມີສີລດີງາມ ກ່າວສຽດສີກິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ອຍຊາຕິກຳເນີດແດ່ ດ້ອຍຊື່ແດ່ ດ້ອຍຕະກູນແດ່ ດ້ອຍໜ້າທີ່ກາຣງານແດ່ ດ້ອຍສີລປວິທຍາແດ່ ດ້ອຍຄວາມເຈັບໄຂ້ແດ່ ດ້ອຍຣູປລັກສຕ໌ແດ່ ດ້ອຍກິເລສແດ່ ດ້ອຍອາບັຕິແດ່ ດ້ອຍຄຳດ່າທີ່ຫຍາບແດ່ລະ ໂມຄບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳໜິແລ້ວຊົງສະແດງທັມມີກຖາຮັບສັ່ງກັບກິກສຸທັງຫລາຍວ່າ

ໂຄນັນທິວິສາລ

[໑໕] ກິກສຸທັງຫລາຍ ເລື່ອງເຄີຍມີມາແລ້ວ ພຣາມຕ໌ຄົນນຶ່ງໃນເມືອງຕັກກສິລາ ມີໂຄເຖິກຊື່ ນັນ

ທີວິສາລ ກິກຂຸທັງຫລາຍ ຄັ້ງນັ້ນແລ ໂຄເຖິກຊື່ນັນທີວິສາລໄດ້ກ່າວກັບພຣາມຕ໌ນັ້ນດັ່ງນີ້ວ່າ "ທ່ານພຣາມຕ໌ ທ່ານຈົ່ງໄປທຳການພນັນເອົາຊັພຍ໌ ໑,໐໐໐ ກຫາປຕະກັບເສດຖີວ່າ ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້" ກິກຂຸທັງຫລາຍ ເທື່ອນັ້ນ ພຣາມຕ໌ໄດ້ໄປທຳການພນັນເອົາຊັພຍ໌ ໑,໐໐໐ ກຫາປຕະ ກັບເສດຖີດ້ວຍກ່າວວ່າ "ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້" ກິກຂຸທັງຫລາຍ ຄັນແລ້ວພຣາມຕ໌ນັ້ນກໍຜູກກວຽນ ໑໐໐ ເຫລັ້ມທຽມໂຄເຖິກນັນທີວິສາລ ແລ້ວຈຶ່ງໄດ້ກ່າວດັ່ງນີ້ວ່າ "ເຈົ້າໂຄໂກງ ເຈົ້າຈົ່ງດຶງ ເຈົ້າໂຄໂກງ ເຈົ້າຈົ່ງລາກໄປ" ຄັ້ງນັ້ນແລ ໂຄເຖິກນັນທີວິສາລໄດ້ຢືນນິ່ງເສີຍຢູ່ ໓ະ ທີ່ນັ້ນເອງ ພຣາມຕ໌ນັ້ນເສັຽພນັນ ເສັຽຊັພຍ໌ ໑,໐໐໐ ກຫາປຕະ ເສົ້າຊຶມໄປ ຕໍ່ມາ ໂຄເຖິກນັນທີວິສາລໄດ້ກ່າວກັບພຣາມຕ໌ນັ້ນດັ່ງນີ້ວ່າ "ທ່ານພຣາມຕ໌ ເຫຕຸໃດທ່ານຈຶ່ງເສົ້າຊຶມ" ພຣາມຕ໌ຕອບວ່າ "ກໍເພາະເຈົ້າເຮັດໃຫ້ເຮົາຕ້ອງເສັຽຊັພຍ໌ໄປເຖິງ ໑,໐໐໐ ກຫາປຕະ" ໂຄເຖິກນັນທີວິສາລກ່າວວ່າ "ທ່ານພຣາມຕ໌ ທ່ານຮຽກຂ້າພະເຈົ້າຜູ້ບໍ່ໂກງດ້ວຍຄຳວ່າໂກງເປັນຫຍັງລະ ທ່ານຈົ່ງໄປທຳການພນັນເອົາຊັພຍ໌ ໒,໐໐໐ ກຫາປຕະ ກັບເສດຖີດ້ວຍກ່າວວ່າ 'ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້' ແຕ່ທ່ານຢ່າຮຽກຂ້າພະເຈົ້າຜູ້ບໍ່ໂກງດ້ວຍຄຳວ່າໂກງ" ພຣາມຕ໌ຈຶ່ງໄປພນັນເອົາຊັພຍ໌ ໒,໐໐໐ ກຫາປຕະກັບເສດຖີດ້ວຍກ່າວວ່າ "ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້" ກິກຂຸທັງຫລາຍ ຄັນແລ້ວພຣາມຕ໌ນັ້ນກໍຜູກກວຽນ ໑໐໐ ເຫລັ້ມ ທຽມໂຄນັນທີວິສາລແລ້ວ ຈຶ່ງໄດ້ກ່າວດັ່ງນີ້ວ່າ "ເຈົ້າມຫາຈຳເຣີນ ເຊີນດຶງໄປ ເຈົ້າມຫາຈຳເຣີນ ເຊີນລາກໄປເຖີດ" ຄັ້ງນັ້ນແລ ໂຄເຖິກນັນທີວິສາລໄດ້ລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປແລ້ວ ບຸຄຄົລເພິ່ງກ່າວຄຳມ່ອນ ບໍ່ເພິ່ງກ່າວຄຳບໍ່ມ່ອນ ບໍ່ວ່າໃນການໃດໆເມື່ອພຣາມຕ໌ກ່າວຄຳມ່ອນ ໂຄ ເຖິກໂຄນັນທີວິ ສາລ ກໍລາກກວຽນຫນັກໄປໄດ້ ເຮັດໃຫ້ພຣາມຕ໌ໄດ້ຊັພຍ໌ ຕົນເອງກໍດີໃຈທີ່ພຣາມຕ໌ໄດ້ຊັພຍ໌

ເພາະການກະທຳຂອງຕົນນັ້ນ໑

ກິກຂຸທັງຫລາຍ ຄຳດ່າ ຄຳສົບປມາດບໍ່ເປັນທີ່ພໍໃຈຂອງເຮົາແມ່ນໃນກາລນັ້ນ ຈັ່ງໃດບັດນີ້ ຄຳດ່າຄຳສົບປມາດຈະເປັນທີ່ພໍໃຈລະ ກິກຂຸທັງຫລາຍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔] ກິກຂຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວສຽດສີ

ເຣື່ອງພຣະຈັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ຂຸ. ຊາ. ໒໗/໒໘/໗

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໑. ມຸສາວາທວັຄ ໒. ໂອມສວາທສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໑໕] ທີ່ຊື່ວ່າ ກ່າວສຽດສີ ໄດ້ແກ່ ພິກຂຸກ່າວສຽດສີດ້ວຍອາການ ໑໐ ຢ່າງ ຄື (໑) ຊາຕິກຳເນີດແດ່ (໒) ຊື່ແດ່ (໓) ຕະກູນແດ່ (໔) ໜ້າທີ່ການງານແດ່ (໕) ສິລປວິທຍາແດ່ (໖) ຄວາມເຈັບໄຂ້ແດ່ (໗) ຮູບລັກສຕ໌ແດ່ (໘) ກິເລສແດ່ (໙) ອາບັຕິແດ່ (໑໐) ຄຳດ່າແດ່

ບົທພາຊນີຍ໌

ທີ່ຊື່ວ່າ ຊາຕິກຳເນີດ ໄດ້ແກ່ ຊາຕິກຳເນີດ ໒ ຢ່າງ ຄື (໑) ຊາຕິກຳເນີດຕ່ຳ (໒) ຊາຕິກຳເນີດສູງ

ທີ່ຊື່ວ່າ ຊາຕິກຳເນີດຕ່ຳ ໄດ້ແກ່ ຊາຕິກຳເນີດຄນຈັຕທາລ ຊາຕິກຳເນີດຄນຈັກສານ ຊາຕິກຳເນີດນາຍພານ ຊາຕິກຳເນີດຊ່າງຣົຖ ຊາຕິກຳເນີດຄົນເທຂີ້ເຫຍື້ອ ນີ້ຈັດເປັນຊາຕິກຳເນີດຕ່ຳ

ທີ່ຊື່ວ່າ ຊາຕິກຳເນີດສູງ ໄດ້ແກ່ ຊາຕິກຳເນີດກສັຕຣິຍ໌ ຊາຕິກຳເນີດພຣາມຕ໌ນີ້ ຈັດເປັນຊາຕິກຳເນີດສູງ

ທີ່ຊື່ວ່າ ຊື່ ໄດ້ແກ່ ຊື່ ໒ ຢ່າງ ຄື (໑) ຊື່ທີ່ເລວ (໒) ຊື່ທີ່ດີ

ທີ່ຊື່ວ່າ ຊື່ທີ່ເລວ ໄດ້ແກ່ ຊື່ອວກັຕຕກະ ຊື່ອຊວກັຕຕກະ ຊື່ອລນິຍກະ

ຊື່ອສວິຍກະ ຊື່ອກຸລວັທຒກະ໔ ອີກຢ່າງນຶ່ງ ຊື່ທີ່ເຂົາເຍີ້ຍຫຍັນ ຢຽດຫຍາມ ກຽດຊັງ ດູໝິ່ນ ບໍ່ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນຊື່ທີ່ເລວ

ເຊີງອັນຖະ :

ສມຕະຣູບນີ້ເຮົາອ້ອນວອນ ກໍຍັງບໍ່ປຣາຖນາທີ່ຈະຮັບຕົວເຮົາແລະສົມບັຕທັງປວງ ຈຶ່ງນຸ່ງຜ້າແລ້ວ ນ້ອມສີຮະລົງແທບຕີນທ່ານພຣະອນຸຣຸທລະຂໍຂມາວ່າ "ພຣະຄຸຕເຈົ້າ ຂະນ້ອຍໄດ້ກະທຳຄວາມຜິດ ເພາະຄວາມໂງ່ເຂົາເບົາປັນຍາ ທີ່ໄດ້ກະທຳຢ່າງນີ້ ຂໍພຣະຄຸຕເຈົ້າຈົ່ງໃຫ້ອະໄພໂທສແກ່ຂະນ້ອຍເພື່ອ ສຳຣວມຕໍ່ໄປ" ພຣະເຖຣະກ່າວວ່າ "ນ້ອງຍິງ ເອົາເຖີດ ກາຣທີ່ທ່ານໄດ້ທຳຄວາມຜິດໄປເພາະຄວາມ ໂງ່ເຂົາເບົາປັນຍາ ທີ່ໄດ້ກະທຳຢ່າງນີ້ເພາະເຫຕຸທີ່ເຫັນຄວາມຜິດເປັນຄວາມຜິດ ແລ້ວແກ້ໄຂໃຫ້ ຖືກຕ້ອງ ຂ້ນັ້ນອາຕມາຍອມຮັບ ເພາະກາຣທີ່ບຸຄຄົລເຫັນຄວາມຜິດເປັນຄວາມຜິດແລ້ວ ແກ້ໄຂໃຫ້ ຖືກຕ້ອງແລະສຳຣວມຕໍ່ໄປ ນີ້ເປັນຄວາມຈະເຣີນໃນວິນັຍຂອງພຣະອຣິຍະ"

ຄັນຣາຕຣີນັ້ນຜ່ານພົ້ນໄປ ຍິງນັ້ນໄດ້ເອົາຂອງຄ້ຽວຂອງຈັນຢ່າງດີປະເຄນທ່ານພຣະອນຸຣຸທລະດ້ວຍ ຕົນເອງ ຈົນເມື່ອທ່ານພຣະອນຸຣຸທລະສັນເສັດແລ້ວ ລະມືຈາກບາຕຣ ຈຶ່ງອພິວາທແລ້ວນັ່ງ ຜະ ທີ່ ສົມຄວຣ ທ່ານພຣະອນຸຣຸທລະໄດ້ຊີ້ແຈງໃຫ້ຍິງນັ້ນຜູ້ນັ່ງຢູ່ ຜະ ທີ່ສົມຄວຣເຫັນແຈ້ງ ຊວນໃຫ້ ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍ ທັມມີກຖາ ລຳດັບນັ້ນ ຍິງນັ້ນຊຶ່ງທ່ານພຣະອນຸຣຸທລະໄດ້ຊີ້ແຈງໃຫ້ເຫັນຊັດ ຊວນໃຫ້ຢາກຮັບເອົາ ໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວ ໄດ້ກ່າວກັບທ່ານພຣະອນຸຣຸທລະວ່າ "ພຣະຄຸຕເຈົ້າ ວາທີຕຂອງທ່ານຊັດແຈ້ງນ່ວນຍິ່ງນັກ ພຣະຄຸຕເຈົ້າ ວາທີຕຂອງທ່ານຊັດແຈ້ງນ່ວນຍິ່ງນັກ ພຣະຄຸຕເຈົ້າປະກາດທັມແຈ່ມແຈ້ງໂດຍປະກາຣ ຕ່າງໆປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຜູ້ຫລົງທາງ ຫລືຕາມ ປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຕາດີຈັກເຫັນຣູບ ພຣະຄຸຕເຈົ້າ ຂະນ້ອຍນີ້ຂໍເຖິງພຣະຜູ້ມີພຣະ ພາຄພຣະອົງຄ໌ນັ້ນພ້ອມທັງພຣະທັມແລະພຣະສົງຄ໌ເປັນສຣຕະ ຂໍພຣະຄຸຕເຈົ້າຈົ່ງຊົງຈຳຂະນ້ອຍວ່າ ເປັນອຸບາສິກາຜູ້ເຖິງສຣຕະ ຕັ້ງແຕ່ວັນນີ້ເປັນຕົ້ນໄປຈົນຕລອດຊີວິຕ"

ຈາກນັ້ນພຣະເຖຣະຍ່າງທາງໄປກຸງສາວັຕຖີແລ້ວແຈ້ງເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາ ພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອນຸຣຸທລະຈຶ່ງນອນ ຮ່ວມກັບມາຕຸຄາມລະ" ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະອນຸຣຸທລະໂດຍປະກາຣຕ່າງໆແລ້ວຈຶ່ງນຳ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອນຸຣຸທລະວ່າ "ອນຸຣຸທລະ ຊາບວ່າ ທ່ານນອນຮ່ວມກັບມາຕຸຄາມ ຈິງຫລື" ທ່ານພຣະອນຸຣຸທ ລະ ທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທລເຈົ້າ ຊົງຕຳຫນິວ່າ "ຯລຯ ອນຸ

ອຸທລະ ຈັ່ງໃດທ່ານຈຶ່ງນອນຮ່ວມກັບມາຕຸຄາມລະ ອນຸຣຸທລະ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໖] ກໍ ກິກຂຸໃດນອນຮ່ວມກັນກັບມາຕຸຄາມ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອນຸຣຸທລະ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໑. ມຸສາວາທວັຄ ໖. ທຸຕິຍສຫເສຍຍສິກຂາບົທ ບົທການຸນິຍ໌

ສິກຂາບົທວິກັງຄ໌

[໕໗] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸษຍ໌ ບໍ່ແມ່ນນາງຍັກษ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ຍິງມນຸษຍ໌ນັ້ນໂດຍທີ່ສຸດຈົນເມື່ອເດັກຍິງຊຶ່ງເກີດໃນມື້ນັ້ນ ຍິງໂຕກວ່ານີ້ບໍ່ຕ້ອງກ່າວເຖິງ

ຄຳວ່າ ຮ່ວມກັນ ຄື ດ້ວຍກັນ

ທີ່ຊື່ວ່າ ທີ່ນອນ ໄດ້ແກ່ ທີ່ນອນມີເຄື່ອງມຸງທັງຫມົດ ມີເຄື່ອງບັງທັງຫມົດ ຫລືມີເຄື່ອງມຸງສ່ວນຫລາຍ ມີເຄື່ອງບັງສ່ວນຫລາຍ

ຄຳວ່າ ນອນ ຄວາມວ່າ ເມື່ອດວງອາທິຕຍ໌ອັສດົງ ເມື່ອມາຕຸຄາມນອນ ກິກຂຸກໍນອນ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອກິກຂຸນອນ ມາຕຸຄາມກໍນອນ ຕ້ອງອາບັຕິປາຈິຕຕີຍ໌ ຫລືທັງກິກຂຸແລະມາຕຸຄາມນອນ ຕ້ອງອາບັຕິປາຈິຕຕີຍ໌ ກິກຂຸລຸກຂຶ້ນແລ້ວກັບໄປນອນອີກ ຕ້ອງອາບັຕິປາຈິຕຕີຍ໌

ບົທການຸນິຍ໌

ຕິກປາຈິຕຕີຍ໌

[໕໘] ມາຕຸຄາມ ພິກຂຸສຳຄັນວ່າເປັນມາຕຸຄາມ ນອນຮ່ວມກັນ ຕ້ອງອາບັຕິປາຈິຕຕີຍ໌
ມາຕຸຄາມ ພິກຂຸບໍ່ແນ່ໃຈ ນອນຮ່ວມກັນ ຕ້ອງອາບັຕິປາຈິຕຕີຍ໌
ມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ນອນຮ່ວມກັນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກະ

ທີ່ນອນມີເຄື່ອງມຸງເຄິ່ງດຽວ ມີເຄື່ອງບັງເຄິ່ງດຽວ ພິກຂຸນອນຮ່ວມກັນ ຕ້ອງອາບັຕິທຸກກະ
ພິກຂຸນອນຮ່ວມກັນກັບນາງຍັກຂ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານໂຕແມ່ ຕ້ອງອາບັຕິທຸກ
ກະ
ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກະ
ບໍ່ແມ່ນມາຕຸຄາມ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໙] ໑. ພິກຂຸນອນຮ່ວມກັນໃນທີ່ນອນມີເຄື່ອງມຸງທັງຫມົດ ແຕ່ບໍ່ມີເຄື່ອງບັງທັງຫມົດ
໒. ພິກຂຸນອນຮ່ວມກັນໃນທີ່ນອນມີເຄື່ອງບັງທັງຫມົດ ແຕ່ບໍ່ມີເຄື່ອງມຸງທັງຫມົດ
໓. ພິກຂຸນອນຮ່ວມກັນໃນທີ່ນອນບໍ່ມີເຄື່ອງມຸງສ່ວນຫລາຍ ບໍ່ມີເຄື່ອງບັງສ່ວນຫລາຍ
໔. ພິກຂຸນັ່ງ ໃນເມື່ອມາຕຸຄາມນອນ
໕. ພິກຂຸນອນ ມາຕຸຄາມນັ່ງ
໖. ພິກຂຸນັ່ງແລະມາຕຸຄາມກໍນັ່ງ
໗. ພິກຂຸວິກົລຈິຕ
໘. ພິກຂຸຕົ້ນບັນຍັດ

ທຸຕິຍສຫເສຍຍສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຓທ໌] ໑. ມຸສາວາທວັຄ ໗. ທັມມເທສນາສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໗. ທັມມເທສນາສິກຂາບົທ
ວ່າດ້ວຍການສະແດງທັມ

ເຣື່ອງພຣະອຸທາຍີ
[໕໐] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ທ່ານພຣະອຸທາຍີເປັນພຣະປະຈຳຕະກູນໃນກຸງສາວັຕຖີເຂົ້າໄປຫາຕະກູນຫລາຍຕະກູນ ເຊົ້າມື້ນຶ່ງ ທ່ານຄອງອັນຕຣວາສກ ຖືບາຕຣຈີວອນເຂົ້າໄປຍັງຕະກູນນຶ່ງ ສມັຍນັ້ນ ຍິງແມ່ເຮືອນນັ່ງຢູ່ທີ່ປະຕູເຮືອນ ລູກໃພ້ນັ່ງຢູ່ທີ່ປະຕູຫ້ອງນອນ ທ່ານພຣະອຸທາຍີເຂົ້າໄປຫາຍິງແມ່ເຮືອນນັ້ນເຖິງຕີ້ວ ຄັນເຖິງແລ້ວໄດ້ສະແດງທັມໃກ້ຫູນາງ
ຂນະນັ້ນລູກໃພ້ເກີດຄວາມຄິດຂຶ້ນມາວ່າ ສມະນະຮູບນີ້ເປັນຊາຍຊູ້ຂອງແມ່ຍ່າ ຫລືເວົ້າກັ້ງວແມ່ຍ່າ ຄັນທ່ານພຣະອຸທາຍີສະແດງທັມໃກ້ຫູຍິງແມ່ເຮືອນແລ້ວ ຈຶ່ງເຂົ້າໄປຫາລູກໃພ້ເຖິງຕີ້ວ ຄັນເຖິງແລ້ວຈຶ່ງສະແດງທັມໃກ້ຫູນາງ ຂນະນັ້ນ ຍິງແມ່ເຮືອນເກີດຄວາມຄິດຂຶ້ນມາວ່າ ສມະນະຮູບນີ້ເປັນຊາຍຊູ້ຂອງລູກໃພ້ ຫລືເວົ້າກັ້ງວລູກໃພ້
ຄັນທ່ານພຣະອຸທາຍີສະແດງທັມໃກ້ຫູລູກໃພ້ແລ້ວກໍຈາກໄປ ເທື່ອນັ້ນ ຍິງແມ່ເຮືອນໄດ້ກ່າວກັບລູກໃພ້ວ່າ "ນີ້ແນ່ນາງຕີວດີ ສມະນະຮູບນັ້ນກ່າວຫຍັງກັບເຈົ້າ" ລູກໃພ້ຍິງຕອບວ່າ "ທ່ານສະແດງທັມຂະນ້ອຍ ແລ້ວແມ່ລະ ພຣະຄຸນເຈົ້າເວົ້າຫຍັງ" ຍິງແມ່ເຮືອນຕອບວ່າ "ທ່ານກໍສະແດງທັມແກ່ແມ່ເຫມືອນກັນ" ຍິງແມ່ເຮືອນກັບລູກໃພ້ນັ້ນຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າອຸທາຍີຈຶ່ງສະແດງທັມໃກ້ຫູມາຕຸຄາມລະ ທີ່ຖືກ ຄວຣສະແດງທັມສຽງຊັດແຈ້ງເປີດເຜີຍ ບໍ່ແມ່ນບໍ"
ພວກພິກຂຸໄດ້ຍິນຍິງທັງສອງຕຳຫນິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງສະແດງທັມແກ່ມາຕຸຄາມລະ" ຄັນພິກຂຸເຫລົ່ານັ້ນຕຳຫນິທ່ານພຣະອຸທາຍີໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານສະແດງທັມແກ່ມາຕຸຄາມ ແມ່ນແທ້ບໍ" ທ່ານພຣະອຸທາຍີທູລ

ຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິ ວ່າ "ຯລຯ ໂມຄບຸຣຸຊ ຈັ່ງໃດທ່ານຈຶ່ງສະແດງທັມແກ່ມາຕຸຄາມເລະ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກຂຸໃດສະແດງທັມແກ່ມາຕຸຄາມ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື່ອງພຣະອຸທາຍີ ຈົບ

ເຣື້ອງອຸບາສິກາ

[໓໑] ສມັຍນັ້ນ ພວກອຸບາສິກາພົບພິກຂຸແລ້ວນິມົນຕ໌ວ່າ "ພຣະຄຸຕເຈົ້າ ຂໍນິມົນຕ໌ພຣະຄຸຕເຈົ້າສະແດງທັມເຖີດ" ພິກຂຸທັງຫລາຍກ່າວວ່າ "ນ້ອງຍິງ ກາຣສະແດງທັມແກ່ມາຕຸຄາມບໍ່ເໝາະ"

ພຣະອນຸບັນຍັດ

ພວກອຸບາສິກາກ່າວວ່າ "ຂໍນິມົນຕ໌ພຣະຄຸຕເຈົ້າທັງຫລາຍໂປຣດສະແດງທັມຈັກ ໕-໖ ຄຳກໍໄດ້ ແມ່ນ ພຽງເທົ່ານີ້ ພວກຂະນ້ອຍອາຈເຂົ້າໃຈທັມໄດ້" ພວກພິກຂຸກໍຍັງປະຕິເສດວ່າ "ນ້ອງຍິງ ກາຣ ສະແດງ ທັມ ແກ່ມາຕຸຄາມບໍ່ເໝາະ" ພາກັນຢ້ານເກງຢູ່ຈຶ່ງບໍ່ຍອມສະແດງທັມ ພວກອຸບາສິກາຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸຕເຈົ້າທັງຫລາຍພວກເຮົາອາຣາທນາຢູ່ຍັງບໍ່ຍອມສະແດງທັມ"
ພວກພິກຂຸໄດ້ຍິນອຸບາສິກາຕຳໜິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວ ຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ສະແດງທັມແກ່ມາຕຸຄາມໄດ້ ໕-໖ ຄຳ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກຂຸໃດສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງອຸບາສິກາ ຈົບ

ເລື້ອງພຣະຈັພພັຄຄິຍ໌

[໘໔] ສມັຍນັ້ນ ພວກພິກຂຸຈັພພັຄຄິຍ໌ ຊາບວ່າ ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ສະແດງທັມແກ່ມາຕຸຄາມໄດ້ ໕-໖ ຄຳ ຈຶ່ງໃຫ້ບຸຣຸຫບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ພວກພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄິຍ໌ຈຶ່ງໃຫ້ບຸຣຸຫບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຈັພພັຄຄິຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸພຣະຈັພພັຄຄິຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານໃຫ້ບຸຣຸຫບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ແມ່ນແທ້ບໍ" ພວກພິກຂຸຈັພພັຄຄິຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິ ວ່າ "ໂມຄບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຫ້ບຸຣຸຫບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳລະ ໂມຄບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໘໕] ອີກຢ່າງນຶ່ງ ພິກຂຸໃດສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ມີບຸຣຸຫຮູ້ດຽງສາຢູ່

ເລື້ອງພຣະຈັພພັຄຄິຍ໌ ຈົບ

ສິກຂາບົທວິພັງຄ໌

[໘໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸຫຍ໌ ບໍ່ແມ່ນນາງຍັກຫ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານ

ໄຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸພາສິຕແລະຄຳທຸພພາສິຕ ຄຳຫຍາບແລະຄຳສຸພາພ

ທີ່ຊື່ວ່າ ເກີນ ໕-໖ ຄຳ ໄດ້ແກ່ ເກີນກວ່າ ໕-໖ ຄຳ

ທີ່ຊື່ວ່າ ລັມ ໄດ້ແກ່ ພຸທລພາສິຕ ສາວົກພາສິຕ ຮິສີພາສິຕ ເທວດາພາສິຕ ທີ່ປະກອບດ້ວຍອັນຖະ ທີ່ປະກອບດ້ວຍລັມ

ຄຳວ່າ ສະແດງ ຄື ສະແດງເປັນບົທ ຕ້ອງອາບັຕິປາຈິຕຕີຍ໌ທຸກໆບົທ ສະແດງເປັນອັກຂຣ ຕ້ອງອາບັຕິປາຈິຕຕີຍ໌ທຸກໆອັກຂຣ

ຄຳວ່າ ເວັ້ນໄວ້ແຕ່ມີບຸຣຸຂຮູ້ດຽງສາຢູ່ ຄື ຍົກເວັ້ນໄວ້ແຕ່ມີບຸຣຸຂຜູ້ຮູ້ຄວາມຢູ່ດ້ວຍບຸຣຸຂທີ່ຊື່ວ່າ ເປັນຜູ້ຮູ້ດຽງສາ ຄື ສາມາດຮັບຮູ້ຖ້ອຍຄຳສຸພາສິຕ ທຸພພາສິຕ ຄຳຫຍາບແລະຄຳສຸພາພ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໖໕] ມາຕຸຄາມ ພິກຂຸສຳຄັນວ່າເປັນມາຕຸຄາມ ສະແດງລັມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີບຸຣຸຂຮູ້ດຽງສາຢູ່

ມາຕຸຄາມ ພິກຂຸບໍ່ແນ່ໃຈ ສະແດງລັມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ເວັ້ນໄວ້ແຕ່ມີບຸຣຸຂຮູ້ດຽງສາຢູ່

ມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ສະແດງລັມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີບຸຣຸຂຮູ້ດຽງສາຢູ່

ຕິກທຸກກຕ

ພິກຂຸສະແດງລັມແກ່ນາງຍັກຂ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານໄຕແມ່ຊຶ່ງແປງຮ່າງເປັນຍິງຫລາຍກວ່າ ໕-໖ ຄຳ ຕ້ອງອາບັຕິທຸກກຕ ເວັ້ນໄວ້ແຕ່ມີບຸຣຸຂຮູ້ດຽງສາຢູ່

ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າມາຕຸຄາມ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໒] ໑. ພິກຂຸທີ່ສະແດງທັມໂດຍມີບຸຣຸຊຮູ້ດຽງສາຢູ່ດ້ວຍ
໒. ພິກຂຸສະແດງທັມພຽງ ໕-໒ ຄຳ
໓. ພິກຂຸສະແດງທັມຕໍ່າກວ່າ ໕-໒ ຄຳ
໔. ພິກຂຸລຸກຂຶ້ນແລ້ວມານັ່ງສະແດງທັມຕໍ່ໄປອີກ
໕. ພິກຂຸສະແດງທັມໃນທີ່ທີ່ມາຕຸຄາມລຸກຂຶ້ນແລ້ວນັ່ງລົງອີກ
໒. ພິກຂຸສະແດງທັມແກ່ມາຕຸຄາມອື່ນຕໍ່
໗. ພິກຂຸຖືກຖາມບັນຫາແລ້ວສະແດງທັມແກ່ມາຕຸຄາມຜູ້ຖາມ
໘. ພິກຂຸສະແດງທັມເພື່ອຄົນອື່ນແຕ່ມີມາຕຸຄາມຟັງຢູ່ດ້ວຍ
໙. ພິກຂຸວິກົລຈິຕ
໑໐. ພິກຂຸຕົ້ນບັນຍັດ

ທັມມເທສນາສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໑. ມຸສາວາທວັຄ ໘. ພູຕາໂຣຈນສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໘. ພູຕາໂຣຈນສິກຂາບົທ
ວ່າດ້ວຍການບອກອຸຕຕຣິມນຸສສທັມທີ່ມີຈິງ

ເຣື່ອງພິກຂຸຊາວຝັ່ງແມ່ນ້ຳວັຄຄຸມຸທາ໑
[໒໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທລເຈົ້າປະທັບຢູ່ ຯະ ກູຕາຄາຣສາລາປ່າມຫາວັນ ເຂຕ ເມືອງເວສາລີ ຄັ້ງນັ້ນ ພິກຂຸຈຳນວນຫລາຍເປັນເພື່ອນເຄີຍເຫັນເຄີຍຄົບກັນມາຈຳພັນສາຢູ່ໃກ້ຝັ່ງ ແມ່ນ້ຳວັຄຄຸມຸທາ ຄາວນັ້ນ ແຄວ້ນວັຊຊີເກີດເຂົ້າຍາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກ ແຄ້ນ ໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕ ຍັງຊີພໄດ້ ພິກຂຸເຫລົ່ານັ້ນໄດ້ມີຄວາມຄິດວ່າ "ບັດນີ້ແຄວ້ນວັຊຊີເກີດເຂົ້າຍາກຫມາກແພງ ປະ ຊາຊົນມີຄວາມເປັນຢູ່ຍາກແຄ້ນ ໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່

ພຣະອຣິຍະຈະບິຕາຫບາຕຍັງຊີພໄດ້ ທຳຢ່າງໃດຫນໍ ພວກເຮົາຈຶ່ງຈະພ້ອມພຽງກັນ ຮ່ອມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກ ແລະບິຕາຫບາຕບໍ່ລຳບາກ" ກິກສຸບາງພວກສເນີວ່າ "ທ່ານທັງຫລາຍ ຖ້າເຊັ່ນນັ້ນ ພວກເຮົາມາຊ່ວຍກັນເຮັດວຽກຂອງພວກຄຣືຫັສຖ໌ ເມື່ອຊ່ວຍເຮັດວຽກ ພວກເຂົາກໍ່ຄືງຈະພໍໃຈຖວາຍບິຕາຫບາຕແກ່ພວກເຮົາໂດຍວິທີນີ້ແຫລະ ພວກເຮົາກໍ່ຈະພ້ອມພຽງກັນ ຮ່ອມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກ ແລະບິຕາຫບາຕບໍ່ລຳບາກ" ກິກສຸອີກພວກສເນີວ່າ "ຢ່າເລີຍ ທ່ານທັງຫລາຍ ເປັນຫຍັງພວກເຮົາຈະຕ້ອງໄປຊ່ວຍກັນເຮັດວຽກຂອງພວກຄຣືຫັສຖ໌ ຂໍໃຫ້ພວກເຮົາມາຊ່ວຍກັນທຳຫນ້າທີ່ທູຕນຳຂ່າວສາຣໃຫ້ພວກຄຣືຫັສຖ໌ຈະດີກວ່າ ເມື່ອເຮັດຢ່າງນີ້ ພວກຄຣືຫັສຖ໌ກໍ່ຄືງຈະພໍໃຈຖວາຍບິຕາຫບາຕແກ່ພວກເຮົາ ໂດຍວິທີນີ້ແຫລະພວກເຮົາກໍ່ຈະພ້ອມພຽງກັນ ຮ່ອມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳ ພັນສາຢ່າງຜາສຸກ ແລະບິຕາຫບາຕບໍ່ລຳບາກ"

ເຊີງອັນຖະ :

໑ ພຣະວິນັຍປິດົກ ມຫາວິທັງຄ໌ແປລ ເຫລັ້ມ ໑ ຂໍ້ ໑໙໓ ຫນ້າ ໑໗໗ ວ່າດ້ວຍການອວດອຸຕຕຣິມນຸສສລັມທີ່ບໍ່ມີໃນຕົນ

ກິກສຸອີກພວກສເນີວ່າ "ຢ່າເລີຍ ທ່ານທັງຫລາຍ ເປັນຫຍັງພວກເຮົາຈະຕ້ອງໄປຊ່ວຍກັນເຮັດວຽກຫລືທຳຫນ້າທີ່ທູຕນຳຂ່າວສາຣໃຫ້ພວກຄຣືຫັສຖ໌ ທາງທີ່ດີ ພວກເຮົາມາກ່າວອວດອຸຕຕຣິມນຸສສລັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງວ່າ 'ກິກສຸຮູບພຸ້ນໄດ້ປຖົມຌານ ຮູບພຸ້ນໄດ້ທຸຕິຍຌານ ຮູບພຸ້ນໄດ້ຕຕິຍຌານ ຮູບພຸ້ນໄດ້ຈຕຸຕຖຌານ ຮູບພຸ້ນເປັນພຣະໂສດາບັນຮູບພຸ້ນເປັນພຣະສກທາຄາມີ ຮູບພຸ້ນເປັນພຣະອນາຄາມີ ຮູບພຸ້ນເປັນພຣະອຣຫັນຕ໌ ຮູບພຸ້ນໄດ້ວິຊຊາ ໓ ຮູບພຸ້ນໄດ້ອກິຍຍາ ໖' ເມື່ອເວົ້າຢ່າງນີ້ ພວກຄຣືຫັສຖ໌ກໍ່ຄືງຈະພໍໃຈຖວາຍບິຕາຫບາຕແກ່ພວກເຮົາ ໂດຍວິທີນີ້ພວກເຮົາຈະພ້ອມພຽງກັນ ຮ່ອມໃຈກັນ ບໍ່ຜິດຖຽງກັນຢູ່ຈຳພັນສາຢ່າງຜາສຸກ ແລະບິຕາຫບາຕບໍ່ລຳບາກ" ໃນທີ່ສຸດ ກິກສຸເຫລົ່ານັ້ນທັງຫມົດຕົກລົງ ກັນວ່າ "ທ່ານທັງຫລາຍ ວິທີທີ່ພວກເຮົາພາກັນ

ກ່າວອວດອຸຕຕຣິມນຸສສລັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງເປັນວິທີທີ່ດີກວ່າວິທີອື່ນ" ຕໍ່ມາກິກສຸເຫລົ່ານັ້ນໄດ້ພາກັນກ່າວອວດອຸຕຕຣິມນຸສສລັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງວ່າ "ກິກສຸຮູບພຸ້ນໄດ້ປຖົມຌານ ຯລຯ ຮູບພຸ້ນໄດ້ຈຕຸຕຖຌານ ຮູບພຸ້ນເປັນພຣະໂສດາບັນ ຯລຯ ຮູບພຸ້ນໄດ້ອກິຍຍາ ໖" ຄັ້ງນັ້ນແລ ປະຊາຊົນກໍ່ພາກັນຍິນດີວ່າ "ເປັນລາກຂອງພວກເຮົາຫນໍ ພວກເຮົາ

ໄດ້ດີແລ້ວຫນໍທີ່ມີພິກສຸທັງຫລາຍເຊັ່ນນີ້ມາຢູ່ຈຳພັນສາ ເພາະແຕ່ກ່ອນນີ້ພວກເຮົາບໍ່ມີພິກສຸທັງຫລາຍ ທີ່ມີຄຸຕສົມບັຕເຫມືອນຢ່າງພິກສຸຜູ້ມີສີລມີກັລຍາຕສັມເຫລົ່ານີ້ມາຢູ່ຈຳພັນສາເລີຍ" ໂກຊນະ (ອາຫານ) ... ຂາທນີຍະ (ຂອງຄ້ຽວ) ... ສາຍນີຍະ (ຂອງລິ້ມ) ... ປານະ(ເຄື່ອງດື່ມ) ຊນິດທີ່ພວກເຂົາຈະຖວາຍແກ່ພິກສຸເຫລົ່ານັ້ນ ພວກເຂົາບໍ່ຮັບປະທານ ບໍ່ຂົບຄ້ຽວ ບໍ່ລິ້ມ ບໍ່ດື່ມດ້ວຍຕົນ ເອງ ທັງບໍ່ໃຫ້ແກ່ມາຣດາບິດາ ບຸຕຣ ກັຣຍາ ຄົນຮັບໃຊ້ ກັມກອນ ມິຕຣ ອມາຕຍ໌ ຍາຕ ສາໂລ ຫິຕ ພິກສຸເຫລົ່ານັ້ນຈຶ່ງເປັນຜູ້ມີນ້ຳມີນວລ ມີອິນທຣີຍ໌ຜ່ອງໃສ ມີໃບຫນ້າເອີບອີ່ມ ມີຜິວພັຕຜຸດຜ່ອງ

[ຝັງ] ມີປະເພຕີຢູ່ວ່າ ເມື່ອພິກສຸທັງຫລາຍອອກພັນສາແລ້ວຈະໄປເຂົ້າເຝົ້າພຣະຜູ້ມີພຣະກາຄ ຄັນພິກສຸເຫລົ່ານັ້ນຈຳພັນສາຄົບ ໓ ເດືອນແລ້ວຈຶ່ງເກັບເສນາສນະ ຖືບາຕຣແລະຈີວອນອອກຍ່າງທາງມຸ່ງໄປສູ່ກຸງເວສາລີ ຈາຣິກໄປໂດຍລຳດັບ ເຖິງກຸງເວສາລີ ຜ່ານປ່າມຫາວັນ ໄປເຖິງກູຍາຄາຣສາລາ ແລ້ວເຂົ້າເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຖວາຍອກິວາທ ແລ້ວນັ່ງລົງຢູ່ ຓະ ທີ່ສົມຄວຣ

ພິກສຸຕ່າງທິສມາເຂົ້າເຝົ້າ

ສມັຍນັ້ນ ພິກສຸທັງຫລາຍທີ່ຈຳພັນສາຢູ່ໃນທິສຕ່າງໆເບິ່ງຈ່ອຍຜອມ ຊອມຊໍ່ ມີຜິວພັຕຫມອງເສົ້າ ຊີດ ເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ສ່ວນພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາກັບມີນ້ຳມີນວລ ມີອິນທຣີຍ໌ຜ່ອງໃສ ມີໃບຫນ້າເອີບອີ່ມ ມີຜິວພັຕຜຸດຜ່ອງ ອີກຢ່າງນຶ່ງ ກາຣທີ່ພຣະຜູ້ມີພຣະກາຄພຸທລເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍ ນັ້ນກໍເປັນພຸທລປະເພຕີ ລຳດັບນັ້ນພຣະຜູ້ມີພຣະກາຄຕຣັສຖາມພວກພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາວ່າ "ພິກສຸທັງຫລາຍ ທ່ານທັງຫລາຍຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ພວກທ່ານເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກຫລື ແລະບິຕຫບາຕບໍ່ລຳບາກຫລື" ພິກສຸເຫລົ່ານັ້ນຂາບທູລວ່າ "ຍັງສະບາຍດີ ພຣະພຸທລເຈົ້າຂ້າ ຍັງພໍເປັນຢູ່ໄດ້ພຣະພຸທລເຈົ້າຂ້າ ອີກຢ່າງນຶ່ງ ພວກຂ້າພຣະພຸທລເຈົ້າເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກ ແລະບິຕຫບາຕບໍ່ລຳບາກ ພຣະພຸທລເຈົ້າຂ້າ"

ພຸທລປະເພຕີ

ພຣະຕຖາຄົຕເຈົ້າທັງຫລາຍຊົງຊາບເຣື້ອງ ຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຊົງຊາບກາລອັນຄວຣຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຕຣັສຖາມເຣື້ອງທີ່ເປັນປໂຍດ ບໍ່ຕຣັສຖາມເຣື້ອງທີ່ບໍ່ເປັນປໂຍດ

ເພາະພຣະຕະຖາຄົຕເຈົ້າທັງຫລາຍຊົງຂັດເຣື່ອງທີ່ບໍ່ເປັນປໂຍດເສັຽດ້ວຍອຣິຍມັຄ ແລ້ວພຣະຜູ້ມີພຣະພາຄພຸທລເຈົ້າທັງຫລາຍສອບຖາມກິກຂຸທັງຫລາຍດ້ວຍເຫດຸ ໒ ປະການ ຄື ຈະຊົງສະແດງລັມຢ່າງນຶ່ງ ຈະຊົງບັນຍັດສິກຂາບົທແກ່ພຣະສາວົກຢ່າງນຶ່ງ

ພຣະວິນັຍປີຕົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໑. ມຸສາວາທວັຄ ໆ. ກູຕາໂຣຈນສິກຂາບົທ ສິກຂາບົທວິກັງຄ໌

ລຳດັບນັ້ນ ພຣະຜູ້ມີພຣະພາຄຈຶ່ງໄດ້ຕຣັສຖາມກິກຂຸຊາວຝັ່ງແມ່ນ້ຳວັຄຄຸມຸທາວ່າ "ເຮັດຢ່າງໃດ ທ່ານທັງຫລາຍຈຶ່ງພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຜາສຸກແລະບິຕາຫບາຕບໍ່ລຳບາກ" ລຳດັບນັ້ນ ກິກຂຸເຫລົ່ານັ້ນຈຶ່ງໄດ້ຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບພຣະຜູ້ມີພຣະພາຄຕຣັສຖາມວ່າ "ກິກຂຸທັງຫລາຍ ພວກທ່ານມີຄຸຕວິເສສນັ້ນ ແມ່ນແທ້ບໍ" ກິກຂຸເຫລົ່ານັ້ນຂາບທູລວ່າ "ມີແມ່ນແທ້ພຣະພຸທລເຈົ້າຂ້າ"

ຊົງບັນຍັດສິກຂາບົທ

ພຣະຜູ້ມີພຣະພາຄພຸທລເຈົ້າຊົງຕຳໜິວ່າ "ຯລຯ ກິກຂຸທັງຫລາຍ ຈັ່ງໃດພວກທ່ານຈຶ່ງພາກັນກ່າວອວດອຸຕຕຣິມນຸສສລັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງເພາະເຫັນແກ່ປາກແກ່ທ້ອງລະ ກິກຂຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໘໑] ກໍ ກິກຂຸໃດບອກອຸຕຕຣິມນຸສສລັມທີ່ມີຈິງແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງກິກຂຸຊາວຝັ່ງແມ່ນ້ຳວັຄຄຸມຸທາ ຈົບ

ສິກຂາບົທວິກັງຄ໌

[໗໐] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກຂຸ ມີອລິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ອນຸປສັມບັນ ໄດ້ແກ່ ຍົກເວັ້ນພິກສຸ ພິກສຸນີ ນອກນັ້ນຊື່ວ່າອນຸປສັມບັນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຑ໌] ໑. ມຸສາວາທວັຄ ໗. ພູຕາໂຣຈນສິກຂາບົທ ບົທກາຊນີຍ໌

ບົທກາຊນີຍ໌

ທີ່ຊື່ວ່າ ອຸຕຕຣິມນຸສສທັມ ໄດ້ແກ່ ຌານ ວິໂມກຂ໌ ສມາທິ ສມາບັຕິ ຢາຓທັສສນະ ມັຄພາວນາ ການທຳຜົລໃຫ້ແຈ້ງ ການລະກິເລສ ພາວະທີ່ຈິຕປອດຈາກກິເລສ ຄວາມຍິນດີໃນເຮືອນວ່າງ

ຄຳວ່າ ຌານ ໄດ້ແກ່ ປຖົມຌານ ທຸຕິຍຌານ ຕຕິຍຌານ ຈຕຸຕຖຌານ

ຄຳວ່າ ວິໂມກຂ໌ ໄດ້ແກ່ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌

ຄຳວ່າ ສມາທິ ໄດ້ແກ່ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ

ຄຳວ່າ ສມາບັຕິ ໄດ້ແກ່ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ

ຄຳວ່າ ຢາຓທັສສນະ ໄດ້ແກ່ ວິຊຊາ ໓

ຄຳວ່າ ມັຄພາວນາ ໄດ້ແກ່ ສຕິປັຏຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຌງຄ໌ ໗ ອຣິຍມັຄມີອົງຄ໌ ໘

ຄຳວ່າ ການທຳຜົລໃຫ້ແຈ້ງ ໄດ້ແກ່ ການທຳໂສດາປັຕຕິຜົລໃຫ້ແຈ້ງ ການທຳສກທາຄາມິຜົລໃຫ້ແຈ້ງ ການທຳອນາຄາມິຜົລໃຫ້ແຈ້ງ ການທຳອຣຫັຕຕຜົລໃຫ້ແຈ້ງ

ຄຳວ່າ ການລະກິເລສ ໄດ້ແກ່ ການລະຣາຄະ ການລະໂທສະ ການລະໂມຫະ

ຄຳວ່າ ພາວະທີ່ຈິຕປອດຈາກກິເລສ ໄດ້ແກ່ ພາວະທີ່ຈິຕປອດຈາກຣາຄະ ພາວະທີ່ຈິຕປອດຈາກໂທສະ ພາວະທີ່ຈິຕປອດຈາກໂມຫະ

ຄຳວ່າ ຄວາມຍິນດີໃນເຮືອນວ່າງ ໄດ້ແກ່ ຄວາມຍິນດີໃນເຮືອນວ່າງດ້ວຍປຖົມຌານຄວາມຍິນດີໃນເຮືອນວ່າງດ້ວຍທຸຕິຍຌານ ຄວາມຍິນດີໃນເຮືອນວ່າງດ້ວຍຕຕິຍຌານ ຄວາມຍິນດີໃນເຮືອນວ່າງດ້ວຍຈຕຸຕຖຌານ

ກ່າວອວດປຖົມຌານ

[໒໑] ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າປຖົມຌານແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຌານຢູ່" ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເປັນຜູ້ເຂົ້າປຖົມຌານແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເປັນຜູ້ໄດ້ປຖົມຌານ" ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເປັນຜູ້ຊຳນານໃນປຖົມຌານ" ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າທຳປຖົມຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕິຍຌານ - ຈຕຸຕຖຌານ

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຌານແລ້ວ ຯລຯ ຂ້າພະເຈົ້າເຂົ້າຕຕິຍຌານ. . . ຈຕຸຕຖຌານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ຈຕຸຕຖຌານ ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳຈຕຸຕຖຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກສຸຍຍຕວິໂມກຂ໌ - ອັປປຓິຫິຕສມາຘິ

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າສຸຍຍຕວິໂມກຂ໌ແລ້ວ ຯລຯ ຂ້າພະເຈົ້າເຂົ້າອນິມິຕຕວິໂມກຂ໌ . . . ອັປປຓິຫິຕວິໂມກຂ໌ . . . ສຸຍຍຕສມາຘິ . . . ອນິມິຕຕສມາຘິ . . . ອັປປຓິຫິຕສມາຘິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອັປປຓິຫິຕສມາຘິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອັປປຓິຫິຕສມາຘິໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຓຑ໌] ໑. ມຸສາວາທວັຄ ໗. ພູຕາໂຣຈນສິກຂາບົທ
ບົທກາຊນີຍ໌

ບອກສຸຍຍຕສມາບັຕິ - ອັປປຕິຫິຕສມາບັຕິ

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າສຸຍຍຕສມາບັຕິ . . . ອນິມິຕຕ ສມາບັຕິ . . . ອັປປຕິຫິຕສມາບັຕິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ ອັປປຕິຫິຕສມາບັຕິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອັປປຕິ ຫິຕສມາບັຕິໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕິຍ໌

ບອກວິຊຊາ ໓

ຄຳວ່າ ບອກ ຄືພິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າວິຊຊາ ໓ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ວິຊຊາ ໓ . . . ຂ້າພະເຈົ້າເປັນ ຜູ້ຊຳນານ. . . ຂ້າພະເຈົ້າທຳວິຊຊາ ໓ ໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕິຍ໌

ບອກສຕິປັຏຖານ ໔ - ອິທລິບາທ ໔

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າສຕິປັຏຖານ ໔ ຯລຯ . . . ສັມມັປປລານ ໔ . . . ອິທລິບາທ ໔ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອິທລິບາທ ໔ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອິທລິບາທ ໔ ໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕິຍ໌

ບອກອິນທຣິຍ໌ ໕ - ພລະ ໕

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າອິນທຣິຍ໌ ໕ ຯລຯ ພລະ ໕ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ພລະ ໕ . . . ຂ້າ ພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳພລະ ໕ ໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕິຍ໌

ບອກໂພຊຌງຄ໌ ໗

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າໂພຊຌງຄ໌ ໗ ແລ້ວ. . . ຂ້າພະເຈົ້າ ເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ໂພຊຌງຄ໌ ໗ . . . ຂ້າພະເຈົ້າເປັນ ຜູ້ຊຳນານ. . . ຂ້າພະເຈົ້າທຳໂພຊຌງຄ໌ ໗ ໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕິຍ໌

ບອກອຣິຍມັຄມີອົງຄ໌ ໘

ຄຳວ່າ ບອກ ຄື ພິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າອຣິຍມັຄມີອົງຄ໌ ໘ ແລ້ວ. . . ຂ້າ

ພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອຣິຍມັຄນິອິງຄ໌ ໆ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອຣິຍມັຄນິອິງຄ໌ ໆ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກໂສດາປັຕຕິຜົລ - ອຣຫັຕຕຜົລ

ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າໂສດາປັຕຕິຜົລ. . . ສກທາຄາມິຜົລ. . . ອນາຄາມິຜົລ. . . ອຣຫັຕຕຜົລແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອຣຫັຕຕຜົລ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອຣຫັຕຕຜົລໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກການສລະຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກວ່າຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຌານ - ຈຕຸຕຖຌານໃນເຮືອນວ່າງ

ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຌານ ຯລຯ ທຸຕິຍຌານ. . . ຕຕິຍຌານ. . . ຈຕຸຕຖຌານໃນເຮືອນວ່າງແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ຈຕຸຕຖຌານ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳຈຕຸຕຖຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຌານແລະທຸຕິຍຌານ

[໗໔] ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຌານແລະທຸຕິຍຌານແລ້ວ . . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຌານແລະທຸຕິຍຌານ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປຖົມຌານແລະທຸຕິຍຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປກິມຌານແລະຕຕິຍຌານ - ຈຕຸຕຖຌານ

ຄຳວ່າ ບອກ ຄື ກິກຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິມຌານແລະຕຕິຍຌານ ຯລຯ ປກິມຌານແລະຈຕຸຕຖຌານແລ້ວ . . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກິມຌານແລະຈຕຸຕຖຌານ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກິມຌານແລະຈຕຸຕຖຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ບອກປກິມຌານແລະສຸຍ຺ຍຕວິໂມກຂ໌ - ອັປປຕິຫິຕສມາຘິ

ຄຳວ່າ ບອກ ຄື ກິກຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິມຌານແລະສຸຍ຺ຍຕວິໂມກຂ໌ ຯລຯ ອນິມິຕຕວິໂມກຂ໌. . . ອັປປຕິຫິຕວິໂມກຂ໌. . . ສຸຍ຺ຍຕສມາຘິ. . . ອນິມິຕຕສມາຘິ. . . ອັປປຕິຫິຕສມາຘິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກິມຌານແລະອັປປຕິຫິຕສມາຘິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກິມຌານແລະອັປປຕິຫິຕສມາຘິໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ບອກປກິມຌານແລະສຸຍ຺ຍຕສມາບັຕິ - ອັປປຕິຫິຕສມາບັຕິ

ຄຳວ່າ ບອກ ຄື ກິກຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິມຌານແລະສຸຍ຺ຍຕສມາບັຕິ ຯລຯ ອນິມິຕຕສມາບັຕິ. . . ອັປປຕິຫິຕສມາບັຕິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກິມຌານແລະອັປປຕິຫິຕສມາບັຕິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກິມຌານແລະອັປປຕິຫິຕສມາບັຕິໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ຈິຕຕິຍກັຕຫ໌] ໑. ມຸສາວາທວັຄ ໗. ກູຕາໂຣຈນສິກຂາບົທ ບົທກາຊນີຍ໌

ບອກປກິມຌານແລະວິຊຊາ ໓

ຄຳວ່າ ບອກ ຄື ກິກຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິມຌານແລະວິຊຊາ ໓ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກິມຌານແລະວິຊຊາ ໓ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກິມຌານແລະວິຊຊາ ໓ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ບອກປກົມຄານແລະສຕິປັຜຖານ ໔ - ອິທລິບາທ ໔

ຄຳວ່າ ບອກ ຄື ກິກບຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກົມຄານແລະສຕິປັຜຖານ ໔ . . . ສັມມັປປລານ ໔ . . . ອິທລິບາທ ໔ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກົມຄານແລະອິທລິບາທ ໔ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກົມຄານແລະອິທລິບາທ ໔ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປກົມຄານແລະອິນທຣີຍ໌ ໕ - ພລະ ໕

ຄຳວ່າ ບອກ ຄື ກິກບຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກົມຄານແລະອິນທຣີຍ໌ ໕ ຯລຯ ພລະ ໕ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກົມຄານແລະພລະ ໕ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກົມຄານແລະພລະ ໕ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປກົມຄານແລະໂພຊຌງຄ໌ ໗

ຄຳວ່າ ບອກ ຄື ກິກບຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກົມຄານແລະໂພຊຌງຄ໌ ໗ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກົມຄານແລະໂພຊຌງຄ໌ ໗ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກົມຄານແລະໂພຊຌງຄ໌ ໗ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປກົມຄານແລະອຣິຍມັຄມີອົງຄ໌ ໘

ຄຳວ່າ ບອກ ຄື ກິກບຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກົມຄານແລະອຣິຍມັຄມີອົງຄ໌ ໘ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກົມຄານແລະອຣິຍມັຄມີອົງຄ໌ ໘ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກົມຄານແລະອຣິຍມັຄມີອົງຄ໌ ໘ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປກົມຄານແລະໂສດາປັຕຕິຜົລ - ອຣຫັຕຕຜົລ

ຄຳວ່າ ບອກ ຄື ກິກບຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກົມຄານແລະໂສດາປັຕຕິຜົລ ຯລຯ ສກທາຄາມິຜົລ. . . ອນາຄາມິຜົລ. . . ອຣຫັຕຜົລແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປກົມຄານແລະອຣຫັຕຕຜົລ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປກົມຄານແລະອຣຫັຕຕຜົລໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປກິມຌານ - ສລະຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າປກິມຌານ ຂ້າພະເຈົ້າສລະຣາຄະ ຂ້າພະເຈົ້າສລະໂທສະແລ້ວ ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພີກຖອນໂມຫະຂຶ້ນແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບອກປກິມຌານ-ຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າປກິມຌານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ” ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕີຍຌານແລະຈຕຸຕຖຌານ

[໑໘] ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າທຸຕີຍຌານແລະຕຕີຍຌານທຸຕີຍຌານແລະຈຕຸຕຖຌານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ທຸຕີຍຌານແລະຈຕຸຕຖຌານ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳທຸຕີຍຌານແລະຈຕຸຕຖຌານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕີຍຌານແລະສຸຍຍຕວິໂມກຂ໌

ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າທຸຕີຍຌານແລະສຸຍຍຕວິໂມກຂ໌ແລ້ວ ຯລຯ ແລະຈິຕຂອງຂ້າພະເຈົ້າປອດຈາກໂມຫະ” ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕີຍຌານແລະປກິມຌານ

ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າທຸຕີຍຌານແລະປກິມຌານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ທຸຕີຍຌານແລະປກິມຌານ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳທຸຕີຍຌານແລະປກິມຌານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

(ມູລນັຍທ່ານຫຍໍ້ໄວ້ແລ້ວ)

ບອກວ່າຈິຕປອດຈາກໂມຫະແລະປກິມຌານ

ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ “ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າ

ເຂົ້າປກິນລານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເປັນຜູ້ໄດ້ປກິນລານ ຂ້າພະເຈົ້າເປັນຜູ້ຊຳນານຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳປກິນລານໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບອກວ່າຈິຕປອດຈາກໂມຫະແລະໂທສະ

ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຈິຕຂອງຂ້າພະເຈົ້າປອດຈາກໂທສະ" ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບອກປກິນລານ - ຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ກິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິນລານ ທຸຕິຍລານ ຕຕິຍລານ ຈຕຸຕຖລານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປຕິຫິຕວິໂມກຂ໌ ສຸຍຍຕສມາຣິ ອນິມິຕຕສມາຣິ ອັປປຕິຫິຕສມາຣິ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປຕິຫິຕສມາບັຕິ ວິຊຊາ ໓ ສຕິປັຜຖານ ໔ ສັມມັປປລານ ໔ ອິທລິບາທ ໔ ອິນທຣິຍ໌ ໕ ພລະ ໕ ໂພຊລງຄ໌ ໗ ອຣິຍມັຄ ມີອົງຄ໌ ໘ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລ ແລະອຣຫັຕຕຜົລ ຯລຯ ຂ້າພະເຈົ້າສລະຣາຄະແລ້ວ ຂ້າພະເຈົ້າສລະໂທສະແລ້ວ ແລະສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໑. ມຸສາວາທວັຄ ໗. ກູຕາໂຣຈນສິກຂາບົທ ບົທກາຊນີຍ໌

ວັຕຖຸການວາຣກຖາ

ປະສົງຄ໌ຈະບອກປກິນລານ

[໗໔] ຄຳວ່າ ບອກ ຄື ກິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິນລານແລ້ວ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າທຸຕິຍລານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຜ

ປະສົງຄ໌ຈະບອກປກິນລານ - ຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ກິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປກິນລານແລ້ວ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າຕຕິຍລານ ຯລຯ ຈຕຸຕຖລານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປຕິຫິຕ

ວິໂມກຂ໌ ສຸຍ່ຍຕສມາລິ ອນິມິຕຕສມາລິ ອັປປະກິຫິຕສມາລິ ສຸຍ່ຍຕສມາບັຕິ ອນິມິຕຕສມາບັຕິ ອັປປະກິຫິຕສມາບັຕິ ວິຊຊາ ໌ ສຕິປັຍຖານ ໔ ສັມມັປປລານ ໔ ອິທລິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຍງຄ໌ ໗ ອຣິຍມັຄມີອົງຄ໌ ໘ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລ ແລະ ອຣຫັຕຕຜົລແລ້ວ ຯລຯ ຂ້າພະເຈົ້າສລະຣາຄະແລ້ວ ຂ້າພະເຈົ້າສລະໂທສະແລ້ວ ແລະຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອ ເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຍ

ປະສົງຄ໌ຈະບອກທຸຕິຍຊານ - ຈິຕປອດຈາກໂມຫະ

ຄຳວ່າ ບອກ ຄື ພິກຂຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຊານແລ້ວ" ແຕ່ກ່າວ ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າ ໃຈ ຕ້ອງອາບັຕິທຸກກຍ

ປະສົງຄ໌ຈະບອກທຸຕິຍຊານ

ຄຳວ່າ ບອກ ຄື ພິກຂຸຕ້ອງການຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຊານແລ້ວ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຊານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ ເຂົ້າໃຈ ຕ້ອງອາບັຕິທຸກກຍ

(ມູລນັຍທ່ານຫຍໍ້ໄວ້ແລ້ວ)

ປະສົງຄ໌ຈະບອກວ່າຈິຕປອດຈາກໂມຫະ

ຄຳວ່າ ບອກ ຄື ພິກຂຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຊານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ ເຂົ້າໃຈ ຕ້ອງອາບັຕິທຸກກຍ

ຄຳວ່າ ບອກ ຄື ພິກຂຸຕ້ອງການຈະກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂທສະ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອ ເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຍ

ປະສົງຄ໌ຈະບອກປຖົມຊານ ຯລຯ

ຄຳວ່າ ບອກ ຄື ພິກຂຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຊານ ທຸຕິຍຊານ ຕຕິຍຊານ ຈຕຸຕຖຊານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຂ້າພະເຈົ້າ

ເຂົ້າປຖົມຌານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກະຕ

ປະສົງຄ໌ຈະບອກທຸຕິຍຌານ ຯລຯ

ຄຳວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຌານ ຕຕິຍຌານ ຈຕຸຕຖຌານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຌານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກະຕ

ບອກວ່າພິກສຸອື່ນເຂົ້າປຖົມຌານ

[໗໕] ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າປຖົມຌານແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້ປຖົມຌານ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳປຖົມຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິທຸກກະຕ

ບອກວ່າພິກສຸອື່ນເຂົ້າທຸຕິຍຌານ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າທຸຕິຍຌານ ຯລຯ ຕຕິຍຌານ. . . ຈຕຸຕຖຌານແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້ທຸຕິຍຌານ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳຈຕຸຕຖຌານໃຫ້ແຈ້ງແລ້ວ" ຕ້ອງອາບັຕິທຸກກະຕ

ບອກວ່າພິກສຸອື່ນເຂົ້າສຸນຍຕວິໂມກຂ໌ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າສຸນຍຕວິໂມກຂ໌ ຯລຯ ອນິມິຕຕວິໂມກຂ໌ ອັປປຓິຫິຕວິໂມກຂ໌ ສຸນຍຕສມາຘິອນິມິຕຕສມາຘິ ອັປປຓິຫິຕສມາຘິແລ້ວ . . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້ອັປປຓິຫິຕສມາຘິ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳອັປປຓິຫິຕສມາຘິໃຫ້ແຈ້ງແລ້ວ" ຕ້ອງອາບັຕິທຸກກະຕ

ບອກວ່າພິກສຸອື່ນເຂົ້າສຸນຍຕສມາບັຕິ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນ

ເຂົ້າສຸຍ່ຍຕສມາບັຕິ ຯລຯ ອນິມິຕຕສມາບັຕິ ອັປປຕິຫິຕສມາບັຕິແລ້ວ. . . ກິກษุຮູບນັ້ນເຂົ້າຢູ່. . . ກິກษุຮູບນັ້ນເປັນຜູ້ເຂົ້າແລ້ວ. . . ກິກษุຮູບນັ້ນເປັນຜູ້ໄດ້ອັປປຕິຫິຕສມາບັຕິ. . . ກິກษุຮູບນັ້ນເປັນຜູ້ຊຳນານ. . . ກິກษุຮູບນັ້ນທຳອັປປຕິຫິຕສມາບັຕິໃຫ້ແຈ້ງແລ້ວ" ຕ້ອງອາບັຕິທຸກກຜ

ບອກວ່າກິກษุອື່ນເຂົ້າວິຊຊາ ໓ ຯລຯ

ຄຳວ່າ ບອກ ຄື ກິກษุກ່າວອອດອນຸປສັມບັນວ່າ "ກິກษุຮູບໃດຢູ່ໃນວິຫາຣຂອງທ່ານ ກິກษุຮູບນັ້ນເຂົ້າວິຊຊາ ໓ ຯລຯ ສຕິປັຜຖານ ໔ ສັມມັປປລານ ໔ ອິທລິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຌງຄ໌ ໗ ອຣິຍມັຄມີອົງຄ໌ ໘ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລ ແລະອຣຫັຕຕຜົລແລ້ວ. . . ກິກษุຮູບນັ້ນເຂົ້າຢູ່. . . ກິກษุຮູບນັ້ນເປັນຜູ້ເຂົ້າແລ້ວ. . . ກິກษุຮູບນັ້ນສລະຣາຄະແລ້ວ ກິກษุຮູບນັ້ນສລະໂທສະແລ້ວ ກິກษุຮູບນັ້ນສລະ ຄາຍ ພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ ຈິຕຂອງກິກษุຮູບນັ້ນປອດຈາກຣາຄະ ຈິຕຂອງກິກษุຮູບນັ້ນປອດຈາກໂທສະ ຈິຕຂອງກິກษุຮູບນັ້ນປອດຈາກໂມຫະ" ຕ້ອງອາບັຕິທຸກກຜ

ບອກວ່າກິກษุອື່ນເຂົ້າປຖົມຌານໃນເຮືອນວ່າງ ຯລຯ

ຄຳວ່າ ບອກ ຄື ກິກษุກ່າວແກ່ອນຸປສັມບັນວ່າ "ກິກษุຮູບໃດຢູ່ໃນວິຫາຣຂອງທ່ານ ກິກษุຮູບນັ້ນເຂົ້າປຖົມຌານ ຯລຯ ທຸຕິຍຌານ ຕຕິຍຌານ ຈຕຸຕຖຌານໃນເຮືອນວ່າງແລ້ວ ຯລຯ ກິກษุຮູບນັ້ນເຂົ້າຢູ່. . . ກິກษุຮູບນັ້ນເປັນຜູ້ເຂົ້າແລ້ວ. . . ກິກษุຮູບນັ້ນເປັນຜູ້ໄດ້. . . ກິກษุຮູບນັ້ນເປັນຜູ້ຊຳນານ. . . ກິກษุຮູບນັ້ນທຳຈຕຸຕຖຌານໃຫ້ແຈ້ງໃນເຮືອນວ່າງແລ້ວ" ຕ້ອງອາບັຕິທຸກກຜ

ບອກວ່າກິກษุອື່ນເຂົ້າຈຕຸຕຖຌານໃນເຮືອນວ່າງ

ຄຳວ່າ ບອກ ຄື ກິກษุກ່າວແກ່ອນຸປສັມບັນວ່າ "ກິກษุຮູບໃດໃຊ້ສອຍຈີວອນຂອງທ່ານ ກິກษุຮູບໃດຈັນບິຕຫບາຕຂອງທ່ານ ກິກษุຮູບໃດໃຊ້ສອຍເສນາສນະຂອງທ່ານ ກິກษุຮູບໃດບໍຣິໂກຄຄິລານປັຈຈັຍເກສັຊບໍຣິຂາຣ໑ຂອງທ່ານ ກິກษุຮູບນັ້ນເຂົ້າຈຕຸຕຖຌານໃນເຮືອນວ່າງແລ້ວ. . . ກິກษุຮູບນັ້ນເຂົ້າຢູ່. . . ກິກษุຮູບນັ້ນເປັນຜູ້ເຂົ້າແລ້ວ. . . ກິກษุຮູບນັ້ນເປັນຜູ້ໄດ້. . . ກິກษุຮູບນັ້ນເປັນຜູ້ຊຳນານ. . . ກິກษุຮູບນັ້ນທຳຈຕຸຕຖຌານໃຫ້ແຈ້ງໃນເຮືອນວ່າງແລ້ວ" ຕ້ອງອາບັຕິທຸກກຜ

[໗໕] ຄຳວ່າ ບອກ ຄື ກິກษุກ່າວແກ່ອນຸປສັມບັນວ່າ "ວິຫາຣຂອງທ່ານກິກษุຮູບໃດໃຊ້ສອຍແລ້ວ ຈີວອນຂອງທ່ານກິກษุຮູບໃດໃຊ້ສອຍແລ້ວ ບິຕຫບາຕຂອງທ່ານກິກษุຮູບໃດຈັນແລ້ວ ເສນາສນະຂອງທ່ານກິກษุຮູບໃດໃຊ້ສອຍແລ້ວ ຄິລານປັຈຈັຍເກສັຊບໍຣິຂາຣຂອງທ່ານກິກษุຮູບໃດບໍຣິໂກຄ

ແລ້ວ ກິກຂຸຮູບນັ້ນເຂົ້າຈຕຸຕຖຌານໃນເຮືອນວ່າງແລ້ວ. . . ກິກຂຸຮູບນັ້ນເຂົ້າຢູ່. . . ກິກຂຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ກິກຂຸຮູບນັ້ນເປັນຜູ້ໄດ້. . . ກິກຂຸຮູບນັ້ນເປັນຜູ້ຊຳນານ. . . ກິກຂຸຮູບນັ້ນທຳຈຕຸຕຖຌານໃຫ້ແຈ້ງໃນເຮືອນວ່າງແລ້ວ" ຕ້ອງອາບັຕິທຸກກຏ

ເຊີງອັນຖະ :

໑ຄິລານປັຈຈັຍເກສັຊບໍຣິຂາຣ ຄືເກສັຊທັງ ໕ ໄດ້ແກ່ ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ (ວິ. ອ. ໔/໔໒໐/໔໐, ສາຣຕຸຖ. ຒິກາ ໔/໔໒໐/໓໒໓) ເປັນສິ່ງສັປປາຍະສຳລັບກິກຂຸຜູ້ເຈັບໄຂ້ ຈັດວ່າເປັນບໍຣິຂາຣ ຄືບໍຣິວາຣຂອງຊີວິຕ ດຸຈດັ່ງກຳແພງລ້ອມພຣະນະຄອນ ເພາະຄອຍປ້ອງກັນຮັກສາບໍ່ໃຫ້ອາພາສທີ່ຈະບັ່ນຮອນຊີວິຕໄດ້ຊ່ອງເກີດຂຶ້ນ ແລະເປັນສັມກາຣະຂອງຊີວິຕຄອຍປະຄັບປະຄອງຊີວິຕໃຫ້ດຳຣົງຢູ່ດົນ (ວິ. ອ. ໔/໔໒໐/໔໐-໔໑, ມ. ມູ. ອ. ໑/໑໒໑/໓໒໗, ມ. ມູ ຒິກາ ໑/໔໓/໔໑໓) ເປັນເຄື່ອງປ້ອງກັນໂຣຄ ບຳບັດໂຣຄທີ່ໃຫ້ເກີດທຸກຂເວທນາເນື່ອງຈາກລາຕຸກຳເຣີບໃຫ້ຫາຍໄປ (ສາຣຕຸຖ. ຒິກາ ໔/໔໒໐/໓໒໓)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓ໌] ໑. ມຸສາວາທວັຄ ໗. ໗ູຕາໂຣຈນສິກຂາບົທ ອນາປັຕຕິວາຣ

ຄຳວ່າ ບອກ ຄື ກິກຂຸກ່າວແກ່ອນຸປສັມບັນວ່າ "ທ່ານອາສັຍກິກຂຸຮູບໃດແລ້ວໄດ້ຖວາຍວິຫາຣ ໄດ້ຖວາຍຈີວອນ ໄດ້ຖວາຍບິຓທບາຕ ໄດ້ຖວາຍເສນາສນະ ໄດ້ຖວາຍຄິລານປັຈຈັຍເກສັຊບໍຣິຂາຣ ກິກຂຸຮູບນັ້ນເຂົ້າແລ້ວ ກຳລັງເຂົ້າ ເປັນຜູ້ເຂົ້າຈຕຸຕຖຌານໃນເຮືອນວ່າງ ກິກຂຸຮູບນັ້ນເປັນຜູ້ໄດ້ ເປັນຜູ້ຊຳນານ ເຮັດໃຫ້ແຈ້ງຈຕຸຕຖຌານໃນເຮືອນວ່າງແລ້ວ" ຕ້ອງອາບັຕິທຸກກຏ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໗໗] ໑. ກິກຂຸບອກອຸຕຕຣິມນຸສສທັມທີ່ມີຈິງແກ່ອຸປສັມບັນ

໒. ກິກຂຸຕົ້ນບັນຍັດ

ກູຕາໂຣຈນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໑. ມຸສາວາທວັຄ ໙. ທຸຜຖຸລລາໂຣຈນ ສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໙. ທຸຜຖຸລລາໂຣຈນສິກຂາບົທ

ວ່າດ້ວຍການບອກອາບັຕິຊົ່ວຫຍາບ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໗໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕຫິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ທ່ານພຣະອຸປນັນທສາກຍບຸຕຣຜິດຖຽງກັບພວກກິກຸຈັພພັຄຄີຍ໌ ທ່ານຕ້ອງອາບັຕິສັງຄາທິເສສຂໍ້ຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ຈຶ່ງຂໍສົງຄ໌ຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ ສົງຄ໌ໃຫ້ທ່ານຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ

ສມັຍນັ້ນ ໃນກຸງສາວັຕຖີມີສັງຄກັຕຂອງສມາຄົມນຶ່ງເກີດຂຶ້ນ ທ່ານພຣະອຸປນັນທສາກຍບຸຕຣກຳລັງຢູ່ປຣິວາສ ຈຶ່ງນັ່ງ ຓະ ອາສນະສຸດທ້າຍໃນໂຮງອາຫານ ພວກກິກຸຈັພພັຄຄີຍ໌ກ່າວກັບອຸບາສົກເຫລົ່ານັ້ນວ່າ "ທ່ານພຣະອຸປນັນທສາກຍບຸຕຣເປັນພຣະປະຈຳຕະກູນທີ່ພວກທ່ານຍົກຍ້ອງໃຊ້ມືທີ່ປ້ອນເຂົ້າທີ່ເຂົາຖວາຍດ້ວຍສັດທາ ພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນ ທ່ານຕ້ອງອາບັຕິຂໍ້ຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ຈຶ່ງຂໍສົງຄ໌ຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ ສົງຄ໌ໃຫ້ທ່ານຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ ທ່ານກຳລັງຢູ່ປຣິວາສຈຶ່ງນັ່ງ ຓະ ອາສນະສຸດທ້າຍ"

ບັນດາກິກຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຸຈັພພັຄຄີຍ໌ຈຶ່ງບອກອາບັຕິຊົ່ວຫຍາບຂອງກິກຸແກ່ອນຸປສັມບັນລະ" ຄັນກິກຸເຫລົ່ານັ້ນຕຳໜິພວກກິກຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຸຈັພພັຄຄີຍ໌ວ່າ "ກິກຸທັງຫລາຍ ຊາບວ່າ ພວກທ່ານບອກອາບັຕິຊົ່ວຫຍາບຂອງກິກຸແກ່ອນຸປສັມບັນ ແມ່ນແທ້ບໍ" ພວກກິກຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຈຶ່ງບອກອາບັຕິຊົ່ວຫຍາບຂອງກິກຸແກ່ອນຸປສັມບັນລະ ໂມຄບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນ

ທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໙] ກໍ ກິກຸໃດບອກອາບັດຕິຊົ່ວຫຍາບຂອງກິກຸແກ່ອນຸປສັມບັນ ຕ້ອງອາບັດຕິປາຈິດຕິຍ໌ ເວັ້ນໄວ້ແຕ່ກິກຸໄດ້ຮັບສົມມຸດ

ເຣື່ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໓໐] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ກິກຸ ມີອະທິບາຍວ່າ ຊື່ວ່າກິກຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຸ ໃນຄວາມໝາຍນີ້

ຄໍາວ່າ ຂອງກິກຸ ຄື ຂອງກິກຸຮູບອື່ນ

ອາບັດຕິທີ່ຊື່ວ່າ ຊົ່ວຫຍາບ ໄດ້ແກ່ ອາບັດຕິປາຣາຊິກ ໔ ສິກຂາບົທ ແລະອາບັດຕິສັງຄາທິເສສ ໑໓ ສິກຂາບົທ

ທີ່ຊື່ວ່າ ອນຸປສັມບັນ ຄື ຍົກເວັ້ນກິກຸແລະກິກຸນີ ນອກນັ້ນຊື່ວ່າອນຸປສັມບັນ

ຄໍາວ່າ ບອກ ຄື ບອກແກ່ສຕຣີຫລືແກ່ບຸຣຸຮ ແກ່ຄຣືຫັສຖ໌ຫລືແກ່ບັພຊິຕ

ຄໍາວ່າ ເວັ້ນໄວ້ແຕ່ກິກຸໄດ້ຮັບສົມມຸດ ຄື ຍົກເວັ້ນກິກຸທີ່ໄດ້ຮັບມອບໝາຍຈາກສົງຄ໌໑

ເຊີງອັນຖະ :

໑ ຄືມອບໝາຍໃຫ້ເປັນຜູ້ບອກອາບັດຕິ (ເບິ່ງ ໜ້າ ໔໓໑-໔໓໔ ປະກອບ)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິດຕິຍກັດຕ໌] ໑. ມຸສາວາທວັຄ ໙. ທຸຝຸລລາໂຣຈນ ສິກຂາບົທ ບົທກາຊນີຍ໌

ບົທກາຊນີຍ໌

ກິກຸທີ່ໄດ້ຮັບສົມມຸດໃຫ້ບອກ ກໍາໜົດອາບັດຕິ ບໍ່ກໍາໜົດຕະກູນກໍມີ

ກິກຸທີ່ໄດ້ຮັບສົມມຸດໃຫ້ບອກ ກໍາໜົດຕະກູນ ບໍ່ກໍາໜົດອາບັດຕິກໍມີ

ກິກຂຸທີ່ໄດ້ຮັບສົມມຸດໃຫ້ບອກ ກຳຫນົດອາບັຕິແລະກຳຫນົດຕະກູນກໍມີ
ກິກຂຸທີ່ໄດ້ຮັບສົມມຸດໃຫ້ບອກ ບໍ່ກຳຫນົດອາບັຕິແລະບໍ່ກຳຫນົດຕະກູນກໍມີ
ທີ່ຊື່ວ່າ ກຳຫນົດອາບັຕິ ຄື ສົງຄ໌ກຳຫນົດອາບັຕິວ່າ ເພິງບອກຕາມຈຳນວນອາບັຕິເທົ່ານີ້
ທີ່ຊື່ວ່າ ກຳຫນົດຕະກູນ ຄື ສົງຄ໌ກຳຫນົດຕະກູນວ່າ ເພິງບອກໃນຕະກູນມີປະມານເທົ່ານີ້
ທີ່ຊື່ວ່າ ກຳຫນົດອາບັຕິແລະກຳຫນົດຕະກູນ ຄື ສົງຄ໌ກຳຫນົດອາບັຕິແລະກຳຫນົດຕະກູນໄວ້ວ່າ ເພິງບອກຕາມຈຳນວນອາບັຕິເທົ່ານີ້ ໃນຕະກູນມີປະມານເທົ່ານີ້
ທີ່ຊື່ວ່າ ບໍ່ກຳຫນົດອາບັຕິແລະບໍ່ກຳຫນົດຕະກູນ ຄື ສົງຄ໌ບໍ່ກຳຫນົດອາບັຕິແລະບໍ່ກຳຫນົດຕະກູນໄວ້ວ່າ ເພິງບອກຕາມຈຳນວນອາບັຕິເທົ່ານີ້ ໃນຕະກູນມີປະມານເທົ່ານີ້

[໗໑] ໃນກາຣກຳຫນົດອາບັຕິ ກິກຂຸບອກອາບັຕິອື່ນນອກຈາກອາບັຕິທີ່ສົງຄ໌ກຳຫນົດໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນກາຣກຳຫນົດຕະກູນ ກິກຂຸບອກໃນຕະກູນອື່ນນອກຈາກຕະກູນທີ່ສົງຄ໌ກຳຫນົດໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນກາຣກຳຫນົດອາບັຕິແລະໃນກາຣກຳຫນົດຕະກູນ ກິກຂຸບອກອາບັຕິອື່ນ ນອກຈາກອາບັຕິທີ່ສົງຄ໌ກຳຫນົດໄວ້ ແລະໃນຕະກູນອື່ນນອກຈາກຕະກູນທີ່ສົງຄ໌ກຳຫນົດໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນກໍຣະນີທີ່ບໍ່ໄດ້ກຳຫນົດອາບັຕິແລະໃນກໍຣະນີທີ່ບໍ່ໄດ້ກຳຫນົດຕະກູນ ບໍ່ຕ້ອງອາບັຕິ

ຕິກປາຈິຕຕີຍ໌

[໗໔] ອາບັຕິຊົ່ວຫຍາບ ກິກຂຸສຳຄັນວ່າເປັນອາບັຕິຊົ່ວຫຍາບ ບອກແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກຂຸໄດ້ຮັບສົມມຸດ

ອນາປັຕຕິວາຣ

ອາບັຕິຊົ່ວຫຍາບ ກິກຂຸບໍ່ແນ່ໃຈ ບອກແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກຂຸໄດ້ຮັບສົມມຸດ
ອາບັຕິຊົ່ວຫຍາບ ກິກຂຸສຳຄັນວ່າບໍ່ເປັນອາບັຕິຊົ່ວຫຍາບ ບອກແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ກິກຂຸໄດ້ຮັບສົມມຸດ

ທຸກກຸຽ

ກິກຂຸບອກອາບັຕິບໍ່ຊົ່ວຫຍາບ ຕ້ອງອາບັຕິທຸກກຸຽ

ກິກຂຸບອກຄວາມປະພຶດຊົ່ວຫຍາບຫລືບໍ່ຊົ່ວຫຍາບແກ່ອນຸປສັມບັນ ຕ້ອງອາບັຕິທຸກກົດ
ອາບັຕິບໍ່ຊົ່ວຫຍາບ ກິກຂຸສຳຄັນວ່າເປັນອາບັຕິຊົ່ວຫຍາບ ຕ້ອງອາບັຕິທຸກກົດ
ອາບັຕິບໍ່ຊົ່ວຫຍາບ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ອາບັຕິບໍ່ຊົ່ວຫຍາບ ກິກຂຸສຳຄັນວ່າເປັນອາບັຕິບໍ່ຊົ່ວຫຍາບ ຕ້ອງອາບັຕິທຸກກົດ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໗໖] ໑. ກິກຂຸບອກເຣື່ອງທີ່ເກີດແຕ່ບໍ່ບອກອາບັຕິ

໒. ກິກຂຸບອກອາບັຕິແຕ່ບໍ່ບອກເຣື່ອງທີ່ເກີດ

໓. ກິກຂຸຜູ້ໄດ້ຮັບສົມມຸດ

໔. ກິກຂຸວິກົລຈິຕ

໕. ກິກຂຸຕົ້ນບັນຍັດ

ທຸຕຖຸລລາໂຣຈນສິກຂາບົທທີ່ ໙ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໑. ມຸສາວາທວັຄ ໑໐. ປຖວີຂຕນສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໑໐. ປຖວີຂຕນສິກຂາບົທ

ວ່າດ້ວຍການຂຸດດິນ

ເຣື່ອງກິກຂຸຊາວເມືອງອາຣວີ

[໗໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຄເຈົ້າປະທັບຢູ່ ຓະ ອັຄຄາຣວເຈດີຍ໌ ເຂຕເມືອງອາຣວີ ສມັຍນັ້ນ ພວກກິກຂຸຊາວເມືອງອາຣວີຊ່ວຍກັນກໍ່ສ້າງ ຂຸດແດ່ ໃຊ້ໃຫ້ຂຸດແດ່ ຊຶ່ງດິນ ພວກຊາວບ້ານຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງຂຸດແດ່ ໃຊ້ໃຫ້ຂຸດແດ່ຊຶ່ງດິນລະ ພຣະສມຕະເຊື້ອສາຍສາກຍບຸຕຣບຽດບຽນຊີວະຊຶ່ງມີອິນທຣີຍ໌ດຽວ" ພວກກິກຂຸໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງ

ຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຊາວເມືອງອາຣຸວີ ຈຶ່ງຂຸດແດ່ ໃຊ້ໃຫ້ຂຸດແດ່ຊຶ່ງດິນລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຊາວເມືອງອາຣຸວີໂດຍປະການຕ່າງໆແລ້ວຈຶ່ງນຳເອົາເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານຂຸດແດ່ ໃຊ້ໃຫ້ຂຸດແດ່ຊຶ່ງດິນແມ່ນແທ້ບໍ່" ພິກຂຸຊາວເມືອງອາຣຸວີທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທລເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຈຶ່ງຂຸດແດ່ ໃຊ້ໃຫ້ຂຸດແດ່ ຊຶ່ງດິນລະ ໂມຄບຸຣຸຫທັງຫລາຍ ພວກຊາວບ້ານສຳຄັນວ່າດິນມີຊີວະ ໂມຄບຸຣຸຫທັງຫລາຍການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ສິກຂາບົທວິພັງຄ໌

ພຣະບັນຍັດ

[໗໕] ກໍ ພິກຂຸໃດຂຸດ ຫລືໃຊ້ໃຫ້ຂຸດຊຶ່ງດິນ ຕ້ອງອາບັຕິປາຈິຕຕິຍ໌

ເລື່ອງພິກຂຸຊາວເມືອງອາຣຸວີ ຈົບ

ສິກຂາບົທວິພັງຄ໌

[໗໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ດິນ ໄດ້ແກ່ ດິນ ໒ ຊນິດ ຄື (໑) ດິນແທ້ (໒) ດິນບໍ່ແທ້

ທີ່ຊື່ວ່າ ດິນແທ້ ຄື ດິນຣ່ວນລ້ວນ ດິນໜຽວລ້ວນ ດິນມີຫີນຜສົມໜ້ອຍດຽວ ດິນມີກ້ອນຫີນຜສົມໜ້ອຍດຽວ ດິນມີກະເບື້ອງຜສົມໜ້ອຍດຽວ ດິນມີແຮ່ຜສົມໜ້ອຍດຽວ ດິນມີຊາຍຜສົມໜ້ອຍດຽວ ດິນຣ່ວນເປັນສ່ວນຫລາຍ ດິນໜຽວເປັນສ່ວນຫລາຍ ແມ່ນດິນທີ່ຍັງບໍ່ເຜົາໄຟກໍຮຽກວ່າ ດິນແທ້ ກອງດິນຣ່ວນຫລືດິນໜຽວທີ່ຝົນຕົກຣົດເກີນ ໔ ເດືອນກໍຮຽກວ່າ ດິນແທ້ ທີ່ຊື່ວ່າ

ດິນບໍ່ແທ້ ຄື ຫີນລ້ວນ ດິນມີກ້ອນຫີນລ້ວນ ດິນມີກຣະເບື້ອງລ້ວນ ດິນມີແຮ່ລ້ວນ ດິນມີຊາຍລ້ວນ ດິນມີດິນຮ່ວນຜສົມໜ້ອຍດຽວ ດິນມີດິນຫນຽວຜສົມໜ້ອຍດຽວ ດິນມີຫີນ ດິນມີກ້ອນຫີນມາກ ດິນມີກຣະເບື້ອງມາກ ດິນມີແຮ່ມາກ ດິນມີຊາຍມາກ ແມ່ນດິນທີ່ເຜົາໄຟແລ້ວກໍຮຽກວ່າ ດິນບໍ່ແທ້ ກອງດິນຮ່ວນຫລືດິນຫນຽວທີ່ຝົນຕົກຣົດຍັງບໍ່ເຖິງ ໔ ເດືອນກໍຮຽກວ່າ ດິນບໍ່ແທ້

ຄໍາວ່າ ຂຸດ ຄື ກິກຂຸຂຸດເອງ ຕ້ອງອາບັຕິປາຈິຕຕີຍ໌

ຄໍາວ່າ ໃຊ້ໃຫ້ຂຸດ ຄື ກິກຂຸໃຊ້ຜູ້ອື່ນໃຫ້ຂຸດ ຕ້ອງອາບັຕິປາຈິຕຕີຍ໌

ກິກຂຸສັ່ງຄັ້ງດຽວ ເຂົາຂຸດຫລາຍຄັ້ງ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕທ໌] ໑. ມຸສາວາທວັຄ ໑໐. ປຖວີຂຕານສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

[໘໗] ດິນ ກິກຂຸສໍາຄັນວ່າເປັນດິນ ຂຸດຫລືໃຊ້ໃຫ້ຂຸດ ທໍາລາຍຫລືໃຊ້ໃຫ້ທໍາລາຍ ເຜົາຫລືໃຊ້ໃຫ້ເຜົາ ຕ້ອງອາບັຕິປາຈິຕຕີຍ໌

ດິນ ກິກຂຸບໍ່ແນ່ໃຈ ຂຸດຫລືໃຊ້ໃຫ້ຂຸດ ທໍາລາຍຫລືໃຊ້ໃຫ້ທໍາລາຍ ເຜົາຫລືໃຊ້ໃຫ້ເຜົາ ຕ້ອງອາບັຕິທຸກກຎ

ດິນ ກິກຂຸສໍາຄັນວ່າບໍ່ແມ່ນດິນ ຂຸດຫລືໃຊ້ໃຫ້ຂຸດ ທໍາລາຍຫລືໃຊ້ໃຫ້ທໍາລາຍ ເຜົາຫລືໃຊ້ໃຫ້ເຜົາ ບໍ່ຕ້ອງອາບັຕິ

ບໍ່ແມ່ນດິນ ກິກຂຸສໍາຄັນວ່າເປັນດິນ ຕ້ອງອາບັຕິທຸກກຎ

ບໍ່ແມ່ນດິນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຎ

ບໍ່ແມ່ນດິນ ກິກຂຸສໍາຄັນວ່າບໍ່ແມ່ນດິນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໘໘] ໑. ກິກຂຸກ່າວວ່າ "ທ່ານຈົ່ງຮູ້ ຈົ່ງໃຫ້ ຈົ່ງນໍາສິ່ງນີ້ມາ ເຮົາຕ້ອງກາຣສິ່ງນີ້ທ່ານຈົ່ງທໍາສິ່ງນີ້ໃຫ້ເປັນກັປປິຍະ"໑

໔. ກິກຂຸບໍ່ຈົງໃຈ

໓. ກິກຊຸບໍ່ມີສຕິ
໔. ກິກຊຸບໍ່ຮູ້
໕. ກິກຊຸວິກົລຈິຕ
໖. ກິກຊຸຕົ້ນບັນຍັດ

ປາງວິຂຕານສິກຂາບົທທີ ໑໐ ຈົບ
ມຸສາວາທວັຄທີ ໑ ຈົບ

ເຊີງອັນຖະ :
໑ ຄື ໃຊ້ໃຫ້ຜູ້ອື່ນເຮັດດ້ວຍກ່າວວ່າ ທ່ານຈົ່ງຮູ້ຫລຸມເສົາ ຈົ່ງຮູ້ດິນຫນຽວມາກ ຈົ່ງຮູ້ດິນຫນຽວຜສົມແກລບ ທ່ານຈົ່ງໃຫ້ດິນຫນຽວມາກ ຈົ່ງໃຫ້ດິນຫນຽວຜສົມແກລບ ທ່ານຈົ່ງນຳດິນຫນຽວມາ ຈົ່ງນຳຝຸ່ນມາ ຕ້ອງການດິນຫນຽວຕ້ອງການຝຸ່ນ ທ່ານຈົ່ງທຳຫລຸມເສົານີ້ໃຫ້ເປັນກັປປິຍະ ຈົ່ງທຳດິນຫນຽວນີ້ໃຫ້ເປັນກັປປິຍະ ຈົ່ງທຳຝຸ່ນນີ້ໃຫ້ເປັນກັປປິຍະຄືໃຫ້ເປັນຂອງທີ່ຄວຣໃຊ້ (ວິ. ອ. ໒/໘໘/໒໘໑)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຑ໌] ໑. ມຸສາວາທວັຄ ຣວມສິກຂາບົທທີ່ມີໃນມຸສາວາທວັຄ

ຣວມສິກຂາບົທທີ່ມີໃນມຸສາວາທວັຄ
ມຸສາວາທວັຄມີ ໑໐ ສິກຂາບົທ ຄື
໑. ມຸສາວາທສິກຂາບົທ ວ່າດ້ວຍການກ່າວເທັຈ
໒. ໂອມສວາທສິກຂາບົທ ວ່າດ້ວຍການກ່າວສຽດສີ
໓. ເປສຸຢສິກຂາບົທ ວ່າດ້ວຍການກ່າວສໍ່ສຽດ
໔. ປທໂສທັມມສິກຂາບົທ ວ່າດ້ວຍການໃຫ້ກ່າວທັມເປັນບົທໆ
໕. ສຫເສຍຍສິກຂາບົທ ວ່າດ້ວຍການນອນຮ່ວມກັນ
໖. ທຸຕິຍສຫເສຍຍສິກຂາບົທ ວ່າດ້ວຍການນອນຮ່ວມກັນຂໍ້ທີ ໒
໗. ທັມມເທສນາສິກຂາບົທ ວ່າດ້ວຍການສະແດງທັມ
໘. ກູຕາໂຣຈນສິກຂາບົທ ວ່າດ້ວຍການບອກອຸຕຕຣິມນຸສສທັມທີ່ມີຈິງ

໙. ທຸສຸກຸລລາໂຣຈນສິກຂາບົທ ວ່າດ້ວຍການບອກອາບັຕິຊົ່ວຫຍາບ
໑໐. ປຖວີຂຕນສິກຂາບົທ ວ່າດ້ວຍການການຂຸດດິນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ກູຕຄາມວັຄ ໑. ກູຕຄາມສິກຂາບົທ ນິທານ ວັຕຖຸ

໔. ກູຕຄາມວັຄ

ໝວດວ່າດ້ວຍກູຕຄາມ

໑. ກູຕຄາມສິກຂາບົທ

ວ່າດ້ວຍການພາກກູຕຄາມ

ເຣື້ອງກິກຂຸຊາວເມືອງອາລະວີ

[໗໙] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ທີ່ ອັຄຄາຣວເຈດີຍ໌ ເຂດເມືອງອາລະວີ ຄັ້ງນັ້ນ ພວກກິກຂຸຊາວເມືອງອາລະວີທຳການກໍ່ສ້າງ ຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ ກິກຂຸຊາວເມືອງອາລະວີຮູບນຶ່ງກຳລັງຕັດຕົ້ນໄມ້ ເທວດາຜູ້ສິງຢູ່ທີ່ຕົ້ນໄມ້ໄດ້ກ່າວກັບກິກຂຸນັ້ນວ່າ “ທ່ານຜູ້ຈະເຣີນ ທ່ານຕ້ອງການຈະສ້າງທີ່ຢູ່ຂອງທ່ານກໍໂປຣດຢ່າຕັດຕົ້ນໄມ້ທີ່ເປັນທີ່ຢູ່ຂອງຂ້າພະເຈົ້າເລີຍ” ກິກຂຸນັ້ນບໍ່ເຊື່ອຟັງຍັງຂືນຕັດ ໄດ້ຟັນຖືກແຂນລູກຂອງເທວດາ ເທື່ອນັ້ນ ເທວດາໄດ້ມີຄວາມຄິດວ່າ “ເຮົາຂ້າກິກຂຸນີ້ໃນທີ່ນີ້ຈະດີບໍ່” ແຕ່ແລ້ວໄດ້ມີຄວາມຄິດວ່າ “ການທີ່ເຮົາຈະຂ້າກິກຂຸໃນທີ່ນີ້ ບໍ່ສົມຄວນ ທາງທີ່ດີ ເຮົາຄວນນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄ” ຈຶ່ງໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລເຣື້ອງນັ້ນໃຫ້ຊົງຊາບ ພຣະຜູ້ມີພຣະກາຄປະທານສາລຸການວ່າ “ເທວດາ ດີແລ້ວ ດີນັກຫນາທີ່ທ່ານບໍ່ຂ້າກິກຂຸ ຖ້າທ່ານຂ້າກິກຂຸໃນວັນນີ້ ທ່ານຈະປະສົບບາປມາກ ເທວດາ ໄປເຖີດ ທ່ານຈົ່ງໄປຢູ່ທີ່ຕົ້ນໄມ້ວ່າງໃນທີ່ພຸ້ນ” ພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ລະ ພຣະສມຕະເຊື້ອສາຍສາກຍບຸຕຣ ບຽດບຽນຊີວະຊຶ່ງມີອິນທຣີຍ໌ດຽວ” ພວກກິກຂຸໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກກິກຂຸຊາວເມືອງອາລະວີຈຶ່ງຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ລະ” ຄັນ

ພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຊາວເມືອງອາລະວີໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຊາວເມືອງອາລະວີວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານຕັດແດ່ ໃຊ້ໃຫ້ຕັດແດ່ ຊຶ່ງຕົ້ນໄມ້ແມ່ນແທ້ບໍ" ພວກພິກຂຸຊາວເມືອງອາລະວີທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຊທັງຫລາຍ ຈັ່ງໃດພວກທ່ານຈຶ່ງຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ລະ ໂມຄບຸຣຸຊທັງຫລາຍ ເພາະພວກຊາວບ້ານມີຄວາມສຳຄັນວ່າຕົ້ນໄມ້ມີຊີວະ ໂມຄບຸຣຸຊທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒໐] ພິກຂຸຕ້ອງອາບັຕິປາຈິຕຕີຍ໌ ເພາະພາກພູຕຄາມ໑

ເຣື່ອງພິກຂຸຊາວເມືອງອາລະວີ ຈົບ

ສິກຂາບົທວິພັງຄ໌

[໒໑] ທີ່ຊື່ວ່າ ພູຕຄາມ ໄດ້ແກ່ ພືຊພັນຄ໌ ໕ ຊນິດ ຄື (໑) ພືຊພັນຄ໌ເກີດຈາກເຫງົ້າ (໒) ພືຊພັນຄ໌ເກີດຈາກລຳຕົ້ນ (໓) ພືຊພັນຄ໌ເກີດຈາກຕາ (໔) ພືຊພັນຄ໌ເກີດຈາກຍອດ (໕) ພືຊພັນຄ໌ເກີດຈາກເມັດ

ເຊີງອັນຣະ :

໑ ພູຕຄາມ ກຸ່ມແຫ່ງພືຊພັນຄ໌ທີ່ຈະງອກໄດ້ ທີ່ຈະເຣີນເຕີບໃຫຍ່ແລ້ວ ເປັນຊື່ຮຽກຕົ້ນໄມ້ຢືນຕົ້ນແລະຫຍ້າຂຽວສົດ (ວິ. ອ. ໒/໒໐-໒໑/໔໗໓-໔໗໔)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ກູຕຄາມວັຄ ໑. ກູຕຄາມສິກຂາບົທ ບົທກາຊນີຍ໌

ທີ່ຊື່ວ່າ ພືຊພັນສ໌ເກີດຈາກເຫງົ້າ ໄດ້ແກ່ ຂມິ້ນ ຂີງ ວ່ານນ້ຳ ວ່ານເປຣາະ ອຸຕພິດ ຂ່າ ແຝກ ແຫ້ວຫມູ ຫລືພືຊພັນສ໌ຢ່າງອື່ນຊຶ່ງເກີດທີ່ເຫງົ້າ ງອກທີ່ເຫງົ້າ ນີ້ຊື່ວ່າພືຊພັນສ໌ເກີດຈາກເຫງົ້າ
ທີ່ຊື່ວ່າ ພືຊພັນສ໌ເກີດຈາກລຳຕົ້ນ ໄດ້ແກ່ ຕົ້ນໂພ ຕົ້ນໄທຣ ຕົ້ນດີປລີ ຕົ້ນມະເດື່ອ ຕົ້ນຕ່າຮ້າງ ຕົ້ນມະຂວິດ ຫລືພືຊພັນສ໌ຢ່າງອື່ນຊຶ່ງເກີດທີ່ລຳຕົ້ນ ງອກທີ່ລຳຕົ້ນ ນີ້ຊື່ວ່າ ພືຊພັນສ໌ເກີດຈາກລຳຕົ້ນ
ທີ່ຊື່ວ່າ ພືຊພັນສ໌ເກີດຈາກຕາ ໄດ້ແກ່ ອ້ອຍ ໄມ້ໄຜ່ ໄມ້ອໍ້ ຫລືພືຊພັນສ໌ຢ່າງອື່ນຊຶ່ງເກີດທີ່ຕາ ງອກທີ່ຕາ ນີ້ຊື່ວ່າພືຊພັນສ໌ເກີດຈາກຕາ
ທີ່ຊື່ວ່າ ພືຊພັນສ໌ເກີດຈາກຍອດ ໄດ້ແກ່ ຜັກບົ້ງລ້ອມ ຜັກອີຕູ່ ເຄືອຢານາງ ຫລືພືຊພັນສ໌ຢ່າງອື່ນຊຶ່ງເກີດທີ່ຍອດ ງອກທີ່ຍອດ ນີ້ຊື່ວ່າພືຊພັນສ໌ເກີດຈາກຍອດ
ທີ່ຊື່ວ່າ ພືຊພັນສ໌ເກີດຈາກເມັດ ໄດ້ແກ່ ເຂົ້າ ຖົ່ວ ງາ ຫລືພືຊພັນສ໌ຢ່າງອື່ນຊຶ່ງເກີດທີ່ເມັດ ງອກທີ່ເມັດ ນີ້ຊື່ວ່າພືຊພັນສ໌ເກີດຈາກເມັດ

ບົທກາຊນີຍ໌

[໙໔] ພືຊພັນສ໌ ກິກຂຸສຳຄັນວ່າເປັນພືຊພັນສ໌ ຕັດ ຫລືໃຊ້ໃຫ້ຕັດ ທຳລາຍ ຫລືໃຊ້ໃຫ້ທຳລາຍ ຕົ້ມ ຫລືໃຊ້ໃຫ້ຕົ້ມ ຕ້ອງອາບັຕິປາຈິຕຕີຍ໌
ພືຊພັນສ໌ ກິກຂຸບໍ່ແນ່ໃຈ ຕັດ ຫລືໃຊ້ໃຫ້ຕັດ ທຳລາຍ ຫລືໃຊ້ໃຫ້ທຳລາຍ ຕົ້ມ ຫລືໃຊ້ໃຫ້ຕົ້ມ ຕ້ອງອາບັຕິທຸກກະຏ
ພືຊພັນສ໌ ກິກຂຸສຳຄັນວ່າບໍ່ແມ່ນພືຊພັນສ໌ ຕັດ ຫລືໃຊ້ໃຫ້ຕັດ ທຳລາຍ ຫລືໃຊ້ໃຫ້ທຳລາຍ ຕົ້ມ ຫລືໃຊ້ໃຫ້ຕົ້ມ ບໍ່ຕ້ອງອາບັຕິ
ບໍ່ແມ່ນພືຊພັນສ໌ ກິກຂຸສຳຄັນວ່າເປັນພືຊພັນສ໌ ຕ້ອງອາບັຕິທຸກກະຏ
ບໍ່ແມ່ນພືຊພັນສ໌ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະຏ
ບໍ່ແມ່ນພືຊພັນສ໌ ກິກຂຸສຳຄັນວ່າບໍ່ແມ່ນພືຊພັນສ໌ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ກູຕຄາມວັຄ ໑. ກູຕຄາມສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໙໓] ໑. ພິກສຸກ່າວວ່າ "ທ່ານຈົ່ງຮູ້ ຈົ່ງໃຫ້ ຈົ່ງນໍາສິ່ງນີ້ມາ ເຮົາຕ້ອງການສິ່ງນີ້ ທ່ານຈົ່ງທໍາສິ່ງນີ້ໃຫ້ເປັນກັປປິຍະ"໑

໒. ພິກສຸບໍ່ຈົງໃຈ

໓. ພິກສຸບໍ່ມີສະຕິ

໔. ພິກສຸຜູ້ບໍ່ຮູ້

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ພູຕຄາມສິກຂາບົທທີ ໑ ຈົບ

ເຊີງອັນຖະ :

໑ ຄື ໃຊ້ໃຫ້ຜູ້ອື່ນເຮັດດ້ວຍກ່າວວ່າ ທ່ານຈົ່ງຮູ້ພືຊພັນຊ໌ເກີດຈາກເຫງົ້ານີ້ ທ່ານຈົ່ງໃຫ້ເຫງົ້າ ຫລືໃບໄມ້ນີ້ ທ່ານຈົ່ງນໍາຕົ້ນໄມ້ຫລືເຄືອໄມ້ນີ້ມາ ຕ້ອງການດອກໄມ້ ຜົລໄມ້ ຫລືໃບໄມ້ນີ້ ທ່ານຈົ່ງທໍາຕົ້ນໄມ້ ເຄືອໄມ້ ຫລືຜົລໄມ້ນີ້ໃຫ້ເປັນກັປປິຍະ ຄືໃຫ້ເປັນຂອງທີ່ຄວນໃຊ້ (ວິ. ອ. ໒/໙໓/໒໙໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓຑ໌] ໒. ພູຕຄາມວັຄ ໒. ອັຍຍວາທກສິກຂາບົທ ນິທານວັຕຖຸ

໒. ພູຕຄາມວັຄ

໒. ອັຍຍວາທກສິກຂາບົທ

ວ່າດ້ວຍການກ່າວປິດບັງ

ເຣື້ອງພຣະຈັນນະ

[໙໔] ສມັຍນັ້ນ ພຣະຜູ້ມີພຣະການພຸທສເຈົ້າປະທັບຢູ່ ໓ະ ໂພສິຕາຣາມ ເຂຕກຸງໂກສັມພີ ສມັຍນັ້ນ ທ່ານພຣະຈັນນະປະພຶດບໍ່ເໝາະສົມ ຖືກພຣະວິນັຍລຣໄຕ່ສວນອາບັຕິທ່າມກາງສົງຆ໌ ກັບນໍາ

ເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ "ໃຜຕ້ອງຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ຕຳໜິ ປະນາມໄພນທະນາວ່າ "ຈັ່ງໃດທ່ານພຣະຈັນນະຖືກພຣະວິນັຍລຣໄຕ່ສວນອາບັຕິທ່າມກາງສົງຄ໌ ກັບນຳເອົາເຣື້ອງອື່ນມາກ່າວກົບເກື່ອນອີກເຣື້ອງນຶ່ງວ່າ "ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ" ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະຈັນນະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງສອບຖາມພຣະຈັນນະ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມທ່ານພຣະຈັນນະວ່າ "ຈັນນະ ຊາບວ່າເມື່ອທ່ານຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ 'ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ' ແມ່ນແທ້ບໍ່" ທ່ານພຣະຈັນນະທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານ ເມື່ອຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ ໃຜຕ້ອງ ຯລຯ ພວກທ່ານກ່າວເຣື້ອງຫຍັງລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ຄັນຊົງຕຳໜິແລ້ວໄດ້ຊົງສະແດງລັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ສົງຄ໌ຈົ່ງລົງອັຍຍອາຫກກັມ໑ ແກ່ພິກສຸຈັນນະ ພິກສຸທັງຫລາຍ ສົງຄ໌ເພິ່ງລົງອັຍຍອາຫກກັມຢ່າງນີ້ ພິກສຸຜູ້ສລາດສາມາດເພິ່ງປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

ກັມວາຈາ

[໙໕] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ຈັນນະນີ້ຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງ ຖ້າສົງຄ໌ພ້ອມກັນແລ້ວ ເພິ່ງລົງອັຍຍອາຫກກັມແກ່ພິກສຸຊື່ຈັນນະ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ຈັນນະນີ້ຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງ ສົງຄ໌ຈຶ່ງລົງອັຍຍອາຫກກັມແກ່ພິກສຸຊື່ຈັນນະ ທ່ານຮູບໃດເຫັນດ້ວຍກັບການລົງອັຍຍອາຫກກັມແກ່ພິກສຸຊື່ຈັນນະ ທ່ານຮູບນັ້ນເພິ່ງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິ່ງທັກທ້ວງ ອັຍຍອາຫກກັມສົງຄ໌ລົງແກ່ພິກສຸຊື່ຈັນນະແລ້ວ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຊົງບັນຍັດສິກຂາບົທ

ເທື່ອນັ້ນ ຄັນພຣະຜູ້ມີພຣະກາຄຊົງຕຳຫນິທ່ານພຣະຈັນນະໂດຍປະການຕ່າງໆແລ້ວໄດ້ຕຣັສໂທສ ແຫ່ງຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ເຊີງອັນຖະ :

໑ ຄຳວ່າ "ອັຍຍອາຫກກັມ" ໄດ້ແກ່ ການລົງໂທສກິກສຸທີ່ແກ້ງຍົກເຣື້ອງອື່ນໆມາເວົ້າປົດບັງຂໍ້ຫາ ທີ່ຖືກໂຈທບໍ່ໃຫ້ການຕາມຕຣງເມື່ອຖືກສົງຜ໌ສອບສວນ ເຊັ່ນ ຖືກພຣະວິນັຍທຣຖາມວ່າ "ທ່ານ ຕ້ອງອາບັຕິນີ້ຫລື" ກໍກ່າວວ່າ "ຜູ້ຂ້າໄປກຸງປາຕລີບຸຕຣມາ" ເມື່ອພຣະວິນັຍທຣກ່າວອີກວ່າ "ບໍ່ໄດ້ ຖາມທ່ານເຣື້ອງໄປກຸງປາຕລີບຸຕຣ ແຕ່ຖາມເຣື້ອງອາບັຕິ" ກໍກ່າວວ່າ "ຕໍ່ຈາກກຸງປາຕລີບຸຕຣ ຜູ້ຂ້າກໍ ໄປກຸງຣາຊຄຶຫ໌" (ວິ. ອ. ໒/໙໔/໒໙໓, ສາຣຕຖ. ຕີກາ ໓/໙໔-໙໗/໒໘-໒໙)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັດທ໌] ໔. ກູຕຄາມວັຄ ໒. ອັຍຍອາຫກສິກຂາບົທ ພຣະບັນຍັດ

ພຣະບັນຍັດ

ກິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປົດບັງ

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກສຸທັງຫລາຍຢ່າງນີ້

[໙໖] ສມັຍນັ້ນ ທ່ານພຣະຈັນນະຖືກໄຕ່ສວນອາບັຕິທ່າມກາງສົງຜ໌ ຄິດວ່າ "ເມື່ອເຮົານຳເອົາເຣື້ອງ ອື່ນມາກ່າວປົດບັງອີກເຣື້ອງນຶ່ງຕ້ອງອາບັຕິ" ຈຶ່ງນິ່ງເສີຍ ທຳສົງຜ໌ໃຫ້ລຳບາກ ບັນດາກິກສຸຜູ້ມັກ ນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະຈັນນະເມື່ອຖືກໄຕ່ສວນອາບັຕິ ທ່າມກາງສົງຜ໌ ຈຶ່ງນິ່ງເສັຽ ທຳສົງຜ໌ໃຫ້ລຳບາກລະ" ຄັນກິກສຸເຫລົ່ານັ້ນຕຳຫນິທ່ານພຣະຈັນນະ ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງສອບຖາມພຣະຈັນນະ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສອບຖາມທ່ານພຣະຈັນນະວ່າ "ຈັນນະ ຊາບວ່າທ່ານເມື່ອຖືກໄຕ່ ສວນອາບັຕິທ່າມກາງສົງຜ໌ ກັບນິ່ງເສີຍ ທຳສົງຜ໌ໃຫ້ລຳບາກແມ່ນແທ້ບໍ" ທ່ານພຣະຈັນນະທູລຮັບ ວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສ ຈັ່ງ

ໃດທ່ານເມື່ອຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ຈຶ່ງນິ່ງ ທຳສົງຄ໌ໃຫ້ລຳບາກລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ຄັນຊົງຕຳໜິແລ້ວ ໄດ້ຊົງສະແດງຂັມມີກຖາຣັບສັ່ງກັບພິກສຸທັງຫລາຍວ່າ ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ສົງຄ໌ຈົ່ງລົງວິເຫສກັກມ໑ ແກ່ພິກສຸຈັນນະ ພິກສຸທັງຫລາຍ ສົງຄ໌ເພິ່ງລົງວິເຫສກັກມຢ່າງນີ້ ພິກສຸຜູ້ສລາດສາມາດເພິ່ງປະກາດໃຫ້ສົງຄ໌ຊາບດ້ວຍຍັດຕິທຸຕິຍກັມວາຈາວ່າ

ເຊີງອັນຖະ :

໑ ຄຳວ່າ "ວິເຫສກກັມ" ໄດ້ແກ່ ການລົງໂທສພິກສຸຜູ້ທຳສົງຄ໌ໃຫ້ລຳບາກ ຄືພິກສຸປະພຶດບໍ່ສົມຄວຣ ສົງຄ໌ຮຽກຕົວມາຖາມກັບນິ່ງເສີຍບໍ່ຕອບ ສົງຄ໌ຈຶ່ງສວດປະກາດການທີ່ທ່ານທຳຕົວເຊັ່ນນັ້ນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຄ໌] ໒. ພູຕຄາມວັຄ ໒. ອັຍຢວາຫກສິກຂາບົທ ສິກຂາບົທວິກັງຄ໌

ກັມວາຈາ

[ດກ] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ຈັນນະນີ້ຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ໄດ້ນິ່ງເສີຍ ທຳສົງຄ໌ໃຫ້ລຳບາກ ຖ້າສົງຄ໌ພ້ອມກັນແລ້ວເພິ່ງລົງວິເຫສກກັມແກ່ພິກສຸຊື່ຈັນນະ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ຈັນນະນີ້ຖືກໄຕ່ສວນອາບັຕິທ່າມກາງສົງຄ໌ ໄດ້ນິ່ງເສີຍ ທຳສົງຄ໌ໃຫ້ລຳບາກ ສົງຄ໌ຈຶ່ງລົງວິເຫສກກັມແກ່ພິກສຸຊື່ຈັນນະ ທ່ານຮູບໃດເຫັນດ້ວຍກັບການລົງວິເຫສກກັມແກ່ພິກສຸຊື່ຈັນນະ ທ່ານຮູບນັ້ນເພິ່ງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິ່ງທັກທ້ວງວິເຫສກກັມສົງຄ໌ລົງແກ່ພິກສຸຊື່ຈັນນະແລ້ວ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຊົງບັນຍັດສິກຂາບົທ

ເທື່ອນັ້ນ ຄັນພຣະຜູ້ມີພຣະກາຄຊົງຕຳໜິທ່ານພຣະຈັນນະໂດຍປະການຕ່າງໆແລ້ວໄດ້ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໙໗] ກິກຸຕ້ອງອາບັດປາຈິດຕີຍ໌ ເພາະນຳເອົາເລື້ອງອື່ນມາກ່າວປິດບັງເພາະທຳສົງຊ໌ໃຫ້ລຳບາກ

ເລື້ອງພຣະຈັນນະ ຈົບ

ສິກຂາບົທວິກັງຄ໌

[໙໙] ທີ່ຊື່ວ່າ ນຳເອົາເລື້ອງອື່ນມາກ່າວປິດບັງ ຄື ກິກຸເມື່ອຖືກໄຕ່ສວນວັຕຖຸ໑ ຫລືອາບັດທ່ານກາງສົງຊ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເລື້ອງນັ້ນ ກັບນຳເອົາເລື້ອງອື່ນມາກ່າວປິດບັງອີກເລື້ອງນຶ່ງວ່າ "ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເລື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເລື້ອງຫຍັງ" ນີ້ຊື່ວ່ານຳເອົາເລື້ອງອື່ນມາກ່າວປິດບັງ

ທີ່ຊື່ວ່າ ທຳສົງຊ໌ໃຫ້ລຳບາກ ຄື ກິກຸເມື່ອຖືກໄຕ່ສວນວັຕຖຸຫລືອາບັດທ່ານກາງສົງຊ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເລື້ອງນັ້ນ ຈຶ່ງນິ່ງເສີຍ ນີ້ຊື່ວ່າທຳສົງຊ໌ໃຫ້ລຳບາກ

ເຊີງອັນຖະ :

໑ ຄຳວ່າ "ວັຕຖຸ" ໃນທີ່ນີ້ຫມາຍເຖິງເລື້ອງທີ່ຖືກສົງຊ໌ນຳມາສອບສວນ ກໍຣະນີທີ່ສົງຊ໌ຍົກຂຶ້ນມາສອບສວນ

ບົທກາຊນີຍ໌

[໑໐໐] ເມື່ອສົງຊ໌ຍັງບໍ່ລົງອັຍຢອາຫກກັມ ກິກຸຖືກໄຕ່ສວນວັຕຖຸຫລືອາບັດທ່ານກາງສົງຊ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເລື້ອງນັ້ນ ກັບນຳເອົາເລື້ອງອື່ນມາກ່າວປິດບັງອີກເລື້ອງນຶ່ງວ່າ "ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເລື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເລື້ອງຫຍັງ" ຕ້ອງອາບັດທຸກກົດ

ເມື່ອສົງຊ໌ຍັງບໍ່ລົງວິເຫສກກັມ ກິກຸຖືກໄຕ່ສວນວັຕຖຸຫລືອາບັດທ່ານກາງສົງຊ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເລື້ອງນັ້ນ ຈຶ່ງນິ່ງເສີຍທຳສົງຊ໌ໃຫ້ລຳບາກ ຕ້ອງອາບັດທຸກກົດ

ເມື່ອສົງຊ໌ລົງອັຍຢອາຫກກັມ ກິກຸຖືກໄຕ່ສວນວັຕຖຸຫລືອາບັດທ່ານກາງສົງຊ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເລື້ອງນັ້ນ ກັບນຳເອົາເລື້ອງອື່ນມາກ່າວກົບເກື່ອນອີກເລື້ອງນຶ່ງວ່າ "ໃຜຕ້ອງ ຯລຯ ພວກທ່ານກ່າວເລື້ອງຫຍັງ" ຕ້ອງອາບັດປາຈິດຕີຍ໌ ເມື່ອສົງຊ໌ລົງວິເຫສກກັມ ກິກຸຖືກໄຕ່

ສອນວັຕຖຸຫລືອາບັຕິທ່າມກາງສົງຆ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເຣື້ອງນັ້ນ ຈຶ່ງນິ່ງເສັຍ ທຳສົງຆ໌ໃຫ້ລຳບາກ ຕ້ອງອາບັຕິປາຈິຕຕີຍ໌

ຕິກປາຈິຕຕີຍ໌

[໑໐໑] ກັມທີ່ທຳຖືກຕ້ອງ໑ ພິກຂຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ ເພາະທຳສົງຆ໌ໃຫ້ລຳບາກ

ເຊີງອັນຖະ :

໑ ໝາຍເຖິງອັຍຍອາຫາກກັມແລະອິເທາສກກັມ (ວິ. ອ. ໒/໑໐໑/໒໙໔)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕາຫ໌] ໒. ກູຕຄາມວັຄ ໒. ອັຍຍອາຫາກສິກຂາບົທ

ອນາປັຕຕິວາຣ

ກັມທີ່ທຳຖືກຕ້ອງ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ ເພາະທຳສົງຆ໌ໃຫ້ລຳບາກ

ກັມທີ່ທຳຖືກຕ້ອງ ພິກຂຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ ເພາະທຳສົງຆ໌ໃຫ້ລຳບາກ

ຕິກທຸກກຸຍ

ກັມທີ່ທຳບໍ່ຖືກຕ້ອງ ພິກຂຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຸຍ

ກັມທີ່ທຳບໍ່ຖືກຕ້ອງ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຍ

ກັມທີ່ທຳບໍ່ຖືກຕ້ອງ ພິກຂຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຸຍ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໐໒] ໑. ພິກຂຸບໍ່ເຂົ້າໃຈຈຶ່ງຖາມ

໒. ພິກຂຸເປັນໄຂ້ໃຫ້ການບໍ່ໄດ້

໓. ພິກຂຸບໍ່ຍອມກ່າວເພາະຄິດວ່າ ສົງຆ໌ຈະມີຄວາມບາດໝາງກັນ ຜິດຖຽງກັນ ຂັດແຍ້ງກັນ ຫລືວິວາທກັນ

໔. ພິກຂຸບໍ່ຍອມກ່າວເພາະຄິດວ່າ ສົງຆ໌ຈັກແຕກແຍກ ຫລືສົງຆ໌ຈະແຕກແຫງ

໕. ກິກຊຸບໍ່ຍອມກ່າວເພາະຄິດວ່າ ສົງຄ໌ຈະເຮັດກັມທີ່ບໍ່ຖືກຕ້ອງ ຈະແຍກພວກກັນທຳ ຫລືຈະລົງໂທດກິກຊຸຜູ້ບໍ່ຄວຣລົງໂທດ

໖. ກິກຊຸວິກົລຈິຕ

໗. ກິກຊຸຕົ້ນບັນຍັດ

ວັຍປ່ວາຫາກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຖ໌] ໔. ກູຕຄາມວັຄ ໖. ອຸຊຸລາປນກສິກຂາບົທ ນິທານວັຕຖຸ

໔. ກູຕຄາມວັຄ

໖. ອຸຊຸລາປນກສິກຂາບົທ

ວ່າດ້ວຍການກ່າວໃຫ້ເພ່ງໂທສ

ເຣື້ອງພຣະທັພພມັລລບຸຕຣ

[໑໐໖] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະທັພພມັລລບຸຕຣຈັດແຈງເສນາສນະແລະແຈກກັຕຕາຫາຣສົງຄ໌ ສມັຍນັ້ນ ພຣະເມຕຕິຍະແລະພຣະກຸມມຊກະ໑ ເປັນພຣະບວຊໃຫມ່ ມີບຸນຫນ້ອຍ ເສນາສນະຂອງສົງຄ໌ຊັ້ນຕ່ຳ ກັຕຕາຫາຣກໍຊັ້ນຕ່ຳ ຕົກເຖິງທ່ານທັງສອງ ທ່ານເຫລົ່ານັ້ນຈຶ່ງກ່າວໃຫ້ກິກຊຸທັງຫລາຍເພ່ງໂທສ໔ ທ່ານພຣະທັພພມັລລບຸຕຣວ່າ "ພຣະທັພພມັລລບຸຕຣຈັດແຈງເສນາສນະຕາມຄວາມຮັກແພງກັນ໖ ແລະແຈກກັຕຕາຫາຣຕາມຄວາມຮັກແພງກັນ" ບັນດາກິກຊຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເມຕຕິຍະແລະພຣະກຸມມຊກະຈຶ່ງກ່າວໃຫ້ກິກຊຸທັງຫລາຍເພ່ງໂທສທ່ານພຣະທັພພມັລລບຸຕຣລະ" ຄັນກິກຊຸເຫລົ່ານັ້ນຕຳຫນິພຣະເມຕຕິຍະແລະພຣະກຸມມຊກະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະ

ເມຕຕິຍະແລະພຣະກຸມມຊກະວ່າ "ກິກບຸທັງຫລາຍ ຊາບວ່າ ພວກທ່ານກ່າວໃຫ້ກິກບຸທັງຫລາຍເພ່ງໂທບທັພພມັລລບຸຕຣ ແມ່ນແທ້ບໍ" ພຣະເມຕຕິຍະແລະພຣະກຸມມຊກະ ທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸບທັງຫລາຍ ຈັ່ງໃດພວກທ່ານຈຶ່ງກ່າວໃຫ້ກິກບຸທັງຫລາຍເພ່ງໂທບທັພພມັລລບຸຕຣລະ ໂມຄບຸຣຸບທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກບຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊິງອັນຖະ :

໑ ຢູ່ໃນກຸ່ມພຣະ ໖ ຮູບ ຊຶ່ງຮຽກວ່າ "ກິກບຸຈັພພັຄຄີຍ໌" ໄດ້ແກ່ (໑) ພຣະປັຕຖຸກະ (໒) ພຣະໂລຫິຕກະ (໓) ພຣະເມຕຕິຍະ (໔) ພຣະກຸມມຊກະ (໕) ພຣະອັສສຊິ (໖) ພຣະປຸນັພພສຸກະ (ມ. ມ. ອ ໑໗໕/໑໓໗)

໒ ກ່າວໃຫ້ຜູ້ອື່ນເພ່ງໂທບ ຄືກ່າວໃຫ້ກິກບຸທັງຫລາຍດູໝິ່ນພຣະທັພພມັລລບຸຕຣ ເບິ່ງດູພຣະທັພພມັລລບຸຕຣ ຢ່າງດູໝິ່ນ ຫລືກ່າວໃຫ້ຄິດໃນທາງບໍ່ດີໃນພຣະທັພພມັລລບຸຕຣ (ວິ. ອ. ໒/໑໐໓/໔໘໕)

໓ ຄືຈັດເສນາສນະທີ່ປາຕິຕເພື່ອເພື່ອນກິກບຸທີ່ຄົບຫາສນິທສນມກັບຕນ (ວິ. ອ. ໒/໑໐໓/໔໘໕)

ພຣະບັນຍັດ

ກິກບຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທບສິກຂາບົທນີ້ ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກບຸທັງຫລາຍຢ່າງນີ້

[໑໐໔] ສມັຍນັ້ນ ພຣະເມຕຕິຍະແລະພຣະກຸມມຊກະຄິດວ່າ ກິກບຸທັງຫລາຍເຊື່ອຟັງພຣະບັນຍັດວ່າພຣະຜູ້ມີພຣະກາຄຊົງຫ້າມກາຣກ່າວໃຫ້ຜູ້ອື່ນເພ່ງໂທບ ຈຶ່ງຈົ່ມວ່າທ່ານພຣະທັພພມັລລບຸຕຣໃກ້ໆກິກບຸທັງຫລາຍວ່າ "ພຣະທັພພມັລລບຸຕຣຈັດແຈງເສນາສນະຕາມຄວາມຮັກແພງກັນ ແລະແຈກກັຕຕາຫາຣຕາມຄວາມຮັກແພງກັນ" ບັນດາກິກບຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເມຕຕິຍະແລະພຣະກຸມມຊກະຈຶ່ງຈົ່ມວ່າທ່ານພຣະທັພພມັລລບຸຕຣລະ" ຄັນກິກບຸເຫລົ່ານັ້ນຕຳໜິພຣະເມຕຕິຍະແລະພຣະກຸມມຊກະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສອບຖາມພຣະເມຕຕິຍະແລະພຣະກຸມມຊກະວ່າ "ກິກຊຸທັງຫລາຍ ຊາບວ່າ ພວກທ່ານຈິ່ມວ່າທັພພມັລລບຸຕຣ ແມ່ນແທ້ບໍ່" ທ່ານທັງ ໔ ທູລຮັບວ່າ "ແມ່ນແທ້ພຣະ ພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທຣເຈົ້າຊົງຕຳຫນິວ່າ "ฯລฯ ໂມฆບຸຣຸຫທັງຫລາຍ ຈັ່ງໃດພວກ ທ່ານຈຶ່ງຈິ່ມວ່າທັພພມັລລບຸຕຣລະ ໂມฆບຸຣຸຫທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ฯລฯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະ ແດງດັ່ງນີ້

ພຣະອນຸບັນຍັດ

[໑໐໕] ກິກຊຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທຫ ເພາະຈິ່ມວ່າ

ເຣື້ອງພຣະທັພພມັລລບຸຕຣ ຈົບ

ສິກຂາບົທວິກັງຄ໌

[໑໐໖] ທີ່ຊື່ວ່າ ກ່າວໃຫ້ຜູ້ອື່ນເພ່ງໂທຫ ຄື ກິກຊຸຕ້ອງກາຣຈະເຮັດໃຫ້ເສັຽຊື່ ຕ້ອງກາຣຈະເຮັດ ໃຫ້ອັປຍົສ ຕ້ອງກາຣຈະເຮັດໃຫ້ເກີ້ເຂີນ ຈຶ່ງກ່າວໃຫ້ກິກຊຸທັງຫລາຍເພ່ງໂທຫ ຫລືຈິ່ມວ່າ ອຸປສັມບັນທີ່ສົງฆ໌ແຕ່ງຕັ້ງໃຫ້ເປັນເຈົ້າຫນ້າທີ່ຈັດແຈງເສນາສນະ ແຈກກັຕຕາຫາຣແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄ້ຽວຫລືແຈກຂອງເລັກນ້ອຍ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

ຕິກປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ໑ ກິກຊຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ ຜູ້ອື່ນເພ່ງໂທຫ ເພາະຈິ່ມວ່າ

ກັມທີ່ທຳຖືກຕ້ອງ ກິກຊຸບໍ່ແນ່ໃຈ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທຫ ເພາະຈິ່ມວ່າ

ກັມທີ່ທຳຖືກຕ້ອງ ກິກຊຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ ຜູ້ອື່ນເພ່ງໂທຫ ເພາະຈິ່ມວ່າ

ທຸກກຸຏ

ກິກຊຸກ່າວໃຫ້ຜູ້ອື່ນເພ່ງໂທຫຫລືຈິ່ມວ່າອນຸປສັມບັນ ຕ້ອງອາບັຕິທຸກກຸຏ

ເຊິ່ງອັນຖະ :

໑ ກັມ ຄືກາຣສົມມຸດກິກຂຸໃຫ້ທຳຫນ້າທີ່ເປັນຜູ້ຈັດແຈງເສນາສນະເປັນຕົ້ນ (ວິ. ອ. ໔/໑໐໓/ ໔໒໓)

ກິກຂຸຕ້ອງກາຣຈະເຮັດໃຫ້ເສັງຊື່ ຕ້ອງກາຣຈະເຮັດໃຫ້ອັປຍົສ ຕ້ອງກາຣຈະທຳອຸປສັມບັນທີ່ສົງຈ໌ບໍ່ ໄດ້ແຕ່ງຕັ້ງໃຫ້ເປັນເຈົ້າຫນ້າທີ່ຈັດແຈງເສນາສນະ ແຈກກັຕຕາຫາຣ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄ້ຽວ ຫລືແຈກຂອງເລັກນ້ອຍ ໃຫ້ເກີ້ເຂີນ ຈຶ່ງກ່າວໃຫ້ກິກຂຸທັງຫລາຍ ເພ່ງໂທษ ຫລືຈົ່ມວ່າອຸປສັມບັນຫລືອນຸປສັມບັນ ຕ້ອງອາບັຕິທຸກກຏ

ກິກຂຸຕ້ອງກາຣຈະເຮັດໃຫ້ເສັງຊື່ ຕ້ອງກາຣຈະເຮັດໃຫ້ອັປຍົສ ຕ້ອງກາຣຈະທຳອນຸປສັມບັນທີ່ສົງຈ໌ ແຕ່ງຕັ້ງກໍຕາມ ບໍ່ໄດ້ແຕ່ງຕັ້ງກໍຕາມ ໃຫ້ເປັນເຈົ້າຫນ້າທີ່ຈັດແຈງເສນາສນະ ແຈກກັຕຕາຫາຣ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄ້ຽວຫລືແຈກຂອງເລັກນ້ອຍ ໃຫ້ເກີ້ເຂີນ ຈຶ່ງກ່າວໃຫ້ກິກຂຸ ທັງຫລາຍເພ່ງໂທษຫລືຈົ່ມວ່າອຸປສັມບັນຫລືອນຸປສັມບັນ ຕ້ອງອາບັຕິທຸກກຏ

ກັມທີ່ທຳບໍ່ຖືກຕ້ອງ ກິກຂຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຏ

ກັມທີ່ທຳບໍ່ຖືກຕ້ອງ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຏ

ກັມທີ່ທຳບໍ່ຖືກຕ້ອງ ກິກຂຸສຳຄັນວ່າເປັນກັມທີ່ທຳບໍ່ຖືກກຕ້ອງ ຕ້ອງອາບັຕິທຸກກຏ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໐໗] ໑. ກິກຂຸຜູ້ກ່າວໃຫ້ຜູ້ອື່ນເພ່ງໂທษ ຫລືຈົ່ມວ່າກິກຂຸຜູ້ມັກເຮັດດ້ວຍຄວາມຊອບດ້ວຍຄວາມ ຊັງ ດ້ວຍຄວາມຫລົງ ດ້ວຍຄວາມຢ້ານ

໔. ກິກຂຸວິກົລຈິຕ

໖. ກິກຂຸຕົ້ນບັນຍັດ

ອຸຊຸລາປນກສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຟ໌] ໒. ກູຕຄາມວັຄ ໔. ປກຸມເສນາສນສິກຂາບົທ ນິທານວັຕຖຸ

໔. ກູຕຄານວັຄ

໔. ປຖມເສນາສນສິກຂາບົທ
ວ່າດ້ວຍເສນາສນະຂໍ້ທີ ໑

ເຣື້ອງກິກຂຸຫລາຍຮູບ
[໑໐໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຓ ຑິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ໃນຣະດູຫນາວ ກິກຂຸທັງຫລາຍຈັດຕັ້ງເສນາສນະໃນທີ່ກາງແຈ້ງຜີ່ງກາຍກັນ ຄັນເຂົາບອກເວລາກັຕຕາຫາຣ ເມື່ອຈະຈາກໄປບໍ່ເກັບ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ບອກມອບຫມາຍພາກັນຈາກໄປແລ້ວ ເສນາສນະຈຶ່ງຖືກນ້ຳຫມອກແລະຝຸ່ນຕົກຮົດ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດກິກຂຸທັງຫລາຍຈັດຕັ້ງເສນາສນະໃນທີ່ກາງແຈ້ງ ເມື່ອຈະຈາກໄປຈຶ່ງບໍ່ເກັບ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ບອກມອບຫມາຍພາກັນຈາກໄປລະ ເສນາສນະຖືກນ້ຳຫມອກແລະຝຸ່ນຕົກຮ່ຳ" ຄັນກິກຂຸທັງຫລາຍຕຳຫນິກິກຂຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ຊາບວ່າ ກິກຂຸທັງຫລາຍຈັດຕັ້ງເສນາສນະໃນທີ່ກາງແຈ້ງ ເມື່ອຈະຈາກໄປບໍ່ເກັບ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ບອກມອບຫມາຍພາກັນຈາກໄປ ເສນາສນະຖືກນ້ຳຫມອກແລະຝຸ່ນຕົກຮົດ ແມ່ນແທ້ບໍ" ກິກຂຸທັງຫລາຍທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ກິກຂຸທັງຫລາຍ ຈັ່ງໃດໂມຄບຸຣຸສເຫລົ່ານັ້ນ ຈັດຕັ້ງເສນາສນະໄວ້ໃນທີ່ກາງແຈ້ງແລ້ວ ເມື່ອຈະຈາກໄປ ຈຶ່ງບໍ່ເກັບເອງ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປ ຈົນເສນາສນະຖືກນ້ຳຫມອກແລະຝຸ່ນຕົກຮ່ຳລະ ກິກຂຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ
[໑໐໘] ກໍ ກິກຂຸໃດວາງໄວ້ ຫລືໃຊ້ໃຫ້ວາງໄວ້ຊຶ່ງເສນາສນະ ຄື ຕຽງ ຕັ່ງ ເສື່ອ ຫລືຕັ່ງຂອງສົງຄ໌ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກ

ມອບໝາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ເຣື້ອງກິກຂຸຫລາຍຮູບ ຈົບ

ຊົງອນຸຍາຕໃຫ້ເກັບເສນາສນະ

[໑໑໐] ສມັຍນັ້ນ ກິກຂຸທັງຫລາຍຢູ່ໃນທີ່ກາງແຈ້ງ ຮີບເກັບເສນາສນະກ່ອນເວລາອັນສົມຄວຣ ພຣະຜູ້ມີພຣະກາຄທອດພຣະເນຕຣເຫັນກິກຂຸເຫລົ່ານັ້ນຮີບເກັບເສນາສນະກ່ອນເວລາອັນສົມຄວຣ ຄັນແລ້ວຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກຂຸທັງຫລາຍວ່າ “ກິກຂຸທັງຫລາຍ ເຮົາອນຸຍາຕໃຫ້ເກັບເສນາສນະໄວ້ໃນມຕຫປ ເຫງົ້າໄມ້ ຫລືໃນທີ່ຊຶ່ງກາຫລືເຫຍີ່ຍວຈະບໍ່ຖ່າຍມູລຮົດໄດ້ຕລອດ ໘ ເດືອນທີ່ບໍ່ແມ່ນຣະດູຝົນ”

ສິກຂາບົທວິກັງຄ໌

[໑໑໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກຂຸ ມີອລິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມໝາຍນີ້
ທີ່ຊື່ວ່າ ຂອງສົງຄ໌ ໄດ້ແກ່ ຂອງທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຄ໌
ທີ່ຊື່ວ່າ ຕຽງ ໄດ້ແກ່ ຕຽງ ໔ ຊນິດ ຄື (໑) ຕຽງມີແມ່ແຄຣ່ສອດເຂົ້າໃນຂາ (໒) ຕຽງມີແຄຣ່ຕິດກັບຂາ (໓) ຕຽງມີຂາດັ່ງກ້າມປູ (໔) ຕຽງມີຂາຈດແມ່ແຄຣ່
ທີ່ຊື່ວ່າ ຕັ່ງ ໄດ້ແກ່ຕັ່ງ ໔ ຊນິດ ຄື (໑) ຕັ່ງມີແມ່ແຄຣ່ສອດເຂົ້າໃນຂາ (໒) ຕັ່ງມີແມ່ແຄຣ່ຕິດກັບຂາ (໓) ຕັ່ງມີຂາດັ່ງກ້າມປູ (໔) ຕັ່ງມີຂາຈດແມ່ແຄຣ່

ທີ່ຊື່ວ່າ ເສື່ອ ໄດ້ແກ່ ເສື່ອ ໕ ຊນິດ ຄື (໑) ເສື່ອໜັງສັຕວ໌ (໒) ເສື່ອເສດຜ້າ (໓) ເສື່ອເປືອກໄມ້ (໔) ເສື່ອຫຍ້າ (໕) ເສື່ອໃບໄມ້
ທີ່ຊື່ວ່າ ຕັ່ງ ໄດ້ແກ່ ຕັ່ງທີ່ເຂົາຖັກພື້ນສຳລັບນັ່ງພາຍໃນ ເຮັດດ້ວຍເປືອກໄມ້ກໍມີ ເຮັດດ້ວຍຫຍ້າແຝກກໍມີ ເຮັດດ້ວຍຫຍ້າມຸງກະຕ່າຍກໍມີ ເຮັດດ້ວຍຫຍ້າປ້ອງກໍມີ
ຄຳວ່າ ວາງໄວ້ ຄື ວາງໄວ້ດ້ວຍຕົນເອງ
ຄຳວ່າ ໃຊ້ໃຫ້ວາງໄວ້ ຄື ໃຊ້ໃຫ້ຜູ້ອື່ນໃຫ້ວາງໄວ້ ກິກຂຸໃຊ້ອນຸປສັມບັນໃຫ້ວາງໄວ້ ເປັນກາຣະ

ຂອງກິກຸນັ້ນ ໃຊ້ອຸປສັມບັນໃຫ້ອາງໄວ້ ເປັນການະຂອງຜູ້ອາງໄວ້
ຄໍາວ່າ ເມື່ອຈະຈາກໄປບໍ່ເກັບ. . . ເສນາສນະນັ້ນ ຄື ບໍ່ເກັບດ້ວຍຕົນເອງ
ຄໍາວ່າ ບໍ່ໃຊ້ໃຫ້ເກັບ ຄື ບໍ່ໃຊ້ໃຫ້ຜູ້ອື່ນເກັບ
ຄໍາວ່າ ຫລືບໍ່ບອກມອບຫມາຍ ໄປເສັຽ ຄວາມວ່າ ກິກຸບໍ່ບອກມອບຫມາຍ
ກິກຸ ສາມເນຣຫລືຄົນວັດ ຍ່າງລ່ວງເລຫຸບາຕ໑ ຂອງບຸຣຸຫມີກໍາລັງປານກາງໄປ ຕ້ອງອາບັຕິປາຈິຕຕີຍ໌

ບົທການຸນີຍ໌

ຕິກປາຈິຕຕີຍ໌

[໑໑໔] ເສນາສນະຂອງສົງຄ໌ ກິກຸສໍາຄັນວ່າເປັນຂອງສົງຄ໌ ອາງໄວ້ຫລືໃຊ້ໃຫ້ອາງໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌
ເສນາສນະຂອງສົງຄ໌ ກິກຸບໍ່ແນ່ໃຈ ອາງໄວ້ ຫລືໃຊ້ໃຫ້ອາງໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ຄໍາວ່າ "ເລຫຸບາຕ" ໄດ້ແກ່ ຣະຍະໂຍນຫລືດຶກກ້ອນດິນໄປຕກ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຄ໌] ໔. ກູຕຄາມວັຄ ໔. ປກຸມເສນາສນສິກຂາບົທ ອນາປັຕຕິວາຣ

ເສນາສນະຂອງສົງຄ໌ ກິກຸສໍາຄັນວ່າເປັນຂອງສ່ວນບຸຄຄົລ ອາງໄວ້ ຫລືໃຊ້ໃຫ້ອາງໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຄ

ກິກຸອາງໄວ້ ຫລືໃຊ້ໃຫ້ອາງຜ້າປູຮັກສາຜືວພື້ນ ຜ້າປູຕຽງ ຜ້າປູພື້ນ ເສື່ອອ່ອນ ທ່ອນຫນັງ ທີ່ເຊັດຕີນ ຕັ່ງກະດານໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບຜ້າປູຮັກສາຜືວ

ເປັນຕົ້ນນັ້ນ ຫລືບໍ່ບອກມອບໝາຍ ໄປເສັຽ ຕ້ອງອາບັຕິທຸກກຽ
ເສນາສນະສ່ວນບຸຄຄົລ ພິກຂຸສຳຄັນວ່າເປັນຂອງສົງຄ໌ ຕ້ອງອາບັຕິທຸກກຽ
ເສນາສນະສ່ວນບຸຄຄົລ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຽ
ເສນາສນະສ່ວນບຸຄຄົລ ພິກຂຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກຽ
ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ເສນາສນະເປັນຂອງສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໑໓] ໑. ພິກຂຸເກັບໄວ້ແລ້ວຈຶ່ງໄປ
໒. ພິກຂຸໃຊ້ໃຫ້ເກັບໄວ້ແລ້ວຈຶ່ງໄປ
໓. ພິກຂຸບອກມອບໝາຍໄວ້ແລ້ວຈຶ່ງໄປ
໔. ພິກຂຸນຳອອກຜຶ່ງແດດໄວ້ ຈາກໄປດ້ວຍຄິດວ່າຈະກັບມາເກັບ
໕. ພິກຂຸຜູ້ມີເຫຕຸບາງຢ່າງຂັດຂວາງ
໖. ພິກຂຸຜູ້ມີເຫຕຸຂັດຂ້ອງ
໗. ພິກຂຸວິກົລຈິຕ
໘. ພິກຂຸຕົ້ນບັນຍັດ

ປຖົມເສນາສນສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓฑ໌] ໒. ພູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ນິທານວັຕຖຸ

໒. ພູຕຄາມວັຄ

໕. ທຸຕິຍເສນາສນສິກຂາບົທ

ວ່າດ້ວຍເສນາສນະຂໍ້ທີ ໔

ເຣື້ອງພຣະສັຕຕຣສວັຄຄີຍ໌

[໑໑໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ

ພິກເສດຖີ ເຂດກຸງສາວັດຖີ ສມັຍນັ້ນ ພວກພິກຂຸສັຕຕຣສວັຄຄີຍ໌ເປັນສະຫາຍກັນ ພິກຂຸເຫລົ່ານັ້ນ ເມື່ອຈະຢູ່ກໍຢູ່ດ້ວຍກັນ ເມື່ອຈະຈາກໄປກໍຈາກໄປພ້ອມກັນ ພວກທ່ານປູທີ່ນອນໃນວິຫາຣຂອງສົງຄ໌ ແຫ່ງນຶ່ງ ເມື່ອຈະຈາກໄປ ບໍ່ເກັບ ບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປ ເສນາສນະຖືກຕົວປ່ອກກັດ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງ ໃດພວກພິກຂຸສັຕຕຣສວັຄຄີຍ໌ປູທີ່ນອນໃນວິຫາຣຂອງສົງຄ໌ແລ້ວ ເມື່ອຈະຈາກໄປບໍ່ເກັບ ບໍ່ໃຊ້ໃຫ້ ເກັບທີ່ນອນນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປຈົນເສນາສນະຖືກຕົວປ່ອກກັດລະ" ຄັນພິກຂຸ ເຫລົ່ານັ້ນຕຳຫນິພວກພິກຂຸສັຕຕຣສວັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນັ້ນໄປຂາບທູລພຣະ ຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸ ທັງຫລາຍວ່າ "ພິກຂຸທັງຫລາຍ ຊາບວ່າ ພວກພິກຂຸສັຕຕຣສວັຄຄີຍ໌ປູທີ່ນອນໃນວິຫາຣຂອງສົງຄ໌ ແລ້ວເມື່ອຈະຈາກໄປ ບໍ່ເກັບ ບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປ ຈົນ ເສນາສນະຖືກຕົວປ່ອກກັດ ແມ່ນແທ້ບໍ" ພິກຂຸເຫລົ່ານັ້ນທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີ ພຣະກາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ພິກຂຸທັງຫລາຍ ຈັ່ງໃດໂມຄບຸຣຸຊເຫລົ່ານັ້ນປູທີ່ນອນໃນ ວິຫາຣຂອງສົງຄ໌ແລ້ວ ເມື່ອຈະຈາກໄປ ຈຶ່ງບໍ່ເກັບ ບໍ່ໃຊ້ໃຫ້ເກັບ ບໍ່ບອກມອບຫມາຍ ພາກັນຈາກ ໄປຈົນເສນາສນະຖືກຕົວປ່ອກກັດລະ ພິກຂຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕທ໌] ໔. ກູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[໑໕] ກໍ ພິກຂຸໃດປູຫລືໃຊ້ໃຫ້ປູທີ່ນອນໃນວິຫາຣຂອງສົງຄ໌ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໑໑໖] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ວິຫາຣທີ່ຊື່ວ່າ ຂອງສົງຄ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຄ໌

ທີ່ຊື່ວ່າ ທີ່ນອນ ໄດ້ແກ່ ເສື່ອ ຜ້າປູຮັກສາຜິວພື້ນ ຜ້າປູຕຽງ ຜ້າປູພື້ນ ເສື່ອອ່ອນ ທ່ອນໜັງ ຜ້າປູນັ່ງ ຜ້າປູນອນ ເຄື່ອງປູເຮັດດ້ວຍຫຍ້າ ເຄື່ອງປູເຮັດດ້ວຍໃບໄມ້

ຄໍາວ່າ ປູ ຄື ປູດ້ວຍຕົນເອງ

ຄໍາວ່າ ໃຊ້ໃຫ້ປູ ຄື ໃຊ້ຜູ້ອື່ນໃຫ້ປູ

ຄໍາວ່າ ເມື່ອຈະຈາກໄປບໍ່ເກັບ. . . ທີ່ນອນນັ້ນ ຄື ບໍ່ເກັບດ້ວຍຕົນເອງ

ຄໍາວ່າ ບໍ່ໃຊ້ໃຫ້ເກັບ ຄື ບໍ່ໃຊ້ຜູ້ອື່ນໃຫ້ເກັບ

ຄໍາວ່າ ຫລືບໍ່ບອກມອບໝາຍ ໄປເສັຽ ຄວາມວ່າ ພິກຂຸບໍ່ບອກມອບໝາຍ

ພິກຂຸ ສາມເນຣຫລືຄົນວັດ ຍ່າງລ່ວງເລີຍເຄື່ອງລ້ອມອາຣາມທີ່ມີຮົ້ວລ້ອມໄວ້ ຕ້ອງອາບັຕິປາຈິຕຕິຍ໌ ຍ່າງລ່ວງເລີຍອຸປຈາຣອາຣາມທີ່ບໍ່ມີຮົ້ວລ້ອມໄວ້ ຕ້ອງອາບັຕິປາຈິຕຕິຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓຑ໌] ໔. ພູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ຕິກປາຈິຕຕິຍ໌

ວິຫາຣຂອງສົງຄ໌ ພິກຂຸສໍາຄັນວ່າເປັນຂອງສົງຄ໌ ປູຫລືໃຊ້ໃຫ້ປູທີ່ນອນ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບໝາຍ ໄປເສັຽ ຕ້ອງອາບັຕິປາຈິຕຕິຍ໌

ວິຫາຣຂອງສົງຄ໌ ພິກຂຸບໍ່ແນ່ໃຈ ປູຫລືໃຊ້ໃຫ້ປູທີ່ນອນ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບໝາຍ ໄປເສັຽ ຕ້ອງອາບັຕິປາຈິຕຕິຍ໌

ວິຫາຣຂອງສົງຄ໌ ພິກຂຸສໍາຄັນວ່າເປັນຂອງສ່ວນບຸຄຄົລ ປູຫລືໃຊ້ໃຫ້ປູທີ່ນອນ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບໝາຍ ໄປເສັຽ ຕ້ອງອາບັຕິປາຈິຕຕິຍ໌

ທຸກກະ

[໑໑໗] ກິກຂຸປູຫລືໃຊ້ໃຫ້ປູທີ່ນອນໄວ້ ໃນອຸປຈາຣວິຫາຣ ໃນໂຮງສັນ ໃນມຕຫປ ຫລືທີ່ເຫງົ້າໄມ້ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັງ ຕ້ອງອາບັຕິທຸກກະ

ກິກຂຸຈັດຕັ້ງໄວ້ ຫລືໃຊ້ໃຫ້ຈັດຕັ້ງຕຽງຫລືຕັ່ງໄວ້ໃນວິຫາຣ ໃນອຸປຈາຣວິຫາຣ ໃນໂຮງສັນ ໃນມຕຫປ ຫລືທີ່ເຫງົ້າໄມ້ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບຕຽງຫລືຕັ່ງນັ້ນ ຫລືບໍ່ບອກມອບຫມາຍ ໄປເສັງ ຕ້ອງອາບັຕິທຸກກະ

ວິຫາຣສ່ວນບຸຄຄົລ ກິກຂຸສຳຄັນວ່າເປັນຂອງສົງຄ໌ ຕ້ອງອາບັຕິທຸກກະ

ວິຫາຣສ່ວນບຸຄຄົລ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ

ວິຫາຣສ່ວນບຸຄຄົລ ກິກຂຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກະ ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣເປັນຂອງສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ກູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໑໘] ໑. ກິກຂຸເກັບໄວ້ແລ້ວຈຶ່ງໄປ

໒. ກິກຂຸໃຊ້ໃຫ້ເກັບໄວ້ແລ້ວຈຶ່ງໄປ

໓. ກິກຂຸບອກມອບຫມາຍໄວ້ແລ້ວຈຶ່ງໄປ

໔. ກິກຂຸຜູ້ບໍ່ເກັບເສນາສນະທີ່ມີເຫຕຸບາງຢ່າງຂັດຂວາງ

໕. ກິກຂຸເກີດຫ່ວງໃຍໄປຢືນໃນທີ່ນັ້ນບອກມອບຫມາຍ

໖. ກິກຂຸຜູ້ມີເຫຕຸບາງຢ່າງຂັດຂວາງ

໗. ກິກຂຸຜູ້ມີເຫຕຸຂັດຂ້ອງ

໘. ກິກຂຸວິກົລຈິຕ

໙. ກິກຂຸຕົ້ນບັນຍັດ

ທຸຕິຍເສນາສນສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓ໌] ໔. ກູຕຄານວັຄ ໖. ອນຸປຂັຊຊສິກຂາບົທ ນິທານວັຕຖຸ

໔. ກູຕຄານວັຄ

໖. ອນຸປຂັຊຊສິກຂາບົທ

ວ່າດ້ວຍການເຂົ້າໄປແຊກແຊງ

ເຣື້ອງພຣະຈັພພັຄຄີຍ໌

[໑໑໙] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິດ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຂຸຈັພພັຄຄີຍ໌ກີດກັນທີ່ນອນດີໆເອົາໄວ້ ໃຫ້ຍ້າຍ ກິກຂຸຜູ້ເປັນເຖຣະອອກໄປ ເທື່ອນັ້ນ ພວກກິກຂຸຈັພພັຄຄີຍ໌ໄດ້ມີຄວາມຄິດວ່າ "ພວກເຮົາຈະຈຳ ພັນສາໃນທີ່ນີ້ດ້ວຍອຸບາຍຢ່າງໃດຫນໍ" ລຳດັບນັ້ນ ພວກກິກຂຸຈັພພັຄຄີຍ໌ຈຶ່ງເຂົ້າໄປນອນແຊກແຊງ ກິກຂຸຜູ້ເປັນເຖຣະດ້ວຍຕັ້ງໃຈວ່າ ເມື່ອທ່ານມີຄວາມຄັບໃຈກໍຈັກຈາກໄປເອງ ບັນດາກິກຂຸຜູ້ມັກ ນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຂຸຈັພພັຄຄີຍ໌ຈຶ່ງເຂົ້າໄປນອນແຊກ ແຊງກິກຂຸຜູ້ເປັນເຖຣະລະ" ຄັນກິກຂຸເຫລົ່ານັ້ນຕຳຫນິພວກກິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກຂຸຈັພພັຄຄີຍ໌ວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານເຂົ້າໄປນອນແຊກແຊງກິກຂຸຜູ້ເປັນເຖຣະ ແມ່ນແທ້ບໍ" ພວກກິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສ ເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໄປນອນແຊກແຊງກິກຂຸຜູ້ ເປັນເຖຣະລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໘໐] ກໍ ກິກຂຸໃດຮູ້ຢູ່ ເຂົ້າໄປນອນແຊກແຊງກິກຂຸຜູ້ເຂົ້າໄປຢູ່ໃນວິຫາຣຂອງສົງຄ໌ກ່ອນດ້ອຍ ປະສົງຄ໌ວ່າ "ທ່ານມີຄວາມຄັບໃຈກໍຈັກຈາກໄປເອງ" ປະສົງຄ໌ພຽງເທົ່ານີ້ບໍ່ມີຫຍັງອື່ນ ຕ້ອງອາບັຕິ ປາຈິຕຕີຍ໌

ເຣື້ອງພຣະລັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໑໘໑] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄໍາວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາ ວ່າ ກິກຂຸ ໃນຄວາມຫມາຍນີ້
ວິຫາຣທີ່ຊື່ວ່າ ຂອງສົງຄ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຄ໌
ທີ່ຊື່ວ່າ ຮູ້ ຄື ຮູ້ວ່າ "ເປັນກິກຂຸຜູ້ເຖົ້າ" ຮູ້ວ່າ "ເປັນກິກຂຸຜູ້ເປັນໄຂ້" ຫລືຮູ້ວ່າ "ເປັນກິກຂຸທີ່ສົງຄ໌ມອບວິຫາຣໃຫ້"
ຄໍາວ່າ ເຂົ້າໄປແຊກແຊງ ຄື ເຂົ້າໄປບຽດສຽດ
ຄໍາວ່າ ນອນ ຄວາມວ່າ ກິກຂຸປູໄວ້ຫລືໃຊ້ໃຫ້ປູທີ່ນອນໄວ້ໃນອຸປຈາຣຕຽງ ຕັ່ງຫລືປະຕູເຂົ້າອອກ ຕ້ອງອາບັຕິທຸກກຸຍ ກິກຂຸນັ່ງຫລືນອນ ຕ້ອງອາບັຕິປາຈິຕຕີຍ໌
ຄໍາວ່າ ປະສົງຄ໌ພຽງເທົ່ານີ້ ຄວາມວ່າ ບໍ່ມີເຫຕຸຜົລຢ່າງອື່ນໃນການເຂົ້າໄປນອນແຊກແຊງ

ບົທກາຊນີຍ໌

ຕີກປາຈິຕຕີຍ໌

[໑໘໔] ວິຫາຣຂອງສົງຄ໌ ກິກຂຸສໍາຄັນວ່າເປັນຂອງສົງຄ໌ ເຂົ້າໄປນອນແຊກແຊງ ຕ້ອງອາບັຕິ ປາຈິຕຕີຍ໌
ວິຫາຣຂອງສົງຄ໌ ກິກຂຸບໍ່ແນ່ໃຈ ເຂົ້າໄປນອນແຊກແຊງ ຕ້ອງອາບັຕິປາຈິຕຕີຍ໌
ວິຫາຣຂອງສົງຄ໌ ກິກຂຸສໍາຄັນວ່າເປັນຂອງສ່ວນບຸຄຄົລ ເຂົ້າໄປນອນແຊກແຊງ ຕ້ອງອາບັຕິ ປາຈິຕຕີຍ໌

ທຸກກຸຍ

ກິກຂຸປູຫລືໃຊ້ໃຫ້ປູທີ່ນອນ ເວັ້ນອຸປຈາຣຕຽງ ຕັ່ງຫລືປະຕູເຂົ້າອອກ ຕ້ອງອາບັຕິທຸກກຸຍ ກິກຂຸ

ນັ່ງຫລືນອນ ຕ້ອງອາບັຕິທຸກກະ
ກິກຂຸປູຫລືໃຊ້ໃຫ້ປູທີ່ນອນໃນອຸປຈາຣວິຫາຣ ໃນໂຮງຈັນ ໃນມົຓຫປ ທີ່ໂຄນໄມ້ຫລືໃນທີ່ກາງແຈ້ງ ຕ້ອງອາບັຕິທຸກກະ ກິກຂຸນັ່ງຫລືນອນ ຕ້ອງອາບັຕິທຸກກະ
ວິຫາຣສ່ວນບຸຄຄົລ ກິກຂຸສຳຄັນວ່າເປັນຂອງສົງຄ໌ ຕ້ອງອາບັຕິທຸກກະ
ວິຫາຣສ່ວນບຸຄຄົລ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ວິຫາຣສ່ວນບຸຄຄົລ ກິກຂຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກະ ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣເປັນສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໔໓] ໑. ກິກຂຸຜູ້ເປັນໄຂ້ເຂົ້າໄປຢູ່
໒. ກິກຂຸຖືກຄວາມໜາວຫລືຄວາມຮ້ອນບຽດບຽນແລ້ວເຂົ້າໄປຢູ່
໓. ກິກຂຸຜູ້ມີເຫຕຸຂັດຂ້ອງ
໔. ກິກຂຸວິກົລຈິຕ
໕. ກິກຂຸຕົ້ນບັນຍັດ

ອນຸປຂັຊຊສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຫ໌] ໒. ກູຕຄາມວັຄ ໗. ນິກກັຫຓນສິກຂາບົທ
ນິທານວັຕຖຸ

໒. ກູຕຄາມວັຄ

໗. ນິກກັຫຓນສິກຂາບົທ

ວ່າດ້ວຍການດຶງແກ່ອອກ

ເຣື້ອງພຣະສັຕຕຣສວັຄຄີຍ໌

[໑໔໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕົຫິກເສຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຂຸສັຕຕຣສວັຄຄີຍ໌ສ້ອມແປງວິຫາຣຫລັງໃຫຍ່ແຫ່ງ

ນີ້ງຢູ່ສຸດເຂດອາຣາມດ້ວຍໝາຍໃຈວ່າ ພວກເຮົາຈັກຈຳພັນສາໃນທີ່ນີ້ ພວກພິກຂຸຈັພພັຄຄີຍ໌ເຫັນ ພວກພິກຂຸສັຕຕຣສວັຄຄີຍ໌ສ້ອມແປງວິຫາຣ ຄັນເຫັນແລ້ວຈຶ່ງກ່າວກັນຢ່າງນີ້ວ່າ "ທ່ານທັງຫລາຍ ພວກພິກຂຸສັຕຕຣສວັຄຄີຍ໌ເຫລົ່ານີ້ສ້ອມແປງວິຫາຣກັນ ມາເຖີດ ພວກເຮົາຈັກຂັບໄລ່ພິກຂຸເຫລົ່ານັ້ນອອກໄປ" ພິກຂຸບາງພວກກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ໂປຣດຖ້າໃຫ້ພິກຂຸເຫລົ່ານັ້ນສ້ອມແປງວິຫາຣເຖີດ ເມື່ອສ້ອມແປງເສັດແລ້ວ ພວກເຮົາຈຶ່ງຂັບໄລ່ອອກໄປ" ເມື່ອພວກພິກຂຸສັຕຕຣສວັຄຄີຍ໌ສ້ອມແປງວິຫາຣເສັດ ພວກພິກຂຸຈັພພັຄຄີຍ໌ໄດ້ກ່າວກັບພວກພິກຂຸສັຕຕຣສວັຄຄີຍ໌ດັ່ງນີ້ວ່າ "ພວກທ່ານຈົ່ງຍ້າຍອອກໄປ ວິຫາຣເປັນຂອງພວກເຮົາ" ພວກພິກຂຸສັຕຕຣສວັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ພວກທ່ານຄວນຈະບອກກ່ອນພວກເຮົາຈະໄດ້ສ້ອມແປງວິຫາຣຫລັງອື່ນ" ພວກພິກຂຸຈັພພັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ວິຫາຣເປັນຂອງສົງຄ໌ບໍ່ແມ່ນບໍ" ພວກພິກຂຸສັຕຕຣສວັຄຄີຍ໌ຕອບວ່າ "ແມ່ນແລ້ວ ທ່ານທັງຫລາຍ ວິຫາຣເປັນຂອງສົງຄ໌" ພວກພິກຂຸຈັພພັຄຄີຍ໌ກ່າວວ່າ "ພວກທ່ານຈົ່ງຍ້າຍອອກໄປ ວິຫາຣເປັນຂອງພວກເຮົາ" ພວກພິກຂຸສັຕຕຣສວັຄຄີຍ໌ກ່າວວ່າ "ວິຫາຣຫລັງໃຫຍ່ ພວກທ່ານກໍຢູ່ໄດ້ ພວກເຮົາກໍຢູ່ໄດ້" ພວກພິກຂຸຈັພພັຄຄີຍ໌ກ່າວວ່າ "ພວກທ່ານຈົ່ງຍ້າຍອອກໄປ ວິຫາຣເປັນຂອງພວກເຮົາ" ແລ້ວໂກດ ບໍ່ພໍໃຈ ຈັບຄໍລາກອອກໄປ ພວກພິກຂຸສັຕຕຣສວັຄຄີຍ໌ເຫລົ່ານັ້ນເມື່ອຖືກລາກແກ່ອອກໄປ ກໍຮ້ອງໄຫ້ ພິກຂຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກຂຸສັຕຕຣສວັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ພວກພິກຂຸຈັພພັຄຄີຍ໌ໂກດ ບໍ່ພໍໃຈ ດຶງແກ່ພວກຜູ້ຂ້າອອກຈາກວິຫາຣຂອງສົງຄ໌" ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງໂກດ ບໍ່ພໍໃຈ ດຶງແກ່ພິກຂຸທັງຫລາຍອອກຈາກວິຫາຣຂອງສົງຄ໌ລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າພວກທ່ານໂກດ ບໍ່ພໍໃຈ ດຶງແກ່ພິກຂຸທັງຫລາຍອອກຈາກວິຫາຣຂອງສົງຄ໌ ຈິງຫລື" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າ ຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໂກດ ບໍ່ພໍໃຈ ດຶງແກ່ພິກຂຸທັງຫລາຍອອກຈາກວິຫາຣຂອງສົງຄ໌ລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໕] ກໍ ພິກສຸໃດໂກດ ບໍ່ພໍໃຈ ດຶງແກ່ ຫລືໃຊ້ໃຫ້ດຶງແກ່ພິກສຸອອກຈາກວິຫາຣຂອງສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໑໔໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອະທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ພິກສຸ ໄດ້ແກ່ ພິກສຸອື່ນ

ຄຳວ່າ ໂກດ ບໍ່ພໍໃຈ ຄື ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ

ວິຫາຣທີ່ຊື່ວ່າ ຂອງສົງຄ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຄ໌

ຄຳວ່າ ດຶງແກ່ ຄື ຈັບໃນຫ້ອງດຶງແກ່ອອກໄປໄວ້ໜ້າຫ້ອງ ຕ້ອງອາບັຕິປາຈິຕຕີຍ໌ ຈັບທີ່ໜ້າຫ້ອງດຶງແກ່ອອກໄປຂ້າງນອກ ຕ້ອງອາບັຕິປາຈິຕຕີຍ໌ ພິກສຸດຶງແກ່ພົ້ນປະຕູ ຫລາຍປະຕູດ້ວຍຄວາມພຍາຍາມຄັ້ງດຽວ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ດຶງແກ່ ຄວາມວ່າ ພິກສຸສັ່ງຜູ້ອື່ນ ຕ້ອງອາບັຕິປາຈິຕຕີຍ໌ ຜູ້ຮັບຄຳສັ່ງຄັ້ງດຽວ ແຕ່ດຶງແກ່ອອກໄປພົ້ນຫລາຍປະຕູ ພິກສຸຜູ້ສັ່ງ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໑໔໗] ວິຫາຣຂອງສົງຄ໌ ພິກສຸສຳຄັນວ່າເປັນຂອງສົງຄ໌ ໂກດ ບໍ່ພໍໃຈ ດຶງແກ່ຫລືໃຊ້ໃຫ້ດຶງແກ່ ຕ້ອງອາບັຕິປາຈິຕຕີຍ໌

ວິຫາຣຂອງສົງຄ໌ ພິກສຸບໍ່ແນ່ໃຈ ໂກດ ບໍ່ພໍໃຈ ດຶງແກ່ ຫລືໃຊ້ໃຫ້ດຶງແກ່ ຕ້ອງອາບັຕິປາຈິຕຕີຍ໌

ວິຫາຣຂອງສົງຄ໌ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ໂກດ ບໍ່ພໍໃຈ ດຶງແກ່ ຫລືໃຊ້ໃຫ້ດຶງແກ່ ຕ້ອງອາບັຕິປາຈິຕຕີຍ໌

ທຸກກົຏ

ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງພິກສຸນັ້ນ ຕ້ອງອາບັຕິທຸກກົຏ

ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ອອກຈາກອຸປຈາຣວິຫາຣ ຈາກໂຮງຈັນ ຈາກມຕາຫປ ຈາກເຫງົ້າ ໄມ້ ຫລືຈາກທີ່ກາງແຈ້ງ ຕ້ອງອາບັຕິທຸກກຂ

ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງກິກສຸນັ້ນ ຕ້ອງອາບັຕິທຸກກຂ

ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ອນຸປສັມບັນອອກຈາກວິຫາຣ ຈາກອຸປຈາຣວິຫາຣ ຈາກໂຮງຈັນ ຈາກມຕາຫປ ຈາກເຫງົ້າໄມ້ ຫລືຈາກທີ່ກາງແຈ້ງ ຕ້ອງອາບັຕິທຸກກຂ

ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງອນຸປສັມບັນນັ້ນ ຕ້ອງອາບັຕິທຸກກຂ

ວິຫາຣຂອງສ່ວນບຸຄຄົລ ກິກສຸສຳຄັນວ່າເປັນຂອງສົງຆ໌ ຕ້ອງອາບັຕິທຸກກຂ

ວິຫາຣຂອງສ່ວນບຸຄຄົລ ກິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຂ

ວິຫາຣຂອງສ່ວນບຸຄຄົລ ກິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກຂ

ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໔໗] ໑. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ກິກສຸອລັຊຊີ

໒. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງກິກສຸອລັຊຊີ

໓. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ກິກສຸວິກົລຈິຕ

໔. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງກິກສຸວິກົລຈິຕ

໕. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ກິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ການວິວາທ ກໍ່ໃຫ້ເກີດການທຸ່ມຖຽງ ຫລືກໍ່ອທິກຣຕ໌(ບັນຫາຂອງສົງຆ໌)ໃນສົງຆ໌

໖. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງກິກສຸຜູ້ກໍ່ເຫຕຸເຫລົ່ານັ້ນ

໗. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ອັນເຕວາສິກຫລືສັທລີວິຫາຣິກຜູ້ບໍ່ປະພຶດໂດຍຊອບ

໘. ກິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງອັນເຕວາສິກຫລືສັທລີວິຫາຣິກຜູ້ເຊັ່ນນັ້ນ

໙. ກິກສຸວິກົລຈິຕ

໑໐. ກິກສຸຕົ້ນບັນຍັດ

ນິກກັຫຍນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓທ໌] ໔. ກູຕວັດ ໗. ເວຫາສກຸຕິສິກຂາບົທ ນິທານວັຕຖຸ

໔. ກູຕຄານວັດ

໗. ເວຫາສກຸຕິສິກຂາບົທ
ວ່າດ້ວຍກຸຕິຊັ້ນລອຍ

ເຣື່ອງພິກຂຸ ໔ ຮູບ
[໑໔໙] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກຂຸ ໔ ຮູບຢູ່ເທິງກຸຕິຊັ້ນລອຍ໑ ໃນວິຫາຣຂອງສົງຄ໌ ຮູບ ນຶ່ງຢູ່ຊັ້ນລຸ່ມ ອີກຮູບນຶ່ງຢູ່ຊັ້ນເທິງ ຮູບທີ່ຢູ່ຊັ້ນເທິງນັ່ງຢ່າງແຮງເທິງຕຽງຊນິດທີ່ມີຕີນສຽບ(ບໍ່ມີໄລ ສລັກ) ຕີນຕຽງຕົກຖືກສີສະຮູບທີ່ນັ່ງຢູ່ຊັ້ນລຸ່ມຈົນທ່ານຮ້ອງລັ່ນ ພິກຂຸທັງຫລາຍແລ່ນເຂົ້າໄປຫາ ແລ້ວໄດ້ກ່າວດັ່ງນີ້ວ່າ "ທ່ານ ທ່ານສົ່ງສຽງຮ້ອງເຮັດຫຍັງ" ພິກຂຸຮູບທີ່ນັ່ງຢູ່ຊັ້ນລຸ່ມຈຶ່ງບອກເຣື່ອງ ນັ້ນໃຫ້ພິກຂຸທັງຫລາຍຊາບ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງ ໃດພິກຂຸຈຶ່ງນັ່ງຢ່າງແຮງເທິງຕຽງມີຕີນສຽບເທິງ**ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຄ໌ລະ" ຄັນ ພິກຂຸທັງຫລາຍຕຳຫນິພິກຂຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄ ໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສອບຖາມພິກຂຸນັ້ນວ່າ "ພິກຂຸ ຊາບວ່າ ທ່ານນັ່ງຢ່າງແຮງເທິງຕຽງ ມີຕີນສຽບ**ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຄ໌ແມ່ນແທ້ບໍ" ພິກຂຸນັ້ນທູລຮັບວ່າ "ແມ່ນແທ້ພຣະ ພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທຣເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຫຈັ່ງໃດທ່ານຈຶ່ງນັ່ງຢ່າງ ແຮງເທິງຕຽງມີຕີນສຽບ**ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຄ໌ລະ ໂມຄບຸຣຸຫການກະທຳຢ່າງນີ້ ບໍ່ ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົ ກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ກຸຕິຊັ້ນລອຍ ຄືກຸຕິມີພື້ນ ໔ ຊັ້ນຫລື ໓ ຊັ້ນ ແຕ່ບໍ່ໄດ້ປູພື້ນຊັ້ນເທິງ ຮອດທີ່ຄານສູງພໍພົ້ນສີສະ

(ວິ. ອ. ໔/໑໔ລ-໑໖໑/໖໐ລ-໖໑໐), ກິກບຸເອົາຕຽງຊື່ງບໍ່ໄດ້ໃສ່ເດືອຍສລັກຕີນຕຽງວາງພາດ ເມື່ອ ນັ່ງຢ່າງແຮງ ຕີນຕຽງຈຶ່ງຫລຸດໃສ່ສີສະກິກບຸທີ່ຢູ່ຊັ້ນລຸ່ມ

ພຣະບັນຍັດ

[໑໖໐] ກໍ ກິກບຸໃດນັ່ງ ຫລືນອນເທິງຕຽງ ຫລື**ເທິງ**ຕັ່ງອັນມີຕີນສຽບ **ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຄ໌ ຕ້ອງອາບັຕິປາຈິຕຕິຍ໌

ເຣື່ອງກິກບຸ ໔ ຮູບ ຈົບ

ສິກຂາບົທວິກັງຄ໌

[໑໖໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກບຸ ມີອະທິບາຍວ່າ ຊື່ວ່າກິກບຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກບຸ ໃນຄວາມຫມາຍນີ້

ວິຫາຣທີ່ຊື່ວ່າ ຂອງສົງຄ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຄ໌

ທີ່ຊື່ວ່າ ກຸຕິຊັ້ນລອຍ ໄດ້ແກ່ ກຸຕິຊັ້ນລອຍສູງຈົນສີສະບຸຣຸສກາງຄົນບໍ່ຕຳຕຽງທີ່ຊື່ວ່າ ມີຕີນສຽບ ຄືສອດຕີນສຽບຕິດໄວ້ໃນຕົວຕຽງ

ຕັ່ງທີ່ຊື່ວ່າ ມີຕີນສຽບ ຄື ສອດຕີນສຽບຕິດໄວ້ໃນຕົວຕັ່ງ

ຄຳວ່າ ນັ່ງ ຄື ກິກບຸນັ່ງເທິງຕຽງຫລື**ເທິງ**ຕັ່ງນັ້ນ ຕ້ອງອາບັຕິປາຈິຕຕິຍ໌

ຄຳວ່າ ນອນ ຄື ກິກບຸນອນເທິງຕຽງຫລື**ເທິງຕັ່ງ**ນັ້ນ ຕ້ອງອາບັຕິປາຈິຕຕິຍ໌

ບົທກາຊນີຍ໌

ຕິກປາຈິຕຕິຍ໌

[໑໖໔] ວິຫາຣຂອງສົງຄ໌ ກິກບຸສຳຄັນວ່າເປັນຂອງສົງຄ໌ ນັ່ງ ຫລືນອນເທິງຕຽງຫລື**ເທິງຕັ່ງ**ມີຕີນສຽບເທິງກຸຕິຊັ້ນລອຍ ຕ້ອງອາບັຕິປາຈິຕຕິຍ໌

ວິຫາຣຂອງສົງຄ໌ ກິກບຸບໍ່ແນ່ໃຈ ນັ່ງ ຫລືນອນເທິງຕຽງຫລື**ເທິງຕັ່ງ**ມີຕີນສຽບ**ເທິງກຸຕິ**ຊັ້ນລອຍ ຕ້ອງອາບັຕິປາຈິຕຕິຍ໌

ວິຫາຣຂອງສົງຄ໌ ກິກບຸສຳຄັນວ່າເປັນຂອງສ່ວນບຸຄຄົລ ນັ່ງ ຫລືນອນເທິງຕຽງຫລື**ເທິງຕັ່ງ**ມີຕີນສຽບ**ເທິງກຸຕິ**ຊັ້ນລອຍ ຕ້ອງອາບັຕິປາຈິຕຕິຍ໌

ທຸກກະດ

ວິຫາຣສ່ວນບຸຄຄົລ ພິກຂຸສໍາຄັນວ່າເປັນຂອງສົງຄ໌ ຕ້ອງອາບັດທຸກກະດ

ວິຫາຣສ່ວນບຸຄຄົລ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກະດ

ວິຫາຣສ່ວນບຸຄຄົລ ພິກຂຸສໍາຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັດທຸກກະດ ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັດ

ອະນາປັດຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໑໖໖] ໑. ພິກຂຸນັ່ງເທິງທີ່ທີ່ບໍ່ແມ່ນກຸຕິຊັ້ນລອຍ

໒. ພິກຂຸນັ່ງເທິງກຸຕິຊັ້ນລອຍສູງພໍຕໍາສີສະ

໓. ພິກຂຸນັ່ງເທິງທີ່ທີ່ຂ້າງລຸ່ມບໍ່ເປັນທີ່ຢູ່

໔. ພິກຂຸນັ່ງເທິງກຸຕິຊັ້ນລອຍປູພື້ນໄວ້

໕. ພິກຂຸນັ່ງເທິງກຸຕິຊັ້ນລອຍມີຕີນຕຽງຫລືຕີນຕັ່ງຕອກສລັກກັບຕົວ

໖. ພິກຂຸຢືນເທິງຕຽງຫລືຕັ່ງຫຍິບຫລືພາດຈີວອນໄວ້

໗. ພິກຂຸວິກົລຈິຕ

໘. ພິກຂຸຕົ້ນບັນຍັດ

ເວຫາສກຸຕິສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓฑ໌] ໒. ກູຕຄາມວັຄ ໙. ມຫັລລກວິຫາຣສິກຂາບົທ ນິທານວັຕຖຸ

໒. ກູຕຄາມວັຄ

໙. ມຫັລລກວິຫາຣສິກຂາບົທ

ວ່າດ້ວຍການສ້າງວິຫາຣໃຫຍ່

ເຣື້ອງພຣະຈັນນະ

[໑໖໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຘເຈົ້າປະທັບຢູ່ ຓະ ໂຄສິຕາຣາມ ເຂຕກຸງໂກສັມພີ ຄັ້ງ

ນັ້ນ ມຫາອມາຕຍ໌ຜູ້ເປັນອຸປັຊກາກຂອງທ່ານພຣະຈັນນະ ສ້າງວິຫາຣຖວາຍທ່ານພຣະຈັນນະ ເທື່ອນັ້ນ ທ່ານພຣະຈັນນະສັ່ງໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງ ວິຫາຣມີນ້ຳໜັກມາກຈຶ່ງພັງລົງມາ ຕໍ່ມາທ່ານພຣະຈັນນະຈຶ່ງຫາເກັບຫຍ້າແລະໄມ້ ເຮັດໃຫ້ນາເຂົ້າຫນຽວຂອງພຣາມຕ໌ຄົນນຶ່ງເສັຽຫາຍ ພຣາມຕ໌ນັ້ນຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດພຣະຄຸຕເຈົ້າທັງຫລາຍຈຶ່ງທຳນາເຂົ້າຫນຽວຂອງເຮົາໃຫ້ເສັຽຫາຍລະ" ພິກຂຸທັງຫລາຍ ໄດ້ຍິນພຣາມຕ໌ຕຳໜິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ฯລฯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະຈັນນະຈຶ່ງໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງລະ ວິຫາຣມີນ້ຳໜັກມາກ ຈຶ່ງພັງລົງມາ" ຄັນພິກຂຸເຫລົ່ານັ້ນຕຳໜິທ່ານພຣະຈັນນະໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະຈັນນະວ່າ "ຈັນນະ ຊາບວ່າ ທ່ານໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງ ວິຫາຣມີນ້ຳໜັກມາກ ຈຶ່ງພັງລົງມາ ແມ່ນແທ້ບໍ" ທ່ານພຣະຈັນນະທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ฯລฯ ໂມຄບຸຣຸຊ ຈັ່ງໃດທ່ານຈຶ່ງໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງ ຈົນວິຫາຣຮັບນ້ຳໜັກມາກພັງລົງມາລະ ໂມຄບຸຣຸຊ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ฯລฯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຕ໌] ໒. ກູຕຄາມວັຄ ໙. ມຫັລລກວິຫາຣສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[໑໖໕] ກໍ ພິກຂຸຈະສ້າງວິຫາຣຫລັງໃຫຍ່ ຈະຕິດຕັ້ງບານປະຕູໃກ້ວົງກົບປະຕູ ແລະຕົບແຕ່ງບານປ່ອງຢ້ຽມ໑ ຄວອຢືນໃນທີ່ທີ່ປາສຈາກຂອງຂຽວ ດຳເນີນການມຸງຫລັງຄາໄດ້ ໒-໓ ຊັ້ນ໔ ຖ້າທ່ານດຳເນີນການເກີນກວ່ານັ້ນ ແມ່ນຈະຢືນໃນທີ່ທີ່ປາສຈາກຂອງຂຽວ ຕ້ອງອາບັຕິປາຈິຕຕີຍ໌

ເອື້ອງພຣະຈັນນະ ຈົບ

ສິກຂາບົທວິພັງຄ໌

[໑໖໗] ວິຫາຣທີ່ຊື່ວ່າ ຫລັງໃຫຍ່ ທ່ານກ່າວເຖິງວິຫາຣທີ່ມີເຈົ້າຂອງ

ທີ່ຊື່ວ່າ ວິຫາຣ ໄດ້ແກ່ ທີ່ຢູ່ຊຶ່ງໂບກເຄືອບພາຍໃນຫລືພາຍນອກ ຫລືໂບກເຄືອບທັງພາຍໃນພາຍນອກ

ຄຳວ່າ ສ້າງ ຄື ສ້າງເອງ ຫລືໃຊ້ຄົນອື່ນສ້າງ

ຄຳວ່າ ໃກ້ວົງກົບປະຕູ ຄື ຊົ່ວຣະຍະຫັຕຖບາສຮອບວົງກົບ

ຄຳວ່າ ຈະຕິດຕັ້ງບານປະຕູ ຄື ວາງບານປະຕູ

ຄຳວ່າ ຕົບແຕ່ງບານປ່ອງຢ້ຽມ ຄື ທາບທາບານປ່ອງຢ້ຽມໃຫ້ມີສີຂາວ ໃຫ້ມີສີດຳ ໃຫ້ມີສີຍາງໄມ້ ຂຽນລວດລາຍດອກໄມ້ ຂຽນລວດລາຍເຄືອໄມ້ ຈັກເປັນຟັນມັງກອນ ຫລືຂຽນລວດລາຍດອກຈອກ

ເຊີງອັນຖະ :

*໑ ບານປະຕູແລະບານປ່ອງຢ້ຽມວິຫາຣ ຕ້ອງເປີດ-ປິດ ເມື່ອເປີດຈະຕຳຝາຜນັງວິຫາຣ ເມື່ອປິດຈະຕຳ**ວົງກົບ** ເຮັດໃຫ້ຝາຜນັງສັ່ນສະເທືອນຈົນດິນຫນຽວທີ່ພອກຝາຜນັງໂຊະລ່ອນຕົກລົງມາ ພຣະຜູ້ມີພຣະກາຄຊົງອນຸຍາຕໃຫ້ທາບທາພອກຝາຜນັງບໍຣິເວຕໃກ້ໆບານປະຕູ ບານປ່ອງຢ້ຽມວິຫາຣໄດ້ເພື່ອເຮັດໃຫ້ຄົງທົນຖາວອນ (ວິ. ອ. ໒/໑໖/໖໑໑-໖໑໒, ກງຂາ. ອ. ໒໔໔) ເມື່ອກິກຂຸພອກຝາຜນັງນອກຈາກບໍຣິເວຕໃກ້ໆບານປະຕູແລະບານປ່ອງຢ້ຽມຊ້ຳເກີນ ໖ ຄັ້ງ ຕ້ອງອາບັຕິປາຈິຕຕີຍ໌ (ສາຣຕຖ. ຜີກາ ໖/໑໖໕/໔໐, ວິມຕິ. ຜີກາ ໒/໑໖໕/໒໖, ກງຂາ. ຜີກາ ໖໙໒)*

໒ ໃນກາຣມຸງຫລັງຄາກໍເຊັ່ນກັນ ກິກຂຸເຂົ້າໃຈວ່າ ເມື່ອມຸງຫລາຍຄັ້ງ ຈະປ້ອງກັນຝົນຮົ່ວຮົດໄດ້ນານ ຈຶ່ງໃຊ້ອິດ ສີລາ ປູນຂາວ ຫຍ້າ ຫລືໃບໄມ້ມຸງຫລັງຄາ ແຕ່ຈະມຸງໄດ້ບໍ່ເກີນ ໖ ຊັ້ນ (ວິ. ອ. ໒/໑໖໕-໑໖໗/໖໑໒-໖໑໖, ສາຣຕຖ. ຜີກາ ໖/໑໖໕-໑໖໗/໔໐-໔໑)

ຄຳວ່າ ຍືນໃນທີ່ທີ່ປາສຈາກຂອງຂຽວດຳເນີນກາຣມຸງຫລັງຄາໄດ້ ໒-໖ ຊັ້ນຄວາມວ່າ ທີ່ຊື່ວ່າຂອງຂຽວ ໄດ້ແກ່ ບຸພພັຕຊາຕິແລະອປຣັຕຊາຕິ໑ ຖ້າກິກຂຸຍືນດຳເນີນກາຣໃນທີ່ທີ່ມີຂອງຂຽວຕ້ອງອາບັຕິທຸກກຸຏ

ກິກຂຸເມື່ອຈະມຸງຕາມແນວ ເພິງດຳເນີນກາຣ ໒ ແນວ ສັ່ງແນວທີ ໖ ແລ້ວຈາກໄປກິກຂຸເມື່ອຈະມຸງເປັນຊັ້ນ ເພິງດຳເນີນກາຣ ໒ ຮອບ ສັ່ງຮອບທີ ໖ ແລ້ວຈາກໄປ

[໑໓ກ] ຄຳວ່າ ຖ້າທ່ານດຳເນີນການເກີນວ່ານັ້ນ ແມ່ນຈະຍືນໃນທີ່ທີ່ປາສຈາກຂອງຂຽວ ຄວາມວ່າ ກິກຂຸເມື່ອມຸງດ້ວຍອິດ ຕ້ອງອາບັຕິປາຈິຕຕີຍ໌ທຸກໆກ້ອນ ເມື່ອມຸງດ້ວຍແຜ່ນສິລາ ຕ້ອງອາບັຕິປາຈິຕຕີຍ໌ທຸກໆກ້ອນ ເມື່ອມຸງດ້ວຍປູນຂາວ ຕ້ອງອາບັຕິປາຈິຕຕີຍ໌ທຸກໆກ້ອນ ເມື່ອມຸງດ້ວຍຫຍ້າ ຕ້ອງອາບັຕິປາຈິຕຕີຍ໌ທຸກໆກຳຫຍ້າ ເມື່ອມຸງດ້ວຍໃບໄມ້ ຕ້ອງອາບັຕິປາຈິຕຕີຍ໌ທຸກໆໃບ

ບົທກາຊນິຍ໌

ຕິກປາຈິຕຕີຍ໌

ເກີນ ໔-໓ ຊັ້ນ ກິກຂຸສຳຄັນວ່າເກີນ ດຳເນີນການ ຕ້ອງອາບັຕິປາຈິຕຕີຍ໌

ເກີນ ໔-໓ ຊັ້ນ ກິກຂຸບໍ່ແນ່ໃຈ ດຳເນີນການ ຕ້ອງອາບັຕິປາຈິຕຕີຍ໌

ເກີນ ໔-໓ ຊັ້ນ ກິກຂຸສຳຄັນວ່າຫນ້ອຍກວ່າ ດຳເນີນການ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຜ

ຫນ້ອຍກວ່າ ໔-໓ ຊັ້ນ ກິກຂຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຜ

ຫນ້ອຍກວ່າ ໔-໓ ຊັ້ນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຜ

ຫນ້ອຍກວ່າ ໔-໓ ຊັ້ນ ກິກຂຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ເຊີງອັນຖະ :

໑ ບຸພພັຕຊາຕິ ໄດ້ແກ່ ລັຍຊາຕິ ໗ ຢ່າງ ຄື ເຂົ້າສາລີ ເຂົ້າເຈົ້າ ຫຍ້າກັບແກ້ ເຂົ້າລະມານ ຫມາກເດືອຍ ເຂົ້າຫນຽວແລະເຂົ້າຟ່າງ ອປຣັຕຊາຕິ ໄດ້ແກ່ ຖົ່ວຂຽວ ຖົ່ວດາຊມາສ ງາ ພືຊຜັກທີ່ກິນຫລັງອາຫານ (ວິ. ອ. ໑/໑໐໔/໓໕໗, ສາຣຕຖ. ຍີກາ ໔/໑໐໔/໑ກ໕)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕ໌] ໔. ກູຕຄາມວັຄ ໙. ມຫັລລກວິຫາຣສິກຂາບົທ ອນາປັປຕິວາຣ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໓໗] ໑. ກິກຂຸມຸງພຽງ ໔-໓ ຊັ້ນ

໔. ກິກຂຸມຸງຫນ້ອຍກວ່າ ໔-໓ ຊັ້ນ

໓. ກິກຊຸນຸ່ງເຖື່ອນຜານິປະຕູ
໔. ກິກຊຸຕົບແຕ່ງຖໍ້າ
໕. ກິກຊຸນຸ່ງກຸຕິຫຍ້າ
໖. ກິກຊຸນຸ່ງກຸຕິເພື່ອກິກຊຸອື່ນ
໗. ກິກຊຸນຸ່ງດ້ວຍຊັພຍ໌ຕົນເອງ
໘. ກິກຊຸນຸ່ງອາຄາຣນອກຈາກນັ້ນ໑ ຍົກເວັ້ນອາຄາຣທີ່ພັກຂອງຕົນ
໙. ກິກຊຸວິກົລຈິຕ
໑໐. ກິກຊຸຕົ້ນບັນຍັດ

ມຫັລລກວິຫາຣສິກຂາບົທທີ ໙ ຈົບ

ເຊີງອັນຖະ :

໑ ອາຄາຣນອກຈາກນັ້ນ ຄື ໂຮງອຸໂປສົຖ ເຮືອນໃຜ ໂຮງຈັນ ໂຮງໄຟ (ວິ. ອ. ໒/໓໖໔/໖໙)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໒. ກູຕຄາມວັຄ ໑໐. ສັປປາຕກສິກຂາບົທ ນິທານວັຕຖຸ

໒. ກູຕຄາມວັຄ

໑໐. ສັປປາຕກສິກຂາບົທ
ວ່າດ້ວຍສິ່ງມີຊີວິຕ

ເຣື້ອງກິກຊຸຊາວເມືອງອາຣຸວີ
[໑໓໙] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ອັຄຄາຣວເຈດີຍ໌ ເຂຕເມືອງອາຣຸວີ ຄັ້ງນັ້ນ ພວກກິກຊຸຊາວເມືອງອາຣຸວີກໍາລັງຊ່ອຍກັນກໍ່ສ້າງ ຮູ້ຢູ່ວ່ານໍ້າມີສິ່ງມີຊີວິຕ ຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ບັນດາກິກຊຸຜູ້ມັກນ້ອຍ ຯລຯ ຈຶ່ງຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຊຸຊາວເມືອງອາຣຸວີຮູ້ຢູ່ວ່ານໍ້າມີສິ່ງມີຊີວິຕ ຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ລະ" ຄັນກິກຊຸເຫລົ່ານັ້ນຕໍາຫນິພວກກິກຊຸຊາວເມືອງອາຣຸວີໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກຂຸຊາວເມືອງອາຣຸວີວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ ແມ່ນແທ້ບໍ່" ກິກຂຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສ ເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານ ຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຈຶ່ງຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ລະ ໂມຄບຸຣຸສທັງ ຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົ ກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໐] ກໍ ກິກຂຸໃດຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງກິກຂຸຊາວເມືອງອາຣຸວີ ຈົບ

ສິກຂາບົທວິກັງຄ໌

[໑໔໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາ ວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ກິກຂຸນັ້ນຮູ້ເອງ ຫລືຜູ້ອື່ນບອກໃຫ້ກິກຂຸນັ້ນຮູ້

ຄຳວ່າ ຣົດ ຄື ກິກຂຸຣົດເອງ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ຣົດ ຄື ກິກຂຸໃຊ້ຜູ້ອື່ນໃຫ້ຣົດ ຕ້ອງອາບັຕິປາຈິຕຕີຍ໌

ຜູ້ຮັບຄຳສັ່ງຄັ້ງດຽວແຕ່ຣົດຫລາຍຄັ້ງ ກິກຂຸຜູ້ສັ່ງຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

[໑໔໒] ນ້ຳມີສິ່ງມີຊີວິຕ ກິກຂຸສຳຄັນວ່າມີສິ່ງມີຊີວິຕ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ຕ້ອງອາບັຕິ ປາຈິຕຕີຍ໌

ນ້ຳມີສິ່ງມີຊີວິຕ ກິກຂຸບໍ່ແນ່ໃຈ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ຕ້ອງອາບັຕິທຸກກຕ

ນ້ຳມີສິ່ງມີຊີວິຕ ກິກຂຸສຳຄັນວ່າບໍ່ມີສິ່ງມີຊີວິຕ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ບໍ່ຕ້ອງອາບັຕິ

ນ້ຳບໍ່ມີສິ່ງມີຊີວິຕ ພິກຂຸສຳຄັນວ່າມີສິ່ງມີຊີວິຕ ຕ້ອງອາບັຕິທຸກກຕ
ນ້ຳບໍ່ມີສິ່ງມີຊີວິຕ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ນ້ຳບໍ່ມີສິ່ງມີຊີວິຕ ພິກຂຸສຳຄັນວ່າບໍ່ມີສິ່ງມີຊີວິຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໔໓] ໑. ພິກຂຸບໍ່ຈົງໃຈ

໒. ພິກຂຸບໍ່ມີສຕິ

໓. ພິກຂຸຜູ້ບໍ່ຮູ້

໔. ພິກຂຸວິກົລຈິຕ

໕. ພິກຂຸຕົ້ນບັນຍັດ

ສັປປາຕກສິກຂາບົທທີ ໑໐ ຈົບ

ຈູຕຄາມວັຄທີ ໗ ຈົບ

ຣວມສິກຂາບົທທີ່ມີໃນຈູຕຄາມວັຄ

ຈູຕຄາມວັຄມີ ໑໐ ສິກຂາບົທ ຄື

໑. ຈູຕຄາມສິກຂາບົທ ວ່າດ້ວຍການພາກຈູຕຄາມ

໒. ອັປປວາທກສິກຂາບົທ ວ່າດ້ວຍການກ່າວປິດບັງ

໓. ອຸຊຸຍາປນກສິກຂາບົທ ວ່າດ້ວຍການກ່າວໃຫ້ເພ່ງໂທສ

໔. ປຖມເສນາສນສິກຂາບົທ ວ່າດ້ວຍເສນາສນະຂໍ້ທີ ໑

໕. ທຸຕິຍເສນາສນສິກຂາບົທ ວ່າດ້ວຍເສນາສນະຂໍ້ທີ ໒

໖. ອນຸປຂັຊຊສິກຂາບົທ ວ່າດ້ວຍການເຂົ້າໄປແຊກແຊງ

໗. ນິກກັຫຍນສິກຂາບົທ ວ່າດ້ວຍການດຶງແກ່ອອກ

໘. ເວຫາສກຸຜິສິກຂາບົທ ວ່າດ້ວຍກຸຕິຊັ້ນລອຍ

໙. ມຫັລລກວິຫາຣສິກຂາບົທ ວ່າດ້ວຍການສ້າງວິຫາຣໃຫຍ່

໑໐. ສັປປາຕກສິກຂາບົທ ວ່າດ້ວຍສິ່ງມີຊີວິຕ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຑ໌] ໙. ໂອວາທວັຄ ໑. ໂອວາທສິກຂາບົທ ນິທານວັຕຖຸ

໙. ໂອວາທວັຄ

ໝວດວ່າດ້ວຍໂອວາທ

໑. ໂອວາທສິກຂາບົທ

ວ່າດ້ວຍການສັ່ງສອນພິກຂຸນີ

ເຣື້ອງພຣະຈັພພັຄຄີຍ໌

[໑໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກຂຸຜູ້ເປັນເຖຣະທັງຫລາຍສັ່ງສອນພວກພິກຂຸນີ ຍ່ອມໄດ້ຈີວອນ ບິຓຑບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ເທື່ອນັ້ນ ພວກພິກຂຸຈັພພັຄຄີຍ໌ໄດ້ມີການປຶກສາກັນດັ່ງນີ້ວ່າ "ທ່ານທັງຫລາຍ ບັດນີ້ພິກຂຸຜູ້ເປັນເຖຣະທັງຫລາຍສັ່ງສອນພວກພິກຂຸນີ ຍ່ອມໄດ້ຈີວອນ ບິຓຑບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ທ່ານທັງຫລາຍມາເຖີດ ແມ່ນພວກເຮົາກໍຈະສັ່ງສອນພວກພິກຂຸນີແດ່" ຄັນແລ້ວພວກພິກຂຸຈັພພັຄຄີຍ໌ຈຶ່ງໄດ້ເຂົ້າໄປຫາພວກພິກຂຸນີ ແລ້ວໄດ້ກ່າວດັ່ງນີ້ວ່າ "ມາເຖີດ ນ້ອງຍິງທັງຫລາຍ ພວກທ່ານຈົ່ງເຂົ້າໄປຫາພວກອາຕມາແດ່ ພວກອາຕມາຈັກສັ່ງສອນໃຫ້ແດ່" ຫລັງຈາກນັ້ນ ພວກພິກຂຸນີເຫລົ່ານັ້ນໄດ້ພາກັນເຂົ້າໄປຫາພວກພິກຂຸຈັພພັຄຄີຍ໌ເຖິງທີ່ຢູ່ ຄັນເຖິງແລ້ວໄດ້ໄຫວ້ພວກພິກຂຸຈັພພັຄຄີຍ໌ແລ້ວນັ່ງ ຓະ ທີ່ສົມຄວຣ ເທື່ອນັ້ນພວກພິກຂຸຈັພພັຄຄີຍ໌ ໄດ້ສະແດງທັມມີກະຖາພຽງເລັກນ້ອຍແກ່ພວກພິກຂຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກະຖາ໑ ແລ້ວສົ່ງກັບດ້ວຍກ່າວວ່າ "ພວກທ່ານກັບໄປເຖີດ ນ້ອງຍິງທັງຫລາຍ"

ເຊີງອັນຖະ :

໑ ເດັຽຣະສານກະຖາ ຄືຖ້ອຍຄຳທີ່ຂັດຂວາງທາງໄປສູ່ສວັນຄ໌ນິພພານ ພິກຂຸບໍ່ຄວຣນຳມາເປັນຂໍ້ຖົກຖຽງສົນທນາກັນ (ວິ. ອ. ໒/໑໔໔/໓໑໕, ສາຣຕຖ. ຑີກາ ໓/໑໔໔/໔໓) ມີ ໒໗ ຢ່າງ (ວິ. ມ. ໕/໒໕໐/໑໓-໑໔, ທີ. ສີ. ໙/໑໗/໗, ທີ. ປາ. ໑໑/໕໐/໓໐, ມ. ມ. ໑໓/໒໒໓/໑໙໗, ສໍ. ມ. ໑໙/໑໐໗໐/໓໖໕-໓໖໖, ອງ. ທສກ. ໒໔/໖໙/໑໐໒, ຂຸ. ມ. ໒໙/໑໕໗/໓໐໖) ດູ

ຣຕນວັຕ ສິກຂາບົທທີ ໒ ຂໍ້ ໕໐໘ ໜ້າ ໕໔໔ (ໃນເຫລັ້ມນີ້)

ຕໍ່ມາ ພວກພິກສຸນີເຫລົ່ານັ້ນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວໄດ້ຢືນ ຓະ ທີ່ສົມຄວຣ ພຣະຜູ້ມີພຣະພາຄໄດ້ຕຣັສກັບ ພວກພິກສຸນີຜູ້ຢືນຢູ່ ຓະ ທີ່ສົມຄວຣເຫລົ່ານັ້ນດັ່ງນີ້ວ່າ "ການສັ່ງສອນພວກພິກສຸນີສັມເຣັດຜົລດີຫລື" ພວກພິກສຸນີຂາບທູລວ່າ "ການສັ່ງສອນຈະສັມເຣັດຜົລໄດ້ແຕ່ທີ່ໃດກັນ ພຣະພຸທສເຈົ້າຂ້າ ພຣະຄຸຓເຈົ້າຈັພພັຄຄີຍ໌ສະແດງທັມມີກຖາພຽງເລັກນ້ອຍ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກຖາ ແລ້ວສົ່ງໃຫ້ກັບ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພວກພິກສຸນີເຫລົ່ານັ້ນເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ພິກສຸນີເຫລົ່ານັ້ນຄັນພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວຈຶ່ງລຸກຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວທຳປະທັກສິຓ(ວຽນໄປທາງຂວາ)ຈາກໄປ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸຈັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານສະແດງທັມມີກຖາພຽງເລັກນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກຖາແລ້ວສົ່ງໃຫ້ກັບແມ່ນແທ້ບໍ່" ພວກພິກສຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງສະແດງທັມມີກຖາພຽງເລັກນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກຖາແລ້ວສົ່ງໃຫ້ກັບລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳໜິແລ້ວໄດ້ຊົງສະແດງທັມມີກຖາ ແລ້ວຈຶ່ງຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ແຕ່ງຕັ້ງພິກສຸເປັນຜູ້ສັ່ງສອນພິກສຸນີ"

ພິກສຸທັງຫລາຍ ສົງຄ໌ເພິງແຕ່ງຕັ້ງພິກສຸເປັນຜູ້ສັ່ງສອນພິກສຸນີຢ່າງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓທ໌] ໓. ໂອວາທວັຄ ໑. ໂອວາທສິກຂາບົທ ພຣະບັນຍັດ

ວິທີແຕ່ງຕັ້ງແລະກັມວາຈາແຕ່ງຕັ້ງພິກຂຸສັ່ງສອນພິກຂຸຕີ

ເບື້ອງຕົ້ນເພິງຂໍໃຫ້ພິກຂຸຮັບ ຄັນແລ້ວພິກຂຸຜູ້ສລາດສາມາດເພິງປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິຈຕຸຕຖກັມວາຈາວ່າ

[໑໔໕] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຄ໌ພ້ອມກັນແລ້ວເພິງແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກຂຸຕີ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກຂຸຕີ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກຂຸຕີ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ຂ້າພະເຈົ້າກ່າວຄວາມນີ້ເປັນຄັ້ງທີ ໒ ຯລຯ ຂ້າພະເຈົ້າກ່າວຄວາມນີ້ເປັນຄັ້ງທີ ໓

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກຂຸຕີ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກຂຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກຂຸຕີ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ພິກຂຸຊື່ນີ້ສົງຄ໌ແຕ່ງຕັ້ງໃຫ້ເປັນຜູ້ສັ່ງສອນພິກຂຸຕີແລ້ວ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຄັນພຣະຜູ້ມີພຣະພາຄຊົງຕຳຫນິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງຕຣັສໂທຫຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໖] ກໍ ພິກຂຸໃດບໍ່ໄດ້ຮັບແຕ່ງຕັ້ງ ເພິງສັ່ງສອນພິກຂຸຕີທັງຫລາຍ ຕ້ອງອາບັຕິປາຈິຕຕິຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງພຣະຈັພພັຄຄີຍ໌

[໑໔໗] ສມັຍນັ້ນ ພິກຂຸຜູ້ເປັນເຖຣະທັງຫລາຍຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນພວກພິກຂຸຕີຍັງໄດ້ຈີ

ວອນ ບິຓຫບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣຢູ່ເຫມືອນເດີມ ຄັ້ງນັ້ນພວກພິກຂຸ ຈັພພັຄຄີຍ໌ໄດ້ມີການປຶກສາກັນດັ່ງນີ້ວ່າ "ທ່ານທັງຫລາຍ ບັດນີ້ ພິກຂຸຜູ້ເປັນເຖຣະທັງຫລາຍຜູ້ໄດ້ ຮັບແຕ່ງຕັ້ງແລ້ວສັ່ງສອນພວກພິກຂຸນີຍັງໄດ້ຈີວອນ ບິຓຫບາຕເສນາສນະແລະຄິລານປັຈຈັຍ ເພສັຊບໍຣິຂາຣຢູ່ເຫມືອນເດີມ ທ່ານທັງຫລາຍ ມາເຖີດ ແມ່ນພວກເຮົາກໍຈະໄປນອກສີມາ ແຕ່ງຕັ້ງ ກັນແລະກັນໃຫ້ເປັນຜູ້ສັ່ງສອນພິກຂຸນີ ແລ້ວສັ່ງສອນພວກພິກຂຸນີແດ່" ຄັນແລ້ວພວກພິກຂຸຈັພພັຄ ຄີຍ໌ຈຶ່ງໄດ້ພາກັນໄປນອກສີມາ ໄດ້ແຕ່ງຕັ້ງກັນແລະກັນໃຫ້ເປັນຜູ້ສັ່ງສອນພິກຂຸນີແລ້ວເຂົ້າໄປຫາ ພິກຂຸນີທັງຫລາຍ ໄດ້ກ່າວດັ່ງນີ້ວ່າ "ນ້ອງຍິງທັງຫລາຍ ພວກອາຕມາໄດ້ຮັບແຕ່ງຕັ້ງແລ້ວ ພວກ ທ່ານຈົ່ງເຂົ້າໄປຫາພວກອາຕມາແດ່ ພວກອາຕມາຈັກສັ່ງສອນໃຫ້ແດ່"ຕໍ່ມາ ພວກພິກຂຸນີເຫລົ່ານັ້ນ ໄດ້ພາກັນເຂົ້າໄປຫາພວກພິກຂຸຈັພພັຄຄີຍ໌ເຖິງທີ່ຢູ່ ຄັນເຖິງແລ້ວໄດ້ໄຫວ້ພວກພິກຂຸຈັພພັຄຄີຍ໌ ແລ້ວນັ່ງ ໓ະ ທີ່ສົມຄວຣ ເທື່ອນັ້ນ ພວກພິກຂຸຈັພພັຄຄີຍ໌ໄດ້ສະແດງ ລັມມີກຖາພຽງເລັກນ້ອຍແກ່ ພວກພິກຂຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບ ເດັຽຣະສານກຖາ ແລ້ວສົ່ງກັບ ດ້ວຍກ່າວວ່າ "ພວກທ່ານກັບໄປເຖີດ ນ້ອງຍິງທັງຫລາຍ"ຕໍ່ມາ ພວກພິກຂຸນີເຫລົ່ານັ້ນໄດ້ເຂົ້າໄປ ເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວໄດ້ຍືນ ໓ະ ທີ່ສົມຄວຣ ພຣະຜູ້ມີພຣະພາຄໄດ້ຕຣັສກັບພວກພິກຂຸ ນີ ຜູ້ຍືນຢູ່ ໓ະ ທີ່ສົມຄວຣເຫລົ່ານັ້ນ ດັ່ງນີ້ວ່າ "ການສັ່ງສອນພວກພິກຂຸນີສັມເຣັດຜົລດີຫລື"ພວກພິກຂຸນີຂາບທູລວ່າ "ການສັ່ງສອນ ຈະສັມເຣັດຜົລໄດ້ແຕ່ທີ່ໃດກັນ ພຣະພຸທສເຈົ້າຂ້າ ພຣະຄຸຓເຈົ້າຈັພພັຄຄີຍ໌ສະແດງລັມມີກຖາພຽງ ເລັກນ້ອຍ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກຖາ ແລ້ວສົ່ງໃຫ້ກັບ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພວກພິກຂຸນີເຫລົ່ານັ້ນເຫັນແຈ້ງ ຊວນໃຫ້ຢາກຮັບເອົາ ໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາ ພິກຂຸນີເຫລົ່ານັ້ນຄັນພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາແລ້ວຈຶ່ງລຸກຈາກ ອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວທຳປຣະທັກສິຓ(ວຽນໄປທາງຂວາ)ຈາກໄປ

ຊົງປະຊຸມສົງຄ໌ແຕ່ງຕັ້ງພິກຂຸສັ່ງສອນພິກຂຸນີ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານສະແດງລັມມີກຖາພຽງເລັກນ້ອຍແກ່ພວກ ພິກຂຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກຖາ ແລ້ວສົ່ງໃຫ້ກັບ ແມ່ນແທ້ບໍ" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສ

ເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງສະແດງທັມມີກະຖາພຽງເລັກນ້ອຍ ແກ່ພວກກີກບຸກີ ແລ້ວໃຫ້ອັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກະຖາ ແລ້ວສິ່ງໃຫ້ກັບລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳໜິແລ້ວໄດ້ຊົງສະແດງທັມມີກະຖາແລ້ວຈຶ່ງຮັບສັ່ງກັບກີກບຸທັງຫລາຍວ່າ "ກີກບຸທັງຫລາຍ ເຮົາອນຸຍາຕໃຫ້ແຕ່ງຕັ້ງກີກບຸຜູ້ມີຄຸຫສົມບັດ ໘ ຢ່າງ ເປັນຜູ້ສັ່ງສອນກີກບຸກີ ຄື

ຄຸຫສົມບັດຂອງກີກບຸຜູ້ສັ່ງສອນກີກບຸກີ ໘ ຢ່າງ

໑. ເປັນຜູ້ມີສິລ ສຳຣວມໃນປາຕິໂມກຂສັງວຣສິລ ເຖິງພ້ອມດ້ວຍອາຈາຣະແລະໂຄຈຣເຫັນກັຍໃນຄວາມຜິດແມ່ນພຽງເລັກນ້ອຍ ສມາທານສຶກສາສິກຂາບົທທັງຫລາຍ

໒. ເປັນພຫູສູຕ ເປັນຜູ້ຊົງສຸຕະ (ຈຳສິ່ງທີ່ໄດ້ຮ່ຳຮຽນມາ) ສັ່ງສົມສຸຕະ (ສັ່ງສົມສິ່ງທີ່ໄດ້ຮ່ຳຮຽນມາ) ທ່ານໄດ້ຍິນໄດ້ຟັງທັມອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ອັນປະກາດພຣົມຈັນຍ໌ພ້ອມທັງອັນຖະ ພ້ອມທັງພຍັນຊນະ ຄົບຖ້ວນ ບໍຣິບູຣຕ໌ມາກ ຊົງຈຳໄດ້ ຄ່ອງປາກ ຂຶ້ນໃຈແທງຕລອດແລ້ວດ້ວຍທິຍກິ

໓. ເປັນຜູ້ຊຳນານປາຕິໂມກຂ໌ທັງສອງ ແຈກແຈງໄດ້ຖືກຕ້ອງ ຄ່ອງແຄ້ວ ວິນິຈັຍໄດ້ຮຽບຮ້ອຍທັງໂດຍສູຕຣແລະໂດຍອນຸພຍັນຊນະ໑

໔. ເປັນຜູ້ມີວາຈາສລະສລວຍ ມີສຽງມ່ວນ

ເຊີງອັນຖະ :

໑ ຄຳວ່າ "ໂດຍສູຕຣ" ໃນທີ່ນີ້ໝາຍເຖິງຄັມກີຣ໌ຂັນຄກະແລະບໍຣິວາຣແຫ່ງພຣະວິນັຍປິດົກ ຄຳວ່າ "ອນຸພຍັນຊນະ" ຄື ບົທອັກສຣບໍຣິບູຣຕ໌ບໍ່ຕົກຫລົ່ນ (ວິ. ອ. ໔/໑໕໔-໗/໓໑໗)

໕. ເປັນທີ່ນິຍມຊມຊອບຂອງພວກກີກບຸກີໂດຍສ່ວນຫລາຍ

໖. ເປັນຜູ້ສາມາດສັ່ງສອນພວກກີກບຸກີໄດ້

໗. ເປັນຜູ້ບໍ່ເຄີຍປະພຶດລ່ວງຄຣຸທັມໃນສຕຣີຜູ້ນຸ່ງຫົ່ມຜ້າກາສາຍະບວຊອຸທິສພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ໑

ກ᪂. ເປັນຜູ້ມີພັນສາ ໒໐ ຫລືເກີນກວ່າ ໒໐
ກິກສຸທັງຫລາຍ ເຮົາອນຸຍາຕໃຫ້ແຕ່ງຕັ້ງກິກສຸຜູ້ມີຄຸດສົມບັດ ກ᪂ ຢ່າງນີ້ ເປັນຜູ້ສັ່ງສອນກິກສຸດີ"

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໑໔ກ᪂] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກສຸ ມີອະທິບາຍວ່າ ຊື່ວ່າກິກສຸ ເພາະເປັນຜູ້ຂໍ ฯລฯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ບໍ່ໄດ້ຮັບແຕ່ງຕັ້ງ ຄື ສົງຆ໌ຍັງບໍ່ໄດ້ແຕ່ງຕັ້ງດ້ວຍຍັຕຕິຈຕຸຕຖກັມ
ທີ່ຊື່ວ່າ ກິກສຸດີທັງຫລາຍ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຆ໌ ໒ ຝ່າຍ
ຄຳວ່າ ສັ່ງສອນ ຄວາມວ່າ ກິກສຸສັ່ງສອນຄຣຸທັມ ກ᪂ ຢ່າງ ຕ້ອງອາບັຕິປາຈິຕຕີຍ໌
ສັ່ງສອນທັມຢ່າງອື່ນ ຕ້ອງອາບັຕິທຸກກຸຕ ສັ່ງສອນກິກສຸດີທີ່ອຸປສົມບົທໃນສົງຆ໌ຝ່າຍດຽວ ຕ້ອງອາບັຕິທຸກກຸຕ

[໑໔ລ] ກິກສຸຜູ້ໄດ້ຮັບແຕ່ງຕັ້ງແລ້ວນັ້ນເພິ່ງກວາດບໍຣິເວດະ ຕັ້ງນ້ຳຈັນນ້ຳໃຊ້ ປູອາສນະໄວ້ ຊອນເພື່ອນກິກສຸໄປນັ່ງດ້ວຍ
ກິກສຸດີທັງຫລາຍເພິ່ງໄປທີ່ນັ້ນ ແລ້ວໄຫວ້ກິກສຸນັ້ນ ແລ້ວນັ່ງ ຓະ ທີ່ສົມຄວຣ

ເຊີງອັນຖະ :

໑ ໃນສມັຍທີ່ເປັນຄຣືຫັສຖ໌ກ່ອນບວຊ ບໍ່ເຄີຍຈັບຕ້ອງກາຍກັບກິກສຸດີ ບໍ່ເຄີຍປະພຶດຜິດທາງປະເວດີກັບສິກຂມານາ ຫລືສາມເດຣີ (ວິ. ອ. ໒/໑໔໕-໑໔ໆ/ຝ໑ລ)

ກິກສຸຜູ້ໄດ້ຮັບແຕ່ງຕັ້ງແລ້ວນັ້ນເພິ່ງຖາມກິກສຸດີທັງຫລາຍວ່າ "ນ້ອງຍິງທັງຫລາຍ ພວກທ່ານພ້ອມພຽງກັນແລ້ວຫລື" ຖ້າພວກກິກສຸດີຕອບວ່າ "ພວກຂະນ້ອຍພ້ອມພຽງກັນແລ້ວ ຂນ້ອຍ" ເພິ່ງຖາມວ່າ "ນ້ອງຍິງທັງຫລາຍ ຄຣຸທັມ ກ᪂ ຂໍ້ຍັງຈຳກັນໄດ້ຢູ່ຫລື" ຖ້າພວກກິກສຸດີຕອບວ່າ "ຍັງຈຳກັນໄດ້ຢູ່ ຂນ້ອຍ" ເພິ່ງກ່າວວ່າ "ນ້ອງຍິງທັງຫລາຍ ທັມນີ້ເປັນໂອວາທ" ແລ້ວເພິ່ງມອບຫມາຍ ຖ້າພວກກິກສຸດີຕອບວ່າ "ຈຳກັນບໍ່ໄດ້ ຂນ້ອຍ" ເພິ່ງສວດຄຣຸທັມດັ່ງນີ້ວ່າ

ຄຣຸທັມ ໘ ຂໍ້

໑. ພິກຂຸນີເຖິງຈະບວຊໄດ້ ໑໐໐ ພັນສາ ກໍຕ້ອງທຳການກຣາບໄຫວ້ ຕ້ອນຮັບ ທຳອັຢຊລີກັມ ທຳສາມີຈີກັມແກ່ພິກຂຸຜູ້ບວຊແມ່ນໃນມື້ນັ້ນ ທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໒. ພິກຂຸນີບໍ່ເພິ່ງຢູ່ຈຳພັນສາໃນອາວາສທີ່ບໍ່ມີພິກຂຸ ທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖືບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໓. ພິກຂຸນີເພິ່ງຫວັງທັມ ໒ ຢ່າງ ຄື ຖາມອຸໂປສົຖແລະໄປຮັບໂອວາທຈາກພິກຂຸສົງຂ໌ທຸກເຄິ່ງເດືອນ ທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໔. ພິກຂຸນີຈຳພັນສາແລ້ວເພິ່ງປວາຣະນາໃນສົງຂ໌ ໒ ຝ່າຍ ໂດຍສຖານ ໓ ຄື ໄດ້ເຫັນ ໄດ້ຟັງ ຫລືໄດ້ນຶກສົງສັຍ ທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໕. ພິກຂຸນີຕ້ອງຄຣຸທັມແລ້ວເພິ່ງປະພຶດປັກຂມານັຕໃນສົງຂ໌ ໒ ຝ່າຍ ທັມຂໍ້ນີ້ ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໖. ພິກຂຸນີເພິ່ງແສວງຫາການອຸປສົມບົທໃນສົງຂ໌ ໒ ຝ່າຍໃຫ້ແກ່ສິກຂມານາທີ່ສຶກສາທັມ ໖ ຂໍ້ຕລອດ ໒ ປີແລ້ວ ທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖືບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໗. ພິກຂຸນີບໍ່ເພິ່ງດ່າ ບໍ່ເພິ່ງບໍຣິພາສພິກຂຸ ບໍ່ວ່າກໍຣະນີໃດໆທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

໘. ຕັ້ງແຕ່ວັນນີ້ເປັນຕົ້ນໄປ ຫ້າມພິກຂຸນີສັ່ງສອນພິກຂຸ ແຕ່ບໍ່ຫ້າມພິກຂຸສັ່ງສອນພິກຂຸນີ ທັມຂໍ້ນີ້ພິກຂຸນີເພິ່ງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິ່ງລ່ວງລະເມີດຈົນຕລອດຊີວິຕ

ຖ້າພວກພິກຂຸນີຕອບວ່າ "ພວກຂະນ້ອຍພ້ອມພຽງກັນແລ້ວ ຂນ້ອຍ" ພິກຂຸຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນທັມອື່ນ ຕ້ອງອາບັຕິທຸກກຸຕ

ຖ້າພວກພິກຂຸນີຕອບວ່າ "ພວກຂະນ້ອຍຍັງບໍ່ພ້ອມພຽງກັນ ຂນ້ອຍ" ພິກຂຸຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນຄຣຸທັມ ໘ ຂໍ້ ຕ້ອງອາບັຕິທຸກກຸຕ ພິກຂຸບໍ່ໃຫ້ໂອວາທ ສັ່ງສອນທັມອື່ນ ຕ້ອງອາບັຕິທຸກກຸຕ

ບິທກາຊນີຍ໌

[໑໕໐] ກັມ໑ ທີ່ທຳບໍ່ຖືກຕ້ອງ ກິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ກິກສຸຕີສົງຄ໌ຍັງບໍ່ພ້ອມພຽງກັນ ກິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ກິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ກິກສຸຕີສົງຄ໌ຍັງບໍ່ພ້ອມພຽງກັນ ກິກສຸບໍ່ແນ່ໃຈ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ກິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ກິກສຸຕີສົງຄ໌ຍັງບໍ່ພ້ອມພຽງກັນ ກິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ກິກສຸບໍ່ແນ່ໃຈ ກິກສຸຕີສົງຄ໌ຍັງບໍ່ພ້ອມພຽງກັນ ກິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ກິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ກິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ກັມ ຄືການແຕ່ງຕັ້ງກິກສຸສັ່ງສອນກິກສຸຕີ (ວິ. ອ. ໔/໑໕໐/໓໓໑)

ກັມທີ່ທຳບໍ່ຖືກຕ້ອງ ກິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ກິກສຸຕີສົງຄ໌ຍັງບໍ່ພ້ອມພຽງກັນ ກິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ກິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ກິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ກິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ກິກສຸຕີສົງຄ໌ພ້ອມພຽງກັນແລ້ວ ກິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ກິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ກິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ກິກສຸບໍ່ແນ່ໃຈ ກິກສຸຕີສົງຄ໌ພ້ອມພຽງກັນແລ້ວ ກິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ກິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ກິກສຸສຳຄັນວ່າພ້ອມພຽງກັນແລ້ວສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ກິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ກິກສຸຕີສົງຄ໌ພ້ອມພຽງກັນແລ້ວ ກິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ກິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ກິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົດນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ເຣື່ອງກິກຂຸເປັນໄຂ້ ຈົບ

ເຊີງອັນຖະ :

໑ ການຈັນຄຕາໂກຊນະ ມີໄດ້ ໒ ກໍຣະນີ (໑) ທາຍົກນິມົນຕ໌ໄປຈັນ (໒) ກິກຂຸອອກປາກຂໍກັຕຕາຫານມາຈັນ (ວິ. ປ. ກ/໓໒໑/໒໔໑) ຄືທາຍົກນິມົນຕ໌ກິກຂຸຕັ້ງແຕ່ ໔ ຮູບຂຶ້ນໄປພ້ອມກັນໄປຈັນໂດຍອອກຊື່ອາຫານ ກິກຂຸໄປພ້ອມກັນຮັບປະເຄນພ້ອມກັນ ຈັນພ້ອມກັນ ແຕ່ຖືການຮັບປະເຄນພ້ອມກັນເປັນປະມານ ຖ້າຮັບປະເຄນແຍກກັນ ບໍ່ຕ້ອງອາບັຕິ ນີ້ຈັດເປັນຄຕາໂກຊນະໂດຍທາຍົກນິມົນຕ໌ ແລະອີກກໍຣະນີນຶ່ງ ກິກຂຸຕັ້ງແຕ່ ໔ ຮູບຂຶ້ນໄປ ຢືນຫລືນັ່ງຢູ່ດ້ວຍກັນເຫັນອຸບາສິກແລ້ວອອກປາກຂໍວ່າ ທ່ານຈົ່ງຖວາຍກັຕຕາຫານແກ່ອາຕມາທັງ ໔ ຮູບ ຫລືເຫັນຕ່າງຄາວກັນ ແລ້ວຕ່າງ

ອອກປາກຂໍຮ່ວມກັນ ຫລືຕ່າງຄາວກັນວ່າ ທ່ານຈົ່ງຖວາຍພັຕຕາຫານແກ່ອາຕມາ ທ່ານຈົ່ງຖວາຍພັຕຕາຫານແກ່ອາຕມາ ແລ້ວຈະໄປພ້ອມກັນ ຫລືໄປແຍກກັນ ຈະຮັບປະເຄນພັຕຕາຫານແລ້ວຈັນພ້ອມກັນ ຫລືແຍກກັນຈັນກໍຕາມ ຕ້ອງອາບັຕິເພາະຖືການຮັບປະເຄນພ້ອມກັນເປັນປະມານນີ້ ຈັດເປັນຄຕາໂກຊນະໂດຍການ ອອກປາກຂໍ (ວິ. ອ. ໒/໒໑໗-໗/໓໔໖-໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂກຊນວັຄ ໒. ຄຕາໂກຊນສິກຂາບົທ

ພຣະອນຸບັນຍັດ

ຊົງອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນສມັຍທີ່ຖວາຍຈີວອນ

[໒໑໑] ສມັຍນັ້ນ ພວກຊາວບ້ານກະກຽມພັຕຕາຫານພ້ອມຈີວອນໃນສມັຍທີ່ຈະຖວາຍຈີວອນ ແລ້ວນິມົນຕ໌ພິກຂຸທັງຫລາຍດ້ວຍຕັ້ງໃຈວ່າ "ພວກເຮົານິມົນຕ໌ພິກຂຸທັງຫລາຍຈັນແລ້ວຈະໃຫ້ຄອງຈີວອນ" ພິກຂຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະກາຄຊົງຫ້າມການຈັນຄຕາໂກຊນະ" ບໍ່ຮັບນິມົນຕ໌ ຈຶ່ງໄດ້ຈີວອນພຽງເລັກນ້ອຍ ພິກຂຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນສມັຍທີ່ຖວາຍຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກຂຸຕ້ອງອາບັຕິປາຈິຕຕິຍ໌ ເພາະຈັນຄຕາໂກຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງຊົງອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນສມັຍທີ່ທຳຈີວອນ

[໒໑໒] ສມັຍນັ້ນ ພວກຊາວບ້ານນິມົນຕ໌ພວກພິກຂຸຜູ້ທຳຈີວອນຈັນພັຕຕາຫານ ພິກຂຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະກາຄຊົງຫ້າມການຈັນຄຕາໂກຊນະ" ຈຶ່ງບໍ່ຮັບນິມົນຕ໌ ພິກຂຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງ

ຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຈັນຄຕໂພຊນະໄດ້ໃນສມັຍທີ່ທຳຈີວອນ" ແລ້ວຈຶ່ງ ຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂພຊນວັຄ ໘. ຄຕໂພຊນສິກຂາບົທ ພຣະອນຸບັນຍັດ

ພຣະອນຸບັນຍັດ

ພິກຂຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນຄຕໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ຈັນຄຕໂພຊນະໄດ້ໃນສມັຍທີ່ຍ່າງທາງໄກ

[໒໑໓] ສມັຍນັ້ນ ພິກຂຸທັງຫລາຍຍ່າງທາງໄກໄປກັບພວກຊາວບ້ານ ຄັ້ງນັ້ນ ພິກຂຸເຫລົ່ານັ້ນ ໄດ້ກ່າວກັບພວກຊາວບ້ານເຫລົ່ານັ້ນດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດຖ້າຈັກບຶດ ພວກອາຕມາຈະໄປບິຕຫບາຕ" ພວກຊາວບ້ານໄດ້ກ່າວກັບພິກຂຸເຫລົ່ານັ້ນຢ່າງນີ້ວ່າ "ພຣະຄຸຕເຈົ້າທັງຫລາຍ ນິມົນຕ໌ພວກທ່ານຈັນທີ່ນີ້ແຫລະ" ພິກຂຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການຈັນຄຕໂພຊນະ" ຈຶ່ງບໍ່ຮັບແລ້ວໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຈັນຄຕໂພຊນະໄດ້ໃນສມັຍທີ່ຍ່າງທາງໄກ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກຂຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນຄຕໂພຊນະນອກສມັຍ ສມັຍໃນຂໍ້ນັ້ນຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕໜ໌] ໔. ໂກຊນວັຄ ໔. ຄຕາໂກຊນສິກຂາບົທ ພຣະອນຸບັນຍັດ

ເຣື່ອງຊົງອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນສມັຍທີ່ໂດຍສາຣເຮືອ

[໔໑໔] ສມັຍນັ້ນ ກິກຊຸທັງຫລາຍໂດຍສາຣເຮືອໄປກັບພວກຊາວບ້ານຄັ້ງນັ້ນກິກຊຸເຫລົ່ານັ້ນໄດ້ກ່າວກັບພວກຊາວບ້ານເຫລົ່ານັ້ນຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດນຳເຮືອເຂົ້າທຽບທີ່ຝັ່ງບຶດນຶ່ງ ພວກອາຕມາຈະໄປບິຕທບາຕ" ພວກຊາວບ້ານເຫລົ່ານັ້ນຈຶ່ງກ່າວຢ່າງນີ້ວ່າ "ພຣະຄຸຕເຈົ້າທັງຫລາຍ ນິມົນຕ໌ພວກທ່ານຈັນທີ່ນີ້ແຫລະ" ກິກຊຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະກາຄຊົງຫ້າມການຈັນຄຕາໂກຊນະ" ຈຶ່ງບໍ່ຮັບ ແລ້ວໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກຊຸທັງຫລາຍວ່າ "ກິກຊຸທັງຫລາຍ ເຮົາອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນສມັຍທີ່ໂດຍສາຣເຮືອ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ກິກຊຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນຄຕາໂກຊນະນອກສມັຍ ສມັຍໃນຂໍ້ນັ້ນຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ສມັຍທີ່ໂດຍສາຣເຮືອ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຊຸທັງຫລາຍຢ່າງນີ້

ເຣື່ອງຊົງອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນມຫາສມັຍ

[໔໑໕] ສມັຍນັ້ນ ກິກຊຸທັງຫລາຍໃນຖິ່ນຕ່າງໆອອກພັນສາແລ້ວ ໄດ້ຍ່າງທາງມາເຝົ້າພຣະຜູ້ມີພຣະກາຄທີ່ກຸງຣາຊຄຶຫ໌ ພວກຊາວບ້ານເຫັນກິກຊຸທັງຫລາຍຜູ້ມາຈາກຕ່າງຖິ່ນ ຈຶ່ງນິມົນຕ໌ຈັນກັຕຕາຫາຣກິກຊຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະກາຄຊົງຫ້າມການຈັນຄຕາໂກຊນະ" ຈຶ່ງບໍ່ຮັບນິມົນຕ໌ ແລ້ວໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກຊຸທັງຫລາຍວ່າ "ກິກຊຸທັງຫລາຍ ເຮົາອນຸຍາຕໃຫ້ຈັນຄຕາໂກຊນະໄດ້ໃນມຫາສມັຍ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນຄຕາໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄືສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ສມັຍທີ່ໂດຍສາຣເຮືອ ມຫາສມັຍ ນີ້ ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ຈັນຄຕາໂພຊນະໄດ້ໃນສມັຍທີ່ເປັນພັຕຕາຫາຣຂອງສມຕະ

[໔໑໖] ສມັຍນັ້ນ ພຣະຍາຕຮ່ວມສາຍໂລຫິຕຂອງພຣະເຈົ້າພິມພິສາຣຈອມທັພມຄລຣັຖຊົງຜນວຊ ໃນສຳນັກຂອງອາຊີວກທັງຫລາຍ ຄັ້ງນັ້ນ ອາຊີວກນັ້ນໄດ້ເຂົ້າໄປເຝົ້າພຣະເຈົ້າພິມພິສາຣເຖິງ ພຣະຣາຊສຳນັກ ຄັນເຖິງແລ້ວໄດ້ຖວາຍພຣະພຣພຣະເຈົ້າພິມພິສາຣຈອມທັພມຄລຣັຖດັ່ງນີ້ວ່າ "ມຫາບພິຕຣ ອາຕມາປຣາຖນາຈະຈັດພັຕຕາຫາຣຖວາຍນັກບວຊຜູ້ເປັນເຈົ້າລັທລີທັງຫມົດ" ພຣະເຈົ້າພິມພິສາຣຈອມທັພມຄລຕຣັສວ່າ "ພຣະຄຸຕເຈົ້າ ຖ້າທ່ານນິມົນຕ໌ພິກສຸສົງຄ໌ມີພຣະພຸທລ ເຈົ້າເປັນປຣະມຸຂໃຫ້ມາຈັນກ່ອນ ໂຍມຈຶ່ງຈະຈັດຖວາຍ"

ຄັ້ງນັ້ນ ອາຊີວກນັ້ນສົ່ງທູຕໄປຫາພິກສຸທັງຫລາຍໃຫ້ອາຣາລນາວ່າ "ຂໍນິມົນຕ໌ພິກສຸທັງຫລາຍຮັບ ພັຕຕາຫາຣຂອງຂ້າພະເຈົ້າເພື່ອຈັນໃນມື້ອື່ນນີ້" ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະ ພາຄຊົງຫ້າມກາຣຈັນຄຕາໂພຊນະ" ຈຶ່ງບໍ່ຮັບນິມົນຕ໌ ຄັ້ງນັ້ນ ອາຊີວກນັ້ນຈຶ່ງເຂົ້າໄປເຝົ້າພຣະຜູ້ມີ ພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ສົນທນາປາສັຍກັບພຣະຜູ້ມີພຣະພາຄພໍເປັນທີ່ບຣຣເທິງໃຈ ພໍເປັນທີ່ຣະນຶກເຖິງກັນ ແລ້ວໄດ້ຢືນຢູ່ ຓະ ທີ່ສົມຄວຣ ອາຊີວກຜູ້ຢືນຢູ່ ຓະ ທີ່ສົມຄວຣນັ້ນໄດ້ ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ທ່ານພຣະໂຄດົມກໍເປັນບັພຊິຕ ຂ້າພະເຈົ້າກໍເປັນບັພຊິຕ ບັພຊິຕຄວຣຈະຮັບພັຕຕາຫາຣຂອງບັພຊິຕ ຂໍທ່ານພຣະໂຄດົມພ້ອມກັບພິກສຸສົງຄ໌ໂປຣດຮັບ ພັຕຕາຫາຣຂອງຂ້າພະເຈົ້າເພື່ອຈັນໃນມື້ອື່ນນີ້ເຖີດ" ພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ໂດຍດຸສນີພາພ ຄັນອາຊີວກຊາບວ່າພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ແລ້ວ ຈຶ່ງຖວາຍອພິວາທແລ້ວຈາກໄປ ລຳດັບ ນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍ ວ່າ "ພິກສຸທັງຫລາຍເຮົາອນຸຍາຕໃຫ້ຈັນຄຕາໂພຊນະໄດ້ໃນສມັຍທີ່ເປັນພັຕຕາຫາຣຂອງສມຕະ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໑໗] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນຄຕາໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່

ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ສມັຍທີ່ໂດຍສາຣເຮືອ ມຫາສມັຍ ສມັຍທີ່ເປັນກັຕຕາຫາຣຂອງສມຕ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທວິກັງຄ໌

[໔໑໗] ທີ່ຊື່ວ່າ ຈັນຄຕໂກຊນະ ຄື ກິກຂຸ ໔ ຮູບທີ່ເຂົານິມົນຕ໌ດ້ວຍໂກຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ ແລ້ວໄປຈັນ ນີ້ຊື່ວ່າຈັນຄຕໂກຊນະ໑

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ສມັຍທີ່ເປັນໄຂ້ ຄື ທີ່ສຸດແມ່ນຈົນເມື່ອຕີນແຕກ ກິກຂຸຄິດວ່າ ເປັນສມັຍທີ່ເປັນໄຂ້ ເພິງຈັນໄດ້

ທີ່ຊື່ວ່າ ສມັຍທີ່ຖວາຍຈີວອນ ຄື ເມື່ອຍັງບໍ່ໄດ້ກຣານກຖິນ ກຳຫນົດເອົາເດືອນສຸດທ້າຍແຫ່ງຣະດູຝົນ ເມື່ອກຣານກຖິນແລ້ວມີກຳຫນົດເວລາ ໕ ເດືອນ ກິກຂຸຄິດວ່າ ເປັນສມັຍທີ່ຖວາຍຈີວອນ ເພິງຈັນໄດ້

ເຊີງອັນຖະ :

໑ ຄຕໂກຊນំ ຈັນຄຕໂກຊນະ ຄື ຄຕສຸສ ໂກຊເນ ຈັນໂກຊນະ(ອາຫາຣ)ຂອງຄຕະ (ວິ. ອ. ໒/໔໑໗-໔໑໘/໓໔໖),

ຄເຕນ ລທຸສຕຸຕາ ຄຕສຸສ ສນຸຕເກ ໂກຊເນ ຈັນໂກຊນະທີ່ເປັນຂອງຄຕະຊຶ່ງຄຕະໄດ້ມາ (ກັງຂາ. ຜີກາ ໔໐໒)

ທີ່ຊື່ວ່າ ສມັຍທີ່ທຳຈີວອນ ຄື ເມື່ອກິກຂຸກຳລັງທຳຈີວອນ ກິກຂຸຄິດວ່າ ເປັນສມັຍທີ່ທຳຈີວອນ ເພິງຈັນໄດ້

ທີ່ຊື່ວ່າ ສມັຍທີ່ຍ່າງທາງໄກ ຄື ກິກຂຸຄິດວ່າ ເຮົາຈະຍ່າງທາງເຄິ່ງໂຍຊນ໌ ເພິງຈັນໄດ້ ເມື່ອກິກຂຸນັ້ນໄປ ເພິງຈັນໄດ້ ກັບມາເຖິງແລ້ວ ເພິງຈັນໄດ້

ທີ່ຊື່ວ່າ ສມັຍທີ່ໂດຍສາຣເຮືອ ຄື ກິກຂຸຄິດວ່າ ເຮົາຈະໂດຍສາຣເຮືອ ເພິງຈັນໄດ້ ເມື່ອກິກຂຸນັ້ນໂດຍສາຣໄປ ເພິງຈັນໄດ້ ຂາກັບ ເພິງຈັນໄດ້

ທີ່ຊື່ວ່າ ມຫາສມັຍ ຄື ຄາວມີກິກຂຸ ໒-໓ ຮູບທຽວບິຕຫບາຕພອລ້ຽງກັນ ເມື່ອມີກິກຂຸຮູບທີ ໔ ມາຮວມດ້ວຍ ບໍ່ພອລ້ຽງກັນ ກິກຂຸຄິດວ່າ ເປັນມຫາສມັຍ ເພິງຈັນໄດ້

ທີ່ຊື່ວ່າ ສມັຍທີ່ເປັນກັຕຕາຫາຣຂອງສມຕ ຄື ໃນຄາວມີປຣິພາຊກຈັດກັຕຕາຫາຣຖວາຍ ກິກຂຸຄິດ

ວ່າ ເປັນສມັຍທີ່ເປັນກັຕຕາຫາຣຂອງສມຕາ ເພິງຈັນໄດ້
ກິກຸຮັບດ້ວຍຄິດວ່າ "ຈະຈັນ" ນອກສມັຍ ຕ້ອງອາບັຕິທຸກກດ ຈັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔໑໙] ຄຕາໂກຊນະ ກິກຸສຳຄັນວ່າຄຕາໂກຊນະ ຈັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌
ຄຕາໂກຊນະ ກິກຸບໍ່ແນ່ໃຈ ຈັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌
ຄຕາໂກຊນະ ກິກຸສຳຄັນວ່າບໍ່ແມ່ນຄຕາໂກຊນະ ຈັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກດ

ບໍ່ແມ່ນຄຕາໂກຊນະ ກິກຸສຳຄັນວ່າຄຕາໂກຊນະ ຈັນນອກສມັຍ ຕ້ອງອາບັຕິທຸກກດ
ບໍ່ແມ່ນຄຕາໂກຊນະ ກິກຸບໍ່ແນ່ໃຈ ຈັນນອກສມັຍ ຕ້ອງອາບັຕິທຸກກດ
ບໍ່ແມ່ນຄຕາໂກຊນະ ກິກຸສຳຄັນວ່າບໍ່ແມ່ນຄຕາໂກຊນະ ຈັນນອກສມັຍ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂກຊນວັຄ ໒. ຄຕາໂກຊນສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ກິກຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໒໐] ໑. ກິກຸຈັນໃນສມັຍ
໒. ກິກຸ ໒-໓ ຮູບຈັນຮ່ວມກັນ
໓. ກິກຸຫລາຍຮູບທ່ຽວບິນທບາຕແລ້ວປະຊຸມຈັນຮ່ວມກັນ
໔. ກິກຸຈັນກັຕຕາຫາຣທີ່ເຂົາຖວາຍເປັນນິຕຍ໌
໕. ກິກຸຈັນກັຕຕາຫາຣທີ່ເຂົາຖວາຍຕາມສລາກ
໖. ກິກຸຈັນກັຕຕາຫາຣທີ່ເຂົາຖວາຍໃນປັກຫ໌
໗. ກິກຸຈັນກັຕຕາຫາຣທີ່ເຂົາຖວາຍໃນວັນອຸໂບສົຖ
໘. ກິກຸຈັນກັຕຕາຫາຣທີ່ເຂົາຖວາຍໃນວັນປາຜິບົທ໑

໙. ກິກຸຈັນກັຕຕາຫາຣທຸກຂມິດ ຍົກເວັ້ນໂກຊນະ ໕
໑໐. ກິກຸວິກົລຈິຕ
໑໑. ກິກຸຕົ້ນບັນຍັດ

ຄຕໂກຊນສິກຂາບົທທີ ໔ ຈົບ

ເຊີງອັນຖະ :
໑ ວັນປາຜົບົທ ຄືວັນແຮມ ໑ ຄ່ຳ ທາຍົກຄິດວ່າວັນອຸໂບສົຖມີຜູ້ສັດທາເຫລື້ອມໃສຖວາຍກັຕຕາຫາຣກັນມາກ ສ່ວນວັນແຮມ ໑ ຄ່ຳ ກິກຸທັງຫລາຍລຳບາກເຣື້ອງກັຕຕາຫາຣ ທານທີ່ຖວາຍໃນວັນປາຜົບົທ ເປັນການຖວາຍກິກຂາຫາຣທີ່ຫາໄດ້ຍາກ ອີກປະການນຶ່ງ ກິກຸສົງຟ໌ລົງປາຕິໂມກຂ໌ແລ້ວວັນຮຸ່ງຂຶ້ນຈຶ່ງມີສີລບໍຣິສຸດຄ໌ ການຖວາຍທານແກ່ທ່ານຍ່ອມມີຜລານິສົງສ໌ມາກ ການຖວາຍທານໃນວັນປາຜົບົທ ຄືຖວາຍຖັດຈາກວັນຂຶ້ນ ໑໕ ຄ່ຳ ໄປນຶ່ງວັນ (ວິ. ອ. ໓/໓໗໗-໓໗໘)

ພຣະວິນັຍປີດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຟ໌] ໔. ໂກຊນວັຄ ໓. ປຣັມປຣໂກຊນສິກຂາບົທ
ນິທານວັຕຖຸ

໔. ໂກຊນວັຄ

໓. ປຣັມປຣໂກຊນສິກຂາບົທ
ວ່າດ້ວຍການສັນປຣັມປຣໂກຊນະ

ເຣື້ອງຊາຍກັມກອນຜູ້ຍາກຈົນ
[໔໔໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຄເຈົ້າປະທັບຢູ່ ຓະ ກູຜາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພວກຊາວບ້ານຈັດລຳດັບອາຣະຖວາຍກັຕຕາຫາຣຢ່າງປານີຕໄວ້ໃນ ກຸງເວສາລີ ຄັ້ງນັ້ນ ຊາຍກັມກອນຍາກຈົນຄົນນຶ່ງໄດ້ມີຄວາມຄິດດັ່ງນີ້ວ່າ ທານນີ້ບໍ່ແມ່ນເປັນຂອງຕ່ຳຕ້ອຍເພາະພວກຊາວບ້ານເຫລົ່ານີ້ໄດ້ຊ່ອຍກັນຈັດກັຕຕາຫາຣໂດຍເຄົາຣົພ ເອົາເຖີດ ແມ່ນຕົວເຮົາກໍເພິ່ງຈັດກັຕຕາຫາຣດ້ວຍ ຄັ້ງນັ້ນ ຊາຍກັມກອນຜູ້ຍາກຈົນຄົນນັ້ນໄດ້ເຂົ້າໄປຫານາຍຈ້າງຊື່ກິຣປຕິກະເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບນາຍກິຣປຕິກະດັ່ງນີ້ວ່າ "ນາຍທ່ານ ຜູ້ຂ້າຕ້ອງການຈັດກັຕຕາຫາຣ

ຖວາຍກິກຂຸສົງຄ໌ຊຶ່ງມີພຣະພຸທລເຈົ້າເປັນປຣະມຸຂ ທ່ານກຣຸດາໃຫ້ຄ່າຈ້າງແກ່ຜູ້ຂ້າດ້ວຍ" ນາຍກິຣປຕິກະມີສັດທາເຫລື້ອມໃສຢູ່ແລ້ວຈຶ່ງໄດ້ໃຫ້ຄ່າຈ້າງແກ່ເຂົາຫລາຍກວ່າປົກຕິ ຄັ້ງນັ້ນ ຊາຍກັມກອນຜູ້ຍາກຈົນຄົນນັ້ນໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອກິວາທພຣະຜູ້ມີພຣະກາຄ ແລ້ວນັ່ງ ຓະ ທີ່ສົມຄວຣ ຊາຍກັມກອນຜູ້ຍາກຈົນຄົນນັ້ນນັ່ງ ຓະທີ່ສົມຄວຣແລ້ວໄດ້ຂາບອາຣາຊນາພຣະຜູ້ມີພຣະກາຄດັ່ງນີ້ວ່າ "ຂໍພຣະຜູ້ມີພຣະກາຄພ້ອມກັບກິກຂຸສົງຄ໌ໄປຣດຮັບກັຕຕາຫາຣຂອງຂ້າພຣະພຸທລເຈົ້າເພື່ອຈັນໃນມື້ອື່ນນີ້ເຖີດ ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສວ່າ "ອຸບາສົກ ກິກຂຸສົງຄ໌ມີຈຳນວນຫລາຍ ທ່ານຈົ່ງຊາບ"ຊາຍກັມກອນຜູ້ຍາກຈົນຂາບທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ເຖິງກິກຂຸສົງຄ໌ມີຈຳນວນຫລາຍ ກໍບໍ່ເປັນຫຍັງ ຂ້າພຣະພຸທລເຈົ້າຈັດຕຽມຜລພຸທຣາໄວ້ມາກມາຍ ນ້ຳພຸທຣາມີພຽງພໍ"

ເຊີງອັນຖະ :

໑ ວິກັນຍນຶ່ງ ສາສນານີ້ຫລືກາຣຖວາຍທານພຣະສົງຄ໌ຊຶ່ງມີພຣະພຸທລເຈົ້າເປັນປຣະມຸຂນີ້ ບໍ່ແມ່ນເຣື້ອງຕ່ຳຕ້ອຍ ຄືບໍ່ແມ່ນ

ເຣື້ອງເລັກນ້ອຍຊື່ວຊາມ (ວິ. ອ. ໓/໑໒໑/໓໕໔)

ພຣະຜູ້ມີພຣະກາຄຊົງຮັບນິມົນຕ໌ໂດຍດຸສນີກາພ ຄັນຊາຍກັມກອນຜູ້ຍາກຈົນຊາບວ່າພຣະຜູ້ມີພຣະກາຄຊົງຮັບນິມົນຕ໌ແລ້ວຈຶ່ງລຸກຂຶ້ນຈາກອາສນະ ຖວາຍອກິວາທພຣະຜູ້ມີພຣະກາຄ ທຳປຣະທັກຊິນ (ວຽນໄປທາງຂວາ)ແລ້ວຈາກໄປ

ກິກຂຸທັງຫລາຍໄດ້ຊາບຂ່າວວ່າ ຊາຍກັມກອນຜູ້ຍາກຈົນນິມົນຕ໌ກິກຂຸສົງຄ໌ມີພຣະພຸທລເຈົ້າເປັນປຣະມຸຂເພື່ອຈັນກັຕຕາຫາຣໃນມື້ອື່ນນີ້ ນ້ຳພຸທຣາມີພຽງພໍ ກິກຂຸເຫລົ່ານັ້ນໄດ້ທຽວບິນທບາຕແລ້ວຈັນແຕ່ເຊົ້າໆເລີຍ ພວກຊາວບ້ານໄດ້ຊາບຂ່າວວ່າ ຊາຍກັມກອນຜູ້ຍາກຈົນນິມົນຕ໌ກິກຂຸສົງຄ໌ມີພຣະພຸທລເຈົ້າເປັນປຣະມຸຂ ພວກຊາວບ້ານເຫລົ່ານັ້ນຈຶ່ງໄດ້ນຳຂາທນີຍໂກຊນີຍາຫາຣຈຳນວນຫລາຍໄປໃຫ້ຊາຍກັມກອນຜູ້ຍາກຈົນ ຄັ້ງນັ້ນແລ ຕລອດຣາຕຣີນັ້ນ ຊາຍກັມກອນຜູ້ຍາກຈົນໄດ້ຈັດຕຽມຂາທນີຍໂກຊນີຍາຫາຣຢ່າງປານີຕ ໃຫ້ຄົນໄປຂາບທູລກັຕຕກາລວ່າ "ໄດ້ເວລາແລ້ວ ພຣະພຸທລເຈົ້າຂ້າ ກັຕຕາຫາຣເສັດແລ້ວ ພຣະພຸທລເຈົ້າຂ້າ"

ຄັນເວລາເຊົ້າ ພຣະຜູ້ມີພຣະກາຄຊົງຄອງອັນຕຣວາສກ ຖືບາຕຣແລະຈີວອນສເດັຈໄປເຖິງທີ່ຢູ່ຂອງຊາຍກັມກອນຜູ້ຍາກຈົນ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດຖວາຍພ້ອມກິກຂຸສົງຄ໌ເທື່ອນັ້ນ ຊາຍກັມກອນຜູ້ຍາກຈົນຖວາຍກັຕຕາຫາຣກິກຂຸທັງຫລາຍທີ່ທຳຈັນ ກິກຂຸທັງຫລາຍໄດ້

ກ່າວຢ່າງນີ້ວ່າ "ອຸບາສົກ ຈົ່ງຖວາຍແຕ່ນ້ອຍເຖີດ ອຸບາສົກ ຈົ່ງຖວາຍແຕ່ນ້ອຍເຖີດ" ຊາຍກັມກອນຜູ້ຍາກຈົນກ່າວວ່າ "ພຣະຄຸນເຈົ້າທັງຫລາຍ ພວກພຣະຄຸນເຈົ້າຢ່າເຂົ້າໃຈວ່າຜູ້ນີ້ເປັນກັມກອນຍາກຈົນແລ້ວຮັບແຕ່ນ້ອຍໆເລີຍ ຜູ້ຂ້າໄດ້ຈັດຕຽມຂາທນີຍໂພຊນີຍາຫານໄວ້ຢ່າງ ພຽງພໍ ພຣະຄຸນເຈົ້າທັງຫລາຍໂປຣດຮັບໃຫ້ພໍແກ່ຄວາມຕ້ອງການເຖີດ" ກິກສຸທັງຫລາຍກ່າວວ່າ "ພວກອາຕມາສັນແຕ່ນ້ອຍ ບໍ່ແມ່ນເພາະເຫຕຸນັ້ນ ແຕ່ພວກອາຕມາໄດ້ທຽວບິນທບາຕສັນມາແຕ່ເຊົ້າແລ້ວຕ່າງຫາກ ດັ່ງນັ້ນ ພວກອາຕມາຈຶ່ງຂໍຮັບແຕ່ຫນ້ອຍໆ"

ລຳດັບນັ້ນ ຊາຍກັມກອນຜູ້ຍາກຈົນຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍທີ່ເຮົານິມົນຕ໌ໄວ້ແລ້ວ ຈຶ່ງໄດ້ໄປສັນໃນທີ່ອີກແຫ່ງອື່ນລະ ເຮົາບໍ່ສາມາດຈະຖວາຍໃຫ້ພໍແກ່ຄວາມຕ້ອງການຫລື"

ກິກສຸທັງຫລາຍໄດ້ຍິນຊາຍກັມກອນຜູ້ຍາກຈົນຕຳຫນິ ປະນາມ ໂພນທະນາ ບັນດາກິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດກິກສຸທັງຫລາຍຮັບນິມົນຕ໌ໄວ້ທີ່ນຶ່ງແລ້ວຈຶ່ງໄປສັນໃນທີ່ອີກແຫ່ງນຶ່ງລະ" ຄັນກິກສຸທັງຫລາຍຕຳຫນິກິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກສຸເຫລົ່ານັ້ນວ່າ "ກິກສຸທັງຫລາຍ ຊາບວ່າ ກິກສຸທັງຫລາຍຮັບນິມົນຕ໌ໄວ້ທີ່ນຶ່ງ ແລ້ວໄປສັນອີກໃນທີ່ອີກແຫ່ງນຶ່ງ ແມ່ນແທ້ບໍ" ກິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທຊເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທຊເຈົ້າຊົງຕຳຫນິວ່າ "ກິກສຸທັງຫລາຍ ຈັ່ງໃດໂມຄບຸຣຸຫເຫລົ່ານັ້ນຈຶ່ງຮັບນິມົນຕ໌ໄວ້ທີ່ນຶ່ງແລ້ວໄປສັນໃນທີ່ອີກແຫ່ງນຶ່ງລະ ກິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນປຣັມປຣໂພຊນະ໑

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກສຸທັງຫລາຍຢ່າງນີ້

ເຣື່ອງຊາຍກັມກອນຜູ້ຍາກຈົນ ຈົບ

ເລື່ອງພິກຂຸເປັນໄຂ້

[໔໔໔] ສມັຍນັ້ນ ພິກຂຸຮູບນຶ່ງເປັນໄຂ້ ພິກຂຸອີກຮູບນຶ່ງນຳບິນທບາຕໄປເຖິງທີ່ຢູ່ ຄັນເຖິງແລ້ວ ໄດ້ກ່າວກັບພິກຂຸຮູບທີ່ເປັນໄຂ້ນັ້ນດັ່ງນີ້ວ່າ "ນິມົນຕ໌ທ່ານສັນເຖີດ ຂນ້ອຍ" ພິກຂຸເປັນໄຂ້ຕອບວ່າ "ບໍ່ລະຂນ້ອຍ ຜູ້ຂ້າມີພັຕຕາຫານທີ່ຫວັງວ່າຈະໄດ້"

ເຊີງອັນຖະ :

໑ ສັນປຣັມປຣໂພຊນະ ຄືພິກຂຸຮັບນິມົນຕ໌ສັນພັຕຕາຫານຂອງທາຍົກຣາຍນຶ່ງແລ້ວ ໄປສັນພັຕຕາຫານຂອງທາຍົກຄົນອື່ນກ່ອນແລ້ວກັບມາສັນຂອງຄົນທຳອິດພາຍຫລັງ ໂດຍບໍ່ໄດ້ຍົກເລີກນິມົນຕ໌ຜູ້ທຳອິດໃຫ້ພິກຂຸຮູບອື່ນ (ກງຂາ. ອ. ໔໕໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂພຊນວັຄ ໓. ປຣັມປຣໂພຊນສິກຂາບົທ

ພຣະອນຸບັນຍັດ

ທາຍົກນຳບິນທບາຕມາຖວາຍພິກຂຸເປັນໄຂ້ຮູບນັ້ນ ໃນເວລາສວາຍ ພິກຂຸເປັນໄຂ້ຮູບນັ້ນສັນບໍ່ໄດ້ຕາມທີ່ຄິດໄວ້ ພິກຂຸທັງຫລາຍໄດ້ນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສັນປຣັມປຣໂພຊນະໄດ້ໃນສມັຍທີ່ເປັນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງລັມມີກຖາເພາະເລື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ພິກຂຸເປັນໄຂ້ສັນປຣັມປຣໂພຊນະໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກຂຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນປຣັມປຣໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເລື່ອງພິກຂຸເປັນໄຂ້ ຈົບ

ຊົງອນຸຍາຕໃຫ້ຈັນປຣັມປຣໂພຊນະໄດ້ໃນສມັຍທີ່ຖວາຍຈີວອນ

[໔໘໓] ສມັຍນັ້ນ ພວກຊາວບ້ານກະກຽມພັຕຕາຫາຣພ້ອມຈີວອນໃນສມັຍທີ່ຈະຖວາຍຈີວອນ ແລ້ວນິມົນຕ໌ພິກສຸທັງຫລາຍດ້ວຍຕັ້ງໃຈວ່າ ພວກເຮົານິມົນຕ໌ພິກສຸທັງຫລາຍຈັນແລ້ວຈະໃຫ້ຄອງຈີວອນ ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການຈັນປຣັມປຣໂພຊນະ" ບໍ່ຮັບນິມົນຕ໌ ຈຶ່ງໄດ້ຈີວອນພຽງເລັກນ້ອຍ ພິກສຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຈັນປຣັມປຣໂພຊນະໄດ້ໃນສມັຍທີ່ຖວາຍຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຈ໌] ໔. ໂພຊນວັຄ ໓. ປຣັມປຣໂພຊນສິກຂາບົທ ພຣະອນຸບັນຍັດ

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນປຣັມປຣໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງຊົງອນຸຍາຕໃຫ້ຈັນປຣັມປຣໂພຊນະໄດ້ໃນສມັຍທີ່ທຳຈີວອນ

[໔໘໔] ສມັຍນັ້ນ ພວກຊາວບ້ານນິມົນຕ໌ພວກພິກສຸຜູ້ທຳຈີວອນຈັນພັຕຕາຫາຣ ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການຈັນປຣັມປຣໂພຊນະ" ຈຶ່ງບໍ່ຮັບນິມົນຕ໌ ພິກສຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຈັນປຣັມປຣໂພຊນະໄດ້ໃນສມັຍທີ່ທຳຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໘໕] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະຈັນປຣັມປຣໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງວິກັປອາຫາຣທີ່ຫວັງວ່າຈະໄດ້

[໔໔໗] ຄັ້ງນັ້ນ ໃນເວລາເຊົ້າ ພຣະຜູ້ມີພຣະກາຄຊົງຄອງອັນຕຣວາສກຖືບາຕຣແລະຈີວອນ ມີທ່ານພຣະອານົນທ໌ເປັນປັຈຈາສມຕະສເດັຈເຂົ້າໄປຕະກູນນຶ່ງ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ພວກຊາວບ້ານໄດ້ຖວາຍໂກຊນາຫາຣແດ່ພຣະຜູ້ມີພຣະກາຄແລະທ່ານພຣະອານົນທ໌ ທ່ານພຣະອານົນທ໌ມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປະເຄນ ພຣະຜູ້ມີພຣະກາຄຮັບສັ່ງວ່າ "ຮັບເຖິດ ອານົນທ໌" ທ່ານພຣະອານົນທ໌ຂາບທູລວ່າ "ຢ່າເລີຍ ພຣະພຸທລເຈົ້າຂ້າ ຂ້າພຣະພຸທລເຈົ້າມີກັຕຕາຫາຣທີ່ຫວັງວ່າຈະໄດ້" ພຣະຜູ້ມີພຣະກາຄຮັບສັ່ງວ່າ "ອານົນທ໌ ຖ້າເຊັ່ນນັ້ນ ທ່ານຈົ່ງວິກັປໄວ້ແລ້ວຮັບ"໑

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກษຸທັງຫລາຍວ່າ "ກິກษຸທັງຫລາຍ ເຮົາອນຸຍາຕໃຫ້ວິກັປກັຕຕາຫາຣທີ່ຫວັງວ່າຈະໄດ້ແລ້ວລັນ ປຣັມປຣໂກຊນະ" ແລ້ວຈຶ່ງຮັບສັ່ງໃຫ້ກິກษຸທັງຫລາຍວິກັປກັຕຕາຫາຣທີ່ຫວັງວ່າຈະໄດ້ ຢ່າງນີ້

ຄຳວິກັປອາຫາຣ

ຜູ້ຂ້າຖວາຍກັຕຕາຫາຣທີ່ຜູ້ຂ້າຫວັງວ່າຈະໄດ້ແກ່ກິກษຸຊື່ນີ້໔

ເຣື້ອງວິກັປອາຫາຣທີ່ຫວັງວ່າຈະໄດ້ ຈົບ

ສິກຂາບົທວິກັງຄ໌

[໔໔໘] ທີ່ຊື່ວ່າ ປຣັມປຣໂກຊນະ ຄື ກິກษຸທີ່ທາຍົກນິມົນຕ໌ດ້ວຍໂກຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງໄວ້ ງົດເວັ້ນໂກຊນະນັ້ນ ໄປລັນໂກຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ ອື່ນຈາກທີ່ຕົນຮັບນິມົນຕ໌ໄວ້ ຢ່າງນີ້ຊື່ວ່າປຣັມປຣໂກຊນະ

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ສມັຍທີ່ເປັນໄຂ້ ຄື ນັ່ງ ໓ະ ອາສນະແຫ່ງດຽວ ບໍ່ອາຈຈະລັນໃຫ້ພໍແກ່ຄວາມຕ້ອງການໄດ້ ກິກษຸຄິດວ່າ ເປັນສມັຍທີ່ເປັນໄຂ້ ເພິ່ງລັນໄດ້

ທີ່ຊື່ວ່າ ສມັຍທີ່ຖວາຍຈີວອນ ຄື ເມື່ອຍັງບໍ່ໄດ້ກຣານກຖິນ ກຳຫນົດເອົາເດືອນສຸດທ້າຍແຫ່ງຣະດູຝົນ ເມື່ອກຣານກຖິນແລ້ວ ມີກຳຫນົດເວລາ ໕ ເດືອນ ກິກษຸຄິດວ່າ ເປັນສມັຍທີ່ຖວາຍຈີວອນ ເພິ່ງລັນໄດ້

ເຊີງອັນຖະ :

໑ ວິກັປກັຕຕາຫາຣ ຄືຍກກັຕຕາຫາຣທີ່ຮັບນິມົນຕ໌ໄວ້ກ່ອນໃຫ້ກິກຸຮູບອື່ນ

໒ ໃນຄັມກີຣ໌ບໍຣິວາຣແລະຄັມກີຣ໌ດີກາມັບກາຣວິກັປກັຕຕາຫາຣເປັນພຣະອນຸບັນຍັດ (ວິ. ປ. ໗/໗໙/໓໔, ສາຣຕຸຖ. ພີກາ ໓/໒໔໙/໗໐, ວິມຕິ. ພີກາ ໒/໒໔໑/໓໗, ກງຂາ. ພີກາ ໔໐໔)

ທີ່ຊື່ວ່າ ສມັຍທີ່ທຳຈີວອນ ຄື ເມື່ອກິກຸກຳລັງທຳຈີວອນ ກິກຸຄິດວ່າ ເປັນສມັຍທີ່ທຳຈີວອນ ເພີງຈັນໄດ້

ກິກຸຮັບດ້ວຍຄິດວ່າ "ຈະຈັນ" ນອກສມັຍ ຕ້ອງອາບັຕິທຸກກຍ ຈັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໒໔໗] ປຣັມປຣໂກຊນະ ກິກຸສຳຄັນວ່າປຣັມປຣໂກຊນະ ຈັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ປຣັມປຣໂກຊນະ ກິກຸບໍ່ແນ່ໃຈ ຈັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ປຣັມປຣໂກຊນະ ກິກຸສຳຄັນວ່າບໍ່ແມ່ນປຣັມປຣໂກຊນະ ຈັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຍ

ບໍ່ແມ່ນປຣັມປຣໂກຊນະ ກິກຸສຳຄັນວ່າປຣັມປຣໂກຊນະ ຕ້ອງອາບັຕິທຸກກຍ

ບໍ່ແມ່ນປຣັມປຣໂກຊນະ ກິກຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຍ

ບໍ່ແມ່ນປຣັມປຣໂກຊນະ ກິກຸສຳຄັນວ່າບໍ່ແມ່ນປຣັມປຣໂກຊນະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໔໘] ໑. ກິກຸຈັນໃນສມັຍ

໒. ກິກຸວິກັປແລ້ວຈັນ

໓. ກິກຸຈັນບິຕທບາຕທີ່ຮັບນິມົນຕ໌ໄວ້ ໒-໓ ບ່ອນຣວມກັນ

໔. ກິກຸຈັນຕາມລຳດັບທີ່ຮັບນິມົນຕ໌

໕. ກິກຸທີ່ຊາວຕາແສງທັງຫມົດນິມົນຕ໌ແລ້ວຈັນໃນທີ່ແຫ່ງນຶ່ງໃນຕາແສງນັ້ນ

໓. ພິກຂຸທີ່ສມາຄົມທັງຫມົດນິມົນຕ໌ແລ້ວຈັນໃນທີ່ແຫ່ງນຶ່ງໃນສມາຄົມນັ້ນ
໗. ພິກຂຸຮັບນິມົນຕ໌ແຕ່ບອກວ່າຈະຮັບພິກຂາ
໘. ພິກຂຸຈັນພັດຕາຫາຣທີ່ເຂົາຖວາຍເປັນນິຕຍ໌
໙. ພິກຂຸຈັນພັດຕາຫາຣທີ່ເຂົາຖວາຍຕາມສລາກ
໑໐. ພິກຂຸຈັນພັດຕາຫາຣທີ່ເຂົາຖວາຍໃນປັກຂ໌
໑໑. ພິກຂຸຈັນພັດຕາຫາຣທີ່ເຂົາຖວາຍໃນວັນອຸໂບສົຖ
໑໒. ພິກຂຸຈັນພັດຕາຫາຣທີ່ເຂົາຖວາຍໃນວັນປາຜົບົທ
໑໓. ພິກຂຸຈັນອາຫາຣທຸກຊນິດຍົກເວັ້ນໂພຊນະ ໕
໑໔. ພິກຂຸວິກົລຈິຕ
໑໕. ພິກຂຸຕົ້ນບັນຍັດ

ປຣົມປຣໂພຊນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂພຊນວັຄ ໔. ກາຕມາຕຸສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໔. ກາຕມາຕຸສິກຂາບົທ

ວ່າດ້ວຍມາຣດາຂອງນາງກາຕາ

ເຣື້ອງອຸບາສິກາມາຣດາຂອງນາງກາຕາ

[໔໓໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຸຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຕຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອຸບາສິກາມາຣດາຂອງນາງກາຕາ ເປັນຜູ້ມີສັດທາເຫລື້ອມໃສ ນາງໄດ້ຍົກລົດາຊື່ກາຕາໃຫ້ຊາຍຫນຸ່ມຜູ້ນຶ່ງໃນຫມູ່ບ້ານແຫ່ງນຶ່ງ ຕໍ່ມາ ນາງກາຕາໄດ້ມາບ້ານມາຣດາດ້ວຍກໍຣຕິຍກິຈບາງຢ່າງ ຝ່າຍສາມີຂອງນາງກາຕາສົ່ງຂ່າວມາເຖິງນາງກາຕາວ່າ "ຈົ່ງກັບມາເຖີດ ກາຕາ ຂ້ອຍຕ້ອງກາຣໃຫ້ກາຕາກັບ" ຄັ້ງນັ້ນ ມາຣດາຂອງນາງກາຕາຄິດວ່າ "ກາຣທີ່ກາຕາກັບໄປມືເປົ່າ ເບິ່ງຄືບໍ່ງາມ" ຈຶ່ງຈືນຂນົມໃຫ້ ເມື່ອຂນົມສຸກ ພິກຂຸຜູ້ຖືທຽວບິຕຫບາຕເປັນວັຕຣຮູບ

ນຶ່ງເຂົ້າມາເຖິງບ້ານມາຣດາຂອງນາງກາຕາ ມາຣດາຂອງນາງກາຕາຈຶ່ງສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນ ກິກສຸຮູບນັ້ນໄດ້ອອກໄປບອກກິກສຸຮູບອື່ນ ມາຣດາຂອງນາງກາຕາກໍສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນ ກິກສຸຮູບນັ້ນໄດ້ອອກໄປບອກກິກສຸຮູບອື່ນ ມາຣດາຂອງນາງກາຕາກໍສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນອີກ ຈົນເມື່ອຂນົມທີ່ຕຽມໄວ້ຫມົດສິ້ນໄປ

ແມ່ນຄັ້ງທີ ໔ ສາມີຂອງນາງກາຕາກໍໄດ້ສົ່ງຂ່າວມາເຖິງນາງກາຕາວ່າ "ຈົ່ງກັບມາເຖີດກາຕາ ຂ້ອຍຕ້ອງການໃຫ້ກາຕາກັບ"

ແມ່ນຄັ້ງທີ ໔ ມາຣດາຂອງນາງກາຕາຄິດວ່າ "ການທີ່ກາຕາກັບໄປມືເປົ່າ ເບິ່ງຄືບໍ່ງາມປານໃດ ຈຶ່ງຈືນຂນົມໃຫ້ ເມື່ອຂນົມສຸກ ກິກສຸຜູ້ຖືທຽວບິຕາຫບາຕເປັນວັຕຮຮູບນຶ່ງເຂົ້າມາເຖິງບ້ານມາຣດາຂອງນາງກາຕາ ມາຣດາຂອງນາງກາຕາຈຶ່ງສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນ ກິກສຸຮູບນັ້ນໄດ້ອອກໄປບອກກິກສຸຮູບອື່ນ ມາຣດາຂອງນາງກາຕາກໍສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນ ກິກສຸຮູບນັ້ນໄດ້ອອກໄປບອກກິກສຸຮູບອື່ນ ມາຣດາຂອງນາງກາຕາກໍສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນອີກ ຈົນເມື່ອຂນົມທີ່ຕຽມໄວ້ຫມົດສິ້ນໄປ ແມ່ນຄັ້ງທີ ໕ ສາມີຂອງນາງກາຕາກໍໄດ້ສົ່ງຂ່າວມາເຖິງນາງກາຕາວ່າ "ຈົ່ງກັບມາເຖີດກາຕາ ຂ້ອຍຕ້ອງການໃຫ້ກາຕາກັບ ຫາກກາຕາບໍ່ກັບ ຂ້ອຍຈະພາຍິງອື່ນມາເປັນກັຣຍາ"

ແມ່ນຄັ້ງທີ ໕ ມາຣດາຂອງນາງກາຕາຄິດວ່າ "ການທີ່ກາຕາກັບໄປມືເປົ່າ ເບິ່ງຄືບໍ່ງາມ" ຈຶ່ງຈືນຂນົມໃຫ້ ເມື່ອຂນົມສຸກ ກິກສຸຜູ້ຖືທຽວບິຕາຫບາຕເປັນວັຕຮຮູບນຶ່ງເຂົ້າມາເຖິງບ້ານມາຣດາຂອງນາງກາຕາ ມາຣດາຂອງນາງກາຕາຈຶ່ງສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນ ກິກສຸຮູບນັ້ນໄດ້ອອກໄປບອກກິກສຸຮູບອື່ນ ມາຣດາຂອງນາງກາຕາກໍສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນ ກິກສຸຮູບນັ້ນໄດ້ອອກໄປບອກກິກສຸຮູບອື່ນ ມາຣດາຂອງນາງກາຕາກໍສັ່ງໃຫ້ຖວາຍຂນົມແກ່ກິກສຸຮູບນັ້ນອີກ ຈົນເມື່ອຂນົມທີ່ຕຽມໄວ້ຫມົດສິ້ນໄປ

ຄັ້ງນັ້ນ ສາມີຂອງນາງກາຕາໄດ້ພາຍິງອື່ນມາເປັນກັຣຍາ ນາງກາຕາໄດ້ຊາບຂ່າວວ່າສາມີຂອງຕົນໄດ້ພາຍິງອື່ນມາເປັນກັຣຍາ ຈຶ່ງໄດ້ຢືນຮ້ອງໄຫ້ ຄັ້ງນັ້ນ ໃນເວລາເຊົ້າ ພຣະຜູ້ມີພຣະກາຄຊົງຄອງອັນຕຣວາສກຖືບາຕຣແລະຈີວອນສເດັຈໄປເຖິງບ້ານຂອງອຸບາສິກາມາຣດາຂອງນາງກາຕາ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ມາຣດາຂອງນາງກາຕາເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງອາສນະ ຄັນເຖິງແລ້ວໄດ້ຖວາຍອກິວາທພຣະຜູ້ມີພຣະກາຄ ແລ້ວນັ່ງ ຕະ ທີ່ສົມຄວຣ ພຣະຜູ້ມີພຣະກາຄໄດ້ຕຣັສກັບມາຣດາຂອງນາງກາຕາຜູ້ນັ່ງ ຕະ ທີ່ສົມຄວຣດັ່ງນີ້ວ່າ "ນາງກາຕາຮ້ອງໄຫ້ເຮັດຫຍັງ" ອຸບາສິກາມາຣດາຂອງນາງກາຕາຈຶ່ງຂາບທູລເຣື້ອງຣາວນັ້ນໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະກາຄເຈົ້າ ຊີ້ແຈງໃຫ້ມາຣດາຂອງນາງກາຕາເຫັນແຈ້ງ ຊວນໃຫ້ຢາກ
ຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີ
ກຖາ ແລ້ວຊົງລຸກຈາກອາສນະສເດັຈໄປ

ເຣື້ອງອຸບາສີກາມາຣດາຂອງນາງກາຕາ ຈົບ

ເຣື້ອງພໍ່ຄ້າກວຽນ

[໔໖໑] ສມັຍນັ້ນ ພໍ່ຄ້າກວຽນກຸ່ມນຶ່ງຕ້ອງກາຣຈະຍ່າງທາງຈາກກຸງຣາຊຄຶຫ໌ ໄປຖິ່ນຍ້ອນແສງ໑
ກິກຊຸຜູ້ຖືທຽວບິຕຫບາຕຣູບນຶ່ງເຂົ້າໄປບິຕຫບາຕເຖິງຫມູ່ກວຽນ

ເຊີງອັນຖະ :

໑ ປຜິຍາໂລກໍ ຖິ່ນຍ້ອນແສງ ຄື ສູຣິຍາໂລກສຸສ ປຜິມຸຂໍ ຍ້ອນແສງຕາເວັນ ໄດ້ແກ່ ປຈຸຈິມທິສໍ ທິສຕາເວັນຕົກ (ວິ. ອ. ໒/໔໐໗/໔໑໗)

ອຸບາສິກຄົນນຶ່ງໄດ້ໃຫ້ຖວາຍເຂົ້າຕູແກ່ກິກຊຸຣູບນັ້ນ ກິກຊຸຣູບນັ້ນໄດ້ອອກໄປບອກກິກຊຸຣູບອື່ນ ອຸ
ບາສິກໄດ້ໃຫ້ຖວາຍເຂົ້າຕູແກ່ກິກຊຸຣູບນັ້ນ ກິກຊຸຣູບນັ້ນໄດ້ອອກໄປບອກກິກຊຸຣູບອື່ນ ອຸບາສິກກໍ
ໄດ້ໃຫ້ຖວາຍເຂົ້າຕູແມ່ນແກ່ກິກຊຸຣູບນັ້ນອີກ ຈົນເມື່ອສະບຽງທີ່ຈັດໄວ້ຫມົດສິ້ນໄປ ຄັ້ງນັ້ນ ອຸ
ບາສິກນັ້ນໄດ້ກ່າວກັບພວກພໍ່ຄ້າດັ່ງນີ້ວ່າ "ວັນນີ້ ພວກທ່ານໂປຣດຖ້າກ່ອນ ສະບຽງທີ່ຈັດຕຽມໄວ້ຜູ້
ຂ້າຖວາຍພຣະຄຸຕເຈົ້າທັງຫລາຍໄປແລ້ວ ຜູ້ຂ້າຈະຈັດຕຽມສະບຽງ" ພວກພໍ່ຄ້າກວຽນກ່າວວ່າ "ທ່ານ
ເອີຍ ພວກເຮົາບໍ່ສາມາດຈະຖ້າໄດ້ ພໍ່ຄ້າກວຽນອອກຍ່າງທາງແລ້ວ" ໄດ້ໄປແລ້ວ ເມື່ອອຸບາສິກຈັດ
ຕຽມສະບຽງເສັດແລ້ວຍ່າງທາງໄປພາຍຫລັງຈຶ່ງຖືກພວກໂຈຣປຸ້ນ ພວກພໍ່ຄ້າພາກັນຕຳຫນິ ປະນາມ
ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງຮັບໂດຍບໍ່ຮູ້ປະມານ ອຸບາສິກຄົນນີ້ຊຶ່ງ
ເມື່ອຖວາຍສະບຽງແກ່ພຣະສມຕະເຊື້ອສາຍສາກຍບຸຕຣເຫລົ່ານີ້ແລ້ວຍ່າງທາງໄປພາຍຫລັງໄດ້ຖືກ
ໂຈຣປຸ້ນ" ພວກກິກຊຸໄດ້ຍິນພວກພໍ່ຄ້າຕຳຫນິ ປະນາມ ໂພນທະນາ ຄັນແລ້ວກິກຊຸເຫລົ່ານັ້ນ
ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບກິກຊຸທັງ
ຫລາຍວ່າ "ກິກຊຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ກິກຊຸທັງຫລາຍ ໂດຍ

ອາສັຍອຳນາຈປໂຍດ ໑໐ ປະການ ຄື
໑. ເພື່ອຄວາມຮັບວ່າດີແຫ່ງສົງຄ໌
໔. ເພື່ອຄວາມຜາສຸກແຫ່ງສົງຄ໌
ຯລຯ
໑໐. ເພື່ອເອື້ອເຟື້ອວິນັຍ໑
ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :
໑ ເບິ່ງຄວາມພິສດານ ຂໍ້ ໕໗໗ ຫນ້າ ໗໔ ໃນເຫລັ້ມນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕໜ໌] ໔. ໂກຊນວັຄ ໔. ກາຕມາຕຸສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[໔໖໔] ກໍ ຫາຍົກນຳຂນົມຫລືເຂົ້າຕູ໑ ມາປວານຕາພິກຂຸຜູ້ເຂົ້າໄປເຖິງຕະກູນ ພິກຂຸຜູ້ຕ້ອງການເພິງຮັບໄດ້ເຕັມ ໔-໖ ບາຕຣ ຖ້າຮັບເກີນກວ່ານັ້ນ ຕ້ອງອາບັຕິປາຈິຕຕິຍ໌ ຄັນຮັບເຕັມ ໔-໖ ບາຕຣແລ້ວ ເມື່ອນຳອອກຈາກທີ່ນັ້ນແລ້ວເພິງແບ່ງປັນກັບພິກຂຸທັງຫລາຍ ນີ້ເປັນການທຳທີ່ສົມຄວນໃນເຣື່ອງນັ້ນ

ເຣື້ອງພໍ່ຄ້າກວຽນ ຈົບ

ສິກຂາບົທວິກັງຄ໌

[໔໖໖] ຄຳວ່າ ກໍ. . . ພິກຂຸຜູ້ເຂົ້າໄປເຖິງຕະກູນ ທີ່ຊື່ວ່າຕະກູນ ໄດ້ແກ່ ຕະກູນ ໔ ຄື ຕະກູນກສັຕຣິຍ໌ ຕະກູນພຣາມຕ໌ ຕະກູນແພສຍ໌ ຕະກູນສູທຣ
ຄຳວ່າ ຜູ້ເຂົ້າໄປເຖິງ ຄື ຜູ້ເຂົ້າໄປໃນຕະກູນນັ້ນ
ທີ່ຊື່ວ່າ ຂນົມ ໄດ້ແກ່ ຂອງກິນຢ່າງໃດຢ່າງນຶ່ງທີ່ເຂົາຈັດຕຽມເພື່ອສົ່ງໄປເປັນຂອງກຳນັລ
ທີ່ຊື່ວ່າ ເຂົ້າຕູ ໄດ້ແກ່ ຂອງກິນຢ່າງໃດຢ່າງນຶ່ງທີ່ເຂົາຈັດຕຽມເປັນສະບຽງທາງ

ຄຳວ່າ ທາຍົກນຳມາປວາຣຕາ ຄື ເຂົານຳມາປວາຣຕາວ່າ "ທ່ານໂປຣດຮັບຕາມຕ້ອງກາຣ"
ຄຳວ່າ ຜູ້ຕ້ອງກາຣ ຄື ຜູ້ປຣາຖນາໄດ້

ເຊິງອັນຖະ :

໑ ມນຸຖ ເຂົ້າຕູ ໝາຍເຖິງ ອພທຸລສຕຸຕຸນາ ຈ . . . ພທຸລສຕຸຕຸນາ ຈ ເຂົ້າຕູກ້ອນ ເຂົ້າຕູປັ່ນ (ວິ. ອ. ໓/໑໑) ສຕຸຕຸ ນາມ ສາລິວີຫິຍເວທີ ກຕສຕຸຕຸ. ກຽຄຸວຣກາກຸທຸຣູສກສິສານີປີ ກຊຸຊິຕຸວາ ອິສກໍໂກຍຸເພຕຸວາ ຖຸເສ ປາເປຕຸວາ ປຸນ ທຣຸຫໍ ໂກຍຸເພຕຸວາ ຈຸຕຸຕໍ ກໂຣນຸຕິ. ສເຈປິ ຕໍ ອລຸລຕຸຕາ ເອກາພທຸລໍ ໂຫຕິ ສຕຸຕຸສງຄຫເມວ ຄຈຸຈຕິ. ຂຣປາກກຊຸຊິຕານໍ ວິຫີນໍ ຕຕຸຫຸເລ ໂກຍຸເພຕຸວາ ເທນຸຕິ, ຕມຸປີ ຈຸຕຸຕໍ ສຕຸຕຸສງຄຫເມວ ຄຈຸຈຕິ. ເຂົ້າຕູ ຫລືເຂົ້າສັຕຕຸ ເຮັດດ້ວຍ ເຂົ້າເຈົ້າແລະເຂົ້າໜຽວ ທີ່ເຂົາເດັດຮວງລັຍຊາຕິ ໓ ຢ່າງ ຄື ເຂົ້າຟາງ ໝາກເດືອຍ ຫຍ້າກັບແກ້ ມາຕຳໜ້ອຍ ດຽວ ແລ້ວຝັດແກບອອກແລ້ວຕຳອີກຈົນມຸ່ນ ຊຶ່ງຖ້າຍັງອຸ່ນຢູ່ຈະຈັບເປັນກ້ອນ ນີ້ກໍຈັດເປັນເຂົ້າຕູເໝືອນກັນ ແລະທີ່ເຂົາຕຳເຂົ້າເປືອກແກ່ເປັນເຂົ້າສາຣຈົນມຸ່ນ ນີ້ກໍຈັດເປັນເຂົ້າຕູເຊັ່ນກັນ (ວິ. ອ. ໔/໔໓໔/໓໕໐)

ບົທກາຊນີຍ໌

ຄຳວ່າ ເພິງຮັບໄດ້ເຕັມ ໔-໓ ບາຕຣ ຄວາມວ່າ ກິກຸເພິງຮັບໄດ້ເຕັມ ໔-໓ ບາຕຣ
ຄຳວ່າ ຖ້າຮັບເກີນກວ່ານັ້ນ ຄວາມວ່າ ຮັບເກີນກຳໜົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌
ຄັນຮັບເຕັມ ໔-໓ ບາຕຣ ແລ້ວເມື່ອອອກຈາກທີ່ນັ້ນໄປພົບກິກຸຮູບອື່ນເພິງບອກວ່າ "ຜູ້ຂ້າຮັບເຕັມ ໔-໓ ບາຕຣ ໃນທີ່ພຸ້ນ ທ່ານຢ່າຮັບໃນທີ່ນັ້ນ" ຖ້າພົບກິກຸຮູບອື່ນແລ້ວບໍ່ບອກ ຕ້ອງອາບັຕິທຸກກຸຍ ເມື່ອບອກແລ້ວ ກິກຸຮູບນັ້ນຍັງໄປຮັບ ຕ້ອງອາບັຕິທຸກກຸຍ
ຄຳວ່າ ເມື່ອນຳອອກຈາກທີ່ນັ້ນແລ້ວເພິງແບ່ງປັນກັບກິກຸທັງຫລາຍ ຄື ກິກຸເພິງນຳກັບໄປແລ້ວແບ່ງກັນ
ຄຳວ່າ ນີ້ເປັນກາຣທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔໓໔] ຂອງເຕັມເກີນ ໔-໓ ບາຕຣ ກິກຸສຳຄັນວ່າເກີນ ຮັບ ຕ້ອງອາບັຕິປາຈິຕຕີຍ໌

ຂອງເຕັມເກີນ ໔-໕ ບາຕຣ ພິກຂຸບໍ່ແນ່ໃຈ ຮັບ ຕ້ອງອາບັຕິປາຈິຕຕີຍ໌
ຂອງເຕັມເກີນ ໔-໕ ບາຕຣ ພິກຂຸສຳຄັນວ່າຍັງບໍ່ເຕັມ ຮັບ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກົດ

ຂອງຍັງບໍ່ເຕັມ ໔-໕ ບາຕຣ ພິກຂຸສຳຄັນວ່າເກີນ ຕ້ອງອາບັຕິທຸກກົດ
ຂອງຍັງບໍ່ເຕັມ ໔-໕ ບາຕຣ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ຂອງຍັງບໍ່ເຕັມ ໔-໕ ບາຕຣ ພິກຂຸສຳຄັນວ່າຍັງບໍ່ເຕັມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໓໕] ໑. ພິກຂຸຮັບເຕັມ ໔-໕ ບາຕຣ

໒. ພິກຂຸຮັບບໍ່ເຕັມ ໔-໕ ບາຕຣ

໓. ພິກຂຸຜູ້ຮັບຂອງທີ່ເຂົາບໍ່ໄດ້ຈັດຕຽມໄວ້ເພື່ອສົ່ງໄປເປັນຂອງກຳນັລ

໔. ພິກຂຸຜູ້ຮັບຂອງທີ່ເຂົາບໍ່ໄດ້ຈັດຕຽມເປັນສະບຽງຍ່າງທາງ

໕. ພິກຂຸຜູ້ຮັບຂອງທີ່ເຫລືອຈາກທີ່ເຂົາຈັດຕຽມໄວ້ເພື່ອສົ່ງໄປເປັນຂອງກຳນັລຫລືເພື່ອເປັນສະບຽງຍ່າງທາງ

໖. ພິກຂຸຜູ້ຮັບຂອງທີ່ທາຍົກຖວາຍເມື່ອເຂົາຣະງັບກາຣໄປແລ້ວ

໗. ພິກຂຸຮັບຂອງຍາຕ

໘. ພິກຂຸຮັບຂອງຄົນປວາຣຕາ

໙. ພິກຂຸຮັບເພື່ອພິກຂຸອື່ນ

໑໐. ພິກຂຸຮັບຂອງທີ່ຈ່າຍມາດ້ວຍຊັພຍ໌ຂອງຕົນ

໑໑. ພິກຂຸວິກົລຈິຕ

໑໒. ພິກຂຸຕົ້ນບັນຍັດ

ກາຕມາຕຸສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຑ໌] ໔. ໂກຊນວັຄ ໕. ປຖມປວາຣຕາສິກຂາບົທ

ນິທານວັຕຖຸ

໔. ໂກຊນວັຄ

໕. ປຖມປວາຣຓາສິກຂາບົທ

ວ່າດ້ວຍການບອກຫ້າມຠັຕຕາຫາຣຂໍ້ທີ ໑

ເຣື່ອງຠິກຂຸຫລາຍຮູບ

[໔໓໗] ສມັຍນັ້ນ ພຣະຜູ້ມີພຣະຠາຄພຸທຘເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣາມຓ໌ຄົນນຶ່ງນິມົນຕ໌ຠິກຂຸທັງຫລາຍໃຫ້ຉັນຠັຕຕາຫາຣ ຠິກຂຸຉັນແລ້ວ ບອກຫ້າມຠັຕຕາຫາຣແລ້ວພາກັນໄປຕະກູນຍາຕຠິກຂຸບາງພວກຍັງຉັນອີກ ບາງພວກກໍຍັງຮັບບິຓຑບາຕກັບໄປ ຕໍ່ມາ ພຣາມຓ໌ໄດ້ກ່າວກັບເພື່ອນບ້ານຜູ້ຄຸ້ນເຄີຍດັ່ງນີ້ວ່າ “ນາຍທັງຫລາຍ ເຮົາລ້ຽງຠິກຂຸທັງຫລາຍໃຫ້ອີ່ມຫນຳແລ້ວ ເຊີນມາເຖີດ ເຮົາຈະລ້ຽງພວກທ່ານໃຫ້ອີ່ມຫນຳແດ່” ເພື່ອນບ້ານຜູ້ຄຸ້ນເຄີຍເຫລົ່ານັ້ນກ່າວຢ່າງນີ້ວ່າ “ນາຍ ທ່ານຈະລ້ຽງພວກເຮົາໃຫ້ອີ່ມຫນຳໄດ້ຢ່າງໃດ ແມ່ນພວກຠິກຂຸທີ່ທ່ານນິມົນຕ໌ແລ້ວກໍຍັງຕ້ອງໄປທີ່ເຮືອນພວກເຮົາ ບາງພວກຍັງຉັນອີກ ບາງພວກກໍຍັງຮັບບິຓຑບາຕກັບໄປ” ຄັ້ງນັ້ນ ພຣາມຓ໌ນັ້ນໄດ້ຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະຄຸຓເຈົ້າທັງຫລາຍຉັນທີ່ເຮືອນເຮົາແລ້ວຈຶ່ງໄປຉັນທີ່ອື່ນອີກລະ ເຮົາບໍ່ສາມາດຈະຖວາຍໃຫ້ພໍແກ່ຄວາມຕ້ອງກາຣຫລື” ຠິກຂຸທັງຫລາຍໄດ້ຍິນພຣາມຓ໌ຕຳຫນິ ປະນາມ ໂພນທະນາ ບັນດາຠິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດຠິກຂຸທັງຫລາຍຉັນແລ້ວ ບອກຫ້າມຠັຕຕາຫາຣແລ້ວໄປຉັນຕໍ່ທີ່ອື່ນອີກລະ” ຄັນຠິກຂຸເຫລົ່ານັ້ນຕຳຫນິຠິກຂຸທັງຫລາຍໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະຠາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະຠາຄຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມຠິກຂຸທັງຫລາຍວ່າ “ຠິກຂຸທັງຫລາຍ ຊາບວ່າ ພວກຠິກຂຸຉັນແລ້ວ ບອກຫ້າມຠັຕຕາຫາຣແລ້ວໄປຉັນຕໍ່ທີ່ອື່ນອີກ ແມ່ນແທ້ບໍ” ຠິກຂຸທັງຫລາຍທູລຮັບວ່າ “ຈິງ ພຣະພຸທຘເຈົ້າຂ້າ” ພຣະຜູ້ມີພຣະຠາຄພຸທຘເຈົ້າຊົງຕຳຫນິວ່າ “ຯລຯ ຠິກຂຸທັງຫລາຍ ຈັ່ງໃດໂມຆບຸຣຸຩເຫລົ່ານັ້ນຉັນແລ້ວ ບອກຫ້າມຠັຕຕາຫາຣແລ້ວໄປຉັນຕໍ່ທີ່ອື່ນອີກລະ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ຠິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກຂຸໃດຈັນແລ້ວ ບອກຫ້າມກັຕຕາຫາຣແລ້ວ ຄ້ຽວຂອງຄ້ຽວຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງພິກຂຸຫລາຍຮູບ ຈົບ

ເຣື້ອງກັຕຕາຫາຣທີ່ເປັນເດນ

[໔໓໗] ສມັຍນັ້ນ ພິກຂຸທັງຫລາຍນຳບິດາຫບາຕຢ່າງປາດົຕໄປຖວາຍພວກພິກຂຸຜູ້ເປັນໄຂ້ ພວກພິກຂຸເປັນໄຂ້ຈັນກັຕຕາຫາຣບໍ່ໄດ້ສົມໃຈ ພິກຂຸທັງຫລາຍຈຶ່ງຖິ້ມບິດາຫບາຕເຫລົ່ານັ້ນ ພຣະຜູ້ມີພຣະກາຄຊົງໄດ້ສດັບນົກກາສົ່ງສຽງຮ້ອງດັງເຊັ່ງແຊວ ຄັນໄດ້ຊົງສດັບແລ້ວ ຈຶ່ງໄດ້ຕຣັສກັບທ່ານພຣະອານົນທ໌ວ່າ “ອານົນທ໌ ເປັນຫຍັງນົກກາຈຶ່ງສົ່ງສຽງຮ້ອງດັງເຊັ່ງແຊວ” ລຳດັບນັ້ນ ທ່ານພຣະອານົນທ໌ໄດ້ຂາບທູລເຣື້ອງນັ້ນໃຫ້ພຣະຜູ້ມີພຣະກາຄຊົງຊາບ ພຣະຜູ້ມີພຣະກາຄຕຣັສຖາມວ່າ “ອານົນທ໌ ພິກຂຸທັງຫລາຍໄດ້ຈັນກັຕຕາຫາຣທີ່ເປັນເດນພິກຂຸໄຂ້ຫລື” ທ່ານພຣະອານົນທ໌ຂາບທູລວ່າ “ບໍ່ໄດ້ຈັນ ພຣະພຸທສເຈົ້າຂ້າ”

ຊົງອນຸຍາຕໃຫ້ຈັນກັຕຕາຫາຣທີ່ເປັນເດນພິກຂຸເປັນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ “ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຈັນກັຕຕາຫາຣທີ່ເປັນເດນພິກຂຸຜູ້ເປັນໄຂ້ແລະພິກຂຸຜູ້ບໍ່ເປັນໄຂ້ ພິກຂຸທັງຫລາຍເພິ່ງທຳກັຕຕາຫາຣໃຫ້ເປັນເດນດ້ວຍກາຣກ່າວຢ່າງນີ້ວ່າ “ທັງໝົດນັ້ນພໍແລ້ວ” ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໓໘] ອີກຢ່າງນຶ່ງ ພິກຂຸໃດຈັນແລ້ວ ບອກຫ້າມກັຕຕາຫາຣແລ້ວ ຄ້ຽວຂອງຄ້ຽວຫລືຈັນຂອງຈັນທີ່ບໍ່ເປັນເດນ໑ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງກັຕຕາຫາຣທີ່ເປັນເດນ ຈົບ

ສິກຂາບົທວິກັງຄ໌

[໔໓໙] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ກິກຸ ມີອະທິບາຍວ່າ ຊື່ວ່າກິກຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ສັນແລ້ວ ຄື ກິກຸສັນໂກຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ ໂດຍທີ່ສຸດແມ່ນສັນດ້ວຍປາຍຫຍ້າຄາແຕະ

ລັກษຕະກາຣບອກຫ້າມກັຕຕາຫາຣ

ທີ່ຊື່ວ່າ ບອກຫ້າມກັຕຕາຫາຣ ຄື (໑) ກິກຸກຳລັງສັນ (໔) ທາຍົກນຳໂກຊນະມາຖວາຍ (໓) ທາຍົກຢູ່ໃນຫັຕຖບາສນ້ອມຖວາຍ (໔) ກິກຸບອກຫ້າມ

ເຊີງອັນຖະ :

໑ ອນຕິຣິຕຸຕໍ ໂກຊນະທີ່ບໍ່ເປັນເດນ, ໂກຊນະທີ່ບໍ່ເຫລືອເຟືອ, ໂກຊນະທີ່ຍັງບໍ່ໄດ້ທຳອຕິເຣກວິນັຍ ຄືພຣະວິນັຍຣຣຍັງບໍ່ໄດ້ເຮັດໃຫ້ເປັນເດນວ່າ "ອລເມຕໍ ສພຸພໍ ທັງຫມົດນັ້ນພໍແລ້ວ" (ວິ. ອ. ໔/ ໓໖໖, ວຊິຣ. ຕີກາ ໔໐໘), ອຕິເຣໂກ ໂຫຕີຕິ ອຕິຣິຕໍໂຕ ໂຫຕິ ອຕິຣິຕຸຕ ທີ່ເປັນເດນ ຫມາຍເຖິງເຫລືອເຟືອ (ປຜິສໍ. ອ. ໔/໓໐໗) ອນຕິຣິຕຸຕ ທີ່ບໍ່ເປັນເດນ ຈຶ່ງຫມາຍເຖິງບໍ່ເຫລືອເຟືອ

ຂອງທີ່ບໍ່ເປັນເດນ

ທີ່ຊື່ວ່າ ທີ່ບໍ່ເປັນເດນ ຄື (໑) ຂອງທີ່ກິກຸຍັງບໍ່ໄດ້ເຮັດໃຫ້ເປັນກັປປິຍະ (໔) ຂອງທີ່ກິກຸຍັງບໍ່ໄດ້ຮັບປະເຄນ (໓) ຂອງທີ່ກິກຸຍັງບໍ່ໄດ້ຍົກຂຶ້ນສົ່ງໃຫ້ (໔) ຂອງທີ່ຢູ່ນອກຫັຕຖບາສ (໕) ຂອງທີ່ກິກຸຍັງບໍ່ໄດ້ສັນ (໖) ຂອງທີ່ກິກຸສັນແລ້ວບອກຫ້າມ ລຸກຈາກອາສນະແລ້ວ (໗) ຂອງທີ່ກິກຸຍັງບໍ່ໄດ້ກ່າວວ່າ "ທັງຫມົດນັ້ນພໍແລ້ວ" (໘) ຂອງບໍ່ເປັນເດນກິກຸເປັນໄຂ້ ນີ້ຊື່ວ່າທີ່ບໍ່ເປັນເດນ

ຂອງທີ່ເປັນເດນ

ທີ່ຊື່ວ່າ ທີ່ເປັນເດນ ຄື (໑) ຂອງທີ່ກິກຸເຮັດໃຫ້ເປັນກັປປິຍະແລ້ວ (໔) ຂອງທີ່ກິກຸຮັບປະເຄນແລ້ວ (໓) ຂອງທີ່ກິກຸຍົກຂຶ້ນສົ່ງໃຫ້ແລ້ວ (໔) ຂອງທີ່ຢູ່ໃນຫັຕຖບາສ (໕) ຂອງທີ່ກິກຸສັນ

ແລ້ວ (໖) ຂອງທີ່ພິກຂຸຈັນແລ້ວບອກຫ້າມ ແຕ່ຍັງບໍ່ລຸກຈາກອາສນະ (໗) ຂອງທີ່ພິກຂຸກ່າວວ່າ "ທັງຫມົດນັ້ນພໍແລ້ວ" (໘) ຂອງເປັນເດນພິກຂຸເປັນໄຂ້ ນີ້ຊື່ວ່າທີ່ເປັນເດນ

ຂອງຄ້າງວ

ທີ່ຊື່ວ່າ ຂອງຄ້າງວ ຄື ຍົກເວັ້ນໂພຊນະ ໕ ໑ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້າງວ

ເຊີງອັນຖະ :

໑ ຍາມກາລິກ ຂອງທີ່ພິກຂຸຮັບປະເຄນໄວ້ແລ້ວຈັນໄດ້ຊົ່ວມື້ນຶ່ງກັບຄືນນຶ່ງກ່ອນອຣຸຕຂອງວັນໃຫມ່ ຄື ນ້ຳປານະ ໄດ້ແກ່ ນ້ຳຄັ້ນຜົລໄມ້ທີ່ຊົງອນຸຍາຕ ໘ ຢ່າງ ຄື (໑) ອັມພປານະ ນ້ຳຫມາກມ່ວງ (໒) ຊັມພຸປານະ ນ້ຳຫວ້າ (໓) ໂຈຈປານະ ນ້ຳກ້ວຍມີເມັດ (໔) ໂມຈປານະ ນ້ຳກ້ວຍບໍ່ມີເມັດ (໕) ມຊຸກປານະ ນ້ຳມະຫຮາງ (໖) ມຸທທິກປານະ ນ້ຳຫມາກຈັນທນ໌ຫລືນ້ຳອງຸ່ນ (໗) ສາລູກປານະ ນ້ຳເຫງົ້າບົວ (໘) ຜາຣຸສກປານ ນ້ຳຜົລຫມາກຜາງຫລືນ້ຳລິ້ນຈີ່ ແລະນ້ຳຜົລໄມ້ທຸກຊນິດ ເວັ້ນນ້ຳຕົ້ມເມັດເຂົ້າເປືອກ, ນ້ຳໃບໄມ້ທຸກຊນິດ ເວັ້ນນ້ຳຜັກດອງ, ນ້ຳດອກໄມ້ທຸກຊນິດ ເວັ້ນນ້ຳດອກມະຫຮາງ, ນ້ຳອ້ອຍສົດ ຈັນໄດ້ (ວິ. ມ. ໕/໓໐໐/໗໔, ວິ. ອ. ໒/໒໕໕-໖/໓໗໘) ສັຕຕາຫກາລິກ ຂອງທີ່ພິກຂຸຮັບປະເຄນໄວ້ແລ້ວຈັນໄດ້ພາຍໃນ ໗ ວັນ ຄື ເພສັຊທັງ ໕ ໄດ້ແກ່ (໑) ສັປປິ ເນີຍໃສ

(໒) ນວນີຕະ ເນີຍຂຸ້ນ (໓) ເຕລະ ນ້ຳມັນ (໔) ມຊຸ ນ້ຳເຜີ້ງ (໕) ຜາຕິຕ ນ້ຳອ້ອຍ (ວິ. ມ. ໕/໒໖໐/໒໗) ຍາວຊີວິກ ຂອງທີ່ພິກຂຸຮັບປະເຄນໄວ້ແລ້ວ ຈັນໄດ້ຕລອດໄປ ບໍ່ຈຳກັດເວລາ ຄື ຂອງທີ່ໃຊ້ປຸງເປັນຍາ ໄດ້ແກ່ຫລິທທະ ຂມິ້ນ, ສິງຄິເວຣະ ຂີງ, ວຈະ ວ່ານນ້ຳ, ວຈັຕຖະ ວ່ານເປຣາະ, ອຕິວິສະ ອຸຕພິດ, ກຊຸກໂຣຫິຕີ ຂ່າ, ອຸສີຣະ ແຝກ, ພັທທມຸຕຕກະ ແຫ້ວຫມູ ເປັນຕົ້ນ (ວິ. ມ. ໕/໒໖໓/໒໙) ເບິ່ງເຊີງອັນຖະ ຂໍ້ ໒໕໖ ຫນ້າ ໔໐໙

ຂອງຈັນ

ທີ່ຊື່ວ່າ ຂອງຈັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມສົດ ເຂົ້າຕູ ປາ ຊີ້ນ ພິກຂຸຮັບປະເຄນດ້ວຍຕັ້ງໃຈວ່າ "ຈະຄ້າງວ ຈະຈັນ" ຕ້ອງອາບັຕິທຸກກຊ ຈັນ ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄຳກືນ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔໔໐] ຂອງທີ່ບໍ່ເປັນເດນ ພິກຂຸສຳຄັນວ່າເປັນຂອງທີ່ບໍ່ເປັນເດນ ຄ້ຽວຂອງຄ້ຽວ ຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ຂອງທີ່ບໍ່ເປັນເດນ ພິກຂຸບໍ່ແນ່ໃຈ ຄ້ຽວຂອງຄ້ຽວ ຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ຂອງທີ່ບໍ່ເປັນເດນ ພິກຂຸສຳຄັນວ່າເປັນຂອງທີ່ເປັນເດນ ຄ້ຽວຂອງຄ້ຽວ ຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຸຍ

ພິກຂຸຮັບປະເຄນຍາມກາລິກ ສັຕຕາຫກາລິກ ຍາວຊີວິກ ເພື່ອເປັນອາຫານ ຕ້ອງອາບັຕິທຸກກຸຍ ຈັນ ຕ້ອງອາບັຕິທຸກກຸຍທຸກໆຄຳກືນ

ຂອງທີ່ເປັນເດນ ພິກຂຸສຳຄັນວ່າເປັນຂອງທີ່ບໍ່ເປັນເດນ ຕ້ອງອາບັຕິທຸກກຸຍ

ຂອງທີ່ເປັນເດນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຍ

ຂອງທີ່ເປັນເດນ ພິກຂຸສຳຄັນວ່າເປັນຂອງທີ່ເປັນເດນ ບໍ່ຕ້ອງອາບັຕິ

ອນາປັຕຕິວານ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໑] ໑. ພິກຂຸໃຫ້ທຳເປັນຂອງທີ່ເປັນເດນແລ້ວຈັນ

໒. ພິກຂຸຮັບປະເຄນດ້ວຍຕັ້ງໃຈວ່າ ຈະໃຫ້ທຳເປັນຂອງທີ່ເປັນເດນກ່ອນຈຶ່ງຈັນ

໓. ພິກຂຸຮັບໄປເພື່ອພິກຂຸອື່ນ

໔. ພິກຂຸຈັນພັຕຕາຫານທີ່ເຫລືອຂອງພິກຂຸຜູ້ເປັນໄຂ້

໕. ພິກຂຸຈັນຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ເມື່ອມີ ເຫຕຸຜົລທີ່ສົມຄວນ

໖. ພິກຂຸວິກົລຈິຕ

໗. ພິກຂຸຕົ້ນບັນຍັດ

ປຖມປວາຣນາສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕາ໌] ໔. ໂກຊນວັຄ ໗. ທຸຕີຍປວາຣຕາສິກຂາບົທ ນິທານວັຕຖຸ

໔. ໂກຊນວັຄ

໗. ທຸຕີຍປວາຣຕາສິກຂາບົທ

ວ່າດ້ວຍການບອກຫ້າມກັຕຕາຫາຣຂໍ້ທີ ໔

ເຣື້ອງກິກບຸ ໒ ຮູບ

[໒໔໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ໓ະ ພຣະເຊຕວັນ ອາຮາມຂອງອນາຖບິດ ຫຶກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ກິກບຸ ໒ ຮູບຍ່າງທາງໄກໄປກຸງສາວັຕຖີ ແຄວັນໂກສົລ ກິກບຸຮູບນຶ່ງປະພຶດອນາຈານ ກິກບຸຜູ້ເປັນເພື່ອນໄດ້ກ່າວກັບກິກບຸຮູບນັ້ນດັ່ງນີ້ວ່າ “ທ່ານຢ່າໄດ້ກະທຳ ຢ່າງນີ້ ການກະທຳຢ່າງນີ້ບໍ່ສົມຄວນ” ກິກບຸຮູບນັ້ນແຄ້ນເຄືອງກິກບຸຜູ້ເປັນເພື່ອນນັ້ນ ຄັນກິກບຸເຫລົ່າ ນັ້ນເຖິງກຸງສາວັຕຖີ ຄັ້ງນັ້ນ ມີສັງຄກັຕຂອງສມາຄົມນຶ່ງ ກິກບຸຜູ້ເປັນເພື່ອນຈັນແລ້ວ ບອກຫ້າມ ກັຕຕາຫາຣແລ້ວ ກິກບຸຮູບທີ່ແຄ້ນເຄືອງໄປຕະກູນຍາຕນຳບິດາຫບາຕມາ ແລ້ວເຂົ້າໄປຫາກິກບຸຜູ້ ເປັນເພື່ອນເຖິງທີ່ພັກ ຄັນເຖິງແລ້ວໄດ້ກ່າວກັບກິກບຸນັ້ນດັ່ງນີ້ວ່າ “ເຊີນທ່ານຈັນເຖີດ ຂນ້ອຍ” ກິກບຸຜູ້ເປັນເພື່ອນປຸຶເສລວ່າ “ບໍ່ລະຂນ້ອຍ ຜູ້ຂ້າບໍຣິບູຣຄ໌ແລ້ວ” ກິກບຸຜູ້ແຄ້ນເຄືອງນັ້ນລ້ຳໄລວ່າ “ບິດາຫບາຕແຊບ ຈັນເຖີດ ຂນ້ອຍ” ຄັນກິກບຸຜູ້ເປັນເພື່ອນຖືກລ້ຳໄລຈຶ່ງຈັນບິດາຫບາຕນັ້ນ ກິກບຸຜູ້ ແຄ້ນເຄືອງໄດ້ກ່າວກັບກິກບຸນັ້ນດັ່ງນີ້ວ່າ “ທ່ານເຂົ້າໃຈວ່າຜູ້ຂ້າເປັນຜູ້ທີ່ຄວຣວ່າກ່າວ ທ່ານເອງຈັນ ແລ້ວບອກຫ້າມກັຕຕາຫາຣແລ້ວກໍຍັງຈັນໂກຊນະທີ່ບໍ່ເປັນເດນອີກ” ກິກບຸຜູ້ເປັນເພື່ອນກ່າວວ່າ “ທ່ານຄວຣບອກເຣື້ອງນີ້ບໍ່ແມ່ນບໍ” ກິກບຸຜູ້ແຄ້ນເຄືອງກ່າວວ່າ “ທ່ານຄວຣຖາມກ່ອນບໍ່ແມ່ນບໍ” ຕໍ່ມາ ກິກບຸນັ້ນໄດ້ແຈ້ງເຣື້ອງນີ້ໃຫ້ກິກບຸທັງຫລາຍຊາບ ບັນດາກິກບຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະ ນາມ ໂພນທະນາວ່າ “ຈັ່ງໃດກິກບຸຈຶ່ງນຳໂກຊນະທີ່ບໍ່ເປັນເດນໄປປວາຣຕາກິກບຸຜູ້ຈັນແລ້ວບອກ ຫ້າມກັຕຕາຫາຣແລ້ວລະ” ຄັນກິກບຸທັງຫລາຍຕຳຫນິກິກບຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງ ນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກບຸ ນັ້ນວ່າ “ກິກບຸ ຊາບວ່າ ທ່ານນຳໂກຊນະທີ່ບໍ່ເປັນເດນໄປປວາຣຕາກິກບຸຜູ້ຈັນແລ້ວບອກຫ້າມ

ຫັຕຕາຫາຣແລ້ວ ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທເຈົ້າຂ້າ" ພຣະຜູ້ມີພຣະພາຄ ພຸທເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງນຳໂພຊນະທີ່ບໍ່ເປັນເດນໄປປວາຣຕາ ພິກສຸຜູ້ສັນແລ້ວບອກຫ້າມຫັຕຕາຫາຣແລ້ວລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໔໓] ກໍ ພິກສຸໃດຮູ້ຢູ່ ແຕ່ຕ້ອງການຈະຈັບຜິດ ນຳຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປ ປວາຣຕາ ພິກສຸຜູ້ສັນແລ້ວບອກຫ້າມຫັຕຕາຫາຣແລ້ວ ໂດຍກ່າວລ້ຳໄລວ່າ "ນິມົນຕ໌ເຖີດຂນ້ອຍ ທ່ານຈົ່ງຄ້ຽວຫລືຈົ່ງສັນກໍໄດ້" ເມື່ອທ່ານສັນແລ້ວ ພິກສຸນັ້ນຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກສຸ ໒ ຮູບ ຈົບ

ສິກຂາບົທວິກັງຄ໌

[໔໔໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອລິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ພິກສຸ ໝາຍເຖິງ ພິກສຸຮູບອື່ນ

ທີ່ຊື່ວ່າ ສັນແລ້ວ ຄື ພິກສຸສັນໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງໂດຍທີ່ສຸດແມ່ນສັນດ້ອຍປາຍຫຍ້າ ຄາແຕະ໑

ລັກສນະຫ້າມຫັຕຣ

ທີ່ຊື່ວ່າ ບອກຫ້າມຫັຕຕາຫາຣ ຄື (໑) ພິກສຸກຳລັງສັນ (໒) ທາຍົກນຳໂພຊນະມາຖວາຍ (໓) ທາຍົກຢູ່ໃນຫັຕຖບາສນ້ອມຖວາຍ (໔) ພິກສຸບອກຫ້າມ

ຂອງທີ່ບໍ່ເປັນເດນ

ທີ່ຊື່ວ່າ ທີ່ບໍ່ເປັນເດນ ຄື (໑) ຂອງທີ່ຍັງບໍ່ໄດ້ເຮັດໃຫ້ເປັນກັປປີຍະ (໒) ຂອງທີ່ພິກສຸຍັງບໍ່ໄດ້ຮັບ ປະເຄນ (໓) ຂອງທີ່ພິກສຸຍັງບໍ່ໄດ້ຍົກຂຶ້ນສົ່ງໃຫ້ (໔) ຂອງທີ່ຢູ່ນອກຫັຕຖບາສ (໕) ຂອງທີ່ພິກສຸ ຍັງບໍ່ໄດ້ລົງມືສັນ (໖) ຂອງທີ່ພິກສຸລົງມືສັນແລ້ວບອກຫ້າມ ລຸກຈາກອາສນະແລ້ວ (໗) ຂອງທີ່

ກິກຂຸຍັງບໍ່ໄດ້ກ່າວວ່າ "ທັງຫມົດນັ້ນພໍແລ້ວ" (ກູ) ຂອງບໍ່ເປັນເດນກິກຂຸເປັນໄຂ້ ນີ້ຊື່ວ່າທີ່ບໍ່ເປັນເດນ

ຂອງຄ້ຽວ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂກຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ຂອງສັນ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂກຊນະ ໕ ຄື ເຂົ້າສຸກ ຂນົມສດ ເຂົ້າຕູ ປລາ ຊີ້ນ

ຄໍາວ່າ ນໍາມາປວາຣຕາ ຄື ນໍາມາປວາຣຕາວ່າ "ທ່ານໂປຣດຮັບຕາມຕ້ອງການ"

ທີ່ຊື່ວ່າ ຮູ້ຢູ່ ຄື ກິກຂຸຮູ້ເອງ ຄົນເຫລົ່າອື່ນບອກທ່ານ ຫລືຄົນນັ້ນບອກ

ເຊີງອັນຣຖະ :

໑ ຈັນດ້ວຍປາຍຫຍ້າຄາແຕະ ຄືເຄື່ອງອາຫານທີ່ໄດ້ມາໃນການຊນະອັນດຽວກັນ ຄົນໃຫ້ເຂົ້າກັນຈົນເປັນຣົສດຽວກັນ ແລ້ວເອົາປາຍຫຍ້າຄາແຕະພຽງຢົດດຽວແລ້ວວາງທີ່ປາຍລີ້ນ ກືນກິນ (ວິ. ອ. ໔/໔໓໐/໓ກູ໑)

ທີ່ຊື່ວ່າ ຕ້ອງການຈະຈັບຜິດ ຄື ກິກຂຸເພ່ງເລັງວ່າ ເຮົາຈະທ້ວງ ເຮົາຈະເຕືອນ ເຮົາຈະທັກທ້ວງ ເຮົາຈະຕັກເຕືອນ ເຮົາຈະທໍາກິກຂຸນີ້ໃຫ້ເກີ້ເຂີນດ້ວຍວິທີນີ້ ນໍາໄປ ຕ້ອງອາບັຕິທຸກກະ

ກິກຂຸຮັບໄວ້ຕາມຄໍາຂອງກິກຂຸນັ້ນດ້ວຍຕັ້ງໃຈວ່າ ຈະສັນ ກິກຂຸຜູ້ນໍາໄປ ຕ້ອງອາບັຕິທຸກກະ

ກິກຂຸຜູ້ຮັບສັນ ກິກຂຸຜູ້ນໍາໄປ ຕ້ອງອາບັຕິທຸກກະທຸກໆຄໍາກືນ

ເມື່ອກິກຂຸຜູ້ຮັບນັ້ນສັນແລ້ວ ກິກຂຸຜູ້ນໍາໄປ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

[໔໔໕] ບອກຫ້າມກັຕຕາຫານແລ້ວກິກຂຸສໍາຄັນວ່າບອກຫ້າມກັຕຕາຫານແລ້ວ ນໍາຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປປວາຣຕາ ຕ້ອງອາບັຕິປາຈິຕຕີຍ໌

ບອກຫ້າມກັຕຕາຫານແລ້ວ ກິກຂຸບໍ່ແນ່ໃຈ ນໍາຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປປວາຣຕາ ຕ້ອງອາບັຕິທຸກກະ

ບອກຫ້າມກັຕຕາຫາຣແລ້ວ ກິກຂຸສຳຄັນວ່າຍັງບໍ່ໄດ້ບອກຫ້າມກັຕຕາຫາຣນຳຂອງດັ່ງວຫລືຂອງຈັນທີ່ບໍ່ເປັນເດນໄປປວາຣຕາ ບໍ່ຕ້ອງອາບັຕິ

ກິກຂຸນຳຍາມກາລິກ ສັຕຕາຫກາລິກ ຍາວຊີວິກໄປເປັນອາຫາຣ ຕ້ອງອາບັຕິທຸກກຍ

ກິກຂຸຮັບໄວ້ຕາມຄຳຂອງກິກຂຸຜູ້ນຳໄປນັ້ນດ້ວຍຕັ້ງໃຈວ່າ ຈະຈັນ ກິກຂຸຜູ້ນຳໄປ ຕ້ອງອາບັຕິທຸກກຍ

ກິກຂຸຜູ້ຮັບຈັນ ກິກຂຸຜູ້ນຳໄປ ຕ້ອງອາບັຕິທຸກກຍທຸກໆຄຳກືນ

ຍັງບໍ່ໄດ້ບອກຫ້າມກັຕຕາຫາຣ ກິກຂຸສຳຄັນວ່າບອກຫ້າມກັຕຕາຫາຣແລ້ວ ຕ້ອງອາບັຕິທຸກກຍ

ຍັງບໍ່ໄດ້ບອກຫ້າມກັຕຕາຫາຣ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຍ

ຍັງບໍ່ໄດ້ບອກຫ້າມກັຕຕາຫາຣ ກິກຂຸສຳຄັນວ່າຍັງບໍ່ໄດ້ບອກຫ້າມກັຕຕາຫາຣ ບໍ່ຕ້ອງອາບັຕິ

ອນາປັດຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໔໖] ໑. ກິກຂຸໃຫ້ທຳເປັນຂອງທີ່ເປັນເດນແລ້ວໃຫ້

໒. ກິກຂຸໃຫ້ດ້ວຍກ່າວວ່າ ທ່ານຈົ່ງໃຫ້ທຳເປັນຂອງທີ່ເປັນເດນກ່ອນຈຶ່ງຈັນ

໓. ກິກຂຸໃຫ້ດ້ວຍກ່າວວ່າ ທ່ານຈົ່ງນຳໄປເພື່ອກິກຂຸອື່ນ

໔. ກິກຂຸໃຫ້ກັຕຕາຫາຣທີ່ເຫລືອຂອງກິກຂຸເປັນໄຂ້

໕. ກິກຂຸໃຫ້ຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ຍາວຊີວິກ ດ້ວຍກ່າວວ່າ ທ່ານຈົ່ງຈັນເມື່ອມີເຫຕຸສົມຄວຣ

໖. ກິກຂຸວິກລຈິຕ

໗. ກິກຂຸຕົ້ນບັນຍັດ

ທຸຕິຍປວາຣຕາສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂກຊນວັຄ ໗. ວິກາລໂກຊນສິກຂາບົທ ນິທານວັຕຖຸ

໔. ໂກຊນວັຄ

໗. ວິກາລໂກຊນສິກຂາບົທ

ວ່າດ້ວຍການສັນໂກຊນະໃນເວລາວິການ

ເຣື່ອງພຣະສັຕຕຣສວັຄຄີຍ໌

[໔໔໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂດກຸງຣາຊຄຶຫ໌ ຄັ້ງນັ້ນ ໃນກຸງຣາຊຄຶຫ໌ ມີມຫໍຣສົພ**ເທິງຍອດ**ເຂົາພວກກິກຸສັຕຕຣສວັຄຄີຍ໌ໄດ້ໄປຊົມມຫໍຣສົພ ພວກຊາວບ້ານເຫັນພວກກິກຸສັຕຕຣສວັຄຄີຍ໌ແລ້ວຈຶ່ງນິມົນຕ໌ໃຫ້ສົງນ້ຳ ໃຫ້ລູບໄລ້ຂອງຫອມ ໃຫ້ສັນກັຕຕາຫານແລ້ວຖວາຍຂອງຄ້ຽວພວກກິກຸສັຕຕຣສວັຄຄີຍ໌ນຳຂອງຄ້ຽວໄປອາຣາມ ແລ້ວໄດ້ກ່າວກັບພວກກິກຸສັພພັຄຄີຍ໌ດັ່ງນີ້ວ່າ "ທ່ານທັງຫລາຍ ນິມົນຕ໌ພວກທ່ານຮັບແລ້ວຈົ່ງສັນຂອງຄ້ຽວເຖີດ ຂນ້ອຍ" ພວກກິກຸສັພພັຄຄີຍ໌ຖາມວ່າ "ພວກທ່ານໄດ້ຂອງຄ້ຽວມາຈາກໃສ" ພວກກິກຸສັຕຕຣສວັຄຄີຍ໌ຈຶ່ງແຈ້ງເຣື່ອງນັ້ນໃຫ້ພວກກິກຸສັພພັຄຄີຍ໌ຊາບ ພວກກິກຸສັພພັຄຄີຍ໌ຖາມວ່າ "ພວກທ່ານສັນອາຫານໃນເວລາວິກາລຫລື" ພວກກິກຸສັຕຕຣສວັຄຄີຍ໌ຕອບວ່າ "ແມ່ນແລ້ວ ຂນ້ອຍ" ພວກກິກຸສັພພັຄຄີຍ໌ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຸສັຕຕຣສວັຄຄີຍ໌ຈຶ່ງສັນກັຕຕາຫານໃນເວລາວິກາລລະ" ແລ້ວພວກກິກຸສັພພັຄຄີຍ໌ຈຶ່ງແຈ້ງເຣື່ອງນີ້ໃຫ້ກິກຸທັງຫລາຍຊາບ ບັນດາກິກຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມໂພນທະນາວ່າ "ຈັ່ງໃດພວກກິກຸສັຕຕຣສວັຄຄີຍ໌ຈຶ່ງສັນກັຕຕາຫານໃນເວລາວິກາລລະ" ຄັນກິກຸທັງຫລາຍຕຳຫນິພວກກິກຸສັຕຕຣສວັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຸສັຕຕຣສວັຄຄີຍ໌ວ່າ "ກິກຸທັງຫລາຍ ຊາບວ່າ ພວກທ່ານສັນກັຕຕາຫານ ໃນເວລາວິກາລແມ່ນແທ້ບໍ" ພວກກິກຸສັຕຕຣສວັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຈຶ່ງສັນກັຕຕາຫານໃນເວລາວິກາລລະ ໂມຄບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒໔໘] ກໍ ກິກษຸໃດຄ້ຽວຂອງຄ້ຽວ ຫລືຈັນຂອງຈັນໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໒໔໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກษຸ ມີອະທິບາຍວ່າ ຊື່ວ່າກິກษຸ ເພາະເປັນຜູ້ຂໍ ฯລฯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກษຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ເວລາວິກາລ ຫມາຍເອົາເວລາເມື່ອທ່ຽງວັນລ່ວງໄປຈົນເຖິງອຣຸຕຂຶ້ນ
ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂກຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ
ທີ່ຊື່ວ່າ ຂອງຈັນ ໄດ້ແກ່ ໂກຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປາ ຊີ້ນ ກິກษຸຮັບປະເຄນດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະຈັນ" ຕ້ອງອາບັຕິທຸກກຏ ຈັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໔. ໂກຊນວັຄ ໗. ວິກາລໂກຊນສິກຂາບົທອນາປັຕຕິວາຣ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໒໕໐] ເວລາວິກາລ ກິກษຸສຳຄັນວ່າເປັນວິກາລ ຄ້ຽວຂອງຄ້ຽວຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌
ເວລາວິກາລ ກິກษຸບໍ່ແນ່ໃຈ ຄ້ຽວຂອງຄ້ຽວຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌
ເວລາວິກາລ ກິກษຸສຳຄັນວ່າເປັນກາລ ຄ້ຽວຂອງຄ້ຽວຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຏ

ກິກษຸຮັບປະເຄນຍາມກາລິກ ສັຕຕາຫກາລິກ ຍາວຊີວິກໄວ້ເປັນອາຫາຣ ຕ້ອງອາບັຕິທຸກກຏ ຈັນ ຕ້ອງອາບັຕິທຸກກຏທຸກໆຄຳກືນ

ກາລ ກິກຂຸສຳຄັນວ່າເປັນວິກາລ ຕ້ອງອາບັຕິທຸກກະ
ກາລ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ກາລ ກິກຂຸສຳຄັນວ່າເປັນກາລ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໕໑] ໑. ກິກຂຸສັນຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ເມື່ອມີເຫຕຸຜົລທີ່ສົມຄວຣ

໔. ກິກຂຸວິກົລຈິຕ

໖. ກິກຂຸຕົ້ນບັນຍັດ

ວິກາລໂກຊນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຕ໌] ໔. ໂກຊນວັຄ ໘. ສັນນິທິກາຣກສິກຂາບົທ
ນິທານວັຕຖຸ

໔. ໂກຊນວັຄ

໘. ສັນນິທິກາຣກສິກຂາບົທ

ວ່າດ້ວຍການສະສົມໂກຊນະ

ເຣື່ອງພຣະເວລັດຖສີສະ

[໔໕໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທທເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະເວລັດຖສີສະ ພຣະອຸປັຊຌາຍ໌ຂອງທ່ານພຣະອານົນທ໌ຢູ່ໃນປ່າ ທ່ານທຽວບິຕທບາຕໄດ້ມາກມາຍ ເອົາເຂົ້າສຸກເປົ່າໄປຕາກແຫ້ງເກັບໄວ້ທີ່ອາຣາມ ຄາວທີ່ຕ້ອງການອັຕຕາຫາຣກໍນຳມາແຊ່ນ້ຳແລ້ວສັນ ດົນໆຈຶ່ງຈະເຂົ້າໄປບິຕທບາຕໃນຫມູ່ບ້ານ ກິກຂຸທັງຫລາຍໄດ້ກ່າວກັບທ່ານພຣະເວລັດຖສີສະດັ່ງນີ້ວ່າ “ທ່ານ ເປັນຫຍັງດົນໆທ່ານຈຶ່ງເຂົ້າໄປບິຕທບາຕໃນຫມູ່ບ້ານ” ລຳດັບນັ້ນ ທ່ານພຣະເວລັດຖສີສະຈຶ່ງແຈ້ງເຣື່ອງນັ້ນໃຫ້ກິກຂຸທັງຫລາຍ

ຊາບ ພິກຂຸທັງຫລາຍຖາມວ່າ "ທ່ານ ທ່ານຈັນອາຫານທີ່ເກັບສະສົມໄວ້ຫລື" ທ່ານຕອບວ່າ "ແມ່ນແລ້ວ ຂນ້ອຍ" ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ"ຈັ່ງໃດທ່ານພຣະເວຣັຏກຖສີສະຈຶ່ງຈັນໂພຊນະທີ່ເກັບສະສົມໄວ້ລະ" ຄັນພິກຂຸທັງຫລາຍຕຳໜິທ່ານພຣະເວຣັຏກຖສີສະໂດຍປະການຕ່າງໆແລ້ວຈຶ່ງນຳເອົາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸຊົງສອບຖາມທ່ານພຣະເວຣັຏກຖສີສະວ່າ "ເວຣັຏກຖສີສະ ຊາບວ່າ ທ່ານຈັນໂພຊນະທີ່ເກັບສະສົມໄວ້ ແມ່ນແທ້ບໍ" ພຣະເຖຣະທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຣເຈົ້າຊົງຕຳໜິວ່າ "ຯລຯ ເວຣັຏກຖສີສະ ຈັ່ງໃດທ່ານຈຶ່ງຈັນໂພຊນະທີ່ເກັບສະສົມໄວ້ລະ ເວຣັຏກຖສີສະ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໕໓] ກໍ ພິກຂຸໃດຄ້ຽວຂອງຄ້ຽວຫລືຈັນຂອງຈັນທີ່ເກັບສະສົມໄວ້ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະເວຣັຏກຖສີສະ ຈົບ

ສິກຂາບົທວິພັງຄ໌

[໔໕໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຂອງທີ່ເກັບສະສົມໄວ້ ຄື ຂອງທີ່ພິກຂຸຮັບປະເຄນໃນວັນນີ້ແລ້ວຈັນໃນວັນອື່ນ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງຈັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປາ ຊີ້ນ ພິກຂຸຮັບປະເຄນດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະຈັນ" ຕ້ອງອາບັຕິທຸກກຏ ຈັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ປິທກາຊນິຍ໌

ຕິກປາຈິຕຕີຍ໌

[໔໕໕] ຂອງເກັບສະສົມໄວ້ ກິກຂຸສຳຄັນວ່າເປັນຂອງເກັບສະສົມໄວ້ ຄ້ຽວຂອງຄ້ຽວ ຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ຂອງເກັບສະສົມໄວ້ ກິກຂຸບໍ່ແນ່ໃຈ ຄ້ຽວຂອງຄ້ຽວຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ຂອງເກັບສະສົມໄວ້ ກິກຂຸສຳຄັນວ່າບໍ່ແມ່ນຂອງເກັບສະສົມໄວ້ ຄ້ຽວຂອງຄ້ຽວຫລືຈັນຂອງຈັນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸຍ

ກິກຂຸຮັບປະເຄນຍາມກາລິກ ສັຕຕາຫກາລິກ ຍາວຊີວິກໄວ້ເປັນອາຫານ ຕ້ອງອາບັຕິທຸກກຸຍ ກິກຂຸຈັນ ຕ້ອງອາບັຕິທຸກກຸຍທຸກໆຄຳກືນ

ບໍ່ແມ່ນຂອງເກັບສະສົມໄວ້ ກິກຂຸສຳຄັນວ່າເປັນຂອງເກັບສະສົມໄວ້ ຕ້ອງອາບັຕິທຸກກຸຍ

ບໍ່ແມ່ນຂອງເກັບສະສົມໄວ້ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຍ

ບໍ່ແມ່ນຂອງເກັບສະສົມໄວ້ ກິກຂຸສຳຄັນວ່າບໍ່ແມ່ນເປັນຂອງເກັບສະສົມໄວ້ ບໍ່ຕ້ອງອາບັຕິ

ອນາປັຕຕິວານ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໕໖] ໑. ກິກຂຸເກັບຂອງທີ່ເປັນຍາວກາລິກໄວ້ຈັນຊົ່ວກາລ

໒. ກິກຂຸເກັບຂອງທີ່ເປັນຍາມກາລິກໄວ້ຈັນຊົ່ວຍາມ[1]

໓. ກິກຂຸເກັບຂອງທີ່ເປັນສັຕຕາຫກາລິກໄວ້ຈັນຊົ່ວສັປດາຫ໌

໔. ກິກຂຸຈັນຂອງທີ່ເປັນຍາວຊີວິກເມື່ອມີເຫຕຸຜົລສົມຄວນ

໕. ກິກຂຸວິກົລຈິຕ

໖. ກິກຂຸຕົ້ນບັນຍັດ

ສັນນິຄິກາຣກສິກຂາບົທທີ ໘ ຈົບ

ເຊີງອັນຖະ :

໑ ຊົ່ວກາລ ຄືຊົ່ວເວລາທ່ຽງວັນ, ຊົ່ວຍາມ ຄືຊົ່ວປັຈສິມຍາມ (ວິ. ອ. ໒/໔໕໖/໓໗໘, ເບິ່ງເຊີງ

ອັນຖະ ຂໍ້ ໔໖໑ ໜ້າ ໑໙໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂກຊນວັຄ ໑. ປຕິຕໂກຊນສິກຂາບົທ ນິທານວັຕຖຸ

໔. ໂກຊນວັຄ

໑. ປຕິຕໂກຊນສິກຂາບົທ

ວ່າດ້ວຍການອອກປາກຂໍໂກຊນະອັນປາຕີຕ

ເຣື້ອງພຣະຈັພພັຄຄີຍ໌

[໔໕໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຕ ພີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກພຸຈັພພັຄຄີຍ໌ອອກປາກຂໍໂກຊນະອັນປາຕີຕມາເພື່ອ ຕິນແລ້ວຈັນ ພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍ ສາກຍບຸຕຣຈຶ່ງອອກປາກຂໍໂກຊນະອັນປາຕີຕມາເພື່ອຕິນແລ້ວຈັນລະ ກັຕຕາຫາຣທີ່ດີໃຜຈະບໍ່ພໍໃຈ ກັຕຕາຫາຣແຊບໃຜຈະບໍ່ມັກລະ" ກິກພຸທັງຫລາຍໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາກິກພຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກພຸຈັພພັຄ ຄີຍ໌ຈຶ່ງອອກປາກຂໍໂກຊນະອັນປາຕີຕມາເພື່ອຕິນແລ້ວຈັນລະ" ຄັນກິກພຸທັງຫລາຍຕຳໜິພວກກິກພຸ ຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກພຸຈັພພັຄຄີຍ໌ວ່າ "ກິກພຸທັງຫລາຍ ຊາບວ່າ ພວກທ່ານອອກປາກຂໍໂກຊນະອັນປາຕີຕມາເພື່ອຕິນ ແລ້ວຈັນແມ່ນແທ້ບໍ" ພວກກິກພຸຈັພພັຄຄີຍ໌ທູລຮັບວ່າ "ຈິງ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄ ພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຆບຸຣຸຫທັງຫລາຍ ຈັ່ງໃດພວກທ່ານຈຶ່ງອອກປາກຂໍໂກຊນະອັນ ປາຕີຕມາເພື່ອຕິນແລ້ວຈັນລະ ໂມຆບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ

ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂກຊນວັຄ ໙. ປຕີຕໂກຊນສິກຂາບົທ ພຣະອນຸບັນຍັດ

ພຣະບັນຍັດ

ກໍ ພິກສຸໃດອອກປາກຂໍໂກຊນະອັນປາຕີຕເຊັ່ນນີ້ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ປລາ ຊີ້ນ ນົມສົດ ນົມສົ້ມ ມາເພື່ອຕນແລ້ວຈັນ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ເຣື້ອງພິກສຸເປັນໄຂ້

[໔໕໗] ສມັຍນັ້ນ ພິກສຸທັງຫລາຍເປັນໄຂ້ ພວກພິກສຸຜູ້ມີຫນ້າທີ່ສອບຖາມອາກາຣໄຂ້ ໄດ້ກ່າວກັບພວກພິກສຸຜູ້ເປັນໄຂ້ດັ່ງນີ້ວ່າ “ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື” ພວກພິກສຸເປັນໄຂ້ຕອບວ່າ “ເມື່ອກ່ອນພວກຜູ້ຂ້າອອກປາກຂໍໂກຊນະອັນປາຕີຕມາເພື່ອຕົນແລ້ວຈັນ ດັ່ງນັ້ນຈຶ່ງມີຄວາມຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢຳເກງຢູ່ວ່າ “ພຣະຜູ້ມີພຣະກາຄຊົງຫ້າມໄວ້” ຈຶ່ງບໍ່ອອກປາກຂໍ ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ”

ພິກສຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ພິກສຸເປັນໄຂ້ອອກປາກຂໍໂກຊນະອັນປາຕີຕໄດ້

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເປັນໄຂ້ອອກປາກຂໍໂກຊນະ ອັນປາຕີຕມາເພື່ອຕນແລ້ວຈັນໄດ້” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະອນຸບັນຍັດ

[໔໕໘] ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ ອອກປາກຂໍໂກຊນະອັນປາຕີຕເຊັ່ນນີ້ ຄື ເນີຍໃສ

ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ປລາ ຊີ້ນ ນົມສົດ ນົມສົ້ມ ມາເພື່ອຕົນແລ້ວສັນ ຕ້ອງອາບັຕິ ປາຈິຕຕີຍ໌

ເລື້ອງພິກຂຸເປັນໄຂ້ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຫ໌] ໔. ໂພຊນວັຄ ໙. ປຕີຕໂພຊນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໔໓໐] ຄຳວ່າ ໂພຊນະອັນປານີຕ ຄວາມວ່າ ທີ່ຊື່ວ່າ ເນີຍໃສ ໄດ້ແກ່ ເນີຍໃສທີ່ທຳຈາກນ້ຳນົມໂຄ ເນີຍໃສທີ່ທຳຈາກນ້ຳນົມແພະ ເນີຍໃສທີ່ທຳຈາກນ້ຳນົມກະບື ຫລືເນີຍໃສທີ່ທຳຈາກນ້ຳນົມສັຕວ໌ທີ່ມີຊີ້ນເປັນກັປປີຍະ

ທີ່ຊື່ວ່າ ເນີຍຂຸ້ນ ໄດ້ແກ່ ເນີຍຂຸ້ນທີ່ທຳຈາກນ້ຳນົມສັຕວ໌ເຫລົ່ານັ້ນ

ທີ່ຊື່ວ່າ ນ້ຳມັນ ໄດ້ແກ່ ນ້ຳມັນທີ່ສກັດຈາກເມັດງາ ນ້ຳມັນທີ່ສກັດຈາກເມັດພັນສຸ໌ຜັກກາດ ນ້ຳມັນທີ່ສກັດຈາກເມັດມະຊາງ ນ້ຳມັນທີ່ສກັດຈາກເມັດລະຫຸ່ງ ນ້ຳມັນທີ່ທຳຈາກແປວສັຕວ໌

ທີ່ຊື່ວ່າ ນ້ຳເຜີ້ງ ໄດ່ແກ່ ນ້ຳຫວານຂອງແມງເຜີ້ງ

ທີ່ຊື່ວ່າ ນ້ຳອ້ອຍ ໄດ້ແກ່ ນ້ຳຫວານທີ່ເກີດຈາກອ້ອຍ

ທີ່ຊື່ວ່າ ປລາ ທ່ານກ່າວເຖິງສັຕວ໌ທີ່ທ່ຽວໄປໃນນ້ຳ

ທີ່ຊື່ວ່າ ຊີ້ນ ໄດ້ແກ່ ຊີ້ນຂອງສັຕວ໌ບກທີ່ມີຊີ້ນເປັນກັປປີຍະ

ທີ່ຊື່ວ່າ ນົມສົດ ໄດ້ແກ່ ນ້ຳນົມໂຄ ນ້ຳນົມແພະ ນ້ຳນົມກະບືຫລືນ້ຳນົມຂອງສັຕວ໌ທີ່ມີຊີ້ນເປັນກັປປີຍະ

ທີ່ຊື່ວ່າ ນົມສົ້ມ ໄດ້ແກ່ ນົມສົ້ມທີ່ທຳຈາກນ້ຳນົມຂອງສັຕວ໌ເຫລົ່ານັ້ນ

ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ຄຳວ່າ ໂພຊນະອັນປານີຕເຊັ່ນນີ້ ໄດ້ແກ່ ໂພຊນະອັນປານີຕດັ່ງກ່າວ

ທີ່ຊື່ວ່າ ບໍ່ເປັນໄຂ້ ຄື ຜູ້ທີ່ເວັ້ນໂກຊນະອັນປາຕິຕ ກໍເປັນຢູ່ຜາສຸກ
ທີ່ຊື່ວ່າ ຜູ້ເປັນໄຂ້ ຄື ຜູ້ທີ່ເວັ້ນໂກຊນະອັນປາຕິຕ ຈະບໍ່ມີຄວາມຜາສຸກ
ກິກຂຸບໍ່ເປັນໄຂ້ອອກປາກຂໍມາເພື່ອຕົນ ຕ້ອງອາບັຕິທຸກກົດທຸກໆຄັ້ງທີ່ພຍາຍາມ
ກິກຂຸຮັບໄວ້ດ້ວຍຕັ້ງໃຈວ່າ ຈະຈັນຂອງທີ່ໄດ້ ຕ້ອງອາບັຕິທຸກກົດ
ກິກຂຸຈັນ ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄໍາກືນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂກຊນວັຄ ໙. ປຕີຕໂກຊນສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕິກປາຈິຕຕິຍ໌

[໔໖໑] ບໍ່ເປັນໄຂ້ ກິກຂຸສໍາຄັນວ່າບໍ່ເປັນໄຂ້ ອອກປາກຂໍໂກຊນະອັນປາຕິຕມາເພື່ອຕົນແລ້ວຈັນ ຕ້ອງອາບັຕິປາຈິຕຕິຍ໌
ບໍ່ເປັນໄຂ້ ກິກຂຸບໍ່ແນ່ໃຈ ອອກປາກຂໍໂກຊນະອັນປາຕິຕມາເພື່ອຕົນແລ້ວຈັນ ຕ້ອງອາບັຕິປາຈິຕຕິຍ໌
ບໍ່ເປັນໄຂ້ ກິກຂຸສໍາຄັນວ່າເປັນໄຂ້ ອອກປາກຂໍໂກຊນະອັນປາຕິຕມາເພື່ອຕົນແລ້ວຈັນ ຕ້ອງອາບັຕິປາຈິຕຕິຍ໌

ທຸກທຸກກົດ

ເປັນໄຂ້ ກິກຂຸສໍາຄັນວ່າບໍ່ເປັນໄຂ້ ຕ້ອງອາບັຕິທຸກກົດ
ເປັນໄຂ້ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ເປັນໄຂ້ ກິກຂຸສໍາຄັນວ່າເປັນໄຂ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໖໔] ໑. ກິກຂຸເປັນໄຂ້
໒. ກິກຂຸເປັນໄຂ້ອອກປາກຂໍມາແລ້ວຫາຍເປັນໄຂ້ຈຶ່ງຈັນ
໓. ກິກຂຸຈັນໂກຊນະທີ່ເຫລືອຂອງກິກຂຸເປັນໄຂ້
໔. ກິກຂຸອອກປາກຂໍຈາກຍາຕ

໕. ພິກຂຸອອກປາກຂໍຈາກຄົນປວາຣະນາ
໖. ພິກຂຸອອກປາກຂໍເພື່ອພິກຂຸອື່ນ
໗. ພິກຂຸຈ່າຍມາດ້ວຍຊັພຍ໌ຂອງຕົນ
໘. ພິກຂຸວິກົລຈິດ
໙. ພິກຂຸຕົ້ນບັນຍັດ

ປກິຕໂພຊນສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໔. ໂພຊນວັຄ ໑໐. ທັນຕໂປນສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໑໐. ທັນຕໂປນສິກຂາບົທ

ວ່າດ້ວຍການຮັບປະເຄນອາຫານນອກຈາກນ້ຳແລະໄມ້ຊຳຣະແຂ້ວ

ເຣື້ອງພິກຂຸຮູບນຶ່ງ

[໒໖໓] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຊເຈົ້າປະທັບຢູ່ ຓະ ກູຍາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພິກຂຸຮູບນຶ່ງຜູ້ຖືວ່າທຸກຢ່າງເປັນຂອງບັງສຸກຸລ ພັກຢູ່ໃນປ່າຊ້າ ທ່ານບໍ່ປຣາຖນາຮັບກັຕຕາຫານທີ່ພວກຊາວບ້ານຖວາຍ ທງວຖືເອົາເຄື່ອງເຊ່ນຕາມປ່າຊ້າເຫງົ້າໄມ້ຫລືລໍຣະນີປະຕູມາຈັນ ພວກຊາວບ້ານພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກຂຸນີ້ຈຶ່ງຖືເອົາເຄື່ອງເຊ່ນຂອງພວກເຮົາໄປຈັນເອງລະ ພິກຂຸນີ້ອ້ວນລ່ຳ ເຫັນທີຈະຈັນຊີ້ນມນຸຫຍ໌ແລ້ວຕີບໍ່" ພວກພິກຂຸໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກຂຸຈຶ່ງກືນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍລະ" ຄັນພິກຂຸທັງຫລາຍຕຳໜິພິກຂຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸ

ນັ້ນວ່າ "ພິກຂຸ ຊາບວ່າ ທ່ານຈັນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍ ແມ່ນແທ້ບໍ" ພິກຂຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຊ ຈັ່ງໃດທ່ານຈຶ່ງກິນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍລະ ໂມຄບຸຣຸຊ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກຂຸໃດກິນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລຳຄອ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງພິກຂຸຮູບນຶ່ງ ຈົບ

ຊົງອນຸຍາຕນ້ຳແລະໄມ້ຊຳຣະແຂ້ວ

[໔໖໔] ສມັຍນັ້ນ ພິກຂຸທັງຫລາຍມີຄວາມຢຳເກງ ບໍ່ຍອມຫຍິບນ້ຳແລະໄມ້ຊຳຣະຟັນໃຊ້ ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຊົງອນຸຍາຕວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຖືເອົານ້ຳແລະໄມ້ຊຳຣະແຂ້ວມາໃຊ້ເອງໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໖໕] ອີກຢ່າງນຶ່ງ ພິກຂຸໃດກິນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທວິພັງຄ໌

[໔໖໖] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ທີ່ຍັງບໍ່ມີຜູ້ຖວາຍ ທ່ານກ່າວເຖິງຂອງທີ່ຍັງບໍ່ໄດ້ຮັບປະເຄນ

ລັກສະນະການຮັບປະເຄນ

ທີ່ຊື່ວ່າ ມີຜູ້ຖວາຍ ຄື (໑) ເຂົາຖວາຍດ້ວຍກາຍ ດ້ວຍຂອງເນື່ອງດ້ວຍກາຍ ຫລືດ້ວຍໂຍນໃຫ້ (໒) ເຂົາຢູ່ໃນຫັດຖບາສ (໓) ກິກຂຸຮັບປະເຄນດ້ວຍກາຍຫລືດ້ວຍຂອງເນື່ອງດ້ວຍກາຍ ນີ້ຊື່ວ່າມີຜູ້ຖວາຍ

ທີ່ຊື່ວ່າ ອາຫານ ໄດ້ແກ່ ຂອງທີ່ຈັນໄດ້ ຍົກເວັ້ນນ້ຳແລະໄມ້ຊຳຣະແຂ້ວ ນີ້ຊື່ວ່າອາຫານ

ຄຳວ່າ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຄື ຍົກເວັ້ນນ້ຳແລະໄມ້ຊຳຣະແຂ້ວ

ກິກຂຸຖືເອົາດ້ວຍຕັ້ງໃຈວ່າ ຈະຄ້ຽວ ຈະຈັນ ຕ້ອງອາບັດທຸກກົດ

ກິກຂຸຈັນ ຕ້ອງອາບັດປາຈິດຕີຍ໌ທຸກໆຄຳກືນ

ບົທພາຊນີຍ໌

ຕິກປາຈິດຕີຍ໌

[໒໖໗] ອາຫານທີ່ຍັງບໍ່ໄດ້ຮັບປະເຄນ ກິກຂຸສຳຄັນວ່າຍັງບໍ່ຮັບປະເຄນ ຈັນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລຳຄໍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັດປາຈິດຕີຍ໌

ອາຫານທີ່ຍັງບໍ່ໄດ້ຮັບປະເຄນ ກິກຂຸບໍ່ແນ່ໃຈ ຈັນອາຫານທີ່ບໍ່ມີຜູ້ຖວາຍໃຫ້ລ່ວງລຳຄໍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງປາຈິດຕີຍ໌

ອາຫານທີ່ຍັງບໍ່ໄດ້ຮັບປະເຄນ ກິກຂຸສຳຄັນວ່າຮັບປະເຄນ ຈັນອາຫານທີ່ບໍ່ມີຜູ້ຖວາຍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັດປາຈິດຕີຍ໌

ທຸກທຸກກົດ

ອາຫານທີ່ຮັບປະເຄນ ກິກຂຸສຳຄັນວ່າຍັງບໍ່ໄດ້ຮັບປະເຄນ ຕ້ອງອາບັດທຸກກົດ

ອາຫານທີ່ຮັບປະເຄນ ກິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກົດ

ອາຫານທີ່ຮັບປະເຄນ ກິກຂຸສຳຄັນວ່າຮັບປະເຄນ ບໍ່ຕ້ອງອາບັດ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິດຕີຍກັດຫ໌] ໔. ໂກຊນວັຄ ຮວມສິກຂາບົທທີ່ມີໃນໂກຊນວັຄ

ອນາປັດຕິວານ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໖໓໘] ໑. ພິກຂຸໃຊ້ນ້ຳແລະໄມ້ຊຳຣະແຂ້ວ
໒. ພິກຂຸຫຍິບຍາມຫາວິກັຕິ ໔ ຈັນເອງໄດ້ ເມື່ອມີເຫຕຸຜົລທີ່ສົມຄວຣ ໃນເມື່ອບໍ່ມີກັປປິຍກາຣກຖວາຍ
໓. ພິກຂຸວິກົລຈິຕ
໔. ພິກຂຸຕົ້ນບັນຍັດ

ທັນຕໂປນສິກຂາບົທທີ ໑໐ ຈົບ
ໂກຊນວັຄທີ ໔ ຈົບ

ຣວມສິກຂາບົທທີ່ມີໃນໂກຊນວັຄ

ໂກຊນວັຄມີ ໑໐ ສິກຂາບົທ ຄື
໑. ອາວສຖປິຕກສິກຂາບົທ ວ່າດ້ວຍກາຣຈັນກັຕຕາຫາຣໃນທີ່ພັກແຣມ
໒. ຄຕໂກຊນສິກຂາບົທ ວ່າດ້ວຍກາຣຈັນຄຕໂກຊນະ
໓. ປຣັມປຣໂກຊນສິກຂາບົທ ວ່າດ້ວຍກາຣຈັນປຣັມປຣໂກຊນະ
໔. ກາຕມາຕຸສິກຂາບົທ ວ່າດ້ວຍມາຣດາຂອງນາງກາຕາ
໕. ປຖມປວາຣຕາສິກຂາບົທ ວ່າດ້ວຍກາຣບອກຫ້າມກັຕຕາຫາຣຂໍ້ທີ ໑
໖. ທຸຕິຍປວາຣຕາສິກຂາບົທ ວ່າດ້ວຍກາຣບອກຫ້າມກັຕຕາຫາຣຂໍ້ທີ ໒
໗. ວິກາລໂກຊນສິກຂາບົທ ວ່າດ້ວຍກາຣຈັນໂກຊນະໃນເວລາວິກາລ
໘. ສັນນິລິກາຣກສິກຂາບົທ ວ່າດ້ວຍກາຣສະສົມໂກຊນະ
໙. ປຕິຕໂກຊນສິກຂາບົທ ວ່າດ້ວຍກາຣອອກປາກຂໍໂກຊນະອັນປາຕິຕ
໑໐. ທັນຕໂປນສິກຂາບົທ ວ່າດ້ວຍກາຣຮັບປະເຄນອາຫາຣນອກຈາກນ້ຳແລະໄມ້ຊຳຣະແຂ້ວ

ເຊີງອັນຖະ :

໑ ຍາມຫາວິກຸຕິ ໔ ຄື ຄູຖ ມູຕຣ ເຖົ່າ ດິນ (ວິ. ມ. ໕/໒໖໘/໓໖) ພິກຂຸອາພາລຫລືຖືກສັຕວ໌ມີພິສກັດຕອດ ຫຍິບຈັນໄດ້ໂດຍບໍ່ຕ້ອງຮັບປະເຄນ ຖ້າບໍ່ອາພາລກໍຄວຣຈະຮັບປະເຄນ (ວິ. ອ. ໓/໒໖໘/໑໗໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕທ໌] ໕. ອເຈລກວັຄ ໑. ອເຈລກສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

ຫມວດວ່າດ້ວຍນັກບວຊເປືອຍ

໑. ອເຈລກສິກຂາບົທ

ວ່າດ້ວຍນັກບວຊເປືອຍ

ເຣື້ອງພຣະອານົນທ໌

[໒໒໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທລເຈົ້າປະທັບຢູ່ ຓະ ກູຓາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພຣະສົງຆ໌ມີຂອງຄ້ຽວເຫລືອເຟືອ ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງວ່າ “ອານົນທ໌ ຖ້າເຊັ່ນນັ້ນ ທ່ານຈົ່ງແຈກຂນົມເປັນທານແກ່ພວກຄົນກິນເດນ” ທ່ານພຣະອານົນທ໌ທູລຮັບສນອງພຣະດຳຣັສຂອງພຣະຜູ້ມີພຣະພາຄ ແລ້ວຈັດພວກຄົນກິນເດນໃຫ້ນັ່ງຕາມລຳດັບ ແຈກຂນົມໃຫ້ຄົນລະຕ່ອນ ແຈກຂນົມໃຫ້ປຣິພາຊິກາຄົນນຶ່ງ ໒ ຕ່ອນດ້ວຍສຳຄັນວ່າເປັນຕ່ອນດຽວ ພວກປຣິພາຊິກາທີ່ຢູ່ໃກ້ໆໄດ້ກ່າວກັບປຣິພາຊິການັ້ນດັ່ງນີ້ວ່າ “ສມຕະຮູບນັ້ນເປັນຄູ່ຮັກຂອງທ່ານຫລື” ປຣິພາຊິການັ້ນຕອບວ່າ “ສມຕະຮູບນັ້ນບໍ່ແມ່ນຄູ່ຮັກຂອງຂະນ້ອຍ ທ່ານແຈກໃຫ້ ໒ ຕ່ອນດ້ວຍສຳຄັນວ່າແມ່ນຕ່ອນດຽວ”

ແມ່ນຄັ້ງທີ ໒ ທ່ານພຣະອານົນທ໌ກໍແຈກຂນົມໃຫ້ປຣິພາຊິການັ້ນ ໒ ຕ່ອນດ້ວຍສຳຄັນວ່າເປັນຕ່ອນດຽວ ພວກປຣິພາຊິກາທີ່ຢູ່ໃກ້ໆໄດ້ກ່າວກັບປຣິພາຊິການັ້ນ ດັ່ງນີ້ວ່າ “ສມຕະຮູບນັ້ນເປັນຄູ່ຮັກຂອງທ່ານຫລື” ປຣິພາຊິການັ້ນຕອບວ່າ “ສມຕະຮູບນັ້ນບໍ່ແມ່ນຄູ່ຮັກຂອງຂະນ້ອຍ ທ່ານແຈກໃຫ້ ໒ ຕ່ອນ ດ້ວຍສຳຄັນວ່າເປັນຕ່ອນດຽວ”

ແມ່ນຄັ້ງທີ ໓ ທ່ານພຣະອານົນທ໌ກໍແຈກຂນົມໃຫ້ປຣິພາຊິການັ້ນ ໒ ຕ່ອນດ້ວຍສຳຄັນວ່າເປັນຕ່ອນດຽວ ພວກປຣິພາຊິກາທີ່ຢູ່ໃກ້ໆໄດ້ກ່າວກັບປຣິພາຊິການັ້ນດັ່ງນີ້ວ່າ “ສມຕະຮູບນັ້ນເປັນຄູ່ຮັກຂອງທ່ານຫລື” ປຣິພາຊິການັ້ນຕອບວ່າ “ສມຕະຮູບນັ້ນບໍ່ແມ່ນຄູ່ຮັກຂອງຂະນ້ອຍ ທ່ານແຈກໃຫ້ ໒ ຕ່ອນ ດ້ວຍສຳຄັນວ່າເປັນຊິ້ນດຽວ”

ພວກປຣິພາຊິກາເຫລົ່ານັ້ນໂຕ້ຖຽງກັນວ່າ “ເປັນຄູ່ຮັກ ບໍ່ແມ່ນຄູ່ຮັກ”

ອາຊີວກຄົນນຶ່ງໄດ້ເຂົ້າໄປທີ່ທີ່ລ້ຽງອາຫາຣ ພິກຂຸຮູບນຶ່ງຄັ້ນເຂົ້າກັບເນີຍໃສ່ຈຳນວນຫລາຍ ໄດ້

ແຈກເຂົ້າກ້ອນໃຫຍ່ແກ່ອາຊີວົກນັ້ນ ຄັນແລ້ວ ອາຊີວົກນັ້ນໄດ້ຖືກ້ອນເຂົ້ານັ້ນໄປ ອາຊີວົກອີກຄົນນຶ່ງ ໄດ້ກ່າວກັບອາຊີວົກນັ້ນດັ່ງນີ້ວ່າ "ທ່ານໄດ້ກ້ອນເຂົ້າມາຈາກທີ່ໃດ" ອາຊີວົກນັ້ນຕອບວ່າ "ຂ້າພະເຈົ້າໄດ້ມາຈາກທີ່ລ້ຽງອາຫານຂອງຄຫບໍດີໄລ້ນສມຕາໂຄດົມ" ພວກອຸບາສົກໄດ້ຍິນອາຊີວົກເຫລົ່ານັ້ນສົນທນາກັນ ລໍາດັບນັ້ນ ອຸບາສົກເຫລົ່ານັ້ນໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອກິວາທພຣະຜູ້ມີພຣະກາຄແລ້ວນັ່ງ ຓະ ທີ່ສົມຄວຣ ອຸບາສົກເຫລົ່ານັ້ນຜູ້ນັ່ງ ຓະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະກາຄດັ່ງນີ້ວ່າ "ພຣະພຸທສເຈົ້າຂ້າ ພວກເດັຽຣະຖີຍ໌ເຫລົ່ານີ້ຕ້ອງກາຣຕິຕຽນພຣະພຸທສ ຕ້ອງກາຣຕິຕຽນພຣະລັມ ຕ້ອງກາຣຕິຕຽນພຣະສົງฆ໌ ຂໍປະທານອໂອກາສເຖີດ ພຣະພຸທສເຈົ້າຂ້າ ພຣະຄຸດເຈົ້າທັງຫລາຍໂປຣດຢ່າໃຫ້ສິ່ງຂອງແກ່ພວກເດັຽຣະຖີຍ໌ດ້ວຍມືຕົນເອງເລີຍ"

ລໍາດັບນັ້ນ ພຣະຜູ້ມີພຣະກາຄໄດ້ຊີ້ງຊີ້ແຈງໃຫ້ອຸບາສົກເຫລົ່ານັ້ນເຫັນແຈ້ງ ຊວນໃຫ້ຢາກຣັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານ ດ້ວຍລັມມີກຖາ ຈາກນັ້ນ ອຸບາສົກເຫລົ່ານັ້ນຊຶ່ງພຣະຜູ້ມີພຣະກາຄໄດ້ຊີ້ງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຣັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນ ເບີກບານລັມມີກຖາແລ້ວໄດ້ລຸກຈາກອາສນະ ຖວາຍອກິວາທພຣະຜູ້ມີພຣະກາຄທໍາປຣະທັກສິດ(ວຽນໄປທາງຂວາ) ແລ້ວຈາກໄປ

ຊົງປະຊຸມສົງฆ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງฆ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສະແດງລັມມີກຖາແກ່ກິກຂຸທັງຫລາຍໃຫ້ສົມຄວຣໃຫ້ເຫມາະສົມກັບເລື້ອງນັ້ນ ແລ້ວຣັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເພາະເຫຕຸນັ້ນ ເຣົາຈະບັນຍັດສິກຂາບົທແກ່ກິກຂຸທັງຫລາຍໂດຍອາສັຍອໍານາຈປໂຍດ ໑໐ ປະກາຣ ຄື

໑. ເພື່ອຄວາມຣັບວ່າດີແຫ່ງສົງฆ໌

໒. ເພື່ອຄວາມຜາສຸກແຫ່ງສົງฆ໌ ฯລฯ

໑໐. ເພື່ອເອື້ອເຟື້ອວິນັຍ"໑

ແລ້ວຈຶ່ງຣັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໐] ກ໋ ກິກຂຸໃດໃຫ້ຂອງຄ້ຽວຫລືຂອງລັນແກ່ອເຈລກ ປຣິພາຊກຫລືປຣິພາຊິກາດ້ວຍມືຕົນຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອານົນທ໌ ຈົບ

ສິກຂາບົທວິພັງຄ໌

[໔໗໑] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ອະເຈລກ ໄດ້ແກ່ ຊີເປືອຍຄົນໃດຄົນນຶ່ງຢູ່ໃນລັທທິປຣິພາຊກ

ທີ່ຊື່ວ່າ ປຣິພາຊກ ໄດ້ແກ່ ນັກບວຊຄົນໃດຄົນນຶ່ງຢູ່ໃນລັທທິປຣິພາຊກ ຍົກເວັ້ນພິກຂຸແລະສາມເຫຣ

ເຊີງອັນຖະ :

໑ ເບິ່ງຄວາມພິສດາຣ ຂໍ້ ໕໕໕ ໜ້າ ໙໔ ໃນເຫລັ້ມນີ້

ທີ່ຊື່ວ່າ ປຣິພາຊິກາ ໄດ້ແກ່ ນັກບວຊຍິງຄົນໃດຄົນນຶ່ງນັບເນື່ອງໃນລັທທິປຣິພາຊກ ຍົກເວັ້ນພິກຂຸນີ ສິກຂມານາແລະສາມເຫຣີ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຢ່າງ ນ້ຳແລະໄມ້ຊໍາຣະແຂ້ວ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງຈັນ ໄດ້ແກ່ ໂພຊນະ ໕ ຢ່າງຄື ເຂົ້າສຸກ ຂນົມສດ ເຂົ້າຕູ ປາ ຊີ້ນ

ຄໍາວ່າ ໃຫ້ ຄື ພິກຂຸໃຫ້ດ້ວຍກາຍ ດ້ວຍຂອງເນື່ອງດ້ວຍກາຍ ຫລືດ້ວຍໂຍນໃຫ້ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໗໔] ເດັຽຣະຖີຍ໌໑ ພິກຂຸສໍາຄັນວ່າເປັນເດັຽຣະຖີຍ໌ ໃຫ້ຂອງຄ້ຽວຫລືຂອງຈັນດ້ວຍມືຕົນ ຕ້ອງອາບັຕິປາຈິຕຕີຍ໌

ເດັຽຣະຖີຍ໌ ພິກຂຸບໍ່ແນ່ໃຈ ໃຫ້ຂອງຄ້ຽວຫລືຂອງຈັນດ້ວຍມືຕົນ ຕ້ອງອາບັຕິປາຈິຕຕີຍ໌

ເດັຽຣະຖີຍ໌ ພິກຂຸສໍາຄັນວ່າບໍ່ແມ່ນເດັຽຣະຖີຍ໌ໃຫ້ຂອງຄ້ຽວຫລືຂອງຈັນດ້ວຍມືຕນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຍ

ພິກຂຸໃຫ້ນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັຕິທຸກກຍ

ບໍ່ແມ່ນເດັຽຣະຖີຍ໌ ພິກຂຸສຳຄັນວ່າເປັນເດັຽຣະຖີຍ໌ ຕ້ອງອາບັຕິທຸກກຍ

ບໍ່ແມ່ນເດັຽຣະຖີຍ໌ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຍ

ບໍ່ແມ່ນເດັຽຣະຖີຍ໌ ພິກຂຸສຳຄັນວ່າບໍ່ແມ່ນເດັຽຣະຖີຍ໌ ບໍ່ຕ້ອງອາບັຕິ

ເຊີງອັນຖະ :

໑ ເດັຽຣະຖີຍ໌ ຄືຜູ້ຖືລັທທິນອກພຣະພຸທທສາສນາ ເປັນນັກບວຊຜູ້ຖືລັທທິອື່ນ (ວິ. ອ. ໓/໑໓໔/໑໐໕)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໕. ອເຈລກວັຄ ໑. ອເຈລກສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໓] ໑. ພິກຂຸໃຊ້ໃຫ້ຜູ້ອື່ນໃຫ້ ບໍ່ໄດ້ໃຫ້ເອງ

໒. ພິກຂຸວາງໃຫ້

໓. ພິກຂຸໃຫ້ຂອງໄລ້ທາພາຍນອກ

໔. ພິກຂຸວິກລຈິຕ

໕. ພິກຂຸຕົ້ນບັນຍັດ

ອເຈລກສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໕. ອເຈລກວັຄ ໒. ອຸຍໂຍຊນສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໔. ອຸຍໂຍຊຸນສິກຂາບົທ
ວ່າດ້ວຍການສົ່ງກັບ

ເຣື້ອງພຣະອຸປນັນທສາກຍບຸຕຣ
[໔ກ໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ກ່າວຊັກຊວນສັທລິວິຫາຣິກ ຂອງພຣະອ້າຍວ່າ "ທ່ານຈົ່ງມາເຖີດ ພວກເຮົາຈະໄປບິຕຫບາຕໃນຫມູ່ບ້ານ" ແລ້ວບໍ່ໄດ້ໃຫ້ທາຍົກ ຖວາຍຫຍັງແກ່ທ່ານ ນິມົນຕ໌ກັບດ້ວຍກ່າວວ່າ "ທ່ານຈົ່ງກັບໄປເຖີດ ເວົ້າຫລືນັ່ງກັບທ່ານ ບໍ່ເຮັດ ໃຫ້ເຮົາສະບາຍ ເຮົາເວົ້າຫລືນັ່ງຄົນດຽວສະບາຍກວ່າ" ເມື່ອໃກ້ເວລາຈັນແລ້ວ ກິກຂຸນັ້ນບໍ່ສາມາດ ຫາບິຕຫບາຕຈັນໄດ້ທັນ ແມ່ນໄປຮັບກັຕຕາຫາຣທີ່ເຂົາແຈກໃນໂຮງຈັນກໍບໍ່ທັນ ຈຶ່ງບໍ່ໄດ້ຈັນ ກັຕຕາຫາຣ ຄັນກິກຂຸນັ້ນໄປເຖິງອາຣາມ ຈຶ່ງເລົ່າເຣື້ອງນັ້ນໃຫ້ກິກຂຸທັງຫລາຍຊາບ ບັນດາກິກຂຸຜູ້ ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍ ບຸຕຣກ່າວຊັກຊວນກິກຂຸວ່າ 'ທ່ານຈົ່ງມາເຖີດ ພວກເຮົາຈະໄປບິຕຫບາຕໃນຫມູ່ບ້ານ ແລ້ວບໍ່ໄດ້ ໃຫ້ທາຍົກຖວາຍຫຍັງແກ່ທ່ານ ແລ້ວນິມົນຕ໌ກັບລະ" ຄັນກິກຂຸທັງຫລາຍຕຳຫນິທ່ານພຣະອຸປນັນ ທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫດຸຊົງສອບຖາມທ່ານ ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານກ່າວຊັກຊວນກິກຂຸວ່າ ທ່ານຈົ່ງມາເຖີດ ພວກເຮົາຈະໄປບິຕຫບາຕໃນຫມູ່ບ້ານ ແລ້ວບໍ່ໄດ້ໃຫ້ທາຍົກຖວາຍຫຍັງແກ່ທ່ານ ແລ້ວນິມົນຕ໌ກັບ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄ ພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຮ ຈັ່ງໃດທ່ານຈຶ່ງກ່າວຊັກຊວນກິກຂຸວ່າ ທ່ານຈົ່ງມາເຖີດ ພວກເຮົາຈະໄປບິຕຫບາຕໃນຫມູ່ບ້ານແລ້ວບໍ່ໄດ້ໃຫ້ທາຍົກຖວາຍຫຍັງແກ່ທ່ານ ແລ້ວນິມົນຕ໌ກັບ ລະ ໂມຄບຸຣຸຮ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໕] ກໍ ພິກຂຸໃດກ່າວຊັກຊວນພິກຂຸວ່າ "ທ່ານຈົ່ງມາເຖີດ ພວກເຮົາຈະໄປບິນທບາຕໃນຫມູ່ບ້ານຫລືໃນນິຄົມ" ແລ້ວໃຫ້ທາຍົກຖວາຍຫລືບໍ່ໃຫ້ທາຍົກຖວາຍແກ່ທ່ານແລ້ວນິມົນຕ໌ກັບດ້ວຍກ່າວວ່າ "ທ່ານຈົ່ງກັບໄປເຖີດ ເວົ້າຫລືນັ່ງກັບທ່ານບໍ່ເຮັດໃຫ້ເຮົາສະບາຍ ເຮົາເວົ້າຫລືນັ່ງຄົນດຽວສະບາຍກວ່າ" ມີເຫາຕຸຜົລພຽງເທົ່ານີ້ ບໍ່ມີຫຍັງອື່ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໔໗໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ຄຳວ່າ ພິກຂຸ ຫມາຍເຖິງ ພິກຂຸຮູບອື່ນ

ຄຳວ່າ ທ່ານຈົ່ງມາເຖີດ. . . ໃນຫມູ່ບ້ານຫລືໃນນິຄົມ ຄື ຫມູ່ບ້ານກໍດີ ນິຄົມກໍດີ ເມືອງກໍດີ ຊື່ວ່າຫມູ່ບ້ານແລະນິຄົມ

ຄຳວ່າ ໃຫ້ທາຍົກຖວາຍແກ່ທ່ານ ຄື ໃຫ້ເຂົາຖວາຍເຂົ້າຕົ້ມ ເຂົ້າສວຍ ຂອງຄ້ຽວຫລືຂອງສັນ

ຄຳວ່າ ບໍ່ໃຫ້ທາຍົກຖວາຍ ຄື ບໍ່ໃຫ້ທາຍົກຖວາຍຫຍັງໆ

ຄຳວ່າ ນິມົນຕ໌ກັບ ຄວາມວ່າ ພິກຂຸປຣາຖນາຈະກຣະຊິກກຣະຊີ້ ປຣາຖນາຈະຫຍອກເຍົ້າ ປຣາຖນາຈະນັ່ງໃນທີ່ລັບ ຫລືປຣາຖນາຈະປະພຶດອນາຈາຣກັບມາຕຸຄາມ ກ່າວນິມົນຕ໌ກັບຢ່າງນີ້ວ່າ "ທ່ານຈົ່ງກັບໄປເຖີດ ເວົ້າຫລືນັ່ງກັບທ່ານ ບໍ່ເຮັດໃຫ້ເຮົາສະບາຍ ເຮົາເວົ້າຫລືນັ່ງຄົນດຽວສະບາຍກວ່າ" ຕ້ອງອາບັຕິທຸກກຕ ເມື່ອທ່ານໄປເຖິງຣະຍະທີ່ເບິ່ງ ບໍ່ເຫັນຫລືບໍ່ໄດ້ຍິນສຽງ ພິກຂຸຮູບທີ່ນິມົນຕ໌ກັບຕ້ອງອາບັຕິທຸກກຕ ເມື່ອທ່ານໄປຈົນພົ້ນ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ມີເຫາຕຸຜົລພຽງເທົ່ານີ້ບໍ່ມີຫຍັງອື່ນ ຄວາມວ່າ ບໍ່ມີເຫາຕຸຜົລຢ່າງອື່ນເພື່ອສົ່ງກັບ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔໗໗] ອຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ນິມົນຕ໌ກັບ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກຂຸບໍ່ແນ່ໃຈ ນິມົນຕ໌ກັບ ຕ້ອງອາບັດປາຈິດຕີຍ໌
ອຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ນິມົນຕ໌ກັບ ຕ້ອງອາບັດປາຈິດຕີຍ໌

ທຸກກດ

ພິກຂຸທຳເປັນໂກດ ນິມົນຕ໌ກັບ ຕ້ອງອາບັດທຸກກດ
ພິກຂຸນິມົນຕ໌ອນຸປສັມບັນກັບ ຕ້ອງອາບັດທຸກກດ
ພິກຂຸທຳເປັນໂກດ ນິມົນຕ໌ກັບ ຕ້ອງອາບັດທຸກກດ
ອນຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັດທຸກກດ
ອນຸປສັມບັນ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກດ
ອນຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັດທຸກກດ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື
[໔໗໗] ໑. ພິກຂຸນິມົນຕ໌ກັບດ້ວຍຄິດວ່າ ເຮົາສອງຮູບຈັນດ້ວຍກັນ ກັຕຕາຫາຣຈະບໍ່ພໍ
໒. ພິກຂຸນິມົນຕ໌ກັບດ້ວຍຄິດວ່າ ຮູບນັ້ນພົບຂອງມີຄ່າແລ້ວຈະເກີດຄວາມໂລກ
໓. ພິກຂຸນິມົນຕ໌ກັບດ້ວຍຄິດວ່າ ຮູບນັ້ນເຫັນມາຕຸຄາມແລ້ວຈະເກີດຄວາມກຳຫນັດ
໔. ພິກຂຸນິມົນຕ໌ກັບດ້ວຍສັ່ງວ່າ ທ່ານຈົ່ງນຳເຂົ້າຕົ້ມ ເຂົ້າສວຍ ຫລືຂອງຄ້ຽວຂອງຈັນໄປຖວາຍ
ພິກຂຸເປັນໄຂ້ ພິກຂຸຜູ້ຕກຄ້າງຢູ່ ຫລືພິກຂຸຜູ້ເຝົ້າວິຫາຣ
໕. ພິກຂຸບໍ່ປະສົງຄ໌ຈະປະພຶດອນາຈາຣແຕ່ມີທຸຣະຈຳເປັນຈຶ່ງສົ່ງກັບ
໖. ພິກຂຸວິກລຈິຕ
໗. ພິກຂຸຕົ້ນບັນຍັດ

ອຸຍໂຍຊນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຟ໌] ໕. ອເຈລກວັຄ ໓. ສໂກຊນສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

ລ. ສໂກຊນສິກຂາບົທ
ວ່າດ້ວຍການເຂົ້າໄປແຊກແຊງໃນບ່ອນທີ່ມີຄົນ ໔ ຄົນ

ເຣື້ອງພຣະອຸປນັນທສາກຍບຸຕຣ
[໔ກລ] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຓ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ໄປເຮືອນຂອງສະຫາຍແລ້ວ ໄດ້ນັ່ງໃນຫ້ອງນອນກັບກັຣຍາຂອງສະຫາຍ ເທື່ອນັ້ນ ສະຫາຍນັ້ນໄດ້ເຂົ້າໄປຫາທ່ານພຣະອຸປນັນ ທສາກຍບຸຕຣເຖີງອາສນະ ຄັນເຖີງແລ້ວໄດ້ໄຫວ້ທ່ານພຣະອຸປນັນທສາກຍບຸຕຣ ແລ້ວນັ່ງ ຓະ ທີ່ສົມຄວຣ ສະຫາຍນັ້ນຜູ້ນັ່ງ ຓະ ທີ່ສົມຄວຣແລ້ວໄດ້ກ່າວກັບກັຣຍາດັ່ງນີ້ວ່າ "ທ່ານຈົ່ງຖວາຍ ກິກສາຫາຣແດ່ພຣະຄຸຓເຈົ້າ" ລຳດັບນັ້ນ ກັຣຍາຂອງສະຫາຍນັ້ນໄດ້ຖວາຍກິກສາຫາຣແກ່ທ່ານ ອຸປນັນທສາກຍບຸຕຣແລ້ວ ຄັ້ງນັ້ນ ສະຫາຍນັ້ນໄດ້ກ່າວກັບທ່ານພຣະອຸປນັນທສາກຍບຸຕຣດັ່ງນີ້ວ່າ "ນິມົນຕ໌ພຣະຄຸຓເຈົ້າກັບໄປເຖີດຂນ້ອຍ ເພາະໄດ້ຖວາຍກິກສາຫາຣແດ່ພຣະຄຸຓເຈົ້າແລ້ວ" ກັຣຍາ ຂອງສະຫາຍນັ້ນກຳຫນົດຮູ້ວ່າສາມີຖືກຣາຄະຫຸ້ມລ້ອມແລ້ວ ຈຶ່ງໄດ້ກ່າວກັບທ່ານພຣະອຸປນັນທສາກຍ ບຸຕຣດັ່ງນີ້ວ່າ "ພຣະຄຸຓເຈົ້າ ນິມົນຕ໌ທ່ານນັ່ງຢູ່ເຖີດ ຢ່າຟ້າວກັບ" ແມ່ນຄັ້ງທີ ໔ ສະຫາຍນັ້ນ ຯລຯ ແມ່ນຄັ້ງທີ ລ ສະຫາຍນັ້ນໄດ້ກ່າວກັບທ່ານພຣະອຸປນັນທສາກຍບຸຕຣດັ່ງນີ້ວ່າ "ນິມົນຕ໌ພຣະຄຸຓເຈົ້າ ກັບໄປເຖີດຂນ້ອຍ ເພາະໄດ້ຖວາຍກິກສາຫາຣແດ່ພຣະຄຸຓເຈົ້າແລ້ວ" ແມ່ນຄັ້ງທີ ລ ກັຣຍາຂອງ ສະຫາຍນັ້ນ ກໍໄດ້ກ່າວກັບທ່ານພຣະອຸປນັນທສາກຍບຸຕຣດັ່ງນີ້ວ່າ "ພຣະຄຸຓເຈົ້າ ນິມົນຕ໌ທ່ານນັ່ງຢູ່ ເຖີດ ຢ່າຟ້າວກັບ" ຄັ້ງນັ້ນ ສະຫາຍຂອງທ່ານພຣະອຸປນັນທສາກຍບຸຕຣ ໄດ້ອອກໄປທ່ຽວຟ້ອງ ກິກສຸທັງຫລາຍວ່າ "ພຣະຄຸຓເຈົ້າອຸປນັນທສາກຍບຸຕຣຮູບນີ້ນັ່ງໃນຫ້ອງນອນກັບກັຣຍາຂອງຜູ້ຂ້າ ຜູ້ຂ້ານິມົນຕ໌ໃຫ້ທ່ານກັບ ກໍບໍ່ປຣາຖນາຈະກັບ ພວກຜູ້ຂ້າມີກິຈມາກ ມີງານທີ່ຕ້ອງທຳມາກ" ບັນດາ ກິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍ ບຸຕຣຈຶ່ງເຂົ້ານັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນລະ" ຄັນກິກສຸທັງຫລາຍຕຳຫນິທ່ານພຣະອຸປນັນ ທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະ

ກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມฆບຸຣຸษ ຈັ່ງໃດທ່ານຈຶ່ງເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນລະ ໂມฆບຸຣຸษ ກາຣກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"
ແລ້ວຈຶ່ງຮັບສັ່ງໃຫ້ກິກษຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔ຖ໐] ກໍ ກິກษຸໃດເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໔ຖ໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກษຸ ມີອະທິບາຍວ່າ ຊື່ວ່າກິກษຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກษຸ ໃນຄວາມຫມາຍນີ້
ສກຸລທີ່ຊື່ວ່າ ມີຄົນ ໔ ຄົນ ຄື ສຕຣີກັບບຸຣຸษຢູ່ດ້ວຍກັນ ສຕຣີແລະບຸຣຸษຍັງບໍ່ແຍກອອກຈາກກັນທັງ ໔ ຄົນຍັງບໍ່ປາສຈາກຣາຄະ
ຄຳວ່າ ເຂົ້າໄປແຊກແຊງ ຄື ເຂົ້າໄປລ້າງໃນ
ຄຳວ່າ ນັ່ງ ຄວາມວ່າ ໃນເຮືອນໃຫຍ່ ກິກษຸນັ່ງລະຫັຕຖບາສບານປະຕູ໑ ຕ້ອງອາບັຕິປາຈິຕຕີຍ໌
ໃນເຮືອນເລັກ ກິກษຸນັ່ງລ້ຳທາງກາງຫ້ອງນອນ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔ຖ໔] ຫ້ອງນອນ ກິກษຸສຳຄັນວ່າເປັນຫ້ອງນອນ ເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌
ຫ້ອງນອນ ກິກษຸບໍ່ແນ່ໃຈ ເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌
ຫ້ອງນອນ ກິກษຸສຳຄັນວ່າບໍ່ແມ່ນຫ້ອງນອນ ເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກາດ
ບໍ່ແມ່ນຫ້ອງນອນ ພິກຂຸສໍາຄັນວ່າເປັນຫ້ອງນອນ ຕ້ອງອາບັດທຸກກາດ
ບໍ່ແມ່ນຫ້ອງນອນ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກາດ
ບໍ່ແມ່ນຫ້ອງນອນ ພິກຂຸສໍາຄັນວ່າບໍ່ແມ່ນຫ້ອງນອນ ບໍ່ຕ້ອງອາບັດ

ເຊີງອັນຖະ :
໑ ນັ່ງລະຫັດຖຸບາສບານປະຕູ ຫມາຍຄວາມວ່າ ນັ່ງຫ່າງຊໍ່ອຣະຍະຢຽດແຂນອອກໄປຈັບຕົວຄົນທີ່ນັ່ງໃກ້ໄດ້ ເທົ່າກັບ ໒ ສອກຄືບ (ວິ. ອ. ໒/໔໗໗-໗໘/໑໕໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໕. ອເຈລກວັຄ ໓. ສໂກຊນສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື
[໒໗໓] ໑. ພິກຂຸນັ່ງໃນເຮືອນໃຫຍ່ຫ່າງຈາກບານປະຕູບໍ່ເກີນຫັດຖຸບາສ
໒. ພິກຂຸນັ່ງໃນເຮືອນເລັກບໍ່ລໍ້າທາງກາງຫ້ອງນອນ
໓. ພິກຂຸມີເພື່ອນຢູ່ດ້ວຍ
໔. ພິກຂຸນັ່ງໃນເຮືອນທີ່ຄົນທັງສອງອອກໄປແລ້ວ
໕. ພິກຂຸນັ່ງໃນເຮືອນທີ່ຄົນທັງສອງສວ່າງຈາກຣາຄະ
໖. ພິກຂຸນັ່ງໃນທີ່ບໍ່ແມ່ນຫ້ອງນອນ
໗. ພິກຂຸວິກົລຈິຕ
໘. ພິກຂຸຕົ້ນບັນຍັດ

ສໂກຊນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໕. ອເຈລກວັຄ ໔. ຣໂຫປຜິຈສັນນສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໔. ຣໂຫປະຕິຈັນນສິກຂາບົທ
ວ່າດ້ວຍການນັ່ງໃນທີ່ລັບມີສິ່ງກຳບັງ

ເຣື່ອງພຣະອຸປນັນທສາກຍບຸຕຣ

[໔໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິດ ິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ໄປເຮືອນຂອງສະຫາຍແລ້ວ ໄດ້ນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບພັຣຍາຂອງສະຫາຍ ຄັ້ງນັ້ນ ສະຫາຍນັ້ນໄດ້ຕຳຫນິ ປະນາມ ໂພນທນາວ່າ "ຈັ່ງໃດພຣະຄຸນເຈົ້າອຸປນັນທສາກຍບຸຕຣຈຶ່ງນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບພັຣ ຍາຂອງຜູ້ຂ້າລະ" ພິກຂຸທັງຫລາຍໄດ້ຍິນສະຫາຍຂອງທ່ານພຣະອຸປນັນທສາກຍບຸຕຣນັ້ນຕຳຫນິ ປະ ນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ ທ່ານພຣະອຸປນັນທສາກຍບຸຕຣຈຶ່ງນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບມາຕຸຄາມລະ" ຄັນພິກຂຸທັງ ຫລາຍຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະ ຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບ ມາຕຸຄາມ ແມ່ນແທ້ບໍ່" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ຈິງ ພຣະພຸທສເຈົ້າຂ້າ" ພຣະຜູ້ມີ ພຣະພາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຩ ຈັ່ງໃດທ່ານຈຶ່ງນັ່ງເທິງອາສນະທີ່ກຳບັງໃນທີ່ ລັບກັບມາຕຸຄາມລະ ໂມຄບຸຣຸຩ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"
ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໕] ກໍ ພິກສຸໃດນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບມາຕຸຄາມ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໔໗໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອະທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານ ໂຕແມ່ ຍິງມນຸສຍ໌ນັ້ນໂດຍທີ່ສຸດຈົນເມື່ອເດັກຍິງຊຶ່ງເກີດໃນມື້ນັ້ນ ຍິງໂຕກວ່ານີ້ບໍ່ຕ້ອງກ່າວເຖິງ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາແລະທີ່ລັບຫູ

ທີ່ຊື່ວ່າ ທີ່ລັບຕາ ຫມາຍເຖິງ ສຖານທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວຫລືງຶກສີສະຂຶ້ນ ໃຜໆກໍບໍ່ສາມາດແລເຫັນໄດ້

ທີ່ຊື່ວ່າ ທີ່ລັບຫູ ຫມາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດຈະໄດ້ຍິນຖ້ອຍຄຳທີ່ເວົ້າກັນຕາມປົກຕິໄດ້

ອາສນະທີ່ຊື່ວ່າ ທີ່ກຳບັງ ຄື ອາສນະທີ່ກຳບັງດ້ວຍຝາ ບານປະຕູ ເສື່ອລຳແພນ ມ່ານ ຕົ້ນໄມ້ ເສົາ ຫລືພ້ອມຢ່າງໃດຢ່າງນຶ່ງ

ຄຳວ່າ ນັ່ງ ຫມາຍຄວາມວ່າ ເມື່ອມາຕຸຄາມນັ່ງ ພິກສຸນັ່ງໃກ້ ຫລືນອນໃກ້ ຕ້ອງອາບັຕິປາຈິຕຕີຍ໌

ເມື່ອພິກສຸນັ່ງ ມາຕຸຄາມນັ່ງໃກ້ຫລືນອນໃກ້ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ທັງພິກສຸແລະມາຕຸຄາມນັ່ງຫລືນອນ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕສ໌] ໕. ອເຈລກວັຄ ໔. ຣໂຫປຕິຈັນນສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔໗໗] ມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ນັ່ງເທິງອາສນະທີ່ກຳບັງໃນທີ່ລັບ ຕ້ອງອາບັຕິ

ປາຈິຕຕີຍ໌

ມາຕຸຄາມ ພິກຂຸບໍ່ແນ່ໃຈ ນັ່ງເທິງອາສນະທີ່ກຳບັງໃນທີ່ລັບ ຕ້ອງອາບັຕິປາຈິຕຕີຍ໌

ມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ນັ່ງເທິງອາສນະທີ່ກຳບັງໃນທີ່ລັບ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກຕະ

ພິກຂຸນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຍຣະສານມີກາຍເປັນມນຸສຍ໌ຜູ້ຍິງ ຕ້ອງອາບັຕິທຸກກຸກຕະ

ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກຸກຕະ

ບໍ່ແມ່ນມາຕຸຄາມ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸກຕະ

ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໗] ໑. ພິກຂຸນັ່ງໃນທີ່ທີ່ມີບຸຣຸສຮູ້ດຽງສາຄົນນຶ່ງຢູ່ເປັນເພື່ອນ

໒. ພິກຂຸຢືນບໍ່ໄດ້ນັ່ງ

໓. ພິກຂຸບໍ່ໄດ້ມຸ່ງໃຫ້ເປັນທີ່ລັບ

໔. ພິກຂຸນັ່ງຄິດເຣື່ອງອື່ນ

໕. ພິກຂຸວິກົລຈິຕ

໖. ພິກຂຸຕົ້ນບັນຍັດ

ຣໂຫປຕິຈັນນສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕທ໌] ໕. ອເຈລກວັຄ ໕. ຣໂຫນິສັຊຊສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໕. ຣໂຫນິສັຊຊສິກຂາບົທ

ວ່າດ້ວຍການນັ່ງໃນທີ່ລັບ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໔໗໙] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ໄປເຮືອນຂອງສະຫາຍແລ້ວ ໄດ້ນັ່ງໃນທີ່ລັບກັບກັຣຍາຂອງສະຫາຍນັ້ນສອງຕໍ່ສອງ ຄັ້ງນັ້ນ ສະຫາຍນັ້ນໄດ້ຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸຓເຈົ້າອຸປນັນທສາກຍບຸຕຣຈຶ່ງນັ່ງໃນທີ່ລັບກັບກັຣຍາຂອງຜູ້ຂ້າສອງຕໍ່ ສອງລະ" ກິກສຸທັງຫລາຍໄດ້ຍິນສະຫາຍຂອງທ່ານພຣະອຸປນັນທສາກຍບຸຕຣນັ້ນຕຳຫນິ ປະນາມ ໂພນທະນາ ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະ ອຸປນັນທສາກຍບຸຕຣຈຶ່ງນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງລະ" ຄັນກິກສຸທັງຫລາຍຕຳຫນິທ່ານ ພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງ ແມ່ນແທ້ບໍ" ທ່ານພຣະອຸປນັນທະທູລຣັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທຣ ເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຣັບສັ່ງໃຫ້ກິກສຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓฑ໌] ໕. ອເຈລກວັຄ ໕. ຣໂຫນິສັຊຊສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[໔໘໐] ກໍ ກິກສຸໃດນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງ ຕ້ອງອາບັຕິປາຈິຕຕິຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໔໙໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸຜຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸກາພິຕ ທຸພກາພິຕຄຳຫຍາບແລະຄຳສຸກາພ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ສອງຕໍ່ສອງ ໄດ້ແກ່ ກິກຂຸກັບມາຕຸຄາມ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາແລະທີ່ລັບຫູ

ທີ່ຊື່ວ່າ ທີ່ລັບຕາ ຫມາຍເຖິງ ສຖານທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວຫລືຍົກສີຣະຂຶ້ນ ໃຜໆກໍບໍ່ສາມາດເຫັນໄດ້

ທີ່ຊື່ວ່າ ທີ່ລັບຫູ ຫມາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດຈະໄດ້ຍິນຖ້ອຍຄຳທີ່ເວົ້າກັນຕາມປົກຕິໄດ້

ຄຳວ່າ ນັ່ງ ຫມາຍຄວາມວ່າ ເມື່ອມາຕຸຄາມນັ່ງ ກິກຂຸນັ່ງໃກ້ ຫລືນອນໃກ້ ຕ້ອງອາບັຕິປາຈິຕຕິຍ໌

ເມື່ອກິກຂຸນັ່ງ ມາຕຸຄາມນັ່ງໃກ້ຫລືນອນໃກ້ ກິກຂຸຕ້ອງອາບັຕິປາຈິຕຕິຍ໌

ທັງກິກຂຸແລະມາຕຸຄາມນັ່ງຫລືນອນ ກິກຂຸຕ້ອງອາບັຕິປາຈິຕຕິຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຟ໌] ໕. ອເຈລກວັຄ ໕. ຣໂຫນິສັຊຊສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕິກປາຈິຕຕິຍ໌

[໔໙໔] ມາຕຸຄາມ ກິກຂຸສຳຄັນວ່າເປັນມາຕຸຄາມ ນັ່ງໃນທີ່ລັບສອງຕໍ່ສອງ ຕ້ອງອາບັຕິປາຈິຕຕິຍ໌

ມາຕຸຄາມ ກິກຂຸບໍ່ແນ່ໃຈ ນັ່ງໃນທີ່ລັບສອງຕໍ່ສອງ ຕ້ອງອາບັຕິປາຈິຕຕິຍ໌

ມາຕຸຄາມ ກິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ນັ່ງໃນທີ່ລັບສອງຕໍ່ສອງ ຕ້ອງອາບັຕິປາຈິຕຕິຍ໌

ຕິກທຸກກຈ

ກິກຂຸນັ່ງໃນທີ່ລັບກັບນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານມີກາຍເປັນມນຸຜຍ໌ຜູ້ຍິງ

ສອງຕໍ່ສອງ ຕ້ອງອາບັຕິທຸກກະ
ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກະ
ບໍ່ແມ່ນມາຕຸຄາມ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔ລ໓] ໑. ພິກຂຸນັ່ງໃນທີ່ທີ່ມີບຸຣຸຮຮູ້ດຽງສາຄົນນຶ່ງຢູ່ເປັນເພື່ອນ
໒. ພິກຂຸຢືນບໍ່ໄດ້ນັ່ງ
໓. ພິກຂຸບໍ່ໄດ້ມຸ່ງທີ່ລັບ
໔. ພິກຂຸນັ່ງຄິດເຣື້ອງອື່ນ
໕. ພິກຂຸວິກົລຈິຕ
໖. ພິກຂຸຕົ້ນບັນຍັດ

ຣໂຫນິສັຊຊສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຑ໌] ໕. ອເຈລກວັຄ ໖. ຈາຣິຕຕສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໖. ຈາຣິຕຕສິກຂາບົທ

ວ່າດ້ວຍການທຽວສັນຈອນໄປ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໔ລ໔] ສມັຍນັ້ນ ພຣະຜູ້ມີພຣະການພຸທລເຈົ້າປະທັບຢູ່ ຓະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ຕະກູນອຸປັຜກາກຂອງທ່ານພຣະອຸປນັນທສາກຍບຸຕຣນິມົນທ໌ທ່ານຈັນກັຕຕາຫາຣ ແມ່ນພິກຂຸເຫລົ່າອື່ນຕະກູນອຸປັຜກາກຂອງທ່ານພຣະອຸປນັນທສາກຍບຸຕຣກໍໄດ້

ນິມົນຕ໌ລັບກັຕຕາຫານ ຄັ້ງນັ້ນ ກ່ອນເຖິງເວລາລັບກັຕຕາຫານ ທ່ານພຣະອຸປນັນທສາກຍບຸຕຣເຂົ້າໄປຢັ້ງມເຍືອນຕະກູນທັງຫລາຍ ລຳດັບນັ້ນ ກິກສຸທັງຫລາຍໄດ້ກ່າວກັບທາຍິກເຫລົ່ານັ້ນດັ່ງນີ້ວ່າ "ອຸບາສິກທັງຫລາຍ ພວກທ່ານຈົ່ງຖວາຍກັຕຕາຫານເຖີດ" ພວກທາຍິກກ່າວວ່າ "ນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດຖ້າຈົນກວ່າພຣະຄຸນເຈົ້າອຸປນັນທສາກຍບຸຕຣຈະມາເຖີດ"

ແມ່ນຄັ້ງທີ ໔ ກິກສຸທັງຫລາຍໄດ້ກ່າວກັບທາຍິກເຫລົ່ານັ້ນດັ່ງນີ້ວ່າ "ອຸບາສິກທັງຫລາຍ ພວກທ່ານຈົ່ງຖວາຍກັຕຕາຫານເຖີດ" ພວກທາຍິກກ່າວວ່າ "ນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດຣອຈົນກວ່າພຣະຄຸນເຈົ້າອຸປນັນທສາກຍບຸຕຣຈະມາ"

ພໍຄັ້ງທີ ໕ ກິກສຸທັງຫລາຍໄດ້ກ່າວກັບທາຍິກເຫລົ່ານັ້ນດັ່ງນີ້ວ່າ "ອຸບາສິກທັງຫລາຍ ພວກທ່ານຈົ່ງຖວາຍກັຕຕາຫານເຖີດ ກ່ອນທີ່ເວລາຈະລ່ວງເລີຍໄປເສັຽ" ພວກທາຍິກຕອບວ່າ "ພຣະຄຸນເຈົ້າທັງຫລາຍ ພວກໂຍມຈັດກັຕຕາຫານເພາະເຫຕຸແຫ່ງພຣະຄຸນເຈົ້າອຸປນັນທສາກຍບຸຕຣ ນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດຖ້າຈົນກວ່າພຣະຄຸນເຈົ້າອຸປນັນທສາກຍບຸຕຣຈະມາເຖີດ" ຄັນທ່ານພຣະອຸປນັນທສາກຍບຸຕຣເຂົ້າໄປຢັ້ງມເຍືອນ ຕະກູນທັງຫລາຍກ່ອນເຖິງເວລາລັບກັຕຕາຫານແລ້ວກັບໃກ້ເວລາລັບ ກິກສຸທັງຫລາຍຈຶ່ງລັບກັຕຕາຫານບໍ່ໄດ້ສົມໃຈ ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫານແລ້ວ ຈຶ່ງຍັງທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເຖິງເວລາລັບກັຕຕາຫານລະ" ຄັນກິກສຸທັງຫລາຍຕຳໜິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເອົາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫານແລ້ວຍັງທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເຖິງເວລາລັບກັຕຕາຫານ ຈິງຫລື" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫານແລ້ວ ຍັງທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເຖິງເວລາລັບກັຕຕາຫານລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫາຣຢູ່ແລ້ວ໑ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣ ຕ້ອງອາບັຕິປາຈິຕຕິຍ໌
ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

[໔໙໕] ສມັຍນັ້ນ ຕະກູນອຸປັຜຖາກຂອງທ່ານພຣະອຸປນັນທສາກຍບຸຕຣສົ່ງຂອງຄ້ຽວໄປຖວາຍສົງຄ໌ດ້ວຍສັ່ງວ່າ "ຂໍມອບໃຫ້ພຣະຄຸຕເຈົ້າອຸປນັນທສາກຍບຸຕຣເປັນຜູ້ຖວາຍສົງຄ໌" ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣກຳລັງໄປບິຕທບາຕໃນຫມູ່ບ້ານ ພໍດີພວກຊາວບ້ານໄປເຖິງອາຮາມຖາມພິກສຸທັງຫລາຍວ່າ "ພຣະຄຸຕເຈົ້າທັງຫລາຍ ພຣະຄຸຕເຈົ້າອຸປນັນທສາກຍບຸຕຣໄປໃສ"

ເຊີງອັນຖະ :

໑ ຄືທີ່ທາຍົກຈັດຕຽມໄວ້ຖວາຍ

ພິກສຸທັງຫລາຍຕອບວ່າ "ອຸບາສົກທັງຫລາຍ ທ່ານພຣະອຸປນັນທະໄປບິຕທບາຕໃນຫມູ່ບ້ານ" ພວກຊາວບ້ານຮຽນວ່າ "ພຣະຄຸຕເຈົ້າທັງຫລາຍ ຂອງຄ້ຽວນີ້ມອບໃຫ້ພຣະຄຸຕເຈົ້າອຸປນັນທະເປັນຜູ້ຖວາຍສົງຄ໌" ພິກສຸທັງຫລາຍນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ພວກທ່ານຈົ່ງຮັບປະເຄນແລ້ວເກັບໄວ້ຈົນກວ່າອຸປນັນທະຈະກັບມາ" ຝ່າຍທ່ານພຣະອຸປນັນທສາກຍບຸຕຣຄິດວ່າ "ພຣະຜູ້ມີພຣະກາຄຊົງຫ້າມກາຣທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣ" ຈຶ່ງເຂົ້າໄປຢັ້ງມເຢືອນຕະກູນທັງຫລາຍພາຍຫລັງເວລາຈັນກັຕຕາຫາຣ ກັບອອກມາເວລາບ່າຍ ຂອງຈັນຖືກສົ່ງຄືນບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣຈຶ່ງທ່ຽວສັນຈອນໄປໃນຕະກູນທັງຫລາຍພາຍຫລັງເວລາກັຕຕາຫາຣລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານທ່ຽວສັນຈອນໄປໃນຕະກູນທັງຫລາຍພາຍຫລັງເວລາຈັນກັຕຕາຫາຣ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະ

ພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງທ່ຽວສັນຈອນໄປໃນຕະກູນທັງຫລາຍພາຍຫລັງເວລາຈັນກັຕຕາຫາຣລະໂມຄບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຂຸໃດຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫາຣຢູ່ແລ້ວ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣ ຫລືຫລັງເວລາຈັນກັຕຕາຫາຣ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ຊົງອນຸຍາຕໃຫ້ເຂົ້າຕະກູນໄດ້ໃນສມັຍທີ່ຖວາຍຈີວອນ

[໔ລ໕] ສມັຍນັ້ນ ພວກກິກຂຸມີຄວາມຢຳເກງຢູ່ຈຶ່ງບໍ່ເຂົ້າໄປຫາຕະກູນທັງຫລາຍ ໃນສມັຍທີ່ຖວາຍຈີວອນຈຶ່ງໄດ້ຈີວອນພຽງເລັກນ້ອຍ ກິກຂຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າໄປຫາຕະກູນທັງຫລາຍໄດ້ໃນສມັຍທີ່ຖວາຍຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຂຸໃດຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫາຣຢູ່ແລ້ວ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣ ຫລືຫລັງເວລາຈັນກັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ສມັຍໃນຂໍ້ນັ້ນ ຄື ສມັຍທີ່ຖວາຍຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ເຂົ້າຕະກູນໄດ້ໃນສມັຍທີ່ທຳຈີວອນ

[໔ລ໖] ສມັຍນັ້ນ ກິກຂຸທັງຫລາຍຕັດຍົບຈີວອນຢູ່ຕ້ອງກາຣເຂັມແດ່ ດ້າຍແດ່ ມີດແດ່ ແຕ່ມີຄວາມຢຳເກງຢູ່ຈຶ່ງບໍ່ເຂົ້າໄປຫາຕະກູນທັງຫລາຍ ກິກຂຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີ

ພຣະກາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກຊຸທັງຫລາຍວ່າ "ກິກຊຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າໄປຫາຕະກູນທັງຫລາຍໄດ້ໃນສມັຍທີ່ທຳຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຊຸໃດຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫາຣຢູ່ແລ້ວ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣ ຫລືຫລັງເວລາຈັນກັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ
ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຊຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ບອກລາກ່ອນເຂົ້າຕະກູນ

[໔໙໗] ສມັຍນັ້ນ ກິກຊຸທັງຫລາຍເປັນໄຂ້ຕ້ອງການເກສັຊ ແຕ່ມີຄວາມຢຳເກງຢູ່ຈຶ່ງບໍ່ເຂົ້າໄປຫາຕະກູນທັງຫລາຍ ກິກຊຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບກິກຊຸທັງຫລາຍວ່າ "ກິກຊຸທັງຫລາຍ ເຮົາອນຸຍາຕໃຫ້ບອກລາກິກຊຸທີ່ມີຢູ່ແລ້ວເຂົ້າໄປໃນຕະກູນທັງຫລາຍໄດ້" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຊຸໃດຮັບນິມົນຕ໌ໄວ້ແລ້ວ ມີກັຕຕາຫາຣຢູ່ແລ້ວ ບໍ່ບອກລາກິກຊຸທີ່ມີຢູ່ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣ ຫລືຫລັງເວລາຈັນກັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຓທ໌] ໕. ອເຈລກວັຄ ໖. ຈາຣິຕຕສິກຂາບົທ ສິກຂາບົທວິກັງຄ໌

ສິກຂາບົທວິກັງຄ໌

[໓໐໐] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ

ອີກຢ່າງນຶ່ງ. . . ໃດ

ຄຳວ່າ ກິກຊຸ ມີອະທິບາຍວ່າ ຊື່ວ່າກິກຊຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຊຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮັບນິມົນຕ໌ໄວ້ແລ້ວ ຄື ກິກຊຸຮັບນິມົນຕ໌ຈັນໂກຊນະ ໕ ຢ່າງ ຢ່າງໃດ ຢ່າງນຶ່ງ

ທີ່ຊື່ວ່າ ມີກັຕຕາຫານຢູ່ແລ້ວ ຄື ກິກຊຸມີອາຫານທີ່ຮັບນິມົນຕ໌ໄວ້

ທີ່ຊື່ວ່າ ກິກຊຸມີຢູ່ ຄື ກິກຊຸທີ່ອາຈບອກລາກ່ອນເຂົ້າບ້ານໄດ້

ທີ່ຊື່ວ່າ ກິກຊຸບໍ່ມີຢູ່ ຄື ກິກຊຸທີ່ບໍ່ອາຈບອກລາກ່ອນເຂົ້າບ້ານໄດ້

ທີ່ຊື່ວ່າ ກ່ອນເວລາຈັນກັຕຕາຫານ ຄື ກິກຊຸຍັງບໍ່ໄດ້ຈັນກັຕຕາຫານທີ່ຮັບນິມົນຕ໌ໄວ້

ທີ່ຊື່ວ່າ ຫລັງເວລາຈັນກັຕຕາຫານ ຄື ກິກຊຸຈັນກັຕຕາຫານທີ່ຮັບນິມົນຕ໌ໄວ້ ໂດຍທີ່ສຸດຈັນດ້ວຍໃຊ້ປາຍຫຍ້າຄາແຕະ

ທີ່ຊື່ວ່າ ຕະກູນ ຫມາຍເຖິງ ຕະກູນ ໔ ໄດ້ແກ່ ຕະກູນກສັຕຣິຍ໌ ຕະກູນພຣາມຕ໌ ຕະກູນແພສຍ໌ ແລະຕະກູນສູທຣ

ຄຳວ່າ ທ່ຽວສັນຈອນໄປໃນຕະກູນທັງຫລາຍ ຄວາມວ່າ ກິກຊຸກ້າວເຂົ້າອຸປຈາຣເຮືອນຂອງຜູ້ອື່ນຕ້ອງອາບັຕິທຸກກຸຍ ກ້າວຕີນທີ ໑ ລ່ວງລໍຣະນີປະຕູ ຕ້ອງອາບັຕິທຸກກຸຍ ກ້າວຕີນທີ ໒ ຕ້ອງອາບັຕິປາຈິດຕີຍ໌

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ສມັຍທີ່ຖວາຍຈີວອນ ຄື ເມື່ອຍັງບໍ່ໄດ້ກຣານກຖິນ ກຳຫນົດເອົາເດືອນທ້າຍແຫ່ງຣະດູຝົນເມື່ອກຣານກຖິນແລ້ວ ມີກຳຫນົດເວລາ ໕ ເດືອນ

ທີ່ຊື່ວ່າ ສມັຍທີ່ທຳຈີວອນ ຄື ເມື່ອກິກຊຸກຳລັງທຳຈີວອນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຟ໌] ໕. ອເຈລກວັຄ ຝ໌. ຈາຣິຕຕສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໓໐໑] ຮັບນິມົນຕ໌ໄວ້ແລ້ວ ກິກຊຸສຳຄັນວ່າຮັບນິມົນຕ໌ໄວ້ແລ້ວ ບໍ່ບອກລາກິກຊຸທີ່ມີຢູ່ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາຈັນກັຕຕາຫານຫລືຫລັງເວລາຈັນກັຕຕາຫານ ນອກສມັຍ

ຕ້ອງອາບັຕິປາຈິຕຕີຍ໌
ຮັບນິມົນຕ໌ໄວ້ແລ້ວ ກິກຂຸບໍ່ແນ່ໃຈ ບໍ່ບອກລາກິກຂຸທີ່ມີຢູ່ ທຽວສັນຈອນໄປໃນຕະກູນທັງຫລາຍ ກ່ອນເວລາຈັນກັຕຕາຫາຣຫລືຫລັງເວລາຈັນກັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌
ຮັບນິມົນຕ໌ໄວ້ແລ້ວ ກິກຂຸສຳຄັນວ່າບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ບອກລາກິກຂຸທີ່ມີຢູ່ ທຽວສັນຈອນໄປໃນ ຕະກູນທັງຫລາຍກ່ອນເວລາຈັນກັຕຕາຫາຣຫລືຫລັງເວລາຈັນກັຕຕາຫາຣ ນອກສມັຍ ຕ້ອງອາບັຕິ ປາຈິຕຕີຍ໌

ທຸກກຸກກະ
ບໍ່ໄດ້ຮັບນິມົນຕ໌ໄວ້ ກິກຂຸສຳຄັນວ່າຮັບນິມົນຕ໌ໄວ້ ຕ້ອງອາບັຕິທຸກກະ
ບໍ່ໄດ້ຮັບນິມົນຕ໌ໄວ້ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ບໍ່ໄດ້ຮັບນິມົນຕ໌ໄວ້ ກິກຂຸສຳຄັນວ່າບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໐໔] ໑. ກິກຂຸຈັນໃນສມັຍ
໒. ກິກຂຸບອກລາກິກຂຸທີ່ມີຢູ່ແລ້ວຈຶ່ງເຂົ້າໄປ
໓. ກິກຂຸບໍ່ບອກລາກິກຂຸທີ່ບໍ່ມີຢູ່ເຂົ້າໄປ
໔. ກິກຂຸຍ່າງໄປຕາມທາງທີ່ຜ່ານເຮືອນຜູ້ອື່ນ
໕. ກິກຂຸຍ່າງໄປຕາມທາງທີ່ຜ່ານໃກ້ເຮືອນ
໖. ກິກຂຸໄປອາຮາມອື່ນ
໗. ກິກຂຸໄປສຳນັກກິກຂຸຕີ
໘. ກິກຂຸໄປສຳນັກເດັຽຣະຖີຍ໌
໙. ກິກຂຸໄປໂຮງຈັນ
໑໐. ກິກຂຸໄປເຮືອນທີ່ເຂົານິມົນຕ໌
໑໑. ກິກຂຸໄປໃນຄາວມີເຫຕຸຂັດຂ້ອງ
໑໒. ກິກຂຸວິກົລຈິຕ
໑໓. ກິກຂຸຕົ້ນບັນຍັດ

ຈາຣິຕຕສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໕. ອເຈລກວັຄ ໗. ມຫານາມສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໗. ມຫານາມສິກຂາບົທ

ວ່າດ້ວຍພຣະເຈົ້າມຫານາມສາກຍະ

ເຣື້ອງພຣະເຈົ້າມຫານາມສາກຍະ

[໓໐໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ນະ ນິໂຄຣລາຣາມ ເຂຕກຸງກບິລພັສດຸ໌ ແຄວ້ນສັກກະ ຄັ້ງນັ້ນ ພຣະເຈົ້າມຫານາມສາກຍະມີເພສັຊເຫລືອເຟືອ ລຳດັບນັ້ນ ພຣະເຈົ້າມຫານາມສາກຍະຈຶ່ງໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວຣ ພຣະເຈົ້າມຫານາມສາກຍະຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ຂະນ້ອຍປະສົງຄ໌ຈະປວາຣຕາສົງຄ໌ດ້ວຍເພສັຊຕລອດ ໔ ເດືອນ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສວ່າ "ສາທຸ ສາທຸ ມຫານາມະ ຖ້າເຊັ່ນນັ້ນ ທ່ານຈົ່ງປວາຣຕາສົງຄ໌ດ້ວຍເພສັຊຕລອດ ໔ ເດືອນເຖີດ" ພວກພິກຂຸມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປວາຣຕາ ພິກຂຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາ ເພາະເຣື້ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຍິນດີການປວາຣຕາດ້ວຍປັຈຈັຍຕລອດ ໔ ເດືອນ"

[໓໐໔] ສມັຍນັ້ນ ພິກຂຸທັງຫລາຍອອກປາກຂໍເພສັຊກະພຣະເຈົ້າມຫານາມສາກຍະພຽງເລັກນ້ອຍ ເພສັຊຂອງພຣະເຈົ້າມຫານາມສາກຍະກໍຍັງມີເຫລືອເຟືອຢູ່ເຫມືອນເດີມ ແມ່ນຄັ້ງທີ ໒ ພຣະເຈົ້າມຫານາມສາກຍະກໍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວຣ ພຣະເຈົ້າມຫານາມສາກຍະຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ຂະນ້ອຍປະສົງຄ໌ ຈະປວາຣຕາສົງຄ໌ດ້ວຍເພສັຊຕໍ່ໄປອີກ ໔ ເດືອນ ພຣະພຸທສເຈົ້າຂ້າ"

ພຣະຜູ້ມີພຣະການຄຕຣັສວ່າ "ສາລຸ ສາລຸ ມຫານາມະ ຖ້າເຊັ່ນນັ້ນ ທ່ານຈົ່ງປວາຣຕາສົງຄ໌ດ້ວຍເພສັຊຕໍ່ໄປອີກ ໔ ເດືອນເຖີດ" ພວກກິກຂຸມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປວາຣຕາ ກິກຂຸທັງຫລາຍນຳເຮື່ອງນີ້ໄປຂາບທູລພຣະຜູ້ມີພຣະການຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະການຄຊົງສະແດງລັມມີກຖາ ເພາະເຮື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຍິນດີການປວາຣຕາຕໍ່ໄປອີກ"

[໓໐໕] ສມັຍນັ້ນ ກິກຂຸທັງຫລາຍອອກປາກຂໍເພສັຊກະພຣະເຈົ້າມຫານາມສາກຍະພຽງເລັກນ້ອຍ ເພສັຊຂອງພຣະເຈົ້າມຫານາມສາກຍະກໍຍັງມີເຫລືອເຟືອຢູ່ເຫມືອນເດີມ ແມ່ນຄັ້ງທີ ໓ ພຣະເຈົ້າມຫານາມສາກຍະກໍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະການຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະກິວາທພຣະຜູ້ມີພຣະການຄ ແລ້ວນັ່ງ ຓະ ທີ່ສົມຄວຣ ພຣະເຈົ້າມຫານາມສາກຍະຜູ້ນັ່ງ ຓະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະການຄດັ່ງນີ້ວ່າ "ຂະນ້ອຍປະສົງຄ໌ຈະປວາຣຕາສົງຄ໌ດ້ວຍເພສັຊຕລອດຊີວິຕພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະການຄຕຣັສວ່າ "ສາລຸ ສາລຸ ມຫານາມະ ຖ້າເຊັ່ນນັ້ນທ່ານຈົ່ງປວາຣຕາສົງຄ໌ ດ້ວຍເພສັຊຕລອດຊີວິຕເຖີດ" ພວກກິກຂຸມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປວາຣຕາ ກິກຂຸທັງຫລາຍນຳເຮື່ອງນີ້ໄປຂາບທູລພຣະຜູ້ມີພຣະການຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະການຄຊົງສະແດງລັມມີກຖາເພາະເຮື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຍິນດີການປວາຣຕາເປັນນິຕຍ໌"

ສມັຍນັ້ນ ພວກກິກຂຸຈັພພັຄຄີຍ໌ນຸ່ງບໍ່ຮຽບຮ້ອຍ ຫົ່ມບໍ່ຮຽບຮ້ອຍ ອາກັປກິຣິຍາບໍ່ຮຽບຮ້ອຍ ພຣະເຈົ້າມຫານາມສາກຍະຈຶ່ງວ່າກ່າວວ່າ "ພຣະຄຸຕເຈົ້າທັງຫລາຍ ເປັນຫຍັງພວກທ່ານຈຶ່ງນຸ່ງບໍ່ຮຽບຮ້ອຍ ຫົ່ມບໍ່ຮຽບຮ້ອຍ ອາກັປກິຣິຍາບໍ່ຮຽບຮ້ອຍລະ ລັມນຽມບັພຊິຕຕ້ອງນຸ່ງໃຫ້ຮຽບຮ້ອຍ ຫົ່ມໃຫ້ຮຽບຮ້ອຍ ແລະມີອາກັປກິຣິຍາຮຽບຮ້ອຍ ບໍ່ແມ່ນບໍ" ພວກກິກຂຸຈັພພັຄຄີຍ໌ແຄ້ນເຄືອງພຣະເຈົ້າມຫານາມສາກຍະ ເທື່ອນັ້ນ ພວກກິກຂຸຈັພພັຄຄີຍ໌ໄດ້ປຶກສາກັນວ່າ "ພວກເຮົາຈະເຮັດໃຫ້ພຣະເຈົ້າມຫານາມສາກຍະໄດ້ຮັບຄວາມເກີ້ເຂີນດ້ວຍວິທີໃດ" ຈຶ່ງປຶກສາກັນວ່າ "ທ່ານທັງຫລາຍ ພຣະເຈົ້າມຫານາມສາກຍະປວາຣຕາສົງຄ໌ດ້ວຍເພສັຊ ພວກເຮົາຈະໄປອອກປາກຂໍເນີຍໃສກັບພຣະເຈົ້າມຫານາມສາກຍະ" ລຳດັບນັ້ນ ພວກກິກຂຸຈັພພັຄຄີຍ໌ໄດ້ເຂົ້າໄປຫາພຣະເຈົ້າມຫານາມສາກຍະເຖິງພຣະຕຳຫນັກ ຄັນເຖິງແລ້ວໄດ້ກ່າວກັບພຣະເຈົ້າມຫານາມສາກຍະດັ່ງນີ້ວ່າ "ໂຍມ ພວກອາຕມາຕ້ອງການເນີຍໃສ ໑ ທະນານ" ພຣະເຈົ້າມຫານາມສາກຍະຮັບສັ່ງວ່າ "ພຣະຄຸຕເຈົ້າທັງຫລາຍ ວັນນີ້ພຣະຄຸຕເຈົ້າໂປຣດຖ້າກ່ອນ ພວກຄົນງານກຳລັງໄປທີ່ຄອກເພື່ອຈະນຳເນີຍໃສມາ ພວກເຂົາ

ຈະນຳມາໃຫ້ທັນເວລາ"

ແມ່ນໃນຄັ້ງທີ ໔ ຯລຯ

ແມ່ນໃນຄັ້ງທີ ໓ ພວກພິກຂຸຈັພພັຄຄີຍ໌ກໍໄດ້ກ່າວກັບພຣະເຈົ້າມຫານາມສາກຍະດັ່ງນີ້ວ່າ "ໂຍມ ພວກອາຕມາຕ້ອງການເນີຍໃສ ໑ ທະນານ" ພຣະເຈົ້າມຫານາມສາກຍະຮັບສັ່ງວ່າ "ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ພວກຄົນງານກຳລັງໄປທີ່ຄອກເພື່ອຈະນຳເນີຍໃສມາ ພວກເຂົາຈະນຳມາໃຫ້ທັນເວລາ" ພວກພິກຂຸຈັພພັຄຄີຍ໌ກ່າວວ່າ "ໂຍມ ທ່ານບໍ່ຕ້ອງການຖວາຍແລ້ວ ປວາຣນາຈະມີປໂຍດຫຍັງ ປວາຣນາແລ້ວບໍ່ຖວາຍ"ຄັ້ງນັ້ນ ພຣະເຈົ້າມຫານາມສາກຍະໄດ້ຕຳໜິ ປະນາມ ໂພນທະນາວ່າ "ພຣະຄຸນເຈົ້າທັງຫລາຍ ຈັ່ງໃດເມື່ອຂ້າພະເຈົ້າຂໍຮ້ອງວ່າ ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ຈຶ່ງຣອບໍ່ໄດ້ລະ" ພວກພິກຂຸໄດ້ຍິນພຣະເຈົ້າມຫານາມສາກຍະຕຳໜິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯພາກັນຕຳໜິ ປະນາມ ໂພນທະນາ ວ່າ "ພຣະເຈົ້າມຫານາມສາກຍະ ຂໍຮ້ອງພວກພິກຂຸຈັພພັຄຄີຍ໌ວ່າ ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ຈັ່ງໃດຈຶ່ງຖ້າບໍ່ໄດ້ລະ" ຄັນພິກຂຸທັງຫລາຍຕຳໜິພວກພິກຂຸຈັພພັຄຄີຍ໌ ໂດຍປະການຕ່າງໆແລ້ວໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພຣະເຈົ້າມຫານາມະຂໍຮ້ອງພວກທ່ານວ່າ 'ພຣະຄຸນເຈົ້າທັງຫລາຍ ວັນນີ້ ພຣະຄຸນເຈົ້າໂປຣດຖ້າກ່ອນ' ແລ້ວຖ້າບໍ່ໄດ້ ຈິງຫລື" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຜທັງຫລາຍ ຈັ່ງໃດພວກທ່ານເມື່ອພຣະເຈົ້າມຫານາມສາກຍະຂໍຮ້ອງວ່າ ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ກໍຖ້າບໍ່ໄດ້ລະ ໂມຄບຸຣຸຜທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໐໓] ພິກຂຸບໍ່ເປັນໄຂ້ ເພິ່ງຍິນດີການປວາຣນາດ້ວຍປັຈຈັຍພຽງ ໔ ເດືອນ ເວັ້ນໄວ້ແຕ່ປວາຣນາອີກ ເວັ້ນໄວ້ແຕ່ປວາຣນາເປັນນິຕຍ໌ ຖ້າຍິນດີເກີນກວ່າກຳໜົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະເຈົ້າມຫານາມສາກຍະ ຈົບ

ສິກຂາບົທວິພັງຄ໌

[໓໐໗] ຄຳວ່າ ພິກຂຸບໍ່ເປັນໄຂ້ເພິ່ງຍິນດີການປວາຣະນາດ້ວຍປັຈຈັຍພຽງ ໔ ເດືອນ ຄວາມວ່າ ເພິ່ງຍິນດີການປວາຣະນາພຽງຄິລານປັຈຈັຍ ແມ່ນເຂົາປວາຣະນາອີກ ເພິ່ງຍິນດີວ່າ ເຮົາຈະອອກປາກຂໍໃນເວລາທີ່ເຮົາເຈັບໄຂ້ ແມ່ນເຂົາປວາຣະນາໄວ້ເປັນນິຕຍ໌ ເພິ່ງຍິນດີວ່າ ເຮົາຈະອອກປາກຂໍໃນເວລາທີ່ເຮົາເຈັບໄຂ້

ຄຳວ່າ ຖ້າຍິນດີເກີນກວ່າກຳໜົດນັ້ນ ຄວາມວ່າ ການປວາຣະນາກຳໜົດເພສັຊບໍ່ກຳໜົດຣາຕຣີກໍມີ ການປວາຣະນາກຳໜົດຣາຕຣີບໍ່ກຳໜົດເພສັຊກໍມີ ການປວາຣະນາກຳໜົດທັງເພສັຊທັງຣາຕຣີກໍມີ ການປວາຣະນາບໍ່ກຳໜົດເພສັຊບໍ່ກຳໜົດຣາຕຣີກໍມີ

ທີ່ຊື່ວ່າ ກຳໜົດເພສັຊ ຄື ເຂົາກຳໜົດເພສັຊໄວ້ວ່າ ຂ້າພະເຈົ້າປວາຣະນາດ້ວຍເພສັຊພຽງເທົ່ານີ້

ທີ່ຊື່ວ່າ ກຳໜົດຣາຕຣີ ຄື ເຂົາກຳໜົດຣາຕຣີໄວ້ວ່າ ຂ້າພະເຈົ້າປວາຣະນາໃນຣາຕຣີພຽງເທົ່ານີ້

ທີ່ຊື່ວ່າ ກຳໜົດທັງເພສັຊກຳໜົດທັງຣາຕຣີ ຄື ເຂົາກຳໜົດເພສັຊແລະກຳໜົດຣາຕຣີໄວ້ວ່າ ຂ້າພະເຈົ້າປວາຣະນາດ້ວຍເພສັຊເທົ່ານີ້ໃນຣາຕຣີພຽງເທົ່ານີ້

ທີ່ຊື່ວ່າ ບໍ່ກຳໜົດເພສັຊແລະບໍ່ກຳໜົດຣາຕຣີ ຄື ເຂົາບໍ່ໄດ້ກຳໜົດເພສັຊແລະບໍ່ໄດ້ກຳໜົດຣາຕຣີໄວ້

ບົທພາຊນີຍ໌

ປາຈິຕຕີຍ໌

[໓໐໘] ໃນການກຳໜົດເພສັຊ ພິກຂຸອອກປາກຂໍເພສັຊອື່ນນອກຈາກເພສັຊທີ່ເຂົາປວາຣະນາໄວ້ ຕ້ອງອາບັຕິປາຈິຕຕີຍ໌

ໃນການກຳໜົດຣາຕຣີ ພິກຂຸອອກປາກຂໍໃນຣາຕຣີອື່ນນອກຈາກຣາຕຣີທີ່ເຂົາປວາຣະນາໄວ້ ຕ້ອງອາບັຕິປາຈິຕຕີຍ໌

ໃນການກຳໜົດທັງເພສັຊແລະກຳໜົດຣາຕຣີ ພິກຂຸອອກປາກຂໍເພສັຊອື່ນນອກຈາກເພສັຊທີ່ເຂົາປວາຣະນາໄວ້ໃນຣາຕຣີອື່ນນອກຈາກຣາຕຣີທີ່ເຂົາປວາຣະນາໄວ້ ຕ້ອງອາບັຕິປາຈິຕຕີຍ໌

ໃນການບໍ່ກຳໜົດເພສັຊບໍ່ກຳໜົດຣາຕຣີ ບໍ່ຕ້ອງອາບັຕິ

[໓໐໙] ເມື່ອບໍ່ມີຄວາມຈຳເປັນດ້ວຍເພສັຊ ພິກຂຸອອກປາກຂໍເພສັຊ ຕ້ອງອາບັຕິປາຈິຕຕີຍ໌
ເມື່ອມີຄວາມຈຳເປັນດ້ວຍເພສັຊຢ່າງນຶ່ງ ພິກຂຸອອກປາກຂໍເພສັຊອີກຢ່າງນຶ່ງ ຕ້ອງອາບັຕິປາຈິຕຕີຍ໌
ເກີນກວ່າກຳໜົດນັ້ນ ພິກຂຸສຳຄັນວ່າເກີນກວ່າກຳໜົດນັ້ນ ອອກປາກຂໍເພສັຊ ຕ້ອງອາບັຕິ ປາຈິຕຕີຍ໌
ເກີນກວ່າກຳໜົດນັ້ນ ພິກຂຸບໍ່ແນ່ໃຈ ອອກປາກຂໍເພສັຊ ຕ້ອງອາບັຕິປາຈິຕຕີຍ໌
ເກີນກວ່າກຳໜົດນັ້ນ ພິກຂຸສຳຄັນວ່າບໍ່ເກີນກວ່າກຳໜົດນັ້ນ ອອກປາກຂໍເພສັຊ ຕ້ອງອາບັຕິ ປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຕ໌] ໕. ອເຈລກວັຄ ໗. ມຫານາມສິກຂາບົທ ອນາປັຕຕິວາຣ

ທຸກກຸກຂ
ບໍ່ເກີນກວ່າກຳໜົດນັ້ນ ພິກຂຸສຳຄັນວ່າເກີນກວ່າກຳໜົດນັ້ນ ຕ້ອງອາບັຕິທຸກກຂ
ບໍ່ເກີນກວ່າກຳໜົດນັ້ນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຂ
ບໍ່ເກີນກວ່າກຳໜົດນັ້ນ ພິກຂຸສຳຄັນວ່າບໍ່ເກີນກວ່າກຳໜົດນັ້ນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໑໐] ໑. ພິກຂຸອອກປາກຂໍເພສັຊຕາມທີ່ເຂົາປວາຣຕາໄວ້
໒. ພິກຂຸອອກປາກຂໍເພສັຊໃນຣາຕຣີຕາມທີ່ເຂົາປວາຣຕາໄວ້
໓. ພິກຂຸອອກປາກຂໍເພສັຊວ່າ ທ່ານປວາຣຕາພວກອາຕມາດ້ວຍເພສັຊເຫລົ່ານີ້ແລະພວກອາຕມາກໍຕ້ອງການເພສັຊນີ້ແລະນີ້
໔. ພິກຂຸອອກປາກຂໍເພສັຊວ່າ ຣາຕຣີທີ່ທ່ານປວາຣຕາຜ່ານໄປແລ້ວ ແຕ່ເຮົາຍັງຕ້ອງການເພສັຊ
໕. ພິກຂຸອອກປາກຂໍເພສັຊຈາກຍາຕ
໖. ພິກຂຸອອກປາກຂໍເພສັຊຈາກຄົນປວາຣຕາ
໗. ພິກຂຸອອກປາກຂໍເພສັຊເພື່ອພິກຂຸອື່ນ
໘. ພິກຂຸອອກປາກຂໍເພສັຊທີ່ຈ່າຍມາດ້ວຍຊັພຍ໌ຂອງຕົນ

໙. ກິກຸອິກິລຈິຕ
໑໐. ກິກຸຕົ້ນບັນຍັດ

ມຫານາມສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຫ໌] ໕. ອເຈລກວັຄ ໗. ອຸຍຍຸຕຕເສນາສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໗. ອຸຍຍຸຕຕເສນາສິກຂາບົທ
ວ່າດ້ວຍກອງທັພທີ່ເຄື່ອນຂບວນອອກຣບ

ເຣື້ອງພຣະຈັພພັຄຄີຍ໌
[໓໑໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະເຈົ້າປເສນທິໂກສົລຊົງຍກກອງທັພອອກຣົບ ພວກກິກຸ ຈັພພັຄຄີຍ໌ກໍອອກໄປເພື່ອຊົມກອງທັພທີ່ກຳລັງເຄື່ອນຂບວນອອກຣົບ ພຣະເຈົ້າປເສນທິໂກສົລໄດ້ ທອດພຣະເນຕຣເຫັນພວກກິກຸຈັພພັຄຄີຍ໌ກຳລັງຍ່າງມາແຕ່ໄກ ຄັນທອດພຣະເນຕຣເຫັນແລ້ວຈຶ່ງ ຣັບສັ່ງໃຫ້ນິມົນຕ໌ມາ ແລ້ວຕຣັສຖາມດັ່ງນີ້ວ່າ "ພຣະຄຸຓເຈົ້າທັງຫລາຍ ພວກທ່ານມາເປັນຫຍັງ ກັນ" ພວກກິກຸຈັພພັຄຄີຍ໌ຖວາຍພຣະພອນວ່າ "ພວກອາຕມາຕ້ອງການຈະມາຢ້ຽມມຫາບພິຕຣ" ພຣະເຈົ້າປເສນທິໂກສົລຣັບສັ່ງວ່າ "ພຣະຄຸຓເຈົ້າທັງຫລາຍ ບໍ່ມີປໂຍດໃດເລີຍທີ່ທ່ານມາຢ້ຽມໂຍມ ຜູ້ໄຝ່ໃນການຣົບ ພວກທ່ານຄວຣໄປເຝົ້າພຣະຜູ້ມີພຣະກາຄບໍ່ແມ່ນບໍ" ພວກພົລຣົບຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງມາເບິ່ງກອງທັພທີ່ເຄື່ອນຂບວນ ອອກຣົບລະ ບໍ່ແມ່ນເປັນລາກຂອງພວກເຮົາ ພວກເຮົາໄດ້ບໍ່ດີ ທີ່ພວກເຮົາມາຢູ່ໃນກອງທັພກໍເພາະ ການຄອງຊີພ ເພາະຕ້ອງລ້ຽງດູບຸຕຣກັຣຍາ" ກິກຸທັງຫລາຍໄດ້ຍິນພວກພົລຣົບຕຳຫນິ ປະນາມ ໂພນທະນາ ບັນດາກິກຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກ ກິກຸຈັພພັຄຄີຍ໌ຈຶ່ງໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບລະ" ຄັນກິກຸທັງຫລາຍຕຳຫນິພວກ ກິກຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸຈັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບແມ່ນແທ້ບໍ" ພວກພິກສຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໄປເບິ່ງກອງທັພ ທີ່ເຄື່ອນຂບວນອອກຣົບລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເລື້ອງພຣະຈັພພັຄຄີຍ໌ ຈົບ

ເລື້ອງພິກສຸຮູບນຶ່ງ

[໓໑໔] ສມັຍນັ້ນ ລຸງຂອງພິກສຸຮູບນຶ່ງປ່ວຍຢູ່ໃນກອງທັພ ເຂົາສົ່ງຂ່າວໄປເຖິງພິກສຸນັ້ນວ່າ "ລຸງກຳລັງປ່ວຍຢູ່ໃນກອງທັພ ນິມົນຕ໌ທ່ານມາ ລຸງປຣາຖນາໃຫ້ທ່ານມາຢັ້ງມ" ພິກສຸນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທວ່າ ພິກສຸບໍ່ເພິງໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບ ນີ້ລຸງຂອງເຮົາປ່ວຍຢູ່ໃນກອງທັພ ເຮົາຈະເພິງປະຕິບັດຢ່າງໃດດີລະ ພິກສຸທັງຫລາຍນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ໄປໃນກອງທັພໄດ້ເມື່ອມີເຫຕຸຜົລທີ່ສົມຄວຣ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເລື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ໄປໃນກອງທັພໄດ້ເມື່ອມີເຫຕຸຜົລເຊັ່ນນັ້ນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໓໑໓] ອີກຢ່າງນຶ່ງ ພິກຂຸໃດໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກຂຸຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໓໑໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ເຄື່ອນຂບວນອອກຣົບ ໄດ້ແກ່ ກອງທັພທີ່ເຄື່ອນອອກຈາກໝູ່ບ້ານແລ້ວຕັ້ງຄ່າຍພັກແຮມຫລືເຄື່ອນຂບວນຕໍ່ໄປ

ທີ່ຊື່ວ່າ ກອງທັພ ໄດ້ແກ່ ກອງທັພຊ້າງ ກອງທັພມ້າ ກອງທັພຣົຖ ກອງທັພພົລຍ່າງດ້ວຍຂາ ຊ້າງ ๑ ເຊືອກ ມີທຫາຣປະຈຳຢູ່ ๑໔ ນາຍ ມ້າ ๑ ຕົວ ມີທຫາຣປະຈຳຢູ່ ໓ ຄົນ ຣົຖ ๑ ຄັນ ມີທຫາຣປະຈຳຢູ່ ໔ ນາຍ ພົລຍ່າງດ້ວຍຂາ ມີທຫາຣຍິງສນູ ໔ ນາຍ

ພິກຂຸໄປເພື່ອຈະເບິ່ງກອງທັພນັ້ນ ຕ້ອງອາບັຕິທຸກກຈ ຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິປາຈິຕຕີຍ໌ ພົ້ນວິສັຍທີ່ຈະເຫັນ ແຕ່ພຍາຍາມເບິ່ງຈົນເຫັນ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ນອກຈາກມີເຫຕຸຜົລທີ່ສົມຄວຣ ຄື ຍົກເວັ້ນເມື່ອມີເຫຕຸຜົລທີ່ສົມຄວຣ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໓໑໕] ກອງທັພເຄື່ອນຂບວນອອກຣົບ ພິກຂຸສຳຄັນວ່າເຄື່ອນຂບວນອອກຣົບ ໄປເພື່ອຈະເບິ່ງ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕີຍ໌

ກອງທັພເຄື່ອນຂບວນອອກຣົບ ພິກຂຸບໍ່ແນ່ໃຈ ໄປເພື່ອຈະເບິ່ງ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕີຍ໌

ກອງທັພເຄື່ອນຂບວນອອກຣົບ ພິກຂຸສຳຄັນວ່າຍັງບໍ່ໄດ້ເຄື່ອນຂບວນອອກຣົບ ໄປເພື່ອຈະເບິ່ງ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕີຍ໌

ທຸກກດ

ພິກສຸໄປເພື່ອຈະເບິ່ງກອງທັພແຕ່ລະກອງ ຕ້ອງອາບັຕິທຸກກດ

ພິກສຸຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິທຸກກດ

ພິກສຸຢູ່ພົ້ນວິສັຍທີ່ຈະເຫັນ ແຕ່ພຍາຍາມເບິ່ງຈົນເຫັນ ຕ້ອງອາບັຕິທຸກກດ

ກອງທັພຍັງບໍ່ໄດ້ເຄື່ອນຂບວນອອກຣົບ ພິກສຸສຳຄັນວ່າເຄື່ອນຂບວນອອກຣົບ ຕ້ອງອາບັຕິທຸກກດ

ກອງທັພຍັງບໍ່ໄດ້ເຄື່ອນຂບວນອອກຣົບ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກດ

ກອງທັພຍັງບໍ່ໄດ້ເຄື່ອນຂບວນອອກຣົບ ພິກສຸສຳຄັນວ່າຍັງບໍ່ໄດ້ເຄື່ອນຂບວນອອກຣົບ ບໍ່ຕ້ອງອາບັຕິ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໑໖] ໑. ພິກສຸຢືນເບິ່ງຢູ່ໃນອາຣາມ

໒. ພິກສຸດູກອງທັພທີ່ຍກຜ່ານມາຍັງທີ່ທີ່ພິກສຸຢືນ ທີ່ພິກສຸນັ່ງ ຫລືທີ່ພິກສຸນອນ

໓. ພິກສຸຍ່າງສວນທາງໄປເຫັນ

໔. ພິກສຸດູເມື່ອມີເຫຕຸຜົລທີ່ສົມຄວຣ

໕. ພິກສຸດູເມື່ອຄາວມີເຫຕຸຂັດຂ້ອງ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ອຸຍຍຸຕຕເສນາສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຑ໌] ໕. ອເຈລກວັຄ ໘. ເສນາວາສສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໘. ເສນາວາສສິກຂາບົທ

ວ່າດ້ວຍການພັກຢູ່ໃນກອງທັພ

ເຣື້ອງພຣະຈັພພັຄຄີຍ໌

[໓໑໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຓ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸຈັພພັຄຄີຍ໌ມີທຸຣະຕ້ອງຍ່າງຜ່ານກອງທັພ ໄດ້ພັກແຮມຢູ່ໃນກອງທັພເກີນ ໓ ຄືນ ພວກພົລຣົບຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກສມຓະເຊື້ອສາຍສາກຍບຸຕຣຈຶ່ງພັກແຮມຢູ່ໃນກອງທັພເກີນ ໓ ຄືນລະ ບໍ່ແມ່ນເປັນລາກຂອງພວກເຮົາ ພວກເຮົາໄດ້ບໍ່ດີ ທີ່ພວກເຮົາມາພັກແຮມຢູ່ໃນກອງທັພກໍເພາະກາຣຄອງຊີພ ເພາະຕ້ອງລ້ຽງດູບຸຕຣ ກັຣຍາ" ພິກສຸທັງຫລາຍໄດ້ຍິນພວກພົລຣົບເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸຈັພພັຄຄີຍ໌ຈຶ່ງພັກແຮມຢູ່ໃນກອງທັພເກີນ ໓ ຣາຕຣີລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸຈັພພັຄຄີຍ໌ໂດຍປະກາຣຕ່າງໆ

ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸຈັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານພັກແຮມຢູ່ໃນກອງທັພເກີນ ໓ ຄືນແມ່ນແທ້ບໍ" ພວກພິກສຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄພບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງພັກແຮມຢູ່ໃນກອງທັພເກີນ ໓ ຣາຕຣີລະ ໂມຄພບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໑໘] ກໍ ເມື່ອພິກສຸມີເຫຕຸຜົລຈຳເປັນຕ້ອງໄປໃນກອງທັພ ພິກສຸນັ້ນເພິ່ງພັກແຮມຢູ່ໃນກອງທັພໄດ້ພຽງ ໒-໓ ຄືນ ຖ້າພັກແຮມຢູ່ເກີນກຳຫນົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໓໑໙] ຄຳວ່າ ກໍ ເມື່ອພິກສຸມີເຫຕຸຜົລຈຳເປັນຕ້ອງໄປໃນກອງທັພ ຄື ມີເຫຕຸຜົລຈຳເປັນ ມີທຸຣະ

ຈຳເປັນ

ຄຳວ່າ ພິກຂຸນັ້ນເພິ່ງພັກແຮມຢູ່ໃນກອງທັພໄດ້ພຽງ ໒-໓ ຄືນ ຄື ພິກຂຸຢູ່ໄດ້ ໒ - ໓ ຄືນ

ຄຳວ່າ ຖ້າພັກແຮມຢູ່ເກີນກຳໜົດນັ້ນ ຄວາມວ່າ ເມື່ອດວງອາທິດຍ໌ອັສດົງໃນວັນທີ ໔ ພິກຂຸຍັງພັກແຮມຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໒໐] ເກີນ ໓ ຄືນ ພິກຂຸສຳຄັນວ່າເກີນ ພັກຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ເກີນ ໓ ຄືນ ພິກຂຸບໍ່ແນ່ໃຈ ພັກຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ເກີນ ໓ ຄືນ ພິກຂຸສຳຄັນວ່າໜ້ອຍກວ່າ ພັກຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກະ

ໜ້ອຍກວ່າ ໓ ຄືນ ພິກຂຸສຳຄັນວ່າເກີນ ຕ້ອງອາບັຕິທຸກກະ

ໜ້ອຍກວ່າ ໓ ຄືນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ

ໜ້ອຍກວ່າ ໓ ຄືນ ພິກຂຸສຳຄັນວ່າຍັງບໍ່ເກີນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຓ຺] ໕. ອເຈລກວັຄ ຓ. ເສນາວາສສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໒໑] ໑. ພິກຂຸພັກຢູ່ ໒-໓ ຄືນ

໒. ພິກຂຸພັກຢູ່ໜ້ອຍກວ່າ ໒-໓ ຄືນ

໓. ພິກຂຸພັກຢູ່ ໒ ຄືນ ແຕ່ອອກໄປກ່ອນອຣຸຕຂອງວັນທີ ໓ ແລ້ວກັບມາຢູ່ອີກ

໔. ພິກຂຸເຈັບໄຂ້ພັກຢູ່

໕. ພິກຂຸຢູ່ດ້ວຍທຸຣະຂອງຜູ້ເປັນໄຂ້

໖. ພິກຂຸຢູ່ໃນກອງທັພທີ່ຖືກຂ້າສຶກລ້ອມ

໗. ພິກຂຸຖືກໃຜຄົນໃດຄົນນຶ່ງອຶບກວນ

໗. ກິກບຸພັກຢູ່ໃນຄາວມີເຫຕຸຂັດຂ້ອງ
໘. ກິກບຸວິກົລຈິຕ
໑໐. ກິກບຸຕົ້ນບັນຍັດ

ເສນາອາສສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຑ໌] ໕. ອເຈລກວັຄ ໑໐. ອຸຍໂຍຄິກສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໑໐. ອຸຍໂຍຄິກສິກຂາບົທ
ວ່າດ້ວຍການໄປເບິ່ງສນາມຣົບ

ເຣື້ອງພຣະຈັພພັຄຄີຍ໌
[໓໔໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກບຸຈັພພັຄຄີຍ໌ພັກແຮມຢູ່ໃນກອງທັພ ໒-໓ ຄືນ ໄປທີ່ສນາມຣົບແດ່ ທີ່ພັກພົລແດ່ ທີ່ຈັດຂບວນທັພແດ່ ໄປເບິ່ງກອງທັພທີ່ຈັດເປັນຂບວນແລ້ວແດ່ ກິກບຸຈັພພັຄຄີຍ໌ຮູບນຶ່ງໄປທີ່ສນາມຣົບ ຖືກຍິງດ້ວຍລູກສອນ ພວກຊາວບ້ານພາກັນເຍາະເຍີ້ຍວ່າ "ເປັນຢ່າງໃດພຣະຄຸຓເຈົ້າ ທ່ານຣົບມ່ວນບໍ່ ທ່ານຊນະໄດ້ຈັກແຕ້ມ"
ກິກບຸນັ້ນຖືກເຍາະເຍີ້ຍຈົນເກີ້ເຂີນ ພວກພົລຣົບຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງຫງວເບິ່ງສນາມຣົບລະ ບໍ່ແມ່ນເປັນລາກຂອງພວກເຮົາ ພວກເຮົາໄດ້ບໍ່ດີ ທີ່ພວກເຮົາມາສນາມຣົບກໍເພາະການຄອງຊີພ ເພາະຕ້ອງລ້ຽງດູບຸຕຣກັຣຍາ" ກິກບຸທັງຫລາຍໄດ້ຍິນພວກພົລຣົບຕຳຫນິ ປະນາມ ໂພນທະນາ ບັນດາກິກບຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກບຸຈັພພັຄຄີຍ໌ຈຶ່ງໄປຫງວເບິ່ງສນາມຣົບລະ" ຄັນກິກບຸທັງຫລາຍຕຳຫນິພວກກິກບຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸສັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານໄປທຽວດູສນາມຣົບ ແມ່ນແທ້ບໍ" ພວກພິກຂຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຸລເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຸລເຈົ້າຊົງຕຳໜິວ່າ "ຯລຯ ໂມຄະບຸຣຸຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງທຽວໄປເບິ່ງສນາມຣົບລະ ໂມຄະບຸຣຸຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໔໓] ຖ້າພິກຂຸພັກຢູ່ໃນກອງທັພ ໒-໓ ຄືນ ທຽວໄປໃນສນາມຣົບກໍດີ ທີ່ພັກພົລກໍດີ ທີ່ຈັດຂບວນທັພກໍດີ ໄປເບິ່ງກອງທັພທີ່ຈັດເປັນຂບວນແລ້ວກໍດີ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໔໔] ຄຳວ່າ ຖ້າພິກຂຸພັກຢູ່ໃນກອງທັພ ໒-໓ ຄືນ ຄື ພິກຂຸພັກແຮມຢູ່ ໒-໓ ຄືນ

ທີ່ຊື່ວ່າ ສນາມຣົບ ໄດ້ແກ່ ສຖານທີ່ຣົບຊຶ່ງປາກົດຢູ່

ທີ່ຊື່ວ່າ ທີ່ພັກພົລ ໄດ້ແກ່ ກອງຊ້າງປະມານເທົ່ານີ້ ກອງມ້າປະມານເທົ່ານີ້ ກອງຣົຖປະມານເທົ່ານີ້ ກອງພົລຍ່າງປະມານເທົ່ານີ້

ທີ່ຊື່ວ່າ ທີ່ຈັດຂບວນທັພ ໄດ້ແກ່ ກອງຊ້າງຈົ່ງຢູ່ທາງນີ້ ກອງມ້າຈົ່ງຢູ່ທາງນີ້ ກອງຣົຖຈົ່ງຢູ່ທາງນີ້ ກອງພົລຍ່າງຈົ່ງຢູ່ທາງນີ້

ທີ່ຊື່ວ່າ ກອງທັພ ໄດ້ແກ່ ກອງທັພຊ້າງ ກອງທັພມ້າ ກອງທັພຣົຖ ກອງທັພພົລຍ່າງ ກອງທັພຊ້າງມີຊ້າງ ໓ ຕົວເປັນຢ່າງໜ້ອຍ ກອງທັພມ້າມີມ້າ ໓ ຕົວເປັນຢ່າງໜ້ອຍ ກອງທັພຣົຖມີຣົຖ ໓ ຄັນເປັນຢ່າງໜ້ອຍ ກອງທັພພົລຍ່າງມີທຫານຖືສນູ ໔ ນາຍເປັນຢ່າງໜ້ອຍ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຖ໌] ໕. ອເຈລກວັຄ ໑໐. ອຸຍໂຍຄົກສິກຂາບົທ ອນາປັຕຕິວາຣ

ບົທກາຊນີຍ໌

ກິກຂຸໄປເພື່ອຈະເບິ່ງ ຕ້ອງອາບັຕິທຸກກຎ
ກິກຂຸຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິປາຈິຕຕີຍ໌
ພົ້ນວິສັຍຈະເຫັນ ແຕ່ກິກຂຸຍັງເບິ່ງອີກ ຕ້ອງອາບັຕິປາຈິຕຕີຍ໌
ກິກຂຸໄປເພື່ອຈະເບິ່ງກອງທັພແຕ່ລະກອງ ຕ້ອງອາບັຕິທຸກກຎ
ກິກຂຸຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິທຸກກຎ
ພົ້ນວິສັຍທີ່ຈະເຫັນ ແຕ່ກິກຂຸຍັງເບິ່ງອີກ ຕ້ອງອາບັຕິທຸກກຎ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໔໕] ໑. ກິກຂຸຢືນເບິ່ງຢູ່ໃນອາຣາມ
໒. ກິກຂຸດູກາຣຣບພຸ່ງທີ່ຜ່ານມາຍັງທີ່ທີ່ກິກຂຸຢືນ ທີ່ກິກຂຸນັ່ງ ຫລືທີ່ກິກຂຸນອນ
໓. ກິກຂຸຍ່າງສວນທາງໄປພບ
໔. ກິກຂຸມີທຸຣະຍ່າງໄປພບ
໕. ກິກຂຸດູໃນຄາວມີເຫຕຸຂັດຂ້ອງ
໖. ກິກຂຸວິກົລຈິຕ
໗. ກິກຂຸຕົ້ນບັນຍັດ

ອຸຍໂຍຄິກສິກຂາບົທທີ ໑໐ ຈົບ
ອເຈລກວັຄທີ ໕ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຓທ໌] ໕. ອເຈລກວັຄ ຣວມສິກຂາບົທທີ່ມີໃນອເຈລກວັຄ

ຣວມສິກຂາບົທທີ່ມີໃນອເຈລກວັຄ

ອເຈລກວັຄມີ ໑໐ ສິກຂາບົທ ຄື
໑. ອເຈລກສິກຂາບົທ ວ່າດ້ວຍນັກບວຊເປືອຍ
໒. ອຸຍໂຍຊນສິກຂາບົທ ວ່າດ້ວຍກາຣສົ່ງກັບ

໓. ສໂກຊຸນສິກຂາບົທ ວ່າດ້ວຍການເຂົ້າໄປແຊກແຊງໃນທີ່ທີ່ມີຄົນ ໔ ຄົນ
໔. ຣໂຫປຜົຈັນນສິກຂາບົທ ວ່າດ້ວຍການນັ່ງໃນທີ່ລັບມີສິ່ງກຳບັງ
໕. ຣໂຫນິສັຊຊສິກຂາບົທ ວ່າດ້ວຍການນັ່ງໃນທີ່ລັບ
໖. ຈາຣິຕຕສິກຂາບົທ ວ່າດ້ວຍການທ່ຽວສັນຈອນໄປ
໗. ມຫານາມສິກຂາບົທ ວ່າດ້ວຍພຣະເຈົ້າມຫານາມສາກຍະ
໘. ອຸຍຍຸຕຕເສນາສິກຂາບົທ ວ່າດ້ວຍກອງທັພທີ່ເຄື່ອນຂບວນອອກຣບ
໙. ເສນາວາສສິກຂາບົທ ວ່າດ້ວຍການພັກຢູ່ໃນກອງທັພ
໑໐. ອຸຍໂຍຄົກສິກຂາບົທ ວ່າດ້ວຍການໄປເບິ່ງສນາມຣົບ

ພຣະວິນັຍປິດົກ ມຫາວິភັງຄ໌ [໕. ປາຈິຕຕິຍກັຕຫ໌] ໖. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ
ໝວດວ່າດ້ວຍການດື່ມສຸຣາ

໑. ສຸຣາປານສິກຂາບົທ
ວ່າດ້ວຍການດື່ມສຸຣາແລະເມຣັຍ

ເຣື້ອງພຣະສາຄຕະ
[໓໔໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າສເດັຈຈາຣິກຢູ່ໃນແຄວ້ນເຈຕີຍ໌ ສເດັຈໄປທາງໝູ່ບ້ານភັທທວຕິ ພວກຄົນລ້ຽງໂຄ ພວກຄົນລ້ຽງປສຸສັຕວ໌ ພວກຊາວນາ ພວກຄົນຍ່າງທາງໄດ້ເຫັນພຣະຜູ້ມີພຣະພາຄຊົງດຳເນີນມາແຕ່ໄກ ຄັນເຫັນແລ້ວ ຈຶ່ງໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ພຣະອົງຄ໌ຜູ້ຈະເຣີນ ພຣະອົງຄ໌ຢ່າສເດັຈໄປທີ່ທ່າອັມພຕິຕຖະເລີຍ ນາຄມີຣິທລິ໌ ມີພິສທີ່ແຂ້ວ໑ ມີພິສກ້າ ອາສັຍຢູ່ທີ່ອາສົມຂອງຊຕິລ ທີ່ທ່າອັມພຕິຕຖະ ນາຄນັ້ນຢ່າທຳຮ້າຍພຣະຜູ້ມີພຣະພາຄເລີຍພຣະພຸທສເຈົ້າຂ້າ" ເມື່ອພວກເຂົາຂາບທູລເຊັ່ນນັ້ນ ພຣະຜູ້ມີພຣະພາຄໄດ້ຊົງນິ່ງ ແມ່ນຄັ້ງທີ ໔ ຯລຯ ແມ່ນຄັ້ງທີ ໓ ພວກຄົນລ້ຽງໂຄ ພວກຄົນລ້ຽງປສຸສັຕວ໌ ພວກຊາວນາ ພວກຄົນຍ່າງທາງກໍໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ພຣະອົງຄ໌ຜູ້ຈະເຣີນ ພຣະອົງຄ໌ຢ່າສເດັຈໄປທີ່ທ່າອັມພຕິຕຖະເລີຍ ນາຄມີຣິທລິ໌ ມີພິສທີ່ແຂ້ວ ອາສັຍຢູ່ທີ່ອາສົມຂອງຊຕິລ ທີ່ທ່າອັມພຕິຕຖະ ນາຄນັ້ນ

ຢ່າທຳຮ້າຍພຣະຜູ້ມີພຣະກາຄເລີຍ”
ແມ່ນຄັ້ງທີ ໑ ພຣະຜູ້ມີພຣະກາຄກໍໄດ້ຊົງນິ່ງ
ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈຈາຣິກໄປໂດຍລຳດັບຈົນເຖິງໝູ່ບ້ານກັທທວດີ ປະທັບຢູ່ ຓະ ໝູ່ບ້ານກັທທວດີນັ້ນ

ເຊີງອັນຖະ :

໑ ອາສີວິໂສ ມີພິຍທີ່ແຂ້ວ ຫລືມີພິຍແລ່ນໄວ ທ່ານອະທິບາຍໄວ້ດັ່ງນີ້ ອາສຸ ສີຜໍ ເອຕສຸສ ວິສໍ ອາຄຈຸຈຕີຕິ ອາສີວິໂສ ພິຍຂອງນາຄນັ້ນຍ່ອມແລ່ນໄວ ຄືດ່ວນ ດັ່ງນີ້ ຈຶ່ງຊື່ວ່າອາສີວິສະ ມີພິຍແລ່ນໄວ (ວິ. ອ. ໑/໓໙/໒໓໐), ອາສີຕິ ທາກຸາ ວຸຈຸຈຕິ, ຕຕຸຖ ສນຸນິຫິຕວິໂສຕິ ອາສີວິໂສ ອີກຢ່າງນຶ່ງ ຄຳວ່າ ອາສີ ທ່ານໝາຍເຖິງແຂ້ວ ທີ່ແຂ້ວນັ້ນມີພິຍຝັງຢູ່ ຈຶ່ງຊື່ວ່າອາສີວິສະ ມີພິຍທີ່ແຂ້ວ (ສາຣຕຸຖ. ຏີກາ ໒/໓໙/໒໗)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓ໌] ຝ໌. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ນິທານວັຕຖຸ

ຄັ້ງນັ້ນ ທ່ານພຣະສາຄຕະຍ່າງເຂົ້າໄປທີ່ທ່າອັມພຕິຕຖະຈົນເຖິງອາສົມຂອງຊຕິລ ຄັນເຖິງແລ້ວໄດ້ເຂົ້າໄປໃນໂຮງບູຊາໄຟ ປູເຄື່ອງລາດຫຍ້າແລ້ວຈຶ່ງນັ່ງຄູ້ບັລລັງກ໌ ຕັ້ງກາຍຕຣົງ ດຳຣົງສຕິໄວ້ສະເພາະໜ້າ ພໍນາຄນັ້ນເຫັນທ່ານພຣະສາຄຕະເຂົ້າມາແລ້ວ ກໍເປັນທຸກຂ໌ ເສັຽໃຈ ຈຶ່ງເຮັດໃຫ້ຄວັນພຸ່ງຕລົບຂຶ້ນ ແມ່ນທ່ານພຣະສາຄຕະກໍເຮັດໃຫ້ຄວັນພຸ່ງຕລົບຂຶ້ນແດ່ ນາຄນັ້ນທົນການລົບຫລູ່ບໍ່ໄດ້ຈຶ່ງພົ່ນໄຟສູ້ ແມ່ນທ່ານພຣະສາຄຕະກໍເຂົ້າເຕໂຊກສິຓພົ່ນໄຟສູ້ແດ່ ເທື່ອນັ້ນ ທ່ານພຣະສາຄຕະຄັນປຣາບເດຊຂອງນາຄນັ້ນໄດ້ແລ້ວ ຈຶ່ງຍ່າງໄປທາງໝູ່ບ້ານກັທທວດີ ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ຓະ ໝູ່ບ້ານກັທທວດີຕາມພຣະອັລຍາສັຍແລ້ວຈຶ່ງສເດັຈຈາຣິກໄປທາງກຸງໂກສັມພີ ພວກອຸບາສົກອຸບາສິກາຊາວກຸງໂກສັມພີຊາບຂ່າວວ່າພຣະສາຄຕະຕໍ່ສູ້ກັບນາຄທີ່ທ່າອັມພຕິຕຖະ ສມັຍນັ້ນ ພຣະຜູ້ມີພຣະກາຄສເດັຈຈາຣິກໄປໂດຍລຳດັບຈົນເຖິງກຸງໂກສັມພີ ເທື່ອນັ້ນ ພວກອຸບາສົກແລະອຸບາສິກາຊາວກຸງໂກສັມພີພາກັນຮັບສເດັຈພຣະຜູ້ມີພຣະກາຄແລ້ວເຂົ້າໄປຫາທ່ານພຣະສາຄຕະໄຫວ້ແລ້ວຢືນຢູ່ ຓະ ທີ່ສົມຄວຣ ພວກອຸບາສົກອຸບາສິກາຊາວກຸງໂກສັມພີຜູ້ຢືນຢູ່ ຓະ ທີ່ສົມຄວຣໄດ້ກ່າວກັບທ່ານພຣະສາຄຕະດັ່ງນີ້ວ່າ “ທ່ານຜູ້ຈະເຣີນ ສິ່ງທີ່ຫາໄດ້ຍາກແລະເປັນທີ່ຊອບໃຈຂອງ

ພຣະຄຸດທ່ານມີຫຍັງແດ່ ພວກຂ້າພະເຈົ້າຈະຈັດຕຽມຫຍັງ" ເມື່ອອຸບາສົກອຸບາສິກາກ່າວຢ່າງນີ້ ພວກພິກຂຸຈັພພັຄຄີຍ໌ໄດ້ກ່າວກັບພວກອຸບາສົກອຸບາສິກາຊາວກຸງໂກສັມພີດັ່ງນີ້ວ່າ "ມີຢູ່ທ່ານທັງຫລາຍ ຫົວເຊື້ອສຸຣາຊື່ກາໂປຕິກະດາຫາຍາກ ເປັນທີ່ຊອບໃຈຂອງພິກຂຸທັງຫລາຍ ພວກທ່ານຈົ່ງຈັດຕຽມຫົວເຊື້ອສຸຣາຊື່ກາໂປຕິກະນັ້ນໄວ້"

ເຊີງອັນຖະ :

໑ ກາໂປຕິກາຕິ ກໂປຕປາທສມວຕຸຕຣຕຸໂຕກາສາ. ປສນນາຕິ ສຸຣາມຕຸຫສຸເສຕໍ ອລິວຈນໍ ແປສຣຸປຄວາມໄດ້ວ່າ ຫົວເຊື້ອສຸຣາທີ່ມີສີແດງເໜືອນຕີນນົກກາງແກ (ວິ. ອ. ໔/໓໒໘/໔໐໔) ຄຳວ່າ ປສນຸນ ຫົວເຊື້ອສຸຣາ ໃນທີ່ນີ້ບໍ່ໄດ້ຫມາຍເຖິງນ້ຳໃສ ແຕ່ຫມາຍເຖິງນ້ຳຫົວ (ຕສຸສາເຍວກິຕຸປກຸຂິຕຸຕາຍ ມຕຸເທ ຄຫີເຕ ເມື່ອໃສ່ຫົວເຊື້ອໃນສຸຣານັ້ນແລ້ວ ຈົນຈັບຕົວເປັນຝາ - ວິ. ອ. ໔/໓໔໘/໔໐໕) ຣສານໍ ສພຸພຣສານໍ ອຄຸຄມຸຫິ ຣເສ ມຕຸຫສຫຸໂທ ມັດຫສັພທ໌ ຫມາຍເຖິງນ້ຳທີ່ສຸດຍອດກວ່ານ້ຳທັງຫມົດ (ດູ ອກິລາ. ແລະ ອກິລາ. ຜິກາ ຄາຖາ ໔໙໗)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັດທ໌] ໙. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ນິທານວັດຖຸ

ຄັ້ງນັ້ນ ພວກອຸບາສົກອຸບາສິກາຊາວກຸງໂກສັມພີຈັດຕຽມຫົວເຊື້ອສຸຣາຊື່ກາໂປຕິກະ ໄວ້ທຸກຄົວເຮືອນ ພໍເຫັນທ່ານພຣະສາຄຕະຍ່າງບິນທບາຕຈຶ່ງໄດ້ກ່າວກັບທ່ານພຣະສາຄຕະດັ່ງນີ້ວ່າ "ພຣະຄຸດເຈົ້າ ຂໍນິມົນຕ໌ພຣະຄຸດເຈົ້າສາຄຕະດື່ມຫົວເຊື້ອສຸຣາຊື່ກາໂປຕິກະເຖີດ ພຣະຄຸດເຈົ້າ ຂໍນິມົນຕ໌ພຣະຄຸດເຈົ້າສາຄຕະດື່ມຫົວເຊື້ອສຸຣາຊື່ກາໂປຕິກະເຖີດ" ຄັນທ່ານພຣະສາຄຕະດື່ມຫົວເຊື້ອສຸຣາຊື່ກາໂປຕິກະທຸກໆຄົວເຮືອນແລ້ວອອກຈາກເມືອງ ໄດ້ລົ້ມກິ້ງທີ່ປະຕູເມືອງ ລຳດັບນັ້ນ ພຣະຜູ້ມີພຣະກາຄສເດັຈອອກມາພ້ອມພິກຂຸຫລາຍຮູບ ໄດ້ທອດພຣະເນຕຣເຫັນທ່ານພຣະສາຄຕະນອນກິ້ງຢູ່ທີ່ປະຕູເມືອງ ຄັນເຫັນແລ້ວຈຶ່ງຮັບສັ່ງວ່າ "ພິກຂຸທັງຫລາຍ ພວກທ່ານຈົ່ງພາສາຄຕະໄປ" ພິກຂຸທັງຫລາຍຮັບສນອງພຣະພຸທລດຳຣັສແລ້ວ ຊ່ອຍກັນນຳທ່ານພຣະສາຄຕະໄປທີ່ອາຣາມ ໃຫ້ນອນຫັນສີສະໄປທາງພຣະຜູ້ມີພຣະກາຄ ແຕ່ທ່ານພຣະສາຄຕະພິກກັບນອນຫັນຕີນໄປທາງພຣະຜູ້ມີພຣະກາຄ ເທື່ອນັ້ນ ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ກໍກ່ອນນີ້ສາຄຕະເຄີຍມີຄວາມເຄົາຣົພຢຳເກງຕຖາຄົຕບໍ່ແມ່ນບໍ" ພິກຂຸທັງຫລາຍທູລຮັບວ່າ "ເປັນເຊັ່ນນັ້ນ ພຣະພຸທລເຈົ້າ

ຂ້າ” ພຣະຜູ້ມີພຣະພາຄຕຣັສຖາມວ່າ “ພິກຂຸທັງຫລາຍ ບັດນີ້ສາຄຕະຍັງມີຄວາມເຄົາຣົພຢໍາເກງຕຖາຄົຕຢູ່ອີກຫລື” ພິກຂຸທັງຫລາຍຂາບທູລວ່າ “ບໍ່ມີເລີຍ ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສຖາມວ່າ “ພິກຂຸທັງຫລາຍ ສາຄຕະຕໍ່ສູ້ກັບນາຄທີ່ທ່າອັມພຕິຕຖະ ບໍ່ແມ່ນບໍ” ພິກຂຸທັງຫລາຍທູລຮັບວ່າ “ເປັນເຊັ່ນນັ້ນ ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສຖາມວ່າ “ພິກຂຸທັງຫລາຍ ບັດນີ້ສາຄຕະພໍຈະຕໍ່ສູ້ແມ່ນກັບງູນ້ຳໄດ້ລະຫລື” ພິກຂຸທັງຫລາຍຂາບທູລວ່າ “ສູ້ບໍ່ໄດ້ເລີຍ ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສຖາມວ່າ “ນ້ຳທີ່ດື່ມເຂົ້າໄປແລ້ວເຮັດໃຫ້ຄວາມຈຳໄດ້ຫມາຍຮູ້ ວິປຣິຕໄປນັ້ນ ຄວຣຈະດື່ມຫລື”

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ຝ. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ບົທພາຊນີຍ໌

ພິກຂຸທັງຫລາຍຂາບທູລວ່າ “ບໍ່ຄວຣດື່ມເລີຍ ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສວ່າ “ພິກຂຸທັງຫລາຍ ການກະທຳຂອງສາຄຕະນັ້ນບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມຕໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດສາຄຕະຈຶ່ງດື່ມນ້ຳເມົາລະ ພິກຂຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໔໗] ພິກຂຸຕ້ອງອາບັຕິປາຈິຕຕິຍ໌ ເພາະດື່ມສຸຣາແລະເມຣັຍ

ເຣື່ອງພຣະສາຄຕະ ຈົບ

ສິກຂາບົທວິພັງຄ໌

[໓໔໘] ທີ່ຊື່ວ່າ ສຸຣາ ໄດ້ແກ່ ສຸຣາທີ່ທຳຈາກແປ້ງ ສຸຣາທີ່ທຳຈາກຂນົມ ສຸຣາທີ່ທຳຈາກເຂົ້າສຸກ ສຸຣາຫມັກແປ້ງເຊື້ອເຫລົ້າ ສຸຣາທີ່ຜສົມເຄື່ອງປຸງຫລາຍຊນິດ

ທີ່ຊື່ວ່າ ເມຣັຍ ໄດ້ແກ່ ນ້ຳຫມັກດອງດອກໄມ້ ນ້ຳຫມັກດອງຜົລໄມ້ ນ້ຳຫມັກດອງນ້ຳເຜິ້ງ ນ້ຳຫມັກດອງນ້ຳອ້ອຍງົບ ນ້ຳຫມັກດອງທີ່ຜສົມເຄື່ອງປຸງຫລາຍຊນິດ

ຄຳວ່າ ດື່ມ ຄື ພິກຂຸດື່ມ ໂດຍທີ່ສຸດແມ່ນດື່ມດ້ວຍປາຍຫຍ້າຄາແຕະ ຕ້ອງອາບັຕິປາຈິຕຕິຍ໌

ບົທການຸນົຍ໌

ຕິກປາຈິຕຕິຍ໌

ນ້ຳເມົາ ກິກຂຸສຳຄັນວ່າເປັນນ້ຳເມົາ ດື່ມ ຕ້ອງອາບັຕິປາຈິຕຕິຍ໌

ນ້ຳເມົາ ກິກຂຸບໍ່ແນ່ໃຈ ດື່ມ ຕ້ອງອາບັຕິປາຈິຕຕິຍ໌

ນ້ຳເມົາ ກິກຂຸສຳຄັນວ່າບໍ່ແມ່ນນ້ຳເມົາ ດື່ມ ຕ້ອງອາບັຕິປາຈິຕຕິຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຟ໌] ໖. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ອນາປັຕຕິວາຣ

ທຸກກຸກກົຍ

ບໍ່ແມ່ນນ້ຳເມົາ ກິກຂຸສຳຄັນວ່າເປັນນ້ຳເມົາ ຕ້ອງອາບັຕິທຸກກົຍ

ບໍ່ແມ່ນນ້ຳເມົາ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຍ

ບໍ່ແມ່ນນ້ຳເມົາ ກິກຂຸສຳຄັນວ່າບໍ່ແມ່ນນ້ຳເມົາ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໔໘] ໑. ກິກຂຸດື່ມຢາດອງທີ່ມີສີ ກິ່ນ ຣສ ເໝືອນນ້ຳເມົາແຕ່ບໍ່ແມ່ນນ້ຳເມົາ

໒. ກິກຂຸດື່ມນ້ຳເມົາເຈືອໃນແກງ

໓. ກິກຂຸດື່ມນ້ຳເມົາເຈືອໃນຊີ້ນ

໔. ກິກຂຸດື່ມນ້ຳເມົາເຈືອໃນນ້ຳມັນ

໕. ກິກຂຸດື່ມນ້ຳເມົາເຈືອນ້ຳອ້ອຍດອງມະຂາມປ້ອມ

໖. ກິກຂຸດື່ມຢາດອງອຣິຍກະ໑ຊຶ່ງບໍ່ແມ່ນນ້ຳເມົາ

໗. ກິກຂຸວິກົລຈິຕ

໘. ກິກຂຸຕົ້ນບັນຍັດ

ສຸຣາປານສິກຂາບົທທີ ໑ ຈົບ

ເຊີງອັນຖະ :

໑ ຢາດອງອຣິຍກະ ນັ້ນດອງດ້ວຍນ້ຳມະຂາມປ້ອມເປັນຕົ້ນ ສີ ກິ່ນ ແລະຣົສຄ້າຍນ້ຳເມົາ ແຕ່ບໍ່ແມ່ນ

ນ້ຳເມົາ (ວິ. ອ. ໔/໓໒໙/໔໐໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕ໌ສ໌] ຟ. ສຸຣາປານວັຄ ໔. ອັງຄຸລິປໂຕທກສິກຂາບົທ ນິທານວັຕຖຸ

ຟ. ສຸຣາປານວັຄ

໔. ອັງຄຸລິປໂຕທກສິກຂາບົທ

ວ່າດ້ວຍການໃຊ້ນິ້ວມືຈີ້ກັນແລະກັນ

ເຣື້ອງພຣະຈັພພັຄຄີຍ໌

[໓໓໐] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ທະ ພຣະເຊຕວັນ ອາຮາມຂອງອນາຖບິດ ຫົກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຸຈັພພັຄຄີຍ໌ໃຊ້ນິ້ວມືຈີ້ກິກຸຮູບນຶ່ງໃນກຸ່ມກິກຸ ສັຕຕຣສວັຄຄີຍ໌ໃຫ້ຫົວ ກິກຸນັ້ນຫົວຈົນເມື່ອຍ ຫັນໃຈບໍ່ທັນເຖິງແກ່ມໍຣຕກາພ ບັນດາກິກຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຸຈັພພັຄຄີຍ໌ຈຶ່ງໃຊ້ນິ້ວມືຈີ້ກິກຸໃຫ້ຫົວລະ" ຄັນກິກຸເຫລົ່ານັ້ນຕຳຫນິພວກກິກຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຸຈັພພັຄຄີຍ໌ວ່າ "ກິກຸທັງຫລາຍ ຊາບວ່າ ພວກທ່ານໃຊ້ນິ້ວມືຈີ້ກິກຸໃຫ້ຫົວ ແມ່ນແທ້ບໍ" ພວກກິກຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຊທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ນິ້ວມືຈີ້ກິກຸໃຫ້ຫົວລະ ໂມຄບຸຣຸຊທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໕໑] ພິກຂຸຕ້ອງອາບັຕິປາຈິດຕີຢ໌ ເພາະໃຊ້ນິ້ວມືຈີ້

ເຣື່ອງພຣະຈັພພັຄຄີຢ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕີຍກັຕຑ໌] ຝ໌. ສຸຣາປານວັຄ ໔. ອັງຄຸລິປໂຕທກສິກຂາບົທ ບົທກາຊນີຢ໌

ສິກຂາບົທວິພັງຄ໌

[໕໕໔] ທີ່ຊື່ວ່າ ໃຊ້ນິ້ວມືຈີ້ ຄື ພິກຂຸຈີ້ດ້ວຍນິ້ວມື ອຸປສັມບັນປະສົງຄ໌ຈະໃຫ້ອຸປສັມບັນຫົວ ໃຊ້ກາຍຈັບຕ້ອງກາຍ ຕ້ອງອາບັຕິປາຈິດຕີຢ໌

ບົທກາຊນີຢ໌

ຕິກປາຈິດຕີຢ໌

ອຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ໃຊ້ນິ້ວມືຈີ້ໃຫ້ຫົວ ຕ້ອງອາບັຕິປາຈິດຕີຢ໌

ອຸປສັມບັນ ພິກຂຸບໍ່ແນ່ໃຈ ໃຊ້ນິ້ວມືຈີ້ໃຫ້ຫົວ ຕ້ອງອາບັຕິປາຈິດຕີຢ໌

ອຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ໃຊ້ນິ້ວມືຈີ້ໃຫ້ຫົວ ຕ້ອງອາບັຕິປາຈິດຕີຢ໌

ທຸກກຏ

ພິກຂຸໃຊ້ກາຍຈັບຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ຂອງເນື່ອງດ້ວຍກາຍຖືກຕ້ອງກາຍ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງຂອງເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ຂອງໂຍນໄປຖືກຕ້ອງກາຍ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ໂຍນມາ ຕ້ອງອາບັຕິທຸກກຏ

[໕໕໕] ພິກຂຸໃຊ້ກາຍຈັບຕ້ອງກາຍອນຸປສັມບັນ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ກາຍຈັບຕ້ອງຂອງເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຏ

ພິກຂຸໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງກາຍ ຕ້ອງອາບັຕິທຸກກຏ

ກິກຊຸໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຍ
ກິກຊຸໃຊ້ຂອງໂຍນໄປຖືກຕ້ອງກາຍ ຕ້ອງອາບັຕິທຸກກຍ
ກິກຊຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຍ
ກິກຊຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ໂຍນມາ ຕ້ອງອາບັຕິທຸກກຍ
ອນຸປສັມບັນ ກິກຊຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຍ
ອນຸປສັມບັນ ກິກຊຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຍ
ອນຸປສັມບັນ ກິກຊຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຍ

ອນາປັຕຕິວາຣ

ກິກຊຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໓໔] ໑. ກິກຊຸບໍ່ປະສົງຄ໌ຈະໃຫ້ຫົວ ຈັບຕ້ອງກາຍເມື່ອມີເຫຕຸຈຳເປັນ
໔. ກິກຊຸວິກົລຈິຕ
໓. ກິກຊຸຕົ້ນບັນຍັດ

ອັງຄຸລິປໂຕທກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຑ໌] ຝ໌. ສຸຣາປານວັຄ ໓. ຫັສສລັມມສິກຂາບົທ ນິທານວັຕຖຸ

ຝ໌. ສຸຣາປານວັຄ

໓. ຫັສສລັມມສິກຂາບົທ

ວ່າດ້ວຍກາຣຫລິ້ນນ້ຳ

ເຣື້ອງພຣະສັຕຕຣສວັຄຄີຍ໌

[໓໓໕] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຊຸສັຕຕຣສວັຄຄີຍ໌ຫລິ້ນນ້ຳໃນແມ່ນ້ຳອຈິຣວດີ ເວລານັ້ນ ພຣະເຈົ້າປເສນທິໂກສົລປະທັບຢູ່ທີ່ປຣາສາທຊັ້ນເທິງກັບພຣະນາງມັລລິກາເທວີ ພຣະອົງຄ໌ໄດ້

ທອດພຣະເນຕຣເຫັນພວກກິກຊຸສັຕຕຣສວັຄຄີຍ໌ຫລິ້ນນ້ຳຢູ່ໃນແມ່ນ້ຳອຈິຣວດີ ຄັນທອດພຣະເນຕຣເຫັນແລ້ວ ຈຶ່ງຮັບສັ່ງກັບພຣະນາງມັລລິກາເທວີດັ່ງນີ້ວ່າ "ນ້ອງມັລລິກາ ນັ້ນພຣະອຣຫັນຕ໌ເຫລົ່ານັ້ນກຳລັງຫລິ້ນນ້ຳ" ພຣະນາງຂາບທູລວ່າ "ພຣະຜູ້ມີພຣະກາຄຄົງຈະຍັງບໍ່ໄດ້ຊົງບັນຍັດສິກຂາບົທ ຫລືກິກຊຸເຫລົ່ານັ້ນຍັງບໍ່ຮອບຮູ້ພຣະບັນຍັດເປັນແນ່ ພຣະພຸທສເຈົ້າຂ້າ" ເທື່ອນັ້ນ ພຣະເຈົ້າປເສນທິໂກສົລໄດ້ຊົງມີພຣະດຳຣິດັ່ງນີ້ວ່າ "ດ້ວຍອຸບາຍຢ່າງໃດຫນໍ ທີ່ເຮັດໃຫ້ເຮົາບໍ່ຕ້ອງຂາບທູລພຣະຜູ້ມີພຣະກາຄ ແລະພຣະຜູ້ມີພຣະກາຄຈະຊົງຊາບໄດ້ວ່າກິກຊຸເຫລົ່ານີ້ຫລິ້ນນ້ຳກັນ" ຄັນແລ້ວພຣະເຈົ້າປເສນທິໂກສົລຈຶ່ງຮັບສັ່ງໃຫ້ນິມົນຕ໌ພວກກິກຊຸສັຕຕຣສວັຄຄີຍ໌ມາ ແລ້ວພຣະຣາຊທານນ້ຳອ້ອຍງົບເປັນອັນມາກແກ່ກິກຊຸເຫລົ່ານັ້ນດ້ວຍຮັບສັ່ງວ່າ "ພຣະຄຸຓເຈົ້າຜູ້ຈະເຣີນ ຂໍພຣະຄຸຓເຈົ້າທັງຫລາຍໂປຣດຖວາຍນ້ຳອ້ອຍງົບນີ້ແດ່ພຣະຜູ້ມີພຣະກາຄ" ພວກກິກຊຸສັຕຕຣສວັຄຄີຍ໌ນຳນ້ຳອ້ອຍງົບນັ້ນເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລດັ່ງນີ້ວ່າ "ພຣະເຈົ້າປເສນທິໂກສົລຖວາຍນ້ຳອ້ອຍງົບນີ້ແດ່ພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສຖາມວ່າ "ກິກຊຸທັງຫລາຍ ພຣະຣາຊາພົບພວກທ່ານທີ່ໃດ" ພວກກິກຊຸສັຕຕຣສວັຄຄີຍ໌ຂາບທູລວ່າ "ພຣະຣາຊາພົບພວກຂ້າພຣະພຸທສເຈົ້າກຳລັງຫລິ້ນນ້ຳຢູ່ໃນແມ່ນ້ຳອຈິຣວດີ ພຣະພຸທສເຈົ້າຂ້າ"

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓฑ໌] ໖. ສຸຣາປານວັຄ ໓. ຫັສສລັມມສິກຂາບົທ ບົທກາຊນີຍ໌

ຊົງຕຳຫນິແລ້ວບັນຍັດສິກຂາບົທ

ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມฆບຸຣຸษທັງຫລາຍ ຈັ່ງໃດພວກທ່ານຈຶ່ງຫລິ້ນນ້ຳລະ ໂມฆບຸຣຸษທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໓໖] ກິກຊຸຕ້ອງອາບັຕິປາຈິຕຕີຍ໌ ເພາະຫລິ້ນນ້ຳ

ເຣື່ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໓໗] ທີ່ຊື່ວ່າ ຫລິ້ນນ້ຳ ຄື ພິກຂຸປະສົງຄ໌ຈະຫລິ້ນນ້ຳຈຶ່ງດຳລົງ ຜຸດຂຶ້ນ ຫລືລອຍໃນນ້ຳເລິກພໍ້ທ້ວມຂໍ້ຕີນ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໓໓໘] ຫລິ້ນນ້ຳ ພິກຂຸສຳຄັນວ່າຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌

ຫລິ້ນນ້ຳ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິປາຈິຕຕີຍ໌

ຫລິ້ນນ້ຳ ພິກຂຸສຳຄັນວ່າບໍ່ໄດ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກົດ

ພິກຂຸຫລິ້ນນ້ຳຕື້ນໃຕ້ຂໍ້ຕີນ ຕ້ອງອາບັຕິທຸກກົດ

ພິກຂຸນັ່ງເຮືອຫລິ້ນໃນນ້ຳ ຕ້ອງອາບັຕິທຸກກົດ

ພິກຂຸໃຊ້ມື ໃຊ້ຕີນ ໃຊ້ໄມ້ ຫລືໃຊ້ກຣະເບື້ອງຕີນ້ຳ ຕ້ອງອາບັຕິທຸກກົດ

ພິກຂຸຫລິ້ນນ້ຳ ນ້ຳຊາວເຂົ້າ ນ້ຳນົມ ປຽງ ນ້ຳຍ້ອມ ນ້ຳປັສສາວະ ຫລືນ້ຳຕົມທີ່ຂັງໃນກາຊນະ ຕ້ອງອາບັຕິທຸກກົດ

ບໍ່ໄດ້ຫລິ້ນນ້ຳ ພິກຂຸສຳຄັນວ່າຫລິ້ນ ຕ້ອງອາບັຕິທຸກກົດ

ບໍ່ໄດ້ຫລິ້ນນ້ຳ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ

ບໍ່ໄດ້ຫລິ້ນນ້ຳ ພິກຂຸສຳຄັນວ່າບໍ່ໄດ້ຫລິ້ນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໓໙] ໑. ພິກຂຸບໍ່ປະສົງຄ໌ຈະຫລິ້ນນ້ຳ

໒. ພິກຂຸລົງນ້ຳແລ້ວດຳລົງ ຜຸດຂຶ້ນ ຫລືລອຍໃນນ້ຳເມື່ອມີເຫຕຸຈຳເປັນ

໓. ພິກຂຸຈະຂ້າມຟາກຈຶ່ງດຳລົງ ຜຸດຂຶ້ນ ຫລືລອຍໃນນ້ຳ

໔. ພິກຂຸຜູ້ວ່າຍນ້ຳໃນຄາວມີເຫຕຸຂັດຂ້ອງ

໕. ພິກຂຸວິກົລຈິຕ

໖. ພິກຂຸຕົ້ນບັນຍັດ

ທັສສລັມມສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕທ໌] ຝ. ສຸຣາປານວັຄ ໔. ອນາທຣິຍສິກຂາບົທ ນິທານວັຕຖຸ

ຝ. ສຸຣາປານວັຄ

໔. ອນາທຣິຍສິກຂາບົທ

ວ່າດ້ວຍຄວາມບໍ່ເອື້ອເຟື້ອຕໍ່ຄຳຕັກເຕືອນ

ເຣື້ອງພຣະຈັນນະ

[໖໔໐] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ໂພສິຕາຣາມ ເຂຕກຸງໂກສັມພີ ຄັ້ງນັ້ນ ທ່ານພຣະຈັນນະປະພຶດບໍ່ສົມຄວຣ ກິກຸທັງຫລາຍກ່າວຕັກເຕືອນຢ່າງນີ້ວ່າ "ທ່ານຈັນນະທ່ານຢ່າກະທຳຢ່າງນັ້ນ ກາຣກະທຳເຊັ່ນນີ້ບໍ່ສົມຄວຣ" ທ່ານບໍ່ເອື້ອເຟື້ອຍັງຂືນທຳເຫມືອນເດີມ ບັນດາກິກຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະຈັນນະຈຶ່ງບໍ່ເອື້ອເຟື້ອລະ" ຄັນກິກຸເຫລົ່ານັ້ນຕຳຫນິທ່ານພຣະຈັນນະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະຈັນນະວ່າ "ຈັນນະ ຊາບວ່າ ທ່ານບໍ່ເອື້ອເຟື້ອ ແມ່ນແທ້ບໍ" ທ່ານພຣະຈັນນະທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມໝບຸຣຸຩ ຈັ່ງໃດທ່ານຈຶ່ງບໍ່ເອື້ອເຟື້ອລະ ໂມໝບຸຣຸຩ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໖໔໑] ກິກຸຕ້ອງອາບັຕິປາຈິຕຕິຍ໌ ເພາະບໍ່ເອື້ອເຟື້ອ

ເລື້ອງພຣະຈັນນະ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ຝ໌. ສຸຣາປານວັຄ ໔. ອນາທຣິຍສິກຂາບົທ ບົທ ການຸນີຍ໌

ສິກຂາບົທວິກັງຄ໌

[໓໔໔] ທີ່ຊື່ວ່າ ຄວາມບໍ່ເອື້ອເຟື້ອ ໄດ້ແກ່ ຄວາມບໍ່ເອື້ອເຟື້ອ ໒ ຢ່າງ ຄື (໑) ຄວາມບໍ່ເອື້ອເຟື້ອຕໍ່ບຸຄຄົລ (໒) ຄວາມບໍ່ເອື້ອເຟື້ອຕໍ່ລັມທີ່ຊື່ວ່າ ຄວາມບໍ່ເອື້ອເຟື້ອຕໍ່ບຸຄຄົລ ໄດ້ແກ່ ພິກຂຸຖືກອຸປສັມບັນຕັກເຕືອນດ້ວຍພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ "ຜູ້ນີ້ຖືກສົງຆ໌ລົງອຸກເຂປນີຍກັມ ຖືກສົງຆ໌ດູຫມິ່ນຫລືຖືກສົງຆ໌ຕຳຫນິ ຄຳເວົ້າຂອງຜູ້ນີ້ບໍ່ຫນ້າເຮັດຕາມ" ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າ ຄວາມບໍ່ເອື້ອເຟື້ອຕໍ່ລັມ ໄດ້ແກ່ ພິກຂຸຖືກອຸປສັມບັນຕັກເຕືອນດ້ວຍພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ "ຈະເຮັດຢ່າງໃດ ລັມຂໍ້ນີ້ເພິ່ງເສື່ອມ ເພິ່ງສູນຫລືເພິ່ງອັນຕຣລານໄປ" ຫລືວ່າທ່ານບໍ່ປະສົງຄ໌ຈະສຶກສາພຣະບັນຍັດນັ້ນ ຈຶ່ງບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌

ບົທການຸນີຍ໌

ຕິກປາຈິຕຕີຍ໌

[໓໔໕] ອຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກຂຸບໍ່ແນ່ໃຈ ບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກຂຸອັນອຸປສັມບັນຕັກເຕືອນດ້ວຍເລື້ອງທີ່ບໍ່ແມ່ນພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ "ເລື້ອງນີ້ບໍ່ເປັນໄປເພື່ອຄວາມຂັດເກົາ ບໍ່ເປັນໄປເພື່ອຄວາມກຳຈັດ ບໍ່ເປັນໄປເພື່ອຄວາມເປັນຜູ້ຫນ້າເຫລື້ອມໃສ ບໍ່ເປັນໄປເພື່ອຄວາມບໍ່ກໍ່໑ ບໍ່ເປັນໄປເພື່ອປາຣົກຄວາມພຽນ" ຕ້ອງອາບັຕິທຸກກຕ

ເຊີງອັນຖະ :

໑ ອປຈຍາຍາຕິ ສພ຺ພສ຺ສປິ ອຍ຺ຍສ຺ສ ອປຈຍຕ຺ຖາຍ, ນິພ຺ພານາຍາຕິ ອຕ຺ໂຖ ຄວາມບໍ່ກໍ່ ຄື ບໍ່ກໍ່

ວັຜຜະ ໄດ້ແກ່ເພື່ອນິພພານ (ສາຣດຸຖ. ຜີກາ ๓/໔໐໗/໕໖໐)

ກິກຂຸອັນອນຸປສັມບັນຕັກເຕືອນດ້ວຍພຣະບັນຍັດຫລືບໍ່ແມ່ນພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ "ເຣື້ອງນີ້ບໍ່ເປັນໄປເພື່ອຄວາມຂັດເກົາ ບໍ່ເປັນໄປເພື່ອຄວາມກຳຈັດ ບໍ່ເປັນໄປເພື່ອຄວາມເປັນຜູ້ໜ້າເຫລື້ອມໃສ ບໍ່ເປັນໄປເພື່ອຄວາມບໍ່ກໍ່ ບໍ່ເປັນໄປເພື່ອປາຣິກຄວາມພຽນ" ຕ້ອງອາບັຕິທຸກກຜ

ອນຸປສັມບັນ ກິກຂຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຜ

ອນຸປສັມບັນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຜ

ອນຸປສັມບັນ ກິກຂຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຜ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໔໔] ໑. ກິກຂຸຜູ້ກ່າວວ່າ "ອາຈາຣຍ໌ຂອງພວກເຮົາຮຽນກັນມາ ສອບຖາມກັນມາຢ່າງນີ້"

໔. ກິກຂຸວິກົລຈິຕ

໖. ກິກຂຸຕົ້ນບັນຍັດ

ອນາທຣິຍສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສຸຣາປານວັຄ ໕. ກິງສາປນສິກຂາບົທ ນິທານວັຕຖຸ

໗. ສຸຣາປານວັຄ

໕. ກິງສາປນສິກຂາບົທ

ວ່າດ້ວຍການເຮັດໃຫ້ຕົກໃຈ

ເຣື້ອງພຣະຈັພພັຄຄີຍ໌

[໖໔໕] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຂຸຈັພພັຄຄີຍ໌ເຮັດໃຫ້ພວກກິກຂຸສັຕຕຣສວັຄຄີຍ໌ຕົກ

ໃຈ ພວກພິກຂຸເຫລົ່ານັ້ນຖືກເຮັດໃຫ້ຕົກໃຈ ຈຶ່ງຮ້ອງໄຫ້ ພິກຂຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກຂຸສັຕຕຣສວັຄຄີຍ໌ຕອບວ່າ "ພວກພິກຂຸຈັພພັຄຄີຍ໌ເຮັດໃຫ້ພວກເຮົາຕົກໃຈ ຂນ້ອຍ" ບັນດາພິກຂຸຜູ້ມັກນ້ອຍ ฯລฯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງເຮັດໃຫ້ພິກຂຸຕົກໃຈລະ" ຄັນພິກຂຸເຫລົ່ານັ້ນຕຳໜິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານເຮັດໃຫ້ພິກຂຸຕົກໃຈ ແມ່ນແທ້ບໍ່" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ฯລฯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຮັດໃຫ້ພິກຂຸຕົກໃຈລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ฯລฯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໖] ພິກຂຸໃດເຮັດໃຫ້ພິກຂຸຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະຈັພພັຄຄີຍ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຫ໌] ໖. ສຸຣາປານວັຄ ໕. ພົງສາປນສິກຂາບົທ ບົທພາຂນີຍ໌

ສິກຂາບົທວິພັງຄ໌

[໕໔໗] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ຄຳວ່າ ພິກຂຸ ໄດ້ແກ່ ພິກຂຸອື່ນ

ຄຳວ່າ ເຮັດໃຫ້. . . ຕົກໃຈ ຄວາມວ່າ ອຸປສັມບັນຕ້ອງການຈະເຮັດໃຫ້ອຸປສັມບັນຕົກໃຈ ນຳຮູບ ສຽງ ກິ່ນ ຣສ ຫລືໂຜຍຖັພພະເຂົ້າໄປໃກ້໑ ພິກຂຸຜູ້ຖືກເຮັດໃຫ້ຕົກໃຈນັ້ນຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນຕ້ອງການຈະເຮັດໃຫ້ອຸປສັມບັນຕົກໃຈ ບອກທາງກັນດານເພາະມີໂຈຣ ກັນດານເພາະມີສັຕວ໌ຮ້າຍ ຫລືກັນດານເພາະມີປີສາຈ ພິກຂຸຜູ້ຖືກເຮັດໃຫ້ຕົກໃຈຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໖໔໗] ອຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ເຮັດໃຫ້ຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກຂຸບໍ່ແນ່ໃຈ ເຮັດໃຫ້ຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ເຮັດໃຫ້ຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຏ

ອຸປສັມບັນຕ້ອງການຈະເຮັດໃຫ້ອນຸປສັມບັນຕົກໃຈ ຈຶ່ງນຳຮູບ ສຽງ ກິ່ນ ຣົສ ຫລືໂຜຍຖັພພະເຂົ້າໄປໃກ້ ອນຸປສັມປັນຜູ້ຖືກເຮັດໃຫ້ຕົກໃຈນັ້ນຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິທຸກກຏ

ເຊີງອັນຖະ :

໑ ນຳຮູບ ສຽງ ກິ່ນ ຣົສ ຫລືໂຜຍຖັພພະທີ່ໜ້າຢ້ານເຂົ້າໄປໃກ້ (ເບິ່ງ ພຣະວິນັຍປິດົກແປ ເຫລັ້ມ ໑ ຂໍ້ ໑໗໘ ໜ້າ ໑໔໗-ໞ)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຓฑ໌] ຝ. ສຸຣາປານວັຄ ໕. ພິງສາປນສິກຂາບົທ

ອນາປັຕຕິວາຣ

ອຸປສັມບັນຕ້ອງການຈະເຮັດໃຫ້ອນຸປສັມບັນຕົກໃຈ ບອກທາງກັນດານເພາະມີໂຈຣ ກັນດານເພາະມີສັຕວ໌ຮ້າຍ ຫລືກັນດານເພາະມີປີສາຈ ອນຸປສັມບັນຜູ້ຖືກເຮັດໃຫ້ຕົກໃຈນັ້ນຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິທຸກກຏ

ອນຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກະ
ອນຸປສັມບັນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ອນຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກະ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໔໙] ໑. ພິກຂຸບໍ່ຕ້ອງການຈະເຮັດໃຫ້ຕົກໃຈ ນຳຮູບ ສຽງ ກິ່ນ ຣົສ ຫລືໂຜຕຖັພພະເຂົ້າໄປໃກ້

໒. ພິກຂຸບໍ່ຕ້ອງການຈະເຮັດໃຫ້ຕົກໃຈ ບອກທາງກັນດານເພາະມີໂຈຣ ກັນດານເພາະມີສັຕວ໌ຮ້າຍ ຫລືກັນດານເພາະມີປີສາຈ

໓. ພິກຂຸວິກົລຈິຕ

໔. ພິກຂຸຕົ້ນບັນຍັດ

ພິງສາປນສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕທ໌] ໖. ສຸຣາປານວັຄ ໖. ໂຊຕິກສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໖. ໂຊຕິກສິກຂາບົທ

ວ່າດ້ວຍການກໍ່ໄຟຜີງ

ເຣື່ອງພິກຂຸຫລາຍຮູບ

[໓໕໐] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ເພສກຣາມຣິຄທາຍວັນ ເຂຕເມືອງສຸງສຸມາຣຄີຣະ ແຄວ້ນກັຄຄະ ຄັ້ງນັ້ນໃນຣະດູຫນາວ ພວກພິກຂຸກໍ່ໄຟທີ່ຂອນໄມ້ໃຫຍ່ຂອນນຶ່ງຊຶ່ງມີໂກນແລ້ວຜີງ ງູເຫົ່າໃນໂກນໄມ້ນັ້ນ ພໍຖືກໄຟຮ້ອນ ໄດ້ເລືອອອກມາໄລ່ພວກພິກຂຸ ພິກຂຸທັງຫລາຍແລ່ນຫນີໄປໃນທີ່ນັ້ນໆ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາ

ວ່າ “ຈັ່ງໃດກິກບຸທັງຫລາຍຈຶ່ງກໍ່ໄຟຜີງລະ” ຄັນກິກບຸທັງຫລາຍຕຳຫນິກິກບຸເຫລົ່ານັ້ນໂດຍປະການຕ່າງໆ ແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກບຸເຫລົ່ານັ້ນວ່າ “ກິກບຸທັງຫລາຍ ຊາບວ່າກິກບຸທັງຫລາຍກໍ່ໄຟຜີງ ແມ່ນແທ້ບໍ່” ພວກກິກບຸທູລຮັບວ່າ “ແມ່ນແທ້ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ “ຯລຯ ກິກບຸທັງຫລາຍຈັ່ງໃດພວກໂມຄບຸຣຸສເຫລົ່ານັ້ນຈຶ່ງກໍ່ໄຟຜີງລະ ກິກບຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ກິກບຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ກິກບຸໃດຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕິຍ໌

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກບຸທັງຫລາຍຢ່າງນີ້

ເອື້ອງກິກບຸຫລາຍຮູບ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓທ໌] ຝ. ສຸຣາປານວັຄ ຝ. ໂຊຕິກສິກຂາບົທ ພຣະອນຸບັນຍັດ

ຊົງອນຸຍາຕໃຫ້ກິກບຸເປັນໄຂ້ຜີງໄຟໄດ້

[໓໕໑] ສມັຍນັ້ນ ກິກບຸທັງຫລາຍເປັນໄຂ້ ພວກກິກບຸຜູ້ມີຫນ້າທີ່ສອບຖາມອາການໄຂ້ ໄດ້ກ່າວກັບພວກກິກບຸເປັນໄຂ້ດັ່ງນີ້ວ່າ “ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື” ພວກກິກບຸຕອບວ່າ “ເມື່ອກ່ອນພວກຜູ້ຂ້າກໍ່ໄຟຜີງ ດັ່ງນັ້ນຈຶ່ງມີຄວາມຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢ້ານເກງຢູ່ວ່າ ‘ພຣະຜູ້ມີພຣະກາຄຊົງຫ້າມໄວ້’ ຈຶ່ງບໍ່ຜີງໄຟ ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ” ກິກບຸທັງຫລາຍໄດ້ນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະຜູ້ມີພຣະກາຄຮັບສັ່ງກັບກິກບຸທັງຫລາຍວ່າ “ຯລຯ ກິກບຸທັງຫລາຍ ເຮົາອນຸຍາຕໃຫ້ກິກບຸຜູ້ເປັນໄຂ້ກໍ່ໄຟຫລືໃຊ້ໃຫ້ກໍ່ໄຟຜີງໄດ້” ແລ້ວຈຶ່ງຮັບສັ່ງໃຫ້ກິກບຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ
ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕິຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ຕາມປະທີປ
[໓໕໔] ສມັຍນັ້ນ ພິກສຸທັງຫລາຍມີຄວາມຢຳເກງການຕາມປະທີປແດ່ ການກໍ່ໄຟແດ່ ການຕິດໄຟໃນເຮືອນໄຟແດ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ກໍ່ໄຟຫລືໃຊ້ໃຫ້ກໍ່ໄຟເພາະມີເຫຕຸຜົລທີ່ສົມຄວນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ
[໓໕໕] ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ມີເຫຕຸຜົລທີ່ສົມຄວນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ຝ. ສຸຣາປານວັຄ ຝ. ໂຊຕິກສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌
[໓໕໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ
ຄຳວ່າ ພິກສຸ ມີອະທິບາຍວ່າ ຊື່ວ່າ ພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ບໍ່ເປັນໄຂ້ ຄື ພິກສຸຜູ້ເວັ້ນຈາກໄຟກໍມີຄວາມຜາສຸກ
ທີ່ຊື່ວ່າ ເປັນໄຂ້ ຄື ພິກສຸຜູ້ເວັ້ນຈາກໄຟຈະບໍ່ມີຄວາມຜາສຸກ
ຄຳວ່າ ຕ້ອງການຜີງໄຟ ຄື ຕ້ອງການໃຫ້ຮ່າງກາຍອບອຸ່ນ
ທີ່ຊື່ວ່າ ໄຟ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງອັຄຄີ
ຄຳວ່າ ກໍ່ ຄື ພິກສຸກໍ່ເອງ ຕ້ອງອາບັຕິປາຈິຕຕິຍ໌
ຄຳວ່າ ໃຊ້ໃຫ້ກໍ່ ຄື ພິກສຸສັ່ງຜູ້ອື່ນ ຕ້ອງອາບັຕິປາຈິຕຕິຍ໌

ພິກຂຸຜູ້ຮັບຄຳສັ່ງຄັ້ງດຽວແຕ່ກໍ່ໄຟຫລາຍຄັ້ງ ພິກຂຸຜູ້ສັ່ງ ຕ້ອງອາບັດປາຈິດຕີຍ໌
ຄຳວ່າ ເວັ້ນໄວ້ແຕ່ມີເຫດຸຜົລເຊັ່ນນັ້ນ ຄື ຍົກໄວ້ແຕ່ມີເຫດຸຜົລທີ່ສົມຄວຣ

ບົທພາຊນີຍ໌

ຕິກປາຈິດຕີຍ໌

[໓໕໕] ບໍ່ເປັນໄຂ້ ພິກຂຸສຳຄັນວ່າບໍ່ເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັດປາຈິດຕີຍ໌ ເວັ້ນໄວ້ແຕ່ມີເຫດຸຜົລເຊັ່ນນັ້ນ

ບໍ່ເປັນໄຂ້ ພິກຂຸບໍ່ແນ່ໃຈ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັດປາຈິດຕີຍ໌ ເວັ້ນໄວ້ແຕ່ມີເຫດຸຜົລເຊັ່ນນັ້ນ

ບໍ່ເປັນໄຂ້ ພິກຂຸສຳຄັນວ່າເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັດປາຈິດຕີຍ໌ ເວັ້ນໄວ້ແຕ່ມີເຫດຸຜົລເຊັ່ນນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕີຍກັຕຫ໌] ຜ. ສຸຣາປານວັຄ ຜ. ໂຊຕິກສິກຂາບົທ ອນາປັຕຕິວາຣ

ຕິກທຸກກະ

ພິກຂຸເກັບດົ້ນໄຟທີ່ຕົກເຂົ້າທີ່ເດີມ ຕ້ອງອາບັດທຸກກະ
ເປັນໄຂ້ ພິກຂຸສຳຄັນວ່າບໍ່ເປັນໄຂ້ ຕ້ອງອາບັດທຸກກະ
ເປັນໄຂ້ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກະ
ເປັນໄຂ້ ພິກຂຸສຳຄັນວ່າເປັນໄຂ້ ບໍ່ຕ້ອງອາບັດ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື
[໓໕໖] ໑. ພິກຂຸເປັນໄຂ້
໒. ພິກຂຸຜີງໄຟທີ່ຜູ້ອື່ນກໍ່ໄວ້
໓. ພິກຂຸຜີງໄຟຖ່ານທີ່ບໍ່ມີແປວ
໔. ພິກຂຸຕາມປະທີປ ກໍ່ໄຟຫລືຕິດໄຟໃນເຮືອນໄຟເພາະມີເຫດຸຜົລເຊັ່ນນັ້ນ
໕. ພິກຂຸຜູ້ກໍ່ໄຟໃນຄາວມີເຫດຸຂັດຂ້ອງ໑

໕. ກິກບຸວິກົລຈິຕ
໗. ກິກບຸຕົ້ນບັນຍັດ

ໂຊຕົກສິກຂາບົທທີ ໕ ຈົບ

ເຊີງອັນຖະ :
໑ "ເຫຕຸຂັດຂ້ອງ" ໃນທີ່ນີ້ຫມາຍເຖິງຈະມີສັຕວ໌ຮ້າຍ ຊົ້ນຮ້າຍ ແລະອມນຸຫຍ໌ມາທຳຮ້າຍ (ວິ. ອ. ໔/໓໕໕/໔໐໗)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໕. ສຸຣາປານວັຄ ໗. ນຫານສິກຂາບົທ ນິທານວັຕຖຸ

໕. ສຸຣາປານວັຄ

໗. ນຫານສິກຂາບົທ

ວ່າດ້ວຍການສົງນ້ຳນອກສມັຍ

ເຣື້ອງພຣະເຈົ້າພິມພິສາຣ

[໓໕໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ທະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ກິກບຸທັງຫລາຍສົງນ້ຳໃນແມ່ນ້ຳຕໂປທາ໑ ເທື່ອນັ້ນ ພຣະເຈົ້າພິມພິສາຣຈອມທັພມຄລຣັກສເດັຈໄປແມ່ນ້ຳຕໂປທາດ້ວຍມີພຣະຣາຊປະສົງຄ໌ຈະຊົງສນານພຣະສຽນ ປະທັບຖ້າຢູ່ດ້ານນຶ່ງ ດ້ວຍພຣະດຳຣິວ່າ "ເຮົາຈະສນານຕໍ່ເມື່ອພຣະຄຸດເຈົ້າທັງຫລາຍສົງນ້ຳແລ້ວໆ" ກິກບຸສົງນ້ຳຈົນຄ້ອຍຄ່ຳ ຄັ້ງນັ້ນພຣະເຈົ້າພິມພິສາຣຈອມທັພມຄລຣັກຕ້ອງຊົງສນານພຣະສຽນໃນເວລາຄ້ອຍຄ່ຳ ເມື່ອປະຕູເມືອງປິດຈຳຕ້ອງປະທັບແຮມຢູ່ນອກເມືອງ ເຊົ້າຕຣູ່ຈຶ່ງສເດັຈເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບທັງໆທີ່ເຄື່ອງປຣະທິນໃນພຣະວຣກາຍຍັງບໍ່ຈາງຫາຍເລີຍຄັນເຖິງແລ້ວໄດ້ຖວາຍອກິວາທພຣະຜູ້ມີພຣະກາຄແລ້ວປະທັບ ທະ ທີ່ສົມຄວຣ
ພຣະຜູ້ມີພຣະກາຄໄດ້ຕຣັສຖາມພຣະເຈົ້າພິມພິສາຣຈອມທັພມຄລຣັກຜູ້ປະທັບນັ່ງ ທະ ທີ່ສົມຄວຣດັ່ງນີ້ວ່າ "ເຫຕຸໃດພຣະອົງຄ໌ຈຶ່ງສເດັຈມາແຕ່ເຊົ້າທັງໆທີ່ເຄື່ອງປຣະທິນໃນພຣະວຣກາຍຍັງບໍ່ຈາງ

ຫາຍ" ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄລຣັຖຂາບທູລເຣື້ອງນັ້ນໃຫ້ພຣະຜູ້ມີພຣະກາຄຊົງຊາບ ເທື່ອນັ້ນ ພຣະຜູ້ມີພຣະກາຄຊົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄລຣັຖເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສິດຊື່ນເບີກບານດ້ວຍລັມມີກຖາ ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄລຣັຖຜູ້ຊຶ່ງພຣະຜູ້ມີພຣະກາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ

ເຊີງອັນຖະ :

១ ແມ່ນ້ຳຕໂປທາ ຄືແມ່ນ້ຳສາຍນີ້ມີນ້ຳຮ້ອນເດືອດຟົດ ຕົ້ນກຳເນີດໄຫລມາຈາກແອ່ງທະເລສາບໃຕ້ກູເຂົາເວກາຣບັນພົຕ ໄຫລຕັດຜ່ານພຣະນຄຣຣາຊຄຶຫ໌ ນ້ຳໃນແອ່ງຕົ້ນກຳເນີດໃສເຢັນ ແຕ່ພໍໄຫລເປັນສາຍແມ່ນ້ຳແລ້ວກາຍເປັນນ້ຳຮ້ອນ ອັນຖະກຖາອະທິບາຍວ່າ ສາເຫຕຸທີ່ນ້ຳໃນແມ່ນ້ຳມີຄວາມຮ້ອນນັ້ນ ເພາະໄຫລຜ່ານມາຣະຫວ່າງນຫານຣົກ ៤ ຂຸມ (ເບິ່ງ ພຣະວິນັຍປິດົກແປ ເຫລັ້ມ ១ ຂໍ້ ៤៦១ ຫນ້າ ៤៤៥, ສໍ. ອ. ១/៤០/ນັກ)

ປອບປະໂລມໃຈໃຫ້ສິດຊື່ນເບີກບານດ້ວຍລັມມີກຖາແລ້ວ ຊົງລຸກຂຶ້ນຈາກອາສນະ ຖວາຍອກິວາທພຣະຜູ້ມີພຣະກາຄແລ້ວ ທຳປະທັກນິຕ(ວຽນໄປທາງຂວາ)ແລ້ວສເດັຈໄປ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານເຫັນພຣະຣາຊາກໍຍັງອາບນ້ຳບໍ່ຮູ້ຄວາມພໍດີແມ່ນແທ້ບໍ" ກິກຂຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລເຈົ້າຊົງຕຳຫນິວ່າ "ຯລຯ ກິກຂຸທັງຫລາຍ ຈັ່ງໃດພວກໂມພບຸຣຸຫເຫລົ່ານັ້ນເຫັນພຣະຣາຊາແລ້ວກໍຍັງອາບນ້ຳບໍ່ຮູ້ຄວາມພໍດີລະ ກິກຂຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ກິກຂຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕິຍ໌

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ເຣື້ອງພຣະເຈົ້າພິມພິສານ ຈົບ

ຊົງອນຸຍາຕໃຫ້ກິກຂຸອາບນໍ້າໄດ້ໃນສມັຍທີ່ຮ້ອນ

[໓໕໗] ສມັຍນັ້ນ ກິກຂຸທັງຫລາຍມີຄວາມຢຳເກງ ບໍ່ຍອມອາບນໍ້າໃນສມັຍທີ່ຮ້ອນ ໃນສມັຍທີ່ອົບເອົ້າ ຈຳວັດທັງໆທີ່ຕົນຕົວຍັງຊຸ່ມເຫື່ອ ຈີວອນກໍດີ ເສນາສນະກໍດີເສັງຫາຍ ກິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ອາບນໍ້າໃນສມັຍທີ່ຮ້ອນ ໃນສມັຍທີ່ອົບເອົ້າໄດ້" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຂຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນໍ້າ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ
ສມັຍໃນຂໍ້ນັ້ນ ຄື ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນ ຣວມເປັນ ໔ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ ນີ້ເປັນສມັຍໃນຂໍ້ນັ້ນ
ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ກິກຂຸອາບນໍ້າໄດ້ໃນສມັຍທີ່ເປັນໄຂ້

[໓໕໘] ສມັຍນັ້ນ ກິກຂຸທັງຫລາຍເປັນໄຂ້ ພວກກິກຂຸຜູ້ມີຫນ້າທີ່ສອບຖາມອາການໄຂ້ ໄດ້ກ່າວກັບພວກກິກຂຸເປັນໄຂ້ດັ່ງນີ້ວ່າ "ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື" ພວກກິກຂຸຜູ້ເປັນໄຂ້ຕອບວ່າ "ເມື່ອກ່ອນຍັງບໍ່ເຖິງເຄິ່ງເດືອນ ພວກຜູ້ຂ້າອາບນໍ້າກັນໄດ້ ດັ່ງນັ້ນຈຶ່ງມີຄວາມຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢຳເກງຢູ່ວ່າ 'ພຣະຜູ້ມີພຣະກາຄຊົງຫ້າມໄວ້' ຈຶ່ງບໍ່ໄດ້ອາບນໍ້າ ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ'' ກິກຂຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ກິກຂຸຜູ້ເປັນໄຂ້ອາບນໍ້າໄດ້" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຂຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນໍ້າ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ
ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນ ຣວມເປັນ

໔ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້ ນີ້ເປັນສມັຍໃນຂໍ້ນັ້ນ
ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ກິກຂຸອາບນໍ້າໄດ້ໃນສມັຍທີ່ເຮັດວຽກ

[໓໒໐] ສມັຍນັ້ນ ກິກຂຸທັງຫລາຍເຮັດວຽກ ມີຄວາມຢ້ານກົວ ຈຶ່ງບໍ່ອາບນໍ້າ ຈໍາວັດທັງໆທີ່ຕົນຕົວຍັງຊຸ່ມເຫື່ອ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ກິກຂຸທັງຫລາຍຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ຯລຯ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ອາບນໍ້າໄດ້ໃນສມັຍທີ່ເຮັດວຽກ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຂຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນໍ້າ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ
ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທໍາອິດແຫ່ງຣະດູຝົນ ຮວມເປັນ
໔ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້ (໓) ສມັຍທີ່ເຮັດວຽກ
ນີ້ເປັນສມັຍໃນຂໍ້ນັ້ນ
ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ກິກຂຸອາບນໍ້າໄດ້ໃນສມັຍທີ່ຍ່າງທາງໄກ

[໓໒໑] ສມັຍນັ້ນ ກິກຂຸທັງຫລາຍຍ່າງທາງໄກ ມີຄວາມຢ້ານກົວ ຈຶ່ງບໍ່ອາບນໍ້າ ຈໍາວັດທັງໆທີ່ຕົນຕົວຍັງຊຸ່ມເຫື່ອ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ກິກຂຸທັງຫລາຍຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ຯລຯ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ອາບນໍ້າໄດ້ໃນສມັຍທີ່ຍ່າງທາງໄກ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກຂຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນໍ້າ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ
ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນແຮກແຫ່ງຣະດູຝົນ ຮວມເປັນ
໔ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້(໓) ສມັຍທີ່ເຮັດວຽກ
(໔) ສມັຍທີ່ຍ່າງທາງໄກ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ພຣະວິນັຍປີດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓຫ໌] ຝ. ສຸຣາປານວັຄ ໗. ນຫານສິກຂາບົທ ສິກຂາບົທວິພັງຄ໌

ຊົງອນຸຍາຕໃຫ້ພິກຂຸອາບນ້ຳໄດ້ໃນສມັຍທີ່ມີພາຍຸຝຸ່ນ

[໓໕໘] ສມັຍນັ້ນ ພິກຂຸທັງຫລາຍຕັດຍິບຈີວອນຢູ່ກາງແຈ້ງ ຖືກລົມຝຸ່ນເປິເປື້ອນ ຝົນກໍຕົກປ້ອກແປັກ ພວກພິກຂຸມີຄວາມຢຳເກງ ຈຶ່ງບໍ່ອາບນ້ຳ ຈຳວັດທັງໆທີ່ຕົນຕົວຍັງເປິເປື້ອນ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ພິກຂຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ຯລຯ ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ອາບນ້ຳໃນສມັຍທີ່ມີພາຍຸຝຸ່ນໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໓໕໓] ອີກຢ່າງນຶ່ງ ພິກຂຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ເວັ້ນໄວ້ແຕ່ໃນສມັຍ ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນຮວມເປັນ ໒ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້ (໓) ສມັຍທີ່ເຮັດວຽກ (໔) ສມັຍທີ່ຍ່າງທາງໄກ (໕) ສມັຍທີ່ມີພາຍຸຝຸ່ນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທວິພັງຄ໌

[໓໕໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຯລຯ ຊື່ວ່າພິກຂຸ ເພາະວ່າເປັນຜູ້ຂໍ ນີ້ທີ່ພຣະຜູ້ມີພຣະພາຄປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ຄຳວ່າ ຍັງບໍ່ເຖິງເຄິ່ງເດືອນ ຄື ຫນ້ອຍກວ່າເຄິ່ງເດືອນ

ຄຳວ່າ ອາບນ້ຳ ໄດ້ແກ່ ພິກຂຸອາບນ້ຳຖູຕົວດ້ວຍຈຸຣຕຫລືດິນຫນຽວ ຕ້ອງອາບັຕິທຸກກຸຏ ທຸກໆຄັ້ງທີ່ຖູ ອາບເສັດ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ເວັ້ນໄວ້ແຕ່ໃນສມັຍ ຄື ຍົກເວັ້ນແຕ່ໃນສມັຍ

ທີ່ຊື່ວ່າ ສມັຍທີ່ຮ້ອນ ຄື ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ
ທີ່ຊື່ວ່າ ສມັຍທີ່ອົບເອົ້າ ຄື ເດືອນແຣກແຫ່ງຣະດູຝົນ ກິກຂຸເພິງອາບນ້ຳໄດ້ເພາະຖືວ່າ ໔ ເດືອນເຄິ່ງນີ້ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ
ທີ່ຊື່ວ່າ ສມັຍທີ່ເປັນໄຂ້ ຄື ກິກຂຸໃດບໍ່ໄດ້ອາບນ້ຳຈະບໍ່ມີຄວາມຜາສຸກ ກິກຂຸເພິງອາບນ້ຳໄດ້ເພາະຖືວ່າ ເປັນສມັຍທີ່ເປັນໄຂ້
ທີ່ຊື່ວ່າ ສມັຍທີ່ເຮັດວຽກ ຄື ໂດຍທີ່ສຸດແມ່ນກາຣກວາດບໍຣິເວຕະ ກິກຂຸເພິງອາບນ້ຳໄດ້ ເພາະຖືວ່າ ເປັນສມັຍທີ່ເຮັດວຽກ
ທີ່ຊື່ວ່າ ສມັຍທີ່ຍ່າງທາງໄກ ຄື ກິກຂຸຄິດວ່າ "ເຮົາຈະຍ່າງທາງເຄິ່ງໂຍຊນ໌" ເພິງອາບນ້ຳໄດ້ ກິກຂຸນັ້ນເມື່ອຈະໄປເພິງອາບນ້ຳໄດ້ ໄປແລ້ວເພິງອາບນ້ຳໄດ້
ທີ່ຊື່ວ່າ ສມັຍທີ່ມີພາຍຸຝຸ່ນ ຄື ກິກຂຸທັງຫລາຍຖືກລົມຝຸ່ນເປິເປື້ອນຫລືຫຍາດຝົນຕົກຖືກກາຍ ໔-໕ ຢົດ ກິກຂຸເພິງອາບນ້ຳໄດ້ເພາະຖືວ່າ ເປັນສມັຍທີ່ມີພາຍຸຝຸ່ນ

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໕໒໕] ຫນ້ອຍກວ່າເຄິ່ງເດືອນ ກິກຂຸສຳຄັນວ່າຫນ້ອຍກວ່າ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ
ຫນ້ອຍກວ່າເຄິ່ງເດືອນ ກິກຂຸບໍ່ແນ່ໃຈ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ
ຫນ້ອຍກວ່າເຄິ່ງເດືອນ ກິກຂຸສຳຄັນວ່າເກີນກວ່າ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໖. ສຸຣາປານວັຄ ໗. ນຫານສິກຂາບົທ ອນາປັຕຕິວາຣ

ທຸກກຸກກຸຍ

ເກີນກວ່າເຄິ່ງເດືອນ ກິກຂຸສຳຄັນວ່າຫນ້ອຍກວ່າ ຕ້ອງອາບັຕິທຸກກຸຍ
ເກີນກວ່າເຄິ່ງເດືອນ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຍ
ເກີນກວ່າເຄິ່ງເດືອນ ກິກຂຸສຳຄັນວ່າເກີນກວ່າ ບໍ່ຕ້ອງອາບັຕິ

ອນາປັດຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໕໕] ໑. ພິກຂຸອາບນ້ຳໃນສມັຍ

໒. ພິກຂຸອາບນ້ຳຊ່ວງເຄິ່ງເດືອນ

໓. ພິກຂຸອາບນ້ຳຊ່ວງເກີນກວ່າເຄິ່ງເດືອນ

໔. ພິກຂຸຜູ້ຂ້າມຝັ່ງຈຶ່ງອາບນ້ຳ

໕. ພິກຂຸອາບນ້ຳໃນປັຈຈັນຕຊົນບົທທຸກແຫ່ງ

໕. ພິກຂຸຜູ້ມີເຫຕຸຂັດຂ້ອງ

໗. ພິກຂຸວິກົລຈິຕ

໘. ພິກຂຸຕົ້ນບັນຍັດ

ນຫານສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕທ໌] ໖. ສຸຣາປານວັຄ ໘. ທຸພພັຕຕກຣຕສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໘. ທຸພພັຕຕກຣຕສິກຂາບົທ

ວ່າດ້ວຍການທຳຈີວອນໃຫມ່ໃຫ້ເສັ້ງສີ

ເຣື້ອງພິກຂຸຫລາຍຮູບ

[໓໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ພິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກຂຸແລະປຣິພາຊກຈຳນວນຫລາຍຕ່າງຍ່າງທາງໄກຈາກ ເມືອງສາເກຕໄປກຸງສາວັຕຖີ ຣະຫວ່າງທາງ ໂຈຣທັງຫລາຍອອກມາປຸ້ນ ພວກເຈົ້າຫນ້າທີ່ໃນກຸງ ສາວັຕຖີຈັບໂຈຣເຫລົ່ານັ້ນໄດ້ພ້ອມຂອງກາງ ຈຶ່ງສົ່ງຂ່າວເຖິງພິກຂຸທັງຫລາຍວ່າ "ນິມົນຕ໌ພຣະຄຸຕ ເຈົ້າມາເຖີດ ຖ້າຈຳໄດ້ ນິມົນຕ໌ຮັບເອົາຈີວອນຂອງຕົນໆຄືນໄປ" ພິກຂຸທັງຫລາຍຈຳຈີວອນຂອງຕົນ ບໍ່ໄດ້ ຄົນທັງຫລາຍຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸຕເຈົ້າທັງຫລາຍຈຶ່ງຈຳຈີ

ວອນຂອງຕົນບໍ່ໄດ້ລະ" ກິກຂຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນຕໍາຫນິ ປະນາມ ໂພນທະນາ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສະແດງຄັມມີກຖາໃຫ້ເຫມາະສົມ ໃຫ້ຄ້ອຍຕາມກັບເຣື້ອງນັ້ນແກ່ພວກກິກຂຸແລ້ວຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ກິກຂຸທັງຫລາຍໂດຍອາສັຍອໍານາຈປໂຍດ ໑໐ ປະການ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຄ໌

໒. ເພື່ອຄວາມຜາສຸກແຫ່ງສົງຄ໌

ຯລຯ

໑໐. ເພື່ອເອື້ອເຟື້ອວິນັຍ໑

ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ເບິ່ງ ຂໍ້ ໕໓໓ ຫນ້າ ໘໔ ໃນເຫລັ້ມນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓທ໌] ໓. ສຸຣາປານວັຄ ໗. ທຸພພັຓກາຣຓສິກຂາບົທ

ສິກຂາບົທວິກັງຄ໌

ພຣະບັນຍັດ

[໓໓໗] ກໍກິກຂຸໄດ້ຈີວອນໃຫມ່ ເພິ່ງໃຊ້ວັຕຖຸທີ່ເຮັດໃຫ້ເສັ່ງສີ ໓ ຊນິດຢ່າງໃດຢ່າງນຶ່ງຄື ສີຂຽວ ສີຕົມ ຫລືສີດໍາກໍ່າ ມາເຮັດໃຫ້ເສັ່ງສີ ຖ້າກິກຂຸບໍ່ໃຊ້ວັຕຖຸທີ່ເຮັດໃຫ້ເສັ່ງສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັ່ງສີ ໃຊ້ສອຍຈີວອນໃຫມ່ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງກິກຂຸຫລາຍຮູບ ຈົບ

ສິກຂາບົທວິກັງຄ໌

[໓໓໘] ທີ່ຊື່ວ່າ ໃຫມ່ ພຣະຜູ້ມີພຣະກາຄຕຣັສຫມາຍເຖິງຜ້າທີ່ຍັງບໍ່ທໍາພິນທຸກັປປະ໑

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ
ຄຳວ່າ ກິກຂຸເພິງໃຊ້ວັຕຖຸທີ່ເຮັດໃຫ້ເສັຽສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັຽສີ ຄື ໂດຍທີ່ສຸດກິກຂຸເພິງເຮັດໃຫ້ເສັຽສີແມ່ນດ້ວຍປາຍຫຍ້າຄາແຕະ
ທີ່ຊື່ວ່າ ສີຂຽວ ໄດ້ແກ່ ສີຂຽວ ໒ ຢ່າງ ຄື ຂຽວສຳຣິດ ສີຂຽວໃບໄມ້
ທີ່ຊື່ວ່າ ສີຕມ ພຣະຜູ້ມີພຣະກາຄຕຣັສຫມາຍເຖິງສີນ້ຳຕົມ
ທີ່ຊື່ວ່າ ສີດຳຄລ້ຳ ໄດ້ແກ່ ສີດຳຄລ້ຳຢ່າງໃດຢ່າງນຶ່ງ
ທີ່ຊື່ວ່າ ຖ້າກິກຂຸບໍ່ໃຊ້ວັຕຖຸທີ່ເຮັດໃຫ້ເສັຽສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັຽສີ ຄວາມວ່າ ໂດຍທີ່ສຸດກິກຂຸບໍ່ເອົາປາຍຫຍ້າຄາແຕະວັຕຖຸທີ່ເຮັດໃຫ້ເສັຽສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັຽສີ ແລ້ວໃຊ້ສອຍຈີວອນໃຫມ່ ຕ້ອງອາບັຕິປາຈິຕຕິຍ໌

ເຊີງອັນຖະ :
໑ ຄຳວ່າ "ພິນທຸກັປປະ" ຫມາຍເຖິງການທຳຈຸດເປັນວົງກົມຢ່າງໃຫຍ່ເທົ່າແອວຕານົກຍູງ ຢ່າງເລັກເທົ່າຫລັງຕົວເຮືອດ ທີ່ມຸມຈີວອນ ດ້ວຍສີຂຽວ ສີຕົມ ຫລືສີດຳກ່ຳ ເພື່ອເຮັດໃຫ້ຈີວອນເສັຽສີ ຫລືມີຕຳຫນິ (ວິ. ອ. ໒/໓໕໗-໘/໔໑໐)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ຝ. ສຸຣາປານວັຄ ໗. ທຸພພັຕຕກຣຕສິກຂາບົທ ອນາປັຕຕິວານ

ບົທກາຊນີຍ໌
ຕິກປາຈິຕຕິຍ໌
[໓໗໐] ຍັງບໍ່ໄດ້ເຮັດໃຫ້ເສັຽສີ ກິກຂຸສຳຄັນວ່າຍັງບໍ່ໄດ້ເຮັດໃຫ້ເສັຽສີ ໃຊ້ສອຍ ຕ້ອງອາບັຕິປາຈິຕຕິຍ໌
ຍັງບໍ່ໄດ້ເຮັດໃຫ້ເສັຽສີ ກິກຂຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິປາຈິຕຕິຍ໌
ຍັງບໍ່ໄດ້ເຮັດໃຫ້ເສັຽສີ ກິກຂຸສຳຄັນວ່າເຮັດໃຫ້ເສັຽສີແລ້ວ ໃຊ້ສອຍ ຕ້ອງອາບັຕິປາຈິຕຕິຍ໌

ທຸກທຸກກຸຝ
ເຮັດໃຫ້ເສັຽສີແລ້ວ ກິກຂຸສຳຄັນວ່າຍັງບໍ່ໄດ້ເຮັດໃຫ້ເສັຽສີ ຕ້ອງອາບັຕິທຸກກຸຝ

ເຮັດໃຫ້ເສັຽສີແລ້ວ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະ
ເຮັດໃຫ້ເສັຽສີແລ້ວ ພິກສຸສຳຄັນວ່າໃຊ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໑] ໑. ພິກສຸເຮັດໃຫ້ເສັຽສີແລ້ວນຸ່ງຫົ່ມ

໒. ພິກສຸຫົ່ມຈີວອນທີ່ພິນທຸກັປປະເສັຽຫາຍໄປ

໓. ພິກສຸຫົ່ມຈີວອນທີ່ທຳພິນທຸກັປປະໄວ້ ແຕ່ເກົ່າໂດກຂາດ

໔. ພິກສຸຫົ່ມຈີວອນທີ່ບໍ່ໄດ້ທຳພິນທຸກັປປະໄວ້ ແຕ່ຍິບຕິດກັບຈີວອນທີ່ທຳພິນທຸກັປປະໄວ້

໕. ພິກສຸນຸ່ງຫົ່ມຜ້າປະ

໖. ພິກສຸນຸ່ງຫົ່ມຜ້າຫາບ

໗. ພິກສຸໃຊ້ຜ້າດາມ

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ທຸພພັຕຕກາຣຕສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໖. ສຸຣາປານວັຄ ໙. ວິກັປປນສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໙. ວິກັປປນສິກຂາບົທ

ວ່າດ້ວຍການວິກັປປຈີວອນ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໓໗໒] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຕ ພິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣວິກັປ໑ ຈີວອນດ້ວຍຕົນເອງ ແກ່ພິກສຸສັທລິວິຫາຣິກຂອງພິກສຸຜູ້ເປັນພີ່ນ້ອງກັນແລ້ວໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທລຣຕ໌໒

ລຳດັບນັ້ນ ກິກຊຸນັ້ນໄດ້ແຈ້ງເຣື້ອງນີ້ໃຫ້ກິກຊຸທັງຫລາຍຊາບວ່າ "ທ່ານທັງຫລາຍ ທ່ານພຣະອຸປນັນທສາກຍບຸຕຣວິກັປຈີວອນດ້ວຍຕົນເອງແກ່ຜູ້ຂ້າແລ້ວໃຊ້ສອຍຈີວອນທີ່ຍັງບໍ່ໄດ້ ປັຈຈຸທລຣຕ໌" ບັນດາກິກຊຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣວິກັປຈີວອນດ້ວຍຕົນເອງແກ່ກິກຊຸແລ້ວ ຈຶ່ງໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸລຣຕ໌ລະ" ຄັນກິກຊຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານວິກັປຈີວອນດ້ວຍຕົນເອງແກ່ກິກຊຸແລ້ວ

ເຊີງອັນຖະ :

໑ ວິກັປ ເປັນວິນັຍກັມ ຄືວິທີການທາງພຣະວິນັຍ ເພື່ອປ້ອງກັນອາບັຕິ ຕາມປົກຕິກິກຊຸຈະໃຊ້ສອຍຜ້ານຸ່ງຫົ່ມພຽງ ໓ ຜືນ ຄື ຜ້າສັງຄາຝິ ຜ້າອຸຕຕຣາສົງຄ໌ ຜ້າອັນຕຣວາສກ ຜ້ານອກຈາກນີ້ຮຽກວ່າຜ້າອຕິເຣກຈີວອນ ເກັບໄວ້ໃຊ້ສອຍໄດ້ບໍ່ເກີນ ໑໐ ວັນ ຖ້າຕ້ອງການຈະໃຊ້ສອຍຕລອດໄປ ຕ້ອງວິກັປ ຄື ຍົກໃຫ້ແກ່ຜູ້ອື່ນ ໃຫ້ຜູ້ອື່ນມີກັມສິທລິ່ຮ່ວມ ຜູ້ທີ່ຮັບໄປ ຕ້ອງໃຫ້ຄືນໄວ້ໃຊ້ສອຍ ນີ້ເປັນວິນັຍກັມ ໃນກໍຣະນີນີ້ຖ້າເປັນສມັຍຈີວອນກາລ ບໍ່ຕ້ອງວິກັປ ໃຊ້ໄດ້ຕລອດຈົນກວ່າຈະຫມົດຈີວອນກາລ (ດູ ນິສສັຄຄີຍ໌ ສິກຂາບົທທີ ໑ ຂໍ້ ໔໒໐-໔໗໐ ຫນ້າ ໔-໘ ໃນເຫລັ້ມນີ້ ແລະ ວິ. ມ. ໕/໓໕໘/໑໒໐, ວິ. ອ. ໒/໔໒໙/໑໔໒-໑໕໕)

໔ ຄຳວ່າ "ປັຈຈຸທລຣຕ໌" ແປວ່າ ຖອນຄືນ ຄືຖອນຜ້າທີ່ວິກັປໄວ້

ໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທລຣຕ໌ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຊ ຈັ່ງໃດທ່ານ ເມື່ອວິກັປຈີວອນດ້ວຍຕົນເອງແກ່ກິກຊຸແລ້ວ ຈຶ່ງໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທລຣຕ໌ລະ ໂມຄບຸຣຸຊ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສ ຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໗໓] ກໍ ພິກຂຸໃດວິກັປຈີວອນດ້ວຍຕົນເອງແກ່ພິກຂຸ ຫລືແກ່ພິກຂຸນີ ຫລືແກ່ສິກຂມານາ ຫລືແກ່ສາມເນຣ ຫລືແກ່ສາມເນຣີ ແລ້ວໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທລຣຕ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໓໗໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້
ຄຳວ່າ ແກ່ພິກຂຸ ຄື ພິກຂຸຮູບອື່ນ
ທີ່ຊື່ວ່າ ພິກຂຸນີ ໄດ້ແກ່ ສຕຣີທີ່ອຸປສົມບົທໃນສົງຄ໌ ໒ ຝ່າຍ
ທີ່ຊື່ວ່າ ສິກຂມານາ ໄດ້ແກ່ ສຕຣີຜູ້ສຶກສາສິກຂາລົມ ຝົ ຂ້ອຕລອດ ໒ ປີ
ທີ່ຊື່ວ່າ ສາມເນຣ ໄດ້ແກ່ ບຸຣຸສຜູ້ຖືສິກຂາບົທ ໑໐ ຂ້ອ
ທີ່ຊື່ວ່າ ສາມເນຣີ ໄດ້ແກ່ ສຕຣີຜູ້ຖືສິກຂາບົທ ໑໐ ຂ້ອ
ຄຳວ່າ ດ້ວຍຕົນເອງ ຄື ວິກັປເອງ
ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝົ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ
ທີ່ຊື່ວ່າ ວິກັປ ມີ ໒ ຢ່າງ ຄື (໑) ວິກັປຕໍ່ໜ້າ (໒) ວິກັປລັບຫລັງ
ທີ່ຊື່ວ່າ ວິກັປຕໍ່ໜ້າ ຄື ພິກຂຸກ່າວວ່າ "ຂ້າພະເຈົ້າວິກັປຈີວອນຜືນນີ້ແກ່ທ່ານ ຫລືຂ້າພະເຈົ້າວິກັປຈີວອນຜືນນີ້ແກ່ພິກຂຸນີ້"
ທີ່ຊື່ວ່າ ວິກັປລັບຫລັງ ຄື ພິກຂຸກ່າວວ່າ "ຂ້າພະເຈົ້າໃຫ້ຈີວອນຜືນນີ້ແກ່ທ່ານເພື່ອວິກັປ"
ພິກຂຸຜູ້ຮັບວິກັປຖາມພິກຂຸຜູ້ວິກັປວ່າ "ໃຜເປັນມິຕຣຫລືເພື່ອນຂອງທ່ານ" ເພິ່ງຕອບວ່າ "ພິກຂຸຊື່ນີ້ແລະພິກຂຸຊື່ນີ້"
ພິກຂຸຜູ້ຮັບວິກັປເພິ່ງກ່າວກັບພິກຂຸຜູ້ວິກັປວ່າ "ຂ້າພະເຈົ້າໃຫ້ແກ່ພິກຂຸເຫລົ່ານັ້ນ ຈີວອນຜືນນີ້ເປັນຂອງພິກຂຸເຫລົ່ານັ້ນ ທ່ານຈົ່ງໃຊ້ສອຍ ຈົ່ງສລະ ຫລືຈົ່ງທຳຕາມເຫຕຸຜົລເຖີດ"
ທີ່ຊື່ວ່າ ທີ່ຍັງບໍ່ໄດ້ປັຈຈຸທລຣຕ໌ ຄື ຈີວອນທີ່ຜູ້ຮັບວິກັປຍັງບໍ່ໄດ້ຄືນໃຫ້ ຫລືພິກຂຸຜູ້ວິກັປໃຊ້ສອຍຈີວອນໂດຍບໍ່ຄຸ້ນເຄີຍກັບພິກຂຸຜູ້ຮັບວິກັປນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໗໕] ຈີວອນຍັງບໍ່ໄດ້ປັຈຈຸທລຣຕ໌ ພິກຂຸສຳຄັນວ່າຍັງບໍ່ໄດ້ປັຈຈຸທລຣຕ໌ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ປັຈຈຸທລຣຕ໌ ພິກຂຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ປັຈຈຸທລຣຕ໌ ພິກຂຸສຳຄັນວ່າປັຈຈຸທລຣຕ໌ແລ້ວ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ຄືພິກຂຸຜູ້ຮັບວິກັປຍັງບໍ່ໄດ້ໃຫ້ຄືນດ້ວຍກ່າວວ່າ "ທ່ານຈະໃຊ້ສອຍ ຈະສລະ ຫລືຈະທຳຕາມເຫຕຸຜົລກໍໄດ້" ປັຈຈຸທລຣຕ໌ ຄືຖອນວິກັປນັ້ນເອງ (ວິ. ອ. ໒/໓໗໔/໔໑໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຟ໌] ຝ. ສຸຣາປານວັຄ ໙. ວິກັປປນສິກຂາບົທ ອນາປັຕຕິວາຣ

ຕິກທຸກກຕ

ພິກຂຸອທິຖຖານຫລືສລະ ຕ້ອງອາບັຕິທຸກກຕ

ຈີວອນປັຈຈຸທລຣຕ໌ແລ້ວ ພິກຂຸສຳຄັນວ່າຍັງບໍ່ໄດ້ປັຈຈຸທລຣຕ໌ ຕ້ອງອາບັຕິທຸກກຕ

ຈີວອນປັຈຈຸທລຣຕ໌ແລ້ວ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຈີວອນປັຈຈຸທລຣຕ໌ແລ້ວ ພິກຂຸສຳຄັນວ່າປັຈຈຸທລຣຕ໌ແລ້ວ ບໍ່ເປັນອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໖] ໑. ພິກຂຸໃຊ້ສອຍຈີວອນທີ່ຜູ້ຮັບວິກັປຄືນໃຫ້ຫລືໃຊ້ສອຍຈີວອນດ້ວຍຄວາມຄຸ້ນເຄີຍກັບພິກຂຸຜູ້ຮັບວິກັປ

໔. ພິກຂຸວິກລຈິຕ

໓. ພິກຂຸຕົ້ນບັນຍັດ

ວິກັປປນສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ຝ໌. ສຸຣາປານວັຄ ໑໐. ຈີວອນອປນິສານສິກຂາບົທ ນິທານວັຕຖຸ

ຝ໌. ສຸຣາປານວັຄ

໑໐. ຈີວອນອປນິສານສິກຂາບົທ

ວ່າດ້ວຍການລີ້ຈີວອນ

ເຣື້ອງພຣະສັຕຕຣສວັຄຄີຍ໌

[໓໗໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກສຸສັຕຕຣສວັຄຄີຍ໌ບໍ່ເກັບບໍຣິຂາຣ ພວກກິກສຸຈັພພັຄຄີຍ໌ຈຶ່ງເອົາບາຕຣແດ່ ຈີວອນແດ່ຂອງພວກກິກສຸສັຕຕຣສວັຄຄີຍ໌ໄປລີ້ ພວກກິກສຸສັຕຕຣສວັຄຄີຍ໌ໄດ້ກ່າວກັບພວກກິກສຸຈັພພັຄຄີຍ໌ດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານໄປຣດຄືນບາຕຣແດ່ຈີວອນແດ່ໃຫ້ແກ່ພວກເຮົາເຖີດ" ພວກກິກສຸຈັພພັຄຄີຍ໌ພາກັນຫົວ ພວກກິກສຸສັຕຕຣສວັຄຄີຍ໌ພາກັນຮ້ອງໄຫ້ ກິກສຸທັງຫລາຍຖາມວ່າ "ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກກິກສຸສັຕຕຣສວັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ພວກກິກສຸຈັພພັຄຄີຍ໌ເອົາບາຕຣແດ່ ຈີວອນແດ່ຂອງພວກຜູ້ຂ້າໄປລີ້" ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກສຸຈັພພັຄຄີຍ໌ຈຶ່ງເອົາບາຕຣແດ່ ຈີວອນແດ່ຂອງກິກສຸທັງຫລາຍໄປລີ້ລະ" ຄັນກິກສຸເຫລົ່ານັ້ນຕຳຫນິພວກກິກສຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກສຸຈັພພັຄຄີຍ໌ວ່າ "ກິກສຸທັງຫລາຍ ຊາບວ່າ ພວກທ່ານເອົາບາຕຣແດ່ ຈີວອນແດ່ຂອງກິກສຸທັງຫລາຍໄປລີ້ ແມ່ນແທ້ບໍ" ພວກກິກສຸຈັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຊົງຕຳຫນິວ່າ "ຯລຯ ໂມຄພບຸຣຸຫທັງຫລາຍ ຈັ່ງໃດທ່ານຈຶ່ງເອົາບາຕຣແດ່ ຈີວອນແດ່ຂອງພວກກິກສຸໄປລີ້ລະ ໂມຄພບຸຣຸຫທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ

ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ກິກຍຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໗໘] ກໍ ກິກຍຸໃດເອົາບາຕຣຫລືຈີວອນ ຜ້າປູນັ່ງ ກັບເຂັມຫລືປຣະຄົດແອວຂອງກິກຍຸໄປລີ້ ໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໓໗໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . . . ໃດ

ຄຳວ່າ ກິກຍຸ ມີອະທິບາຍວ່າ ຊື່ວ່າກິກຍຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຍຸ ໃນຄວາມຫມາຍນີ້

ຄຳວ່າ ຂອງກິກຍຸ ຄື ຂອງກິກຍຸອື່ນ

ທີ່ຊື່ວ່າ ບາຕຣ ໄດ້ແກ່ ບາຕຣ ໒ ຊນິດ ຄື (໑) ບາຕຣເຫລັກ (໒) ບາຕຣດິນ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ໖ ຊນິດ ຢ່າງໃດຢ່າງນຶ່ງຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ

ທີ່ຊື່ວ່າ ຜ້າປູນັ່ງ ພຣະຜູ້ມີພຣະກາຄຕຣັສຫມາຍເຖິງຜ້າປູນັ່ງມີຊາຍ

ທີ່ຊື່ວ່າ ກັບເຂັມ ໄດ້ແກ່ ກລ່ອງທີ່ມີເຂັມຫລືບໍ່ມີເຂັມກໍຕາມ

ທີ່ຊື່ວ່າ ປຣະຄດແອວ ໄດ້ແກ່ ປຣະຄດແອວ ໒ ຊນິດ ຄື (໑) ປຣະຄດແອວຜ້າ (໒) ປຣະຄົດແອວໄສ້ຫມູ

ຄຳວ່າ ເອົາໄປລີ້ ຄື ກິກຍຸເອົາໄປລີ້ເອງ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ເອົາໄປລີ້ ຄື ກິກຍຸໃຊ້ຜູ້ອື່ນໃຫ້ເອົາໄປລີ້ ຕ້ອງອາບັຕິປາຈິຕຕີຍ໌

ກິກຍຸຜູ້ຮັບຄຳສັ່ງຄັ້ງດຽວແຕ່ລີ້ຫລາຍຄັ້ງ ກິກຍຸຜູ້ສັ່ງຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຄື ກິກຍຸປະສົງຄ໌ຈະຫລິ້ນ

ຕິກປາຈິຕຕີຍ໌

[໓໘໐] ອຸປສັມບັນ ກິກຍຸສຳຄັນວ່າເປັນອຸປສັມບັນ ເອົາບາຕຣ ຫລືຈີວອນ ຫລືຜ້າປູນັ່ງ ຫລືກັບເຂັມ ຫລືປຣະຄົດແອວໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິ

ປາຈິຕຕີຍ໌
ອຸປສັມບັນ ພິກຂຸບໍ່ແນ່ໃຈ ເອົາບາຕຣ ຫລືຈີວອນ ຫລືຜ້າປູນັ່ງ ຫລືກັບເຂັມ ຫລືປຣະຄົດແອວໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ເອົາບາຕຣ ຫລືຈີວອນ ຫລືຜ້າປູນັ່ງ ຫລືກັບເຂັມ ຫລືປຣະຄົດແອວໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸຎ
ພິກຂຸເອົາບໍຣິຂາຣອື່ນໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິທຸກກຸຎ
ພິກຂຸເອົາບາຕຣ ຫລືຈີວອນ ຫລືບໍ່ຣິຂາຣອື່ນຂອງອນຸປສັມບັນໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິທຸກກຸຎ
ອນຸປສັມບັນ ພິກຂຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຸຎ
ອນຸປສັມບັນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຸຎ
ອນຸປສັມບັນ ພິກຂຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຸຎ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຓທ໌] ໖. ສຸຣາປານວັຄ ຣວມສິກຂາບົທທີ່ມີໃນສຸຣາປານວັຄ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໗໑] ໑. ພິກຂຸບໍ່ປະສົງຄ໌ຈະລໍ້ຫລິ້ນ
໒. ພິກຂຸເກັບບໍຣິຂາຣທີ່ຜູ້ອື່ນວາງໄວ້ບໍ່ດີ
໓. ພິກຂຸເກັບໄວ້ດ້ວຍຫວັງຈະສັ່ງສອນແລ້ວຄືນໃຫ້
໔. ພິກຂຸວິກົລຈິຕ
໕. ພິກຂຸຕົ້ນບັນຍັດ

ຈີວອນວອປນິລານສິກຂາບົທທີ ໑໐ ຈົບ

ສຸຣາປານວັຄທີ ໖ ຈົບ

ຮວມສິກຂາບົທທີ່ມີໃນສຸຣາປານວັຄ

ສຸຣາປານວັຄມີ ໑໐ ສິກຂາບົທ ຄື

໑. ສຸຣາປານສິກຂາບົທ ວ່າດ້ວຍການດື່ມສຸຣາແລະເມຣັຍ

໒. ອັງຄຸລິປໂຕທກສິກຂາບົທ ວ່າດ້ວຍການໃຊ້ນິ້ວມືຈີ້ກັນແລະກັນ

໓. ຫັສສລັມມສິກຂາບົທ ວ່າດ້ວຍການຫລິ້ນນ້ຳ

໔. ອນາທຣິຍສິກຂາບົທ ວ່າດ້ວຍຄວາມບໍ່ເອື້ອເຟື້ອຕໍ່ຄຳຕັກເຕືອນ

໕. ກິງສາປນສິກຂາບົທ ວ່າດ້ວຍການເຮັດໃຫ້ຕົກໃຈ

໖. ໂຊຕິກສິກຂາບົທ ວ່າດ້ວຍການກໍ່ໄຟຜີງ

໗. ນຫານສິກຂາບົທ ວ່າດ້ວຍການສົງນ້ຳນອກສມັຍ

໘. ທຸພພັຕຕກຣຕສິກຂາບົທ ວ່າດ້ວຍການທຳຈີວອນໃຫມ່ໃຫ້ເສັ້ງສີ

໙. ວິກັປປນສິກຂາບົທ ວ່າດ້ວຍການວິກັປຈີວອນ

໑໐. ຈີວອນອປນິລານສິກຂາບົທ ວ່າດ້ວຍການລີ້ຈີວອນ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໑. ສັຢຈິຈສິກຂາບົທ ນິທານວັຕຖຸ

໗. ສັປປາຕກວັຄ

ຫມວດວ່າດ້ວຍສັຕວ໌ມີຊີວິຕ

໑. ສັຢຈິຈສິກຂາບົທ

ວ່າດ້ວຍຄວາມຈິງໃຈປົງຊີວິຕສັຕວ໌

ເຣື້ອງພຣະອຸທາຍີ

[໓໘໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຕະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫົກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີເປັນນັກຍິງລນູ໑ ແລະທ່ານບໍ່ຊອບອີກາ ທ່ານຈຶ່ງຍິງອີກາທັງຫລາຍແລ້ວຕັດຫົວມາສຽບຫລາວຮຽງໄວ້ ກິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານ ໃຜຂ້າອີກາເຫລົ່ານີ້" ທ່ານພຣະອຸທາຍີຕອບວ່າ "ທ່ານທັງຫລາຍ ຜູ້ຂ້າເອງ ຜູ້ຂ້າບໍ່ຊອບອີກາ" ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີ

ຈຶ່ງຈົງໃຈປົງຊີວິດສັດວ໌ລະ ຯລຯ" ຄັນພິກສຸທັງຫລາຍຕຳໜິທ່ານພຣະອຸທາຍີໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານຈົງໃຈປົງຊີວິດສັດວ໌ ແມ່ນແທ້ບໍ" ທ່ານພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງຈົງໃຈປົງຊີວິດສັດວ໌ລະ ໂມຄບຸຣຸສ ການກະທຳຢ່າງນີ້ ມິໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ສມັຍເປັນຄຣືຫັສຖ໌ ທ່ານພຣະອຸທາຍີເປັນນັກຍິງສນູ ຊ່ຽວຊານໃນສິລປະການໃຊ້ສນູ ແລະເປັນອາຈາຣຍ໌ຂອງນັກຍິງສນູດ້ວຍ (ວິ. ອ. ໒/໓໘໒/໔໑໑, ສາຣຕຸຖ. ຜີກາ ໓/໓໘໒/໑໐໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໑. ສັຢຈິຈຈສິກຂາບົທ ບົທພາຊນີຍ໌

ພຣະບັນຍັດ

[໓໘໓] ກໍ ພິກສຸໃດຈົງໃຈປົງຊີວິດສັດວ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸທາຍີ ຈົບ

ສິກຂາບົທວິພັງຄ໌

[໓໘໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອະທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ຈົງໃຈ ໄດ້ແກ່ ຮູ້ຢູ່ ຮູ້ດີຢູ່ ຈົງໃຈ ຝ່າຝືນ ລ່ວງລະເມີດ

ທີ່ຊື່ວ່າ ສັດວ໌ມີຊີວິດ ພຣະຜູ້ມີພຣະພາຄຕຣັສໝາຍເຖິງສັດວ໌ເດັຽຣະສານ

ຄຳວ່າ ປົງຊີວິດ ໄດ້ແກ່ ຕັດທຳລາຍຊີວິຕິນທຣີຍ໌ ຕັດຄວາມສືບຕໍ່ ຕ້ອງອາບັຕິປາຈິຕຕີຍ໌

ບົທການຸນົຍ໌

ປາຈິຕຕິຍ໌

[໓໗໕] ສັຕວ໌ມີຊີວິຕ ກິກຂຸສໍາຄັນວ່າເປັນສັຕວ໌ມີຊີວິຕ ປົງຊີວິຕ ຕ້ອງອາບັຕິປາຈິຕຕິຍ໌

ສັຕວ໌ມີຊີວິຕ ກິກຂຸບໍ່ແນ່ໃຈ ປົງຊີວິຕ ຕ້ອງອາບັຕິປາຈິຕຕິຍ໌

ສັຕວ໌ມີຊີວິຕ ກິກຂຸສໍາຄັນວ່າບໍ່ແມ່ນສັຕວ໌ມີຊີວິຕ ປົງຊີວິຕ ບໍ່ຕ້ອງອາບັຕິ

ທຸກກຕ

ບໍ່ແມ່ນສັຕວ໌ມີຊີວິຕ ກິກຂຸສໍາຄັນວ່າເປັນສັຕວ໌ມີຊີວິຕ ຕ້ອງອາບັຕິທຸກກຕ

ບໍ່ແມ່ນສັຕວ໌ມີຊີວິຕ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນສັຕວ໌ມີຊີວິຕ ກິກຂຸສໍາຄັນວ່າບໍ່ແມ່ນສັຕວ໌ມີຊີວິຕ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໑. ສັຍຈິຈຈສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໖] ໑. ກິກຂຸບໍ່ຈົງໃຈຈະປົງຊີວິຕສັຕວ໌

໒. ກິກຂຸບໍ່ມີສຕິປົງຊີວິຕສັຕວ໌

໓. ກິກຂຸຜູ້ບໍ່ຮູ້ຕົວ

໔. ກິກຂຸບໍ່ປະສົງຄ໌ຈະຂ້າ

໕. ກິກຂຸວິກົລຈິຕ

໖. ກິກຂຸຕົ້ນບັນຍັດ

ສັຍຈິຈຈສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໒. ສັປປາຕກສິກຂາບົທ ນິທານວັຕຖຸ

໗. ສັປປາຓກວັຄ

໔. ສັປປາຓກສິກຂາບົທ
ວ່າດ້ວຍການບໍຣິໂພຄນ້ຳທີ່ມີສັຕວ໌ມີຊີວິຕ

ເຣື້ອງພຣະຈັພພັຄຄີຍ໌

[໓໘໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸຈັພພັຄຄີຍ໌ຮູ້ຢູ່ວ່ານ້ຳມີສັຕວ໌ມີຊີວິຕ ກໍຍັງບໍຣິໂພຄ໑ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ ຮູ້ຢູ່ວ່ານ້ຳມີສັຕວ໌ມີຊີວິຕ ກໍຍັງບໍຣິໂພຄລະ" ຄັນພິກຂຸທັງຫລາຍຕຳຫນິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ວ່ານ້ຳມີສັຕວ໌ມີຊີວິຕ ກໍຍັງບໍຣິໂພຄ ແມ່ນແທ້ບໍ" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຣເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸຍທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ວ່ານ້ຳມີສັຕວ໌ມີຊີວິຕ ກໍຍັງບໍຣິໂພຄລະ ໂມຄບຸຣຸຍທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໘໘] ກໍ ພິກຂຸໃດຮູ້ຢູ່ວ່ານ້ຳມີສັຕວ໌ມີຊີວິຕ ກໍຍັງບໍຣິໂພຄ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ຄຳວ່າ "ບໍຣິໂພຄ" ຫມາຍເຖິງ ດື່ມ ໃຊ້ລ້າງບາຕຣ ເອົາບາຕຣເຂົ້າຕົ້ມຮ້ອນແຊ່ໃຫ້ເຢັນ ອາບ ຫລືແມ່ນລົງໄປລຸຍນ້ຳໃນຕຣະພັງ ໃນສຣະໂບກຂຣນີ ເຮັດໃຫ້ເກີດຄລື່ນ (ວິ. ອ. ໔/໓໘໗/

໔໑໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໒. ສັປປາຕກສິກຂາບົທ ອນາປັຕຕິວາຣ

ສິກຂາບົທວິພັງຄ໌

[໓໗໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ກິກຂຸຮູ້ເອງ ຫລືຄົນເຫລົ່າອື່ນບອກໃຫ້ກິກຂຸນັ້ນຮູ້ ກິກຂຸຮູ້ຢູ່ວ່າ "ນ້ຳມີສັຕວ໌ມີຊີວິຕ" ຮູ້ຢູ່ວ່າ "ສັຕວ໌ມີຊີວິຕຈະຕາຍເພາະການບໍຣິໂກຄ"ກໍຍັງບໍຣິໂກຄ ຕ້ອງອາບັຕິປາຈິຕຕິຍ໌

ບົທກາຊນີຍ໌

[໓໘໐] ນ້ຳມີສັຕວ໌ມີຊີວິຕ ກິກຂຸສຳຄັນວ່າມີສັຕວ໌ມີຊີວິຕ ບໍຣິໂກຄ ຕ້ອງອາບັຕິປາຈິຕຕິຍ໌
ນ້ຳມີສັຕວ໌ມີຊີວິຕ ກິກຂຸບໍ່ແນ່ໃຈ ບໍຣິໂກຄ ຕ້ອງອາບັຕິທຸກກຏ
ນ້ຳມີສັຕວ໌ມີຊີວິຕ ກິກຂຸສຳຄັນວ່າບໍ່ມີສັຕວ໌ມີຊີວິຕ ບໍຣິໂກຄ ບໍ່ຕ້ອງອາບັຕິ
ນ້ຳບໍ່ມີສັຕວ໌ມີຊີວິຕ ກິກຂຸສຳຄັນວ່າມີສັຕວ໌ມີຊີວິຕ ຕ້ອງອາບັຕິທຸກກຏ
ນ້ຳບໍ່ມີສັຕວ໌ມີຊີວິຕ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຏ
ນ້ຳບໍ່ມີສັຕວ໌ມີຊີວິຕ ກິກຂຸສຳຄັນວ່າບໍ່ມີສັຕວ໌ມີຊີວິຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໘໑] ໑. ກິກຂຸບໍ່ຮູ້ວ່າ "ນ້ຳມີສັຕວ໌ມີຊີວິຕ"
໒. ກິກຂຸຮູ້ວ່າ "ນ້ຳບໍ່ມີສັຕວ໌ມີຊີວິຕ"
໓. ກິກຂຸຮູ້ຢູ່ວ່າ "ສັຕວ໌ມີຊີວິຕຈະບໍ່ຕາຍເພາະການບໍຣິໂກຄ"
໔. ກິກຂຸວິກົລຈິຕ
໕. ກິກຂຸຕົ້ນບັນຍັດ

ສັປປາຕກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໓. ອຸກໂກຜນສິກຂາບົທ ນິທານວັຕຖຸ

໗. ສັປປາຕວັຄ

໓. ອຸກໂກຜນສິກຂາບົທ

ວ່າດ້ວຍການຮື້ຟື້ນອະທິກອນ(ບັນຫາຂອງສົງຂ໌)ຂຶ້ນມາພິຈາລະນາໃຫມ່

ເຣື້ອງພຣະຈັພພັຄຄີຍ໌

[໓໙໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກທຸຈັພພັຄຄີຍ໌ຮູ້ຢູ່ ຮື້ຟື້ນ ອະທິກອນ(ບັນຫາຂອງສົງຂ໌) ທີ່ໄດ້ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາລະນາໃຫມ່ດ້ວຍກ່າວວ່າ "ກັມຍັງບໍ່ໄດ້ທຳ ກັມທຳບໍ່ດີ ເພິ່ງທຳໃຫມ່ ກັມນັ້ນຍັງບໍ່ໄດ້ຕັດສິນ ກັມນັ້ນຕັດສິນບໍ່ດີ ເພິ່ງຕັດສິນໃຫມ່" ບັນດາກິກທຸຜູ້ມັກ ນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກທຸຈັພພັຄຄີຍ໌ຮູ້ຢູ່ຍັງຂືນຮື້ຟື້ນ ອະທິກອນ(ບັນຫາຂອງສົງຂ໌)ທີ່ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາລະນາໃຫມ່ລະ" ຄັນກິກທຸທັງ ຫລາຍຕຳຫນິພວກກິກທຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ ກາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກທຸຈັພພັຄຄີຍ໌ວ່າ "ກິກທຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ ຮື້ຟື້ນອະທິກອນ(ບັນຫາຂອງສົງຂ໌)ທີ່ ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາລະນາໃຫມ່ ແມ່ນແທ້ບໍ່" ພວກກິກທຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທຣເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງ ຫລາຍ ຈັ່ງໃດພວກທ່ານຮູ້ຢູ່ຍັງຂືນຮື້ຟື້ນອະທິກອນ(ບັນຫາຂອງສົງຂ໌)ທີ່ຕັດສິນໄປແລ້ວຢ່າງຖືກ ຕ້ອງເພື່ອພິຈາລະນາໃຫມ່ລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່

ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໙໓] ກໍ ກິກຂຸໃດຮູ້ຢູ່ ຮື້ຟື້ນອະທິກອຕ໌(ບັນຫາຂອງສົງຄ໌)ທີ່ຕັດສິນໄປແລ້ວຢ່າງຖືກຕ້ອງ ເພື່ອພິຈາຣຕາໃຫມ່ ຕ້ອງອາບັຕິປາຈິຕຕີຍ໌

ເຮື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໓໙໔] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ກິກຂຸຮູ້ເອງ ຄົນເຫລົ່າອື່ນບອກກິກຂຸນັ້ນ ຫລືຄົນນັ້ນບອກ

ທີ່ຊື່ວ່າ ຢ່າງຖືກຕ້ອງ ຄື ອະທິກອຕ໌(ບັນຫາຂອງສົງຄ໌)ທີ່ຕັດສິນໂດຍທັມ ໂດຍວິນັຍ ໂດຍສັຕຖຸສາສນ໌

ທີ່ຊື່ວ່າ ອະທິກອຕ໌(ບັນຫາຂອງສົງຄ໌) ໄດ້ແກ່ ອະທິກອຕ໌(ບັນຫາຂອງສົງຄ໌) ໔ ຄື (໑) ວິວາທາທິກອຕ໌ (໒) ອນຸວາທາທິກອຕ໌ (໓) ອາປັຕຕາທິກອຕ໌ (໔) ກິຈຈາທິກອຕ໌

ຄໍາວ່າ ຮື້ຟື້ນ. . . ເພື່ອພິຈາຣຕາໃຫມ່ ຄື ກິກຂຸຮື້ຟື້ນດ້ວຍກ່າວວ່າ "ກັມຍັງບໍ່ໄດ້ທໍາ ກັມທໍາບໍ່ດີ ເພິ່ງທໍາໃຫມ່ ກັມນັ້ນຍັງບໍ່ໄດ້ຕັດສິນ ກັມນັ້ນຕັດສິນບໍ່ດີ ເພິ່ງຕັດສິນໃຫມ່" ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

[໓໙໕] ກັມທີ່ທໍາຖືກຕ້ອງ ກິກຂຸສໍາຄັນວ່າເປັນກັມທີ່ທໍາຖືກຕ້ອງ ຮື້ຟື້ນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທໍາຖືກຕ້ອງ ກິກຂຸບໍ່ແນ່ໃຈ ຮື້ຟື້ນ ຕ້ອງອາບັຕິທຸກກະຍ

ກັມທີ່ທໍາຖືກຕ້ອງ ກິກຂຸສໍາຄັນວ່າເປັນກັມທີ່ທໍາບໍ່ຖືກຕ້ອງ ຮື້ຟື້ນ ບໍ່ຕ້ອງອາບັຕິ

ກັມທີ່ທໍາບໍ່ຖືກຕ້ອງ ກິກຂຸສໍາຄັນວ່າເປັນກັມທີ່ທໍາຖືກຕ້ອງ ຕ້ອງອາບັຕິທຸກກະຍ

ກັມທີ່ທໍາບໍ່ຖືກຕ້ອງ ກິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກະຍ

ກັມທີ່ທໍາບໍ່ຖືກຕ້ອງ ກິກຂຸສໍາຄັນວ່າເປັນກັມທີ່ທໍາບໍ່ຖືກຕ້ອງ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໙໖] ໑. ພິກຂຸຮູ້ວ່າ "ກັມນັ້ນທຳບໍ່ຖືກຕ້ອງ ແຍກກັນທຳຫລືທຳແກ່ຜູ້ບໍ່ຄວຣແກ່ກັມ" ຈຶ່ງຮື້ຟື້ນ

໔. ພິກຂຸວິກລຈິຕ

໖. ພິກຂຸຕົ້ນບັນຍັດ

ອຸກໂກຜນສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໔. ທຸຕຖຸລລສິກຂາບົທ ນິທານວັຕຖຸ

໗. ສັປປາຕກວັຄ

໔. ທຸຕຖຸລລສິກຂາບົທ

ວ່າດ້ວຍການປົກປິດອາບັຕິຊົ່ວຫຍາບ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໓໙໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຄເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣ ຕ້ອງອາບັຕິຊື່ສັຍເຈຕນິກາ ສຸກກວິສັຕຖິ໑ ຈຶ່ງບອກພິກຂຸສັທສິວິຫາຣິກຜູ້ເປັນພີ່ນ້ອງກັນວ່າ "ທ່ານ ຂະນ້ອຍຕ້ອງອາບັຕິຊື່ອສັຍ ເຈຕນິກາສຸກກວິສັຕຖິ ທ່ານໂປຣດຢ່າບອກໃຜໆ" ຕໍ່ມາພິກຂຸຮູບນຶ່ງກໍຕ້ອງອາບັຕິຊື່ສັຍເຈຕນິກາ ສຸກກວິສັຕຖິ ໄດ້ຂໍສົງຄ໌ຢູ່ປຣິວາສເພື່ອ(ຈະອອກຈາກ)ອາບັຕິນັ້ນ ສົງຄ໌ໄດ້ໃຫ້ປຣິວາສເພື່ອ(ອອກ ຈາກ)ອາບັຕິນັ້ນແກ່ພິກຂຸນັ້ນ ພິກຂຸຜູ້ກຳລັງຢູ່ປຣິວາສນັ້ນພົບພິກຂຸນັ້ນຈຶ່ງໄດ້ກ່າວດັ່ງນີ້ວ່າ "ທ່ານ ຂະ ນ້ອຍຕ້ອງອາບັຕິຊື່ສັຍເຈຕນິກາສຸກກວິສັຕຖິ ຈຶ່ງໄດ້ຂໍສົງຄ໌ຢູ່ປຣິວາສ ສົງຄ໌ໄດ້ໃຫ້ຂະນ້ອຍຢູ່ ປຣິວາສເພື່ອ(ອອກຈາກ)ອາບັຕິແລ້ວຂະນ້ອຍກຳລັງຢູ່ປຣິວາສ ຂໍບອກໃຫ້ຊາບ ທ່ານຈົ່ງຈຳຂະນ້ອຍ ໄວ້ວ່າ 'ບອກໃຫ້ຊາບແລ້ວ" ພິກຂຸນັ້ນຖາມວ່າ "ພິກຂຸອື່ນຜູ້ຕ້ອງອາບັຕິນີ້ກໍຕ້ອງເຮັດຢ່າງນີ້ຫລື" ພິກຂຸຜູ້ຢູ່ປຣິວາສຕອບວ່າ "ແມ່ນແລ້ວ ຕ້ອງເຮັດຢ່າງນີ້" ພິກຂຸນັ້ນກ່າວວ່າ "ທ່ານພຣະອຸປນັນ ທສາກຍບຸຕຣນີ້ຕ້ອງອາບັຕິຊື່ອສັຍເຈຕນິກາສຸກກວິສັຕຖິ ໄດ້ບອກຂະນ້ອຍວ່າ 'ທ່ານ ຂະນ້ອຍຕ້ອງ

ອາບັຕິຊື່ອສັປເຈຕນິກາສຸກກວິສັຜກີ ທ່ານໄປຣດຢ່າບອກໃຜໆ" ກິກຫຸຜູ້ຢູ່ປຣິວາສຖາມວ່າ "ທ່ານປົກປິດອາບັຕິໄວ້ຫລື" ກິກຫຸນັ້ນຕອບວ່າ "ແມ່ນແລ້ວ ຂນ້ອຍ" ກິກຫຸຜູ້ຢູ່ປຣິວາສຈຶ່ງບອກເຣື້ອງນີ້ໃຫ້ກິກຫຸທັງຫລາຍຊາບ

ເຊີງອັນຖະ :

໑ ຄຳວ່າ "ສັປເຈຕນິກາສຸກກວິສັຜກີ" ແປວ່າ ມີຄວາມຈິງໃຈ ມີເຈຕນາທຳນ້ຳອສຸຈິໃຫ້ເຄື່ອນ ເປັນຊື່ສັງຆາທິເສສ ສິກຂາບົທທີ ໑ (ເບິ່ງ ພຣະວິນັຍປິດແປລ ເຫລັ້ມ ໑ ຂໍ້ ໔໖໔ ຫນ້າ ໔໔໙-໔໕໑)

ບັນດາກິກຫຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດກິກຫຸຮູ້ຢູ່ ຈຶ່ງປົກປິດອາບັຕິຊົ່ວຫຍາບຂອງກິກຫຸລະ" ຄັນກິກຫຸເຫລົ່ານັ້ນຕຳຫນິກິກຫຸຜູ້ປົກປິດອາບັຕິນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຫຸຜູ້ປົກປິດອາບັຕິນັ້ນວ່າ "ກິກຫຸ ຊາບວ່າ ທ່ານຮູ້ຢູ່ ຍັງປົກປິດອາບັຕິຊົ່ວຫຍາບຂອງກິກຫຸແມ່ນແທ້ບໍ່" ກິກຫຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ໂມຆບຸຣຸຩ ຈັ່ງໃດທ່ານຮູ້ຢູ່ ຈຶ່ງປົກປິດອາບັຕິຊົ່ວຫຍາບຂອງກິກຫຸລະ ໂມຆບຸຣຸຩ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຫຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໙໘] ກໍ ກິກຫຸໃດຮູ້ຢູ່ ປົກປິດອາບັຕິຊົ່ວຫຍາບຂອງກິກຫຸ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິກັງຄ໌

[໓໙໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະ
ພາຄເຈົ້າປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້
ຄຳວ່າ ຂອງພິກຂຸ ຄື ຂອງພິກຂຸຮູບອື່ນ
ທີ່ຊື່ວ່າ ຮູ້ຢູ່ ຄື ພິກຂຸຮູ້ເອງ ຄົນເຫລົ່າອື່ນບອກພິກຂຸນັ້ນ ຫລືພິກຂຸຜູ້ຕ້ອງອາບັດຊົ່ວຫຍາບນັ້ນ
ບອກ
ທີ່ຊື່ວ່າ ອາບັດຊົ່ວຫຍາບ ໄດ້ແກ່ ອາບັດປາຣາຊິກ ໔ ສິກຂາບົທ ແລະອາບັດສັງຄາທິເສສ ໑໓
ສິກຂາບົທ
ຄຳວ່າ ປົກປິດ ຄວາມວ່າ ເມື່ອພິກຂຸຄິດວ່າ "ພິກຂຸທັງຫລາຍຮູ້ແລ້ວຈະໂຈທ ຈະຕັກເຕືອນ ຈະຂູ່
ຈະບັງຄັບ ຈະເຮັດໃຫ້ເກີ້ເຂີນ ເຮົາຈະບໍ່ບອກ" ພອທອດສຸຣະ ຕ້ອງອາບັດປາຈິຕຕີຍ໌

ບົທກາຊນີຍ໌

[໔໐໐] ອາບັດຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັດຊົ່ວຫຍາບ ປົກປິດໄວ້ ຕ້ອງອາບັດປາຈິຕຕີຍ໌
ອາບັດຊົ່ວຫຍາບ ພິກຂຸບໍ່ແນ່ໃຈ ປົກປິດໄວ້ ຕ້ອງອາບັດທຸກກຸຏ
ອາບັດຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັດບໍ່ຊົ່ວຫຍາບ ປົກປິດໄວ້ ຕ້ອງອາບັດທຸກກຸຏ
ພິກຂຸປົກປິດອາບັດບໍ່ຊົ່ວຫຍາບ ຕ້ອງອາບັດທຸກກຸຏ
ພິກຂຸປົກປິດຄວາມປະພຶດຊົ່ວຫຍາບຫລືບໍ່ຊົ່ວຫຍາບຂອງອນຸປສັມບັນ ຕ້ອງອາບັດທຸກກຸຏ
ອາບັດບໍ່ຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັດຊົ່ວຫຍາບ ຕ້ອງອາບັດທຸກກຸຏ
ອາບັດບໍ່ຊົ່ວຫຍາບ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກຸຏ
ອາບັດບໍ່ຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັດບໍ່ຊົ່ວຫຍາບ ປົກປິດໄວ້ ຕ້ອງອາບັດທຸກກຸຏ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຓຑ໌] ໗. ສັປປາຓກວັຄ ໔. ທຸຏຸລລສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື
[໔໐໑] ໑. ພິກຂຸຄິດວ່າ "ສົງຆ໌ຈະບາດໝາງ ຈະຜິດຖຽງ ຈະຂັດແຍ້ງ ຫລືຈະວິວາທກັນ" ຈຶ່ງບໍ່
ບອກ
໒. ພິກຂຸຄິດວ່າ "ສົງຆ໌ຈະແຕກແຍກ ຫລືຈະແຕກແຍກ" ຈຶ່ງບໍ່ບອກ

໓. ກິກບຸຄິດວ່າ "ຜູ້ນີ້ກັກຂຣະ ທຍາບຄາຍ ຈະທຳອັນຕຣາຍແກ່ຊີວິຕຫລືອັນຕຣາຍແກ່ພຣົມຈັນຍ໌" ຈຶ່ງບໍ່ບອກ

໔. ກິກບຸບໍ່ພົບກິກບຸເຫລົ່າອື່ນທີ່ສົມຄວຣຈຶ່ງບໍ່ໄດ້ບອກ

໕. ກິກບຸບໍ່ຕ້ອງກາຣຈະປົກປິດ ແຕ່ຍັງບໍ່ໄດ້ບອກ

໖. ກິກບຸຄິດວ່າ "ເຂົາຈັກປາກົດດ້ວຍກັມຂອງຕົນເອງ" ຈຶ່ງບໍ່ບອກ

໗. ກິກບຸວິກົລຈິຕ

໘. ກິກບຸຕົ້ນບັນຍັດ

ທຸພກຸລລສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໕. ອູນວີສຕິວັສສສິກຂາບົທ ນິທານວັຕຖຸ

໗. ສັປປາຕກວັຄ

໕. ອູນວີສຕິວັສສສິກຂາບົທ

ວ່າດ້ວຍກາຣອຸປສົມບົທໃຫ້ບຸຄຄົລມີອາຍຸຫນ້ອຍກວ່າ ໒໐ ປີ

ເຣື່ອງເດັກຊາຍອຸບາລີ

[໔໐໘] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ໃນກຸງຣາຊຄຶຫ໌ ມີເດັກຊາຍຜູ້ເປັນເພື່ອນກັນ ໑໗ ຄົນ ເດັກຊາຍອຸບາລີເປັນຫົວຫນ້າຂອງເດັກເຫລົ່ານັ້ນ ເທື່ອນັ້ນ ມາຣດາບິດາຂອງເດັກຊາຍອຸບາລີໄດ້ປຶກສາກັນດັ່ງນີ້ວ່າ "ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກດ້ວຍວິທີໃດຫນໍ" ລຳດັບນັ້ນ ມາຣດາບິດາຂອງເດັກຊາຍອຸບາລີໄດ້ປຶກສາກັນອີກວ່າ "ຖ້າເຈົ້າອຸບາລີຮຽນຂຽນຫນັງສືດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ" ແຕ່ກໍ່ວິຕົກໄປວ່າ "ຖ້າເຈົ້າອຸບາລີຮຽນຂຽນຫນັງສື ນິ້ວມືຈະຊ້ຳ ຖ້າເຈົ້າອຸບາລີຮຽນວິຊາຄຳນວຕດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ" ແລະວິຕົກອີກວ່າ "ຖ້າເຈົ້າອຸບາລີຮຽນວິຊາຄຳນວຕກໍ່ຈະແໜ້ນຫນ້າເອິກ ຖ້າເຈົ້າອຸບາລີຮຽນວິຊາກ່ຽວກັບກາຣເງິນ໔ ດ້ວຍວິ

ທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ" ແຕ່ກໍວິຕົກອີກວ່າ "ຖ້າເຈົ້າອຸບາລີຮຽນວິຊາກ່ຽວກັບກາຣເງິນ ນັຍນ໌ຕາຂອງເຂົາຈະປວດ ພຣະສມຕະເຊື້ອສາຍສາກຍບຸຕຣເຫລົ່ານີ້ມີລັກษຕະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂภຄອາຫາຣດີ ນອນໃນຫ້ອງມິດຊິດ ຖ້າເຈົ້າອຸບາລີໄດ້ບວຊໃນສຳນັກພຣະສມຕະເຊື້ອສາຍສາກຍບຸຕຣດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ"

ເດັກຊາຍອຸບາລີອອກບວຊ

ເດັກຊາຍອຸບາລີໄດ້ຍິນຄຳສົນທນາຂອງມາຣດາບິດາ ຄັນແລ້ວເດັກຊາຍອຸບາລີຈຶ່ງໄດ້ໄປຫາພວກເດັກໆເຖິງທີ່ພັກ ຄັນເຖິງແລ້ວໄດ້ກ່າວກັບພວກເດັກໆເຫລົ່ານັ້ນດັ່ງນີ້ວ່າ "ເພື່ອນທັງຫລາຍ ມາເຖີດ ພວກເຮົາຈະໄປບວຊໃນສຳນັກພຣະສມຕະເຊື້ອສາຍສາກຍບຸຕຣ"

ເຊີງອັນຖະ :

໑ ວິ. ມ. ໔/ລຸລ/໑໑໑-໑໑໓

໔ ເປັນວິຊາກາຣທຳບັຍຊີ ແລກປ່ຽນເງິນຕຣາ ເປັນເຫຕຸ໌ຍຍົກ (ວິ. ອ. ໖/໔໐໖/໔໑໕, ສາຣຕຸຖ. ຜິກາ ໓/໔໐໖/໑໐໕)

ເດັກເຫລົ່ານັ້ນກ່າວວ່າ "ເພື່ອນເອີ໋ຍ ຖ້າເຈົ້າບວຊ ພວກເຮົາກໍຈະບວຊເຊັ່ນກັນ" ຄັນແລ້ວເດັກໆເຫລົ່ານັ້ນຕ່າງຄົນຕ່າງກໍເຂົ້າໄປຫາມາຣດາບິດາຂອງຕົນ ແລ້ວໄດ້ກ່າວຂໍອນຸຍາຕດັ່ງນີ້ວ່າ "ພໍ່ແມ່ໂປຣດອນຸຍາຕໃຫ້ພວກລູກໆອອກຈາກເຮືອນໄປບວຊເປັນອນາຄາຣິກເຖີດ"

ມາຣດາບິດາຂອງເດັກເຫລົ່ານັ້ນອນຸຍາຕດ້ວຍຄິດວ່າ "ເດັກພວກນີ້ຕ່າງພ້ອມໃຈ ມີຄວາມປຣາຖນາສິ່ງທີ່ດີງາມທຸກຄົນ" ພວກເດັກເຫລົ່ານັ້ນຈຶ່ງເຂົ້າໄປຫາກິກษຸທັງຫລາຍ ຂໍບັນພະຊາ ກິກษຸທັງຫລາຍໃຫ້ເດັກພວກນັ້ນບັນພະຊາອຸປສົມບົທແລ້ວ ຄັນເວລາໃກ້ຮຸ່ງແຫ່ງຣາຕຣີ ກິກษຸໃຫມ່ເຫລົ່ານັ້ນລຸກຂຶ້ນຮ້ອງໄຫ້ວ່າ "ທ່ານທັງຫລາຍໂປຣດໃຫ້ເຂົ້າຕົ້ມ ໂປຣດໃຫ້ເຂົ້າສວຍ ໂປຣດໃຫ້ຂອງຄ້ຽວ" ກິກษຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍຖ້າໃຫ້ສວ່າງເສັ່ງກ່ອນ ຖ້າມີເຂົ້າຕົ້ມພວກທ່ານຈະໄດ້ຈັນ ຖ້າມີເຂົ້າສວຍ ພວກທ່ານຈະໄດ້ຈັນ ຖ້າມີຂອງຄ້ຽວ ພວກທ່ານກໍຈະໄດ້ຄ້ຽວແຕ່ຖ້າເຂົ້າຕົ້ມ ເຂົ້າສວຍ ຫລືຂອງຄ້ຽວບໍ່ມີ ພວກທ່ານຕ້ອງທຽວບິຕຊບາຕມາຈັນ" ກິກษຸໃຫມ່ເຫລົ່ານັ້ນອັນກິກษຸທັງຫລາຍກ່າວຢູ່ຢ່າງນີ້ ກໍຍັງພາກັນຮ້ອງໄຫ້ວ່າ "ທ່ານທັງຫລາຍໂປຣດໃຫ້ເຂົ້າຕົ້ມ ໂປຣດໃຫ້ເຂົ້າສວຍ ໂປຣດໃຫ້ຂອງຄ້ຽວເຖີດ" ພາກັນຖ່າຍອຸຈຈາຣະແດ່ ຖ່າຍປັສສາວະ

ແດ່ ຮີດເສນາສນະ ພຣະຜູ້ມີພຣະພາຄຊົງຕື່ນບັນທົມເວລາໃກ້ຮຸ່ງແຫ່ງຣາຕຣີ ໄດ້ຊົງສດັບສຽງເດັກ ຄັນໄດ້ຊົງສດັບແລ້ວຈຶ່ງຕຣັສກັບທ່ານພຣະອານົນທ໌ວ່າ "ອານົນທ໌ ສຽງເດັກຮ້ອງໄຫ້ເພາະສາເຫຕຸໃດຫລື" ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ຂາບທູລເຣື້ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບ

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ຊາບວ່າ ພວກພິກຂຸຮູ້ຢູ່ກໍຍັງອຸປສົມບົທໃຫ້ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ແມ່ນແທ້ບໍ" ພິກຂຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ພິກຂຸທັງຫລາຍ ຈັ່ງໃດໂມໝບຸຣຸຫເຫລົ່ານັ້ນຮູ້ຢູ່ກໍຍັງອຸປສົມບົທ ໃຫ້ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີລະ ພິກຂຸທັງຫລາຍ ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີ ຍັງບໍ່ອົດທົນ ບໍ່ອົດກັ້ນຕໍ່ຄວາມເຢັນ ຄວາມຮ້ອນ ຄວາມຫິວ ສັມຜັສຈາກເຫລືອບ ຍຸງ ລົມ ແດດ ສັຕວ໌ເລືອຄານ ຄຳກ່າວຮ້າຍ ຄຳທີ່ຟັງແລ້ວບໍ່ດີ ຄວາມຮູ້ສຶກທາງກາຍທີ່ເກີດຂຶ້ນເປັນທຸກຂ໌ ແສນສາຫັສ ຮຸນແຮງ ເຜັດຮ້ອນ ບໍ່ນ່າຍິນດີ ບໍ່ຫນ້າພໍໃຈ ແທບຈະພາກຊີວິດ ພິກຂຸທັງຫລາຍ ບຸຄຄົລຜູ້ມີອາຍຸຄົບ ໒໐ ປີ໑ ຈຶ່ງຈະອົດທົນ ອົດກັ້ນຕໍ່ຄວາມເຢັນ ຄວາມຮ້ອນ ຄວາມຫິວ ຄວາມຫິວ ສັມຜັສຈາກເຫລືອບຍຸງ ລົມ ແດດ ສັຕວ໌ເລືອຄານ ຄຳກ່າວຮ້າຍ ຄຳທີ່ຟັງແລ້ວບໍ່ດີ ຄວາມຮູ້ສຶກທາງກາຍທີ່ເກີດຂຶ້ນເປັນທຸກຂ໌ ແສນສາຫັສ ຮຸນແຮງ ເຜັດຮ້ອນ ບໍ່ຫນ້າຍິນດີ ບໍ່ຫນ້າພໍໃຈ ແທບຈະພາກຊີວິດໄດ້ ພິກຂຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໐໖] ກໍ ພິກຂຸໃດຮູ້ຢູ່ ອຸປສົມບົທໃຫ້ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີ ບຸຄຄົລນັ້ນບໍ່ເປັນອັນອຸປສົມບົທ ແລະພິກຂຸເຫລົ່ານັ້ນຄວຣຖືກຕຳໜິ ພິກຂຸນັ້ນຕ້ອງອາບັຕິປາຈິຕຕີຍ໌ນີ້໔

ເຣື້ອງເດັກຊາຍອຸບາລີ ຈົບ

ເຊີງອັນຖະ :

໑ ທີ່ຊື່ວ່າ ອາຍຸຄົບ ໒໐ ປີ ນັ້ນກຳຫນົດນັບເອົາຕັ້ງແຕ່ວັນທີ່ຖືປຸຟິສົນທິ ຈິຕດວງແຮກເກີດໃນຄັນພ໌ມາຣດາ (ວິ. ອ. ໒/໔໐໔/໔໑໕-໖)

໔ ໂສ ຈ ປຸຄ໌ຄໂລ ອນຸປສມ໌ປນ໌ໂນຕິ ຊານນ໌ເຕນາປິ ອຊານນ໌ເຕນາປິ ອຸປສມ໌ປາທິໂຕ ອນຸປສມ໌ປນ໌ໂນວ. ເຕ ຈ ພິກ໌ຂູ ຄາຣຍ໌ຫາຕິ ກເປຕ໌ວາ ອຸປຊ໌ຊາຍໍ ອວເສສາ ຄາຣຍ໌ຫາ ໂຫນ໌ຕິ, ສພ໌ເພ ທຸກ໌ກຕໍ ອາປຊ໌ຊຕິ. ອິທໍ ຕສ໌ມິ ປາຈິຕ໌ຕິຍນ໌ຕິໂຍ ປຸນ ອຸປຊ໌ຊາໂຍ ຫຸຕ໌ວາ ອຸປສມ໌ປາເທຕິ, ຕສ໌ມິເຍວ ປຸຄ໌ຄເລ ອິທໍ ປາຈິຕ໌ຕິຍໍ ເວທິຕພ໌ພໍ

ຄຳວ່າ "ບຸຄຄົລນັ້ນບໍ່ເປັນອັນອຸປສົມບົທ" ຄື ຜູ້ທີ່ພຣະອຸປັຊຊາຍ໌ພ້ອມກາຣກສົງຄ໌ ຊຶ່ງຮູ້ຢູ່ກໍດີ ບໍ່ຮູ້ກໍດີ ອຸປສົມບົທໃຫ້ແລ້ວ ກໍບໍ່ເປັນອັນໄດ້ຮັບກາຣອຸປສົມບົທເລີຍ ຄຳວ່າ "ແລະພິກຂຸເຫລົ່ານັ້ນຄວຣໄດ້ຮັບກາຣຕຳໜິ" ຄື ຍົກເວັ້ນພຣະອຸປັຊຊາຍ໌ແລ້ວ ພິກຂຸທີ່ເຫລືອສົນຄວຣຖືກຕຳໜິ ທຸກຮູປຕ້ອງອາບັຕິທຸກກຕ ຄຳວ່າ "ພິກຂຸນັ້ນຕ້ອງອາບັຕິປາຈິຕຕິຍ໌ນີ້" ຄື ພິກຂຸຮູບທີ່ເປັນພຣະອຸປັຊຊາຍ໌ອຸປສົມບົທໃຫ້ນັ້ນແຫລະຕ້ອງອາບັຕິປາຈິຕຕິຍ໌ (ກງ໌ຂາ. ອ. ໔໘໙)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໕. ອູນວີສຕິວັສສສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໔໐໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກຂຸຮູ້ເອງ ຜູ້ອື່ນບອກໃຫ້ພິກຂຸນັ້ນຮູ້ ຫລືບຸຄຄົລຜູ້ມີອາຍຸບໍ່ຄົບ ໒໐ ປີນັ້ນບອກ

ທີ່ຊື່ວ່າ ມີອາຍຸຫນ້ອຍກວ່າ ໒໐ ປີ ຄື ຜູ້ມີອາຍຸບໍ່ເຖິງ ໒໐ ປີ

ພິກຂຸຕັ້ງໃຈວ່າ "ຈະອຸປສົມບົທໃຫ້" ແສວງຫາຄຕະ ອາຈາຣຍ໌ ບາຕຣ ຫລືຈີວອນ ຫລືສົມມຸດສີມາ ຕ້ອງອາບັຕິທຸກກຕ ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໔ ຄັ້ງ ຕ້ອງອາບັຕິທຸກກຕ ໔ ຕົວ ຈົບກັມວາຈາຄັ້ງສຸດທ້າຍ ພຣະອຸປັຊຊາຍ໌ຕ້ອງອາບັຕິປາຈິຕຕິຍ໌ ຄຕະ ແລະອາຈາຣຍ໌ຕ້ອງອາບັຕິທຸກກຕ

ບົທພາຊນີຍ໌

[໔໐໕] ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ພິກຂຸສຳຄັນວ່າອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທໃຫ້

ຕ້ອງອາບັຕິປາຈິຕຕີຍ໌
ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ພິກຂຸບໍ່ແນ່ໃຈ ອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຏ
ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ພິກຂຸສຳຄັນວ່າອາຍຸຄົບ ໒໐ ປີ ອຸປສົມບົທໃຫ້ ບໍ່ຕ້ອງອາບັຕິ
ບຸຄຄົລອາຍຸຄົບ ໒໐ ປີ ພິກຂຸສຳຄັນວ່າອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທໃຫ້ ຕ້ອງອາບັຕິທຸກ
ກົຏ
ບຸຄຄົລອາຍຸຄົບ ໒໐ ປີ ພິກຂຸບໍ່ແນ່ໃຈ ອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຏ
ບຸຄຄົລອາຍຸຄົບ ໒໐ ປີ ພິກຂຸສຳຄັນວ່າອາຍຸຄົບ ໒໐ ປີ ອຸປສົມບົທໃຫ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໐໖] ໑. ພິກຂຸສຳຄັນບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ວ່າອາຍຸຄົບ ໒໐ ປີ ຈຶ່ງອຸປສົມບົທໃຫ້
໒. ພິກຂຸສຳຄັນບຸຄຄົລອາຍຸຄົບ ໒໐ ປີ ວ່າອາຍຸຄົບ ໒໐ ປີ ຈຶ່ງອຸປສົມບົທໃຫ້
໓. ພິກຂຸວິກົລຈິຕ
໔. ພິກຂຸຕົ້ນບັນຍັດ

ອູນວີສຕິວັສສສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓ໌] ໗. ສັປປາຓກວັຄ ໖. ເຖຍຍສັຕຖສິກຂາບົທ ນິທານວັຕຖຸ

໗. ສັປປາຓກວັຄ

໖. ເຖຍຍສັຕຖສິກຂາບົທ
ວ່າດ້ວຍການຍ່າງທາງໄກຮ່ວມກັບພໍ່ຄ້າກວຽນຜູ້ເປັນໂຈຣ

ເຣື້ອງພິກຂຸຮູບນຶ່ງ
[໔໐໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ
ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພໍ່ຄ້າກວຽນກຸ່ມນຶ່ງຕ້ອງການຈະຍ່າງທາງຈາກກຸງຣາຊຄຶຫ໌ໄປ

ຖິ່ນຍ້ອນແສງ໑ ກິກຂຸຮູບນຶ່ງໄດ້ກ່າວກັບຄົນເຫລົ່ານັ້ນດັ່ງນີ້ວ່າ "ອາຕມາຈະຍ່າງທາງຮ່ວມໄປກັບພວກທ່ານ" ພວກພໍ່ຄ້າກວຽນກ່າວວ່າ "ພຣະຄຸຕເຈົ້າ ພວກຜູ້ຂ້າຈະລຽງກາສີຂນ້ອຍ" ເຈົ້າໜ້າທີ່ເກັບກາສີຊາບຂ່າວວ່າ "ພວກພໍ່ຄ້າກວຽນຈະລຽງກາສີ" ຈຶ່ງດັກຈອບໃນຫົນທາງ ຄັນເຈົ້າໜ້າທີ່ເກັບກາສີຈັບພວກພໍ່ຄ້າກວຽນໝູ່ນັ້ນ ຮິບເອົາຂອງແລ້ວໄດ້ກ່າວກັບກິກຂຸນັ້ນວ່າ "ພຣະຄຸຕເຈົ້າທ່ານຮູ້ຢູ່ ເຫຕຸໃດຈຶ່ງຍ່າງທາງຮ່ວມກັນກັບກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣລະ" ໄຕ່ສວນແລ້ວປ່ອຍໄປ ຄັນກິກຂຸນັ້ນໄປເຖິງກຸງສາວັຕຖີຈຶ່ງແຈ້ງເຣື້ອງນີ້ໃຫ້ກິກຂຸທັງຫລາຍຊາບ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດກິກຂຸຮູ້ຢູ່ຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣລະ" ຄັນກິກຂຸທັງຫລາຍຕຳໜິກິກຂຸນັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ປຄິຍາໂລກໍ ຖິ່ນຍ້ອນແສງ ສູຣິຍາໂລກໍ ປຄິມຸຂໍ ຄື ຍ້ອນແສງຕາເວັນ ປຈຸຈິມທິສໍ ໄດ້ແກ່ທິສຕາເວັນຕົກ (ວິ. ອ. ໒/ ໔໐໗/໔໑໗) ພຣະວິນັຍປິດົກແປແລະຮຽບຮຽງຈາກ ສະບັບ "PALI TEXT SOCIETY" ແປວ່າ ຖິ່ນທີ່ຢູ່ທາງທິສໃຕ້ກຸງຣາຊຄຶຫ໌(The Book of the Discipline, Vol. III, P. 15.)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໖. ເຖຍຍສັຕຖສິກຂາບົທ ສິກຂາບົທວິກັງຄ໌

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຂຸນັ້ນວ່າ "ກິກຂຸ ຊາບວ່າ ທ່ານຮູ້ຢູ່ຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣແມ່ນແທ້ບໍ" ກິກຂຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຮູ້ຢູ່ຍັງຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໐໗] ກໍ ພິກຂຸໃດຮູ້ຢູ່ ຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກຂຸຮູບນຶ່ງ ຈົບ

ສິກຂາບົທວິກັງຄ໌

[໔໐໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກຂຸຮູ້ເອງ ຄົນເຫລົ່າອື່ນບອກພິກຂຸນັ້ນ

ທີ່ຊື່ວ່າ ກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ໄດ້ແກ່ ພວກໂຈຣຜູ້ເຄີຍທຳກາຣປຸ້ນແລ້ວ ຫລືຍັງບໍ່ເຄີຍທຳກາຣປຸ້ນ ຜູ້ລັກຂອງຫລວງຫລືລຽງກາຍ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ຊັກຊວນກັນ ຄື ຊັກຊວນວ່າ "ພວກເຮົາໄປກັນເຖີດ ທ່ານ ພວກເຮົາໄປກັນເຖີດ ທ່ານຜູ້ຈະເຣີນ ໄປກັນເຖີດ ທ່ານຜູ້ຈະເຣີນ ພວກເຮົາໄປກັນເຖີດ ທ່ານ ພວກເຮົາຈະໄປວັນນີ້ມື້ອື່ນນີ້ຫລືມະຣືນນີ້" ຕ້ອງອາບັຕິທຸກກົຏ

ຄຳວ່າ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຄື ຫມູ່ບ້ານນຶ່ງກຳຫນົດຊົ່ວໄກ່ບິນຕົກ ພິກຂຸຕ້ອງອາບັຕິປາຈິຕຕີຍ໌ທຸກໆບໍຣິເວນຫມູ່ບ້ານ ໃນປ່າທີ່ບໍ່ມີຫມູ່ບ້ານ ພິກຂຸຕ້ອງອາບັຕິປາຈິຕຕີຍ໌ທຸກໆຣະຍະເຄິ່ງໂຍຊນ໌

ບົທພາຊນີຍ໌

[໔໑໐] ກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ພິກຂຸສຳຄັນວ່າເປັນກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ພິກຂຸບໍ່ແນ່ໃຈ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິທຸກກົຏ

ກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ພິກຂຸສຳຄັນວ່າບໍ່ແມ່ນກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ບໍ່ຕ້ອງອາບັຕິ

ພິກສຸຊັກຊວນ ຄົນທັງຫລາຍບໍ່ໄດ້ຊັກຊວນ ພິກສຸຕ້ອງອາບັຕິທຸກກົດ
ບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸສຳຄັນວ່າກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ຕ້ອງອາບັຕິທຸກກົດ
ບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸສຳຄັນວ່າບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໑໑] ໑. ພິກສຸຍ່າງທາງໂດຍບໍ່ໄດ້ຊັກຊວນ

໒. ຄົນທັງຫລາຍຊັກຊວນ ແຕ່ພິກສຸບໍ່ໄດ້ຊັກຊວນ

໓. ພິກສຸໄປຜິດເວລານັດໝາຍ

໔. ພິກສຸຜູ້ຍ່າງທາງກັບພໍ່ຄ້າກວຽນຜູ້ເປັນໂຈຣໃນຄາວມີເຫຕຸຂັດຂ້ອງ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ເຖຍຍສັຕຖສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໗. ສັງວິທານສິກຂາບົທ ນິທານວັຕຖຸ

໗. ສັປປາຕກວັຄ

໗. ສັງວິທານສິກຂາບົທ

ວ່າດ້ວຍການຊັກຊວນຍ່າງທາງໄກຮ່ວມກັບມາຕຸຄາມ

ເຣື້ອງພິກສຸຮູບນຶ່ງ

[໔໑໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທທເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຮູບນຶ່ງຍ່າງທາງໄປກຸງສາວັຕຖີໃນແຄວ້ນໂກສົລ ຜ່ານ ທາງປະຕູໝູ່ບ້ານແຫ່ງນຶ່ງ ຍິງຄົນນຶ່ງຜິດຖຽງກັບສາມີ ອອກຈາກໝູ່ບ້ານພົບພິກສຸນັ້ນແລ້ວໄດ້ ກ່າວດັ່ງນີ້ວ່າ "ພຣະຄຸຓເຈົ້າຜູ້ຈະເຣີນຈະໄປໃສ" ພິກສຸນັ້ນຕອບວ່າ "ນ້ອງຍິງ ອາຕມາຈະໄປກຸງສາ

ວັຕຖີ” ຍິງນັ້ນກ່າວວ່າ “ຂະນ້ອຍຂໍຍ່າງທາງໄປກັບພຣະຄຸດາເຈົ້າດ້ວຍ” ພິກຂຸນັ້ນກ່າວວ່າ “ໄປເຖີດ ນ້ອງຍິງ” ຄັ້ງນັ້ນ ສາມີຂອງຍິງນັ້ນອອກຈາກບ້ານແລ້ວຖາມພວກຊາວບ້ານວ່າ “ເຈົ້ານາຍ ພວກທ່ານ ເຫັນຍິງຮູບຮ່າງຢ່າງນີ້ແດ່ບໍ່” ພວກຊາວບ້ານຕອບວ່າ “ນາຍ ຍິງຮູບຮ່າງຢ່າງນັ້ນຍ່າງທາງໄປກັບ ບັພຊິຕ” ລຳດັບນັ້ນ ຊາຍຄົນນັ້ນໄດ້ຕິດຕາມໄປຈັບພິກຂຸນັ້ນໄດ້ທຸບຕີແລ້ວປ່ອຍໄປ ຄັ້ງນັ້ນ ພິກຂຸ ນັ້ນນັ່ງຈົ່ມຢູ່ທີ່ເຫງົ້າຕົ້ນໄມ້ແຫ່ງນຶ່ງ ເທື່ອນັ້ນ ຍິງນັ້ນໄດ້ກ່າວກັບສາມີດັ່ງນີ້ວ່າ “ນາຍ ພິກຂຸນັ້ນບໍ່ ໄດ້ພາຂະນ້ອຍໄປ ຂະນ້ອຍເອງເປັນຝ່າຍໄປກັບພິກຂຸນັ້ນ ພິກຂຸນັ້ນບໍ່ແມ່ນຕົວກາຣ ທ່ານຈົ່ງໄປຂໍ ຂມາພິກຂຸນັ້ນ” ຄັ້ງນັ້ນ ຊາຍຄົນນັ້ນໄດ້ໄປຂໍຂມາພິກຂຸນັ້ນ ຄັນພິກຂຸນັ້ນໄປເຖິງກຸງສາວັຕຖີແລ້ວຈຶ່ງ ເລົ່າເຣື່ອງນັ້ນໃຫ້ພິກຂຸທັງຫລາຍຊາບ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈົ່ງໃດພິກຂຸຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມລະ” ຄັນພິກຂຸທັງ ຫລາຍຕຳໜິພິກຂຸນັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງ ຊາບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໗. ສັງວິລານສິກຂາບົທ ສິກຂາບົທວິກັງຄ໌

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກຂຸ ນັ້ນວ່າ “ພິກຂຸ ຊາບວ່າ ທ່ານຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມແມ່ນແທ້ບໍ” ພິກຂຸນັ້ນ ທູລຮັບວ່າ “ແມ່ນແທ້ພຣະພຸທຂເຈົ້າຂ້າ” ພຣະຜູ້ມີພຣະກາຄພຸທຂເຈົ້າຊົງຕຳໜິວ່າ “ຯລຯ ໂມຄ ບຸຣຸຫ ຈົ່ງໃດທ່ານຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມລະ ໂມຄບຸຣຸຫ ກາຣກະທຳຢ່າງ ນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້”

ພຣະບັນຍັດ

[໔໑໖] ກໍ ພິກຂຸໃດຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມ ໂດຍທີ່ສຸດແມ່ນຊົ່ວບໍຣິເວນ ໝູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງກິກຂຸຮູບນຶ່ງ ຈົບ

ສິກຂາບົທວິກັງຄ໌

[໔໑໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸກາສິຕ ທຸພກາສິຕ ຄຳຫຍາບແລະຄຳສຸກາພ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ຊັກຊວນກັນ ຄື ຊັກຊວນວ່າ "ພວກເຮົາໄປກັນເຖີດ ນ້ອງຍິງ ພວກເຮົາໄປກັນເຖີດ ພຣະຄຸຕເຈົ້າ ໄປກັນເຖີດ ພຣະຄຸຕເຈົ້າ ພວກເຮົາໄປກັນເຖີດ ນ້ອງຍິງ ພວກເຮົາຈະໄປວັນນີ້ ມື້ອື່ນນີ້ ຫລືມື້ຮືນີ້" ຕ້ອງອາບັຕິທຸກກຏ

ຄຳວ່າ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຄື ຫມູ່ບ້ານນຶ່ງກຳຫນົດຊົ່ວໄກ່ບິນຕກ ກິກຂຸຕ້ອງອາບັຕິປາຈິຕຕີຍ໌ທຸກໆບໍຣິເວນຫມູ່ບ້ານ ໃນປ່າທີ່ບໍ່ມີຫມູ່ບ້ານ ກິກຂຸຕ້ອງອາບັຕິປາຈິຕຕີຍ໌ທຸກໆຣະຍະເຄິ່ງໂຍຊນ໌

ບົທກາຊນີຍ໌

ຕິກປາຈິຕຕີຍ໌

[໔໑໕] ມາຕຸຄາມ ກິກຂຸສຳຄັນວ່າເປັນມາຕຸຄາມ ຊັກຊວນກັນຍ່າງທາງໄກຮ່ວມກັນ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ມາຕຸຄາມ ກິກຂຸບໍ່ແນ່ໃຈ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ມາຕຸຄາມ ກິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຏ

ກິກຂຸຊັກຊວນ ມາຕຸຄາມບໍ່ໄດ້ຊັກຊວນ ກິກຂຸຕ້ອງອາບັຕິທຸກກຏ

ກິກຂຸຊັກຊວນກັນຍ່າງທາງໄກຮ່ວມກັນກັບນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານມີ

ກາຍເປັນມນຸษຍ໌ຜູ້ຍິງ ໂດຍທີ່ສຸດແມ່ນຊື່ອບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິທຸກກຕ
ບໍ່ແມ່ນມາຕຸຄາມ ກິກຊຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກຕ
ບໍ່ແມ່ນມາຕຸຄາມ ກິກຊຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ບໍ່ແມ່ນມາຕຸຄາມ ກິກຊຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໗. ສັງວິດານສິກຂາບ ອນາ ປັຕຕິວາຣ

ອນາປັຕຕິວາຣ

ກິກຊຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໑໖] ໑. ກິກຊຸຍ່າງທາງໂດຍບໍ່ໄດ້ຊັກຊວນ

໒. ມາຕຸຄາມຊັກຊວນ ແຕ່ກິກຊຸບໍ່ໄດ້ຊັກຊວນ

໓. ກິກຊຸໄປຜິດເວລານັດຫມາຍ

໔. ກິກຊຸຜູ້ຍ່າງທາງກັບມາຕຸຄາມໃນຄາວມີເຫຕຸຂັດຂ້ອງ

໕. ກິກຊຸວິກົລຈິຕ

໖. ກິກຊຸຕົ້ນບັນຍັດ

ສັງວິດານສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໗. ສັປປາຕກວັຄ ໘. ອຣິຕຖສິກຂາບົທ ນິທານວັຕຖຸ

໗. ສັປປາຕກວັຄ

໘. ອຣິຕຖສິກຂາບົທ

ວ່າດ້ວຍພຣະອຣິຕຖະກ່າວຕູ່ພຣະຜູ້ມີພຣະກາຄ

ເລື້ອງພຣະອຣິຍຖະ

[໔໑໗] ໑ສມັຍນັ້ນ ພຣະຜູ້ມີພຣະພາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖ ບິຕາທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ທິຍຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ພຣະອຣິຍຖະ ຜູ້ມີບັນພະ ບຸຣຸຫເປັນພານຂ້ານິກແຮ້ງ໔ ວ່າ "ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະພາຄ ຊົງສະແດງແລ້ວຈິນເມື່ອ ວ່າລັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນລັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພ ໄດ້ຈິງແທ້"໕ ພິກຫຸຫລາຍຮູບໄດ້ຊາບຂ່າວວ່າ "ທິຍຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ພຣະອຣິຍຖະຜູ້ມີ ບັນພະບຸຣຸຫເປັນພານຂ້ານິກແຮ້ງວ່າ ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈິນວ່າ ເມື່ອວ່າລັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນລັມກໍ່ອັນຕຣາຍ ກໍບໍ່ສາມາດ

ເຊີງອັນຖະ :

໑ ວິ. ຈູຣ. ໖/໖໕/໗໔-໔, ມ. ມູ. ໑໔/໒໓໔/໑໙໖-໑໙໙

໔ ຄທຸລາລີປຸພູໂພ ຜູ້ມີບັນພະບຸຣຸຫເປັນພານຂ້ານິກແຮ້ງ ອັນຖະກຖາອະທິບາຍວ່າ ຄທິເຣ ພາລຍີສູຕິ ຄທຸລພາລີໂນ, ຄທຸລພາລີໂນ ປຸພູພປຸຣິສາ ອສຸສາຕິ ຄທຸລພາລີປຸພູໂພ. . . . ຄິຊຸໝພາຍກ ກຸລປຸປສູຕສຸສ ພານຂ້ານິກແຮ້ງເປັນບັນພະບຸຣຸຫຂອງເຂົາ ເຫຕຸນັ້ນ ເຂົາຈຶ່ງຊື່ວ່າເປັນຜູ້ມີບັນພະ ບຸຣຸຫເປັນພານຂ້ານິກແຮ້ງ ຫມາຍຄວາມວ່າ ເປັນຄົນເກີດໃນຕະກູນພານຂ້ານິກແຮ້ງ (ວິ. ອ. ໔/ ໔໑໗/໔໑໗)

໕ ພຣະອຣິຍຖະ ຮູບນີ້ເປັນພຫູສູຕ ເປັນລັມກຖິກ ຮູ້ແຕ່ອັນຕຣາຍິກລັມບາງສ່ວນ ເພາະເຫຕຸທີ່ ທ່ານບໍ່ສລາດເລື້ອງວິນັຍ ຈຶ່ງບໍ່ຮູ້ເລື້ອງອັນຕຣາຍິກລັມແຫ່ງການລ່ວງລະເມີດພຣະວິນັຍບັນຍັດ ດັ່ງ ນັ້ນ ຄັ້ງທີ່ທ່ານຢູ່ໃນທີ່ຫລີກຫລີບຈຶ່ງໄດ້ເກີດຄວາມຄິດຢ່າງນີ້ວ່າ ພວກຄຣືຫັສຖ໌ທີ່ຍຸ່ງກ່ຽວຢູ່ກັບ ການຄຸຓ ທີ່ເປັນໂສດາບັນກໍມີ ເປັນສກທາຄາມີກໍມີ ເປັນອນາຄາມີກໍມີ ສ່ວນພວກພິກຫຸກໍຍັງ ເຫັນ ຮູບທີ່ຈະເພິງຮູ້ດ້ວຍຈັກຫຸ ຯລຯ ຍັງຖືກຕ້ອງສິ່ງສັມຜັສທີ່ຈະເພິງຮູ້ດ້ວຍກາຍ ຍັງໃຊ້ສອຍຜ້າປູຜ້າ ຫົ່ມອ່ອນນຸ່ມ ສິ່ງນີ້ທັງຫມົດຖືວ່າຄວຣ ເປັນຫຍັງຮູບ ສຽງ ກິ່ນ ຣົສ ສັມຜັສຂອງຍິງຈະບໍ່ຄວຣ ສິ່ງເຫລົ່ານັ້ນຕ້ອງຄວຣແນ່ນອນ ທ່ານເກີດທິຍຖິບາປຂຶ້ນມາແລ້ວ ຂັດແຍ້ງກັບພຣະສັພພັຍຸຕຍາຕ ວ່າ "ເປັນຫຍັງພຣະຜູ້ມີພຣະຜູ້ມີພຣະພາຄຈຶ່ງບັນຍັດປກິນປາຣາຊິກຢ່າງກວດຂັນ ປຣະດຸຈກັ້ນມຫາ ສມຸທຣສະນັ້ນ ໃນຂໍ້ນີ້ບໍ່ມີໂທຫ" ຕັດຄວາມຫວັງຂອງເຫລົ່າພັພພບຸຄຄົລ ຄັດຄ້ານພຣະເວສາຣັຊ ຍາຕະ ໃສ່ຕໍ່ແລະຫມາມໃນອຣິຍມັຄ ປະຫາຣອາຕາຈັກຣຂອງພຣະຊິນເຈົ້າດ້ວຍກ່າວວ່າ "ເມຖຸນລັມ ບໍ່ມີໂທຫ" (ວິ. ອ. ໔/໔໑໗/໔໑໗-໔໑໙, ມ. ມູ. ອ. ໔/໒໓໔/໙-໑໐)

ກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງບໍ່" ຄັນແລ້ວພິກຂຸເຫລົ່ານັ້ນຈຶ່ງເຂົ້າໄປຫາພຣະອຣິຍຖະຜູ້ມີບັນພະບຸຣຸຫເປັນພານຂ້ານົກແຮ້ງເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບພຣະອຣິຍຖະຜູ້ມີບຣຣພບຸຣຸຫເປັນພານຂ້ານົກແຮ້ງດັ່ງນີ້ວ່າ "ທ່ານອຣິຍຖະ ໄດ້ຊາບວ່າ ທິຍຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ແມ່ນແທ້ບໍ" ພຣະອຣິຍຖະຜູ້ມີບັນພະບຸຣຸຫເປັນພານຂ້ານົກແຮ້ງກ່າວວ່າ "ເຫມືອນຈະເປັນຢ່າງນັ້ນທ່ານທັງຫລາຍ ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພິກຂຸທັງຫລາຍໄດ້ກ່າວວ່າ "ທ່ານອຣິຍຖະ ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານອຣິຍຖະ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆ ແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ ແມ່ນແທ້ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍມີຄວາມຍິນດີນ້ອຍ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທຫຢ່າງຍິ່ງ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຮ່າງໂຄງກະດູກ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທຫຢ່າງຍິ່ງ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຊິ້ນເນື້ອ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຄວາມຝັນ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຂອງທີ່ຢືມມາ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຜົລໄມ້ຄາຕົ້ນ໑ ຯລຯ ພຣະຜູ້ມີພຣະ

ເຊີງອັນຖະ :

໑ ອົສຣຸກຸຂຜລູປມາ ສພຸພຽຄປຈຸຈຽຄປລິກິຊນຜຸເນ ປຽບເຫມືອນຜົລໄມ້ມີພິຫ ເພາະບັ່ນທອນຮ່າງກາຍ (ມ. ມູ. ອ. ໒/໕໓໔/໑໐) ອີກນັຍນຶ່ງ ຄົນທີ່ຕ້ອງການຜົລໄມ້ ທຽວແສວງຫາຜົລໄມ້ເມື່ອພົບຕົ້ນໄມ້ຜົລດົກຈຶ່ງປີນຂຶ້ນໄປເກັບກິນ ເກັບໃສ່ຫໍ່ ອີກຄົນນຶ່ງກໍຕ້ອງການຜົລໄມ້ເຊັ່ນກັນທຽວແສວງຫາ ພົບເຫັນຕົ້ນໄມ້ຜົລດົກຕົ້ນດຽວກັນນັ້ນ ແຕ່ແທນທີ່ຈະປີນຂຶ້ນໄປເກັບຜົລໄມ້ກິນ ກັບເອົາຂວານຕັດຕົ້ນໄມ້ຜົລດົກນັ້ນໃນຂຕະທີ່ຄົນທຳອິດຍັງຢູ່ເທິງຕົ້ນໄມ້ ອັນຕຣາຍຈຶ່ງເກີດຂຶ້ນແກ່

ເຂົາ (ດູ ມ. ມ. ໑໓/໔໗/໖໑)

ກາຄຕຣັສວ່າກາມທັງຫລາຍປຽບເຫມືອນຂຽງຫັ່ນຊີ້ນ ຯລຯ ພຣະຜູ້ມີພຣະກາຄຕຣັສວ່າກາມທັງຫລາຍປຽບເຫມືອນຫອກຫລາວ ຯລຯ ພຣະຜູ້ມີພຣະກາຄຕຣັສວ່າກາມທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ" ພຣະອຣິຕຖະຖືກກິກສຸເຫລົ່ານັ້ນຕັກເຕືອນແຕ່ກໍຍັງກ່າວດ້ວຍຄວາມຍຶດຫມັ້ນຖືຫມັ້ນທິຕຖິບາປນັ້ນຢູ່ຢ່າງນັ້ນວ່າ "ເຫມືອນຈະເປັນຢ່າງນັ້ນ ທ່ານທັງຫລາຍ ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ກິກສຸເຫລົ່ານັ້ນບໍ່ອາຈຈະປົດເປື້ອງພຣະອຣິຕຖະຜູ້ມີບັນພະບຸຣຸສເປັນພານຂ້ານົກແຮ້ງຈາກທິຕຖິບາປນັ້ນໄດ້ ຄັນແລ້ວກິກສຸທັງຫລາຍຈຶ່ງພາກັນເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະກາຄຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະອຣິຕຖະວ່າ "ອຣິຕຖະ ຊາບວ່າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄ ຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ຈິງຫລື" ພຣະອຣິຕຖະທູລຣັບວ່າ "ເຫມືອນຈະເປັນຢ່າງນັ້ນພຣະພຸທທເຈົ້າຂ້າ ຂ້າພຣະອົງຄ໌ຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພຣະຜູ້ມີພຣະກາຄຊົງຕຳຫນິວ່າ "ໂມຄບຸຣຸສ ທ່ານຮູ້ທົ່ວເຖິງທັມທີ່ເຮົາສະແດງແລ້ວໄດ້ຢ່າງໃດ ໂມຄບຸຣຸສ ເຮົາກ່າວທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະກາຣຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແນ່ນແທ້ ບໍ່ແນ່ນບໍ ເຮົາກ່າວວ່າກາມທັງຫລາຍມີຄວາມຍິນດີນ້ອຍ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຮ່າງໂຄງກະດູກ ມີທຸກຂ໌ມາກມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຊີ້ນເນື້ອ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄວາມຝັນ ຯລຯ ເຮົາກ່າວ

ວ່າການທັງຫລາຍປຽບເຫມືອນຂອງທີ່ຍືມມາ ຯລຯ ເຮົາກ່າວວ່າການທັງຫລາຍປຽບເຫມືອນຜົລໄມ້ ຄາຕົ້ນ ຯລຯ ເຮົາກ່າວວ່າການທັງຫລາຍປຽບເຫມືອນຂຽງທັ່ນຊີ້ນ ຯລຯ ເຮົາກ່າວວ່າການທັງຫລາຍປຽບເຫມືອນຫອກຫລາວ ຯລຯ ເຮົາກ່າວວ່າການທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກໃນການນີ້ມີໂທສຢ່າງຍິ່ງ ໂມຄບຸຣຸສ ກໍເມື່ອເປັນເຊັ່ນນີ້ ທ່ານຊື່ວ່າກ່າວຕູ່ເຮົາດ້ວຍທິຕຖິທີ່ຍຶດຖືໄວ້ຜິດ ຊື່ວ່າທຳລາຍຕົນເອງແລະຊື່ວ່າປະສົບສິ່ງບໍ່ແມ່ນບຸນເປັນອັນມາກ ໂມຄບຸຣຸສ ຂໍ້ນັ້ນຈັກເປັນໄປເພື່ອຄວາມບໍ່ເກື້ອກູລ ເພື່ອຄວາມທຸກຂ໌ແກ່ທ່ານຕລອດກາລນານ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໑໗] ກໍ ພິກຂຸໃດກ່າວຢ່າງນີ້ວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພິກຂຸນັ້ນອັນພິກຂຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະກາຄ ການກ່າວຕູ່ພຣະຜູ້ມີພຣະກາຄບໍ່ດີເລີຍ ເພາະພຣະຜູ້ມີພຣະກາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານ ພຣະຜູ້ມີພຣະກາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງ" ພິກຂຸນັ້ນອັນພິກຂຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍຍັງຢືນຢັນຢູ່ຢ່າງນັ້ນ ພິກຂຸນັ້ນອັນພິກຂຸທັງຫລາຍເພິງສວດສມນຸກາສນ໌ຈົນຄົບ ໓ ຄັ້ງ ເພື່ອໃຫ້ສລະທິຕຖິນັ້ນ ຖ້າທ່ານກຳລັງຖືກສວດສມນຸກາສນ໌ກວ່າຈະຄົບ ໓ ຄັ້ງ ສລະທິຕຖິນັ້ນໄດ້ ນັ້ນເປັນການດີ ຖ້າບໍ່ສລະ ຕ້ອງອາບັຕິປາຈິຕຕິຍ໌

ເຣື່ອງພຣະອຣິຕຖະ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໗. ສັປປາຕກວັຄ ໗. ອຣິຕຖສິກຂາບົທ ສິກຂາບົທວິກັງຄ໌

ສິກຂາບົທວິກັງຄ໌

[໔໑໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ຄຳວ່າ ກ່າວຢ່າງນີ້ ຄວາມວ່າ ພິກຂຸກ່າວວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງ ແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້"

ຄຳວ່າ ພິກຂຸນັ້ນ ໄດ້ແກ່ ພິກຂຸຜູ້ກ່າວຢ່າງນັ້ນ

ຄຳວ່າ ອັນພິກຂຸທັງຫລາຍ ໄດ້ແກ່ ອັນພິກຂຸເຫລົ່າອື່ນ

ພວກພິກຂຸທີ່ໄດ້ເຫັນ ໄດ້ຍິນ ເພິງວ່າກ່າວຕັກເຕືອນພິກຂຸນັ້ນວ່າ "ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆ ແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງ" ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າພິກຂຸນັ້ນສລະໄດ້ ນັ້ນເປັນການດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກດ

ພິກຂຸທັງຫລາຍຊາບເຣື່ອງແລ້ວບໍ່ຕັກເຕືອນ ຕ້ອງອາບັຕິທຸກກດ

ພິກຂຸທັງຫລາຍເພິງນຳຕົວພິກຂຸນັ້ນມາທ່າມກາງສົງຄ໌ແລ້ວວ່າກ່າວຕັກເຕືອນວ່າ "ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ" ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າພິກຂຸນັ້ນສລະໄດ້ ນັ້ນເປັນການດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກດ ພິກຂຸທັງຫລາຍເພິງສວດສມນຸພາສນ໌ພິກຂຸນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓຑ໌] ໗. ສັປປາຓກວັຄ ໗. ອຣິຍາສິກຂາບົທ ສິກຂາບົທວິພັງຄ໌

ວິທີສວດສມນຸກາສນ໌ແລະກັມວາຈາສວດສມນຸກາສນ໌

ກິກຫຸທັງຫລາຍເພິງສວດສມນຸກາສນ໌ກິກຫຸນັ້ນຢ່າງນີ້ ຄື ກິກຫຸຜູ້ສລາດສາມາດເພິງປະກາດໃຫ້ສົງຊ໌ຊາບດ້ວຍຍັດຕິຈຕຸດຖກັມວາຈາວ່າ

[໔໔໐] "ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ທິຍກິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ກິກຫຸຊື່ນີ້ວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວ ຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ກິກຫຸນັ້ນບໍ່ສລະທິຍກິນັ້ນ ຖ້າສົງຊ໌ພ້ອມກັນແລ້ວກໍເພິງສວດສມນຸກາສນ໌ກິກຫຸຊື່ນີ້ເພື່ອໃຫ້ສລະທິຍກິນັ້ນ ນີ້ເປັນຍັດຕິ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ທິຍກິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ກິກຫຸຊື່ນີ້ວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ກິກຫຸນັ້ນບໍ່ສລະທິຍກິນັ້ນ ສົງຊ໌ສວດສມນຸກາສນ໌ກິກຫຸຊື່ນີ້ເພື່ອໃຫ້ສລະທິຍກິນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸກາສນ໌ກິກຫຸຊື່ນີ້ເພື່ອໃຫ້ສລະທິຍກິນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເຖິງທັກທ້ວງ ແມ່ນຄັ້ງທີ ໒ ຂ້າພະເຈົ້າກໍຂໍກ່າວຄວາມນີ້ ຯລຯ ແມ່ນຄັ້ງທີ ໓ ຂ້າພະເຈົ້າກໍຂໍກ່າວຄວາມນີ້ວ່າ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ທິຍກິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ກິກຫຸຊື່ນີ້ຢ່າງນີ້ວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ກິກຫຸນັ້ນບໍ່ສລະທິຍກິນັ້ນ ສົງຊ໌ສວດສມນຸກາສນ໌ກິກຫຸຊື່ນີ້ເພື່ອໃຫ້ສລະທິຍກິນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸກາສນ໌ກິກຫຸຊື່ນີ້ເພື່ອໃຫ້ສລະທິຍກິນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ກິກຫຸຊື່ນີ້ ສົງຊ໌ສວດສມນຸກາສນ໌ແລ້ວເພື່ອໃຫ້ສລະທິຍກິນັ້ນ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້"

ຈົບຍັດຕິ ຕ້ອງອາບັຕິທຸກກຏ ຈົບກັມວາຈາ ໒ ຄັ້ງ ຕ້ອງອາບັຕິທຸກກຏ ໒ ຕົວ
ຈົບກັມວາຈາຄັ້ງສຸດທ້າຍ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໗. ສັປປາຕກວັຄ ໘. ອຣິຍກສິກຂາບົທ ອນາບັຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໒໑] ກັມທີ່ທຳຖືກຕ້ອງ ກິກษຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌
ກັມທີ່ທຳຖືກຕ້ອງ ກິກษຸບໍ່ແນ່ໃຈ ບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌
ກັມທີ່ທຳຖືກຕ້ອງ ກິກษຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ກິກษຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ກິກษຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ກິກษຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ກິກษຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໒໒] ໑. ກິກษຸຍັງບໍ່ຖືກສວດສມນຸກາສນ໌
໒. ກິກษຸຜູ້ສລະ
໓. ກິກษຸວິກລຈິຕ
໔. ກິກษຸຕົ້ນບັນຍັດ

ອຣິຍກສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຓฑ໌] ໗. ສັປປາຓກວັຄ ໘. ອຸກຂິຕຕສັມໂກຄ ສິກຂາບົທ ນິທານວັຕຖຸ

໗. ສັປປາຓກວັຄ

໘. ອຸກຂິຕຕສັມໂກຄສິກຂາບົທ

ວ່າດ້ວຍການຄົບຫາກິກษຸທີ່ຖືກສົງฆ໌ລົງອຸກເຂປນີຍກັມ

ເຣື້ອງພຣະຈັພພັຄຄີຍ໌

[໔໒໖] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກກິກຫຸຈັພພັຄຄີຍ໌ຮູ້ຢູ່ກໍຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ ກັບກິກຫຸຊື່ອຣິຜກະຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ໑ ຍັງບໍ່ຍອມສລະທິຜກີນັ້ນ໔ ບັນດາກິກຫຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໄພນທະນາວ່າ "ຈັ່ງໃດພວກກິກຫຸຈັພພັຄຄີຍ໌ຮູ້ຢູ່ຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ກັບກິກຫຸຊື່ອຣິຜກະ ຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ ຍັງບໍ່ຍອມສລະທິຜກີນັ້ນລະ" ຄັນກິກຫຸທັງຫລາຍຕຳຫນິພວກກິກຫຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຫຸຈັພພັຄຄີຍ໌ວ່າ "ກິກຫຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ກໍຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ກັບກິກຫຸອຣິຜກະຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ ຍັງບໍ່ຍອມສລະທິຜກີນັ້ນ ແມ່ນແທ້ບໍ" ພວກກິກຫຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ໂມຄບຸຣຸຜທັງຫລາຍ

ເຊີງອັນຖະ :

໑ ຄຳວ່າ "ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ" ຫມາຍເຖິງພຣະອຣິຜກະຖືກສົງຄ໌ລົງໂທຜໂດຍການຍົກອອກຈາກຫມູ່ ຈາກຊຸມນຸມສົງຄ໌ ທີ່ຮຽກວ່າ "ລົງອຸກເຂປນີຍກັມ" ສົງຄ໌ຍັງບໍ່ໄດ້ຍກເລີກໂທຜນັ້ນ (ວິ. ອ. ໒/໔໒໔-໕/໔໒໐)

໔ ພຣະອຣິຜກະກ່າວຕູ່ພຣະລັມວິນັຍໃນສິກຂາບົທທີ ໗ ສັປປາຕກວັຄ ຂໍ້ ໔໑໗ ຫນ້າ ໕໔໕

ຈັ່ງໃດພວກທ່ານຮູ້ຢູ່ກໍຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ກັບກິກຫຸອຣິຜກະຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ ຍັງບໍ່ຍອມສລະທິຜກີນັ້ນລະ ໂມຄບຸຣຸຜທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຫຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໘໔] ກໍ ພິກຂຸໃດຮູ້ຢູ່ກໍຍັງຄົບຫາ ຢູ່ຮ່ວມ ຫລືນອນຮ່ວມກັບພິກຂຸຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ ຍັງບໍ່ຍອມສລະທິຜຖິນັ້ນ ຕ້ອງອາບັຕິປາຈິຕຕິຍ໌

ເຣື້ອງພຣະອັພພັຄຄິຍ໌ ຈົບ

ສິກຂາບົທວິກັງຄ໌

[໔໘໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ພິກຂຸຮູ້ເອງ ຄົນເຫລົ່າອື່ນບອກພິກຂຸນັ້ນ ຫລືພິກຂຸຮູບທີ່ກ່າວຕູ່ນັ້ນບອກ

ຄຳວ່າ ຜູ້ກ່າວຕູ່ຢ່າງນັ້ນ ຄື ພິກຂຸຜູ້ກ່າວຢ່າງນີ້ວ່າ “ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອລັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນລັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້”

ທີ່ຊື່ວ່າ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳລັມອັນສົມຄວຣ ຄື ພິກຂຸນັ້ນຖືກສົງຄ໌ລົງອຸກເຂປນີຍກັມແລ້ວ ແຕ່ສົງຄ໌ຍັງບໍ່ໄດ້ຮຽກເຂົ້າໝູ່

ຄຳວ່າ ກັບ. . . ຍັງບໍ່ຍອມສລະທິຜຖິນັ້ນ ຄື ຮ່ວມກັບຜູ້ທີ່ຍັງບໍ່ຍອມສລະຄວາມເຫັນນັ້ນ

ຄຳວ່າ ຄົບຫາ ອະທິບາຍວ່າ ທີ່ຮຽກວ່າຄົບຫາ ໄດ້ແກ່ ກາຣຄົບຫາ ໒ ຢ່າງຄື (໑) ຄົບຫາທາງອາມິສ (໒) ຄົບຫາທາງລັມ

ທີ່ຊື່ວ່າ ຄົບຫາທາງອາມິສ ຄື ພິກຂຸໃຫ້ອາມິສຫລືຮັບອາມິສ ຕ້ອງອາບັຕິປາຈິຕຕິຍ໌

ທີ່ຊື່ວ່າ ຄົບຫາທາງລັມ ຄື ພິກຂຸຍກລັມຂຶ້ນສະແດງຫລືໃຫ້ຍົກລັມຂຶ້ນສະແດງ

ພິກຂຸຍົກລັມຂຶ້ນສະແດງຫລືໃຫ້ຍົກລັມຂຶ້ນສະແດງເປັນບົທ ຕ້ອງອາບັຕິປາຈິຕຕິຍ໌ ທຸກໆບົທ

ພິກຂຸຍົກລັມຂຶ້ນສະແດງຫລືໃຫ້ຍົກລັມຂຶ້ນສະແດງເປັນອັກສອຣ ຕ້ອງອາບັຕິປາຈິຕຕິຍ໌ທຸກໆອັກສອນ

ຄຳວ່າ ຢູ່ຮ່ວມ ຄວາມວ່າ ພິກຂຸທຳອຸໂບສົຖ ປວາຣຕາ ຫລືສັງຄກັມຮ່ວມກັບພິກຂຸຜູ້ຖືກສົງຄ໌ອຸກເຂປນີຍກັມ ຕ້ອງອາບັຕິປາຈິຕຕິຍ໌

ຄຳວ່າ ນອນຮ່ວມກັບ ອະທິບາຍວ່າ ໃນທີ່ທີ່ມີຫລັງຄາດຽວກັນ ເມື່ອພິກຂຸຜູ້ຖືກສົງຄ໌ລົງອຸກເຂປນີຍກັມນອນ ພິກຂຸກໍນອນ ຕ້ອງອາບັຕິປາຈິຕຕິຍ໌ ເມື່ອພິກຂຸນອນ ພິກຂຸຜູ້ຖືກສົງຄ໌ລົງອຸກ

ເຂປນີຍກັມກໍນອນ ກີກຂຸທີ່ນອນດ້ວຍ ຕ້ອງອາບັຕິປາຈິຕຕີຍ໌ ຫລືນອນທັງ ໔ ຮູບ ກໍຕ້ອງອາບັຕິປາຈິຕຕີຍ໌ ກີກຂຸລຸກຂຶ້ນແລ້ວກັບນອນອີກ ຕ້ອງອາບັຕິປາຈິຕຕີຍ໌

ບົທກາຊນີຍ໌

[໔໔໖] ກີກຂຸຖືກສົງຄ໌ລົງອຸກເຂປນີຍກັມ ກີກຂຸສໍາຄັນວ່າເປັນກີກຂຸຖືກສົງຄ໌ລົງອຸກເຂປນີຍກັມ ຄົບຫາ ຢູ່ຮ່ວມ ຫລືນອນຮ່ວມ ຕ້ອງອາບັຕິປາຈິຕຕີຍ໌

ກີກຂຸຖືກສົງຄ໌ລົງອຸກເຂປນີຍກັມ ກີກຂຸບໍ່ແນ່ໃຈ ຄົບຫາ ຢູ່ຮ່ວມ ຫລືນອນຮ່ວມ ຕ້ອງອາບັຕິທຸກກຍ

ກີກຂຸຖືກສົງຄ໌ລົງອຸກເຂປນີຍກັມ ກີກຂຸສໍາຄັນວ່າບໍ່ແມ່ນກີກຂຸທີ່ຖືກສົງຄ໌ລົງອຸກເຂປນີຍກັມ ຄົບຫາ ຢູ່ຮ່ວມ ຫລືນອນຮ່ວມ ບໍ່ຕ້ອງອາບັຕິ

ກີກຂຸບໍ່ໄດ້ຖືກສົງຄ໌ລົງອຸກເຂປນີຍກັມ ກີກຂຸສໍາຄັນວ່າເປັນກີກຂຸທີ່ຖືກສົງຄ໌ລົງອຸກເຂປນີຍກັມ ຕ້ອງອາບັຕິທຸກກຍ

ກີກຂຸບໍ່ໄດ້ຖືກສົງຄ໌ລົງອຸກເຂປນີຍກັມ ກີກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຍ

ກີກຂຸບໍ່ໄດ້ຖືກສົງຄ໌ລົງອຸກເຂປນີຍກັມ ກີກຂຸສໍາຄັນວ່າບໍ່ແມ່ນກີກຂຸທີ່ຖືກສົງຄ໌ລົງອຸກເຂປນີຍກັມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ກີກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໗] ໑. ກີກຂຸຮູ້ວ່າ ກີກຂຸນັ້ນບໍ່ໄດ້ຖືກສົງຄ໌ລົງອຸກເຂປນີຍກັມ

໒. ກີກຂຸຮູ້ວ່າ "ກີກຂຸນັ້ນຖືກສົງຄ໌ລົງອຸກເຂປນີຍກັມ ແຕ່ສົງຄ໌ຮຽກເຂົ້າຫມູ່ແລ້ວ"

໓. ກີກຂຸຮູ້ວ່າ "ກີກຂຸນັ້ນ ຍອມສລະທິຍຖິນັ້ນແລ້ວ"

໔. ກີກຂຸວິກົລຈິຕ

໕. ກີກຂຸຕົ້ນບັນຍັດ

ອຸກຂິຕຕສັມໂກຄສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໗. ສັປປາຕກວັຄ ໑໐. ກັຕຍກສິກຂາບົທ ນິທານວັຕຖຸ

໗. ສັປປາຕກວັຄ

໑໐. ກັດຖກສິກຂາບົທ

ວ່າດ້ວຍສມຕຸທເທສຊື່ກັຕຖກະຖືກສົງຜົນາສນະ

ເຣື້ອງສມຕຸທເທສຊື່ກັຕຖກະ

[໔໑໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທິຍກິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ສມຕຸທເທສຊື່ກັຕຖກະວ່າ "ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອວ່າລັມຕາມທີ່ພຣະຜູ້ມີພຣະກາຄ ຕຣັສວ່າເປັນລັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ກິກຂຸຫລາຍຮູບ ໄດ້ຊາບຂ່າວວ່າ "ທິຍກິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ສມຕຸທເທສຊື່ກັຕຖກະວ່າ ເຮົາຮູ້ທົ່ວເຖິງລັມທີ່ ພຣະຜູ້ມີພຣະກາຄຊົງສະແດງແລ້ວຈົນວ່າເມື່ອວ່າລັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນລັມກໍ່ ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ແທ້" ຄັນແລ້ວກິກຂຸເຫລົ່ານັ້ນຈຶ່ງເຂົ້າໄປ ຫາສມຕຸທເທສຊື່ກັຕຖກະເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບສມຕຸທເທສຊື່ກັຕຖກະດັ່ງນີ້ວ່າ "ກັຕຖກະ ໄດ້ຊາບວ່າ ທິຍກິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ 'ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະ ກາຄຊົງສະແດງແລ້ວຈົນວ່າ ເມື່ອວ່າລັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນລັມວ່າກໍ່ອັນຕຣາຍກໍ ຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ແມ່ນແທ້ບໍ"ສມຕຸທເທສຊື່ກັຕຖກະກ່າວວ່າ "ເຫມືອນຈະເປັນຢ່າງນັ້ນ ທ່ານຜູ້ຈະເຣີນທັງຫລາຍ ຜູ້ຂ້າຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະກາຄຊົງສະ ແດງແລ້ວ ຈົນວ່າເມື່ອວ່າລັມຕາມທີ່ພຣະຜູ້ມີພຣະກາຄຕຣັສວ່າເປັນລັມກໍ່ອັນຕຣາຍກໍຫາສາມາດກໍ່ ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ກິກຂຸທັງຫລາຍ ໄດ້ກ່າວວ່າ "ກັຕຖກະ ທ່ານຢ່າໄດ້ກ່າວຢ່າງ ນີ້ ຢ່າກ່າວຕູ່ພຣະຜູ້ມີພຣະກາຄ ການກ່າວຕູ່ພຣະຜູ້ມີພຣະກາຄບໍ່ດີເລີຍ ເພາະພຣະຜູ້ມີພຣະກາຄບໍ່ໄດ້ ຕຣັສຢ່າງນັ້ນ ກັຕຖກະ ພຣະຜູ້ມີພຣະກາຄຕຣັສລັມທີ່ກໍ່ອັນຕຣາຍວ່າເປັນລັມກໍ່ອັນຕຣາຍໄວ້ໂດຍປະ ການຕ່າງໆແລະລັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ ພຣະຜູ້ມີພຣະກາຄຕຣັສ ວ່າການທັງຫລາຍມີຄວາມຍິນດີນ້ອຍ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນການນີ້ມີໂທສຢ່າງຍິ່ງ ພຣະຜູ້ມີພຣະກາຄຕຣັສວ່າການທັງຫລາຍປຽບເຫມືອນຮ່າງໂຄງກະດູກ ຯລຯ ພຣະຜູ້ມີພຣະກາຄ ຕຣັສວ່າການທັງຫລາຍປຽບເຫມືອນຊິ້ນເນື້ອ ຯລຯ ພຣະຜູ້ມີພຣະກາຄຕຣັສວ່າການທັງຫລາຍປຽບ ເຫມືອນຄົບເພີງຫຍ້າ ຯລຯ ພຣະຜູ້ມີພຣະກາຄຕຣັສວ່າການທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ພຣະຜູ້ມີພຣະກາຄຕຣັສວ່າ ການທັງຫລາຍປຽບເຫມືອນຄວາມຝັນ ຯລຯ ພຣະຜູ້ມີພຣະກາຄ

ຕຣັສວ່າກາມທັງຫລາຍປຽບເຫມືອນຂອງທີ່ຍືມມາ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຜົລໄມ້ຄາຕົ້ນ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຂຽງຫັ່ນເນື້ອ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຫອກຫລາວ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ"

ສມຕຸຫເຫສຊື່ວ່າກັຕພກະຖືກກິກກຸເຫລົ່ານັ້ນຕັກເຕືອນ ແຕ່ກໍຍັງກ່າວດ້ວຍຄວາມຍຶດຫມັ້ນຖືຫມັ້ນທິຜຖິບາປນັ້ນຢູ່ຢ່າງນັ້ນວ່າ "ເຫມືອນຈະເປັນຢ່າງນັ້ນ ທ່ານທັງຫລາຍ ຜູ້ຂ້າຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນເມື່ອວ່າລັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນລັມກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ" ກິກກຸເຫລົ່ານັ້ນບໍ່ອາຈປົດເປື້ອງສມຕຸຫເຫສຊື່ກັຕພກະຈາກທິຜຖິບາປນັ້ນໄດ້ ຄັນແລ້ວກິກກຸທັງຫລາຍຈຶ່ງພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາຄຊົງຊາບ

ຊົງປະຊຸມສົງໝ໌ສັ່ງນາສນະກັຕພກສມຕຸຫເຫສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມສມຕຸຫເຫສຊື່ກັຕພກະວ່າ "ກັຕພກະ ຊາບວ່າ ທິຜຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າລັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນລັມກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແທ້ຈິງ ແມ່ນແທ້ບໍ" ສມຕຸຫເຫສຊື່ກັຕພກະທູລຮັບວ່າ "ເຫມືອນຈະເປັນຢ່າງນັ້ນ ພຣະພຸທລເຈົ້າຂ້າ ຂ້າພຣະອົງຄ໌ຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າລັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນລັມກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແທ້ຈິງ" ພຣະຜູ້ມີພຣະພາຄຕຣັສວ່າ "ໂມຆບຸຣຸຩ ທ່ານຮູ້ທົ່ວເຖິງລັມທີ່ເຮົາສະແດງແລ້ວໄດ້ຢ່າງໃດ ໂມຆບຸຣຸຩ ເຮົາກ່າວລັມທີ່ກໍ່ອັນຕຣາຍວ່າເປັນລັມກໍ່ອັນຕຣາຍ ໄວ້ໂດຍປະກາຣຕ່າງໆແລະລັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແມ່ນແທ້ ບໍ່ແມ່ນບໍ ເຮົາກ່າວວ່າກາມທັງຫລາຍມີຄວາມຍິນດີຫນ້ອຍ ມີທຸກຂ໌ຫລາຍ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຮ່າງໂຄງກະດູກ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຊິ້ນເນື້ອ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄວາມຝັນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບ

ເໝືອນຂອງທີ່ຢືມມາ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເໝືອນຜົລໄມ້ຄາຕົ້ນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເໝືອນຂຽງຫັ່ນຊີ້ນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເໝືອນຫອກຫລາວ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເໝືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກໃນກາມນີ້ມີໂທສຢ່າງຍິ່ງ ໂມຄບຸຣຸສ ກໍເມື່ອເປັນເຊັ່ນນີ້ ທ່ານຊື່ວ່າກ່າວຕູ່ເຮົາດ້ວຍທິຖຖິທີ່ຍຶດຖືໄວ້ຜິດ ຊື່ວ່າທຳລາຍຕົນເອງແລະຊື່ວ່າປະສົບສິ່ງບໍ່ແມ່ນບຸນເປັນອັນມາກ ໂມຄບຸຣຸສ ຂໍ້ນັ້ນຈັກເປັນໄປເພື່ອຄວາມບໍ່ເກື້ອກູລ ເພື່ອຄວາມທຸກຂ໌ແກ່ທ່ານຕລອດກາລນານ ໂມຄບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ" ຄັນຊົງຕຳໜິແລ້ວຈຶ່ງຊົງສະແດງລັມມີກຖາແລ້ວຮັບສັ່ງກັບກິກຂຸທັງຫລາຍວ່າ ກິກຂຸທັງຫລາຍ ຖ້າຢ່າງນັ້ນ ສົງຄ໌ຈົ່ງນາສນະ[໑] ສມຕຸທເທສຊື່ກັຕຄກະ ກິກຂຸທັງຫລາຍ ສົງຄ໌ເພິງນາສນະ ສມຕຸທເທສຊື່ກັຕຄກະ ຢ່າງນີ້ວ່າ "ກັຕຄກະ ຕັ້ງແຕ່ວັນນີ້ທ່ານບໍ່ເພິງອ້າງພຣະຜູ້ມີພຣະກາຄວ່າເປັນສາສດາ ແລະທ່ານຈະບໍ່ມີກາຣນອນຮ່ວມກັນ ໒-໓ ຄືນກັບກິກຂຸທັງຫລາຍເໝືອນສມຕຸທເທສເຫລົ່າອື່ນໄດ້ ທ່ານຈົ່ງໄປທີ່ອື່ນ ທ່ານຈົ່ງໄປໃຫ້ພົ້ນ" ດັ່ງນີ້ ຄັ້ງນັ້ນແລ ສົງຄ໌ໄດ້ນາສນະສມຕຸທເທສຊື່ກັຕຄກະແລ້ວ

ສມັຍນັ້ນ ພວກກິກຂຸຈັພພັຄຄີຍ໌ຮູ້ຢູ່ ກໍຍັງປອບໂຍນສມຕຸທເທສຊື່ກັຕຄກະທີ່ຖືກສົງຄ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຄຖາກແດ່ ຄົບຫາແດ່ ນອນຮ່ວມແດ່

ເຊີງອັນຖະ :

໑ ຄຳວ່າ "ນາສນະ" ແປວ່າ ໃຫ້ຈິບຫາຍ ໄດ້ແກ່ ກາຣລົງໂທສກິກຂຸ ມີ ໓ ວິທີ ຄື (໑) ລິງຄນາສນະ ໃຫ້ສຶກ (໒) ທັຕຫກັມນາສນະ ໄລ່ອອກຈາກສຳນັກ (໓) ສັງວາສນາສນະ ຍົກອອກຈາກໝູ່ ສມຕຸທເທສຊື່ກັຕຄກະນີ້ ຖືກລົງໂທສໂດຍກາຣໄລ່ອອກຈາກສຳນັກ (ວິ. ອ. ໒/໔໒໗/໔໔໐-໔໔໑)

ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈົ່ງໃດພວກກິກຂຸຈັພພັຄຄີຍ໌ຮູ້ຢູ່ ຈຶ່ງປອບໂຍນສມຕຸທເທສຊື່ກັຕຄກະທີ່ຖືກສົງຄ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຄຖາກແດ່ ຄົບຫາແດ່ ນອນຮ່ວມແດ່ລະ" ຄັນກິກຂຸຫລ່ານັ້ນຕຳໜິພວກກິກຂຸຈັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບພວກພິກຂຸ ວັຊຊີບຸດຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ຍັງປອບໂຍນສມຕຸທເທສຊື່ກັຕລະ ທີ່ຖືກສົງຄ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຖຖາກແດ່ ຄົບຫາແດ່ ນອນຮ່ວມແດ່ ແມ່ນແທ້ບໍ" ພວກພິກຂຸວັຊຊີບຸດຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມฆບຸຣຸຊທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ ຍັງປອບໂຍນສມຕຸທເທສຊື່ກັຕລະທີ່ຖືກສົງຄ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຖຖາກແດ່ ຄົບຫາແດ່ ນອນຮ່ວມແດ່ ລະ ໂມฆບຸຣຸຊທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເລື່ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໘໙] ຖ້າສມຕຸທເທສກ່າວຢ່າງນີ້ວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ແທ້" ສມຕຸທເທສນັ້ນອັນພິກຂຸທັງຫລາຍເພິ່ງວ່າກ່າວຕັກເຕືອນວ່າ "ທ່ານຢ່າໄດ້ກ່າວ ຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ສມຕຸທເທສ ພຣະຜູ້ມີພຣະພາຄຕຣັສ ທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ" ສມຕຸທເທສນັ້ນອັນພິກຂຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍຍັງຄົງຢືນຢັນຢູ່ຢ່າງນັ້ນ ສມຕຸທເທສນັ້ນອັນພິກຂຸທັງຫລາຍເພິ່ງວ່າກ່າວຕັກເຕືອນວ່າ "ສມຕຸທເທສ ຕັ້ງແຕ່ວັນນີ້ທ່ານບໍ່ເພິ່ງອ້າງພຣະຜູ້ມີພຣະພາຄວ່າເປັນສາສດາ ແລະທ່ານຈະບໍ່ມີການນອນຮ່ວມກັນ ໔-໓ ຄືນກັບພິກຂຸທັງຫລາຍເຫມືອນສມຕຸທເທສເຫລົ່າອື່ນໄດ້ ທ່ານຈົ່ງໄປທີ່ອື່ນ໑ ທ່ານຈົ່ງໄປໃຫ້ພົ້ນ" ກໍ ພິກຂຸໃດຮູ້ຢູ່ກໍຍັງປອບໂຍນສມຕຸທເທສຜູ້ຖືກສົງຄ໌ນາສນະແລ້ວຢ່າງນັ້ນ ໃຊ້ທ່ານໃຫ້ອຸປັຖຖາກ ຄົບຫາ ຫລືນອນຮ່ວມ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງສມຕຸທເທສຊື່ກັຕລະ ຈົບ

ສິກຂາບົທວິພັງຄ໌

[໔໖໐] ທີ່ຊື່ວ່າ ສມຕຸທເທສ ພຣະຜູ້ມີພຣະພາຄຕຣັສໝາຍເຖິງສາມເຕຣ

ຄຳວ່າ ກ່າວຢ່າງນີ້ ຄື ສມຕຸທເທສກ່າວວ່າ "ເຮົາຮູ້ທົ່ວເຖິງລັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າລັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນລັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ແທ້ຈິງ"

ຄຳວ່າ ສມຕຸທເທສນັ້ນ ໄດ້ແກ່ ສມຕຸທເທສຜູ້ກ່າວຢ່າງນັ້ນ

ຄຳວ່າ ອັນພິກຂຸທັງຫລາຍ ໄດ້ແກ່ ອັນພິກຂຸເຫລົ່າອື່ນ

ພວກພິກຂຸທີ່ໄດ້ເຫັນໄດ້ຍິນ ເພິງວ່າກ່າວຕັກເຕືອນສມຕຸທເທສນັ້ນວ່າ "ສມຕຸທເທສ ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ກາຣກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ສມຕຸທເທສ ພຣະຜູ້ມີພຣະພາຄຕຣັສ ລັມທີ່ກໍ່ອັນຕຣາຍວ່າເປັນລັມກໍ່ອັນຕຣາຍໄວ້ໂດຍປະກາຣຕ່າງໆແລະລັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງ" ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ເປັນກາຣດີ ຖ້າບໍ່ສລະ ສມຕຸທເທສນັ້ນ ອັນພິກຂຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ ວ່າ

ເຊີງອັນຖະ :

໑ ຄຳວ່າ "ຈົ່ງໄປທີ່ອື່ນ" ແປມາຈາກຄຳວ່າ "ຈຣ ປິເຣ" ຕາມນັຍດີກາວ່າ ຈຣ ປິເຣຕິ ປຣໂຕ ຄຈຸຈ, ມາ ອິຣ ຕິຏຖ (ສາຣຕຸຖ. ຜີກາ ໓/໔໒໗/໑໑໑) ຈົ່ງໄປທາງອື່ນ ຢ່າຢູ່ທີ່ນີ້, ອີກນັຍນຶ່ງວ່າ ປິເຣຕິ ປຣ ອມາມກ (ວິ. ອ. ໒/໔໒໗/໔໒໑) ອມຸຫາກໍ ອນຊຸຌຕຸຕິກພູຕ (ສາຣຕຸຖ. ຜີກາ ໓/໔໒໗/໑໑໐) ໂອວາທສຸສ ອປຜິຄຸຄຫເຕາ ອຕິກຸກມເນນ ອມາມກາ ປເຣ ນາມ (ຊຸ. ລ. ອ. ໑/໕/໕໗) ທ່ານເປັນ ຄົນອື່ນຜູ້ບໍ່ນັບຖືພຣະຣັຕນຕຣັຍ, ບໍ່ໄດ້ຢູ່ໃນວົງສ໌ຂອງພວກເຮົາ ເພາະບໍ່ຮັບໂອວາທ ເພາະລ່ວງລະເມີດໂອວາທ

"ສມຕຸທເທສ ຕັ້ງແຕ່ວັນນີ້ທ່ານບໍ່ເພິງອ້າງພຣະຜູ້ມີພຣະພາຄວ່າເປັນສາສດາ ແລະທ່ານຈະບໍ່ມີກາຣນອນຮ່ວມກັນ ໒-໓ ຄືນກັບພິກຂຸທັງຫລາຍເໝືອນສມຕຸທເທສເຫລົ່າອື່ນໄດ້ ທ່ານຈົ່ງໄປທີ່ອື່ນ ທ່ານຈົ່ງໄປໃຫ້ພົ້ນ"

ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ພິກຂຸຮູ້ເອງ ຄົນເຫລົ່າອື່ນບອກພິກຂຸນັ້ນ ຫລືສມຕຸທເທສນັ້ນບອກ
ຄຳວ່າ ຜູ້ຖືກສົງຆ໌ນາສນະແລ້ວຢ່າງນັ້ນ ຄື ຖືກສົງຆ໌ໃຫ້ຈິບຫາຍແລ້ວຢ່າງນັ້ນ
ທີ່ຊື່ວ່າ ສມຕຸທເທສ ພຣະຜູ້ມີພຣະພາຄຕອັສຫມາຍເຖິງສາມເຕຣ
ຄຳວ່າ ປອບໂຍນ ຄື ພິກຂຸປອບໂຍນວ່າ “ເຮົາຈະໃຫ້ບາຕຣ ຈີວອນ ອຸທເທສຫລືປຣິປຸຈຈາແກ່ສມຕຸທເທສນັ້ນ” ຕ້ອງອາບັຕິປາຈິຕຕິຍ໌
ຄຳວ່າ ໃຊ້ທ່ານໃຫ້ອຸປັຜຖາກ ຄື ພິກຂຸຍິນດີຈຸຣຕະ ດິນຫນຽວ ໄມ້ສີຟັນ ຫລືນ້ຳບ້ວນປາກຂອງສມຕຸທເທສນັ້ນ ຕ້ອງອາບັຕິປາຈິຕຕິຍ໌
ຄຳວ່າ ຄົບຫາ ອະທິບາຍວ່າ ທີ່ຮຽກວ່າຄົບຫາ ໄດ້ແກ່ ກາຣຄົບຫາ ໒ ຢ່າງ ຄື (໑) ຄົບຫາທາງອາມິສ (໒) ຄົບຫາທາງລັມ
ທີ່ຊື່ວ່າ ຄົບຫາທາງອາມິສ ຄື ພິກຂຸໃຫ້ອາມິສຫລືຮັບອາມິສ ຕ້ອງອາບັຕິປາຈິຕຕິຍ໌
ທີ່ຊື່ວ່າ ຄົບຫາທາງລັມ ຄື ພິກຂຸຍົກລັມຂຶ້ນສະແດງຫລືໃຫ້ຍົກລັມຂຶ້ນສະແດງ ພິກຂຸຍົກລັມຂຶ້ນສະແດງຫລືໃຫ້ຍົກລັມຂຶ້ນສະແດງ ເປັນບົທ ຕ້ອງອາບັຕິປາຈິຕຕິຍ໌ ທຸກໆບົທ
ພິກຂຸຍົກລັມຂຶ້ນສະແດງຫລືໃຫ້ຍົກລັມຂຶ້ນສະແດງ ເປັນອັກຂຣ ຕ້ອງອາບັຕິປາຈິຕຕິຍ໌ ທຸກໆອັກຂຣ
ຄຳວ່າ ນອນຮ່ວມ ອະທິບາຍວ່າ ໃນທີ່ທີ່ມີຫລັງຄາດຽວກັນ ເມື່ອສມຕຸທເທສຜູ້ຖືກສົງຆ໌ນາສນະນອນ ພິກຂຸກໍນອນ ຕ້ອງອາບັຕິປາຈິຕຕິຍ໌ ເມື່ອພິກຂຸນອນ ສມຕຸທເທສຜູ້ຖືກສົງຆ໌ນາສນະກໍນອນ ພິກຂຸທີ່ນອນດ້ວຍ ຕ້ອງອາບັຕິປາຈິຕຕິຍ໌ ຫລືນອນທັງ ໒ ຮູບ ກໍຕ້ອງອາບັຕິປາຈິຕຕິຍ໌ ທັງ ໒ ລຸກຂຶ້ນແລ້ວ ກັບນອນອີກ ຕ້ອງອາບັຕິປາຈິຕຕິຍ໌

ບົທພາຊນີຍ໌

[໔໓໑] ສມຕຸທເທສທີ່ຖືກສົງຆ໌ນາສນະແລ້ວ ພິກຂຸສຳຄັນວ່າຖືກສົງຆ໌ນາສນະແລ້ວ ປອບໂຍນ ໃຊ້ທ່ານໃຫ້ອຸປັຜຖາກ ຄົບຫາ ຫລືນອນຮ່ວມ ຕ້ອງອາບັຕິປາຈິຕຕິຍ໌
ສມຕຸທເທສທີ່ຖືກສົງຆ໌ນາສນະແລ້ວ ພິກຂຸບໍ່ແນ່ໃຈ ປອບໂຍນ ໃຊ້ທ່ານໃຫ້ອຸປັຜຖາກ ຄົບຫາ ຫລືນອນຮ່ວມ ຕ້ອງອາບັຕິທຸກກຜ
ສມຕຸທເທສທີ່ຖືກສົງຆ໌ນາສນະແລ້ວ ພິກຂຸສຳຄັນວ່າບໍ່ໄດ້ຖືກສົງຆ໌ນາສນະ ປອບໂຍນ ໃຊ້ທ່ານໃຫ້ອຸປັຜຖາກ ຄົບຫາ ຫລືນອນຮ່ວມ ບໍ່ຕ້ອງອາບັຕິ
ສມຕຸທເທສທີ່ບໍ່ຖືກສົງຆ໌ນາສນະ ພິກຂຸສຳຄັນວ່າຖືກສົງຆ໌ນາສນະ ຕ້ອງອາບັຕິທຸກກຜ

[໔໙໒] ຄັ້ງນັ້ນ ພຣະເຈົ້າປເສນທິໂກສົລປະທັບຢູ່ໃນຫ້ອງບັນທົມກັບພຣະນາງມັລລິກາເທວີ ພຣະນາງມັລລິກາເທວີໄດ້ທອດພຣະເນຕຣເຫັນທ່ານພຣະອານົນທ໌ມາແຕ່ໄກ ຄັນທອດພຣະເນຕຣເຫັນແລ້ວຈຶ່ງຮີບລຸກຂຶ້ນ ພຣະພູສາຊົງກັຽງສີເຫລືອງຈຶ່ງເລື່ອນຫລຸດ ເທື່ອນັ້ນ ທ່ານພຣະອານົນທ໌ຈຶ່ງກັບແຕ່ໄກ ໄປເຖິງອາຣາມແລ້ວຈຶ່ງແຈ້ງເຣື້ອງນີ້ໃຫ້ກິກສຸທັງຫລາຍຊາບ ບັນດາກິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອານົນທ໌ບໍ່ໄດ້ຮັບແຈ້ງລ່ວງຫນ້າຈຶ່ງເຂົ້າໄປພຣະຣາຊຖານຊັ້ນໃນລະ” ຄັນກິກສຸທັງຫລາຍຕຳຫນິທ່ານພຣະອານົນທ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຑ໌] ໙. ຣຕນວັຄ ໑. ອັນເຕປຸຣສິກຂາບົທ ນິທານວັຕຖຸ

ຊົງສອບຖາມ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອານົນທ໌ວ່າ “ອານົນທ໌ ຊາບວ່າ ທ່ານບໍ່ໄດ້ຮັບແຈ້ງລ່ວງຫນ້າ ເຂົ້າໄປພຣະຣາຊຖານຊັ້ນໃນແມ່ນແທ້ບໍ” ທ່ານພຣະອານົນທ໌ທູລຮັບວ່າ “ແມ່ນແທ້ພຣະພຸທລເຈົ້າຂ້າ” ພຣະຜູ້ມີພຣະກາຄພຸທລເຈົ້າຊົງຕຳຫນິວ່າ “ຯລຯ ອານົນທ໌ ຈັ່ງໃດທ່ານຍັງບໍ່ໄດ້ຮັບແຈ້ງລ່ວງຫນ້າ ຈຶ່ງເຂົ້າໄປພຣະຣາຊຖານ ຊັ້ນໃນລະ ອານົນທ໌ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ຄັນຊົງຕຳຫນິແລ້ວຈຶ່ງສະແດງລັມມີກະຖາແລ້ວຮັບສັ່ງກັບກິກສຸທັງຫລາຍວ່າ

ການເຂົ້າເຂຕພຣະຣາຊຖານຊັ້ນໃນມີໂທສ ໑໐ ຢ່າງ

[໔໙໓] “ກິກສຸທັງຫລາຍ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ ມີໂທສ ໑໐ ຢ່າງນີ້ ຄື (໑) ກິກສຸທັງຫລາຍ ພຣະຣາຊາປະທັບຢູ່ກັບພຣະມເຫສີໃນພຣະຣາຊຖານຊັ້ນໃນນີ້ ກິກສຸເຂົ້າໄປ

ໃນພຣະຣາຊຖານຊັ້ນໃນນັ້ນ ພຣະມເຫສີເຫັນພິກສຸແລ້ວຊົງຍິ້ມໃຫ້ ຫລືພິກສຸເຫັນພຣະມເຫສີ ແລ້ວຍິ້ມໃຫ້ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ຄົນທັງ ໒ ນີ້ໄດ້ທຳຫຍັງກັນແລ້ວ ຫລືຈະເຮັດຫຍັງກັນແນ່ນອນ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໑ ໃນການເຂົ້າໄປຍັງພຣະຣາຊ ຖານ ຊັ້ນໃນ

(໒) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຊົງມີພຣະຣາຊກິຈມາກ ມີພຣະກໍຣະນີຍກິຈມາກ ສເດັຈໄປຫາພຣະສນົມຄົນນຶ່ງແລ້ວຊົງລືມ ພຣະສນົມນັ້ນຕັ້ງຄັນທ໌ເພາະການທີ່ພຣະຣາຊາສເດັຈໄປ ຫານັ້ນ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າມາ ໄດ້ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໒ ໃນການເຂົ້າໄປຍັງ ພຣະຣາຊຖານຊັ້ນໃນ

(໓) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ຂອງມີຄ່າຢ່າງໃດຢ່າງນຶ່ງ ໃນພຣະຣາຊຖານຊັ້ນໃນ ສູນ ຫາຍໄປ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າ ມາໄດ້ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໓ ໃນການເຂົ້າໄປ ຍັງພຣະຣາຊຖານຊັ້ນໃນ

(໔) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ເມື່ອຄວາມລັບທາງຣາຊການທີ່ປຶກສາໃນພຣະຣາຊຖານຊັ້ນໃນ ຮົ່ວໄຫລອອກໄປພາຍນອກ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກ ບັພຊິຕ ບໍ່ມີໃຜອື່ນເຂົ້າມາໄດ້ ຄົງຈະເປັນການກະທຳຂອງບັພຊິຕ"ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໔ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໕) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ໃນພຣະຣາຊຖານຊັ້ນໃນ ພຣະຣາຊໂອຣົສປຣາຖນາ(ທີ່ຈະປົງ ພຣະຊົນມ໌)ພຣະຣາຊບິດາ ຫລືພຣະຣາຊບິດາປຣາຖນາ(ທີ່ຈະປົງພຣະຊົນມ໌)ພຣະຣາຊໂອຣົສ ທັງ ໒ ພຣະອົງຄ໌ຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າມາໄດ້ ຄົງຈະເປັນ ການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໕ ໃນການເຂົ້າໄປຍັງພຣະຣາຊຖານ ຊັ້ນໃນ

(໖) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຊົງເລື່ອນຂ້າຣາຊການຕຳແໜ່ງຕ່ຳຂຶ້ນຕຳແໜ່ງສູງ ພວກທີ່ບໍ່ພໍໃຈເຣື່ອງນີ້ຈະມີຄວາມຄິດຢ່າງນີ້ວ່າ "ພຣະຣາຊາຊົງເກືອກກົ້ວຢູ່ກັບບັພຊິຕ ຄົງຈະເປັນ ການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໖ ໃນການເຂົ້າໄປຍັງພຣະຣາຊຖານ ຊັ້ນໃນ

(໗) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຊົງລົດຕຳແໜ່ງຂ້າຣາຊການທີ່ຢູ່ໃນຕຳແໜ່ງສູງ

ລົງຕຳແຫນ່ງຕ່ຳ ພວກທີ່ບໍ່ພໍໃຈເອື້ອງນີ້ຈະມີຄວາມຄິດຢ່າງນີ້ວ່າ "ພຣະຣາຊາຊົງເກືອກກົ້ວຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ກິກຂຸທັງຫລາຍ ນີ້ເປັນໂທສຂໍ້ທີ ໗ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໘) ກິກຂຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຮັບສັ່ງໃຫ້ຍົກກອງທັພໄປໃນເວລາບໍ່ຄວຣ ພວກທີ່ບໍ່ພໍໃຈເອື້ອງນີ້ຈະມີຄວາມຄິດຢ່າງນີ້ວ່າ "ພຣະຣາຊາຊົງເກືອກກົ້ວຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ກິກຂຸທັງຫລາຍ ນີ້ເປັນໂທສຂໍ້ທີ ໘ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໙) ກິກຂຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຮັບສັ່ງໃຫ້ຍົກກອງທັພໄປໃນເວລາອັນຄວຣແລ້ວຮັບສັ່ງໃຫ້ຍົກທັພກັບເສັຽໃນຣະຫວ່າງທາງ ພວກທີ່ບໍ່ພໍໃຈເອື້ອງນີ້ຈະມີຄວາມຄິດ

ເຊີງອັນຖະ :

໑ ປຣາຖນາພຣະຣາຊບິດາ ອັນຖະກຖາອະທິບາຍວ່າ ປິຕຣໍ ປຕິເຖຕີຕິ ອນຸຕຣໍ ປສຸສິຕຸວາ ໝາເຕຕຸ ອິຈຸຈຕິ ແປວ່າ ຕ້ອງການຫາຊ່ອງທາງປົງພຣະຊົນມ໌ພຣະຣາຊບິດາ (ວິ. ອ. ໒/໔໙໗/໔໖໔)

ຢ່າງນີ້ວ່າ "ພຣະຣາຊາຊົງເກືອກກົ້ວຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ກິກຂຸທັງຫລາຍ ນີ້ເປັນໂທສຂໍ້ທີ ໙ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໑໐) ກິກຂຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊຖານຊັ້ນໃນເປັນສຖານທີ່ຄັບຄັ່ງດ້ວຍຊ້າງ ເປັນສຖານທີ່ຄັບຄັ່ງດ້ວຍມ້າ ເປັນສຖານທີ່ຄັບຄັ່ງດ້ວຍຣົຖ ເປັນສຖານທີ່ມີຮູບ ສຽງ ກິ່ນ ຣົສ ໂຜຕຖັພພະ ທີ່ເປັນເຫຕຸແຫ່ງຄວາມກຳຫນັດ ບໍ່ເຫມາະແກ່ບັພຊິຕ ກິກຂຸທັງຫລາຍ ນີ້ເປັນໂທສຂໍ້ທີ ໑໐ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

ກິກຂຸທັງຫລາຍ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ ມີໂທສ ໑໐ ຢ່າງນີ້ແລ"

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ຄັ້ງນັ້ນ ຄັນພຣະຜູ້ມີພຣະກາຄພຸທເຈົ້າຊົງຕຳຫນິທ່ານພຣະອານົນທ໌ໂດຍປະການຕ່າງໆແລ້ວຕຣັສໂທສແຫ່ງຄວາມເປັນຜູ້ລ້ຽງຍາກ ຄວາມເປັນຜູ້ບຳຣຸງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໙໘] ກ. ກິກຂຸໃດບໍ່ໄດ້ຮັບແຈ້ງລ່ວງຫນ້າ ກ້າວລ່ວງລໍຣົກປະຕູເຂົ້າໄປໃນຕຳຫນັກທີ່ບັນທົມ

ຂອງພຣະຣາຊາຜູ້ເປັນກษັตຣິย์ທີ່ໄດ້ຮັບມູຣທາภิเษกແລ້ວ ທີ່ພຣະຣາຊາຍັງບໍ່ສເດັຈອອກ ທີ່ນາງຣັຕນະຍັງບໍ່ສເດັຈອອກ ຕ້ອງອາບັຕິປາຈິຕຕິຍ໌

ເຣື່ອງພຣະເຈົ້າປເສນທິໂກສົລ ຈົບ

ສິກຂາບົທວິກັງຄ໌

[៤៩៩] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ກษັตຣິย์ ຄື ໄດ້ແກ່ ກษັตຣິย์ຜູ້ປຣະສູຕິມາດີທັງຝ່າຍພຣະມາຣດາແລະພຣະບິດາ ຊົງຖືກຳເນີດບໍຣິສຸດຄ໌ຕລອດເຈັດຊົ່ວບັນພະບຸຣຸษ ບໍ່ມີໃຜຕຳໜິຊາຕິກຳເນີດໄດ້

ທີ່ຊື່ວ່າ ໄດ້ຮັບມູຣທາภิเษกແລ້ວ ຄື ຜູ້ໄດ້ຮັບອภิเษกໂດຍການອภิเษกເປັນກษັตຣິย์

ຄຳວ່າ ທີ່ພຣະຣາຊາຍັງບໍ່ໄດ້ສເດັຈອອກ ຄື ພຣະຣາຊາຍັງບໍ່ສເດັຈອອກຈາກຕຳໜັກທີ່ບັນທົມ

ຄຳວ່າ ທີ່ນາງຣັຕນະຍັງບໍ່ສເດັຈອອກ ຄື ພຣະມເຫສີຍັງບໍ່ສເດັຈອອກຈາກຕຳໜັກ ທີ່ບັນທົມ ຫລືທັງ ໒ ພຣະອົງຄ໌ຍັງບໍ່ສເດັຈອອກ

ຄຳວ່າ ບໍ່ໄດ້ຮັບແຈ້ງລ່ວງໜ້າ ຄື ບໍ່ໄດ້ຮຽກມາລ່ວງໜ້າ

ທີ່ຊື່ວ່າ ລໍຣະນີປະຕູ ພຣະຜູ້ມີພຣະພາຄຕຣັສໝາຍເຖິງລໍຣະນີປະຕູຕຳໜັກທີ່ບັນທົມ

ທີ່ຊື່ວ່າ ຕຳໜັກທີ່ບັນທົມ ໄດ້ແກ່ ທີ່ບັນທົມຂອງພຣະຣາຊາຊຶ່ງເຈົ້າພນັກງານຈັດໄວ້ໃນທີ່ໃດທີ່ນຶ່ງ ໂດຍທີ່ສຸດແມ່ນອງດ້ວຍພຣະວິສູຕຣ

ຄຳວ່າ ກ້າວລ່ວງລໍຣະນີປະຕູເຂົ້າໄປ ຄື ພິກຂຸຍົກຕີນແຣກກ້າວຂ້າມລໍຣະນີປະຕູເຂົ້າໄປ ຕ້ອງອາບັຕິທຸກກฎ ຍົກຕີນທີ ໒ ກ້າວຂ້າມລໍຣະນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕິຍ໌

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[៥០០] ຍັງບໍ່ໄດ້ຮັບແຈ້ງ ພິກຂຸສຳຄັນວ່າຍັງບໍ່ໄດ້ຮັບແຈ້ງ ກ້າວລ່ວງລໍຣະນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕິຍ໌

ຍັງບໍ່ໄດ້ຮັບແຈ້ງ ພິກຂຸບໍ່ແນ່ໃຈ ກ້າວລ່ວງລໍຣະນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕິຍ໌

ຍັງບໍ່ໄດ້ຮັບແຈ້ງ ພິກຂຸສຳຄັນວ່າໄດ້ຮັບແຈ້ງແລ້ວ ກ້າວລ່ວງລໍຣທີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸຍ

ໄດ້ຮັບແຈ້ງແລ້ວ ພິກຂຸສຳຄັນວ່າຍັງບໍ່ໄດ້ຮັບແຈ້ງ ຕ້ອງອາບັຕິທຸກກຸຍ

ໄດ້ຮັບແຈ້ງແລ້ວ ພິກຂຸສຳຄັນວ່າຍັງບໍ່ໄດ້ຮັບແຈ້ງ ຕ້ອງອາບັຕິທຸກກຸຍ

ໄດ້ຮັບແຈ້ງແລ້ວ ພິກຂຸສຳຄັນວ່າໄດ້ຮັບແຈ້ງແລ້ວ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໑] ໑. ພິກຂຸຜູ້ໄດ້ຮັບແຈ້ງແລ້ວ

໒. ພິກຂຸເຂົ້າໄປໃນທີ່ທີ່ຜູ້ຢູ່ບໍ່ໄດ້ເປັນກສັຕຣິຍ໌

໓. ພິກຂຸເຂົ້າໄປໃນທີ່ທີ່ຜູ້ຢູ່ຍັງບໍ່ໄດ້ຮັບອພິເສກເປັນກສັຕຣິຍ໌

໔. ພິກຂຸເຂົ້າໄປໃນທີ່ທີ່ພຣະຣາຊາສເດັຈອອກຈາກຕຳໜັກທີ່ບັນທົມ

໕. ພິກຂຸເຂົ້າໄປໃນທີ່ທີ່ພຣະມເຫສີສເດັຈອອກຈາກຕຳໜັກທີ່ບັນທົມ

໖. ພິກຂຸເຂົ້າໄປໃນທີ່ທີ່ທັງ ໒ ພຣະອົງຄ໌ສເດັຈອອກຈາກຕຳໜັກທີ່ບັນທົມ

໗. ພິກຂຸເຂົ້າໄປໃນທີ່ທີ່ບໍ່ແມ່ນຕຳໜັກທີ່ບັນທົມ

໘. ພິກຂຸວິກົລຈິຕ

໙. ພິກຂຸຕົ້ນບັນຍັດ

ອັນເຕປຸຣສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຑ໌] ໙. ຣຕນວັຄ ໒. ຣຕນສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໒. ຣຕນສິກຂາບົທ

ວ່າດ້ວຍການເກັບຣັຕນະທີ່ເຈົ້າຂອງລືມໄວ້

ເຣື້ອງພຣະຮູບນຶ່ງ

[໕໐໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ໗ະ ພຣະເຊຕວັນ ອາຮາມຂອງອນາຖບິດາ ທີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ກິກຊຸຮູບນຶ່ງສົງນໍ້າໃນແມ່ນໍ້າ ອຈິຣວດີ ພຣາມຕ໌ຄົນນຶ່ງ ວາງຖົງຊັພຍ໌ ໕໐໐ ກຫາປຕະໄວ້ເທິງບົກແລ້ວລົງອາບນໍ້າໃນແມ່ນໍ້າອຈິຣວດີ ແລ້ວລືມຖົງຊັພຍ໌ ໄດ້ໄປແລ້ວ ເທື່ອນັ້ນ ກິກຊຸນັ້ນໄດ້ເກັບໄວ້ດ້ວຍຄິດວ່າ "ຖົງຊັພຍ໌ຂອງພຣາມຕ໌ນີ້ຢ່າສູນຫາຍໄປ" ຝ່າຍພຣາມຕ໌ພໍນຶກຂຶ້ນໄດ້ກໍຮີບແລ່ນມາເຖິງແລ້ວ ໄດ້ກ່າວກັບກິກຊຸນັ້ນດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ທ່ານເຫັນຖົງຊັພຍ໌ຂອງຜູ້ຂ້າແດ່ບໍ່" ກິກຊຸນັ້ນໄດ້ຄືນໃຫ້ພ້ອມກ່າວວ່າ "ເຊີນທ່ານຮັບໄປເຖີດ ພຣາມຕ໌" ຄັ້ງນັ້ນ ພຣາມຕ໌ນັ້ນໄດ້ເກີດຄວາມຄິດດັ່ງນີ້ວ່າ "ດ້ວຍອຸບາຍຢ່າງໃດ ເຮົາຈຶ່ງບໍ່ຕ້ອງໃຫ້ ຄ່າໄຖ່ແກ່ກິກຊຸນີ້" ຈຶ່ງຍຶດຕົວແລ້ວກ່າວວ່າ "ທ່ານ ຊັພຍ໌ຂອງຜູ້ຂ້າບໍ່ແມ່ນ ໕໐໐ ກຫາປຕະ ແຕ່ມີ ໑,໐໐໐ ກຫາປຕະຕ່າງຫາກ" ແລ້ວຈາກໄປ ຄັນກິກຊຸນັ້ນໄປເຖິງອາຮາມແລ້ວຈຶ່ງບອກເຣື້ອງນີ້ໃຫ້ ກິກຊຸທັງຫລາຍຊາບ ບັນດາກິກຊຸຜູ້ມັກນ້ອຍ ຯລຯ ພາກັນຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດ ກິກຊຸຈຶ່ງເກັບຣັຕນະໄວ້ລະ" ຄັນກິກຊຸທັງຫລາຍຕໍາໜິກິກຊຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນໍາເຣື້ອງ ນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຊຸ ນັ້ນວ່າ "ກິກຊຸ ຊາບວ່າ ທ່ານເກັບຣັຕນະໄວ້ແມ່ນແທ້ບໍ່" ກິກຊຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທຣ ເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທຣເຈົ້າຊົງຕໍາໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງເກັບຣັຕນະ ໄວ້ລະ ໂມຄບຸຣຸສ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສຫລື ເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຊຸ ທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍກິກຊຸໃດ ເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ຕ້ອງອາບັຕິປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຊຸທັງຫລາຍຢ່າງນີ້

ເຣື້ອງພຣະຮູບນຶ່ງ ຈົບ

ເຣື້ອງນາງວິສາຂາ

[໕໐໖] ຄັ້ງນັ້ນ ໃນກຸງສາວັຕຖີ ມີມຫໍຣສົພ ປະຊາຊົນແຕ່ງຕົວໄປທຽວອຸທຍານ ແມ່ນນາງວິສາຂາມິຄາຣມາຕາກໍແຕ່ງຕົວອອກຈາກບ້ານຈະໄປທ່ຽວຊົມອຸທຍານ ແຕ່ຄິດວ່າ "ເຮົາຈະໄປທຽວອຸທຍານເຮັດຫຍັງ ໄປເຝົ້າພຣະຜູ້ມີພຣະກາຄດີກວ່າ" ແລ້ວເປື້ອງເຄື່ອງປະດັບອອກ ເອົາຜ້າຫົ່ມຫໍ່ ໄວ້ມອບໃຫ້ສາວໃຊ້ດ້ວຍກ່າວວ່າ "ແມ່ສາວໃຊ້ ທ່ານຖືຫໍ່ ເຄື່ອງປະດັບນີ້ໄວ້" ຄັນແລ້ວນາງວິສາຂາມິຄາຣມາຕາກໍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະກາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອະພິວາທພຣະຜູ້ມີພຣະກາຄ ແລ້ວນັ່ງ ຓະ ທີ່ສົມຄວຣ ຄັ້ງນັ້ນ ພຣະຜູ້ມີພຣະກາຄຊົງຊີ້ແຈງນາງວິສາຂາມິຄາຣມາຕາຜູ້ນັ່ງ ຓະ ທີ່ສົມຄວຣໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາ ລໍາດັບນັ້ນ ນາງວິສາຂາມິຄາຣມາຕາຜູ້ຊຶ່ງພຣະຜູ້ມີພຣະກາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍລັມມີກຖາແລ້ວ ຈຶ່ງລຸກຈາກອາສນະ ຖວາຍອະພິວາທພຣະຜູ້ມີພຣະກາຄ ທໍາປຣະທັກຂິຕ(ວຽນໄປທາງຂວາ)ແລ້ວຈາກໄປ ຝ່າຍສາວໃຊ້ນັ້ນລືມຫໍ່ເຄື່ອງປະດັບນັ້ນໄດ້ກັບໄປແລ້ວ ພິກຂຸທັງຫລາຍພົບເຂົ້າ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ ພຣະອົງຄ໌ຮັບສັ່ງວ່າ "ພິກຂຸທັງຫລາຍ ຖ້າເຊັ່ນນັ້ນ ທ່ານທັງຫລາຍຈົ່ງຍົກໄປເກັບຮັກສາໄວ້ເຖີດ"

ຊົງອນຸຍາຕໃຫ້ເກັບຣັຕນະໄດ້

ລໍາດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ເກັບ ຫລືໃຊ້ໃຫ້ເກັບຣັຕນະ ຫລືຂອງທີ່ສົມມຸດວ່າເປັນຣັຕນະໃນວັດທີ່ຢູ່ແລ້ວຮັກສາໄວ້ດ້ວຍຕັ້ງໃຈວ່າ 'ເຈົ້າຂອງຈະຮັບຄືນໄປ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກຂຸໃດເກັບ ຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນອາຣາມ

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື້ອງນາງວິສາຂາ ຈົບ

ເຣື້ອງຄົນຮັບໃຊ້ຂອງອນາຖບິຕທິກເສດຖີ

[໕໐໔] ສມັຍນັ້ນ ອນາຖບິຕທິກຄຫບໍດີມີບ້ານພັກຄົນງານຢູ່ໃນແຄວ້ນກາສີ ຄຫບໍດີນັ້ນສັ່ງບຸຣຸຫຄົນຮັບໃຊ້ໄວ້ວ່າ "ຖ້າພຣະຄຸຕເຈົ້າທັງຫລາຍມາເຖິງ ທ່ານເພິງຈັດຕຽມກັຕຕາຫາຣ" ຄັນຕໍ່ມາກິກບຸຫລາຍຮູບທຽວຈາຣິກໄປໃນແຄວ້ນກາສີ ຜ່ານໄປເຖິງບ້ານພັກຄົນງານຂອງທ່ານອນາຖບິຕທິກຄຫບໍດີນັ້ນ ບຸຣຸຫນັ້ນແລເຫັນກິກບຸທັງຫລາຍຍ່າງມາແຕ່ໄກ ຄັນເຫັນແລ້ວຈຶ່ງເຂົ້າໄປຫາກິກບຸເຫລົ່ານັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ຂາບອາຣາຮນາດັ່ງນີ້ວ່າ "ພຣະຄຸຕເຈົ້າຜູ້ຈະເຣີນທັງຫລາຍພຣະຄຸຕເຈົ້າທັງຫລາຍໂປຣດຮັບນິມົນຕ໌ເພື່ອຈັນກັຕຕາຫາຣຂອງຄຫບໍດີໃນມື້ອື່ນນີ້" ກິກບຸເຫລົ່ານັ້ນຮັບນິມົນຕ໌ໂດຍດຸຫນີກາພ ຄັນລ່ວງ ຣາຕຣີນັ້ນທັງຣາຕຣີ ບຸຣຸຫນັ້ນສັ່ງໃຫ້ຈັດຕຽມຂອງຄ້ຽວຂອງຈັນອັນປານີຕ ແລ້ວສັ່ງຄົນໄປບອກເວລາ ຖອດແຫວນວາງໄວ້ ເອົາກັຕຕາຫາຣປະເຄນກິກບຸເຫລົ່ານັ້ນ ພ້ອມທັງກ່າວວ່າ "ນິມົນຕ໌ພຣະຄຸຕເຈົ້າທັງຫລາຍຈັນແລ້ວຄ່ອຍກັບ ຜູ້ຂ້າຈະໄປເຮັດວຽກ" ລືມແຫວນໄວ້ໄປແລ້ວ ກິກບຸທັງຫລາຍພົບເຂົ້າຈຶ່ງກ່າວວ່າ "ຖ້າພວກເຮົາໄປ ແຫວນນີ້ຈະເສັຽໄປ" ຈຶ່ງຢູ່ໃນທີ່ນັ້ນເອງ ຄັນບຸຣຸຫນັ້ນກັບມາຈາກເຮັດວຽກເຫັນກິກບຸເຫລົ່ານັ້ນ ຈຶ່ງໄດ້ກ່າວດັ່ງນີ້ວ່າ "ພຣະຄຸຕເຈົ້າຜູ້ຈະເຣີນທັງຫລາຍ ເຫຕຸໃດພຣະຄຸຕເຈົ້າທັງຫລາຍຈຶ່ງຍັງຢູ່ໃນທີ່ນີ້ລະ" ຄັນແລ້ວກິກບຸເຫລົ່ານັ້ນຈຶ່ງເລົ່າເຣື້ອງນັ້ນໃຫ້ບຸຣຸຫນັ້ນຊາບ ຄັນໄປເຖິງກຸງສາວັຕຖີແລ້ວຈຶ່ງໄດ້ບອກເຣື້ອງນີ້ໃຫ້ກິກບຸທັງຫລາຍຊາບ ກິກບຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ພຣະພຸທສານຸຍາຕພິເສຫ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກບຸທັງຫລາຍວ່າ "ກິກບຸທັງຫລາຍ ເຮົາອນຸຍາຕໃຫ້ເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະໃນອາຣາມຫລືໃນທີ່ພັກແລ້ວຮັກສາໄວ້ດ້ວຍຕັ້ງໃຈວ່າ 'ເຈົ້າຂອງຈະຮັບຄືນໄປ" ແລ້ວຈຶ່ງຮັບສັ່ງໃຫ້ກິກບຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໐໕] ອີກຢ່າງນຶ່ງ ກິກບຸໃດເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນອາຣາມຫລືໃນທີ່ພັກ ອີກຢ່າງນຶ່ງ ກິກບຸເພິງເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະໃນອາຣາມຫລືໃນທີ່ພັກແລ້ວຮັກສາໄວ້ດ້ວຍຕັ້ງໃຈວ່າ 'ເຈົ້າຂອງຈະຮັບຄືນໄປ' ນີ້ເປັນການທຳທີ່ສົມຄວຣໃນເຣື້ອງນັ້ນ

ເລື່ອງຄືນຮັບໃຊ້ຂອງອນາຖບິຕຫິກເສດຖີ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໙. ຣຕນວັຄ ໔. ຣຕນສິກຂາບົທ ສິກຂາບົທວິກັງຄ໌

ສິກຂາບົທວິກັງຄ໌

[໕໐໖] ຄຳວ່າ ອິກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ອິກຢ່າງນຶ່ງ. . . ໃດ

ຄຳວ່າ ກິກຂຸ ມີອະທິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຣັຕນະ ໄດ້ແກ່ ແກ້ວມຸກດາ ແກ້ວມະນີ ໄພທູຣຍ໌ ສັງຂ໌ ສິລາ ປຣະພາຣຸເງິນ ທອງ ທັບທິມ ແກ້ວຕາແມວ ນີ້ຊື່ວ່າຣັຕນະ

ທີ່ຊື່ວ່າ ຂອງທີ່ສົມມຸດວ່າເປັນຣັຕນະ ໄດ້ແກ່ ເຄື່ອງອຸປໂກຄບໍຣິໂກຄຂອງມນຸຫຍ໌ ນີ້ຊື່ວ່າຂອງທີ່ສົມມຸດວ່າເປັນຣັຕນະ

ຄຳວ່າ ເວັ້ນໄວ້ແຕ່ໃນອາຣາມຫລືໃນທີ່ພັກ ຄື ຍົກເວັ້ນແຕ່ໃນອາຣາມຫລືໃນທີ່ພັກທີ່ຊື່ວ່າ ໃນອາຣາມ ຄື ສຳລັບອາຣາມທີ່ມີຮົ້ວລ້ອມ ກຳຫນົດເອົາພາຍໃນອາຣາມສຳລັບອາຣາມທີ່ບໍ່ມີຮົ້ວລ້ອມ ກຳຫນົດເອົາອຸປຈາຣ

ທີ່ຊື່ວ່າ ໃນທີ່ພັກ ຄື ສຳລັບທີ່ພັກມີຮົ້ວລ້ອມ ກຳຫນົດເອົາພາຍໃນທີ່ພັກ ສຳລັບທີ່ພັກທີ່ບໍ່ມີຮົ້ວລ້ອມ ກຳຫນົດເອົາອຸປຈາຣ

ຄຳວ່າ ເກັບ ຄື ກິກຂຸຖືເອົາເອງ ຕ້ອງອາບັຕິປາຈິຕຕິຍ໌

ຄຳວ່າ ໃຊ້ໃຫ້ເກັບ ຄື ກິກຂຸໃຊ້ໃຫ້ຜູ້ອື່ນຖືເອົາ ຕ້ອງອາບັຕິປາຈິຕຕິຍ໌

ຄຳວ່າ ອິກຢ່າງນຶ່ງ ກິກຂຸເພິ່ງເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ໃນອາຣາມ ຫລືໃນທີ່ພັກແລ້ວຮັກສາໄວ້ ຄວາມວ່າ ກິກຂຸເພິ່ງກຳຫນົດຫມາຍຮູປພັຕ ຫລືຕຳຫນິແລ້ວເກັບຮັກສາໄວ້ ແລ້ວປະກາດວ່າ “ຜູ້ໃດຂອງຫາຍ ຜູ້ນັ້ນຈົ່ງມາຮັບເອົາໄປ” ຖ້າເຂົາມາໃນທີ່ນັ້ນເພິ່ງຖາມເຂົາວ່າ “ສິ່ງຂອງຂອງທ່ານເປັນເຊັ່ນໄຣ” ຖ້າເຂົາບອກຮູປພັຕຫລືຕຳຫນິ ຖືກຕ້ອງ ເພິ່ງໃຫ້

ຄືນ ຖ້າບອກບໍ່ຖືກຕ້ອງ ເພິ່ງບອກເຂົາວ່າ "ທ່ານຈົ່ງຄົ້ນເບິ່ງເຖີດ" ເມື່ອຈະຈາກໄປຈາກອາວາສນັ້ນ ເພິ່ງມອບໄວ້ແກ່ພິກສຸຜູ້ເໝາະສົມໃນອາວາສນັ້ນແລ້ວຄ່ອຍຈາກໄປ ຖ້າບໍ່ມີພິກສຸທີ່ໜ້າເຊື່ອຖື ເພິ່ງມອບໄວ້ແກ່ຄຫບໍດີຜູ້ເໝາະສົມໃນທີ່ນັ້ນແລ້ວຄ່ອຍຈາກໄປ

ຄຳວ່າ ນີ້ເປັນການທຳທີ່ສົມຄວນໃນເຣື່ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື່ອງນັ້ນ

ອນາປັຕຕິວານ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໗] ໑. ພິກສຸເກັບຫລືໃຊ້ໃຫ້ເກັບຣັຕນະ ຫລືຂອງທີ່ສົມມຸດວ່າເປັນຣັຕນະໃນອາຣາມຫລືໃນທີ່ພັກແລ້ວເກັບຮັກສາໄວ້ດ້ວຍຕັ້ງໃຈວ່າ "ເຈົ້າຂອງຈະຮັບຄືນໄປ"

໒. ພິກສຸຖືວິສາສະເກັບຂອງທີ່ສົມມຸດວ່າເປັນຣັຕນະ

໓. ພິກສຸຖືເອົາໄປເປັນຂອງຢືມ

໔. ພິກສຸເຂົ້າໃຈວ່າເປັນຂອງບັງສຸກຸລ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ຣຕນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຕຟ໌] ໙. ຣຕນວັຄ ໓. ວິກາລຄາມປເວສນສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໓. ວິກາລຄາມປເວສນສິກຂາບົທ

ວ່າດ້ວຍການເຂົ້າໝູ່ບ້ານໃນເວລາວິກາລ

ເຣື່ອງພຣະຈັພພັຄຄີຍ໌

[໕໐໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕຟິ

ກເສດຖີ ເຂດກຸງສາວັດຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ເຂົ້າຫມູ່ບ້ານໃນເວລາວິກາລ ນັ່ງໃນທີ່ຊຸມນຸມ ສົນທນາເດັຽຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ (໒) ໂຈຣກຖາ ເຣື່ອງໂຈຣ (໓) ມຫາມັຕຕກຖາ ເຣື່ອງມຫາອມາຕຍ໌ (໔) ເສນາກຖາ ເຣື່ອງກອງທັພ (໕) ກຍກຖາ ເຣື້ອງກັຍ (໖) ຍຸທລກຖາ ເຣື້ອງການຣບ (໗) ອັນນກຖາ ເຣື້ອງເຂົ້າ (໘) ປານກຖາ ເຣື້ອງນ້ຳ (໙) ວັຕຖກຖາ ເຣື່ອງຜ້າ (໑໐) ສຍນກຖາ ເຣື່ອງທີ່ນອນ (໑໑) ມາລາກຖາ ເຣື້ອງພວງດອກໄມ້ (໑໒) ຄັນຣກຖາ ເຣື້ອງຂອງຫອມ (໑໓) ຍາຕກຖາ ເຣື້ອງຍາຕ (໑໔) ຍານກຖາ ເຣື້ອງຍານ (໑໕) ຄາມກຖາ ເຣື້ອງບ້ານ (໑໖) ນິຄົມກຖາ ເຣື່ອງນິຄົມ (໑໗) ນຄຣກຖາ ເຣື່ອງເມືອງ (໑໘) ຊນປທກຖາ ເຣື້ອງຊົນບົທ (໑໙) ອິຕຖີກຖາ ເຣື້ອງສຕຣີ (໒໐) ປຸຣິສກຖາ ເຣື້ອງບຸຣຸຮ (໒໑) ສູຣກຖາ ເຣື້ອງຄນກລ້າຫາຍ (໒໒) ວິສິຂາກຖາ ເຣື້ອງຕຣອກ (໒໓) ກຸມກັຜຖານກຖາ ເຣື້ອງທ່ານ້ຳ (໒໔) ປຸພພເປຕກຖາ ເຣື້ອງຄົນທີ່ລ່ວງລັບໄປແລ້ວ (໒໕) ນານັຕຕກຖາ ເຣື້ອງເບັດເຕລັດ (໒໖) ໂລກັກຂາຍິກະ ເຣື້ອງໂລກ (໒໗) ສມຸທທັກຂາຍິກະ ເຣື້ອງທະເລ (໒໘) ອິຕິກວາກວກຖາ ເຣື້ອງຄວາມຈະເຣີນແລະຄວາມເສື່ອມ໑

ຄົນທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງເຂົ້າຫມູ່ບ້ານໃນເວລາວິກາລ ນັ່ງໃນທີ່ຊຸມນຸມ ສົນທນາເດັຽຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ (໒) ໂຈຣກຖາ ເຣື້ອງໂຈຣ (໓) ມຫາມັຕຕກຖາ ເຣື່ອງມຫາອມາຕຍ໌ (໔) ເສນາກຖາ ເຣື້ອງກອງທັພ (໕) ກຍກຖາ ເຣື້ອງກັຍ (໖) ຍຸທລກຖາ

ເຊີງອັນຖະ :

໑ ວິ. ມ. ໕/໒໕໐/໑໓-໑໔, ທີ. ສີ. ໙/໑໗/໘, ທີ. ປາ. ໑໑/໕໐/໓໐, ມ. ມ. ໑໓/໒໒໓/໑໙໗, ສໍ. ມ. ໑໙/໑໐໘໐/໓໖໕, ອງ. ທສກ. ໒໔/໖໙/໑໐໒, ຂຸ. ມ. ໒໙/໑໕໗/໓໐໖

ເຣື້ອງການຣົບ (໗) ອັນນກຖາ ເຣື້ອງເຂົ້າ (໘) ປານກຖາ ເຣື້ອງນ້ຳ (໙) ວັຕຖກຖາ ເຣື້ອງຜ້າ (໑໐) ສຍນກຖາ ເຣື້ອງທີ່ນອນ (໑໑) ມາລາກຖາ ເຣື້ອງພວງດອກໄມ້ (໑໒) ຄັນຣກຖາ ເຣື້ອງຂອງຫອມ (໑໓) ຍາຕກຖາ ເຣື້ອງຍາຕ (໑໔) ຍານກຖາ ເຣື້ອງຍານ (໑໕) ຄາມກຖາ ເຣື້ອງຫມູ່ບ້ານ (໑໖) ນິຄົມກຖາ ເຣື້ອງນິຄົມ (໑໗) ນຄຣກຖາ ເຣື້ອງເມືອງ (໑໘) ຊນປທກຖາ ເຣື້ອງຊົນບົທ (໑໙) ອິຕຖີກຖາ ເຣື້ອງສຕຣີ (໒໐) ປຸຣິສກຖາ ເຣື້ອງບຸຣຸຮ (໒໑) ສູຣກຖາ ເຣື້ອງຄົນກ້າຫານ (໒໒) ວິສິຂາກຖາ ເຣື້ອງຕຣອກ (໒໓) ກຸມກັຜຖານກຖາ ເຣື້ອງທ່ານ້ຳ (໒໔) ປຸພພເປຕກຖາ ເຣື້ອງຄົນທີ່ລ່ວງລັບໄປແລ້ວ (໒໕) ນານັຕຕກຖາ ເຣື້ອງຍິບຍ່ອຍ (໒໖) ໂລກັກຂາຍິກ

ເຣື້ອງການຄາດກ່ຽວກັບໂລກ (໔໗) ສມຸທທັກຂາຍິກ ເຣື້ອງການຄາດເດົາກ່ຽວກັບທະເລ (໔໘) ອິຕິກວາກວກຖາ ເຣື້ອງຄວາມຈະເຣີນແລະຄວາມເສື່ອມ ເໝືອນພວກຄຣືຫັສຖ໌ທີ່ຍັງບໍ່ຣິໂພຄການລະ"

ພິກຂຸທັງຫລາຍໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງເຂົ້າໝູ່ບ້ານເວລາວິກາລ ນັ່ງໃນທີ່ຊຸມນຸມ ສົນທນາເດັຽຣະສານກຖາຕ່າງໆຄື ເຣື້ອງພຣະຣາຊາ ຯລຯ ເຣື້ອງຄວາມຈະເຣີນແລະຄວາມເສື່ອມລະ" ຄັນພິກຂຸທັງຫລາຍຕຳໜິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານເຂົ້າບ້ານໃນເວລາວິກາລ ນັ່ງໃນທີ່ຊຸມນຸມສົນທນາເດັຽຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ ຯລຯ (໔໘) ອິຕິກວາກວກຖາ ເຣື້ອງຄວາມຈະເຣີນແລະຄວາມເສື່ອມ ແມ່ນແທ້ບໍ່" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທສເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸຊທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໝູ່ບ້ານໃນເວລາວິກາລແລ້ວ ນັ່ງໃນທີ່ຊຸມນຸມສົນທນາເດັຽຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ ຯລຯ (໔໘) ອິຕິກວາກວກຖາ ເຣື້ອງຄວາມຈະເຣີນແລະຄວາມເສື່ອມລະ ໂມຄບຸຣຸຊທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕຫ໌] ໙. ຣຕນວັຄ ໓. ວິກາລຄາມປເວສນສິກຂາບົທ ພຣະບັນຍັດ

ພຣະບັນຍັດ

ກໍ ພິກຂຸໃດເຂົ້າໝູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກຂຸທັງຫລາຍຢ່າງນີ້

ເຣື່ອງພຣະວັພພັຄຄີຍ໌ ຈົບ

ເຣື້ອງກິກບຸຫລາຍຮູບ

[໕໐໙] ສມັຍນັ້ນ ກິກບຸຫລາຍຮູບຍ່າງທາງໄປກຸງສາວັຕຖີ ແຄວ້ນໂກສົລ ເຂົ້າໄປຫມູ່ບ້ານຕາແສງນຶ່ງໃນເວລາເຢັນ ຄົນທັງຫລາຍເຫັນກິກບຸເຫລົ່ານັ້ນຈຶ່ງໄດ້ອາຣາທນາດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ນິມົນຕ໌ທ່ານທັງຫລາຍເຂົ້າໄປເຖີດ" ຄັ້ງນັ້ນ ກິກບຸເຫລົ່ານັ້ນມີຄວາມຢຳເກງວ່າ "ພຣະຜູ້ມີພຣະກາຄຊົງຫ້າມການເຂົ້າຫມູ່ບ້ານໃນເວລາວິກາລ" ຈຶ່ງບໍ່ຍອມເຂົ້າໄປ ພວກໂຈຣໄດ້ປຸ້ນກິກບຸເຫລົ່ານັ້ນ ຄັນກິກບຸເຫລົ່ານັ້ນໄປເຖິງກຸງສາວັຕຖີ ໄດ້ແຈ້ງເຣື່ອງນັ້ນໃຫ້ກິກບຸທັງຫລາຍຊາບ ກິກບຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ເຂົ້າຫມູ່ບ້ານ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກບຸທັງຫລາຍວ່າ "ກິກບຸທັງຫລາຍ ເຮົາອນຸຍາຕໃຫ້ບອກລາແລ້ວເຂົ້າຫມູ່ບ້ານໃນເວລາວິກາລໄດ້" ແລ້ວຈຶ່ງຮັບສັ່ງໃຫ້ກິກບຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້ ອີກຢ່າງນຶ່ງ ກິກບຸໃດບໍ່ບອກລາແລ້ວເຂົ້າຫມູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກບຸທັງຫລາຍຢ່າງນີ້

ເຣື່ອງກິກບຸຫລາຍຮູບ ຈົບ

ເຣື້ອງກິກບຸຮູບນຶ່ງ

[໕໑໐] ສມັຍນັ້ນ ກິກບຸຮູບນຶ່ງຍ່າງທາງໄປກຸງສາວັຕຖີ ແຄວ້ນໂກສົລ ເຂົ້າໄປຫມູ່ບ້ານຕາແສງນຶ່ງໃນເວລາເຢັນ ຄົນທັງຫລາຍເຫັນກິກບຸນັ້ນຈຶ່ງໄດ້ອາຣາທນາດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ນິມົນຕ໌ທ່ານທັງຫລາຍເຂົ້າໄປເຖີດ" ຄັ້ງນັ້ນ ກິກບຸນັ້ນມີຄວາມຢຳເກງວ່າ "ພຣະຜູ້ມີພຣະກາຄຊົງຫ້າມການເຂົ້າຫມູ່ບ້ານໃນເວລາວິກາລໂດຍບໍ່ໄດ້ບອກລາ" ຈຶ່ງບໍ່ຍອມເຂົ້າໄປ ພວກໂຈຣໄດ້ປຸ້ນກິກບຸນັ້ນ ຄັນກິກບຸນັ້ນໄປເຖິງກຸງສາວັຕຖີ ໄດ້ແຈ້ງເຣື່ອງນັ້ນໃຫ້ກິກບຸທັງຫລາຍຊາບ ກິກບຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ພຣະພຸທລານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກບຸ

ທັງຫລາຍວ່າ "ກິກษຸທັງຫລາຍ ເຣົາອນຸຍາຕໃຫ້ບອກລາກິກษຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາ ວິກາລໄດ້" ແລ້ວຈຶ່ງຮັບສັ່ງໃຫ້ກິກษຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ກິກษຸໃດບໍ່ບອກລາກິກษຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກษຸທັງຫລາຍຢ່າງນີ້

ເຣື່ອງກິກษຸຮູບນຶ່ງ ຈົບ

ເຣື່ອງກິກษຸຖືກງູກັດ

[໕໑໑] ສມັຍນັ້ນ ກິກษຸຮູບນຶ່ງຖືກງູກັດ ກິກษຸອີກຮູບນຶ່ງຈະເຂົ້າຫມູ່ບ້ານດ້ວຍຄິດວ່າ "ຈະໄປນຳໄຟມາ" ແຕ່ຄັນແລ້ວມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະກາຄຊົງຫ້າມກາຣບໍ່ບອກລາກິກษຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິກາລ" ຈຶ່ງບໍ່ຍອມເຂົ້າໄປແລ້ວນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ພຣະພຸທธານຸຍາຕພິເສษ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກษຸທັງຫລາຍວ່າ "ກິກษຸທັງຫລາຍ ເຣົາອນຸຍາຕເມື່ອມີກຸຣະຮີບດ່ວນເຊັ່ນນີ້ ບໍ່ຕ້ອງບອກລາກິກษຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິກາລ" ແລ້ວຈຶ່ງຮັບສັ່ງໃຫ້ກິກษຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໑໔] ອີກຢ່າງນຶ່ງ ກິກษຸໃດບໍ່ບອກລາກິກษຸທີ່ມີຢູ່ແລ້ວ ເຂົ້າຫມູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ

ເຣື່ອງກິກษຸຖືກງູກັດ ຈົບ

ສິກຂາບົທວິກັງຄ໌

[໕໑໕] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ພິກຂຸທີ່ຊື່ວ່າ ມີຢູ່ ຄື ພິກຂຸທີ່ຕົນສາມາດຈະບອກລາແລ້ວເຂົ້າໝູ່ບ້ານໄດ້

ພິກຂຸທີ່ຊື່ວ່າ ບໍ່ມີຢູ່ ຄື ພິກຂຸທີ່ຕົນບໍ່ສາມາດຈະບອກລາແລ້ວເຂົ້າໝູ່ບ້ານໄດ້

ທີ່ຊື່ວ່າ ເວລາວິກາລ ໝາຍເອົາເວລາເມື່ອທ່ຽງວັນລ່ວງໄປແລ້ວຈົນເຖິງອຣຸຕຂຶ້ນ

ຄຳວ່າ ເຂົ້າໝູ່ບ້ານ ຄວາມວ່າ ເມື່ອພິກຂຸກ້າວເລີຍເຂົ້າເຂຕຮົ້ວລ້ອມຂອງໝູ່ບ້ານທີ່ມີຮົ້ວລ້ອມ ຕ້ອງອາບັຕິປາຈິຕຕິຍ໌ ເມື່ອພິກຂຸກ້າວເຂົ້າເຂຕອຸປຈາຣຂອງໝູ່ບ້ານທີ່ບໍ່ມີຮົ້ວລ້ອມ ຕ້ອງອາບັຕິປາຈິຕຕິຍ໌

ຄຳວ່າ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ ຄື ຍົກເວັ້ນແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[໕໑໔] ເວລາວິກາລ ພິກຂຸສຳຄັນວ່າເປັນເວລາວິກາລ ບໍ່ບອກລາພິກຂຸທີ່ມີຢູ່ແລ້ວເຂົ້າໝູ່ບ້ານ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ

ເວລາວິກາລ ພິກຂຸບໍ່ແນ່ໃຈ ບໍ່ບອກລາພິກຂຸທີ່ມີຢູ່ແລ້ວເຂົ້າໝູ່ບ້ານ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນທີ່ສົມຄວຣ

ເວລາວິກາລ ພິກຂຸສຳຄັນວ່າເປັນກາລ ບໍ່ບອກລາພິກຂຸທີ່ມີຢູ່ແລ້ວເຂົ້າໝູ່ບ້ານ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນທີ່ສົມຄວຣ

ທຸກກົຏ

ກາລ ພິກຂຸສຳຄັນວ່າເປັນເວລາວິກາລ ຕ້ອງອາບັຕິທຸກກົຏ

ກາລ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຏ

ກາລ ພິກຂຸສຳຄັນວ່າເປັນກາລ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໑໕] ໑. ພິກຂຸເຂົ້າບ້ານເມື່ອມີເຫຕຸຈຳເປັນຮີບດ່ວນທີ່ສົມຄວຣ

໒. ພິກຂຸບອກລາພິກຂຸທີ່ມີຢູ່ແລ້ວເຂົ້າໄປ

໓. ภิกษุบໍ່ໄດ້ບອກລາເພາະภิกษุບໍ່ມີແລ້ວເຂົ້າໄປ
໔. ภิกษุໄປອາຣາມອື່ນ
໕. ภิกษุໄປສຳນັກภิกษุณີ
໖. ภิกษุໄປສຳນັກເດັຽຣະຖີຍ໌
໗. ภิกษุໄປໂຮງฉัน
໘. ภิกษุຍ່າງຕາມທາງທີ່ຜ່ານໝູ່ບ້ານ
໙. ภิกษุເຂົ້າໄປໃນຄາວມີເຫຕຸຂັດຂ້ອງ
໑໐. ภิกษุວິກົລຈິຕ
໑໑. ภิกษุຕົ້ນບັນຍັດ

ວິກາລຄາມປເວສນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓທ໌] ໙. ຣຕນວັຄ ໔. ສູຈິฆຣສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໔. ສູຈິฆຣສິກຂາບົທ

ວ່າດ້ວຍການທຳກັບເຂັມດ້ວຍກະດູກເປັນຕົ້ນ

ເຣື້ອງภิกษุຫລາຍຣູບ

[໕໑໖] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ນິໂຄຣລາຣາມ ເຂຕກຸງກບິລພັສດຸ໌ ແຄວ້ນສັກກະ ຄັ້ງນັ້ນ ນາຍຊ່າງແກະສລັກງາຊ້າງຄົນນຶ່ງປວາຣຕາภิกษุທັງຫລາຍໄວ້ວ່າ "ຜູ້ຂ້າຈະຖວາຍກັບເຂັມແກ່ພຣະຄຸຕເຈົ້າຜູ້ຕ້ອງການກັບເຂັມ" ຄັນແລ້ວภิกษุເຫລົ່ານັ້ນຈຶ່ງອອກປາກຂໍກັບເຂັມເປັນອັນມາກ ພວກภิกษุຜູ້ມີກັບເຂັມຂນາດນ້ອຍ ກໍອອກປາກຂໍກັບເຂັມຂນາດໃຫຍ່ ພວກภิกษุຜູ້ມີກັບເຂັມຂນາດໃຫຍ່ ກໍອອກປາກຂໍກັບເຂັມຂນາດນ້ອຍ ນາຍຊ່າງມົວທຳກັບເຂັມເປັນອັນມາກໃຫ້ภิกษุທັງຫລາຍຈົນບໍ່ສາມາດທຳການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພກໍບໍ່ພໍ ທັງບຸຕຣກັຣຍາກໍເລີຍລຳບາກໄປດ້ວຍ ຄົນທັງຫລາຍຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກສມຕະເຊື້ອ

ສາຍສາກຍບຸຕຣຈຶ່ງບໍ່ຮູ້ປະມານ ອອກປາກຂໍກັບເຂັມເປັນອັນມາກລະ ນາຍຊ່າງມືອທຳກັບເຂັມເປັນອັນມາກໃຫ້ກິກຂຸເຫລົ່ານີ້ຈົນບໍ່ສາມາດທຳການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພກໍບໍ່ພໍ ທັງບຸຕຣກັຣຍາກໍເລີຍລຳບາກໄປດ້ວຍ”

ພວກກິກຂຸໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດກິກຂຸທັງຫລາຍ ຈຶ່ງບໍ່ຮູ້ຈັກປະມານ ອອກປາກຂໍກັບເຂັມເປັນອັນມາກລະ” ຄັນກິກຂຸທັງຫລາຍ ຕຳຫນິກິກຂຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງໝ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງໝ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຂຸທັງຫລາຍວ່າ “ກິກຂຸທັງຫລາຍ ຊາບວ່າ ພວກກິກຂຸບໍ່ຮູ້ຈັກປະມານ ອອກປາກຂໍກັບເຂັມເປັນອັນມາກແມ່ນແທ້ບໍ” ກິກຂຸທັງຫລາຍທູລຮັບວ່າ “ແມ່ນແທ້ພຣະພຸທສເຈົ້າຂ້າ” ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ “ຯລຯ ກິກຂຸທັງຫລາຍ ຈັ່ງໃດໂມຄບຸຣຸຫເຫລົ່ານັ້ນ ຈຶ່ງບໍ່ຮູ້ຈັກປະມານ ອອກປາກຂໍກັບເຂັມເປັນອັນມາກລະ ກິກຂຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໑໗] ກໍ ກິກຂຸໃດທຳກັບເຂັມດ້ວຍກະດູກ ດ້ວຍງາ ຫລືດ້ວຍເຂົາ ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າເກທນກະ໑

ເຣື້ອງກິກຂຸຫລາຍຮູບ ຈົບ

ສິກຂາບົທວິກັງຄ໌

[໕໑໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ກິກຂຸ ມີອຣິບາຍວ່າ ຊື່ວ່າກິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຂຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ກະດູກ ໄດ້ແກ່ ກະດູກຊນິດໃດຊນິດນຶ່ງ
ທີ່ຊື່ວ່າ ງາ ພຣະຜູ້ມີພຣະກາຄຕຣັສຫມາຍເຖິງງາຊ້າງ

ທີ່ຊື່ວ່າ ເຂົາ ໄດ້ແກ່ ເຂົາຊນິດໃດຊນິດນຶ່ງ
ຄຳວ່າ ທຳ ຄື ກິກບຸທຳເອງ ຫລືໃຊ້ໃຫ້ທຳ ຕ້ອງອາບັຕິທຸກກຝໃນຂຕະທີ່ທຳ ຕ້ອງອາບັຕິ ປາຈິຕຕີຍ໌ເພາະໄດ້ມາ ຕ້ອງທຳລາຍແລ້ວສະແດງອາບັຕິ

ເຊີງອັນຖະ :

໑ ຄຳວ່າ "ເກທນກະ" ເປັນຊື່ສະເພາະອາບັຕິປາຈິຕຕີຍ໌ສິກຂາບົທນີ້ ແປວ່າ ມີການທຳລາຍ ຄືຕ້ອງ ທຳລາຍວັຕຖຸກ່ອນ ຈຶ່ງສະແດງອາບັຕິຕກ (ວິ. ອ. ໒/໕໑໗/໔໓໗)

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັດຫ໌] ໙. ຣຕນວັຄ ໔. ສູຈິຆຣສິກຂາບົທ ອນາປັຕຕິ ວາຣ

ບົທກາຊນີຍ໌

ປາຈິຕຕີຍ໌

[໕໑໙] ກິກບຸທຳກັບເຂັມທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ກິກບຸໃຊ້ຜູ້ອື່ນໃຫ້ທຳກັບເຂັມທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ກິກບຸທຳກັບເຂັມທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ກິກບຸໃຊ້ຜູ້ອື່ນໃຫ້ທຳກັບເຂັມທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຝ

ກິກບຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຝ
ກິກບຸໄດ້ກັບເຂັມທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກຝ

ອນາປັຕຕິວາຣ

ກິກບຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໒໐] ໑. ກິກບຸທຳລູກດຸມ
໒. ກິກບຸທຳຕະບັນໄຟ
໓. ກິກບຸທຳລູກຖວິນ (ຫ່ວງຮ້ອຍສາຍປຣະຄົດ)
໔. ກິກບຸທຳກລັກຍາຕາ

໕. ກິກຂຸທຳໄມ້ປ້າຍຍາຕາ

໖. ກິກຂຸທຳຝັກມີດ

໗. ກິກຂຸທຳກຣະບອກກອງນ້ຳ

໘. ກິກຂຸວິກິລຈິຕ

໙. ກິກຂຸຕົ້ນບັນຍັດ

ສູຈິພຣສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕພ໌] ໙. ຣຕນວັຄ ໕. ນັຢຈປີກຸສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໕. ນັຢຈປີກຸສິກຂາບົທ

ວ່າດ້ວຍການທຳຕຽງແລະຕັ່ງ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໔໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣນອນເທິງຕຽງສູງ ຄາວນັ້ນ ພຣະຜູ້ມີພຣະກາຄສເດັຈຈາຣິກຕາມເສນາສນະພ້ອມກິກຂຸຫລາຍຮູບ ຜ່ານໄປທາງທີ່ຢູ່ຂອງທ່ານ ອຸປນັນທສາກບຸຕຣ ທ່ານໄດ້ເຫັນພຣະຜູ້ມີພຣະກາຄສເດັຈມາແຕ່ໄກ ຄັນເຫັນແລ້ວໄດ້ເຂົ້າໄປຂາບ ທູລພຣະຜູ້ມີພຣະກາຄດັ່ງນີ້ວ່າ "ຂໍເຊີນສເດັຈທອດພຣະເນຕຣຕຽງນອນຂອງຂ້າພຣະອົງຄ໌ເຖີດ ພຣະພຸທຣເຈົ້າຂ້າ" ຄັນແລ້ວ ພຣະຜູ້ມີພຣະກາຄໄດ້ສເດັຈກັບຈາກທີ່ນັ້ນແລ້ວຮັບສັ່ງກັບກິກຂຸທັງ ຫລາຍວ່າ "ກິກຂຸທັງຫລາຍ ພວກທ່ານເພິງຮູ້ຈັກໂມພບຸຣຸຜເພາະທີ່ຢູ່ອາສັຍ" ຄັ້ງນັ້ນ ພຣະຜູ້ມີພຣະ ກາຄ ໄດ້ຊົງຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຕຣັສໂທຜແຫ່ງຄວາມ ເປັນຜູ້ລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[៥៤៨] ກໍ ກິກษຸຜູ້ຈະທໍາຕຽງຫລືຕັ່ງໃຫມ່ ເພິງເຮັດໃຫ້ມີຕີນພຽງ ໆ ນິ້ວ ໂດຍນິ້ວສຸຄຕ໑ ນັບແຕ່ແມ່ແຄຣ່ລົງມາ ເຮັດໃຫ້ເກີນກວ່າກໍາຫນົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າເฉທນກະ៤

ເຣື່ອງພຣະອຸປນັນທສາກຍບຸຕຣ ຈົບ

ເຊີງອັນຖະ :

໑ ໑ ນິ້ວສຸຄຕ ເທົ່າກັບ ៣ ນິ້ວຂອງຄົນປານກາງໃນບັດນີ້ (ສຸຄຕງຄລໍ ນາມ ອິທານິ ມຊຸฌິມສຸສ ປຸຣິສສຸສ ຕິດໂ ວງຄຸລານິ -ກງຂາ. ຜີກາ ៤ລ໗)

៤ ຄໍາວ່າ "ເฉທນກະ" ເປັນຊື່ສະເພາະຂອງອາບັຕິປາຈິຕຕີຍ໌ສິກຂາບົທນີ້ ແປວ່າ ມີການຕັດອອກ ຄື ຕ້ອງຕັດວັຕຖຸກ່ອນ ຈຶ່ງສະແດງອາບັຕິຕກ (ວິ. ວ. ៤/៥៤៨/៤៣ລ)

ພຣະວິນັຍປິດົກ ມຫາວິກັງຄ໌ [៥. ປາຈິຕຕີຍກັณฑ໌] ລ. ຣຕນວັຄ ៥. ມັຍຈປີຖສິກຂາບົທ ບົທກາຊນີຍ໌

ສິກຂາບົທວິກັງຄ໌

[៥៤៣] ທີ່ຊື່ວ່າ ໃຫມ່ ພຣະຜູ້ມີພຣະກາຄຕຣັສຫມາຍເຖິງການທໍາຂຶ້ນມາ(ໃຫມ່)

ທີ່ຊື່ວ່າ ຕຽງ ໄດ້ແກ່ ຕຽງ ៤ ຊນິດ ຄື (໑) ຕຽງມີແມ່ແຄຣ່ສອດເຂົ້າໃນຂາ໑ (៤) ຕຽງມີແມ່ແຄຣ່ຕິດຢູ່ກັບຂາ (៣) ຕຽງມີຂາດັ່ງກ້າມປູ (៤) ຕຽງມີຂາຈິດແມ່ແຄຣ່

ທີ່ຊື່ວ່າ ຕັ່ງ ມີ ៤ ຊນິດ ຄື (໑) ຕັ່ງມີແມ່ແຄຣ່ສອດເຂົ້າໃນຂາ (៤) ຕັ່ງມີແມ່ແຄຣ່ຕິດຢູ່ກັບຂາ (៣) ຕັ່ງມີຂາດັ່ງກ້າມປູ (៤) ຕັ່ງມີຂາຈດແມ່ແຄຣ່

ຄໍາວ່າ ຜູ້ຈະທໍາ ຄື ກິກษຸທໍາເອງຫລືໃຊ້ຄົນອື່ນໃຫ້ທໍາ

ຄໍາວ່າ ເພິງເຮັດໃຫ້ມີຕີນພຽງ ໆ ນິ້ວ ໂດຍນິ້ວສຸຄຕ ນັບແຕ່ແມ່ແຄຣ່ລົງມາ ຄື ເວັ້ນຣະຍະໃຕ້ແມ່ແຄຣ່ລົງມາກິກษຸທໍາເອງຫລືໃຊ້ຜູ້ອື່ນໃຫ້ທໍາເກີນກໍາຫນົດນັ້ນ ຕ້ອງອາບັຕິທຸກກฎ ໃນຂณະທີ່ທໍາ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກແລ້ວສະແດງອາບັຕິ

ບົທກາຊນີຍ໌

ປາຈິຕຕີຍ໌

[໕໒໔] ພິກຂຸທຳຕຽງຫລືຕັ່ງທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິດຕິຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິດຕິຍ໌
ພິກຂຸທຳຕຽງຫລືຕັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິດຕິຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິດຕິຍ໌

ເຊີງອັນຖະ :

໑ ຕຽງມີແມ່ແຄຣ່ສອດເຂົ້າໃນຂາ ເທົ່າກັບພາສາອັງກຣິສວ່າ "Long one - ຕຽງຍາວ" ຕຽງມີແມ່ແຄຣ່ຕິດຢູ່ກັບຂາ ຄື "One with slats - ຕຽງແຜ່ນໄມ້ຣະແນງ" ຕຽງມີຂາດັ່ງກ້າມປູ "One with curved legs - ຕຽງມີຂາໂຄ້ງ" ຕຽງມີຂາຈົດແມ່ແຄຣ່ ຄື "One with removable legs - ຕຽງມີຂາຖອດໄດ້" (ດູ The Book of the Discipline, VoL. III, P. 91, PTS.)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕິຍກັຕຟ໌] ໙. ຣຕນວັຄ ໕. ມັຢຈປິກຸສິກຂາບົທ ອນາປັຕຕິວາຣ

ທຸກກຕ

ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ
ພິກຂຸໄດ້ຕຽງຫລືຕັ່ງທີ່ຜູ້ອື່ນທຳເສັດແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໒໕] ໑. ພິກຂຸທຳຕຽງຕັ່ງໄດ້ຂນາດ
໒. ພິກຂຸທຳຕຽງຕັ່ງຕ່ຳກວ່າຂນາດ
໓. ພິກຂຸໄດ້ຕຽງຕັ່ງທີ່ຜູ້ອື່ນທຳເກີນຂນາດມາຕັດໃຫ້ໄດ້ຂນາດກ່ອນແລ້ວໃຊ້
໔. ພິກຂຸວິກົລຈິຕ
໕. ພິກຂຸຕົ້ນບັນຍັດ

ມັຢຈປິກຸສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓຑ໌] ໙. ຣຕນວັຄ ໖. ຕູໂລນັທລສິກຂາບົທ ນິທານ ວັຕຖຸ

໙. ຣຕນວັຄ

໖. ຕູໂລນັທລສິກຂາບົທ

ວ່າດ້ວຍການທຳຕຽງຕັ່ງຫຸ້ມນຸ່ນ

ເຣື້ອງພຣະຈັພພັຄຄີຍ໌

[໕໔໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຣເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸຈັພພັຄຄີຍ໌ໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່໑ ຄົນທັງຫລາຍໄປທ່ຽວຈາຣິກໄປຕາມວິຫາຣເຫັນ ຈຶ່ງຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດພຣະສມຕະເຊື້ອສາຍສາກຍບຸຕຣຈຶ່ງໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ ເຫມືອນພວກຄຣືຫັສຖ໌ທີ່ບໍຣິໂພຄກາມລະ" ພິກຂຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸຈັພພັຄຄີຍ໌ຈຶ່ງໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ລະ" ຄັນພິກຂຸທັງຫລາຍຕຳຫນິພວກພິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸຈັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານໃຊ້ໃຫ້ທຳຕຽງແດ່ ຕັ່ງແດ່ຫຸ້ມນຸ່ນແມ່ນແທ້ບໍ" ພວກພິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຣເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຣເຈົ້າຊົງຕຳຫນິວ່າ "ຯລຯ ໂມຄພບຸຣຸຑທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ລະ ໂມຄພບຸຣຸຑທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"

ເຊີງອັນຖະ :

໑ ຕູໂລນທັທ໌, ຕູລໍ ປກ໌ຂິປິຕ໌ວາ ອຸປຣິ ຈິມິລິກາຍ ໂອນທັທ໌ ທີ່ຊື່ວ່າຫຸ້ມນຸ່ນ ຄືໃສ່ນຸ່ນແລ້ວຫຸ້ມ

ດ້ານເຫຼີງດ້ອຍຜ້າຮອງພື້ນ (ວິ. /໔໓໙)ອ. ໒/໕໔໓

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໙. ຣຕນວັຄ ໓. ຕູໂລນັທລສິກຂາບົທ ບົທ ກາຊນີຍ໌

ພຣະບັນຍັດ

[໕໔໗] ກໍ ພິກຂຸໃດທໍາຕຽງ ຫລືຕັ່ງຫຸ້ມນຸ່ນ ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າອຸທທາລນກະ໑

ເຣື້ອງພຣະລັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໕໔໘] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຕຽງ ໄດ້ແກ່ ຕຽງ ໔ ຊນິດ ຄື (໑) ຕຽງມີແມ່ແຄຣ່ສອດເຂົ້າໃນຂາ

(໒) ຕຽງມີແມ່ແຄຣ່ຕິດຢູ່ກັບຂາ (໓) ຕຽງມີຂາດັ່ງກ້າມປູ (໔) ຕຽງມີຂາຈົດແມ່ແຄຣ່

ທີ່ຊື່ວ່າ ຕັ່ງ ໄດ້ແກ່ ຕັ່ງ ໔ ຊນິດ ຄື (໑) ຕັ່ງມີແມ່ແຄຣ່ສອດເຂົ້າໃນຂາ (໒) ຕັ່ງມີແມ່ແຄຣ່ຕິດຢູ່ກັບຂາ (໓) ຕັ່ງມີຂາດັ່ງກ້າມປູ (໔) ຕັ່ງມີຂາຈດແມ່ແຄຣ່

ທີ່ຊື່ວ່າ ນຸ່ນ ໄດ້ແກ່ ນຸ່ນ ໓ ຊນິດ ຄື (໑) ນຸ່ນຈາກຕົ້ນໄມ້ (໒) ນຸ່ນຈາກເຄືອໄມ້ (໓) ນຸ່ນຈາກຫຍ້າເລາ

ຄໍາວ່າ ທໍາ ຄື ພິກຂຸທໍາເອງຫລືໃຊ້ຜູ້ອື່ນໃຫ້ທໍາ ຕ້ອງອາບັຕິທຸກກົຖ ໃນຂຓະທີ່ທໍາ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຣື້ອເສັຽກ່ອນແລ້ວສະແດງອາບັຕິ

ບົທກາຊນີຍ໌

ປາຈິຕຕີຍ໌

[໕໔໙] ພິກຂຸທໍາຕຽງຫລືຕັ່ງຫຸ້ມນຸ່ນທີ່ຕົນທໍາຄ້າງໄວ້ຕໍ່ຈົນສໍາເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ຄຳວ່າ "ອຸທຫາລນກະ" ເປັນຊື່ສະເພາະຂອງອາບັຕິປາຈິຕຕິຍ໌ສິກຂາບົທນີ້ ແປວ່າ ມີການຮື້ອອກ ຄື ຕ້ອງຮື້ອອກເສັຽກ່ອນຈຶ່ງສະແດງອາບັຕິຕກ

ກິກຂຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕິຍ໌

ກິກຂຸທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕິຍ໌

ກິກຂຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕິຍ໌

ທຸກກຏ

ກິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຏ

ກິກຂຸໄດ້ຕຽງຕັ່ງທີ່ຜູ້ອື່ນທຳສຳເຣັຈແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຏ

ອນາປັດຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[๕๖໐] ໑. ກິກຂຸທຳສາຍຮັດເຂົ່າຫຸ້ມນຸ່ນ

໒. ກິກຂຸທຳປຣະຄດແອວຫຸ້ມນຸ່ນ

໓. ກິກຂຸທຳສາຍໂຍກບາຕຣຫຸ້ມນຸ່ນ

໔. ກິກຂຸທຳຖົງບາຕຣຫຸ້ມນຸ່ນ

໕. ກິກຂຸທຳຜ້າກອງນ້ຳຫຸ້ມນຸ່ນ

໖. ກິກຂຸທຳຫມອນຫຸ້ມນຸ່ນ

໗. ກິກຂຸໄດ້ຕຽງຕັ່ງຫຸ້ມນຸ່ນທີ່ຜູ້ອື່ນທຳສຳເຣັຈແລ້ວມາທຳລາຍກ່ອນໃຊ້

໘. ກິກຂຸວິກົລຈິຕ

໙. ກິກຂຸຕົ້ນບັນຍັດ

ຕູໂລນັທລສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕທ໌] ໙. ຣຕນວັຄ ໗. ນິສີທນສິກຂາບົທ

ນິທານວັຕຖຸ

໙. ຣຕນວັຄ

໗. ນິສີທນສິກຂາບົທ
ວ່າດ້ວຍການທຳຜ້າຮອງນັ່ງ

ເຣື້ອງພຣະຈັພພັຄຄີຍ໌
[໕໓໑] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫົກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າຮອງນັ່ງສຳລັບກິກຂຸທັງ ຫລາຍ ພວກກິກຂຸຈັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າຮອງນັ່ງ" ຈຶ່ງໃຊ້ຜ້າຮອງ ນັ່ງບໍ່ໄດ້ຂນາດ ເມື່ອປູເທິງຕຽງແດ່ **ເທິງຕັ່ງ**ແດ່ ຈຶ່ງຫ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ບັນດາກິກຂຸ ຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຂຸຈັພພັຄຄີຍ໌ຈຶ່ງໃຊ້ຜ້າ ຮອງນັ່ງບໍ່ໄດ້ຂນາດລະ" ຄັນກິກຂຸທັງຫລາຍຕຳຫນິພວກກິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງฆ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງฆ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກຂຸຈັພພັຄຄີຍ໌ວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານໃຊ້ຜ້າຮອງນັ່ງບໍ່ໄດ້ຂນາດແມ່ນແທ້ບໍ" ພວກກິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງ ຕຳຫນິວ່າ "ຯລຯ ໂມฆບຸຣຸຊທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ຜ້າຮອງນັ່ງບໍ່ໄດ້ຂນາດລະ ໂມฆ ບຸຣຸຊທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕฑ໌] ໙. ຣຕນວັຄ ໗. ນິສີທນສິກຂາບົທ
ພຣະອນຸບັນຍັດ

ພຣະບັນຍັດ
ກໍ ກິກຂຸຜູ້ຈະທຳຜ້າຮອງນັ່ງ ເພິງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງຄືບ

ເຄິ່ງ ໂດຍຄືບສຸຄຕ໑ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕິຍ໌ທີ່ຊື່ວ່າ ເຉທນກະ ສິກຂາບົທນີ້ພຣະຜູ້ມີພຣະກາຄຊົງບັນຍັດໄວ້ແກ່ກິກຂຸທັງຫລາຍຢ່າງນີ້

ເລື້ອງພຣະຈັພພັຄຄີຍ໌ ຈົບ

ເລື້ອງພຣະອຸທາຍີ

[໕໖໔] ສມັຍນັ້ນ ທ່ານພຣະອຸທາຍີຮູບຮ່າງໃຫຍ່ ປູຜ້າຮອງນັ່ງເບື້ອງພຣະພັກຕຣ໌ພຣະຜູ້ມີພຣະກາຄ ແລ້ວນັ່ງດຶງຊາຍຜ້າອອກຮອບໆພຣະຜູ້ມີພຣະກາຄໄດ້ຕຣັສຖາມທ່ານພຣະອຸທາຍີດັ່ງນີ້ວ່າ "ອຸທາຍີ ເພາະເຫຕຸໃດ ທ່ານຈຶ່ງປູຜ້າຮອງນັ່ງແລ້ວດຶງຊາຍຜ້າອອກຮອບໆເຫມືອນຊ່າງທຳໜັງເກົ່າລະ" ທ່ານພຣະອຸທາຍີຂາບທູລວ່າ "ຈິງດັ່ງນັ້ນ ພຣະພຸທຂເຈົ້າຂ້າ ກໍພຣະຜູ້ມີພຣະກາຄຊົງອນຸຍາຕຜ້າຮອງນັ່ງສຳລັບກິກຂຸເລັກເກີນໄປ"

ພຣະພຸທຂານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະກາຄຊົງສະແດງລັມມີກຖາເພາະເລື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບກິກຂຸທັງຫລາຍວ່າ "ກິກຂຸທັງຫລາຍ ເຮົາອນຸຍາຕຊາຍຜ້າຮອງນັ່ງເພີ້ມອີກ ໑ ຄືບ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໖໕] ອີກຢ່າງນຶ່ງ ກິກຂຸຜູ້ຈະທຳຜ້າຮອງນັ່ງ ເພິງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງຄືບເຄິ່ງ ຊາຍຄືບນຶ່ງ ໂດຍຄືບສຸຄຕ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕິຍ໌ທີ່ຊື່ວ່າເຉທນກະ

ເລື້ອງພຣະອຸທາຍີ ຈົບ

ເຊີງອັນຖະ :

໑ ຄືບສຸຄຕ ເທົ່າກັບ ໓ ຄືບຂອງຄົນປານກາງໃນບັດນີ້ ຫລືເທົ່າກັບ ໑ ສອກຄືບຂອງຊ່າງໄມ້ (ວິ. ອ. ໔/໓໔໗-໙/໓໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັຓທ໌] ໙. ຣຕນວັຄ ໗. ນິສີທນສິກຂາບົທ ອນາປັຕຕິວາຣ

ສິກຂາບົທວິພັງຄ໌

[໕໖໔] ທີ່ຊື່ວ່າ ຜ້າຮອງນັ່ງ ພຣະຜູ້ມີພຣະກາຄຕຣັສຫມາຍເຖິງຜ້າຮອງນັ່ງທີ່ມີຊາຍ

ຄຳວ່າ ຜູ້ຈະທຳ ຄື ກິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງໃຫ້ເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໒ ຄືບ ກວ້າງຄືບເຄິ່ງ ຊາຍຄືບນຶ່ງ ໂດຍຄືບສຸຄຕ ກິກຂຸທຳເອງຫລືໃຊ້ໃຫ້ຜູ້ອື່ນທຳເກີນຂນາດນັ້ນ ຕ້ອງອາບັຕິທຸກກຕເພາະທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດເສັຽກ່ອນແລ້ວສະແດງອາບັຕິ

ບົທກາຊນີຍ໌

ປາຈິຕຕີຍ໌

[໕໖໕] ກິກຂຸທຳຜ້າຮອງນັ່ງ(ທີ່ເກີນຂນາດ)ທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ກິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າຮອງນັ່ງທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ກິກຂຸທຳຜ້າຮອງນັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ກິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າຮອງນັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ກິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳຜ້າຮອງນັ່ງ ເພື່ອປໂຍຄແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ

ກິກຂຸໄດ້ຜ້າຮອງນັ່ງທີ່ຜູ້ອື່ນທຳສຳເຣັຈແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໖໖] ໑. ກິກຂຸທຳຜ້າຮອງນັ່ງໄດ້ຂນາດ

໒. ກິກຂຸທຳຜ້າຮອງນັ່ງຕ່ຳກວ່າຂນາດ

໖. ກິກຂຸໄດ້ຜ້າຮອງນັ່ງທີ່ຜູ້ອື່ນທຳເກີນຂນາດມາຕັດແລ້ວໃຊ້

໔. ກິກຂຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອຫລືປອກຫມອນ

໕. ກິກບຸວິກົລຈິຕ
໖. ກິກບຸຕົ້ນບັນຍັດ

ນິສີທນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໙. ຣຕນວັຄ ໘. ກັຕທຸປຜິຈສາທິສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໘. ກັຕທຸປຜິຈສາທິສິກຂາບົທ
ວ່າດ້ວຍການທຳຜ້າປິດຝີ

ເລື້ອງພຣະຈັພພັຄຄີຍ໌

[໕໖໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະກາຄຊົງອນຸຍາຕ ຜ້າປິດຝີສຳລັບກິກບຸທັງຫລາຍ ພວກກິກບຸຈັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າປິດຝີ" ຈຶ່ງໃຊ້ຜ້າປິດຝີບໍ່ໄດ້ຂນາດ ປ່ອຍຫ້ອຍຂ້າງໜ້າແດ່ ຂ້າງຫລັງແດ່ທຽວໄປ ບັນດາກິກບຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະ ນາມ ໂພນທະນາວ່າ "ຈັ່ງໃດພວກກິກບຸຈັພພັຄຄີຍ໌ຈຶ່ງໃຊ້ຜ້າປິດຝີບໍ່ໄດ້ຂນາດລະ" ຄັນກິກບຸທັງ ຫລາຍຕຳໜິພວກກິກບຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະ ກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ກິກບຸຈັພພັຄຄີຍ໌ວ່າ "ກິກບຸທັງຫລາຍ ຊາບວ່າ ພວກທ່ານໃຊ້ຜ້າປິດຝີບໍ່ໄດ້ຂນາດ ແມ່ນແທ້ບໍ" ພວກກິກບຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງ ຕຳໜິວ່າ "ຯລຯ ໂມฆບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ຜ້າປິດຝີບໍ່ໄດ້ຂນາດລະ ໂມฆ ບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສຫລືເຮັດ

ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕິຍກັຕໍ] ໙. ຣຕນວັຄ ໗. ກັດທຸປະຕິຈາທີສິກຂາບົທ ບົທກາຊນີຍ໌

ພຣະບັນຍັດ

[໕໓໗] ກໍ ພິກຂຸຜູ້ທຳຜ້າປິດຝີ ຕ້ອງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງ ໒ ຄືບ ໂດຍຄືບສຸຄຕ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າເຈທນກະ

ເຣື່ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໓໙] ທີ່ຊື່ວ່າ ຜ້າປິດຝີ ໄດ້ແກ່ ຜ້າທີ່ຊົງອນຸຍາຕສຳລັບພິກຂຸຜູ້ອາພາຣ ຄື ເປັນໂຣຄຝີສຸກໃສ ໂຣຄມີນ້ຳຫນອງ ໂຣຄນ້ຳເຫລືອງ ຫລືໂຣຄຝີດາຫ ໃຕ້ສາຍບືລົງໄປເຫນືອຫົວເຂົ່າຂຶ້ນມາ ເພື່ອໃຊ້ປິດແຜລ

ຄຳວ່າ ຜູ້ຈະທຳ ຄື ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພິ່ງໃຫ້ເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງ ໒ ຄືບ ໂດຍຄືບສຸຄຕ ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເກີນຂນາດນັ້ນ ຕ້ອງອາບັຕິທຸກກຸຏ ໃນຂຕະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກເສັຽກ່ອນແລ້ວສະແດງອາບັຕິ

ບົທກາຊນີຍ໌

ປາຈິຕຕີຍ໌

[໕໔໐] ພິກຂຸທຳຜ້າປິດ(ເກີນຂນາດ)ຝີທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າປິດຝີທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ພິກຂຸທຳຜ້າປິດຝີທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າປິດຝີທີ່ຜູ້ອື່ນທຳຄ້າງໄວ້ທຳຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸຖ
ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຸຖ
ພິກຂຸໄດ້ຜ້າປິດຝີທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກຸຖ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໑] ໑. ພິກຂຸທຳຜ້າປິດຝີໄດ້ຂນາດ
໒. ພິກຂຸທຳຜ້າປິດຝີຕ່ຳກວ່າຂນາດ
໓. ພິກຂຸໄດ້ຜ້າປິດຝີທີ່ຜູ້ອື່ນທຳໄວ້ເກີນຂນາດມາຕັດແລ້ວໃຊ້
໔. ພິກຂຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອ ຫລືປອກຫມອນ
໕. ພິກຂຸວິກົລຈິຕ
໖. ພິກຂຸຕົ້ນບັນຍັດ

ກັຕຫຸປຜິຈຊາທິສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຕຫ໌] ໙. ຣຕນວັຄ ໙. ວັສສິກສາຜິກາສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໙. ວັສສິກສາຜິກາສິກຂາບົທ
ວ່າດ້ວຍກາຣທຳຜ້າອາບນ້ຳຝົນ

ເຣື້ອງພຣະຈັພພັຄຄີຍ໌
[໕໔໒] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຕ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າອາບນ້ຳຝົນສຳລັບກິກຂຸທັງ ຫລາຍ ພວກກິກຂຸຈັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະກາຄຊົງອນຸຍາຕຜ້າອາບນ້ຳຝົນ" ຈຶ່ງໃຊ້ຜ້າ ອາບນ້ຳຝົນບໍ່ໄດ້ຂນາດ ປ່ອຍຫ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ທຽວໄປ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກກິກຂຸຈັພພັຄຄີຍ໌ຈຶ່ງໃຊ້ຜ້າອາບນ້ຳຝົນບໍ່

ໄດ້ຂນາດລະ" ຄັນກິກຂຸທັງຫລາຍຕຳຫນິພວກກິກຂຸຈັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກກິກຂຸຈັພພັຄຄີຍ໌ວ່າ "ກິກຂຸທັງຫລາຍ ຊາບວ່າ ພວກທ່ານໃຊ້ຜ້າອາບນ້ຳຝົນບໍ່ໄດ້ຂນາດ ແມ່ນແທ້ບໍ" ພວກກິກຂຸຈັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທສເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈົ່ງໃດພວກທ່ານຈຶ່ງໃຊ້ຜ້າອາບນ້ຳຝົນບໍ່ໄດ້ຂນາດລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໓] ກໍ ກິກຂຸຜູ້ຈະທຳຜ້າອາບນ້ຳຝົນ ເພິ່ງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນຄື ຍາວ ໖ ຄືບ ກວ້າງ ໒ ຄືບເຄິ່ງ ໂດຍຄືບສຸຄຕ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າເຈທນກະ

ເຣື້ອງພຣະຈັພພັຄຄີຍ໌ ຈົບ

ສິກຂາບົທວິກັງຄ໌

[໕໔໔] ທີ່ຊື່ວ່າ ຜ້າອາບນ້ຳຝົນ ໄດ້ແກ່ ຜ້າທີ່ຊົງອນຸຍາຕໄວ້ໃຫ້ໃຊ້ໄດ້ຕລອດ ໔ ເດືອນໃນຣະດູຝົນ

ຄຳວ່າ ຜູ້ຈະທຳ ຄື ກິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງໃຫ້ເຮັດໃຫ້ໄດ້ຂນາດ ຄືຍາວ ໖ ຄືບ ກວ້າງ ໒ ຄືບເຄິ່ງ ໂດຍຄືບສຸຄຕ ກິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເກີນຂນາດນັ້ນ ຕ້ອງອາບັຕິທຸກກຄໃນຂຕະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກແລ້ວສະແດງອາບັຕິ

ບົທກາຊນີຍ໌

ປາຈິຕຕີຍ໌

[໕໔໕] ກິກຂຸທຳຜ້າອາບນ້ຳຝົນ(ເກີນຂນາດ)ທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ກິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າອາບນ້ຳຝົນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ກິກຂຸທຳຜ້າອາບນ້ຳຝົນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ກິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າອາບນ້ຳຝົນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໙. ຣຕນວັຄ ໙. ວັສສິກສາຝິກາສິກຂາບົທ ອນາປັຕຕິວາຣ

ທຸກກຝ

ກິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຝ
ກິກຂຸໄດ້ຜ້າອາບນ້ຳຝົນທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກຝ

ອນາປັຕຕິວາຣ

ກິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໖] ໑. ກິກຂຸທຳຜ້າອາບນ້ຳຝົນໄດ້ຂນາດ
໒. ກິກຂຸທຳຜ້າອາບນ້ຳຝົນຕໍ່າກວ່າຂນາດ
໓. ກິກຂຸໄດ້ຜ້າອາບນ້ຳຝົນທີ່ຜູ້ອື່ນທຳເກີນຂນາດມາຕັດແລ້ວໃຊ້
໔. ກິກຂຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອຫລືປອກຫມອນ
໕. ກິກຂຸວິກົລຈິຕ
໖. ກິກຂຸຕົ້ນບັນຍັດ

ວັສສິກສາຝິກາສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕີຍກັຕຫ໌] ໙. ຣຕນວັຄ ໑໐. ນັນທສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໑໐. ນັນທສິກຂາບົທ

ວ່າດ້ວຍພຣະນັນທະ

ເຣື້ອງພຣະນັນທະ

[໕໔໗] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຣາມຂອງອນາຖບິຓ ຑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະນັນທະ ໂອຣົສພຣະມາຕຸຈສາຂອງພຣະຜູ້ມີພຣະກາຄ ມີຮູບງາມ ຫນ້າເບິ່ງ ຫນ້າຊົມ ຮ່າງຕ່ຳກວ່າພຣະຜູ້ມີພຣະກາຄ ໔ ອົງຄຸລີ ທ່ານພຣະນັນທະນັ້ນຫົ່ມ ຈີວອນມີຂນາດເທົ່າຈີວອນພຣະສຸຄຕ ກິກຂຸທັງຫລາຍຜູ້ເປັນພຣະເຖຣະໄດ້ເຫັນທ່ານພຣະນັນທະ ຍ່າງມາແຕ່ໄກ ຄັນເຫັນແລ້ວຈຶ່ງລຸກຂຶ້ນຈາກອາສນະດ້ວຍຄິດວ່າ "ພຣະຜູ້ມີພຣະກາຄສເດັຈມາ" ເມື່ອ ທ່ານພຣະນັນທະເຂົ້າມາໃກ້ ຈຶ່ງຈຳໄດ້ ແລ້ວພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານ ພຣະນັນທະຈຶ່ງຫົ່ມຈີວອນມີຂນາດເທົ່າຈີວອນພຣະສຸຄຕລະ" ຄັນກິກຂຸທັງຫລາຍຕຳຫນິທ່ານພຣະນັນ ທະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະນັນທະວ່າ "ນັນທະ ຊາບວ່າ ທ່ານຫົ່ມຈີວອນມີຂນາດເທົ່າສຸຄຕຈີວອນແມ່ນແທ້ບໍ" ທ່ານ ພຣະນັນທະທູລຮັບວ່າ "ແມ່ນແທ້ພຣະພຸທລເຈົ້າຂ້າ" ພຣະຜູ້ມີພຣະກາຄພຸທລເຈົ້າຊົງຕຳຫນິວ່າ "ฯລฯ ນັນທະ ຈັ່ງໃດທ່ານຈຶ່ງຫົ່ມຈີວອນມີຂນາດເທົ່າສຸຄຕຈີວອນລະ ນັນທະການກະທຳຢ່າງນີ້ ບໍ່ ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ฯລฯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [໕. ປາຈິຕຕິຍກັຓຫ໌] ໙. ຣຕນວັຄ ໑໐. ນັນທສິກຂາບົທ ບົທ ກາຊນີຍ໌

ພຣະບັນຍັດ

[໕໔໘] ກໍ ກິກຂຸທຳຈີວອນມີຂນາດເທົ່າກັບສຸຄຕຈີວອນ ຫລືໃຫຍ່ກວ່າ ຕ້ອງອາບັຕິປາຈິຕຕີຍ໌

ທີ່ຊື່ວ່າເຈທນກະ ຂນາດເທົ່າສຸຄຕຈີວອນຂອງສຸຄຕໃນຂໍ້ນັ້ນ ຄື ຍາວ ໙ ຄືບ ກວ້າງ ໖ ຄືບ ໂດຍຄືບສຸຄຕ ນີ້ເປັນຂນາດເທົ່າສຸຄຕຈີວອນຂອງພຣະສຸຄຕ

ເຣື່ອງພຣະນັນທະ ຈົບ

ສິກຂາບົທວິພັງຄ໌

[໕໔໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກຂຸ ມີອະທິບາຍວ່າ ຊື່ວ່າພິກຂຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກຂຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຂນາດເທົ່າສຸຄຕຈີວອນ ຄື ຍາວ ໙ ຄືບ ກວ້າງ ໖ ຄືບ ໂດຍຄືບສຸຄຕ

ຄຳວ່າ ທຳ ຄື ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງອາບັຕິທຸກກຏ ໃນຂະນະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກເສັຽກ່ອນແລ້ວສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໕໐] ພິກຂຸທຳຈີວອນ(ເທົ່າສຸຄຕຈີວອນ)ທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກຂຸໃຊ້ຜູ້ອື່ນໃຫ້ທຳຈີວອນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພິກຂຸທຳຈີວອນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກຂຸໃຊ້ຜູ້ອື່ນໃຫ້ທຳຈີວອນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັຕທ໌] ໙. ຣຕນວັຄ ຮວມສິກຂາບົທທີ່ມີໃນຣຕນວັຄ

ທຸກກຏ

ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຏ

ພິກຂຸໄດ້ຈີວອນທີ່ຜູ້ອື່ນທຳສຳເຣັຈແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຏ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໑] ໑. ພິກຂຸທຳຈີວອນຕ່ຳກວ່າຂນາດ
໒. ພິກຂຸໄດ້ຈີວອນທີ່ຜູ້ອື່ນທຳເສັດມາຕັດແລ້ວໃຊ້
໓. ພິກຂຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອຫລືປອກໝອນ
໔. ພິກຂຸວິກິລຈິຕ
໕. ພິກຂຸຕົ້ນບັນຍັດ

ນັນທສິກຂາບົທທີ ໑໐ ຈົບ
ຣຕນວັຄທີ ໙ ຈົບ

ຣວມສິກຂາບົທທີ່ມີໃນຣຕນວັຄ

ຣຕນວັຄມີ ໑໐ ສິກຂາບົທ ຄື
໑. ອັນເຕປຸຣສິກຂາບົທ ວ່າດ້ວຍການເຂົ້າເຂຕພຣະຣາຊຖານຊັ້ນໃນ
໒. ຣຕນສິກຂາບົທ ວ່າດ້ວຍການເກັບຣັຕນະທີ່ເຈົ້າຂອງລືມໄວ້
໓. ວິກາລຄາມປເວສນສິກຂາບົທ ວ່າດ້ວຍການເຂົ້າບ້ານໃນເວລາວິການ
໔. ສູຈິฆຣສິກຂາບົທ ວ່າດ້ວຍການທຳກັບເຂັມດ້ວຍກະດູກເປັນຕົ້ນ
໕. ມັຍຈປີຖສິກຂາບົທ ວ່າດ້ວຍການທຳຕຽງແລະຕັ່ງ
໖. ຕູໂລນັທສິກຂາບົທ ວ່າດ້ວຍການທຳຕຽງແລະຕັ່ງຫຸ້ມນຸ່ນ
໗. ນິສີທນສິກຂາບົທ ວ່າດ້ວຍການທຳຜ້າຮອງນັ່ງ
໘. ກັຕຫຸປຕິຈฉາທີສິກຂາບົທ ວ່າດ້ວຍການທຳຜ້າປິດຝີ
໙. ວັສສິກສາฎິກາສິກຂາບົທ ວ່າດ້ວຍການທຳຜ້າອາບນ້ຳຝົນ
໑໐. ນັນທສິກຂາບົທ ວ່າດ້ວຍທ່ານພຣະນັນທະ

ບົທສຣຸບ

ທ່ານທັງຫລາຍ ສັມຄືປາຈິຕຕີຍ໌ ໙໒ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຂ້າພະເຈົ້າຂໍຖາມທ່ານທັງຫລາຍ ໃນສັມຄືປາຈິຕຕີຍ໌ ໙໒ ສິກຂາບົທເຫລົ່ານີ້ວ່າ "ທ່ານທັງຫລາຍບໍຣິສຸດຂ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ ວ່າ "ທ່ານທັງຫລາຍບໍຣິສຸດຂ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດຂ໌ແລ້ວຫລື"

ທ່ານທັງຫລາຍບໍຣິສຸດລ໌ແລ້ວໃນລັມຄືປາຈິຕຕິຍ໌ ໙໔ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຂຸທທກສິກຂາບົທ ຈົບບໍຣິບູຣຓ໌
ປາຈິຕຕິຍກັຕຫ໌ ຈົບ

ພຣະວິນັຍປິດົກ ມຫາວິກັງຄ໌ [ຝ. ປາຜິເທສນີຍກັຕຫ໌] ໑. ປຖມປາຜິເທສນີຍສິກຂາບົທ ນິທານວັຕຖຸ

ຝ. ປາຜິເທສນີຍກັຕຫ໌

ທ່ານທັງຫລາຍ ລັມຄືປາຜິເທສນີຍະ ໔ ສິກຂາບົທເຫລົ່ານີ້ມາເຖິງອາຣະທີ່ຍົກຂຶ້ນສະແດງເປັນຂໍ້ໆຕາມລຳດັບ

໑. ປຖມປາຜິເທສນີຍສິກຂາບົທ

ວ່າດ້ວຍການຮັບຂອງຄ້ຽວຂອງຈັນຈາກມືກິກຸຕີຜູ້ບໍ່ແມ່ນຍາຕ

ເຣື້ອງກິກຸຕີຮູບນຶ່ງ

[໕໕໔] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທລເຈົ້າປະທັບຢູ່ ຓະ ພຣະເຊຕວັນ ອາຮາມຂອງອນາຖບິຕຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ກິກຸຕີຮູບນຶ່ງທ່ຽວບິຕຫບາຕໃນກຸງສາວັຕຖີ ເວລາກັບ ພົບກິກຸຮູບນຶ່ງຈຶ່ງໄດ້ກ່າວດັ່ງນີ້ວ່າ "ພຣະຄຸຕເຈົ້າ ນິມົນຕ໌ທ່ານຮັບກິກຫາຫາຣເຖີດ" ກິກຸນັ້ນຕອບວ່າ "ດີລະ ນ້ອງຍິງ" ແລ້ວຮັບກິກຫາຫາຣທັງຫມົດ ເມື່ອໃກ້ເວລາຈັນແລ້ວ ກິກຸຕີນັ້ນບໍ່ສາມາດທ່ຽວບິຕຫບາຕໄດ້ທັນ ຈຶ່ງບໍ່ໄດ້ຈັນກັຕຕາຫາຣ ຕໍ່ມາ ແມ່ນໃນວັນທີ ໔ ກິກຸຕີນັ້ນ ຯລຯ ແມ່ນໃນວັນທີ ໓ ກິກຸຕີນັ້ນກໍທ່ຽວບິຕຫບາຕໃນກຸງສາວັຕຖີ ເວລາກັບ ພົບກິກຸຮູບນັ້ນຈຶ່ງໄດ້ກ່າວດັ່ງນີ້ວ່າ "ພຣະຄຸຕເຈົ້ານິມົນຕ໌ທ່ານຮັບກິກຫາຫາຣເຖີດ" ກິກຸນັ້ນຕອບວ່າ "ດີລະ ນ້ອງຍິງ" ແລ້ວຮັບກິກຫາຫາຣທັງຫມົດ ເມື່ອໃກ້ເວລາຈັນແລ້ວ ກິກຸຕີນັ້ນບໍ່ສາມາດທ່ຽວບິຕຫບາຕໄດ້ທັນ ຈຶ່ງບໍ່ໄດ້ຈັນກັຕຕາຫາຣ

ຄັນໃນວັນທີ ໔ ກິກຸຕີນັ້ນຍ່າງຊວນເຊໄປຕາມຖນົນ ເສດຖີຄຫບໍດີນັ່ງຣົຖສວນທາງມາ ໄດ້ກ່າວກັບກິກຸຕີນັ້ນດັ່ງນີ້ວ່າ "ແມ່ເຈົ້າ ນິມົນຕ໌ທ່ານຫລີກທາງ" ທ່ານເມື່ອກຳລັງຫລີກ ລົ້ມລົງໃນທີ່

ນັ້ນເອງ ເສດຖີຄຫບໍດີຂໍຂມາກິກຂຸນີນັ້ນວ່າ "ແມ່ເຈົ້າ ທ່ານໂປຣດຍົກໂທສຜູ້ຂ້າເຮັດໃຫ້ທ່ານລົ້ມ" ກິກຂຸນີຕອບວ່າ "ຄຫບໍດີ ທ່ານບໍ່ໄດ້ເຮັດໃຫ້ຂະນ້ອຍລົ້ມ ຂະນ້ອຍມີກຳລັງບໍ່ດີຕ່າງຫາກ" ເສດຖີຖາມວ່າ "ແມ່ເຈົ້າ ເພາະເຫຕຸໃດທ່ານຈຶ່ງມີກຳລັງບໍ່ດີ" ເທື່ອນັ້ນ ກິກຂຸນີນັ້ນຈຶ່ງເລົ່າເຣື່ອງນັ້ນໃຫ້ເສດຖີຄຫບໍດີຊາບ ເສດຖີຄຫບໍດີພາກິກຂຸນີນັ້ນໄປຈົນທີ່ເຮືອນ ແລ້ວຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸຕເຈົ້າທັງຫລາຍ ຈຶ່ງຮັບອາມິສຈາກມືຂອງກິກຂຸນີລະ ມາຕຸຄາມຫາລາກໄດ້ຍາກ" ພວກກິກຂຸໄດ້ຍິນເສດຖີຄຫບໍດີຕຳຫນິ ປະນາມ ໂພນທະນາ ບັນດາກິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດກິກຂຸຈຶ່ງຮັບອາມິສຈາກມືຂອງກິກຂຸນີລະ" ຄັນກິກຂຸທັງຫລາຍຕຳຫນິກິກຂຸນັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະກາຄໃຫ້ຊົງຊາບ

ຊົງປະຊຸມສົງຆ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມສົງຆ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມກິກຂຸນັ້ນວ່າ "ກິກຂຸ ຊາບວ່າທ່ານຮັບອາມິສຈາກມືຂອງກິກຂຸນີ ແມ່ນແທ້ບໍ" ກິກຂຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທສເຈົ້າຂ້າ" ພຣະອົງຄ໌ຕຣັສຖາມວ່າ "ກິກຂຸ ກິກຂຸນີນັ້ນ ເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ກິກຂຸນັ້ນທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທສເຈົ້າຂ້າ" ພຣະຜູ້ມີພຣະກາຄຕຣັສວ່າ "ໂມຆບຸຣຸສ ກິກຂຸຜູ້ ບໍ່ແມ່ນຍາຕຍ່ອມບໍ່ຮູ້ສິ່ງທີ່ເຫມາະສົມຫລືບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຢູ່ ຂອງກິກຂຸນີຜູ້ ບໍ່ແມ່ນຍາຕ ໂມຆບຸຣຸສ ຈັ່ງໃດທ່ານຈຶ່ງຮັບອາມິສຈາກມືຂອງກິກຂຸນີຜູ້ບໍ່ແມ່ນຍາຕລະ ໂມຆບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ກິກຂຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິກັງຄ໌ [ຝ. ປາຕິເທສນີຍກັຕຫ໌] ໑. ປຖຸມປາຕິເທສນີຍສິກຂາບົທ ສິກຂາບົທວິກັງຄ໌

ພຣະບັນຍັດ

[໕໕໖] ກໍ ກິກຂຸໃດຮັບຂອງຄ້ຽວຫລືຂອງຈັນດ້ວຍມືຕົນເອງຈາກມືຂອງກິກຂຸນີຜູ້ບໍ່ແມ່ນຍາຕຜູ້

ເຂົ້າໄປໃນບໍຣິເວນບ້ານ ຄ້ຽວຫລືຈັນ ກິກຊຸນັ້ນເພິງສະແດງຄືນວ່າ "ທ່ານ ຜູ້ຂ້າຕ້ອງລັມຄືປາຝິເທສນີຍະ ເປັນລັມທີ່ຫນ້າຕຳຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍສະແດງຄືນລັມນັ້ນ"

ເຣື້ອງກິກຊຸຕີຮູບນຶ່ງ ຈົບ

ສິກຂາບົທວິກັງຄ໌

[໕໕໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ກິກຊຸ ມີອລິບາຍວ່າ ຊື່ວ່າກິກຊຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະກາຄຊົງປະສົງຄ໌ເອົາວ່າ ກິກຊຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄນ

ທີ່ຊື່ວ່າ ກິກຊຸຕີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຄ໌ ໔ ຝ່າຍ

ທີ່ຊື່ວ່າ ບໍຣິເວນບ້ານ ໄດ້ແກ່ ຖນົນ ຕຣອກຕັນ ທາງສີ່ແຍກ(ບ່ອນປະຫານນັກໂທດ) ເຮືອນ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂກຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງຈັນ ໄດ້ແກ່ ໂກຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປລາ ຊີ້ນ

